# ปวัดสาด

# ระเมริกัน

## โดยสำเขน

# ປະວັດສາດອະເມຣິກາໂດຍສັງເຂບ

ຮວບຮວມໂດຍ: ແຟຮງຮວິທເນ

ແກ້ໄຂໂດຍ: ນາທັນ ກລິກ

ທີ່ປຶກສາ: ດຮ. ວຸດເກຮ, ອາຈານສອນຝ່າຍປະວັດສາດ ອະເມຣິກາທີ່ມະຫາວິທຍາໄລ ຢອດ ວໍຊິງຕັນ, ຢູ່ເມືອງວໍຊິງຕັນ, ດີ.ຊີ.

ຣິຊາດ ຮອຟສຕາດ, ອາຈານສອນຝ່າຍປະວັດ ສາດ ທີ່ມະຫາວິທຍາໄລ ໂຄລັມເບັຽ, ນິວຢອກ.

ແຫ່ອອກເປັນພາສາລາວໂດຍ:

ຄຳສຸກ ສຸພັນທະເຮືອງສີ ໂຮງຮຽນ ມັທຍົມແບບປະສົມ ຟ້າງຸ່ມ ວຽງຈັນ, ປະເທດລາວ.

## ສາຣະບານ


ຈ. ສໄມການເປັນຫົວເມືອງຂຶ້ນ

ຄ. ໄຊຊນະໃນການກອບກູ້ເອກຣາຊ

ມ. ການຈັດຕັ້ງຣັຖບານແຫ່ງຊາດ

ຄ. ການແຜ່ຜາຍອອກໄປທາງພາກຕະວັນຕົກແລະພາກຕ່າງໆ

ຄ. ການຂັດແຍ່ງກັນລະຫວ່າງຄົນໃນກຸ່ມ

ຝ. ສໄມການແຜ່ຜາຍແລະການປ່ຽນແປງ

ກ. ຂໍ້ຂັດແຍ່ງກັບຕ່າງປະເທດແລະການປ່ຽນແປງຂອງສັງຄົມ
ພາຍໃນປະເທດ

ຊ. ອະເມຣິກາໃນໂລກສໄມໃຫມ່.

# 1

"ສວັນແລະແຜ່ນດິນ ບໍ່ເຄີຍມີຄວາມເຫັນຕຣົງກັນດີເທົ່າການ ວາງເຂດແດນ ໃຫ້ເປັນທີ່ຢູ່ອາໄສຂອງມະນຸດ" ອັນນີ້ແມ່ນຄຳຂວັນ ຂອງທ່ານ ຈອນ ສມິຕ, ຜູ້ສ້າງອານານິຄົມເວີຊີເນັຍ ໃນປີ ຈຟດກ.

ໃນຣະຍະຫລາຍຮ້ອຍປີ ທີ່ຜ່ານມາ, ໃນສັຕວັດ ສິບເຈັດ ແລະຕົ້ນສັຕວັດທີສິບແປດ, ແມ່ນຣະດູການ ຂອງການ ອົພຍົກ ຂອງນັກທ່ອງທ່ຽວ ຈາກທວີບຢຸໂຣບ ມາອະເມຣິກາ. ການເຄື່ອນ ໄຫວນີ້ ເກີດຈາກອິດທິພົນຂອງການຊັກຊວນຕ່າງໆ ແລ້ວກໍມາສ້າງ ຊາດໃນປ່າດົງອັນຕຶບຫນາ ແລະໂດຍທັນຊາດແຕ່ງໃຫ້, ເຂົາເຈົ້າ ໄດ້ເປັນຜູ້ຊີ້ອານາຄົດຂອງທວີບທີ່ບໍ່ໄດ້ວາງແຜນມາກ່ອນ.

ປັດຈຸບັນນີ້, ສຫະຣັຖເປັນດິນແດນທີ່ບັນຈຸຜົນຂອງສອງກຳລັງ ສຳຄັນ ການເຂົ້າເມືອງຂອງຊາວຢຸໂຣບ ໂດຍຫອມເອົາຄວາມຄິດ ຄວາມເຫັນ, ຂນົບທັມນຽມແລະລັກສນະພິເສດຂອງຊາດຕົນມາດ້ວຍ

ແລະຄວາມສັບສົນໃນປະເທດໃຫມ່ນີ້ ຈະຕ້ອງແກ້ໄຂວັທນະທັມອັນດີ
ເດັ່ນຂອງຊາວຢຸໂຣບນີ້. ການເປັນຫົວເມືອງຂຶ້ນນີ້ ແມ່ນການຖ່າຍ
ທອດມາຈາກຢຸໂຣບ. ຂ້າມຝາກມະຫາສມຸດມາ ແມ່ນພວກຊາວອັງ
ກິດ, ຝຣັ່ງເສດ, ເຢີຣະມັນ, ຊາວສະກັອດ, ຊາວໄອຣິສ, ຊາວ
ດັສ, ຊາວສວິເດັນ ແລະຜູ້ຄົນອີກຫລາຍປະເທດທີ່ພຍາຍາມ ປູກນິ
ໄສແລະຮີດຄອງປະເພນີ ໃນໂລກໃຫມ່ນີ້. ແຕ່ຈະຫລີກລ່ຽງກຳລັງ
ຂອງພູມີປະເທດອັນແປກປລາດ, ບົດບາດພາຍໃນຂອງກຸ່ມຊົນຊາດ
ຕ່າງໆທີ່ຕ່າງກັນ ແລະຄວາມຫຍຸ້ງຍາກຢ່າງແທ້ຈິງໃນການຮັກສາແນວ
ທາງແບບໂລກສໄມເກົ່າໃນທະວີບທີ່ໃຫມ່ຕ່ໍທຸກສິ່ງທຸກຢ່າງຊຶ່ງພາໃຫ້ມີ
ການປ່ຽນແປງຢ່າງມີຄວາມຫມາຍນັ້ນບ່ໍໄດ້. ການປ່ຽນແປງນີ້ເປັນ
ໄປເທື່ອລະນ້ອຍແລະແນມບ່ໍເຫັນ, ແຕ່ຜົນປາກົດຂອງແບບແຜນຂອງ
ສັງຄົມໃຫມ່ຄ້າຍກັບວ່າ ອຽງໄປທາງສັງຄົມແບບຊາວຢຸໂຣບ ໃນ
ຫລາຍທາງ, ແລະເປັນລັກສນະພິເສດຂອງຊາວອະເມຣິກັນ.

ເຮືອທຳອິດທີ່ຂົນຄົນເຂົ້າເມືອງ ມາຍັງດິນແດນຊຶ່ງປັດຈຸບັນນີ້
ແມ່ນສຫະຣັຖ, ໄດ້ຂ້າມທະເລແອດແລນຕິກມາໃນຣະຫວ່າງສັຕວັດທີ
ສິບຫ້າແລະທີ່ສິບຫົກຂອງການຄົ້ນພົບອະເມຣິກາເຫນືອໃນເວລາດຽວ
ກັນກັບຄວາມຈະເຣີນຂອງການຕັ້ງອານານິຄົມ ຂອງສະເປັນຂຶ້ນທີ່ປະ
ເທດເມກຊິໂກ, ແວສ໌ອິນດີ໌ສແລະອະເມຣິກາໃຕ້. ພວກທີ່ເດີນທາງ
ມາອະເມຣິກາເຫນືອນີ້ໄດ້ມາເປັນກ້ອນເປັນກຸ່ມນ້ອຍໆ ແລະໃນຣະ

ຫວ່າງການເດີນທາງເທື່ອທີ່ຫົກຫາເທື່ອທີ່ສິບສອງນັ້ນ ພວກທີ່ເດີນທາງ
ມາມີຊີວິດເຫລືອຢູ່ສ່ວນນ້ອຍ ເພາະເຮືອບັນທຸກຜູ້ຄົນໂດຍສານຫລາຍ
ລຳຖືກລົມພາຍຸພັດຫາຍສາບສູນໄປເລີຍ, ຜູ້ໂດຍສານຫລາຍຄົນເສັຍ
ຊີວິດຍ້ອນພະຍາດແລະເດັກນ້ອຍບໍ່ຄ່ອຍຍັງມີຊີວິດຢູ່ໃນການເດີນທາງ
ຄັ້ງນັ້ນ, ບາງເທື່ອລົມພາຍຸໄດ້ພັດເອົາເຮືອອອກໄປໄກຈາກຈຸດໝາຍ
ປາຍທາງຊົ່ວຜາໃຫ້ການເດີນທາງຊັກຊ້າຢູ່ເລື້ອຍໆ.

ໃນສາຍຕາພວກເດີນທາງເຫລົ່ານັ້ນ, ໄດ້ເຫັນພາບແຄມຝັ່ງ
ຂອງອະເມຣິກາເປັນການບັນເທົາທຸກທີ່ປົ່ມປິຕິຍິນດີທີ່ເຂົາເຈົ້າບໍ່ອາດ
ຈະອະທິບາຍໄດ້. ຄົນທີ່ບັນທຶກເຫດການຄົນນຶ່ງກ່າວວ່າ "ບັນຍາ
ກາດໃນອ້ອມແອ້ມຊຶ່ງບໍ່ໄກນີ້ ຫອມຫວນເໝືອນກັນກັບສວນທີ່ກຳລັງມີ
ໝາກແລະຜົລ". ຜູ້ທີ່ໄປຕັ້ງຖິ່ນຖານໃນອາມາຄິນັ້ນ ແນມເຫັນ
ແຜ່ນດິນນັ້ນເຕັມໄປດ້ວຍທິວທັສທີ່ມີປ່າໄມ້ຄົກໝາ. ປ່າບໍຣິສຸດນັ້ນອຸດົມ
ສົມບູນດ້ວຍຕົ້ນໄມ້ຫລາຍຊນິດປຽບເໝືອນສົມບັດອັນລ້ຳຄ່າ ຢ່າງແທ້
ຈິງແລະມີຄວາມຍາວຫລາຍກວ່າ ๑๓๐๐ ໄມ ຈາກຣັຖເມນ ທາງ
ພາກເໜືອໄປຫາຣັຖຈໍຣ໌ເຈັຍ ທາງເຂດນັ້ນເຕັມໄປດ້ວຍນ້ຳມັນເຊື້ອ
ເພີງແລະທ່ອນໄມ້ວັດຖຸດິບ ສຳຫລັບເຮັດເຮືອນ ແລະເຄື່ອງໃຊ້ ໃນ
ເຮືອນສຳລັບເຮັດເຮືອ, ດ່າງໂພຕາສ, ສີ້ຍອມແລະອຸປກອນອື່ນໆ.

"ສວັນແລະດິນບໍ່ມີສິ່ງໃດພ້ອມໃຈກັນດີເທົ່າການຍຶດຂອບເຂດ
ໃຫ້ຄົນມີບ່ອນຢູ່ອາໄສ" ເປັນວັກນຶ່ງທີ່ຈອນສມິທຂຽນໃນການສັນລະ

ເສີນຣັຖເວີຊຸເນັຍ ອານານິຄົມ ທີ່ທ່ານມີສ່ວນຊ່ວຍ ໃນການຄົ້ນພົບ. ທ່ານວິລຽມ ເພນ ຊຶ່ງເປັນຜູ້ຄົ້ນພົບ ອານານິຄົມ ເພນຊຸຄເວເນັຍ ກ່າວວ່າ "ອາກາດຊຶ່ນບານແລະແຈ່ມແຈ້ງເຫມືອນສຽງສັນຍານຈາກສວັນ" ນອກຈາກດິນຟ້າອາກາດອັນເປັນຕາຊວນຢູ່ແລ້ວ ຍັງມີອາຫານຊຶ່ງມີມາແຕ່ກຳເນີດອີກ. ທະເລກໍອຸດົມສົມບູນດ້ວຍ ຫອຍ, ປູ ປາ ແລະກູ້ງໃຫຍ່, ແລະໃນປ່າດົງກໍມີໄກ່ງວງທີ່ອ້ວນພີ ແລະມີນຳ້ ຫນັກຢ່າງບໍ່ເປັນຫນ້າເຊຶ່ອ, ນົກ, ກະຮອກ, ໄກ່ປ່າ, ກວາງ ຫ່ານ ແລະກວາງອີກຫລາຍຊນິດຈົນວ່າຄົນໃນຫລາຍບ່ອນຖືວ່າ ເນື້ອ ກວາງເປັນເນື້ອທີ່ຫຍາບແລະຫນັກສຳລັບການຍ່ອຍອາຫານ. ຫມາກ ໄມ້, ໃນຖິ່ວແລະຫມາກແບຣີເກີດຕາມປ່າດົງທຸກໆບ່ອນ ແລະຕໍ່ມາກໍ ໄດ້ຄົ້ນພົບເຂົ້າສາລີແລະຫມາກອໍ ທີ່ປູກໄດ້ງ່າຍຄືກັນ. ຕໍ່ມາພວກທີ່ ມາຢູ່ໃຫມ່ໄດ້ຄົ້ນພົບວ່າ ແກ່ນຜັກຫລືຫມາກໄມ້ຈະໃຫຍ່ໄວຖ້າຫາກວ່າ ກ້າແກ່ນແລ້ວເອົາເບັ້ຍໄປປູກ. ການລ້ຽງແກະ, ແບ້ແມ່, ຫມູ ແລະງົວກໍອຸດົມສົມບູນເຫມືອນກັນ.

## ທີ່ດິນຈັດຕັ້ງກັນແນວໃດ

ທວີບໃຫມ່ນີ້ ອຸດົມສົມບູນດ້ວຍທັມມະຊາດທີ່ບໍ່ມີບ່ອນປຽບທຽບ ເລີຍ, ແຕ່ການຄ້າຂາຍກັບຢຸໂຣບນັ້ນສຳຄັນທີ່ສຸດ ໃນການສັ່ງສິນຄ້າ ເຂົ້າມາໃນປະເທດ ເພາະວ່າພວກທີ່ມາຕັ້ງບ້ານເຮືອນໃຫມ່ຍັງບໍ່ທັນ ສາມາດຜລິດຜົລໄດ້ເທື່ອ. ທາງແຄມຝັ່ງນີ້ ຍັງຮັບເອົາຄົນເຂົ້າ ເມືອງສເມີ. ລວຍກວ່ອງແຄມຝັ່ງທັງໝົດນີ້ມີ ທ່າວ້ອຍໆ ແລະ ທ່າເຮືອ, ແລະມີແຕ່ສອງບ່ອນເທົ່ານັ້ນ ຄື ນອທ ເຄໂຣໄລນາ ແລະ ນິວເຈີຊີທາງພາກໃຕ້ທີ່ມີທ່າເຮືອ ສຳລັບເຮືອເດີນທະເລ ແມ່ນ້ຳທີ່ມີຄວາມສຳຄັນ ເຊັ່ນ ແມ່ນ້ຳ ເຄນເນີເບັກທີ ເມນ, ແມ່ນ້ຳຄ໋ອນຕິຄັດ, ແມ່ນ້ຳຫັດຊັນທີ່ນິວຢອກ, ແມ່ນ້ຳ ຊັສເກແຮນນາ ທີ່ເພນຊິ ເວເນັຍ, ແມ່ນ້ຳໂປໂຕມັກທີ່ເວຊິເນັຍ ແລະແມ່ນ້ຳອື່ນໆອີກ ທີ່ຕິດຕໍ່ກັບທາງແຄມຝັ່ງ, ກັບທ່າເຮືອຕ່າງໆ, ແລະກັບຢຸໂຣບ. ໃນ ຈຳພວກແມ່ນ້ຳໃຫຍ່ ທາງຝັ່ງຕະວັນອອກຂອງອະເມຣິກາເຫນືອແມ່ນ

ແມ່ນ້ຳ ເຊັນໂລແຣນຊ໌ ຊຶ່ງຢູ່ໃນຄວາມຄວບຄຸມຂອງຝຣັ່ງເສດ, ແມ່ນ້ຳດ່ວງກ່າວນີ້ ໄຫລຜ່ານມາທາງໃນຂອງຫວຽບນີ້. ການ ຂາດທາງຜ່ານຂອງນ້ຳນີ້ ຮວມກັບພູເຂົາອາປາລາຈຽນ ຊຶ່ງກັ້ນທາງຢູ່ພາໃຫ້ການຍົກຍ້າຍມາທາງທິ່ວນາ ແຖບແຄມຝັ່ງນີ້ລຳບາກຫລາຍ. ເວ້ົາຄວາມເປັນຈິງແລ້ວ, ຮ້ອຍກ່ວາປີມານີ້ ນັກອະນາມິຄົມສາມາດມາສ້າງຖິ່ນຖານບ້ານຊ່ອງຢູ່ຕາມແຄມຝັ່ງທະເລນີ້.

ເທື່ອທຳອິດ, ພົລເມືອງແຜ່ຜາຍຢູ່ຕາມແຄມຝັ່ງທະເລນີ້ ຕ້ັງແຕ່ເຫນືອຕລອດໃຕ້. ອານານິຄົມຫລາຍບ່ອນ ຢູ່ກັນເປັນກຸ່ມເສຣີ ໂດຍມີທາງອອກສູ່ທະເລຂອງໃຜລາວ, ການແຍກກັນຢູ່ ຮວມກັບຣະຍະທາງທີ່ຢູ່ຫ່າງໄກກັນເປັນອຸປສັກສຳຄັນໃນການຈັດຕ້ັງຣັຖບານກາງ ແລະຣັຖບານຮ່ວມກັນ. ອານານິຄົມແຕ່ລະບ່ອນແຍກກັນຢູ່ ຊຶ່ງເປັນ ສັນຍາລັກຂອງອິດທິພົນຂອງສ່ວນບຸກຄົນໃນປະວັດສາດຂອງສະຫະຣັຖ ແລະກາຍມາເປັນພື້ນຖານສິດທິຂອງແຕ່ລະຣັຖ ໃນສໄມປັດຈຸບັນນີ້. ແມ່ນວ່າຄວາມໂອນອຽນນີ້ ຈະຫນັກໄປທາງລັດທິ ທີ່ມີຄວາມຄິດເຫັນເປັນສ່ວນບຸກຄົນກໍຕາມ, ສໄມກ່ອນໆ ການຄ້າ, ການເດີນເຮືອ, ໂຮງງານຫັຖກັມ, ແລະເງິນຍັງຜ່ານເຂດອານານິຄົມຢູ່ແລະຈຳເປັນທີ່ຈະຕ້ອງມີກົດຣະບຽບອັນດຽວກັນ ຫລັງຈາກໄດ້ຮັບເອກຣາຊຈາກປະເທດອັງກິດແລ້ວ, ຈຶ່ງນຳໄປສູ່ການເປັນສະຫະພັນຢ່າງຫລີກລ່ຽງບ່ໄດ້. ການມາຂອງພວກທີ່ມາຕ້ັງອານານິຄົມໃນສັຕວັດທີ່ສິບເຈັດນີ້

ແມ່ນຜົນຂອງການວາງໂຄງການ ແລະການຈັດການທີ່ຮອບຄອບດີ, ໂດຍຫມົດເປືອງການໃຊ້ຈ່າຍຫລາຍແລະສ່ຽງໄພອີກດ້ວຍ. ພວກທີ່ມາຕັ້ງຖິ່ນຖານນີ້ ຕ້ອງຂ້າມນ້ຳຂ້າມທະເລມາຮອດສາມພັນກວ່າໄມສ໌ ພູ້ນ. ເຂົ້າເຈົ້າຍັງຈະຕ້ອງການເຄື່ອງຄົວ, ເຄື່ອງນຸ່ງຫົ່ມ, ແກ່ນ ຜັກ, ເຄື່ອງມື, ອຸປກອນກໍ່ສ້າງ, ສັດລ້ຽງ, ອາວຸດ, ແລະລູກປືນ ອີກດ້ວຍ. ນະໂຍບາຍຂອງອານານິຄົມນີ້ ແຕກຕ່າງກັບນະໂຍບາຍ ຂອງປະເທດອື່ນແລະສມັຍອື່ນ, ເພາະວ່າ ຜູ້ຄົນທີ່ອົພຍົກ ມາຈາກ ປະເທດອັງກິດ ບໍ່ໄດ້ຮັບການເບິ່ງແຍງຈາກຣັຖບານເລີຍ. ພວກທີ່ ອົພຍົກມານີ້ ມາກັນເປັນພວກເປັນກຸ່ມ ໂດຍທາງສ່ວນຕົວຫລືມາໃຜ ມາລາວ. ອານານິຄົມສອງບ່ອນຄື ແມ່ແຊຊູເຊຸດສ໌ ແລະ ເວີຈີ ເນັຍ ແມ່ນບ່ອນສັດການຄ້າເປັນຜູ້ກໍ່ສ້າງຂຶ້ນ. ບ່ອນນີ້ແມ່ນນັກລົງ ທຶນເອກຊົນເປັນຜູ້ອຸປຖັມ ໃນການຂົນສົ່ງ ແລະລ້ຽງດູພວກທີ່ມາຕັ້ງ ຖິ່ນຖານຢູ່ອານານິຄົມນີ້. ໃນກໍຣະນີຂອງເມືອງ ນິວເຮເວັ່ນ (ຕໍ່ ມາແມ່ນສ່ວນນຶ່ງຂອງເຂດຣັຖ ຄໍແນກຕິຄັດ) ແມ່ນພວກອົພຍົກ ທີ່ ຮ່ັ່ງມີຊຶ່ງເສັຍຄ່າເດີນທາງມາເອງ ພ້ອມທັງຂົນເອົາຄອບຄົວ, ຄົນ ໃຊ້ ແລະເຄື່ອງອຸປກອນຕ່າງໆມາພ້ອມ. ພວກທີ່ໄປຕັ້ງຖິ່ນຖານຢູ່ ບ່ອນອື່ນ ເຊັ່ນຢູ່ເມືອງ ນິວແຮມເຊັຍ, ເມັນ, ແມຣິແລນ, ແລໂຣ ໄລນາ, ນິວເຈີຊີ ແລະເພັນຊິລເວເນັຍນັ້ນ ຕັ້ງແຕ່ເດີມມາເປັນ ຂອງພວກອັງກິດຊັ້ນຊຸມນາງ ຊຶ່ງໃນຖານະເປັນເຈົ້າຂອງດິນໄດ້ອອກ

ຫຶນໃຫ້ຜູ້ທີ່ມາເຊົ່າດິນແລະຄົນໃຊ້ ເພື່ອເຂົາເຈົ້າຈະໄດ້ທຳມາຫາກິນ ໃສ່ດິນຂອງພຣະເຈົ້າມະຫາຊີວິດທີ່ຊົງອະນຸຍາດໃຫ້. ວິທີດັ່ງກ່າວນີ້ ຄືກັນກັບວິທີຢືມເງິນທຶນຂອງຣັຖມາສ້າງໃນປັດຈຸບັນນີ້ ເຊັ່ນໃນສໄມ ພະເຈົ້າຊາລ ທີນຶ່ງ, ພຣະອົງຊົງອະນຸຍາດໃຫ້ທ່ານເຊຊຶລແຄລເວີດ (ຫລືອີກຊື່ນຶ່ງວ່າ ລອດ ບາລຕີມໍຣ์) ແລະລູກຫລານຂອງທ່ານໃຫ້ ເຊົ່າດິນຫລາຍລ້ານໄຮ່ ຊຶ່ງຕໍ່ມາກໍກາຍເປັນຣັຖເມຣິແລນເທົ່າທຸກວັນ ນີ້. ທີ່ດິນເມືອງແຄໂຣໄຣນາແລະເມືອງເພັນຊຶລເວເນັຍນັ້ນ ພຣະ ອົງຊາລທີສອງ ຊົງອະນຸຍາດໃຫ້ເຊົ່າ. ພວກເຈົ້າຂອງຊັບເຫລົ່ານີ້ ແລະພວກບໍຣິສັດຂົນສົ່ງນີ້ ແມ່ນພວກເຊົ່າດິນຂອງເຈົ້າຊີວິດ, ແລະ ການໃຊ້ຄ່າເຊົ່າທີ່ດິນນີ້ ເຂົາເຈົ້າໃຫ້ເປັນສິ່ງຂອງ. ລອດບອລຕີ ມໍຣ์ ຕ້ອງຖວາຍຫົວລູກສອນອິນເດັຍສອງອັນຕໍ່ປີ, ແລະທ່ານວິລລຽມ ເພັນຕ້ອງຖວາຍຂົນສັດປີລະສອງແຜ່ນ.

ອານານິຄົມຫລາຍບ່ອນລ້ວນແຕ່ແມ່ນການແຜ່ຂຍາຍຂອງພວກ ທີ່ມາຕັ້ງຖິ່ນຖານຢູ່ຕາມບ່ອນຕ່າງໆ. ຜູ້ທີ່ຄົ້ນພົບເມືອງໂຣດໄອແລນ ແລະຄໍແນກຕິຄັດແມ່ນຊາວເມືອງແມແຊຈູແຊດສ์, ຊຶ່ງຖືວ່າເປັນແມ່ ເມືອງອານານິຄົມຂອງເມືອງອັງກິດທີ່ຕັ້ງຂຶ້ນໃຫມ່ ຊຶ່ວ່າ ຣັຖຈໍເຈັຍ ໃນປັດຈຸບັນ. ແຕ່ປາງກ່ອນເພີ່ນຕັ້ງເມືອງນີ້ຂຶ້ນມາເພື່ອເຫດຜົນໃນ ການກຸສົນຫລາຍຢ່າງ. ຜູ້ທີ່ຄົ້ນພົບແລະຕັ້ງເມືອງນີ້ແມ່ນທ່ານ ເຈນ ເອເວີດ ອອກເລທອກແລະນັກໃຈບູນຊາວອັງກິດອີກຫລາຍຄົນທີ່ມີຈຸດ

ປະສົງຢາກປ່ອຍພວກລູກຫລານຫນີອອກຈາກລຸກອັງກິດ ແລະຈັດການ
ສົ່ງເຂົ້າເຈົ້າໄປອະເມຣິກາເພື່ອໄປຕັ້ງອານານິຄົມຢູ່ບ່ອນຫັ້ນ ແລະ
ພ້ອມທັງຮັບໃຊ້ ໃນການຕໍ້ຕ້ານ ສະເປັນທາງເຂດພາກໃຕ້. ອາ
ນານິຄົມຂອງຊາວນິວເມເທີແລນ ຄົ້ນພົບໃນປີ ໑໗໘໔, ໄດ້ກາຍ
ເປັນເມືອງຂຶ້ນຂອງຊາວອັງກິດໃນສີ່ສິບປີຕໍ່ມາ ແລະໄດ້ຕັ້ງຊື່ໃຫມ່ວ່າ
ນິວຢອກ.

ສົ່ງນຶ່ງທີ່ບັງຄັບຊາວຢຸໂຣບ ໃຫ້ຫນີຈາກບ້ານເກີດເມືອງນອນ
ຂອງເຂົາເຈົ້າກໍຄື ຄວາມປາຖນາຢາກສ້າງເນື້ອສ້າງຕົວແລະສ້າງ
ຖານະຄອບຄົວໃຫ້ດີຂຶ້ນ. ສ່ວນນຶ່ງອີກທີ່ຊຸກຍູ້ເຂົາເຈົ້າ ໃຫ້ອົພຍົກ
ໄປອະເມຣິກາກໍຄືການຢາກສແວງຫາເສຣີພາບໃນການນັບຖືສາສນາ
ແລະເພື່ອການຫລີກເວັ້ນ ຄວາມກົດດັນທາງດ້ານການເມືອງອີກດ້ວຍ
ຊຶ່ງກາຍເປັນສາຍເຫດ ໃນການຫນີໄປປະຈົນໄພ. ໃນລະຫວ່າງ
໑໗໘໐ ຫາ ໑໗ຯ໔ ປະເທດອັງກິດ ໄດ້ພົບກັບຄວາມຫຍຸ້ງຍາກໃນ
ດ້ານເສຖກິດ ແລະປະຊາຊົນຈຳນວນຫລວງຫລາຍຫາການເຮັດບໍ່ໄດ້
ແມ່ນແຕ່ຊາວ[illegible] ຈະຫາເງິນໄດ້ພໍລ້ຽງຊີບກໍຫັ້ງຍາກ ແລະຜົນ
ເກັບກ່ຽວບໍ່ໄດ້ຜົນດີ ຍິ່ງຊ້ຳຕື່ມຄວາມຍາກລຳບາກຍາກແຄ້ນເຂົ້າໄປ
ອີກ. ນອກຈາກນັ້ນ, ອຸດສາຫະກັມການຜລິດຂົນສັດຂອງປະເທດອັງ
ກິດກຳລັງຂະຍາຍອອກດີ ຊຶ່ງເກີດມີຄວາມຕ້ອງການຂົນສັດຂຶ້ນ ຢ່າງ
ມາກມາຍ, ດັ່ງນັ້ນນັກລ້ຽງແກະຫັ້ງຫລາຍຈຶ່ງລຸກລ້ຳທີ່ດິນ ຊຶ່ງຍົກໃຫ້

ເປັນບອນຊຸດໄຖແລະເພາະປູກຈົນກະທັ່ງທຸກວັນນີ້.

ໃນຣະຫວ່າງທີ່ສາສນາ ກຳລັງມີການປ່ຽນແປງຂນານໃຫຍ່ ແລະກະທັນຫັນໃນສັຕວັດທີ່ສິບຫົກ ແລະສິບເຈັດນັ້ນ, ຕົວແທນຂອງຜູ້ ຊາຍແລະຜູ້ຍິງກຸ່ມນຶ່ງ ຊຶ່ງເອີ້ນຕົວເອງວ່າເປັນພວກປູຣິຕັນ ກຳລັງ ຊອກຫາຊ່ອງທາງທີ່ຈະດັດແປງ ແລະຕັ້ງໂບດຂຶ້ນໃຫມ່ ໂດຍໃຫ້ແຕກ ຕ່າງໄປຈາກໂບດ ຢູ່ປະເທດອັງກິດ. ໂບດທີ່ຕັ້ງຂຶ້ນໃຫມ່ນີ້ຍຽງໄປ ທາງການນັບຖືສາສນາໂປແຕສຕັງ ແລະຖືເປັນສາສນາປະຈຳຊາດ ສຳລັບພວກທີ່ໄປຕັ້ງຖິ່ນຖານໃຫມ່ອີກດ້ວຍ, ແລະສຳຄັນທີ່ສຸດນັ້ນກໍຄື ທຸກໆຄົນຮັບຜິດຊອບ ໃນການກະທຳຂອງຕົວເອງ. ຄວາມຄິດໃນ ການດັດແປງນີ້ ເປັນການຍິ່ມຢູ່ຕໍ່ອຳນາດຂອງຣາຊບັນລັງເພາະວ່າ ຈະເປັນສາເຫດໃຫ້ປະຊາຊົນແຕກແຍກກັນ ແລະຍັງຈະທຳລາຍການ ທ້ອນໂຮມຂອງໂບດແຫ່ງຊາດອີກດ້ວຍ ບຸກຄົນຈຳພວກນີ້ມີຊື່ວ່າພວກທີ່ ແຍກອອກຈາກໂບດຂອງປະເທດອັງກິດແລະເຊື່ອວ່າໂບດທີ່ເຂົາເຈົ້າ ຕັ້ງຂຶ້ນໃຫມ່ນີ້ ຈະບໍ່ມີສ່ວນພົວພັນກັນ ຢ່າງແນ່ນອນ. ໃນສໄມຣາຊ ການຂອງພະເຈົ້າ ເຈມທີ່ນຶ່ງ, ຊາວພົ້ນເມືອງທີ່ສຸພາບອ່ອນນ້ອມໄດ້ ຫນີອອກຈາກເມືອງອັງກິດ ໄປສູ່ເມືອງເລເດັນ ປະເທດຮອລແລນ ເພື່ອບຳເພັນສາສນາຕາມຄວາມປະສົງຂອງເຂົາເຈົ້າ. ຫລາຍປີຕໍ່ ມາ ພວກທີ່ບຳເພັນສາສນາຢູ່ເມືອງ ເລເດັນໄດ້ຕົກລົງໃຈອົພຍົບ ໄປສູ່ໂລກໃຫມ່ໃນປີ ๑๗๘๐ ແລະເຂົາເຈົ້າໄດ້ຕັ້ງອານານິຄົມ ປີລ

ກຣິມ ຂອງຜູ້ສແວງບູນຢູ່ເມືອງນິວປລາຍມູດ.

ຕໍ່ມາ ເມື່ອພຣະເຈົ້າຊາລທີນຶ່ງ ຂຶ້ນສເວີຍຣາຊສົມບັດໃນປີ ຈຝ๘๕, ຜູ້ນຳຂອງພວກປູຣິຕັນໃນປະເທດອັງກິດກໍຖືກຈອງລ້າງຈອງ ຜານກັນຕາມທີ່ເຫັນມາ. ພະຫລາຍອົງ ຖືກສັ່ງຫ້າມ ບໍ່ໃຫ້ເທສນາ ແລະສແດງທັມ ແລະພະເຫລົ່ານີ້ໄດ້ຫ້ອນໂຮມກັນ ແລ້ວຕິດຕາມພວກ ສແວງບູນ ໄປເມືອງອະເມຣິກາ. ພວກທີ່ອົພຍົບໄປ ເທື່ອທີສອງນີ້ ແຕກຕ່າງກັບພວກທີ່ອົພຍົບໄປເທື່ອທຳອິດ ເພາະວ່າ ພວກນີ້ ເປັນ ພວກທີ່ຮັ່ງມີແລະຖານະດີ, ເຂົາເຈົ້າໄດ້ໄປຈອດເຮືອຢູ່ອ່າວອານານີ ຄົມເມືອງແມແຊຈູແຊດສ່ ໃນປີ ຈຝນ້ວ. ໃນສິບປີຕໍ່ມາ ພື້ນຖານ ຂອງພວກປູຣິຕັນໄດ້ແຜ່ຂຍາຍໄປທົ່ວ ຮອດເຄື່ງໂຫລຂອງອານານີຄົມ ອັງກິດ. ພວກປູຣິຕັນນີ້ ບໍ່ແມ່ນແຕ່ພວກທີ່ໄປຕັ້ງຖິ່ນຖານໃຫມ່ ໂດຍ ການສແວງຫາເສຣີພາບໃນການບຳເພັນສາສນາເທົ່ານັ້ນ, ຄວາມບໍ່ ພໍໃຈຢ່າງອື່ນອີກ ຊຶ່ງເກີດຈາກການເຊົ່າທີ່ດິນຢູ່ເມືອງອະເມຣິກາໄວ້ ເປັນບ່ອນທຳມາຫາກິນຊຶ່ງຕ້ອງເຊົ່າຈາກສະມາຄົມ ເຄກເກີປະເທດ ອັງກິດ ແລະທ່ານວິລລຽມເພັນ ຊຶ່ງເປັນຜູ້ຄົ້ນພົບ ເມືອງເພັນຊຸິລເວ ເນັຍມີຄວາມບໍ່ພໍໃຈນຳສະມາຄົມນີ້. ການທີ່ເຊຊຸິລແຄລເວີດເປັນຜູ້ ຄົ້ນພົບເມືອງ ແມຣິແລນນີ້ ກໍຄືຄວາມບໍ່ພໍໃຈໃນຊາວອັງກິດທີ່ນັບຖືສາ ສນາຄາໂທລິກ, ແລະພວກທີ່ມາຕັ້ງຖິ່ນຖານຈຳນວນຫລວງຫລາຍຢູ່ ເມືອງ ເພັນຊຸິລເວເນັຍ ແລະເມືອງ ນອທແຄໂຣໄຣນານັ້ນ ແມ່ນ

ຕໍ່ມາຣະບົບຂອງນາຍທຶນແບບນີ້ໄດ້ພົບກັບອຸປສັກໃນການທີ່ຈະ
ເຮັດໃຫ້ອານານິຄົມນີ້ເປັນຜົນດີ. ດັ່ງນັ້ນ, ຈຶ່ງມີວິທີໃຫມ່ອີກທີ່ໄດ້
ຈັດຕັ້ງຂຶ້ນເພື່ອສິ່ງເສີມ ພວກທີ່ຈະມາຕັ້ງຖິ່ນຖານຢູ່ອະເມຣິກາໂດຍ
ແມ່ນບໍຣິສັດຜູ້ທີ່ເປັນເຈົ້າຂອງ ແລະຄອບຄົວທີ່ມາດ້ວຍຕົນເອງໄດ້ເຈ
ຣະຈາເຣື່ອງສັນຍາຈ້າງ ກັບພວກທີ່ມາຕັ້ງຖິ່ນຖານ ໃນອະນາຄົດນີ້.
ໃນການຕອບແທນຄ່າໃຊ້ຈ່າຍອື່ນໆແລະຄ່າເດີນທາງນີ້ ພວກທີ່ອົພຍົບ
ມາຕ້ອງເຊັນສັນຍາຈ້າງກັບນາຍທຶນ ໃນຣະຍະເວລາຫນຶ່ງ, ຕາມ
ທັມມະດາແລ້ວ ຕັ້ງແຕ່ສີ່ປີຫາເຈັດປີ. ເມື່ອໝົດກຳນົດສັນຍາຈ້າງ
ແລ້ວ, ເຂົາເຈົ້າຈະໄດ້ຮັບທີ່ດິນປະມານ ໑໕໔ ໄຣ່ ໄວ້ເປັນບ່ອນ
ທຳມາຫາກິນຕໍ່ໄປ. ພວກອົພຍົບອອກຈາກປະເທດຂອງຕົນ ທີ່ມີ
ສ່ວນກ່ຽວຂ້ອງກັບເຣື່ອງນີ້ ເອີ້ນວ່າ "ຄົນໃຊ້ຕາມສັນຍາຈ້າງ" ຊຶ່ງ
ໄດ້ມີການຄາດຄະເນວ່າ ຈຳນວນເຄິ່ງໜຶ່ງ ຂອງພວກ ທີ່ອົພຍົບມາ
ຕັ້ງຖິ່ນຖານຢູ່ອະເມຣິກາ ແມ່ນມາຕາມສັນຍາຈ້າງແບບນີ້. ຕາມ
ທັມມະດາແລ້ວ, ເຂົາເຈົ້າໄດ້ປະຕິບັດຕາມສັນຍາຢ່າງຖືກຕ້ອງແລະ
ຈົງຮັກພັກດີຕໍ່ນາຍທຶນທຸກປະການ ແລະມີລູກຈ້າງຈຳນວນນ້ອຍທີ່ໜີ
ຈາກນາຍຈ້າງເມື່ອໂອກາດອຳນວຍໃຫ້ ເຂົາເຈົ້າສາມາດຫາທີ່ດິນ
ໄດ້ງ່າຍ ເພື່ອຕັ້ງບ້ານເຮືອນນຳອານານິຄົມໃກ້ຄຽງ ໂດຍບໍ່ມີຮອຍ
ມົນທິນຫລືການສຽດສີຈາກສັງຄົມຕິດຢູ່ໃນຄອບຄົວ ຊຶ່ງມີກຳເນີດຢູ່ໃນ
ອະເມຣິກາໂດຍການຢູ່ໃນລັກສນະເປັນຫາດ.

ตามความเป็นจริงแล้ว, ผู้นำหลายคนของแต่ละอาณานิคมแม่นพวกสันยาจ้างหลีลูกหลานที่สืบต่อกันมา และเอิ้าเจ้ากลับกับพวกที่มาตั้งถิ่นฐานทั่วหลาย, จุมล่าสำลับปะเทดอื่ว ความต้องการส่วนใหย่แม่นยากให้มีพิลเมืองหลาย และพวกที่มาตั้งถิ่นฐาน ยู่ตามอาณานิคมต่างๆมีความพากพูมใจในผืนสำเร็ดในความรั่วมิ อื่วเอิ้าเจ้าได้รับส่วนแบ่งเท่าๆกันหมิดทุกคน ด้วยว่าที่คน และอุพยากอมพัมมะอาดที่รั่วมินั้นมีหลอวหลายเกินขอบเขด และความก้าวหน้านั้นอื่นยู่กับจำนวนพิลเมืองที่มียู่.

ในบันดาพวกที่มาตั้งถิ่นฐานยู่เมืองอะเมริกา ในสามส่วนสี่ของสัตอัดที่สิบเจ็ดนั้น ส่วนหลายแม่นอาวอังกิด. นอกนั้นก็มีอาวดัส, อาวสวิเดัน, อาวเยิธะมัน เป็นจำนวนน้อยที่ตั้งถิ่นฐานยู่ตามพากกางและในเขดธัฐแลโธมาทางใต้และบ่อนอื่นอีกก็มีอาวฝรั่งเสดเป็นจำนวนน้อย และนอกจากนี้ก็ยังมีอาวสะเปน, อาวอิตาลยม และอาวปอกตูกิส์ ปายกันไปตามบ่อนต่างๆ แต่พวกนี้แม่นจำนวนน้อยปะมานสิบเปิเอื้น, ของพิลเมืองทั่วหมิด.

<u>อัทมะทัมหลายย่างปะสิมกัน</u>

ຫລັງຈາກປີ ໑໗໙໐, ປະເທດອັງກິດ ບໍ່ໄດ້ເປັນແຫລ່ງທີ່ປະ
ຊາຊົນອົພຍົບອອກຈາກປະເທດ ໄປຢູ່ບ່ອນອື່ນ ເໝືອນແຕ່ກ່ອນອີກ
ສ່ວນຫລາຍ ແມ່ນຜູ້ຄົນຈາກປະເທດເຢີຣະມັນ, ຈາກປະເທດໄອຣ໌
ແລນ, ສວິດເຊີແລນ ແລະປະເທດຝຣັ່ງເສດ ດ້ວຍເຫດຜົນຫລາຍ
ປະການ. ຊາວເຢີຣະມັນຫລາຍພັນຄົນ ອົພຍົບ ຫນີຈາກຢຸໂຣບ
ເພື່ອຫລີກເວັ້ນສົງຄາມ. ຊາວສະກອດ ໄອຣິສ ຫນີຈາກປະເທດ
ໄອຣ໌ແລນທາງພາກເໜືອ ເພື່ອຫລີກເວັ້ນຄວາມທຸກຍາກ ຊຶ່ງເກີດ
ຈາກຣັຖບານ ແລະການກີດຂີ່ມເຫັງຈາກເຈົ້າຂອງທີ່ດິນ. ເພື່ອ
ຫລີກເວັ້ນຈາກຄວາມທຸກຍາກນາໆປະການ, ປະຊາຊົນທີ່ປະເທດສະ
ກອດແລນ ແລະປະເທດສະວິດເຊີແລນ ຊຶ່ງອົພຍົບອອກຫນີ ຈາກ
ປະເທດຂອງຕົນເໝືອນກັນ ແລະການເຂົ້າເມືອງຂອງຊາວອົພຍົບ
ປຽບເໝືອນຟອງນ້ຳ, ແຕ່ໃນຣະຍະນຶ່ງ ຂອງຫລາຍປີຕໍ່ມາ ກໍ
ປຽບເໝືອນສາຍນ້ຳທີ່ໄຫລສະເມີ. ໃນປີ ໑໗໙໐, ຈຳນວນພົລ
ເມືອງຫັ້ງຫມົດໃນອະເມຣິກາປະມານສອງແສນກວ່າຄົນ, ໃນທຸກໆ
ຣະຍະຊາວຫ້າປີ ມີພົລເມືອງທະວີຂຶ້ນຕື່ມ ເຄິ່ງນຶ່ງ, ຈົນຮອດປີ
໑໗໙໕ ຈຳນວນພົລເມືອງທະວີຂຶ້ນຫລາຍກວ່າສອງລ້ານຫ້າແສນຄົນ.

ທົ່ວທຸກບ່ອນ, ຜູ້ທີ່ມາຕັ້ງຖິ່ນຖານທີ່ບໍ່ເປັນຊາວອັງກິດນັ້ນ ໄດ້
ປັບປຸງເອົາເຈົ້າເອງ ໃຫ້ເຂົ້າກັບວັທນະທັມເດີມ ຂອງຜູ້ທີ່ມາຕັ້ງຖິ່ນ
ຖານຢູ່ກ່ອນ. ນີ້ບໍ່ໄດ້ຫມາຍຄວາມວ່າ ພວກທີ່ມາຕັ້ງຖິ່ນຖານຢູ່ໃຫ້ຈະ

ຕ້ອງປ່ຽນແປງຕົວເຂົາເຈົ້າ ໃຫ້ເປັນຊາວອັງກິດ ໃນຕ່າງປະເທດ, ແຕ່ການປ່ຽນແປງນີ້ກໍ່ຄືຫມົດທຸກຄົນໃຊ້ພາສາອັງກິດ, ໃຊ້ກົດຫມາຍ ແບບອັງກິດແລະນິດໃສໃນການອອກຄວາມຄິດຄວາມເຫັນ, ແລະຈະ ຕ້ອງມີການປ່ຽນແປງຕາມສະພາບການໃນອະເມຣິກາ. ແລະໃນວິ ທີການຢູ່ກິນຮ່ວມກັນຂອງພວກຄົນເຂົ້າເມືອງນີ້ ມີເຄົ້າເດີມມາຈາກ ພວກທີ່ມາຕັ້ງຖິ່ນຖານຊາວອັງກິດ, ຕໍ່ມາກໍມີການປ່ຽນແປງວັທນະທັມ ບາງສິ່ງບາງຢ່າງ ແລະຜົນສຸດທ້າຍມາກໍດັດແປງໃຫ້ເປັນວັທນະທັມ ອັນດຽວກັນ. ນັ້ນຄືການປະສົມວັທນະທັມອັງກິດແລະຢຸໂຣບຕາມລັກ ສນະ ແລະສິ່ງແວດລ້ອມຂອງໂລກໃຫມ່.

ແມ່ນວ່າໃຜ້ຜູ້ນຶ່ງ ຢາກຍົກຍ້າຍຄອບຄົວຂອງຕົນ ຈາກເມືອງ ແມແຊຈູແຊສມາເມືອງ ເວີຊີເນັຍຫລືຈາກເມືອງແຄໂຣໄຣນາຫາງ ໃຕ້ໄປເມືອງເພັນຊີລເວເນັຍ ກໍໄປໄດ້ຢ່າງສະບາຍ ໂດຍບໍ່ຕ້ອງດັດ ແປງຫລືປັບປຸງພື້ນຖານໃດໆ ໃນການເຂົ້າກັບຫມູ່ຄນະ, ແຕ່ວ່າລັກ ສນະພິເສດຂອງແຕ່ອາມາມິຄົນ ເປັນສິ່ງທີ່ເຫັນໄດ້ງ່າຍ ໃນຫມູ່ພວກ ເຂົາເຈົ້າເອງ ແລະເຂົາເຈົ້າຍິ່ງສັງເກດເຫັນໄດ້ງ່າຍ ໃນຣະ ຫວ່າງແຕ່ລະຄນະຂອງອາມາມິຄົນ.

ບ່ອນທີ່ຜູ້ຄົນສ່ວນຫລາຍນິຍົມໄປຕັ້ງຖິ່ນຖານຢູ່ສ່ວນຫລາຍແຍກ ອອກເປັນສາມບ່ອນດ້ວຍກັນ, ນຶ່ງໃນນັ້ນແມ່ນທາງເຂດນິວອິງແລນດ໌ ຊຶ່ງກາຍເປັນແຫລ່ງສຳຄັນໃນກິຈການຄ້າອຸສາຫະກັມ, ໃນຂນະດຽວ

ກັນທີ່ທາງໃຕ້ ກຳລັງຈັດຕັ້ງສະມາຄົມກ່ຽວກັບການແບ່ງປັນໄຮ່ນາກັນ ຢ່າງຂຶ້ນຫນ້າຂຶ້ນຕາ. ພູມີປະເທດເປັນປັດໃຈສຳຄັນ ໃນການຊຸ້ຊາ ຕາຂອງແຕ່ລະເມືອງ, ທາງເຂດທີ່ເປັນນ້ຳແຂງ ຄືເມືອງນິວອິງ ແລນດ້ ເຕັມໄປດ້ວຍຫີນກ້ອນໃຫຍ່ທົ່ວໆໄປ ແລ້ວດິນທາງເຂດນີ້ບໍ່ ຄ່ອຍດີປານໃດ ນອກຈາກບາງບ່ອນທີ່ຢູ່ແຄມຫ້ວຍຮ່ອມ ພູເຂົາ ແລະ ຫນ້າດິນຮາບພຽງມີເລັກນ້ອຍ ຊຶ່ງມີລະດູຮ້ອນ ສັ້ນ ແລະລະດູຫນາວ ຍືດຍາວ ຊຶ່ງເຮັດໃຫ້ການເຮັດໄຮ່ເຮັດນາບໍ່ໄດ້ຜົນເຫມືອນທາງເຂດ ອື່ນ, ແຕ່ປະຊາຊົນຢູ່ທາງເຂດອື່ນ, ແຕ່ປະຊາຊົນຢູ່ທາງເຂດນິວອິງ ແລນດ້ນີ້ໄດ້ພົບຜົນປະໂຍດຕາມມາພາຍຫລັງ. ເຂົາເຈົ້າໄດ້ໃຊ້ກຳ ລັງນ້ຳໃນການຈັດຕັ້ງໂຮງສີເຂົ້າຝ້າງ (ເຂົ້າເບລ) ແລະເຂົ້າສາລີ ເລື່ອຍໄມ້ສຳລັບສົ່ງອອກຂາຍປະເທດນອກ ແລະເມືອງທີ່ຢູ່ຕາມແຄມ ຝັ່ງນີ້ໃຊ້ເປັນທ່າເຮືອທີ່ດີຊຶ່ງສົ່ງເສີມກິຈການຄ້າໃຫ້ກ້າວຫນ້າຍິ່ງຂຶ້ນ. ການທີ່ມີໄມ້ດີໆນີ້ ພາໃຫ້ການກໍ່ສ້າງເຮືອ ແລະກ່ຳປັ່ນຈະເຮີນດີ, ແລະເຕັມໄປດ້ວຍຄວາມຮັ່ງມີ. ການປະໂມງສິ່ງດຽວເທົ່ານັ້ນ ກໍ ພາໃຫ້ເປັນພື້ນຖານ ແຫ່ງຄວາມຮັ່ງມີ ສຳລັບເມືອງແມແຊຈູແຊດສ້ ເຫມືອນກັນ.

## <u>ສາສນາເຄັ່ງຄັດໃນເມືອງນິວອິງແລນດ້</u>

ປະຊາຊົນພາກັນຕັ້ງຖິ່ນຖານຕາມບ້ານ ຕາມເມືອງ ແລະ

ຕາມແຄມທ່າກ່ຳປັ່ນ, ບໍ່ດົນຊາວເມືອງນິວອິງແລນດ້ ກໍຂຍາຍການ ເປັນຢູ່ໃນເຂດຂອງຕົນ ອອກໄປຕາມທົ່ງຫຍ້າ ແລະປ່າໄມ້ອ້ອມແອ້ມ ເມືອງນີ້ ຊຶ່ງພຽງພໍກັບຄວາມຕ້ອງການຂອງຊາວບ້ານໃນການທຳມາ ຫາກິນດ້ວຍການເຮັດໄຮ່ແລະລ້ຽງສັດ ນອກຈາກເຮັດໄຮ່ ເຮັດນາ ແລ້ວ ພວກພໍ່ໄຮ່ພໍ່ນາຍັງໄດ້ຄ້າຂາຍອີກດ້ວຍ ແລະການມີລາຍໄດ້ ຫມັ້ນຄົງດີພາໃຫ້ມີໂຮງຮຽນປະຈຳບ້ານ, ມີໂບດ, ມີການປະຊຸມໃນ ບ້ານ, ມີການຕິດຕໍ່ຫາກັນສະດວກດີ ແລະສິ່ງທັງຫມົດນີ້ມີອິດທິພົນນຳ ໄປສູ່ທັມມະຊາດ ຂອງການຂຍາຍຄວາມສີວິໄລ. ດ້ວຍການປະສົບ ຄວາມຍາກລຳບາກອັນດຽວກັນ, ເຊັ່ນວ່າ ການເຮັດໄຮ່ນາໃສ່ດິນ ຫົນແລະການຄ້າຂາຍເຄື່ອງທີ່ເຮັດດ້ວຍຜີມືແບບທັມມະດາໆນີ້, ຊາວ ນິວອິງແລນດ້ມີລັກສນະພິເສດທີ່ແຕກຕ່າງກັນກັບພວກອື່ນ.

ຄຸນພາບອັນນີ້ໄດ້ສືບເນື່ອງມາຈາກຄາວກ່ອນໆ ເມື່ອຈຳນວນ ນັກສະແວງບູນ ๑๐๘ ຄົນທີ່ເມົາທະເລ ແລະອິດເມື່ອຍໄດ້ເດີນທາງ ມາເຖິງເຄບຄອດຈາກເມືອງເລເດັນ ແລະເມືອງປລາຍມູທ, ການ ເດີນທາງມາຄັ້ງນີ້ແມ່ນບໍຣິສັດວັນເດີນເປັນຜູ້ອຸປຖັມ, ແລະມູ້ງຫນ້າ ຈະໄປຕັ້ງຖິ່ນຖານ ຢູ່ເມືອງເວີຊິເນັຍ. ການມາຄັ້ງນີ້ ແມ່ນມານຳ ເຮືອທີ່ມີຊື່ດັງທີ່ສຸດ ຄືເຮືອ ເມ ຟລາວເວີຣ້ (Mayflower) ໄດ້ເຂົ້າທຽບຝັ່ງໄກໄປທາງເຫນືອ. ອາທິດນຶ່ງ ຫລັງຈາກການສຳ ຮວດຄົ້ນຄວ້າເບິ່ງຖິ່ນຖານໃຫມ່ແລ້ວ, ພວກທີ່ມານີ້ຕົກລົງໃຈຢຶດເອົາ

ບ່ອນນີ້ເປັນບ່ອນທຳມາຫາກິນ ແລະບໍ່ເດີນທາງຕໍ່ໄປຍັງເມືອງເວີຊີ ເນັຍອີກ. ເຂົາເຈົ້າເລືອກທ່າເຮືອເມືອງປລາຍມູທ ເປັນທີ່ຕັ້ງອາ ນານິຄົມຂອງເຂົາເຈົ້າ ຫລັງຈາກໄດ້ຕໍ້ສູ້ກັບຄວາມຫນາວສະທ້ອນໃນ ຮະດູຫນາວເປັນເທື່ອທຳອິດ ແລະເຂົາເຈົ້າກໍໄດ້ລອດຊີວິດມາໄດ້.

ໃນຂນະທີ່ຜູ້ຄົນຢູ່ປລາຍມູທ ກຳລັງຕໍ້ສູ້ ໃນການມີຊີວິດຢູ່ນັ້ນ, ພວກອື່ນທີ່ຢູ່ໃກ້ຄຽງນັ້ນກໍກຳລັງກໍ່ຕັ້ງຖິ່ນຖານຢູ່ຄືກັນ. ພວກທີ່ຢູ່ທາງ ເຂດແມແຊຈູແຊດ ເບ ( Massachusetts Bay) ຫລັງຈາກປີ ຈຝສ້ວ, ໄດ້ມີບົດບາດສຳຄັນໃນການພັທນາເມືອງນິວອິງແລນດ້ແລະ ຊາດອີກດ້ວຍ. ເມືອງນີ້ຖືກຄົ້ນພົບໂດຍບຸກຄົນ ຊາວຫ້າ ຄົນ ທີ່ໄດ້ ຮັບພຣະບໍຣົມຣາຊານຸຍາດ ( Royal Charter) ບາງຄົນໃນ ກູ່ມນີ້ຮ່ວມກັບບຸກຄົນອີກຄນະນຶ່ງ ທີ່ມາຕັ້ງຖິ່ນຖານຢູ່ເມືອງອະເມຣິກາ ໂດຍຕົນເອງ, ໄດ້ເອົາຣາຊບັນຍັດນີ້ມາພ້ອມ ເພາະເຂົາເຈົ້າຕົກ ລົງໃຈຈະເປັນຜູ້ສືບຕໍ່ເມືອງນີ້ຕໍ່ໄປ ໃນຄວາມນຶກຄິດຂອງເຂົາເຈົ້າ. ເມືອງນິວອິງແລນດ້ນີ້ເປັນສວັນນ້ອຍບ່ອນນຶ່ງສຳລັບເຂົາເຈົ້າ ແລະ ບາງຄົນໃນຈຳພວກທີ່ມາຕັ້ງຖິ່ນຖານຢູ່ພີ້ເມື່ອກັບຄົນເມືອປະເທດຂອງ ເຂົາເຈົ້າແລ້ວ ຍັງຝາກຄວາມຫວັງໄວ້ກັບເມືອງນີ້ຢູ່, ສ່ວນພວກທີ່ ເຫລືອຢູ່ໃນເມືອງນີ້ກໍພາກັນມີມານະອົດທົນເຮັດວຽກການໃນການທຳ ມາຫາກິນ ແລະສ້າງສັງຄົມ ໃຫ້ເຫມາະສົມກັບພວກທີ່ມີຄວາມຄິດອັນ ຫມັ້ນຄົງໃຫ້ເປັນຂອງຕົນເອງ. ໃນຣະຍະສິບປີທຳອິດຕໍ່ມາ, ໄດ້ມີ

ນັກສະແດງທັມທີ່ຊຳນານໃນດ້ານຫລັກການປະມານຫົກສິບຫ້າທ່ານໄດ້ มาธอดເມືອງນີວອິງແລນດ່, ແຕ່ຈາກນັ້ນມາກໍມີການຂຍາຍການປົກຄອງທີ່ມີກົດຫມາຍຊຶ່ງເຊື່ອວ່າ ເປັນກົດຫມາຍພະເຈົ້າ, ຕາມຫລັກການແລ້ວ ໂບດແລະຣັຖຕ້ອງແຍກອອກຈາກກັນ. ຕາມຄວາມເປັນຈິງແລ້ວ ກໍມີສະຖາບັນບ່ອນດຽວກັນ ຊຶ່ງບ່ອນອື່ນໆທັງຫມົດຂຶ້ນກັບສາສນາ. ຕໍ່ນັ້ນມາບໍ່ດົນ ຣະບົບການປົກຄອງແບບຖືກົດຫມາຍພະເຈົ້າ ແລະເຊື່ອຖືຕາມຜູ້ຜະເດັດການ ໂດຍປາສຈາກການໂຕ້ແຍ້ງກໍ່ໄດ້ປາກົດຕົວຂຶ້ນມາ. ຈາກການພົບປະຫລືການປະຊຸມກັນສອງຄັ້ງ ຊຶ່ງໃຫ້ໂອກາດແກ່ຜູ້ເຂົ້າຮ່ວມປຶກສາຫາລື ເຖິງບັນຫາຂອງປວງຊົນ ທົ່ວໄປ ແລະຂອງພວກທີ່ມາຕັ້ງຖິ່ນຖານຢູ່ນີ້, ເຂົາເຈົ້າໄດ້ມີປະສົບການບາງຢ່າງໃນການຈັດຕັ້ງຣັຖບານໂດຍຕົນເອງ, ແມ່ນວ່າຫມູ່ບ້ານຕ່າງໆ ຕັ້ງຢູ່ອ້ອມແອ້ມອົງການຂອງໂບດ, ພົລເມືອງທັງຫມົດ ທີ່ມີຖິ່ນຖານຢູ່ຕາມຊາຍແດນໄດ້ແບ່ງປັນພາລະຫນ້າທີ່ ຂອງພົລເມືອງດີໂດຍການ ຈັດໃຫ້ມີການປະຊຸມເພື່ອປຶກສາແກ້ໄຂບັນຫາຕ່າງໆແລະຫລາຍປີຜ່ານ ມາ ພວກພະແລະພວກຄົນທັມມະດາທີ່ຢາກຮັກສາຂນົບປະເພນີໄວ້ ກໍ ພາກັນພຍາຍາມເຮັດຕາມກັນ. ເປັນທັມມະດາຢູ່, ເຂົາເຈົ້າ ບໍ່ສາ ມາດຊັກຈູງຄວາມນຶກຄິດຂອງພົລເມືອງຫມົດທຸກຄົນໄດ້ ຫລືບັງຄັບໃຫ້ ຫມົດທຸກຄົນເວົ້າເປັນສຽງດຽວກັນ, ດັ່ງນັ້ນທ່ານ ໂຣເຢີ, ວິລລຽມ ຊຶ່ງຖືວ່າເປັນກະບົດ ຕໍ່ພຣະທີ່ມີຊີວິດບໍຣິສັດ ແລະເປັນຄົນສລາດຫລັກ

ແຫລມອີກດ້ວຍ ໄດ້ຕັ້ງຄຳຖາມເຖິງສິດທິໃນການຍາດເອົາທີ່ດິນຂອງ
ພວກອິນເດັຍແດງແລະຄວາມຮອບຄອບໃນການຊັກນຳເອົາໂຍດແລະ
ຣັຖເຂົ້າມາຮ່ວມກັນ ເປັນອັນດຽວກັນ. ການແຜ່ຜາຍຄວາມຄິດ
ຄວາມເຫັນແນວໃຫມ່ທີ່ເຫັນວ່າເປັນໄພຕໍ່ເຈົ້າໜ້າທີ່ຝ່າຍປົກຄອງນັ້ນ,
ທ່ານຈຶ່ງໄດ້ຖືກຈຳຄຸກແລະເນຣະເທດ, ແຕ່ທ່ານໄດ້ຫລົບໜີໄປຢູ່ນຳ
ພວກອິນເດັຍແດງທີ່ມີໄມຕຣີຈິດອັນດີ ຕໍ່ທ່ານຢູ່ໃນເມືອງໂຣດໄອແລນ
ແລະຕໍ່ມາກໍໄດ້ຈັດຕັ້ງອານານິຄົມຂຶ້ນ ໂດຍຕັ້ງອຸດົມການໄວ້ວ່າບຸກຄົນ
ໃດຢາກເຊື່ອຖືອັນໃດ ກໍສຸດແລ້ວແຕ່ປາຖນາ, ແຕ່ອົງການສາສນາ
(ໂບດ) ແລະຣັຖບານຕ້ອງແຍກອອກຈາກກັນຢ່າງເດັດຂາດ.

ແຕ່ຜູ້ທີ່ຢູ່ນອກສາສນາ, ບໍ່ແມ່ນມີແຕ່ທ່ານວິລລຽມໂຣເຢີ ຜູ້
ດຽວທີ່ໜີຈາກເມືອງແມສຊູແຊດ ເພື່ອສວ່ງຫາເສຣີພາບໃນການ
ນັບຖືສາສນາຕາມຄວາມພໍໃຈ, ພວກປູຣິຕັນ ຊຶ່ງຄົນທັ່ງຫລາຍນັບຖືກໍ
ຍັ່ງຫາທີ່ດິນບ່ອນໃຫມ່ ແລະຫາໂອກາດໜີຈາກເມືອງນັ້ນ. ຂ່າວລືທີ່
ວ່າດິນຕາມຫ້ວຍຮ່ອມເມືອງຄໍແນກຕິຄັດອຸດົມສົມບູນດີ, ພາໃຫ້ຊາວ
ນາທີ່ໄດ້ຮັບຄວາມລຳບາກຍາກແຄ້ນຍ້ອນດິນທີ່ຕົ້ນທຳມາຫາກິນບໍ່ດີ ມີ
ຄວາມສົນໃຈຫລາຍ ແລະເຂົ້າເຈົ້າພ້ອມແລ້ວທີ່ຈະສ່ຽງອັນຕລາຍທີ່
ອາດຈະເກີດຈາກພວກອິນເດັຍແດງທຸກຢ່າງ ເພື່ອແລກກັບດິນທີ່ຣາບ
ພຽງແລະອຸດົມສົມບູນດີ. ສິ່ງທີ່ສຳຄັນກໍຄືຄົນຈຳພວກນີ້ໄດ້ຈັດຕັ້ງຣັຖ
ບານຂຶ້ນ ໂດຍໃຫ້ສິດທິປະຊາຊົນໃນການລົງຄະແນນສຽງເລືອກຕັ້ງ

ແລະບໍ່ໃຫ້ສະມາຊິກຂອງໂບດລົງຄະແນນສຽງ ແລະໃນເວລາດຽວ ກັນນີ້, ພວກອົ່ນທີ່ຕັ້ງຖິ່ນຖານຢູ່ເມືອງແມແຊຈູແຊດ ກໍກຳລັງຊອກຫາ ຊ່ອງທາງຂຍາຍໄປທາງພາກເຫນືອ ແລະຕໍ່ມາເຂົາເຈົ້າກໍໄດ້ຄົ້ນພົບ ເມືອງນິວແຮມເຊັຍ ແລະ ເມນ (Maine) ອັນນີ້ແມ່ນຜົນການ ສແວງຫາອິສຣະພາບແລະທີ່ດິນຂອງບັນດາຜູ້ຊາຍແລະຜູ້ຍິງກູ່ມນີ້ງ.

ໃນຂນະທີ່ອ່າວແມແຊຈູແຊດ ກຳລັງແຜ່ຜາຍອິດທິພົນອອກໄປ ໂດຍທາງອ້ອມ, ທາງໃນເມືອງກໍມີການກ້າວຫນ້າຢ່າງໄວທີ່ສຸດແລະ ກິຈການຄ້າ ກໍຂຍາຍດີເຫມືອນກັນ. ແຕ່ເຄື່ງສັຕວັດເປັນຕົ້ນໄປ, ເມືອງນີ້ໄດ້ກາຍເປັນເມືອງທີ່ຮັ່ງມີໄວທີ່ສຸດ ແລະເມືອງບອສຕັນ ກໍ ກາຍເປັນທ່າເຮືອທີ່ໃຫຍ່ທີ່ສຸດ ໃນອະເມຣິກາ. ໄມ້ທີ່ເອົາມາສ້າງ ເຮືອແລະໄມ້ທີ່ເອົາມາເຮັດເສົາສູງ ແມ່ນເອົາມາຈາກປ່າທາງພາກ ເຫນືອຂອງຝັ່ງຕະວັນອອກທັງນັ້ນ ແລະປະຊາຊົນໃນເຂດນີ້ ສ້າງ ເຮືອດ້ວຍຕົນເອງແລ້ວສົ່ງອອກໄປຂາຍຕາມປະເທດຕ່າງໆ ທົ່ວໂລກ ພ້ອມທັງຂົນເອົາເຄື່ອງຂອງສິນຄ້າໄປຂາຍດ້ວຍ. ຜູ້ບັງຄັບເຮືອໃນ ອ່າວແມແຊຈູແຊດໄດ້ວາງພື້ນຖານຂອງການເດີນເຮືອ ຊຶ່ງຕໍ່ມາກໍຍິ່ງ ມີຄວາມສຳຄັນຂຶ້ນໄປເລື້ອຍໆ. ໃນວາຣະສຸດທ້າຍ ຂອງການເປັນ ຫົວເມືອງຂຶ້ນ, ນີ່ງສ່ວນສາມຂອງຈຳນວນເຮືອທີ່ຖືທູງອັງກິດ ແມ່ນ ເຮືອທີ່ສ້າງຂຶ້ນໃນອະເມຣິກາ ແລະຜົນຜລິດຂອງເຄື່ອງອຸປໂພກ ທີ່ ເຫລືອຄວາມຕ້ອງການ ອີກເມືອງນີ່ງ ຊຶ່ງມີສະພາບເຊັ່ນດຽວກັນນີ້

ປະກອບດ້ວຍຜູ້ຄົນຫລາຍພາສາ ຊຶ່ງກາຍເປັນວິທຍາຂອງສະພາບເປັນ
ຈິງຂອງເມືອງອະເມຣິກາຕັ້ງແຕ່ກາງສໄມສັຕວັດທີ່ສິບເຈັດພົ້ນ. ຕົກ
ມາເຖິງປີ ໑໘໔໘, ປາກົດວ່າ ຕາມທາງແຖບຫັດເຊິນ (Hudson)
ມີຜູ້ຄົນໃຊ້ຫລາຍກວ່າສິບພາສາ ເພາະມີພົລເມືອງປະກອບດ້ວຍຊາວ
ດັສ (Dutch) ຊາວເຟລມິງ (Fleming) ຊາວ ວໍລູນ
(Walloons) ຊາວຝຣັ່ງເສດ, ຊາວດານິວ (Danois) ຊາວ
ນໍເວ (Norwegians) ຊາວ ສວິດເດິລ (Swedes) ຊາວອັງ
ກິດ ຊາວສະກອດ ຊາວໄອຣິສ, ຊາວເຢີຣະມັນ, ຊາວໂປແລນ,
ຊາວໂບເຮມຽນ, ຊາວປໍຕຸກິສ ແລະຊາວອິຕາລຽນ ຊຶ່ງເປັນຜູ້ນໍາ
ໜ້າໃນເພື່ອນຮ່ວມຊາດຫລາຍລ້ານຄົນ ໃນສັຕວັດ ທີ່ຈະມາເຖິງ.
ສ່ວນຫລາຍພົລເມືອງເຫລົ່ານີ້ທໍາມາຫາກິນດ້ວຍການຄ້າຂາຍແລະໄດ້,
ຈັດຕັ້ງຄວາມສືວິໄລໃນດ້ານການຄ້າ ສືບຕໍ່ກັນມາເທົ່າທຸກວັນນີ້.

## ຊາວດັສຂຍາຍອົດໜົນ

ຊາວດັສຄອບຄອງເມືອງ ນິວເນເທີແລນດ໌ເປັນເວລາສີ່ສິບ
ປີ, ແຕ່ຕໍ່ມາເມືອງນີ້ກໍຖືກປ່ຽນຊື່ໃໝ່ ຊຶ່ງເອີ້ນວ່າເມືອງນິວຢອກ
ພົລເມືອງທີ່ຢູ່ໃນເມືອງນີ້ບໍ່ແມ່ນພວກທີ່ອົພຍົບ ອອກຈາກປະເທດຂອງ
ຕົນໄປຢູ່ປະເທດອື່ນ ເພາະວ່າ ໃນປະເທດຮໍແລນ ມີດິນພໍທີ່ຈະຢູ່ອາ
ໄສໄດ້ຢູ່, ແຕ່ພວກອາມານິດົນໄດ້ໃຫ້ໂອກາດເຂົ້າເຈົ້ານ້ອຍເກີນໄປ

ທັງໃນດ້ານການເມືອງແລະສາສນາ ຊຶ່ງພາໃຫ້ເຂົາເຈົ້າບໍ່ພໍໃຈທີ່ສຸດ. ນອກຈາກນີ້ບໍ່ຣິສັດຂອງອຸາວດັສ ທີ່ຢູ່ທາງເບື້ອງຕາວັນຕົກ ຂອງປະເທດອິນເດັຍ ຊຶ່ງພຍາຍາມຈັດຕັ້ງຖິ່ນຖານຢູ່ໃນໂລກໃຫມ່ນີ້, ເຫັນວ່າເປັນການລຳບາກຫລາຍ ໃນການທີ່ຈະຫາຂ້າຣາຊການຜູ້ໃດຜູ້ນຶ່ງ ມາບໍ່ຣິຫານອານານິຄົມແຫ່ງນີ້ໃຫ້ກິຈການດຳເນີນໄປໂດຍສະດວກດີ. ຕໍ່ມາໃນປີ ๑๗๗๔ ດ້ວຍການຟື້ນຟູຄວາມສົນໃຈຂອງອຸາວອັງກິດ ໃນກິຈການຂອງອານານິຄົມນີ້, ການຕັ້ງຖິ່ນຖານຂອງອຸາວດັສປາກົດຂຶ້ນ ເນື່ອງຈາກໄດ້ໄຊຊນະໃນການສູ້ຣົບ ແລະຫລັງຈາກນັ້ນມາເປັນເວລານານ ອຸາວດັສຍັງມີບົດບາດສຳຄັນໃນດ້ານສັງຄົມ ແລະເສຖກິດ. ຫລັງຄາເຮືອນຊັ້ນເດັຍ ກໍກາຍເປັນສ່ວນນຶ່ງຂອງທ້ອທັດ... ແລະ ພວກພໍ້ຄ້າຂອງເຂົາເຈົ້າໄດ້ເຮັດໃຫ້ເມືອງນິວເມເທີແລນດ໌ມີລັກສນະ ຂອງສິ່ງແວດລ້ອມໃນດ້ານການຄ້າ ແລະດ້ານນິໄສຂອງອຸາວດັສ ຊຶ່ງ ເປັນມໍຣະດົກ ຕົກທອດກັນມາ. ໃນວັນພັກ ຕາມເທສການຕ່າງໆ ເຂົາເຈົ້າພາກັນສເລີມສລອງດ້ວຍການກິນລ້ຽງ ແລະມີການມ່ວນຊຶ່ນ ຕ່າງໆຕາມປະເພນີຂອງອຸາວດັສ ເຊັ່ນວ່າ ການໄປຢ້ຽມຢາມເພື່ອນ ບ້ານໃນເທສການວັນຂຶ້ນປີໃຫມ່ ແລະດື່ມອວຍພອນກັນແລະການໄປ ຢ້ຽມຢາມ ເພື່ອນບ້ານໃນເທສການວັນຂຶ້ນປີໃຫມ່ ແລະດື່ມອວຍພອນ ກັນແລະການໄປຢ້ຽມຢາມ ແຊງ ໂຈວ໌ອານ ນິໂກລັສ ໃນວັນເທສ ການຄຣິສມາດ ແລະປະເພນີຍັງສືບເນື່ອງມາເທົ່າທຸກວັນນີ້ ເນື່ອງ

ຈາກການປ່ຽນອຳນາດ ຈາກຊາວດັສ, ນັກປົກຄອງຊາວອັງກິດຈັດ
ການດັດແປງກົດໝາຍຂອງນິວຢອກ ເພື່ອໃຫ້ເໝາະສົມກັບປະເພນີ
ຊາວອັງກິດ. ຕໍ່ມາ ນັກປົກຄອງຊາວອັງກິດໄດ້ປະຕິບັດໜ້າທີ່ຂອງ
ເຂົ້າດ້ວຍຄວາມສາມາດ ແລະຮອບຄອບຈົນວ່າ ໄດ້ຮັບຄວາມເຫັນ
ຊອບແລະຄວາມນັບຖືດ້ວຍໄມຕຣີຈິດຂອງຊາວດັສ ແລະຊາວອັງກິດ
ດ້ວຍກັນ ແຕ່ການປົກຄອງຕາມເຂດນອກເມືອງ ມີລັກສນະອັນເປັນ
ອິສຣະພາບຂອງເມືອງນິວອິງແລນດ໌ ແລະໃນບໍ່ດົນຕໍ່ມາ ເສຖກິດ
ໝາຍດັສແລະປະເພນີທ້ອງເຫລືອຢູ່ ພ້ອມທັງກົດໝາຍອັງກິດແລະ
ພາກປະຕິບັດກໍຍັງມີຊ່ອງທາງພໍທີ່ຈະເຊື່ອມເຂົ້າກັນໄດ້ຢູ່. ອຸປກອນ
ເຄື່ອງເຮືອແລະເຄື່ອງໃຊ້ທີ່ເຮັດດ້ວຍໄມ້ ກໍຖືກສົ່ງອອກຂາຍປະເທດ
ນອກ ແລະຕໍ່ມາ ພວກນັກເດີນເຮືອຢູ່ນິວອິງແລນດ໌ ໄດ້ຄົ້ນພົບວ່າ
ເຫລົ້າຣັມ ແລະພວກຄ້າທາດກໍເປັນສິນຄ້າທີ່ໄດ້ກຳໄຮດີ.

ການສັງຄົມໃນອາມາມິຄົມຊັ້ນກາງ, ຊຶ່ງນັບວ່າໃຫຍ່ເປັນທີ
ສອງ, ແລະເປັນບ່ອນທີ່ຜູ້ຄົນຫລາຍຊາດ ຫລາຍພາສາ ຢູ່ອາໄສບໍ່
ເໜືອນກັນທາງເຂດນິວອິງແລນດ໌, ທາງເມືອງເພນຊິລເວເນັຍ
ແລະອ້ອມແອ້ມນັ້ນເຊັ່ນວ່າ ເມືອງ ເດີລາແວ ໄດ້ຮັບການຖ່າຍທອດ
ພົນສຳເຣັດຈາກທ່ານວິລລຽມເພນ ຊຶ່ງເປັນຜູ້ທີ່ຮູ້ຈັກດີຜູ້ນຶ່ງຊຶ່ງທ່ານ
ໄດ້ເຊົ່າດິນຈາກພະເຈົ້າຊາລທີສອງ. ທ່ານວິລລຽມເພນ ມີຈຸດປະ
ສົງຢາກໃຫ້ພວກທີ່ມາຕັ້ງຖິ່ນຖານ ຫລາຍຊາດຫລາຍພາສາຢູ່ໃຫ້ຫັນ

ມາສົນໃຈນຳການສ້າງສາທິດົນອັນກ້ວາງໃຫຍ່ຕອນນີ້ ແລະທ່ານໄດ້ ເປັນຕົວຢ່າງທີ່ດີໃຫ້ແກ່ພວກທີ່ມາຢູ່ຫນີ້ ຄືໄດ້ປະຕິບັດຕົນໃຫ້ເປັນຄົນຊື່ ສັດກັບພວກອິນເດັຍແດງ ຊຶ່ງທ່ານວິລລຽມເພນໄດ້ເຈຣະຈາແລະໄດ້ ທຳການຕົກລົງ ກັບພວກອິນເດັຍແດງ ຊຶ່ງຕໍ່ມາເຂດແດນປ່າເຖື່ອນ ແຖບນີ້ກໍໄດ້ພົບກັບຄວາມສັນຕິສຸກ. ອານານິຄົມແຫ່ງນີ້ ໄດ້ດຳເນີນ ກິຈການໄປໂດຍດີ ແລະວ່ອງໄວທີ່ສຸດ ພາຍໃນ໕ປີທ່ານວິລລຽມ ເພນອາໃສຢູ່ໃນອານານິຄົມນັ້ ແລະຕໍ່ມາກໍມີພົລເມືອງປະມານສາມ ພັນຄົນຍ້າຍມາຢູ່ເມືອງ ເພນຊິລເວເນັຍ. ນະຄອນຫລວງຂອງອາ ນານິຄົມແຫ່ງນີ້ແມ່ນຟິລາເດັນເຟັຍ ຊຶ່ງຕໍ່ມາເປັນທີ່ຮູ້ຈັກຢ່າງກ້ວາງ ຂວາງວ່າເປັນເມືອງທີ່ຕາມຖນົນຫົນທາງມີຕົ້ນໄມ້ຮົ່ມດີ, ມີອາຄານ ບ້ານເຮືອນທີ່ກໍ້ດ້ວຍດິນຈີ່ແລະຫີນແລະອູ່ເຮືອສຳຫລັບສ້າງເຮືອ. ໃນ ວາຣະສຸດທ້າຍ ຂອງສໄມການເປັນຫົວເມືອງຂຶ້ນ, ມີປະຊາຊົນຈຳ ນວນ ໓໐,000 ຄົນ ຊຶ່ງມາຈາກຫລາຍຊາດຫລາຍພາສາ ແລະ ຫລາຍສາສນາ ໄດ້ພາກັນມາຄ້າຂາຍຢູ່ທີ່ນັ້. ພວກເຄວກເຄີ ເປັນ ຄົນທີ່ມີຄວາມກ້າຫານ, ມີຫົນທາງຊື່ວິດຢ່າງອິສຣະເສຣີ ພ້ອມທັງ ເປັນນັກໃຈບຸນແລະມີຄວາມຊຳນານໃນການດຳເນີນກິຈການການຄ້າ ໄດ້ເຮັດໃຫ້ເມືອງນີ້ກາຍເປັນສູນກາງຂອງເມືອງທັງຫລາຍໃນອານາ ນິຄົມອະເມຣິກັນໃນກາງສັຕວັດທີ່ສິບແປດ.

ແມ່ນວ່າ ພວກເຄວກເຄີ ຈະປົກຄອງເມືອງຟິລາເດລເຟັຍ

ແລະຕາມແຖບເມືອງເພນຊິເວເນັຍຢູ່ກໍຕາມ, ແຕ່ຍັງມີຕົວແທນຂອງ
ສະມາຄົມນີ້ຢູ່ຕາມບ່ອນອື່ນໆອີກ. ຊາວເຢີຣະມັນ ໄດ້ອົພຍົບ ມາ
ຈາກດິນແດນທີ່ຖືກສົງຄາມລຸກລາມ ໄດ້ມາອໍຢູ່ທຳມາຫາກິນພໍໄດ້ລຽງ
ຊີບ ແລະຕໍ່ມາເຂົາເຈົ້າກໍກາຍເປັນຊາວນາ ຊາວສວນທີ່ມີຄວາມຊຳ
ນານທີ່ສຸດໃນແຂວງນີ້. ນອກນັ້ນ ຄວາມສຳຄັນ ໃນການພັທນາອາ
ນານິຄົມນີ້ ກໍຄືຄວາມຮູ້ໃນດ້ານສ້າງສາເຮືອນຊານ, ອຸສາຫະກັມ,
ການຕຳຜ້າແພ, ການເຮັດເກີບ, ການເຮັດຕູ້, ແລະການຝີມືແນວ
ອື່ນໆ. ເພນຊິລເວເນັຍໄດ້ກາຍເປັນທ່າດ່ານສຳຄັນສຳຫລັບພວກທີ່
ອົພຍົບມາຈາກເຊື້ອຊາດ ສກອດ-ໄອຣິສ ທີ່ມຸ້ງມາສູ່ໂລກໃໝ່ ຊຶ່ງ
ເຂົາເຈົ້າເປັນຄົນ ທີ່ຢູ່ຕາມເຂດຊາຍແດນທີ່ກ້ວ້າ. ເຂົາ ເຈົ້າ
ເລືອກທີ່ດິນຕາມບ່ອນທີ່ເຂົາເຈົ້າພໍໃຈ ແລະໄດ້ໃຊ້ປືນໄວ້ເປັນອາວຸດ
ສຳລັບປ້ອງກັນສິດທິຂອງຕົນເພາະສ່ວນຫລາຍເຂົາເຈົ້າບໍ່ຄ່ອຍຈະນັບ
ຖືກົດໝາຍ. ພຶດຕິການເຊັ່ນນີ້ ໄດ້ເຮັດໃຫ້ສະມາຄົມເຄວກເຄີມີ
ຄວາມເດືອດຮ້ອນຫລາຍ, ແຕ່ວ່າຄວາມປະພຶດຕົວບໍ່ດີຂອງເຂົາເຈົ້າ
ນີ້ພາໃຫ້ເຂົາເຈົ້າ ກາຍເປັນກຳລັງອັນສຳຄັນທີ່ສຸດ ແລະເຂົາເຈົ້າ
ເອງເຊື່ອວ່າ ເຂົາເຈົ້າເປັນຜູ້ຕາງໜ້າຣັຖບານ, ເປັນຜູ້ຕາງໜ້າ
ທາງສາສນາແລະການຮຽນຮູ້ຕ່າງໆຈົນກາຍເປັນກຳລັງສ່ວນປະກອບ
ອັນສຳຄັນແລະຄວາມສີວິໄລ ຊຶ່ງເຂົາເຈົ້າໄດ້ຍູ້ດັນໄປໄກຈົນເຖິງຂັ້ນ
ຄວາມປ່າເຖື່ອນ.

ເມືອງນິວຢອກກໍເປັນເຊັ່ນດຽວກັນກັບເມືອງເພນຊິລເວເນັຍ ຊຶ່ງມີພົລເມືອງປະປົນກັນດ້ວຍຄົນຫລາຍຊາດ, ພາສາ, ແລະສາສນາ.

ໃນປີ ໑໗໗໗, ພົລເມືອງຢູ່ໃນນິວຢອກມີປະມານ ໓໐,໐໐໐ ຄົນ. ໃນວ່າງພູທີ່ອຸດົມສົມບູນຂອງຣັດຈັນ, ນໍຣວກ ແລະດ້ວຍອື່ນໆ ເປັນບ່ອນທີ່ເຫມາະສົມທີ່ສຸດ ສຳຫລັບການປູກຝັງ, ຜູ້ທີ່ເຊົ່າດິນສຳຫລັບການທຳມາຫາກິນແລະຜູ້ທີ່ມີດິນສ່ວນຕົວນັ້ນ ໄດ້ຂຍາຍການປູກຝັງເປັນຢ່າງດີໃນເຂດນີ້. ເກືອບຕລອດປີ໔໐ ປີດົນແຖບນີ້ ມີທ້ຍາຍຽວ ແລະປ່າໄມ້ສຳຫລັບໄວ້ລ້ຽງງົວ, ຄວາຍ, ແກະ, ມ້າ ແລະຫມູ, ຕົ້ນຢາແລະຕົ້ນປໍກໍປູກດີແລະງ່າຍ ແລະຕົ້ນຫມາກໄມ້ອື່ນໆ ເຊັ່ນ ວ່າ ຕົ້ນແອບເປີ້ລ ກໍມີຫລວງຫລາຍ. ນອກຈາກຫມາກໄມ້ທີ່ເປັນ ຜົລ ຜລິດທີ່ຄ້າແລ້ວ ຍັງມີການຄ້າຂົນສັດອີກ ຊຶ່ງເປັນສ່ວນອຸ່ຍອັນສຳຄັນໃນຄວາມຈະເຣີນຂອງເມືອງນິວຢອກ ແລະອານນານີ ຊຶ່ງເປັນເມືອງເທົ່າທຽມກັນ ເພາະວ່າ ອານນານີມີ ຣັດຈັນເປັນມ່ານນ້ຳທີ່ສະດວກທີ່ສຸດໃນການຂົນສົ່ງຂົນສັດ ແລະຜົລປູກຈາກຟາມ ແລ້ວ ສົ່ງເຂ້ົ້າມາທ່າເຮືອຂອງເມືອງນິວຢອກ.

ຕຣົງກັນຂ້າມກັບເມືອງນິວອິງແລນດ໌ ແລະທາງອານນານີຄົມ ພາກກາງ, ແມ່ນລັກສນະຂອງການເປັນຢູ່ຕາມບ້ານນອກ ທີ່ຢາຍຢູ່ ຕາມພາກໃຕ້ ເຊັ່ນ ເວີຈີເນັຍ, ແມຣິແລນ, ເມືອງແຄໂຣໄລນາ,

ແລະເມືອງຊອກເຊັນ, ແລະເມືອງເຈນສ້ທາວ ທີຢູ່ໃນເຂດເວີຊີ ເນັຍເປັນເມືອງດຽວທີ່ມີຊີວິດຢູ່ໃນໂລກໃຫມ່. ໃນປາຍປີ ຈຝ໐ຝ ບໍຣິສັດລອນດອນ ໄດ້ແຕ່ງໃຫ້ຜູ້ຊາຍກູ່ມນຶ່ງມີນາໍກັນທັງຫມົດຮ້ອຍກວ່າ ຄົນ ທາໍການຄົ້ນຄວ້າໃນການພະຈົນໄພຄັ້ງໃຫຍ່ ແລະເຂົາເຈົ້າໃຝ່ ຝັນເຖີງການເກັບເງີນຄາໍ ແລະເພັດພອຍເປັນຕົ້ນ, ແຕ່ຈຸດປະສົງ ຂອງເຂົາເຈົ້າບໍ່ແມ່ນມາຕັ້ງຖິ່ນຖານບ້ານເຮືອນ ໃນປ່າດົງນີ້. ໃນ ຄນະນີ້ມີກັບຕັນ ຈອນສມິດ ເປັນຜູ້ຟັ້ນຟູນາໍ້ໃຈອັນກ້າຫານ ແມ່ນວ່າ ຈະພົບກັບອຸປສັກນາໆ ປະການກໍບໍ່ຖອຍ, ເຊັ່ນວ່າ ເກີດການຜິດ ຖຽງກັນໃນຣະຫວ່າງຄົນພວກດຽວກັນ, ການອົດຢາກ ແລະການຂົ່ມ ຂູ່ຈາກພວກອິນເດັຍແດງ ຢູ່ບໍ່ຂາດ ແຕ່ເຂົາຍັງສາມາດພາພັກພວກ ຝັນຜ່ານໄປໄດ້ປີທີນຶ່ງ. ໃນສໄມນັ້ນ, ບໍຣິສັດທີ່ສົ່ງພວກນີ້ໄປ ບໍ່ ເຄີຍຢາກໃຫ້ຄົນຂອງຕົນກັບຄືນປະເທດຂອງຕົນໄວ, ເຂົາເຈົ້າໄດ້ ບັງຄັບໃຫ້ພວກທີ່ມາຕັ້ງຖິ່ນຖານຢູ່ພີ້ ໃຫ້ຟ້າວຜລິດຜົນອຸປກອນ ສ້າງ ເຮືອ, ທ່ອນໄມ້, ຂອນ ແລະຜລິດພັນສິນຄ້າອື່ນໆ ເພື່ອສົ່ງເຂົ້າ ຂາຍໃນຕລາດເມືອງລອນດອນ. ພວກບໍຣິສັດນີ້ ບໍ່ໃຫ້ໂອກາດພວກ ທີ່ມາຕັ້ງຖິ່ນຖານຢູ່ນີ້ປູກພໍດຜົນ ເພື່ອເປັນການທາໍມາຫາກິນລ້ຽງຊີບ ເຂົາເຈົ້າເອງເລີຍ ແລະຫລັງຈາກຫລາຍປີ ທີ່ປະສົບເຄາະຮ້າຍ, ທັງບໍຣິສັດໄດ້ລົດຜ່ອນຂໍ້ບັງຄັບແດ່ເລັກນ້ອຍ, ແລະໄດ້ແຈກຢາຍທີ່ດິນ ໃຫ້ພວກນີ້ໄວ້ ເປັນບ່ອນທາໍມາຫາກິນ ຕາມລາໍພັງ. ຕໍ່ມາໃນປີ

໑໙໑໘, ໄດ້ມີການພັທນາແລະການປ່ຽນແປງທາງເສຖກິດ ບໍ່ແມ່ນ ແຕ່ໃນເມືອງເວີຊີເນັຍເທົ່ານັ້ນ ແຕ່ທົ່ວທຸກໆເມືອງ ທີ່ຕິດກັນ. ນີ້ ແມ່ນການຄົ້ນພົບວິທີປັບປຸງແລະດັດແປງຕົ້ນຢາຢູ່ເມືອງເວີຊີເນັຍໃຫ້ດີ ຂຶ້ນ ເພື່ອໃຫ້ເໝາະສົມກັບຣົສຂອງຊາວຢຸໂຣບ. ການຂົນສົ່ງຢາ ຖືກນຳມາຮອດລອນດອນເທື່ອທຳອິດໃນປີ ໑໙໑໘, ແລະໃນຣະຍະເວ ລາສິບປີ, ພົນປູກນີ້ກໍປາກົດວ່າເປັນລາຍໄດ້ທີ່ຫຽງແທ້ຫນັ້ນຄົງ.

## ການປູກຝັງທາງພາກໃຕ້

ການປູກຕົ້ນຢານັ້ນຕ້ອງປູກໃສ່ດິນທີ່ອຸດົມສົມບູນ. ດິນບ່ອນໃດ ທີ່ປູກຕົ້ນຢາໃສ່ສາມຫລືສີ່ເທື່ອແລ້ວ ກໍກາຍເປັນດິນທີ່ແຫ້ງຜິງ ແລະ ຖ້າປູກຕໍ່ໄປອີກກໍບໍ່ໄດ້ຜົນດີ. ຈຳເປັນທີ່ສຸດທີ່ຊາວນາຈະຕ້ອງມີທີ່ດິນ ຊະສົມໄວ້ ແລະເພື່ອຄວາມສດວກ ໃນການຂົນສົ່ງຜົນຜລິດເຂົ້າສູ່ໃນ ເມືອງ ຊາວນາໄດ້ເລືອກບ່ອນປູກຝັງຕາມແຄມແມ່ນ້ຳ ຢາຍທົ່ວໄປ ແຕ່ເຫນືອຕລອດໃຕ້. ສ່ວນທາງເຂດໃນບໍ່ມີບ້ານເຮືອນຫລາຍແມ່ນ ແຕ່ເມືອງເຈັມສ໌ທາວ ຊຶ່ງນັບວ່າເປັນເມືອງຫລວງຂອງແຖບນີ້ ກໍມີ ບ້ານເຮືອນບໍ່ຫລາຍຫລັງ. ຊາວໄຮ່ຊາວສວນໄດ້ໃຊ້ວິທີດຳເນີນກິຈ ການຄ້າຂາຍຣະຍະຍາວກັບລອນດອນ, ບິສໂຕລແລະຕາມທ່າເຮືອ ຕ່າງໆຂອງເມືອງອັງກິດທີ່ມີຕລາດ.

ສ່ວນຫລາຍ ຜູ້ຄົນທີ່ອົພຍົບມາຢູ່ເມືອງເວີຊີເນັຍມີຈຸດປະສົງ

ອັນດຽວກັນ ຄືຢາກສ້າງຖານະທາງເສຖກິດຂອງຕົນໃຫ້ດີຂຶ້ນ. ແຕ່ ດ້ວຍເຫດຜົນທາງສາສນາ ແລະເສຖກິດ ພາໃຫ້ມີເມືອງແມຣິແລນ ເປັນອານານິຄົມໃກ້ຄຽງ. ຄອບຄົວທ່ານແຄລເວິດ ກໍໄດ້ມາອາໄສ ຢູ່ໃນທີ່ດິນແຜ່ນໃຫມ່ນີ້ ເພື່ອຈັດຕັ້ງອົງການຂອງສາສນາ ແຄໂທລິກ ແລະເຂົາເຈົ້າກໍສົມໃຈນຳຊັບສົມບັດຈາກທັມມະຊາດນັ້ນມາ ຊຶ່ງຈະ ເປັນຊ່ອງທາງໃຫ້ເຂົາເຈົ້າໄດ້ຮັບຜົນປະໂຍດ ເພື່ອຫລີກເວັ້ນຄວາມ ຫຍຸ້ງຍາກຕ່າງໆທີ່ຈະເກີດຈາກຣັຖບານອັງກິດ, ເຂົາເຈົ້າໄດ້ ສນັບ ສນູນພວກທີ່ນັບຖືສາສນາໂປຣແຕສຕັງແລະສາສນາແຄໂທລິກ ໃຫ້ມາ ຕັ້ງກິຈການຢູ່ນັ້ນພ້ອມກັນ. ໃນການວາງໂຄງຮ່າງຂອງສັງຄົມ ແລະ ຣັຖບານ, ທ່ານ ແຄລເວິດ ໄດ້ພຍາຍາມເຮັດໃຫ້ເມືອງ ແມຣິແລນ ກາຍເປັນເມືອງຂອງພວກຊຸນນາງ ໂດຍນັບຖືຂນົບປະເພນີເກົ່າແກ່ ຊຶ່ງເຂົາເຈົ້າປຣາຖນາຈະປົກຄອງເມືອງ ໂດຍໃຊ້ອຳນາດອະທິສິດ ຂອງເຈົ້າຊີວິດ. ແມ່ນວ່າຮູບຮ່າງການປົກຄອງນັ້ນຈະເປັນແນວໃດ ກໍຕາມ, ໃນສັງຄົມໃກ້ຊາຍແດນທີ່ເປັນເອກຣາຊນັ້ນ ບໍ່ຄ່ອຍເຫັນດີ ນຳຣະບົບການປົກຄອງ ທີ່ກະສັດເປັນເຈົ້າຂອງທີ່ດິນທັງໝົດ. ໃນ ເມືອງແມຣິແລນກໍຄືກັນກັບອານານິຄົມບ່ອນອື່ນ, ເຈົ້າໜ້າທີ່ບໍ່ອາດ ສາມາດຄວບຄຸມຄວາມຄິດອັນຄັບແຄ້ນ ຂອງພວກທີ່ມາຕັ້ງຖິ່ນຖານ ຢູ່ໃນ ໃນການຄ້ຳປະກັນເສຣີພາບສ່ວນບຸກຄົນ ຊຶ່ງຖືກແຕ່ງຕັ້ງຂຶ້ນໂດຍກົດ ໝາຍສາມັນຂອງອັງກິດແລະສິດທິຕາມທັມມະຊາດໃນການເຂົ້າຮ່ວມ

ໃນຣັຖບານ ໂດຍການເປັນຜູ້ຕາງໜ້າໃນສະພາ.

ເມືອງແມຣິແລນໄດ້ຂຍາຍອອກສູ່ຄວາມສີວິໄລ ແບບຄຽວກັນ ກັບເມືອງເວີຊີເນັຍ. ອານານິຄົມທັງສອງບ່ອນນີ້ແມ່ນເປັນບ່ອນປູກຝັງດີ; ເປັນບ່ອນທີ່ມີນ້ຳຢູ່ບໍ່ຂາດ ແລະຊາວໄຮ່ຊາວນາແຖບນີ້ເປັນຊາວນາອັນດີ ຊຶ່ງພວກນີ້ສ່ວນຫລາຍແມ່ນຊາວໄຮ່ຊາວສວນເດີມຈາກປະເທດອັງກິດ ທີ່ເຄີຍມີທີ່ດິນເປັນຂອງສ່ວນຕົວ. ພວກນີ້ໃຊ້ວິທີປູກເຂົ້າແບບຄຽວກັນກັບກ່ອນເຄີ່ງສັຕວັດທີ່ສິບແປດ, ແຕ່ການປູກຝັງທັງໝົດແມ່ນຂ້າທາດຊາວນິໂກຣເປັນຜູ້ເຮັດ. ໃນອານານິຄົມທັງສອງບ່ອນນີ້, ຊາວນາຊາວສວນທີ່ຮັ່ງມີໄດ້ປະຕິບັດໜ້າທີ່ພົລເມືອງດີຢ່າງເຄັ່ງຄັດເຊັ່ນ ຮັບໃຊ້ເປັນຜູ້ພິພາກສາ, ເປັນນາຍພັນໃນກອງທັບ, ແລະເປັນສະມາຊິກສະພາສູງ. ແຕ່ພວກຊາວສວນຊາວນາຊັ້ນກາງນັ້ນຮັບໃຊ້ເປັນສະມາຊິກຜູ້ແທນຣາຊດອນ ແລະຫາຊ່ອງທາງກ້າວໄປສູ່ບົດບາດການເມືອງ. ການປ່າວປະກາດຄວາມສຳຄັນ ຂອງເອກຣາຊນັ້ນເປັນສິ່ງເຕືອນການປະກອບຣັຖບານ ໂດຍຊາວນາຊາວສວນນ້ອຍບໍ່ມີສ່ວນສແດງໃຫ້ເຫັນເຖິງສິດທິແລະເສຣີພາບຂອງແຕ່ລະບຸກຄົນເລີຍ. ໃນປາຍສັຕວັດທີ່ສິບເອັດ ແລະຕົ້ນສັຕວັດທີ່ສິບແປດ, ຮູບຮ່າງຂອງສັງຄົມໃນເມືອງແມຣິແລນ ແລະເມືອງເວີຊີເນັຍໄດ້ດຳເນີນຢູ່ໃນຂັ້ນດີ ແລະສືບຕໍ່ກັນມາ ຈົນເຖິງສໄໝສົງຄາມກາງເມືອງ. ພວກຊາວນາຊາວສວນໄດ້ຮັບການສນັບສນຸນຈາກພວກຄົນງານທີ່ເປັນ

ຂ້າທາດທັງຫລາຍ, ຈຶ່ງສາມາດກຳອຳນາດທາງການເມືອງເກືອບ ທັງຫມົດ ແລະໄດ້ທີ່ດິນດີອີກດ້ວຍ. ເຂົາເຈົ້າໄດ້ສ້າງອາຄານບ້ານ ຊ່ອງຫລັງໃຫຍ່, ມີການເປັນຢູ່ແບບຊົນຊັ້ນສູງ ແລະມີການຕິດຕໍ່ກັບ ໂລກພາຍນອກທີ່ຢູ່ພົ້ນທະເລ. ໃນຖານະທາງສັງຄົມແລະເສຖກິດ, ພວກຊາວນາຊາວສວນເຫລົ່ານີ້ ມີຫວັງກ້າວໄປສູ່ຄວາມມັ່ງມີໃນແຜ່ນ ດິນອັນສົດຊຶ່ນ ແລະລ້າຫລັງ. ຜູ້ທີ່ບໍ່ພົບກັບຄວາມຮັ່ງມີເທົ່າທຽມຫມູ່ ນັ້ນກໍຄືຊາວໄຮ່ຊາວນາ ຜູ້ຍາກຈົນ ຊຶ່ງຕໍ້ສູ້ເພື່ອການມີຊີວິດຢູ່ແຂ່ງກັບ ຂ້າທາດຂອງຊາວນາຊາວສວນຜູ້ທີ່ຮັ່ງມີ ໃນເມືອງເວີຊີເນັຍ ແລະ ເມືອງແມຣີແລນນັ້ນ, ບໍ່ມີການຂຍາຍກິຈການຄ້າພາຍໃນເມືອງເລີຍ ເພາະວ່າ ຊາວນາສ່ວນເຫລົ່ານີ້ ດຳເນີນກິຈການຄ້າຂາຍໂດຍຕຣົງ ກັບລອນດອນ.

ເມືອງ ແຄໂຣໄຣນາ ແລະເມືອງຊາເລີຕັນ ເປັນເມືອງທ່າ ເຮືອທີ່ໄດ້ຂຍາຍອອກໄປ ສູນກາງການຄ້າທາງໃຕ້. ພວກທີ່ຕັ້ງຖິ່ນ ຖານຢູ່ແຖບນີ້ໄດ້ຮຽນຮູ້ການປູກຝັງຮ່ວມກັນກັບການຄ້າຂາຍຄວບຄູ່ກັນ ໄປ ແລະອານານິຄົມທາງແຖບນີ້ ໄດ້ພົບກັບຄວາມມັ່ງມີຈາກການຄ້າ ຂາຍໃນທ້ອງຕລາດ. ປ່າອັນຕຶບຫນາໃນແຖບນີ້ ພາໃຫ້ເມືອງນີ້ ມີ ລາຍໄດ້ອັນງາມ ແລະນອກຈາກນີ້ ກໍມີນ້ຳມັນດິບແລະຢາງສົນຊຶ່ງໄດ້ ມາຈາກໃບແປກ ຊຶ່ງທັງຫມົດນີ້ຈັດເຂົ້າສັ່ງຂາຍໃນຮ້ານຂາຍເຄື່ອງ ອຸປກອນສ້າງເຮືອໄດ້ດີທີ່ສຸດໃນໂລກ. ເມືອງນີ້ບໍ່ຄືກັນກັບເມືອງເວີ

ຊຸເມັຍ ທີ່ເອົາດິນຳແຕ່ການປູກເຄື່ອງປູກຂອງຝັ່ງ ແຕ່ແນວດຽວ, ເມືອງແຄໂຣໄຣນາຍັງປູກເຂົ້າເພື່ອສົ່ງອອກຂາຍປະເທດນອກ ແລະ ນອກຈາກນີ້ຍັງມີສິນຄ້າ ແລະເຄື່ອງອຸປກອນ ສ້າງເຮືອກຳປັ່ນອີກ. ໃນປີ ໑໗໕໐, ມີພົລເມືອງປະມານ ໑໐໐,໐໐໐ ກວ່າພັນຄົນທຳນາ ຫາກິນຢູ່ໃນເມືອງແຄໂຣໄຣນາເຫນືອ ແລະເມືອງແຄໂຣໄຣນາໃຕ້.

ຢູ່ທາງພາກໃຕ້ກໍເຫມືອນກັນກັບອານານິຄົມທຸກໆບ່ອນ ຕັ້ງແຕ່ ພູເວີມອນ ໄປຫາປ່າລຽບແຄມນ້ຳຫ້ວຍນ້ຳຣອກ ໃນນິວຢອກ, ລົງມາ ຕາມສາຍພູແອເລເກນີ ແລະຜ່ານຮ່ອມພູ ເຊນັນດົວ ໃນເມືອງ ເວີຊຸເນັຍ ຊຶ່ງການຂຍາຍຂອງບ້ານນອກ ຕາມເຂດຊາຍແດນກາຍ ເປັນການພັທນາ ອັນສຳຄັນ. ຜູ້ຄົນທີ່ຢູ່ໃນເຂດທີ່ມີນ້ຳຫລວງຫລາຍ ໄດ້ສແວງຫາເສຣີພາບໃນການນັບຖືສາສນາໂດຍການຂຍາຍອອກໄປ ນອກເຂດແດນ ແລະຜູ້ທີ່ຊອກຫາດິນຊຸດົມສົມບູນບໍ່ໄດ້ ເພາະດິນຕາມ ແຄມຝັ່ງນ້ຳເປັນບ່ອນປູກຝັ່ງມາຫລາຍຟ້າຫລາຍປີແລ້ວ ຈຶ່ງບໍ່ຄ່ອຍດີ ປານໃດ, ສະນັ້ນເຂົາເຈົ້າຈຶ່ງໄດ້ໄປຊອກຫາທີ່ດິນຕາມພູທາງແຄມ ຝັ່ງຕະວັນຕົກ ເປັນບ່ອນທຳນາຫາກິນ. ຕໍ່ມາທາງເຂດໃນຂອງອະ ເມຣິກາຈຶ່ງເຕັມໄປດ້ວຍຟາມທີ່ສຳເຣັດຜົນໃນການປູກຝັ່ງ, ຊາວໄຮ່ ຊາວນາພວກນີ້ເຣັດວຽກໃນໄຮ່ໃນນາດ້ວຍຕົນເອງ ແລະເປັນເອກ ຣາຊ ໂດຍບໍ່ຂຶ້ນກັບອານານິຄົມອື່ນໆ. ທ່ານປິເຕີ ເຈບເຟີຊັນ ຊຶ່ງ ເປັນນັກຄົ້ນຄ້ວາແລະເປັນບິດາຂອງທ່ານ ທັມັສ ເຈບເຟີຊັນ, ປະ

ທານາທິບໍດີຄົນທີສາມຂອງສະຫະຣັຖ, ໄດ້ມາຕັ້ງຖິ່ນຖານຕາມບ້ານພູ ຊຶ່ງທ່ານໄດ້ເອົາເຫລົ້າຖ້ວຍນຶ່ງແລກປ່ຽນເອົາດິນປະມານສິບໄຮ່ຈາກ ພວກອິນເດັຍແດງ.

ມີຜູ້ຄົນຈຳນວນຫລວງຫລາຍ ທີ່ມີດິນເປັນຂອງຕົນເອງໃນຣະ ຫວ່າງພວກທີ່ຂຍາຍອອກໄປຕາມຈ້າຍພູ ແລະຜູ້ຄົນທີ່ຫນີຈາກອານານິ ຄົມທີ່ຈະເຣີນແລ້ວ ໃນພາກຕະວັນອອກນັ້ນ ແມ່ນພວກ ນັກສຳຣວດ ກຸ່ມນ້ອຍທີ່ເປັນອິສຣະ ແລະບໍ່ຂົ້ນນຳໃຜ ເຂົາເຈົ້າຢູ່ອອມແອ້ມຖິ່ນ ພວກອິນເດັຍແດງ ຊຶ່ງມີແຕ່ເຮືອນຕູບນ້ອຍໆເທົ່ານັ້ນ ທີ່ໃຊ້ເປັນປ້ອມ ບ້ງພວກອິນເດັຍແດງ, ແລະການລະວັງໄພນັ້ນ ຂົ້ນຢູ່ກັບສາຍຕາອັນ ວ່ອງໄວຂອງເຂົາເຈົ້າເອງ ແລະປືນລັກຍາວກໍເປັນເຄື່ອງປ້ອງກັນ ອຸນິດນຶ່ງ. ດ້ວຍຄວາມຈຳເປັນອັນນີ້, ເຂົາເຈົ້າຈຶ່ງກາຍເປັນຄົນທີ່ ທົນທານແລະເປັນທີ່ເພິ່ງຂອງຕົນເອງໄດ້. ເຂົາເຈົ້າໄດ້ຖາກຖາງ ປ່າອັນຕຶບໜາ, ຈູດຟຸ່ມ ແລະຫລັງຈາກນັ້ນມາກໍປູກເຂົ້າບເລ ແລະ ໜາກສາລີ. ພວກຜູ້ຊາຍພາກັນແຕ່ງກາຍແບບນັກລ່າສັດ ແລະໃຊ້ ໜັງກວາງເຮັດສິ້ງ, ສ່ວນພວກຜູ້ຍິງນັ້ນ ຕ່ຳຜ້າແພເຮັດກະໂປງມູ່ ອາຫານການກິນຂອງຂະເຈົ້ານັ້ນກໍມີໝູຕອນ, ເຂົ້າປົ່ນ ແລະຊັ້ນ ກວາງຢ້າງ, ໄກ່ງວງປ່າ, ນົກກະທາ, ແລະປາຈາກນ້ຳຫ້ວຍໃກ້ ຄຽງ. ເຂົາເຈົ້າມີການມ່ວນຊຶ່ນ ທີ່ເປັນແບບແຜນຂອງເຂົາເຈົ້າ ເອງ. ການອຸ່ນເຄື່ອງ ເພື່ອເປັນກຽດໃຫ້ຄູ່ສົມຣົດໃໝ່ນັ້ນ, ເຂົາ

ເຈົ້າເຮັດງົວເຜົ້າທັງຕົວ ແລະມີການກິນລ້ຽງກັນ ຢ່າງມ່ວນຊື່ນຕິດ
ຕາມໄປດ້ວຍການຮ້ອງລຳທຳເພັງ ແລະດື່ມເຫລົ້າ...

## ເຂົ້າເຈົ້າເຂົ້າໂຮງຮຽນຈັ່ງໃດ?

ການແຍກອອກຣະຫວ່າງເຂດເກົ່າ ແລະໃໝ່ເປັນທີ່ພໍແນມ
ເຫັນໄດ້ ເຊັ່ນວ່າ ຈາກເບື້ອງຕະວັນຕົກໄປຫາທາງຕະວັນອອກ,
ຈາກເຂດແດນທີ່ຕັ້ງເປັນເມືອງແຄມທະເລແອດແລນຕົກ ແລະທາງ
ເຂດແດນທາງໃນ. ຄວາມແຕກຕ່າງເຫລົ່ານີ້ມີຫລາຍ ແລະເປັນທີ່
ໜ້າຕື່ນເຕັ້ນ, ແຕ່ແນວໃດກໍດີ, ແຕ່ລະເຂດຫລືໜ່ວຍຖິ່ນພະຍາຍາມ
ແຊກຊຶມອິດທິພົນຂອງຕົນເຂົ້າໄປໃນເຂດແດນອື່ນ, ແມ່ນວ່າຈະແຍກ
ກັນຢູ່ຫ່າງໄກກັນກໍຕາມ, ແຕ່ຕ່າງຄົນ ກໍຍັງກາຍເອົາແບບຢ່າງຂອງ
ກັນແລະກັນຢູ່. ໃນຂນະທີ່ນັກຄົ້ນຄວ້າຍ້າຍມາທາງເບື້ອງຕະວັນຕົກ
ນັ້ນ, ເຂົາເຈົ້າໄດ້ນຳເອົາຣະບົບຄວາມສືໄລແບບແຕ່ເກົ່າກ່ອນມາ
ນຳ ແລະໄດ້ນຳເອົາມາໃຊ້ເປັນຂນົບທຳນຽມ ໃນແຜ່ນດິນໃໝ່ນີ້,
ຊຶ່ງການກະທຳດັ່ງກ່າວນີ້ແນ່ນອນສ່ວນນຶ່ງຂອງມໍຣະດົກທີ່ຕົກທອດຕໍ່ກັນມາ
ພວກນັກບູນຊາວຕະວັນຕົກຫລາຍຄົນ ເມື່ອໄດ້ມີໂອກາດກັບເມືອບ້ານ
ເກີດຂອງຕົນແລ້ວ ໄດ້ເລົ່ານິທານ ຫລືເຣື່ອງຕ່າງໆ ກ່ຽວກັບດິນ
ແດນທີ່ຄົ້ນພົບໃໝ່ ເພື່ອກະຕຸ້ນເຕືອນ ແລະຊວນໃຫ້ຜູ້ຟັງທາງບ້ານ
ວາດພາບຕ່າງໆ ນາໆ. ບັນດາຜູ້ຊາຍທາງປະເທດຕະວັນຕົກນີ້ໄດ້

ຝ່ງສຽງຂອງຕົນໃນການໂຕ້ຖຽງກັນເຣື່ອງການເມືອງ ແລະໄດ້ຕໍ່ສູ
ຄວາມຊັກຊ້າຂອງປະເພນີການປະຊຸມ. ຄວາມຈິງທີ່ສຳຄັນກວ່ານັ້ນ
ຢູ່ວ່າ, ບຸກຄົນໃດທີ່ຢູ່ໃນອານານິຄົມທີ່ສ້າງແປງແລ້ວສາມາດຊອກຫາ
ເຮືອນຕາມຊາຍແດນໄດ້ງ່າຍ ແລະສິ່ງເຫລົ່ານັ້ນກາຍເປັນສາເຫດສຳ
ຄັນໃນການເຮັດໃຫ້ຄວາມກ້າວໜ້າ ແລະການປ່ຽນແປງຂອງທ້ອງ
ຖິ່ນເກົ່າໃຫ້ໄດ້ພົບກັບຄວາມສຳເຮັດ. ຮູບຂອງນ້ຳອັນຫລວງຫລາຍ
ໃນແຖບນີ້ໄດ້ບຸກຍູ້ນະໂຍບາຍການເມືອງ ໃຫ້ໂຍະຍາມສັນຍາບັງຄັບ
ຕ່າງໆກ່ຽວກັບການເຊົ່າທີ່ດິນ ແລະການປະກອບພິທີທາງສາສນາທັງ
ຫມົດນີ້ໄດ້ຮັບຄວາມສັບສົນ ຈາກປະຊາຊົນສ່ວນໃຫຍ່ຢູ່ທາງເຂດ
ຊາຍແດນ ຊຶ່ງຄວາມພໍໃຈນັ້ນມີຢູ່ຕາມລຸ່ມນ້ອຍໆ ໃນສັງຄົມຫມັ້ນຄົງ
ຊຶ່ງປະເທດທີ່ກຳລັງຂະຍາຍຢູ່ໄດ້ສືບຕໍ່ກັນມາ. ການເຄື່ອນຍ້າຍມາຢູ່
ຕາມຈ້າຍພູແມ່ນການເຄື່ອນໄຫວທີ່ສຳຄັນທີ່ສຸດ ສຳລັບປະວັດສາດໃນ
ອານາຄົດຂອງອະເມຣິກາ.

ຄວາມສຳຄັນທີ່ຄ້າຍຄຽງກັນນີ້ ແມ່ນພົ້ນຖານຂອງການສຶກສາ
ແລະວັທນະທັມຂອງອະເມຣິກາ ຊຶ່ງໄດ້ຟົ້ນຟູຂຶ້ນມາຕັ້ງແຕ່ສໄມອານາ
ນິຄົມ. ວິທຍາໄລ ຣາວິດ ໄດ້ຕັ້ງຂຶ້ນມາໃນປີ ໑ຝ໗ຝ ທີ່ເມືອງ
ແມແຊຈູແຊຸດ ໃນໃກ້ປາຍສັຕວັດ. ຕໍ່ມາ ວິທຍາໄລ ວິລລຽມ
ແລະວິທຍາໄລ ແມຣີ ກໍຖືກຕັ້ງຂຶ້ນຢູ່ເມືອງ ເຊີຊີເນັຍ, ແລະຈາກ
ນັ້ນມາຫລາຍປີ ທາງການອອກກົດໝາຍຂອງເມືອງຄໍແນກຕິຄັດກໍໄດ້

ລົງຄວາມເຫັນໃຫ້ມີການຈັດຕັ້ງມະຫາວິທຍາໄລ ເຢລ ຂຶ້ນ, ແຕ່ຮູບ
ພາບຂອງປະວັດສາດ ການຮຽນຂອງອະເມຣິກາແມ່ນການເກີດຂອງ
ໂຮງຮຽນປະຖົມສຶກສາ. ສຳຫລັບເມືອງນິວອິງແລນດ໌ແລ້ວ ຄວາມ
ຄິດຄວາມຊອບທັງຫມົດ ໄດ້ຍົກໃຫ້ແກ່ການແຜ່ຜາຍຄັ້ງນີ້. ພວກທີ່ມາ
ຕັ້ງຖິ່ນຖານຢູ່ຕົ້ນໄດ້ຮ່ວມກັນເປັນຕົວແທນອັນດຽວກັນ ເພື່ອຊອກຄົ້ນ
ຫາຊ່ອງທາງຕ່າງໆໃນຫມູ່ຊຸມນະບົດ ທີ່ພໍຈະປັບປຸງແລະແກ້ໄຂໃຫ້ກິຈ
ການຂອງໂຮງຮຽນດີຂຶ້ນ. ແລະໃນປີ ໑ຝ໔ກ, ທາງເຂດອ່າວແມ
ແຊຈູແຊຂ ໄດ້ອອກກົດຫມາຍເພື່ອຈັດໃຫ້ມີການຈັດຕັ້ງຣະບົບການສຶກ
ສາແບບດຽວກັນຂຶ້ນທົ່ວທຸກໆແຫ່ງໃນອາມາມິລົມນິວອິງແລນດ໌, ນອກ
ຈາກເມືອງໂຣດໄອແລນ ທີ່ໄດ້ຕັ້ງໂຮງຮຽນປະຖົມສຶກສາພຽງຂອບ
ເຂດແຫ່ງຄວາມຈຳເປັນເທົ່ານັ້ນ.

ຢູ່ທາງພາກໃຕ້, ແຕ່ລະຟາມ ແລະບ່ອນປູກຝັງແຕ່ລະບ່ອນຢູ່
ຫ່າງໄກກັນຫລາຍ ແລະການຕັ້ງໂຮງຮຽນຢູ່ຕາມຫມູ່ບ້ານເຫມືອນກັນ
ກັບບ່ອນທີ່ມີປະຊາຊົນ ຢູ່ຢ່າງຫນາແໜ້ນນັ້ນ ເປັນສິ່ງທີ່ເຮັດບໍ່ໄດ້.
ບາງເທື່ອ ຊາວນາຊາວສວນທີ່ຢູ່ໃກ້ຄຽງທີ່ສຸດກັບເພື່ອນບ້ານຂອງຕົນ
ນັ້ນໄດ້ຮ່ວມກັນຈ້າງຄູມາສອນພິເສດໃຫ້ແກ່ເດັກນ້ອຍທີ່ພໍຈະໄປມາຫາ
ສູ່ກັນໄດ້ ແຕ່ສ່ວນຫລາຍເຂົາເຈົ້າມັກສົ່ງລູກເຕົ້າໄປເຂົ້າໂຮງຮຽນຢູ່
ປະເທດອັງກິດ. ຢູ່ໃນເຂດທີ່ມີປະຊາຊົນຫນາແໜ້ນ, ໂຮງ ຮຽນ
ທີ່ຢູ້ຂ້າງຄຽງໄດ້ຮັບພາຣະສິດສອນເດັກນ້ອຍໂດຍທົ່ວໆໄປ ແລະຊາວ

ນາຊາວສອນແຕ່ລະຄົນມີໜ້າທີ່ຊ່ວຍກັນເສັຍຄ່າຈ້າງນາຍຄູ, ແຕ່ສຳ
ຫລັບຄອບຄົວທີ່ຍາກຈົນ ພໍ່ແມ້ຕ້ອງລັບພາລະ ໃນການສຶດສອນລູກຕົນ
ເອງເທົ່າທີ່ພໍ່ຈະເຮັດໄດ້.

ໃນອານາມິຄົມຊັ້ນກາງ, ຖານະການສຶກສານັ້ນແຕກຕ່າງກັນ
ດ້ວຍການສົນລະວົນ ນຳຄວາມກ້າວໜ້າ ໃນດ້ານວັດຖຸຫລາຍກວ່າ,
ເຂົ້າເຈົ້າຈຶ່ງບໍ່ມີເວລາພໍ່ທີ່ຈະຫັນຄວາມສົນໃຈມາຫາເຮື່ອງວັທນະທັ
ນະນັ້ນເມື່ອງນິວຢອກ ຈຶ່ງລ້າຫລັງໃນເຮື່ອງນີ້ຫລາຍ ຖ້າຈະປຽບໃສ່
ເມືອງ ນິວອິງແລນດ໌ ແລະອານາມິຄົມຊັ້ນກາງອື່ນໆ ນິວຢອກມີແຕ່
ໂຮງຮຽນບໍ່ດີ ແລະພົລເມືອງຜູ້ຮັ່ງມີຈຳຕ້ອງຈ້າງຄູພິເສດມາສອນລູກ
ເຂົ້າເຈົ້າ, ແຕ່ສຳລັບເດັກນ້ອຍສ່ວນຫລາຍບໍ່ໄດ້ຮັບການສຶກສາ ຂັ້ນ
ມາຕຖານຂອງໂຮງຮຽນປະຖົມສຶກສາເລີຍ. ຣັຖບານຂອງເຈົ້າມະ
ຫາຊົວິດປະເທດອັງກິດໄດ້ພະຍາຍາມທີ່ສຸດທີ່ຈະຈັດຫາຄວາມສະດວກ
ສະບາຍທຸກຢ່າງໃຫ້ແກ່ສາທາຣະນະຊົນ ແລະຕໍ່ມາຈົນຮອດກາງສັຕ
ວັດທີ່ສິບແປດພຸ້ນ, ຣັຖບານ ຈຶ່ງໄດ້ສ້າງວິທຍາໄລ ນິວເຈີຊີ ຢູ່
ປຣິນຊ໌ຕັນ, ວິທຍາໄລ ຄິງ ຊຶ່ງປັດຈຸບັນນີ້ປ່ຽນຊື່ໃຫມ່ວ່າມະຫາວິທ-
ຍາໄລໂຄລັມເບັຍ, ແລະວິທຍາໄລ ຄວີນ.

ນຶ່ງໃນອານານິຄົມທັ້ງຫລາຍ ຊຶ່ງກ້າໄດ້ກ້າວເສັຍໃນດ້ານການ
ສຶກສານັ້ນແມ່ນຂັນຍາກາດການສຶກສາ ຂອງເມືອງເພນຊີລເວເນັຍ.

ໂຮງຮຽນຫລັງທຳອິດ ໄດ້ສ້າງຂຶ້ນໃນປີ ຈຝຊຽ ແລະຫລັກສູດຂອງ ໂຮງຮຽນໄດ້ວາງໄວ້ດັ່ງນີ້ຄື ການສອນຫັດອ່ານ, ຫັດຂຽນ ແລະຫັດ ໄລ່ບັນຊີ. ຫລັງຈາກນັ້ນມາ, ຕາມຫມູ້ບ້ານຂອງສະມາຄົມຄວກ ເຄີກໍໄດ້ມີການສອນ ຂັ້ນປະຖົມສຶກສາໃຫ້ແກ່ເດັກນ້ອຍ ເຫມືອນກັນ. ກ່ຽວກັບການອົບຮົມຂັ້ນກ້າວຫນ້າ ໃນດ້ານພາສາທີ່ຈເຣີນແລ້ວ, ພົງ ສາວະດານແລະວັນນະຄະດີໄດ້ຈັດໃຫ້ມີຂຶ້ນ ທີ່ໂຮງຮຽນປະຖົມສຶກສາ ແຟຣນສ່ ແລະໂຮງຮຽນດັ່ງກ່າວນີ້ຍັງມີຢູ່ເທົ່າທຸກວັນນີ້ ຊຶ່ງແມ່ນທ່ານ ວິລລຽມເພັນ ເປັນຜູ້ດູແລແລະກຳກັບ. ສຳລັບເດັກນ້ອຍທີ່ມາຈາກ ຄອບຄົວທຸກຍາກນັ້ນ ໄດ້ຮຽນລ້າງ (ບໍ່ຕ້ອງເສັຍຄ່າເລົ່າຮຽນ), ແຕ່ສຳລັບເດັກນ້ອຍ ທີ່ມາຈາກຄອບຄົວພໍປານກາງນັ້ນ, ພໍ່ແມ້ຕ້ອງ ເສັຍຄ່າເລົ່າຮຽນໃຫ້ລູກຂອງຕົນ. ໃນເມືອງຟີລາເດລເຟັຍມີໂຮງ ຮຽນເອກຊັນຫລາຍບ່ອນ ທີ່ບໍ່ແມ່ນສາຂາຂອງສາສນາ, ທາງໂຮງ ຮຽນມີຫລັກສູດການສອນພາສາຕ່າງງ ເຊັ່ນ ວິຊາເລກ ແລະວິຊາ ທັມມະຊາດສາດ ແລະນອກນີ້ ຍັງມີໂຮງຮຽນກາງຄືນສຳຫລັບຜູ້ໃຫຍ່ ອີກ. ສຳຫລັບການຮຽນຂອງພວກຜູ້ຍິງນັ້ນກໍບໍ່ໄດ້ທົ້ຖອຍ ເພາະວ່າຄູ ພິເສດນັ້ນໄດ້ສອນບັນດາລູກສາວ ຂອງຜູ້ຮັ່ງມີ ຊາວເມືອງຟີລາເດລ ເຟັຍເປັນພາສາຝຣັ່ງເສດ ຫມົດທຸກວິຊາ ເຊັ່ນວ່າ ວິຊາດົນຕຣີ, ການຟ້ອນລຳ, ວິຊາແຕ້ມຮູບ, ຮ້ອງເພງ, ໄວຍະກອນແລະບາງ ເທື່ອກໍສອນວິຊາການບັນຊີດ້ວຍ.

ຄວາມກ້າວໜ້າໃນດ້ານຄວາມຮູ້ ແລະການພັທນາທາງດ້ານ
ວັທນະທັມຂອງເມືອງເພນຊິລເວເນັຍ ໄດ້ເຮັດໃຫ້ບຸກຄົນສອງຄົນມີຊື່
ສຽງໂດ່ງດັງດີ. ນຶ່ງໃນນັ້ແມ່ນທ່ານ ເຈັມສ໌ ໂລເກີນ ຊຶ່ງຮັບໜ້າ
ທີ່ເປັນເລຂານຸການຂອງອາມານິຄົມ ແລະທ່ານເບນຈາມຶນ ແຟຣງ
ຄລິນ ຊຶ່ງໄດ້ຄົ້ນພົບກິຈການທາງວິທຍາສາດ ທີ່ລ້ຳສຸດ. ໃນປີ
໑໗໔໔, ທ່ານໂລເກີນໄດ້ສ້າງອາຄານຫລັງນຶ່ງສຳຫລັບໄວ້ເປັນບ່ອນ
ສະສົມປຶ້ມຂອງທ່ານທັງຫລາຍ ເພື່ອປະໂຍດຂອງຊາວເມືອງທຸກຄົນ.
ຢ່າງບໍ່ຕ້ອງສົງໄສເລີຍ, ທ່ານເບນຈາມິນກໍເປັນຜູ້ນຶ່ງອີກທີ່ໄດ້ເຮັດ
ພຶນປະໂຍດ ແກ່ສາທາຣະນະຊົນທົ່ວໄປ ຫລາຍກວ່າບຸກຄົນອື່ນໆ ໃນ
ການຊຸກຊວນໃຫ້ມີກິຈການກ່ຽວກັບຄວາມຮູ້ຄວາມສລຽວສລາດຕ່າງໆ
ໃນເມືອງ ຟີລາເດັລເຟັຍ. ທ່ານເປັນເຄື່ອງມືສຳຄັນໃນການສ້າງ
ສະຖາບັນຕ່າງໆ ຊຶ່ງສິບເນື່ອງຕໍ່ໆກັນ ບໍ່ແມ່ນແຕ່ໃນເມືອງຟີລາເດັລ
ເຟັຍເທົ່ານັ້ນ, ແຕ່ແມ່ນອາມານິຄົມທັງໝົດ. ເຊັ່ນວ່າທ່ານໄດ້ຈັດ
ຕັ້ງສະມາຄົມນຶ່ງຊື່ວ່າ ຈັນໂຕ ຊຶ່ງກາຍເປັນຂັ້ນເລີ່ມຕົ້ນທຳອິດຂອງ
ສະມາຄົມປຣັຊຍາ ອະເມຣິກັນ. ຈາກພຶນຂອງຄວາມ ພຍາຍາມ
ຂອງທ່ານນີ້, ຫລັກສູດການຮຽນສຳລັບສາທາຣະນະຊົນຈຶ່ງຖືກຈັດຂຶ້ນ
ແລະຕໍ່ມາກໍໄດ້ຂຍາຍອອກເປັນມະຫາວິທຍາໄລ ເພັນຊິລເວເນັຍ.
ຄວາມພຍາຍາມຂອງທ່ານ ເບັນຈາມິນ ໃນດ້ານການຄົ້ນຄ້ວາການ
ສຶກສານີ້ໄດ້ປາກົດພຶນຢ່າງໜ້າພໍໃຈ ແລະການເກີດຂອງຫໍສມຸດຊຶ່ງ

ທ່ານເອີ້ນວ່າ "ແມ່ຂອງຫໍສມຸດທັງຫລາຍໃນອະເມຣິກາ" ກໍປາກົດມີ ຂຶ້ນ.

ຄວາມປາຖນາຢາກຮຽນຮູ້ນີ້ ບໍ່ໄດ້ຢຸດແຕ່ພຽງຂອບເຂດຂອງ ຫມູ້ບ້ານຊົນບົດທີ່ຈເຣີນເທົ່ານັ້ນ, ແມ່ນແຕ່ຊາວສກອດໄອຣິສ້ ທີ່ມີ ການເປັນຢູ່ ແບບດຶກດຳບັນ ເຂົາເຈົ້າ ກໍຍັງບໍ່ຍອມຢູ່ຢ່າງຄົນໂງ່. ເຂົາເຈົ້າໄດ້ຊັກຊວນນັກບູນທັງຫລາຍໃຫ້ສລະຊັບແລະພຍາຍາມ ຊັກ ຊວນພຣະຜູ້ຮຽນຮູ້ໃຫ້ມາສົນໃຈນຳຖິ່ນຖານການເປັນຢູ່ຂອງເຂົາເຈົ້າ ແລະເຊື່ອຫມັ້ນວ່າ ພຣະທີ່ໄດ້ຮຽນຮູ້ມາແລ້ວນີ້ຄວນຄິດຄົ້ນສ້າງຄວາມ ສາມາດໃຫ້ປາກົດແກ່ສາຍຕາຂອງຊົນທົ່ວໄປ.

## ຫນັງສືພິມອ້າງສິດເສຣີພາບ

ຢູ່ທາງພາກໃຕ້, ຊາວນາ ຊາວສວນທັງຫລາຍ ອາໄສປົ້ມ ເປັນສ່ວນໃຫຍ່ ໃນການຕິດຕໍ່ກັບໂລກຂອງການປູກຝັງ. ປົ້ມຕຳຣາ ຮຽນທີ່ສັ່ງມາຈາກປະເທດອັງກິດ ມີຫມົດທຸກວິຊາ ເຊັ່ນວ່າ ປົ້ມພົງ ສາວະດານ, ປົ້ມພາສາກຣິກ ແລະຣາຕົນ, ປົ້ມວິທຍາສາດ ແລະ ປົ້ມກົດຫມາຍ, ປົ້ມເຫລົ່ານີ້ຊາວນາຊາວສວນ ໄດ້ສັບປ່ຽນກັນອ່ານ. ຢູ່ເມືອງຊາເລີຕັນທາງພາກໃຕ້ ຂອງແຄໂຣໄຣນາ, ຫໍສະມຸດປະຈຳ ແຂວງກໍປາກົດເປັນຫລັງຂຶ້ນໃນປີ ຈກ00 ແລະຂນະດຽວກັນກໍມີການ ຟື້ນຟູດົນຕຣີ, ການແຕ້ມຮູບ ແລະລະຄອນ ເປັນທີ່ນິຍົມຂອງປະຊາ

ຊົນໃນແຖບນີ້ ແລະນັກສິລປິນທັງຫລາຍ ກໍພາກັນນັບຖືຊາວເມືອງຊາ ເລີຕັນຫລາຍ ເພາະວ່າເຂົາເຈົ້າໄດ້ຮັບຄວາມອົບອຸ່ນ ເປັນພິເສດ ຈາກປະຊາຊົນໃນເຂດນີ້ຫລາຍກວ່າໃນເຂດອື່ນໆ.

ຢູ່ໃນເຂດເມືອງນິວອິງແລນດ້, ຜູ້ທີ່ອົພຍົບມາເທື່ອທຳອິດໄດ້ ຂົນເອົາປື້ມ (ຫໍສມຸດນ້ອຍ) ມານຳ ແລະໄດ້ສັ່ງຊື້ປື້ມຈາກລອນດອນ ຢູ່ບໍ່ໄດ້ຂາດ. ພວກປູຣິຕັນສົນໃຈ ແລະນັກຂຽນແຕ່ເຣື່ອງທີ່ກ່ຽວກັບ ສາສນາ ແຕ່ເຂົາເຈົ້າບໍ່ໄດ້ມອບຜົນງານຂອງເຂົາເຈົ້າ ໃຫ້ໃຜຫມົດ ໃນປີ ๑ຝຊ๐, ພວກຂາຍປື້ມຢູ່ບອສຕັນໄດ້ເລັ່ງລັດ ໃນການດຳເນີນ ກິຈການຄ້າເຊັ່ນວ່າ ຂຽນໂບຣານຄະດີ ພົງສາວະດານ ການເມືອງ ປຣັຊຍາ, ວິທຍາສາດ, ພະຄຳພີ, ສາສນາສາສແລະວັນນະຄະດີ.

ຢູ່ທີ່ແຄມບຣິດຊ້ ເມືອງແມແຊຈູແຊດສ້ ໂຮງພິມໄດ້ຖືກຈັດຕັ້ງ ຂຶ້ນໃນປີ ๑ກ๐๔, ຜົນສຳເຣັດຄັ້ງທຳອິດຂອງຫນັງສືພິມບອສຕັນກໍໄດ້ ອອກປາກົດແກ່ສາຍຕາປະຊາຊົນ. ຕໍ່ນັ້ນມາຫລາຍຄົນກໍໄດ້ເຂົ້າໄປ ພົວພັນໃນວົງການຫນັງສືພິມຕາມອານານິຄົມຕ່າງໆແລະບໍ່ແມ່ນແຕ່ໃນ ເຂດນິວອິງແລນດ້ເທົ່ານັ້ນ. ຕົວຢ່າງທີ່ເມືອງນິວຢອກ ມີເຫດການ ສຳຄັນທີ່ສຸດເກີດຂຶ້ນໃນວົງການຫນັງສືພິມອະເມຣິກາກໍຄືໃນປີ ๑ກຫຫ ທ່ານປີເຕີເຊນເຈີ ເຈົ້າຂອງຈົດຫມາຍເຫດນິວຢອກ ຣາຍສັປດາ ໄດ້ເປັນປາກສຽງໃນການຄັດຄ້ານຣັຖບານ, ແຕ່ສອງປີຕໍ່ນັ້ນມາ ຜູ້ ປົກຄອງອານານິຄົມ ບໍ່ສາມາດໃຫ້ອະໄພຕໍ່ການສຽດສີຂອງທ່ານເຊນ

ເຈີອີກຕໍ່ໄປ ຈຶ່ງໄດ້ອອກຄຳສັ່ງໃຫ້ຈຳຄຸກທ່ານເຊນເຈີ ໃນຖານຂຽນ ຫນັງສື ຫມື່ນປະມາດ ຣັຖບານ. ໃນຂນະທີ່ຢູ່ໃນຄຸກ ເປັນເວລາ ເກົ້າເດືອນ ເພື່ອລໍຖ້າການຕັດສິນນັ້ນ, ທ່ານເຊນເຈີ ໄດ້ຂຽນບົດ ຄວາມອອກໃນຫນັງສືພິມຂອງເຂົາຢູ່ບໍ່ໄດ້ຂາດ ຊຶ່ງເຫດການເຫລົ່ານີ້ ສາມາດດຶງດູດຄວາມສົນໃຈ ຂອງປະຊາຊົນ ທົ່ວທຸກອານານິຄົມ. ທ່ານແອນດຣູ ແຣມິລຕັນ ທະນາຍຄວາມຜູ້ລືຊຶ່ ໄດ້ສູ້ຄວາມໃຫ້ທ່ານ ເຊນເຈີ ແລະອ້າງເຫດຜົນວ່າ ທຸກສິ່ງທຸກຢ່າງ ທີ່ທ່ານເຊນເຈີຖືກ ກ່າວຫາໃນບົດຄວາມນັ້ນເປັນຄວາມຈິງທຸກປະການ ແລະບໍ່ຄວນຈະ ຖືວ່າເປັນການດູຫມິ່ນສຽດສີ ທາງການແຕ່ຢ່າງໃດ, ແລະໃນທີ່ສຸດ ສານໄດ້ຕັດສິນປ່ອຍຕົວທ່ານເຊນເຈີໃຫ້ເປັນອິສຣະ. ຜົນທີ່ຕ່ານມາ ນັ້ນໄກເກີນຄວາມຄາດຫມາຍ, ບໍ່ແມ່ນແຕ່ສຳລັບອານານິຄົມອະເມຣິ ກັນເທົ່ານັ້ນ, ແຕ່ສຳລັບອະເມຣິກາ ໃນອະນາຄົດອີກດ້ວຍ. ການ ຕັດສິນໃຈເທື່ອນີ້ແມ່ນການຈາລຶກໃນການວາງຫລັກການແກ່ເສຣີພາບ ແຫ່ງຫນັງສືພິມ. ທາງເຂດເມືອງນິວອິງແລນດ້ ເປັນບ່ອນທີ່ມີການ ແຕ່ງຫນ້ງສືຫລາຍທີ່ສຸດ. ຫນັງສືທີ່ແຕ່ງຂຶ້ນນີ້ ສ່ວນຫລາຍແມ່ນຫນັກ ໄປທາງຫລັກການທາງສາສນາ ແລະຫນັງສືຄຳສອນ ຂອງສາສນາ ແມ່ນວຽກສ່ວນໃຫຍ່ຂອງໂຮງພິມພຣະຜູ້ມີຊຶ່ສຽງຄົນນຶ່ງ ຊຶ່ວ່າ ຄໍຕັນ ນາເທີ ທ່ານຜູ້ດຽວທີ່ສາມາດແຕ່ງຫນັງສືໄດ້ປະມານສີ້ຮ້ອຍແນວແລະ ງານຊຶ້ນຢ້ຽມຂອງທ່ານແມ່ນ ແມກເນເລັຍ ກຣິສ້ຕີອະເມຣິການາ

( **Magnelia Cristi Americana** ) ຊຶ່ງເປັນທີ່ຮູ້ຈັກແລະນິ
ຍົມຊົມຊອບຂອງຄົນທົ່ວໄປຈົນວ່າ ຫາງລອນດອນໄດ້ເອົາອອກໄປພິມ
ເນື້ອເຮື່ອງໃນໜັງສືພິມປະຈັດຂອງເມືອງນິວອີງແລນດ໌ຢ່າງລະອຽດ
ຕາມຄວາມເຫັນຂອງນັກປາດ ແລະນັກປະພັນ. ພິທີງານອັນນຶ່ງທີ່
ເປັນທີ່ນິຍົມແກ່ປະຊາຊົນທົ່ວໄປອີກນັ້ນແມ່ນການຂຸດຂຸມຝັງສົບ
ທ່ານ ມິແຊລ ວິເກີລເວິດ ຊຶ່ງໃສ່ຊື່ວ່າ "ວັນທີ່ໂລກຈະພິນາດ".
ຊຶ່ງຜູ້ຂຽນໄດ້ບັນລະຍາຍເຖິງການຕັດສິນຄັ້ງສຸດທ້າຍໂດຍໃຊ້ຄຳເວົ້າ
ທີ່ໜ້າຢ້ານກົວ ແລະເມື່ອເວລາທຸກໆຄົນໄດ້ອ່ານເຮື່ອງນີ້ ກໍພາກັນ
ເອົາໄວ້ຄົນລະນຶ່ງສຳເນົາ.

## ອຳນາດການປົກຄອງຂອງຕ່າງປະເທດໄດ້ສິ້ນສຸດລົງ

ໃນທຸກໆດ້ານຂອງການພັທນາອານານິຄົມນີ້, ລັກສນະທີ່ເປັນ
ຕາຢ້ານນັ້ນ ແມ່ນການຂາດການຄວບຄຸມອິດທິພົນ ຊຶ່ງຣັຖບານອັງກິດ
ມີຕໍ່ອານານິຄົມ. ໃນສໄມຂອງການສ້າງອານານິຄົມນັ້ນທາງອານາ
ນິຄົມມີເສຣີພາບໃນການດຳເນີນກິຈການໃດໆໄດ້ເທົ່າທີ່ສິ່ງແວດລ້ອມ
ອຳນວຍໃຫ້. ໃນເວລານັ້ນ ຣັຖບານອັງກິດບໍ່ໄດ້ດຳເນີນການໂດຍ
ຕົນເອງໂດຍຕຣົງ ໃນການຈັດຕັ້ງອານານິຄົມ ຕ່າງໆ, ນອກຈາກ
ເມືອງຈອກເຈັຍ ແລະຕໍ່ຈາກນັ້ນອີກເປັນເວລາຄົນນານ ທາງການ
ອັງກິດ ຊຶ່ງແຊກຊຸມເຂົ້າໄປໃນທາງການເມືອງ. ຄວາມຈິງທີ່ວ່າ

ເຈົ້າຊີວິດໄດ້ຖ່າຍທອດອຳນາດອະທິປະໄຕມາຍັງໂລກໃຫມ່ໂດຍຜ່ານ ທາງບໍຣິສັດການຄ້າ ແລະເຈົ້າທົນນີ້ ບໍ່ໄດ້ຫມາຍຄວາມວ່າ ພວກທີ່ຢູ່ ໃນອານານິຄົມຢູ່ຢ່າງເສຣີໂດຍປາສຈາກການຄວບຄຸມຈາກພາຍນອກ ແຕ່ຢ່າງໃດ. ຕາມເງື່ອນໄຂສັນຍາເຊົ່າເມືອງເວີຊີເນັຍແລະອ່າວ ແມແຊຈູແຊດ ເປັນຕົ້ນເດີມທີ່ອຳນາດຂອງຣັຖບານນັ້ນຕົກຢູ່ກັບບໍຣິສັດ ທີ່ກ່ຽວຂ້ອງ, ແລະຂໍ້ບັງຄັບນີ້ມີຢູ່ວ່າ ບໍຣິສັດເຫລົ່ານີ້ ຕ້ອງເປັນຜູ້ທີ່ ກ່ຽວຂ້ອງແລະບໍຣິສັດເຫລົ່ານີ້ ຕ້ອງເປັນຜູ້ທີ່ຕັ້ງຖິ່ນຖານຢູ່ປະເທດອັງ ກິດ ສ່ວນຜູ້ທີ່ຢູ່ແຕ່ໃນເມືອງອະເມຣິການັ້ນ ບໍ່ມີສິດອອກສຽງໃດໆ ກ່ຽວກັບຣັຖບານ. ວິທີນີ້ກໍບໍ່ຜິດກັບສິ່ງທີ່ເຈົ້າມະຫາຊີວິດ ໄດ້ໃຊ້ອຳ ນາດປົກຄອງທີ່ເດັດຂາດ.

ເຖິງຢ່າງໃດກໍດີ ການປົກຄອງໂດຍຜູ້ດຽວຈາກອຳນາດພາຍ ນອກນັ້ນໄດ້ແຕກຫັກລົງໄປແລ້ວ. ບາດກ້າວທຳອິດແມ່ນການຕັດສິນ ໃຈຂອງບໍຣິສັດລອນດອນ (ທີ່ຢູ່ເວີຊີເນັຍ) ໄດ້ອະນຸຍາດໃຫ້ຜູ້ທີ່ມາ ຕັ້ງຖິ່ນຖານຢູ່ເວີຊີເນັຍເປັນຕົວແທນຂອງຣັຖບານ. ທາງບໍຣິສັດໄດ້ ມີຄຳສັ່ງໃຫ້ແຕ່ງຕັ້ງ ຜູ້ປົກຄອງເມືອງຂຶ້ນ (ເຈົ້າເມືອງ) ໃນປີ ຈຊຈຈ ໂດຍປະກາດໃຫ້ຣາຊດອນຢູ່ຕາມບ່ອນ ທີ່ມີການປູກຝັງໃຫ້ ເລືອກຜູ້ແທນຂອງຕົນຜູ້ນຶ່ງເພື່ອເປັນຜູ້ຕາງຫນ້າຂອງຕົນເຂົ້າຮ່ວມກັບ ຜູ້ປົກຄອງເມືອງແລະສະພາທີ່ໄດ້ແຕ່ງຕັ້ງໄວ້ແລ້ວ ເພື່ອຈະຊ່ວຍສົງ ເຄາະຄວາມຢູ່ດີກິນດີຂອງອານານິຄົມນີ້.

24 / VII
ห้ามจำหน่าย

ເຫດການທີ່ເກີດຂຶ້ນໃນສໄມອານາມິຄົມນັ້ນ ກໍໃຫ້ເກີດຜົນໄກ
ເກີນຄວາມຄາດໝາຍ. ຕໍ່ຈາກນັ້ນມາ, ເປັນທີ່ຮັບຮູ້ທົ່ວໆໄປແລ້ວ
ວ່າ ພວກທີ່ຢູ່ໃນອານານິຄົມ ມີສິດຮ່ວມຮູ້ກັບຣັຖບານຂອງເຂົາເຈົ້າ.
ໃນໂອກາດຕໍ່ໄປ ເມື່ອເຈົ້າຊີວິດຕໍ່ສັນຍາເຊົ່າໃນພາຍໜ້າ ຊຶ່ງຣະບຸ
ໄວ້ວ່າ ບຸກຄົນທີ່ມີອິສຣະຢູ່ໃນອານານິຄົມທີ່ກ່ຽວຂ້ອງນັ້ນຄວນມີສິດອອກ
ສຽງໃນການອອກກົດໝາຍ ທີ່ກ່ຽວກັບຜົນປະໂຍດຂອງເຂົາເຈົ້າ.
ດັ່ງນັ້ນ ກົດບັນຍັດນີ້ຈຶ່ງກາຍເປັນລາງວັນສຳລັບທ່ານເຊຊິລແຄລເວີດ
ທີ່ເມືອງ ແມຣິແລນ ແລະທ່ານວິລລຽມເພັນຜູ້ສ້າງເມືອງເພັນຊິລເວ
ເນັຍ, ເມືອງແຄໂຣໄຣນາທັງສອງບ່ອນ ແລະຜູ້ສ້າງເມືອງນິວເຈຊີ
ໄດ້ບົ່ງໄວ້ວ່າ "ກົດໝາຍທີ່ແຕ່ງຂຶ້ນຄວນໄດ້ຮັບຄວາມເຫັນຊອບຈາກ
ບຸກຄົນຜູ້ມີເສຣີພາບ" ແລະມີສອງກໍຣະນີເທົ່ານັ້ນ ທີ່ຣັຖບານໂດຍ
ປະຊາຊົນນັ້ນບໍ່ມີ. ເຊັ່ນວ່າ ເມືອງນິວຢອກ, ພະເຈົ້າຊາລທີສອງ
ໄດ້ອະນຸຍາດໃຫ້ ດຸກ ອອຟ ຢອກ, ພຣະອານຸຊາເປັນຜູ້ສືບຄອງ
ເມືອງ ແລະຕໍ່ມາ ກໍປ່ຽນຊື່ເປັນພະເຈົ້າ ເຈມ ທີສອງ ແລະອີກ
ເມືອງນຶ່ງກໍແມ່ນເມືອງຈອກເຈັຍ ຊຶ່ງເຈົ້າຊີວິດໄດ້ອະນຸຍາດ ບຸກຄົນ
ຄນະນຶ່ງເປັນຜູ້ພິທັກຣັກສາ. ການປະຕິບັດໃນສອງກໍຣະນີທີ່ກ່າວມາ
ນີ້ ຍິນຍານ ເພາະວ່າ ພວກປະຊາຊົນໄດ້ຂໍຮ້ອງໃຫ້ມີຕົວແທນ
ຂອງເຂົາເຈົ້າເຂົ້າຮ່ວມ ໃນກິຈການຂອງຣັຖບານ ແລະການຮຽກ
ຮ້ອງເອົາສິດທີ່ມີ ມີຢູ່ບໍ່ໄດ້ຂາດ ຈົນທາງການເຫັນວ່າ ເປັນການ

ເໝາະສົມແລ້ວທີ່ຈະຕອບສນອງຄວາມຮຽກຮ້ອງຂອງເຂົາເຈົ້າ.

ເທື່ອທຳອິດທີ່ພວກອານານິຄົມ ມີສິດເຂົ້າຮ່ວມໃນຜແນກການ ອອກກົດໝາຍນັ້ນບໍ່ມີຄວາມສຳຄັນພໍປານໃດ, ແຕ່ໃນທີ່ສຸດ, ກໍກາຍ ເປັນບາດກ້າວທີ່ສຳຄັນໃນການຈັດຕັ້ງການປົກຄອງຫ້ວງໝົດໂດຍພວກ ອານານິຄົມນັ້ນເອງ ແລະສິ່ງທີ່ນຳພົນສຳເຣັດມານັ້ເນື່ອງມາຈາກພົນ ຂອງການເລືອກຕັ້ງສະພາຜູ້ແທນ ຊຶ່ງມີສິດຄວບຄຸມ ກ່ຽວກັບເຣື່ອງ ການເງິນ. ຈາກອານານິຄົມບ່ອນນຶ່ງເຖິງອານານິຄົມອີກບ່ອນນຶ່ງ, ໄດ້ມີການແຕ່ງຕັ້ງຫລັກການໄວ້ວ່າ ບໍ່ໃຫ້ມີການເກັບພາສີ, ຫລືເກັບ ຣາຍໄດ້ຈາກປະຊາຊົນ, ຫລືຈ່າຍເງິນເດືອນ ໃຫ້ແກ່ພວກປົກຄອງ ແລະເຈົ້າໜ້າທີ່ອື່ນໆໃນອານານິຄົມ ໂດຍປາສຈາກຄວາມເຫັນຊອບ ຈາກຕົວແທນຂອງປະຊາຊົນ.

ຜູ້ປົກຄອງເມືອງແລະເຈົ້າໜ້າທີ່ອື່ນໆໃນອານານິຄົມຈະຕ້ອງ ປະຕິບັດຕາມຄວາມປະສົງ ຂອງສະພາຜູ້ແທນຣາຊດອນ, ບໍ່ດັ່ງນັ້ນ ທາງສະພາຈະບໍ່ເຫັນສົມຄວນ ໃຫ້ເອົາເງິນອອກໄປຈ່າຍເພາະວຽກ ການນັ້ນຍັງເປັນກໍຣະນີຂອງຜູ້ປົກຄອງເມືອງທີ່ມີຫົວຄິດເປັນເອກຣາຊ ສ່ວນຕົວທີ່ອອກສຽງບໍ່ຮັບເອົາເງິນເດືອນແມ່ນແຕ່ອັດຄຽວ. ຕໍ່ໜ້າ ສະພາບການອຶ່ມຊູເຊັ່ນນີ້, ຜູ້ປົກຄອງເມືອງ ແລະເຈົ້າໜ້າທີ່ໆ ຮັບ ແຕ່ງຕັ້ງ ເລີຍມີທ່າທີໂອນອ່ຽງໄປຕາມຄວາມຕ້ອງການຂອງພວກອະ ນານິຄົມນີ້ຢ່າງບໍ່ຊັກຊ້າ.

## ອົງກິດບໍ່ເຕັມໃຈມອບອຳນາດໃຫ້

ໃນເຂດເມືອງນີວອີງແລນດ໌ ຣະບົບການປົກຄອງ ແບບຕົນ
ເອງໄດ້ມີມາຫລາຍປີກ່ອນອານານິຄົມອື່ນໆແລ້ວ ແລະຖ້າວ່າພວກນັກ
ບຸນທັງຫລາຍນີ້ມາຕັ້ງຖິ່ນຖານຢູ່ເມືອງເວີຊິເນັຍແຕ່ທຳອິດພັ້ນ ເຂົາ
ເຈົ້າຄົງຈະຕ້ອງຢູ້ກ້ອງອຳນາດຂອງບໍຣິສັດລອນດອນ (ທີ່ເວີຈິເນັຍ)
ແລ້ວ. ໃນອານານິຄົມ ຂອງເຂົາເຈົ້າ ຢູ່ທີ່ເມືອງປ໊ອປລາຍມຸທ,
ເຂົາເຈົ້າຢູ່ຢ່າງກາຍຂອບເຂດອຳນາດຂອງຣັຖບານ. ດັ່ງນັ້ນເຂົາ
ເຈົ້າຈຶ່ງຕັດສິນໃຈ ຈັດຕັ້ງອົງການໆເມືອງຂຶ້ນ ແລະເມື່ອເວລາເຂົາ
ເຈົ້າມາອະເມຣິກາເທື່ອທຳອິດນັ້ນ ເຂົາເຈົ້າໄດ້ມານຳເຮືອທີ່ມີຊື່ວ່າ
ເມ ຟລາວເວີ ຊຶ່ງເຂົາເຈົ້າໄດ້ແຕ່ງຕັ້ງເອກສານສຳລັບຣັຖບານທີ່ມີ
ຊື່ວ່າສັນຍາເມ ຟລາວເວີ ເພາະເຂົາເຈົ້າໄດ້ຫ້ອມໂອມກັນເຂົ້າ
ເປັນຮ່າງການເມືອງ ເພື່ອຮັກສາໄວ້ຊຶ່ງຣະບຽບແລະຄຸນງາມຄວາມ
ດີໃນນີ້ເພື່ອມາໃຊ້ເປັນພາກປະຕິບັດໃນການສ້າງຮ່າງ ກົດຣະບຽບ
ແລະມາດຕາຕ່າງໆຂອງຣັຖທັມມະນູນ ເພື່ອຈະເອົາມາໃຊ້ເປັນ ກົດ
ໝາຍບ້ານເມືອງຂອງຊາວອານານິຄົມ ແມ່ນວ່າຄວາມຄິດຣິເຣີ່ມໃນ
ການຈັດຕັ້ງຣັຖບານ ໂດຍຕົນເອງຂອງພວກນັກບຸນທັງຫລາຍທີ່ເມືອງ
ປລາຍມຸທບໍ່ແມ່ນການແຂ່ງຂັນກັນກັບຣັຖບານເມືອງອື່ນກໍຕາມ, ແຕ່
ການກະທຳເຊັ່ນນີ້ບໍ່ຖືກຕາມພັ້ນຖານຂອງກົດໝາຍ ແລະພວກເຂົາ
ເຈົ້າຍັງສາມາດດຳເນີນກິຈການພາຍໃນປະເທດຂອງເຂົາເຈົ້າໄດ້ດີ

ໂດຍປາສຈາກການແຊກແຊງ ຈາກພາຍນອກ. ສາໍລັບ ເມືອງແມ ແຊຈູແຊດສ້ ໄດ້ໃຫ້ສິດທິໃນການປົກຄອງແບບນີ້, ທາງບໍຣິສັດຈຶ່ງໄດ້ອົພຍົບມາອະເມຣິກາໂດຍເອົາຮ່າງຂອງການປົກຄອງມາພ້ອມ ດັ່ງນັ້ນ ອາໍນາດເຕັມຈຶ່ງຢູ່ໃນກາໍມືຂອງຜູ້ທີ່ຢູ່ໃນອານານິຄົມນີ້. ມີສະມາຊິກປະມານສິບກວ່າຄົນຂອງບໍຣິສັດທີ່ມາອະເມຣິກາເທື່ອທາໍອິດໄດ້ພຍາຍາມຈະໃຊ້ອາໍນາດເດັດຂາດໃນການປົກຄອງແຕ່ຜູ້ດຽວ. ແຕ່ຕໍ່ມາ, ປະຊາຊົນທີ່ມີຖິ່ນຖານຢູ່ໃນແຖບນີ້ ໄດ້ຂໍ້ຮ້ອງທວງສິດຢາກໃຫ້ປະຊາຊົນມີປາກສຽງ ແລະສ່ວນຮວມໃນກິຈການດ້ານສາທາຣະນະ ພ້ອມທັງແຈ້ງຄວາມປະສົງວ່າ ຖ້າອາດຍາສິດທີ່ກ່ຽວຂ້ອງນີ້ປະຕິເສດ ຄາໍຮ້ອງນີ້ພວກປະຊາຊົນຫມົດທຸກຄົນໃນແຖບນີ້ຈະອົພຍົບໄປຢູ່ບ່ອນອື່ນ ຕໍ່ຫນ້າສະພາບການຂົ່ມຂູ່ນີ້, ສະມາຊິກຂອງບໍຣິສັດ ຈຶ່ງໄດ້ຍອມແພ້ ແລະການຄວບຄູມຕ່າງໆຂອງຣັຖບານກໍຜ່ານໄປຍັງສະມາຊິກຜູ້ແທນທີ່ໄດ້ຮັບເລືອກຕັ້ງ. ຕໍ່ມາ, ອານານິຄົມທັງຫມົດ ຂອງເມືອງນິວອິງແລນດ້, ເມືອງນິວເຮເວີນ, ໂຮດໄອແລນດ້, ແລະຄໍແນກຕິຄັດ ໄດ້ພົບກັບຄວາມສາໍເຣັດໃນການຈັດຕັ້ງຣັຖບານໂດຍປະຊາຊົນເອງ. ເຂົາເຈົ້າໄດ້ເຣັດໂດຍວິທີງ່າຍໆ ເຊັ່ນວ່າເຂົາເຈົ້າຖືວ່າ ເຂົາເຈົ້າຢູ່ເຫນືອອາໍນາດຣັຖບານ ແລະຕໍ່ຈາກນັ້ນມາເຂົາເຈົ້າກໍຈັດຕັ້ງຣະບົບການເມືອງໂດຍເອົາແບບຢ່າງຂອງພວກນັກບຸນທີ່ເມືອງນິວປລາຍມຸທ ມາປະຕິບັດ.

ส่วนใหญ่ของรัฐบาลโดยตัวเอง ซึ่งพวกอาณานิคมได้จัดตั้งขึ้นและเอามาใช้นั้น บ่แม่นบ่เป็นการยื่มอู่ต่ำ อาณาสิดอังกิดแต่ย่างใด. ทางการสาม ได้ฟ้องร้างปักครองของแมแซจูแซดส์, และในปี ๑๗๘๔, ละถิ่นก็ได้ถืกลิบล้างไป. ต่จากนั้นมา, อาณานิคมหมิดทุกบ่อนในแถบนิวอิงแลนด์ ก็ได้อู่พายใต้อำนาดของกะสัดโดยแต่งตั้งผู้ครองเมือง ซึ่งมีอำนาดเต็มใช้เป็นผู้ว่าราชการแทน, แต่พวกอาณานิคมบ่ดีใจต่สะพายการที่เป็นอู่นี้เลีย. หลังจากเกิดการปะติวัดขึ้น อู่ที่ปะเทดอังกิดในปี ๑๗๘๘ ซึ่งเป็นเหตให้มีการโล่นล้ม พะเจ้าเจมที่สอง และในขนะดงวกันนี้ ชาวอาณานิคมก็สอยโอกาดปิดอำนาดผู้ปักครองเมือง ที่ว่าการแทนเจ้ามะหาชีวิดปะเทดอังกิด. ทางเมืองโรดไอแลนด์ และคอนเนกติคัด ร่วมทั้งเมืองนิวเธเวินก็สามาดจัดตั้งถิ่นถานของรัฐบาลเอกราชขึ้นย่างใดก็ตาม, ต่มา เมืองแมแซจูแซดส์ ก็ได้ติกยู่พายใต้อำนาดของกะสัดอีก, แต่เที่อนี้ปะชาชีม ได้มีโอกาดร่วมในรัฐบาลเช่นดงวกัน, แต่สิดที่อันนี้ได้ต่อออกไปเลื่อยๆ จ่นว่าปะชาชีมสามาดควบคุมอำนาดทั้งหมิดโดยแท้จิง ซึ่งเป็นสิ่งที่มำผินดี ในการควบคุมฝ่ายการคังที่อทุกแห่ง. บันดาผู้ปักครองเมือง ทั้งหลาย ได้รับคำสั่งเลื่อยๆว่า ให้ยึดหมั้นในมะโย

ບາຍຊຶ່ງຈະນຳຜົນປະໂຍດໃຫ້ແກ່ປະເທດອັງກິດ ແລະໃນເວລາດຽວ ກັນນີ້ ທາງສະພາອົງຄະມົນຕຣີຂອງປະເທດອັງກິດ ໄດ້ໃຊ້ສິດທິຂອງ ຕົນສຳຣວດເບິ່ງການອອກກົດຫມາຍ ຂອງພວກອານານິຄົມ, ເຖິງ ຢ່າງໃດກໍດີ ພວກອານານິຄົມ ກໍຍັງບໍ່ດີໃຈຕໍ່ການກະທຳໃດໆທີ່ມີສ່ວນ ກ່ຽວຂ້ອງກັບຜົນປະໂຍດຂອງເຂົາເຈົ້າ.

ໃນທຳນອງດຽວກັນນີ້, ພວກອານານິຄົມ ມີຄວາມເຫັນໂດຍ ທົ່ວໆໄປວ່າ ພວກເຂົາເຈົ້າມີຄວາມພຍາຍາມ ຫາຊ່ອງທາງຫລີກ ລ່ຽງການຄວບຄູມພາຍນອກຂອງອັງກິດເຊັ່ນວ່າ ທາງດ້ານການຄ້າ ຂາຍພາຍນອກ ຊຶ່ງເລີ່ມແຕ່ປີ ຈຟ້ຄ ເປັນຕົ້ນມາ, ທາງການອັງ ກິດໄດ້ພຍາຍາມຢູ່ບໍ່ໄດ້ຂາດ ໃນການອອກກົດຫມາຍ ບາງສິ່ງບາງ ຢ່າງກ່ຽວກັບການຄ້າ, ເສຖກິດ, ແລະການເປັນຢູ່ຂອງພວກອານາ ນິຄົມ. ກ່ຽວກັບກົດຫມາຍນີ້ ມີຫລາຍອັນກໍ່ເປັນປະໂຍດແກ່ອະເມຣິ ກາ, ແຕ່ສ່ວນຫລາຍແລ້ວ ຜົນປະໂຍດສ່ວນໃຫຍ່ເປັນຂອງປະເທດ ອັງກິດໂດຍໃຫ້ອະເມຣິກາ ເປັນຜູ້ຈ່າຍຕາງໂດຍທົ່ວໆໄປ. ສ່ວນ ພວກອານານິຄົມ ກໍເຮັດຄືບໍ່ຮູ້ວ່າ ມັນເປັນຄວາມເສັຍຫາຍອັນໃຫຍ່ ຫລວງສຳຫລັບຂະເຈົ້າເລີຍ ແລະພວກທາງການອັງກິດ ໄດ້ ພຍາ ຍາມໃຊ້ອຳນາດຫນີບເຕັງຂຶ້ນຕື່ມເລື້ອຍໆ, ແຕ່ການຂົ່ມຂູ່ນີ້ ກໍບໍ່ຍືນ ປານໃດ ແລະໃນທີ່ສຸດອຳນາດການປົກຄອງແບບນີ້ ກໍໄດ້ຖືກໂຄ່ນລົ້ມ ໂດຍປະຊາຊົນ.

ຄວາມປິຕິຍິນດີຢ່າງໃຫຍ່ຫລວງ ຂອງພວກອາມາມິຄົມແມ່ນ
ການໄດ້ຮັບເອກຣາຊທາງການເມືອງຈາກປະເທດອັງກິດ ນັບມື້ນັບ
ໄກອອກໄປ ແລະສະພາບການ ປ່ຽນມາເປັນຄົນອະເມຣິກັນຫລາຍ
ກວ່າເປັນຄົນອັງກິດ ແລະຄວາມໂນ້ມອຽງນີ້ແມ່ນມາຈາກການປະສົມ
ຂອງຫລາຍຊາດຫລາຍປະເພນີ ຊຶ່ງໄດ້ຄອຍຄອງແຜ່ນດິນແຫ່ງນີ້ມາ.
ທັງຫມົດນີ້ມີຄວາມເປັນມາແນວໃດ ຊຶ່ງເປັນພື້ນຖານຂອງຊາດເກີດ
ໃຫມ່ໄດ້ບັນລະຍາຍຢ່າງແຈ່ມແຈ້ງໃນປີ ຄ.ສ ໂດຍສາມີ ຊຶ່ງເປັນ
ຄົນຝຣັ່ງເສດຄົນນຶ່ງ ຊື່ທ່ານ ເຈ ເຣກເຕ ເຊນທ໌ ຈອນ ຄຣິບວ໌
ເກີ ວ່າ "ທ່ານບໍ່ແມ່ນຊາວຢຸໂຣບ, ຫລື ເຊື້ອສາຍ ຊາວຢຸໂຣບ,
ການປະສົມພັນທີ່ແປກປລາດ ຊຶ່ງຈະຫາໃນປະເທດອື່ນບໍ່ມີ... ຕົວ
ຢ່າງໃນຄອບຄົວນຶ່ງ ຊຶ່ງມີພໍ່ເຖົ້າເປັນຊາວອັງກິດ, ເມັຍເປັນຄົນດັສ
ໄດ້ລູກຊາຍມາແຕ່ງດອງກັບຜູ້ຍິງຝຣັ່ງເສດ ແລະຫລານຊາຍສີ່ຄົນໃນ
ປັດຈຸບັນນີ້ ເອົາເມັຍສີ່ຊາດຕ່າງໆກັນ. ເຂົາເປັນຄົນອະເມຣິກັນ,
ຜູ້ທີ່ປະຄວາມເສັຍຫາຍແລະກິຣິຍາອັນເກົ່າແກ່ໄວ້ເບື້ອງຫລັງ, ແລ້ວ
ຮັບເອົາວິຖີຊີວິດໃຫມ່ຕາມແບບສະບັບຂອງໂລກສໄມໃຫມ່, ຣັຖບານ
ໃຫມ່ ຊຶ່ງເຂົາເຈົ້ານັບຖືແລະຫນ້າທີ່ໃຫມ່ທີ່ເຂົາເຈົ້າດຳຣົງຢູ່.

# 2

## ການກອບກູ້ເອກຣາຊ

"ພວກເຮົາຖືຄວາມຈິງທີ່ວ່າ ຫມົດທຸກຄົນເກີດມາມີສິດທິເທົ່າ
ທຽມກັນ, ຊຶ່ງຜູ້ສ້າງໄດ້ປະທານສິດທິອັນນີ້ ໃຫ້ແກ່ບຸກຄົນ
ທຸກໆຄົນທີ່ບໍ່ສາມາດຈະແລກປ່ຽນກັນໄດ້, ອັນນີ້ກໍຖືວ່າ ຊີ
ວິດ, ເສຣີພາບ ແລະການສແວງຫາຄວາມສຸກ"

ນີ້ແມ່ນຄຳປະກາດຂອງການໄດ້ຮັບເອກຣາຊ, ເມື່ອວັນທີ ๔ ເດືອນກໍຣະກະດາ ๑๗๗๖.

ທ່ານຈອນ ອາດາ, ປະທານາທິບໍດີຄົນທີສອງຂອງສະຫະຣັຖ ໄດ້ມີຊີວິດຢູ່ຈົນຮອດເຖົ້າແກ່ສະລາ ຊຶ່ງເປັນເງົາປຣັຊຍາ ໃນຄວາມ ເປັນມາທີ່ແຍກອຸ້ມເຂົ້າໄປ ໃນຊີວິດເບື້ອງຕົ້ນ. ໃນຈົດຫມາຍຄັ້ງ ກ່ອນທີ່ທ່ານໄດ້ຂຽນໄວ້ລະລຶກເຖິງຄວາມຫລັງ, ທ່ານໄດ້ປະກາດວ່າ ປະວັດສາດຂອງການປະຕິວັດຂອງຊາວອະເມຣິກັນໄດ້ເລີ່ມຕົ້ນມາຕັ້ງ ແຕ່ປີ ๑๗๘๐ ພູ້ນ. ທ່ານກ່າວຕໍ່ໄປອີກວ່າ "ການປະຕິວັດນີ້ໄດ້ມີ

ຂຶ້ນກ່ອນສົງຄາມ ແຕ່ການປະຕິວັດໄດ້ຝັງຢູ່ໃນສມອງແລະຈິດໃຈຂອງ ປະຊາຊົນ" ແລະຫລັກການ ແລະຄວາມຮູ້ສຶກນຶກຄິດ ຊຶ່ງນຳພາໃຫ້ ຊາວອະເມຣິກັນ ກໍ່ການຂະບົດນີ້, ຈະດຳເນີນໄປຮອດສອງຮ້ອຍປີ ຊຶ່ງການຂະບົດກໍ່ການປະຕິວັດນີ້ ໄດ້ເລີ່ມຕົ້ນມາ ຕັ້ງແຕ່ເວລາທີ່ພວກ ຊາວໄຮ່ຊາວສວນໄດ້ອົພຍົບມາອະເມຣິກາເທື່ອທຳອິດ.

ໃນດ້ານວັດຖຸ ຊຶ່ງເຫມາະສົມກັບການປະຕິວັດ ໄດ້ແກ່ການ ແຍກວິຖີທາງແຫ່ງຊີວິດຮະຫວ່າງປະເທດອັງກິດ ແລະອະເມຣິກາໄດ້ ເລີ່ມຕົ້ນມາຕັ້ງແຕ່ປີ ຈກຝນ. ຕັ້ງແຕ່ນັ້ນມາ ເປັນເວລານຶ່ງສັຕວັດ ເຄິ່ງທີ່ພວກອົພຍົບ ໄດ້ມາຕັ້ງຖິ່ນຖານ ເທື່ອທຳອິດຢູ່ ເຈັມສ່ທາວ, ເວີຊີເນັຍ, ແລະອານານິຄົມຫລາຍບ່ອນໄດ້ສ້າງເສຖກິດອັນຫມັ້ນຄົງ ແລະກວ້າງຂວາງ ພ້ອມທັງໄດ້ຮັບຜົນສຳເຮັດ ໃນດ້ານວັທນະທັມ. ທີ່ຈິງແລ້ວ ເຂົາເຈົ້າໄດ້ມີຮັຖບານປົກຄອງຕົນເອງ ມາແຕ່ຫລາຍປີ ແລ້ວ. ພົລເມືອງທີ່ມີຫລາຍຊາດ ຫລາຍພາສາປະປົນກັນນັ້ນກໍເພີ້ມ ຂຶ້ນຫລາຍກວ່ານຶ່ງລ້ານເຄິ່ງແລະແຕ່ປີ ຈກ00 ເປັນຕົ້ນມາ ປາກົດ ວ່ານີພົລເມືອງເພີ້ມຂຶ້ນອີກປະມານ ๘๕0,000 ຄົນ.

ສັຕວັດທີສິບແປດ, ເປັນສໄມຂອງການຂຍາຍຄັ້ງໃຫຍ່ຫລວງ ຂອງອານານິຄົມ ເພາະວ່າໃນເວລານັ້ນ ຈຳນວນຜູ້ຄົນຫລວງຫລາຍ ໄດ້ອົພຍົບມາຈາກຢຸໂຮບ ແລະດິນແດນທີ່ເຫມາະສົມສຳລັບການປູກ ຝັງນັ້ນແມ່ນດິນຕາມແຄມຝັ່ງທະເລ, ແຕ່ເມື່ອທີ່ດິນເລົ່ານີ້ມີຜູ້ຈັບຈອງ

ຫມົດແລ້ວ ພວກທີ່ມາຕາມທີຫລັງ ຈຶ່ງຈຳຕ້ອງຫຍັບເຂົ້າໄປຫາດິນ ຕາມສາຍນ້ຳຫ້ວຍຫາງດ້ານໃນ. ພວກພໍ້ຄ້າຫັ້ງຫລາຍ ໄດ້ຫຳການ ຄົ້ນຄ້ວາຕາມບ່ອນທີ່ຍັ້ງບໍ່ທັນໄດ້ຮັບຄວາມສົນໃຈເທື່ອ ແລະໄດ້ຄົ້ນພົບ ຮ່ອມພູທີ່ມີດິນອຸດົມສົມບູນ ຊຶ່ງເປັນເຫດໃຫ້ພວກຊາວໄຮ່ຊາວນາທີ່ກ້າ ຫານຊອກຫາທີ່ດິນດີ ແລະຣາຄາຖືກ ສຳລັບຜູ້ທີ່ຈະເອົາຄອບຄົວໄປຢູ່ ໃນປ່າດົງ ແລະປູກສ້າງເຮືອນຊານ ໃສ່ດິນນັ້ນ. ຫລັງຈາກຖາກ ຖາງແລ້ວ ເຂົາເຈົ້າຍັງໄດ້ຮັບຄວາມຍາກລຳບາກ ອັນໃຫຍ່ຫລວງ, ແຕ່ຜົນສຳເຣັດທີ່ເຂົາເຈົ້າໄດ້ຮັບເປັນສິ່ງຕອບສນອງນັ້ນກໍເປັນຫນ້າພໍ ໃຈທີ່ສຸດແລະມີຜູ້ຄົນ ຫລັ່ງໄຫລເຂົ້າໄປຢູ່ໃນແຖບນີ້ຢ່າງຫລວງຫລາຍ ແລະໃນທີ່ສຸດ ເຂດນີ້ກໍກາຍເປັນຖິ່ນຂອງພວກນັກຄົ້ນຄ້ວາ ທີ່ມີຄວາມ ເຊື່ອຫມັ້ນຕົນເອງ. ໃນຣະຫວ່າງສາມສິບປີຂອງສັຕວັດນີ້, ຜູ້ຄົນທີ່ ຢູ່ຕາມເຂດຊາຍແດນ ພ້ອມດ້ວຍຄອບຄົວຂອງເຂົາເຈົ້າໄດ້ຫລັ່ງໄຫລ ເຂົ້າໄປສູ່ເຂດຊາຍແດນເມືອງ ເພັນຊິລວາເນັຍ ແລ້ວອາໄສຢູ່ຕາມ ເຂດຊາຍແດນພ້ອມດ້ວຍຄອບຄົວຂອງເຂົາເຈົ້າໄດ້ຫລັ່ງໄຫລເຂົ້າໄປ ສູ່ເຂດຊາຍແດນເມືອງ ເພັນຊິລວາເນັຍ ແລ້ວອາໄສຢູ່ຕາມແຖບ ຮ່ອມພູ ເຊນັນດົວ ແລະຕາມສາຍນ້ຳ ຊຶ່ງໃກ້ເຂົ້າໄປຫາງເຂດຕະ ວັນຕົກ.

ຕົກມາໃນປີ ຈກຝຜ, ປະເທດອັງກິດ ບໍ່ໄດ້ກຳນົດຄວາມປະ ສົງອັນແນ່ວແນ່ ໃນການປະລະນະໂຍບາຍຈັກພັດເພື່ອປົກຄອງອານາ

ນິຄົມນີ້ຢູ່. ຫລັກການ ກ່ຽວກັບນະໂຍບາຍນີ້ກໍຄື ຄວາມເຫັນຂອງ ພວກພໍ້ຄາທີ່ຢືນຢັນວ່າ ພວກອານານິຄົມທັງຫມົດ ຄວນຈັດສິ່ງວັດຖຸດິບ ໃຫ້ປະເທດອັງກິດ ແລະບໍ່ແມ່ນຈະມາແຂ່ງຂັນຜລິດຜົນ. ແຕ່ອັນນີ້ກໍ ກາຍເປັນການບັງຄັບທີ່ບໍ່ມີນ້ຳຫນັກ ແລະພວກອານານິຄົມທັງຫລາຍບໍ່ ເຄີຍຄິດວ່າເຂົາເຈົ້າເປັນສ່ວນນຶ່ງຂອງການທ້ອນໂຮມທັງຫມົດ ແລະ ຖືວ່າ ເຂົາເຈົ້າເປັນພຽງແຕ່ການຮ່ວມກັນ ຫລືເປັນຮັຖເຫມືອນດັ່ງ ປະເທດອັງກິດ ຊຶ່ງມີຄວາມຄົບຄ້າສະມາຄົມກັບທາງການລອນດອນ ເທົ່ານັ້ນ. ຄວາມຮູ້ສຶກໃນປະເທດອັງກິດນັ້ນໄດ້ປັ່ນປ່ວນຂຶ້ນ ແລະ ທາງຮັຖສະພາໄດ້ພຍາຍາມທຸກຢ່າງ ເພື່ອຄວບຄູມກິຈການໃນດ້ານ ເສຖກິດຕ່າງໆ ຂອງພວກອານານິຄົມ ໃຫ້ຢູ່ໃຕ້ບັງຄັບບັນຊາຂອງປະ ເທດອັງກິດ, ແຕ່ທາງອານານິຄົມສ່ວນຫລາຍຄັດຄ້ານຕໍ່ການຢູ່ໃຕ້ບັງ ຄັບບັນຊາເຊັ່ນນີ້. ແລະຄວາມນຶກຄິດຂອງບຸກຄົນ ທີ່ຢູ່ຫ່າງໄກກັນ ຈາກໂລກໃຫມ່ ຫາເມືອງແມ່ (ປະເທດອັງກິດ) ເປັນແຕ່ພຽງ ຄວາມຈູງໃຈທີ່ງຽບສງັດ ໂດຍເຊື່ອງຄວາມຢ້ານໄວ້ເບື້ອງຫລັງວ່າ ມີມີ້ນຶ່ງ ພວກອານານິຄົມອາດແກ້ແຄ້ນ ແລະບໍ່ເຊື່ອຟັງຕົນອີກຕໍ່ໄປ.

ເພື່ອເປັນການເພີ້ມຕົ່ມ ໃນຄວາມຫ່າງໄກນີ້ກໍຄື ສະພາບ ຄວາມເປັນຢູ່ຂອງຊາວອະເມຣິກັນຢູ່ໃນປ່າດົງນີ້. ຈາກປະເທດທີ່ມີ ທີ່ຢູ່ຈຳກັດ ແລະຈາກເມືອງທີ່ມີຜູ້ຄົນຫນາແຫນ້ນ, ພວກທີ່ອົພຍົບມາ ນີ້ ໄດ້ມາຕັ້ງຖິ່ນຖານຢູ່ແຜ່ນດິນອັນກວ້າງໃຫຍ່ແລະບໍ່ມີຂອບເຂດຈຳ

ກັດ, ປ່າເລິກ ແລະຫ້ວຍໃຫຍ່ ຈາກທະວີບອັນນີ້ ໄດ້ມີເມືອງ, ມີ ບ້ານ ມີຜູ້ຊາຍ ແລະຜູ້ຍິງ ຊຶ່ງສະພາບຂອງທັມມະຊາດໄດ້ປ່ຽນແປງ ຊາຕາຊີວິດຂອງເຂົາເຈົ້າໃຫ້ເປັນຊີວິດແບບໃໝ່ຊຶ່ງເນັ້ນເຖິງຄວາມ ສຳຄັນຂອງປະຊາຊົນ ເຊັ່ນວ່າ ຄວາມສຳຄັນຂອງແຕ່ລະບຸກຄົນ.

## ຄວາມເຊື່ອໝັ້ນຂອງພວກທີ່ຢູ່ຕາມຊາຍແດນ

ທຸກສິ່ງທຸກຢ່າງໃນສິ່ງແວດລ້ອມໃໝ່ນີ້ ພາໃຫ້ພວກທີ່ອົບພຍົບ ມາຕັ້ງຖິ່ນຖານຢູ່ແຖບນັ້ນລືມວິດທີພົ້ນ ຫລືຄວາມຕ້ອງການຂອງຣັຖບານ ອັງກິດ. ພື້ນຖານຂອງການຈັດຕັ້ງອົງການການເມືອງນັ້ນ ໄດ້ເອົາ ແບບຢ່າງມາຈາກປະເທດອັງກິດ ແຕ່ກົດໝາຍນັ້ນຍັງເປັນສິ່ງທີ່ຈຳ ເປັນຢູ່ສຳລັບປົກປັກຮັກສາສັງຄົມຊາວອັງກິດ, ແຕ່ຢູ່ໃນປ່າຕຶບໜາ ແລ້ວກໍບໍ່ເປັນສິ່ງຈຳເປັນເລີຍສຳລັບພວກທີ່ຫາກໍມາເລີ່ມຕັ້ງຖິ່ນຖານ. ບໍ່ມີເຫດຜົນໃດທີ່ພາໃຫ້ເຂົາເຈົ້າຢ້ານກົວແລະຕ້ອງເພິ່ງພາອາໄສຣັຖ ບານ, ພວກທີ່ຢູ່ຕາມເຂດຊາຍແດນນີ້ສາມາດປ້ອງກັນເຂົາເຈົ້າເອງ ໄດ້ ແລະຂຍາຍການຄວບຄຸມຄວາມກຽດຊັງ ໃຫ້ໂອນອຽງໄປຕາມ ຄວາມພໍໃຈ ຫລືບໍ່ພໍໃຈທັງໝົດ.

ໃນຂັ້ນທຳອິດ, ເຂົາເຈົ້າສວຍໂອກາດ ເອົາຂນົບປະເພນີ ຂອງຊາວອັງກິດມາໃຊ້ ໃນການຕໍ່ສູ້ເພື່ອເສຣີພາບໃນການເມືອງ. ແນວຄິດຊຶ່ງສະທ້ອນເຖິງຜົນທີ່ຕາມມາເປັນສິ່ງທີ່ລ້າງທີ່ຕາມສໄມ ການ ຂອງຣ່າງກາຍປົກຄອງຂອງເວີຊີເນັຍ, ຊຶ່ງບົ່ງໄວ້ວ່າ ຊາວອາມາມິ

ຄົນອັງກິດທັງໝົດລວມໄດ້ມີເສຣີພາບ, ສິດທີພິເສດ ແລະຄວາມຫົນ
ຫານຕ່າງໆ ເໝືອນດັ່ງບຸກຄົນທັງຫລາຍທີ່ເກີດຢູ່ໃນດິນແດນປະເທ
ອັງກິດ.

ເຂົາເຈົ້າມີສິດທີ່ຢ່າງເຕັມທີ ໃນການໄດ້ຮັບຜົນປະໂຍດຈາກ
ຣັຖທັມມະນູນແລະກົດໝາຍພົ້ນເມືອງ ໃນສໄມດຶກດຳບັນທີ່ພວກ ອາ
ນານິຄົມສາມາດຍຶດມໍຣະດົກໄດ້ໄວ້ນັ້ນຄື ສິດທີໃນການເປັນຢູ່ ເພາະ
ວ່າ ໃນເວລາທີ່ພຣະເຈົ້າມະຫາຊີວິດຂັ້ນຄອງຢູ່ນັ້ນ ພຣະອົງຊົງກ່າວ
ວ່າ ອານານິຄົມທັງຫລາຍນີ້ ບໍ່ໄດ້ຢູ່ພາຍໃຕ້ການຄວບຄຸມຂອງຣັຖສະ
ພາ. ໃນເວລານັ້ນ ເຈົ້າຊີວິດເມືອງອັງກິດຊົງມີພຣະກົດອັນໜັກ
ເນື່ອງຈາກວ່າ ທີ່ປະເທດອັງກິດໄດ້ເກີດມີການວຸ້ນວາຍຂັ້ນ ຍ້ອນ
ການຕໍ່ສູ້ຈົນເຖິງຈຸດຂອງການປະຕິວັດຂອງພວກ ປູຣິຕັນ ເພື່ອໃຫ້ໄດ້
ຕາມຄວາມມຸ້ງຫວັງຂອງເຂົາເຈົ້າ. ກ່ອນທີ່ທາງຣັຖສະພາ ຈະຫັນ
ຄວາມສົນໃຈມາທາງວຽກອັນສຳຄັນ ຄືການແຜ່ຜາຍນະໂຍບາຍຂອງ
ຈັກພັດໄປທົ່ວທຸກມຸມໂລກໃໝ່ນັ້ນ, ທາງອານານິຄົມໄດ້ປູທາງຢ່າງ
ຕາມແບບຂອງເຂົາເຈົ້າຮຽບຮ້ອຍແລ້ວ.

ປີທຳອິດທີ່ເຂົາເຈົ້າຢູ່ໃນທະວີບໃໝ່, ພວກອານານິຄົມໄດ້
ດຳເນີນການປົກຄອງ ຕາມແບບກົດໝາຍແລະຣັຖທັມມະນູນອັງກິດ,
ໂດຍມີສະພາຜູ້ແທນຣາຊດອນ, ຜູ້ຕາງໜ້າຣັຖບານ ແລະການນັບຖື
ກົດໝາຍຕາມຣີດຄອງປະເພນີ ເປັນພື້ນຖານ ໃນການປະກັນເສຣີ

ພາບຂອງສ່ວນບຸກຄົນ. ແຕ່ຕໍ່ມາ, ການອອກກົດໝາຍໄດ້ເຮັດໄປ ຕາມທັສນະຂອງຄົນອະເມຣິກັນ ແລະຈາກນັ້ນມາ ບໍ່ມີໃຜສົນໃຈນຳ ພາກປະຕິບັດ ແບບຊາວອັງກິດຫລາຍ ຫລີເຮັດຕາມຜູ້ທີ່ໄດ້ເຮັດມາ ກ່ອນ. ອິສຣະພາບຂອງອາມາມິຄົນ ກ່ອນທີ່ຈະໄດ້ຄົນມາຈາກການ ຄວບຄຸມຂອງອັງກິດນັ້ນຕ້ອງພົບກັບອຸປສັກ ແລະການຍັດແຍ້ງນາໆປະ ການ. ປະວັດສາດຂອງອາມາມິຄົນນີ້ ເຕັມໄປດ້ວຍ ການຕໍ່ສູ້ ຣະ ຫວ່າງສະພາຜູ້ແທນຣາຊດອນ ຊຶ່ງແມ່ນປະຊາຊົນ ເປັນຜູ້ເລືອກຕັ້ງ ແລະຜູ້ປົກຄອງເມືອງ ໂດຍສ່ວນຫລາຍແມ່ນເຈົ້າຊີວິດຊົ່ວແຕ່ງຕັ້ງໃຫ້ ເປັນຕົວແທນໃນອາມາມິຄົນໂດຍໃຊ້ອຳນາດອະພິສິດ ຊຶ່ງເປັນການ ຂົ່ມຂູ່ຕໍ່ເສຣີພາບຂອງປະຊາຊົນ. ເຖິງຢ່າງໃດກໍຕາມ, ພວກອາ ມາມິຄົນກໍ່ຍັງສາມາດເຮັດໃຫ້ພວກນັກປົກຄອງເມືອງເຫລົ່ານີ້ໝົດອຳ ນາດໄປ ເພາະວ່າ ຕາມຣະບຽບການປົກຄອງແລ້ວ, ນັກປົກຄອງ ເມືອງບໍ່ມີອຳນາດເຕັມ ໃນການບໍຣິຫານປະເທດ ແລະອຳນາດໃນ ການປົກຄອງຂຶ້ນຢູ່ກັບສະພາ. ນັກປົກຄອງເມືອງເຫລົ່ານີ້, ບາງ ເທື່ອກໍໄດ້ຮັບຄຳສັ່ງຈາກທາງການຂັ້ນສູງໃຫ້ຮັບເອົາໜ້າທີ່ການທີ່ສຳ ຄັນ ແລະແບ່ງປັນດິນໃຫ້ຜູ້ທີ່ຈົງຮັກພັກດີຕໍ່ກະສັດແລະມີບາງກໍຣະນີ ຜູ້ ທີ່ໄດ້ຮັບໜ້າທີ່ສຳຄັນ ແລະມີເງິນເດືອນສູງ ໄດ້ໃຫ້ການສນັບສນຸນ ທາງການອັງກິດຢ່າງອອກໜ້າອອກຕາ.

ການຜິດຖຽງກັນຣະຫວ່າງຜູ້ປົກຄອງເມືອງ ເປັນສັນຍາລັກ

ຂອງຫລັກການປົກຄອງແບບຣາຊາທິປະໄຕ ແລະການຄວບຄຸມພາຍນອກ, ແລະສະພາເປັນສັນຍາລັກຂອງການເປັນອິສຣະພາບໃນທ້ອງຖິ່ນ ແລະຫລັກການຂອງຣະບອບປະຊາທິປະໄຕ, ທັງຫມົດນີ້ໄດ້ທະວີຄວາມຕຶ້ນຕົວ ໃຫ້ແກ່ພວກອາມາມິຄົມເປັນຢ່າງຍິ່ງ ແລະໂດຍສະເພາະແມ່ນການແຍກຜົນປະໂຍດຣະຫວ່າງຊາວອະເມຣິກັນ ແລະອັງກິດ. ກາລະເວລາໄດ້ຜ່ານພົ້ນໄປ, ທາງສະພາໄດ້ກຳຫນ້າທີ່ທັງຫມົດຂອງນັກປົກຄອງເມືອງ ແລະຄນະອົງຄະມົນຕຣີ ຊຶ່ງປະກອບດ້ວຍພວກອາມາມິຄົມ ຫົວອ່ອນບາງຄົນ ທີ່ຍັງຈົງຮັກພັກດີຕໍ່ກະສັດ, ແລະຈາກນັ້ນຕໍ່ມາ ອຳນາດການປົກຄອງທັງຫມົດຂອງພວກອາມາມິຄົມກໍໄດ້ປ່ຽນຈາກທາງການ ທີ່ລອນດອນ ມາຍັງຫົວເມືອງຂຶ້ນຂອງເມືອງຕ່າງໆໃນອະເມຣິກາ. ໃນຕົ້ນປີ ໑໗໗໐, ພວກອາມາມິຄົມໄດ້ພຍາຍາມປ່ຽນແປງສຳພັນທະໄມຕຣີຣະຫວ່າງອາມາມິຄົມ ແລະປະເທດອັງກິດ (ເມືອງແມ່) ສາເຫດອັນຍິ່ງໃຫຍ່ນີ້ເກີດຂຶ້ນ ແມ່ນເນື່ອງມາຈາກການເມຣະເທດຊາວຝຣັ່ງເສດຄົນນຶ່ງອອກຈາກທະວີບອະເມຣິກາເຫນືອ.

## ການປະທະກັນຣະຫວ່າງຊາວອັງກິດແລະຊາວຝຣັ່ງເສດ

ໃນຂນະທີ່ຊາວອັງກິດ ກຳລັງຂົນກັນມາຢູ່ຕາມແຖບແຄມຝັ່ງຕອດແລນຕິກ ເພື່ອເຣັດໄຮ່ເຣັດສວນ ແລະຂຍາຍກັນອອກໄປຢູ່ຕາມເມືອງຕ່າງໆນັ້ນ, ຊາວຝຣັ່ງເສດ ກໍໄດ້ທຳການຍຶດຄອງແຖບຕ່າງໆ

ຕາມຮ່ອມພູ ເຊນລໍເຣນສ່ ທາງພາກຕະວັນອອກຂອງປະເທດການາດາ. ເຂົາເຈົ້າໄດ້ສົ່ງຄົນໄປຕັ້ງຖິ່ນຖານຢູ່ຫັ້ນ ເປັນຈຳນວນນ້ອຍ, ແຕ່ສ່ວນຫລາຍແລ້ວ ເຂົາເຈົ້າ ສົ່ງນັກຄົ້ນຄວ່າ ອົງການແຜ່ຜາຍສນາ, ແລະພໍ້ຄ້າຂົນສັດໄປອາໄສຢູ່ຫັ້ນ. ນອກຈາກນັ້ນ, ຊາວຝຣັ່ງເສດຍັງໄດ້ຄອບຄອງແມ່ນ້ຳມີຊີຊີບປີ ແລະຕໍ່ໆລົງໄປຮອດບ່ອນທີ່ມີການຄ້າຂາຍຫລາຍ. ຊາວຝຣັ່ງເສດ ໄດ້ຫມາຍກາ ຂອງຈັກພັດອັນສູງສົ່ງ ຕັ້ງແຕ່ເມືອງ ເກເບກ ທາງພາກຕະວັນອອກສຽງເຫນືອໄປຫາເມືອງ ນິວອອກລິນສ່ ລົງມາທາງໃຕ້. ເຂົາເຈົ້າພຍາຍາມຈະມັດ ຊາວອັງກິດໂດຍທາງອ້ອມ ເພື່ອບໍ່ໃຫ້ມີການຂຍາຍອອກໄປທາງເບື້ອງຕະວັນອອກຂອງພູອາປາລາຈຽນ.

ຊາວອັງກິດໄດຕໍຕານການລຸກລານຂອງຝຣັ່ງເສດເປັນເວລາດົນນານຕັ້ງແຕ່ປີ ຈຝຈມ ພູ້ນ ເປັນຕົ້ນມາ ແລະການປະທະກັນໃນທ້ອງຖິ່ນໄດ້ມີຂຶ້ນຣະຫວ່າງພວກອານານິຄົມອັງກິດ ແລະຝຣັ່ງເສດ. ນອກຈາກນີ້ຍັງມີຜູ້ຄິດຣິເລີ່ມຢາກຈັດຕັ້ງອົງການໃດອົງການນຶ່ງ ຊຶ່ງສົມຮູ້ຮ່ວມຄິດສ່ວນຫລາຍແມ່ນພວກອະເມຣິກັນ ເພື່ອແກ້ໄຂບັນຫາຂັດແຍ່ງກັນຣະຫວ່າງປະເທດອັງກິດ ແລະປະເທດຝຣັ່ງເສດ. ດັ່ງນັ້ນ ໃນຣະຫວ່າງປີ ຈຝຊຈ ຫາປີ ຈຝຈກ, ສົງຄາມຂອງພຣະເຈົ້າວິລລຽມໄດ້ທຳການຕໍ້ສູ້ ໃນນາມຂອງພວກອະເມຣິກັນ ທີ່ຢຸໂຣບ ແລະສົງຄາມນີ້ເອີ້ນວ່າ "ສົງຄາມຂອງກະສັດ". ຕັ້ງແຕ່ປີ ຈກ໐ຈ

ຫາປີ ໑໗໐໓ ແມ່ນ "ສົງຄາມຂອງພຣະຣາຊິນີແອນ" ຊຶ່ງກົງກັນກັບ ສົງຄາມການສືບຕໍ່ອຳນາດຂອງຊາວສະເປັນ, ແລະຕໍ່ຈາກປີ ໑໗໔໔ ຫາປີ ໑໗໔໘, ກໍແມ່ນ "ສົງຄາມຂອງພຣະເຈົ້າຈອກຊ໌" ຊຶ່ງກົງກັນ ກັບ "ສົງຄາມການສືບຕໍ່ອຳນາດຂອງຊາວໂອຕຣິສ"

ແມ່ນວ່າ ປະເທດອັງກິດ ຍັງຮັກສາຜົນປະໂຍດບາງປະການ ຈາກສົງຄາມເຫລົ່ານີ້ກໍຕາມ, ໂດຍທົ່ວໆໄປແລ້ວ, ການຕໍ້ຕ້ານນັ້ນບໍ່ ເດັດຂາດ ແລະປະເທດຝຣັ່ງເສດ ຍັງດຳເນີນກິຈການຂອງຕົນຕໍ່ໄປ ໃນທະວີບອະເມຣິກັນ.

ໃນປີ ໑໗໔໐, ການຂັດແຍ້ງຕ່າງໆ ໄດ້ສິ້ນສຸດລົງ ຫລັງ ຈາກການສົ່ງບເສີກຂອງ ແອລາຊາແປລ ໃນປີ ໑໗໔໘ ແລະຊາວ ຝຣັ່ງເສດໄດ້ກຳໜ້ວຍຮ່ອມ ມິຊິຊິບປີ ຢ່າງແໜ້ນໜາ. ໃນຂນະ ດຽວກັນນີ້, ຊາວອານານິຄົມອັງກິດ ກໍໄດ້ເລື່ອນໄຫວໄປທາງແຖບພູ ອາເລເກນີ ແລະຈາກນັ້ນມາ ກໍມີການຟ້າວຟັ່ງ ໃນການຍາດແຍ່ງທີ່ ດິນບ່ອນດຽວກັນ. ໃນປີ ໑໗໔໔, ໄດ້ມີການປະທະກັນຂຶ້ນ ຣະ ຫວ່າງທະຫານຂອງເວີຊິເນັຍ ໂດຍການບັງຄັບ ບັນຊາ ຂອງທ່ານ ຈອດ໌ ວໍຊິງຕັນ ຊຶ່ງມີອາຍຸພຽງຊາວສອງປີ, ແລະທະຫານປະຈຳ ການຂອງຊາວຝຣັ່ງເສດ.

ພົນຕາມມາກໍຄື "ສົງຄາມຝຣັ່ງແລະອິນເດັຍແດງ" ຊຶ່ງໃນ ການທຳສົງຄາມຄັ້ງນີ້ ຊາວອັງກິດ ແລະພວກອິນເດັຍແດງໄດ້ຮ່ວມ

ກັນຕໍ່ສູ້ຂັບໄລ່ຊາວຝຣັ່ງເສດ, ແລະສ່ຳລັບພັນທະມິດອິນເດັຍແດງນັ້ນ ເຂົາເຈົ້າຖ້າເບິ່ງວ່າ ລະຫວ່າງຊາວຝຣັ່ງເສດແລະຊາວອັງກິດ ໃຜ ຈະໄດ້ເປັນນາຍໃຫຍ່ ໃນອະເມຣິກາເໜືອ.

ເຫື່ອນີ້ ເປັນເຫື່ອທຳອິດ ທີ່ພວກອານານິຄົມ ຊາວອັງກິດມີ ຄວາມຕ້ອງການຢ່າງໃຫຍ່ຫລວງ ໃນການທ້ອນໂຮມກັນເປັນອັນນຶ່ງ ອັນດຽວກັນ. ຖານະຂອງປະເທດ ຝຣັ່ງເສດຄາວນັ້ນ ບໍ່ແມ່ນພຽງ ແຕ່ເປັນການຂົ່ມຂູ່ຈັກພັດຂອງອັງກິດເທົ່ານັ້ນ ແຕ່ຍັງໄດ້ຂົ່ມຂູ່ພວກອາ ນານິຄົມຊາວອະເມຣິກັນທັງໝົດດ້ວຍ. ດ້ວຍເຫດວ່າ, ຊາວຝຣັ່ງ ເສດໄດ້ຍຶດຄອງເຂດແດນແຖບແມ່ນ້ຳ ມິຊິຊິບປີ, ເຂົາເຈົ້າ ຈຶ່ງສາ ມາດຕຣວດ ແລະເບິ່ງການແຜ່ຂະຍາຍຂອງຊາວອະເມຣິກັນ ອອກມາ ທາງເບື້ອງຕະວັນຕົກຢ່າງໃກ້ຊິດ. ການກີດກັນການແຜ່ຜາຍ ຂອງ ອານານິຄົມນີ້ ແມ່ນການຕັດກຳລັງ ແລະກີດກັນຄວາມກ້າວໜ້າຂອງ ພວກອານານິຄົມ. ຣັຖບານຝຣັ່ງເສດ ທີ່ປະຈຳຢູ່ປະເທດການາດາ ແລະເມືອງ ລູຍຊິອານນາ ບໍ່ພຽງແຕ່ເພີ່ມຕື່ມກຳລັງເທົ່ານັ້ນ ແຕ່ຍັງ ເພີ່ມສ້າງຊຸ້ສຽງນຳພວກອິນເດັຍແດງອີກ. ແມ່ນແຕ່ພວກ ອິໂຣກົວ ຊຶ່ງຕາມປະເພນີ ແຕ່ເກົ່າກ່ອນແລ້ວ ເຄີຍເປັນພັນທະມິດກັບປະເທດ ອັງກິດ ໄດ້ຖືກຍົວະໃຫ້ຕີຕົວອອກຫ່າງຈາກອັງກິດ ໃນສົງຄາມຄັ້ງ ໃໝ່.

## ການກໍ່ໃຫ້ເກີດຄວາມຕຶ້ນເຕັ້ນໃນການທ້ອນໂຮມ

ໃນຂນະນີ້, ທາງສະພາການຄ້າຂອງອັງກິດ ຊຶ່ງໄດ້ຮັບຣາຍ
ງານຕ່າງໆ ກ່ຽວກັບການເສື່ອມລົງ ຂອງສຳພັນທະພາບກັບພວກອິນ
ເດັຍແດງ, ທາງການຈຶ່ງໄດ້ມີຄຳສັ່ງ ໃຫ້ຜູ້ປົກຄອງເມືອງ ນິວຢອກ
ແລະຄນະກັມມະການຈາກອານານິຄົມອື່ນໆ ໃຫ້ມາໂຮມກັນເພື່ອຮຽກ
ຮ້ອງໃຫ້ຫົວໜ້າຊາວ ອິໂຣກົວ ມາປະຊຸມ ແລະເຮັດສັນຍາຮ່ວມກັນ.
ໃນຕອນທ້າຍນີ້, ໃນປີ ໑໗໔໕ ເດືອນມິຖຸນາ, ຜູ້ຕາງໜ້າຂອງອາ
ນານິຄົມນິວຢອກ, ເພັນຊິລເວເນັຍ, ແມຣິແລນ, ແລະນິວອິງ
ແລນດ໌ ໄດ້ມາໂຮມກັນເພື່ອເຈຣະຈາກັບພວກອິນເດັຍແດງເຜົ່າ ອິ
ໂຣກົວ ທີ່ເມືອງ ອາລບານີ. ພວກອິນເດັຍແດງໄດ້ແຈ້ງຂໍ້ຂອງໃຈ
ຂອງເຂົາເຈົ້າ, ແລະພວກຜູ້ແທນກໍ່ໄດ້ອ່ານຣາຍງານສູ່ເຂົາເຈົ້າຟັງ
ໂດຍລະອຽດ ແລະແນະນຳໃຫ້ພວກນີ້ ປະຕິບັດແນວໃດ ແນວນຶ່ງໃຫ້
ເປັນທີ່ເໝາະສົມ.

ແຕ່ທາງສະພາກົງແກຣສ໌ ໄດ້ສະແດງຈຸດປະສົງເດີມໃນການ
ແກ້ໄຂບັນຫາກ່ຽວກັບພວກອິນເດັຍແດງ. ຈາກນັ້ນມາ, ທາງສະ
ພາກົງແກຣສ໌ ໄດ້ປະກາດການຫ້ອນໂຮມ ອານານິຄົມ ອະເມຣິກັນ
ຫລາຍບ່ອນ ໃຫ້ເປັນອັນນຶ່ງອັນດຽວກັນ ຊຶ່ງເປັນການຈຳເປັນທີ່ສຸດທີ
ຈະຕ້ອງຮັກສານະໂຍບາຍນີ້. ຜູ້ຕາງໜ້າ ຂອງແຕ່ລະອານານິຄົມ
ໄດ້ປະຕິບັດແຜນການອາລບານີ ໃນການຫ້ອນໂຮມ ຊຶ່ງແມ່ນທ່ານ
ເບນຈາເມນ ແຟຣງຄລິນ ເປັນຜູ້ຂຽນຮ່າງແຜນການນັ້ນ. ໃນນີ

ທ່ານໄດ້ຂຽນບົ່ງໄວ້ວ່າ ປະທານາທິບໍ່ດີຈະໄດ້ຮັບການແຕ່ງຕັ້ງໃຫ້ດຳ
ຣົງຕຳແໜ່ງໂດຍພຣະເຈົ້າມະຫາຊີວິດ ພ້ອມດ້ວຍສະພາຜູ້ແທນຣາຊ
ດອນ ຊຶ່ງແມ່ນພົລເມືອງຂອງແຕ່ລະອານານິຄົມເປັນຜູ້ເລືອກ. ຈຳ
ນວນຂອງຜູ້ແທນທີ່ຖືກຄັດເລືອກນັ້ນ ຂຶ້ນຢູ່ກັບຂນາດຂອງອານານິຄົມ
ແລະຈຳນວນເງິນ ທີ່ທາງອານານິຄົມສົ່ງເຂົ້າຄັງຫລວງ. ຣັຖບານ
ໄດ້ແບ່ງພົລປະໂຍດຕ່າງໆ ຈາກປະຊາຊົນທາງພາກຕະວັນຕົກ ຊຶ່ງ
ກ່ຽວພັນກັບສັນຍາທີ່ທຳຂຶ້ນກັບພວກອິນເດັຍແດງ, ການຄ້າ, ການ
ປ້ອງກັນ, ແລະການຕັ້ງຖິ່ນຖານ. ແຕ່ວ່າ ພວກອານານິຄົມທັງ
ຫມົດບໍ່ເຫັນດນາ ແລະບໍ່ຍອມຮັບແຜນການ ທີ່ໄດ້ຈັດສເນີໂດຍທ່ານ
ແຟຣງຄລິນ, ເພາະວ່າເຂົາເຈົ້າບໍ່ປາຖນາ ຈະຍອມມອບຕົວໃຫ້ແກ່
ໃຜ ໂດຍສະເພາະຢ່າງຍິ່ງແມ່ນ ອຳນາດການເກັບພາສີ ຫລືການ
ຄວບຄຸມການພັທນາທາງດ້ານຕະວັນຕົກ.

ເວົ້າເຖິງພວກອານານິຄົມໂດຍສວນຮວມແລ້ວ, ເຂົາເຈົ້າບໍ່
ສນັບສນຸນການທຳສົງຄາມປານໃດ, ທຸກສິ່ງທຸກຢ່າງທີ່ໄດ້ປະຕິບັດໄປ
ນັ້ນແມ່ນເຮັດຕາມໜ້າທີ່ ຂອງເຂົາເຈົ້າ ທີ່ມີຕໍ່ເຈົ້າຊີວິດເທົ່ານັ້ນ.
ແລະການຊ່ວຍເຫລືອແບບນີ້ ຊຶ່ງອານານິຄົມທຸກໆບ່ອນໄດ້ຍື່ນໃຫ້ນັ້ນກໍ
ເສັຍຫມົດເພາະວ່າຂາດສາເຫດອັນໃຫຍ່ຫລວງ. ພວກອານານິຄົມ
ຫລີງເຫັນສົງຄາມນີ້ເປັນແຕ່ພຽງການຍາດແຍ່ງອຳນາດຣະຫວ່າງປະ
ເທດອັງກິດ ແລະປະເທດຝຣັ່ງເສດ. ເຂົາເຈົ້າບໍ່ຮູ້ສຶກລະອາຍໃຈ

ເລີຍເມື່ອໄດ້ເຫັນຣັຖບານອັງກິດ ຈຳຕ້ອງສົ່ງທະຫານປະຈຳການຈຳ
ນວນຫລວງຫລາຍ ໄປສູ້ຣົບສົງຄາມຂອງອານານິຄົມ. ເຂົາເຈົ້າບໍ່
ກົນແຫນງເລີຍ ທີ່ພວກທະຫານເສື້ອແດງໄດ້ຣັບໄຊຊນະ ໃນສົງຄາມ
ຄັ້ງນີ້ ແລະເຂົາເຈົ້າເຫັນວ່າ ບໍ່ມີເຫດຜົນອັນໃດຫມົດ ທີ່ຈະ ຕ້ອງ
ເຊົາຕິດຕໍ້ຄາຂາຍ ກັບພວກສັດຕຣູ. ເຖິງແມ່ນວ່າ ຈະຂາດການ
ສນັບສນູນຈາກໃຈຈິງຂອງຊາວອານານິຄົມ ຫລືພົບການຜ່າຍແພ້ມາ
ຫລາຍຄັ້ງກໍຕາມ, ປະເທດອັງກິດ ຊຶ່ງມີທີ່ຫມັ້ນຢູ່ຕາມແຜນຍຸທສາດ
ແລະການເປັນຜູ້ນຳທີ່ບໍ່ມີໃຜແຂ່ງໄດ້, ປະເທດອັງກິດຈຶ່ງໄດ້ຣັບໄຊ
ຊນະໂດຍຊົ້ນເຊີງ. ຫລັງຈາກໄດ້ເປັນສັດຕຣູກັນມາໄດ້ແປດປີເຕັມ
ປະເທດການາດາ ແລະຮ່ອມຫ້ວຍ ມີຊີຊີບປີ ແຕ່ທາງເຫນືອມາກໍຖືກ
ປະເທດອັງກິດຍຶດໄດ້ຄືນ ແລະຈາກນັ້ນມາ ຄວາມຝັນຂອງຊາວຝຣັ່ງ
ເສດທີ່ຈະຍຶດຄອງແຜ່ນດິນແຫ່ງນີ້ກໍສາບສູນໄປ.

ຫລັງຈາກປະເທດອັງກິດ ໄດ້ຣັບໄຊຊນະ ຈາກປະເທດຝຣັ່ງ
ເສດແລ້ວ, ບໍ່ແມ່ນແຕ່ທາງເຂດອະເມຣິກາເຫນືອເທົ່ານັ້ນ ແຕ່ຮວມ
ທັງເຂດອິນເດັຍແດງ ແລະເຂດອານານິຄົມ ທົ່ວທຸກໆບ່ອນ. ປະ
ເທດອັງກິດຕ້ອງພົບກັບບັນຫາຊຶ່ງບໍ່ໄດ້ຄິດໄວ້ລ່ວງຫນ້ານັ້ນກໍຄື ບັນຫາ
ຂອງຈັກພັດ, ດັ່ງນັ້ນ ປະເທດອັງກິດ ມີຄວາມຈຳເປັນທີ່ຈະຕ້ອງ
ຈັດການຢ່າງໃດຢ່າງນຶ່ງກ່ຽວກັບການປົກຄອງແຜ່ນດິນອັນກວ້າງໃຫຍ່
ນີ້ ເພື່ອຄວາມສດວກສບາຍ ໃນການຕຽມການປ້ອງກັນ, ການໄກ່

ເກັ່ຍແຍກຜົນປະໂຍດ ຂອງແຕ່ລະບ່ອນ ແລະຄົນຊຶ່ງແຕກຕ່າງກັນ, ແລະການແຈກຢາຍຄຸນຄ່າຂອງການປົກຄອງແບບຈັກພັດ ໃຫ້ທົ່ວເຖິງກັນ. ດິນແດນທີ່ປະເທດອັງກິດໄດ້ປົກຄອງ ໃນປະເທດພົ້ນທະເລມີຫລາຍກວ່າດິນແດນ ທີ່ຍຶດຄອງໄດ້ ໃນອະເມຣິກາຕັ້ງສອງເທົ່າ. ຈາກຜົນແຜ່ນດິນຕາມແຄມຝັ່ງແອດແລນຕິກ ຕໍ່ໃສ່ແຜ່ນດິນອັນກວ້າງໃຫຍ່ຂອງປະເທດການາດາ ແລະດິນແດນຣະຫວ່າງແມ່ນຳ້ຫ້ວຍມີຊຸີ ຊຸີບປີ ແລະແຖບພູ ເອເລເກນິສ ກໍກາຍເປັນຈັກພັດໃນຕົວ. ກ່ອນທີ່ພົລເມືອງທັງຫມົດຈະຫັນມານັບຖືສາສນາ ໂປຣແຕສຕັງຂອງຊາວອັງກິດ ຫລືເຮັດໃຫ້ທະວີບນີ້ເຫມືອນກັບຊາວອັງກິດ, ສາສນາຄາໂຕລິກຝຣັ່ງ ກໍໄດ້ແຊກເຂົ້າມາ ແລະມີຈຳນວນພວກອິນເດັຍແດງຫລາຍຄົນທີ່ພາກັນນັບຖືສາສນາ ຄຣິສຕຽນ. ສ່ວນການປ້ອງກັນແລະການປົກຄອງແຜ່ນດິນໃຫມ່ ຈຳເປັນຕ້ອງໃຊ້ເງິນ ຈຳນວນຫລວງຫລາຍ ແລະຕ້ອງເພີ່ມພນັກງານຂຶ້ນຕື່ມອີກ, ແລະຣະບຽບການປົກຄອງອານານິຄົມແບບເກົ່ານັ້ນກໍຂາດແບບແຜນໃນການປົກຄອງ ແລະເປັນທີ່ເຫັນແຈ້ງແລ້ວວ່າ ບໍ່ເຫມາະສົມກັບຄວາມຈຳເປັນ ຂອງສະຖານະການໃຫມ່ນີ້. ແມ່ນແຕ່ຈະເຖິງຄາວຈຳເປັນ ໃນຍາມສົງຄາມທີ່ກັນດານຕໍ່ຊີວິດການເປັນຢູ່ຂອງພວກອານານິຄົມ, ຣະບຽບການປົກຄອງແບບເກົ່າຍັງໄດ້ສະແດງໃຫ້ເຫັນແລ້ວວ່າ ຣັຖບານບໍ່ສາມາດຂໍຄວາມຮ່ວມມືແລະການສນັບສນູນຈາກພວກອານານິຄົມໄດ້ເລີຍ. ແຕ່ເມື່ອ

ເຖິງຄາວສົ່ງບແລ້ວ ຣັຖບານຈະຫວັງຫຍັງຈາກປະຊາຊົນໄດ້ອີກແດ່?

## ການຄວບຄຸມອັນຄັ່ງຄັດຖືກປະຕິເສດ

ສິ່ງທີ່ປາກົດເຫັນໂດຍແຈ່ມແຈ້ງ ຕໍ່ສາຍຕາຣັຖບານອັງກິດໃນ ເວລານີ້ແມ່ນຄວາມຕ້ອງການ ຢາກໃຫ້ມີການດັດແປງແລະແກ້ໄຂຣະ ບົບການປົກຄອງໃຫມ່. ດ້ວຍການເຄີຍເປັນອິສຣະ ມາເປັນເວລາ ນານແລ້ວ, ຊາວອານານິຄົມຍົ່ງຮຽກຮ້ອງຢາກມີສິດເສຣີພາບຫລາຍ ຂຶ້ນ, ຫລັງຈາກການຂົ່ມຂູ່ຂອງຊາວຝຣັ່ງເສດໄດ້ສາບສູນໄປ. ເພື່ອ ຈະນຳເອົາຣະບຽບການນີ້ມາໃຊ້ໃຫ້ໄດ້ຜົນ ແລະເພື່ອຄວບຄຸມການ ປົກຄອງໃຫ້ຢູ່ໃນຂອບເຂດ, ຣັຖບຸຣຸດຂອງປະເທດອັງກິດຈຳຕ້ອງສົມ ຍອມຝຶກແອບຣະບົບການປົກຄອງ ໂດຍຕົນເອງ ໃຫ້ຊາວອານານິຄົມ ເພາະວ່າຣັຖບານອັງກິດຫົມຕໍ່ການແຊກແຊງຫລາຍທາງບໍ່ໄດ້ ເຊັ່ນ ວ່າພວກພໍ້ຄ້າ ແລະພວກຣັບເຫມົາ ທີ່ມີຄວາມເຊື່ອຫມັ້ນໃນຕົວເຂົ້າ ເຈົ້າເອງ ແລະເຂົ້າເຈົ້າບໍ່ຍອມອ່ອນນ້ອມຕໍ່ກົດຣະບຽບຂອງຈັກພັດ, ພວກທີ່ຢູ່ຕາມເຂດເຫມືອງຊຶ່ງບໍ່ສົນໃຈນຳກົດຫມາຍ ແລະຣະບຽບຂໍ້ບັງ ຄັບຂອງຈັກພັດ ແຕ່ຢ່າງໃດ, ແລະສະພາຜູ້ແທນຣາສດອນ ຊຶ່ງພ້ອມ ແລ້ວທີ່ຈະລະເມີດສັນຍາ ຊຶ່ງເຂົ້າເຈົ້າຖືວ່າ ເປັນສິດທິອັນຊອບທັມ ຂອງເຂົ້າເຈົ້າ. ໂດຍແທ້ຈິງແລ້ວ, ຊາວອະເມຣິກັນ ຫລາຍຄົນບໍ່ ສົນໃຈໃນການປົກຄອງຂອງຈັກພັດອັງກິດແມ່ນແຕ່ນ້ອຍດຽວ ແລະມີ

ບຸກຄົນສ່ວນນ້ອຍທີ່ຢາກມີຊີວິດການເປັນຢູ່ ໃນເມືອງອະເມຣິກາຕາມ ແບບແຜນຂອງເຂົາເຈົ້າເອງ ຊຶ່ງເຂົາເຈົ້າໄດ້ດັດແປງ ປ່າດົງມາ ເປັນບ້ານເຮືອນຫມົດແລ້ວ.

ປັນຫາຫາໍອິດ ທີ່ຫາງການອັງກິດຕ້ອງຈັດການກ່ອນ, ແມ່ນ ຈັດຣະບຽບພາຍໃນ. ໄຊຊນະຂອງປະເທດການາດາ ແລະຮ່ອມພູ ເມືອງ ໂອໄຮໂອ ພາໃຫ້ຫາງການອັງກິດຕ້ອງມີພາລະໃນການແບ່ງ ແຍກໂຄງການປົກຄອງຂອງຣັຖບານ ແລະທີ່ດິນ ແລະນະໂຍບາຍ ຫາງສາສນາຊຶ່ງບໍ່ຮວມທັງຊາວຝຣັ່ງເສດແລະຊາວອິນເດັຍແດງທີ່ຍັງ ອາໄສຢູ່ດິນແດນນີ້. ນອກຈາກນີ້ ຫາງການອັງກິດຍັງໄດ້ພົບບັນຫາ ຂັດແຍ້ງກັນ ຊຶ່ງເປັນຜົນປະໂຍດຂັດກັນ ກັບພວກທີ່ຢູ່ຕາມອານານິຄົມ ແຄມທະເລ ທີ່ມີພົລເມືອງຂຍາຍຂຶ້ນໄວແລະປາຊາຊົນທີ່ຢູ່ຕາມແຖບນີ້ ຫນັກໄປໃນຫາງຄົ້ນຄວ່າແຜ່ນດິນໃຫມ່ທີ່ເຂົາເຈົ້າໄດ້ຮັບໄຊຊນະ ມາ ດ້ວຍຕົນເອງ. ດ້ວຍຄວາມຕ້ອງການຢາກໄດ້ທີ່ດິນໃຫມ່, ຊາວອາ ນານິຄົມ ທີ່ຢູ່ຕາມບ່ອນຕ່າງໆ ໄດ້ສແດງສິດທິຢາກຂຍາຍການເປັນຢູ່ ອອກມາຫາງທິດຕະວັນຕົກ ຫາງແຖບແມ່ນ້ຳມີຊີຊິບປີ. ໃນຄວາມຮູ້ ສຶກຂອງເຂົາເຈົ້າ, ເຂົາເຈົ້າຄິດວ່າ ເຂົາເຈົ້າເປັນຜູ້ກາໍໄຊຊນະ ໃນເຂດນີ້, ດັ່ງນັ້ນຈຶ່ງມີປະຊາຊົນຈາໍນວນຫລວງຫລາຍ ພາກັນຫລັ່ງ ໄຫລຂ້າມພູມາຍັງຝາກນີ້. ແຕ່ຫາງຣັຖບານອັງກິດຢ້ານວ່າ ຊາວ ນາທີ່ເປັນນັກຄົ້ນຄວ່າເຫລົ່ານີ້ຈະໂຮມກັນຢູ່ແຜ່ນດິນບ່ອນໃຫມ່ແລ້ວ ຍຸ

ຍິ່ງສິ່ງເສີມກັນ ທຳສົງຄາມ ແບບເສີກອິນເດັຍແດງອີກ. ດັ່ງນັ້ນ, ທາງການອັງກິດຈຶ່ງໄດ້ລົງຄວາມເຫັນວ່າ ພວກອິນເດັຍແດງທີ່ໄດ້ມາຢູ່ທີ່ນີ້ກ່ອນ ກໍຄວນໄດ້ມີໂອກາດຕັ້ງຖິ່ນຖານຢູ່ເປັນບ່ອນເປັນທີ່ ແລະ ດ້ວຍການປະຕິບັດດັ່ງກ່າວນີ້ ຊາວອາມາມິຄົມຈະໄດ້ມີໂອກາດຂຍາຍ ອອກໄປຢູ່ຕາມເຂດຕ່າງໆຫລາຍຂຶ້ນ. ຕໍ່ມາໃນປີ ໑໗໙໓, ໄດ້ມີ ພຣະຣາຊອົງການປ່າວປະກາດການສ້ວມສິດທາງເຂດແດນດ້ານຕະ ວັນຕົກ ຕັ້ງແຕ່ແຖບເຂົາ ອາເລເກນີ ໄປເຖິງເມືອງຟລໍຣິດາ, ທາງເຂດແມ່ນ້ຳ ມິຊິຊິບປີ, ແລະເມືອງເກເບັກ ໃຫ້ເປັນທີ່ຢູ່ອາໄສ ຂອງພວກອິນເດັຍແດງ. ຄຳປ່າວປະກາດສບັບນີ້ມີຈຸດປະສົງຈະຂັບ ໄລ່ຊາວອາມາມິຄົມ ຈຳນວນສິບສາມບ່ອນ ອອກຈາກແຜ່ນດິນທາງ ເບື້ອງຕະວັນຕົກຂອງອະເມຣິກາ ພ້ອມທັງຈະຢຸດຢັ້ງ ການແຜ່ຂຍາຍ ຂອງພວກອາມາມິຄົມ ບໍ່ໃຫ້ຫລັ່ງໄຫລອອກໄປທາງດ້ານຕະວັນຕົກ. ການປະກາດຫ້າມນີ້ ຄ້າຍຄືກັນກັບສໄມທີ່ຝຣັ່ງເສດ ໄດ້ປົກຄອງຢູ່. ການປະກາດຫ້າມນີ້ບໍ່ໄດ້ພົ້ນແມ່ນແຕ່ນ້ອຍດຽວ ດ້ວຍເຫດວ່າ ພວກ ອາມາມິຄົມເກີດມີຄວາມຄຽດແຄ້ນທີ່ສຸດ ແລະຈະຕໍ່ສູ້ທຸກວິທີທາງເພື່ອ ຮັກສາສິດທິຂອງຕົນ ໃນການໃຊ້ທີ່ດິນທາງດ້ານຕະວັນຕົກ.

ພົ້ນສະໄໝນີ້ເປັນການກະທົບກະເທືອນທີ່ສຸດນັ້ນແມ່ນ ນະ ໂຍບາຍການເງິນຂອງຣັຖບານອັງກິດ ເພື່ອສົ່ງເສີມນະໂຍບາຍການ ເງິນຂອງຈັກພັດ ຊຶ່ງກຳລັງມີຄວາມຕ້ອງການເງິນເພີ່ມຂຶ້ນ ອັນນີ້



ທີ່ພລີມັທ ເມື່ອປີ ຈພ້ຄຈ ພວກອົນດຽນຮ່ວມກັບຊາວອົພຍົບທີ່ມາໃຫມ່ ສລອງການຂອບຄຸນພຣະເຈົ້າເປັນເວລາ ມ້ ວັນ ໃນໂອ ກາດຂອງການເກັບກ່ຽວເທື່ອທຳອິດ. ພາບນີ້ສິລປິນໃນຍຸກນັ້ນ ໄດສະແດງໃຫ້ເຫັນເຖິງຊີວິດໃນສມັຍປວັດສາດ ເຖິງແມ່ນວ່າ ຈະຢູ່ໃນງານຣື່ນເຣີງແຕ່ສີຫນ້າບໍ່ສູ້ສະບາຍໃຈ ເຕັມໄປດ້ວຍຄວາມອິດເມື່ອຍ ໃນຍຸກທີ່ຕ້ງປະເຫດຂຶ້ນໃຫມ່.

ທົງ: ບຸນຈາມິນ ເວຸສຕ້ ແຕ້ມຮູບໃຫ້ເຫັນວິລລຮມ ເພັນນ້ ກຳລັງປະທັບກາໃນສັນຍາປີ ຈພຸຈມ ຊຶ່ງພາໃຫ້ພວກອິນດຮນ ແລະຜູ້ມາຕັ້ງພູມິລຳເນົາຢູ່ໃຫມ ຢູ່ຮວມກັນດ້ວຍຄວາມສງົບສຸກ ແລະມີຄວາມໂຄຮົບນັບຖືຕໍ່ກັນ ລຸມ: ຮູບມະຫາວິທຍາລັຍຮາ ເວີດ ເມື່ອ້ປີ ຈກ/ຜ ຊຶ່ງເປັນມະຫາວິທຍາລັຍທຳອິດທີ່ຊາວອົພຍົບສ້າງຂຶ້ນ.



จากธูบแต้มของเวสต์ ยบจามิบแฟธวดลิบ กำลังทิดลองภับกะแสไฟฟ้า ย่างหบ้าอัสจับ.



ພາບໃນວັນລົງນາມປະກາດເອກຄາຊຂອງສະຫະຣັຖອະເມຣິກາ ທີ່ຈອນ ທຣັມບູລແຕ້ມຂຶ້ນ. ລຸ່ມ: ຊາວນິວປອກສລອງອິສຣະ
ພາບດ້ວຍການກໍ່ຄວາມວຸ້ນວາຍ ດຶງກະຊາກອະນຸສາວະຣີຂອງພຣະເຈົ້າປອຊລົງມາ ເພື່ອນຳໂລຫະໄປຫລອມເຣັດລູກປືນ.



ปอล ธิเวัฮธ์ สะแดงใต้ตัมพุาบของภามต่ำสุ้ละตว่างฝูงจุ๊ม จึ่งมีหิมะภ้อมเป็นลูกบาม ภับภองทะตามที่มีอาวุดปืนที่บอสตัม ปาภิดว่าปะจุาจุ๊มที่ต่ำสุ้ถึกสังตามจุ๊วิดตมิดสั้ม ลุ่ม: เป็นสีมีของทธัมบูล สะแดงใต้ตัมเถิงภามยอมจำนิ้มของนายพิมคอมวาลิส จึ่งเป็นฝ่ายภิงภับข้าม และได้รับความอับอายขายตนาที่สุด.

ເມື່ອການປະຕິວັດຜ່ານພົ້ນໄປແລ້ວ ນິວຢອກກໍກາຍເປັນສູນກາງຄ້າ ມີເຮືອຄ້າຂາຍກັບຕ່າງປະເທດຈອດຢູ່ຫລວງຫລາຍ ນິວ
ຢອກເຄີຍເປັນເມືອງຫລວງທີ່ທຳການຣັຖສະພາຢູ່ ໑໐ ປີ ລຸນ: ເມືອງຟິລາເດັລເຟັຍ ເປັນເມືອງທຳອິດທີ່ຕັ້ງໂຮງຮຽນການ
ແພດ ແລະອອກໜັງສືພິມຣາຍວັນ.



ເຄື່ອງຈັກສຳລັບປັ່ນດ້າຍມີຂົ້ນທີ່ແບລຄສະໂຕນ ເທິງເກາະໂຮດໄອແລນດ່ ເປັນເຫື່ອທຳອິດໃນສະຫະຣັຖ



ເພື່ອນບ້ານຮ່ວມແຮງກັນໃນຣະດູເກັບກ່ຽວຢ່າງຣີບດ່ວນເພື່ອໃຫ້ທັນເວລາ ກ່ອນທີ່ຣະດູຫນາວຈະມາເຖິງ. ນຶ່ງໃນຄວາມມ່ວນ
ຊື່ນພາຍຫລັງການເກັບກ່ຽວກໍຄືການຕັ້ນລຳພື້ນເມືອງ ຈຶ່ງພາຍຫລັງກໍໄດ້ຍັດຄວາມນິຍົມແພຫລາຍໄປຍັງຊຸມນຸມຈຶ່ນອື່ນໆ.



ຫມາຍຄວາມວ່າ ຊາວອັງກິດທີ່ຢູ່ໃນປະເທດອັງກິດ ຈະຕ້ອງເປັນຜູ້ ຈ່າຍໃຫ້ຫມົດ ບໍ່ດັ່ງນັ້ນ ຊາວອາມາມິຄົນຕ້ອງແບ່ງພາລະຊ່ວຍເຫລືອ ໃນການເສັຍຊ່ວຍອາກອນ. ລາຍໄດ້ ທີ່ເກັບຈາກພວກອາມາມິຄົນ ນັ້ນຕ້ອງຜ່ານສູນກາງການປົກຄອງມາເສັຍກ່ອນ ແລະລາຍໄດ້ສ່ວນນີ້ ກໍໄດ້ນໍາເອົາມາໃຊ້ຈ່າຍ ໃນການບໍຣິຫານຣັຖບານຂອງຊາວອາມາມິ ຄົນເອງ.

ຂັ້ນທໍາອິດໃນການເປີດຣະບົບການປົກຄອງໃຫມ່ນີ້ ແມ່ນການ ອອກກົດຫມາຍ ກ່ຽວກັບນໍ້າຕານ ໃນປີ ໑໗໙໔. ຕໍ່ມາອີກສອງປີ, ກົດຫມາຍນີ້ ກໍຖືກດັດແປງ ເພື່ອເພີ້ມລາຍໄດ້ພາສີຈາກການຂາຍນໍ້າ ຕານ. ອັນນີ້ບໍ່ໄດ້ມີສ່ວນກ່ຽວຂ້ອງຫຍັງກັບຣະບຽບການຄ້າ, ແຕ່ຕໍ່ ມາກໍເລີຍເອົາມາໃຊ້ແທນກົດຣະບຽບການຄ້າ. ກົດຫມາຍກ່ຽວກັບ ນໍ້າຕານຊຶ່ງໄດ້ແຕ່ງອອກໃນປີ ໑໗ໝ໙ ໄດ້ປະກາດຫ້ານບໍ່ໃຫ້ສົ່ງນໍ້າ ຕານໄປຂາຍບ່ອນອື່ນ ຊຶ່ງບໍ່ແມ່ນເຂດຂອງຊາວອັງກິດ. ການດັດ ແປງກົດຫມາຍກ່ຽວກັບນໍ້າຕານນີ້ ກໍເພື່ອເພີ້ມພາສີນໍ້າຕານຂຶ້ນ ໃນ ທຸກໆບ່ອນ ແລະກົດຫມາຍນີ້ຍັງໄດ້ເພີ້ມພາສີອາກອນເຫລົ້າອະງຸ່ນ, ໄຫມ, ກາເຟ, ແລະຈໍານວນສິນຄ້າ ທີ່ຟຸ່ມເຟືອຍຕ່າງໆ. ເພື່ອ ຣັດໃຫ້ກົດຫມາຍນີ້ໄດ້ຮັບການປະຕິບັດ ຢ່າງເຕັມເມັດເຕັມຫນ່ວຍ, ເຈົ້າຫນ້າທີ່ຝ່າຍພາສີອາກອນໄດ້ຮັບຄໍາສັ່ງໃຫ້ປະຕິບັດການຢ່າງເຄັ່ງ ຄັດ ແລະເຮືອຣົບອັງກິດ ໃນນ່ານນໍ້າອະເມຣິກັນ ໄດ້ຮັບຄໍາສັ່ງຈາກ

ທາງການໃຫ້ຈັບກຸມພວກພໍ້ຄ້າທີ່ນຳສິນຄ້າເຖື່ອນ ເຂົ້າມາໃນປະເທດ ແລະໃຫ້ສິດພິເສດໃນການກວດຄົ້ນ ບຸກຄົນໃດບຸກຄົນນຶ່ງ ທີ່ມີການສົງ ໄສ.

## ການເກັບພາສີທີ່ບໍ່ໄດ້ຮັບການຕອບສນອງ

ບໍ່ແມ່ນການຂຶ້ນພາສີໃຫມ່ ທີ່ເຮັດໃຫ້ພໍ້ຄ້າຊາວນິວອິງແລນດ້ ອົກສັ່ນຂວັນເສັຍ, ແຕ່ຄວາມຈິງແລ້ວ ມັນແມ່ນບາດກ້າວໃຫມ່ທີ່ທາງ ການອັງກິດໄດ້ດຳເນີນການພັທນາແຜນໃຫມ່. ຫລາຍກວ່ານຶ່ງຊົ່ວຊີ ວິດຄົນມາແລ້ວ, ຊາວນິວອິງແລນດ້ ເຄີຍໄດ້ສັ່ງຊື້ສິນຄ້າປະເພດນຳ້ ຕາມຈຳນວນຫລາຍຫລາຍ ຈາກຊາວຝຣັ່ງເສດ ແລະຊາວດັສ ທີ່ປະ ເທດແວສ້ ອິນດິສ້ ໂດຍບໍ່ໄດ້ເສັຍພາສີແຕ່ຢ່າງໃດຫມົດ ແລະເຂົາ ເຈົ້າຖືວ່າແມ່ນແຕ່ການຕ້ອງເສັຍຄ່າພາສີລົດນ້ອຍລົງກໍເປັນສິ່ງຫາຍະ ນະຢູ່ແລ້ວ. ການສເນີກົດຫມາຍນຳ້ຕານນີ້ເປີດໂອກາດໃຫ້ຊາວອາ ນານິຄົມໄດ້ສະແດງຄວາມບໍ່ພໍໃຈຢ່າງສົມເຫດສົມຜົນອອກມາຕາມພື້ນ ຖານຂອງຣັຖທັມມະນູນ ອຳນາດຂອງຣັຖສະພາໃນການເກັບພາສີສິນ ຄ້າທີ່ຊື້ຂາຍກັນໃນອານານິຄົມນັ້ນ ກໍນັບວ່າເປັນອຳນາດການຄ້າຂອງ ຈັກພັດແລະກົດຫມາຍນີ້ໄດ້ອອກມາດົນແລ້ວ ໃນພາກທິສດີເທີ່ານັ້ນ, ແຕ່ຕາມຄວາມເປັນຈິງແລ້ວ ບໍ່ມີຜູ້ໃດເອົາມາປະຕິບັດເລີຍ, ສ່ວນ ອຳນາດໃນການເກັບພາສີສຳລັບຫາລາຍໄດ້ເພີ້ມຂຶ້ນ ໃຫ້ແກ່ຣາຊອາ

ນາຈັກ ດັ່ງທີ່ໄດ້ກ່າວ ໃນກົດຫມາຍ ກ່ຽວກັບການເກັບພາສີ ໃນປີ ຈກຝ້ຄ ນັ້ນ ຍັງເປັນບັນຫາທີ່ຖົກຖຽງກັນຢູ່.

ການອອກກົດຫມາຍຣັຖທັມມະນູນໄດ້ກາຍເປັນຈຸດໃຫຍ່ ຂອງ ການຜິດຖຽງກັນຊຶ່ງໃນທີ່ສຸດອຳນາດຈັກພັດກໍຂາດສະບັ້ນລົງ. ທ່ານ ເຈັມສ້ໂອຕິສ້ ນັກຊາດນິຍົມສໄມແຕ່ກ່ອນໄດ້ຂຽນໄວ້ຕອນນຶ່ງ ວ່າ: "ການກະທຳແຕ່ລະຢ່າງຂອງຣັຖສະພາ, ພາໃຫ້ປະຊາຊົນນຳ ເອົາ ມາຄິດຮອດຫົກເດືອນ, ຊຶ່ງເຂົາເຈົ້າບໍ່ເຄີຍຄິດຫລາຍປານນີ້ຈັກເທື່ອ ໃນຊີວິດ". ພໍ້ຄາ, ນັກກົດຫມາຍ, ແລະການປະຊຸມໃນບ້ານພາກັນ ຄັດຄ້ານຕໍ່ທ່າທີຂອງກົດຫມາຍນີ້, ແລະທະນາຍຄວາມເຊັ່ນວ່າ ທ່ານ ແຊມຸຍແອລ ແອດັມສ້ ເຫັນວ່າການສເນີກົດຫມາຍໃຫມ່ນີ້ ແມ່ນການ ໃກ້ຄຽງທີ່ສຸດກັບ "ການເກັບພາສີໂດຍບໍ່ມີສິ່ງຕອບແທນ", ແລະ ເຫດການດັ່ງກ່າວນີ້ພາໃຫ້ຊາວອານານິຄົມຄິດຢາກຕໍ້ຕ້ານນະໂຍບາຍ ຂອງປະເທດອັງກິດ.

ຕໍ່ມາໃນປີດຽວກັນນັ້ນ, ທາງຣັຖສະພາ ໄດ້ອອກກົດຫມາຍ ກ່ຽວກັບການເງີນ "ເພື່ອປ້ອງກັນຫນັງສືເງີນເຊື່ອໃດໆ ທີ່ອອກກັນ ໃນອານານິຄົມຕ່າງໆນັ້ນ ບໍ່ຖືກຕ້ອງຕາມກົດຫມາຍ". ໃນຂນະທີ່ ທາງອານານິຄົມກຳລັງພົບກັບການຂາດທຶນໃນດ້ານການຄ້າປະສົມກັບ ການຂາດເງີນທຶນສຳລອງ, ບັນຫານີ້ກາຍເປັນຄວາມຫຍຸ້ງຍາກອັນ ໃຫຍ່ຫລວງ ສຳລັບເສຖກິດຂອງອານານິຄົມເຫລົ່ານີ້ ກໍເກີດມີຂຶ້ນ.

ອີກສິ່ງນຶ່ງທີ່ຂັດຕໍ່ຄວາມເຫັນຂອງພວກອານານິຄົມນີ້ກໍຄື ການອອກກົດ ຫມາຍໃນປີ ๑ກຝ๕ ຊຶ່ງບົ່ງໄວ້ວ່າ ກອງທະຫານອັງກິດ ຈະມາຕັ້ງ ຄ້າຍຢູ່ໃນອານານິຄົມ ແລະຊາວອານານິຄົມຈະຕ້ອງຈັດຫາທີ່ຢູ່ອາໄສ ແກ່ທະຫານພ້ອມທັງໃຫ້ລ້ຽງດູພວກນີ້ດ້ວຍ.

ເມື່ອເປັນເຊັ່ນນີ້ ຊາວອານານິຄົມມີຄວາມບໍ່ພໍໃຈ ແລະຄັດ ຄ້ານຕໍ່ການກະທຳເຊັ່ນນີ້ເປັນທີ່ສຸດ ແລະຄັ້ງນີ້ ກໍນັບວ່າເປັນຂັ້ນສຸດ ທ້າຍທີ່ຊາວອັງກິດອອກກົດຣະບຽບໃຫມ່ທີ່ບັງຄັບພວກທີ່ຢູ່ ໃນອານານິ ຄົມ ຊຶ່ງເຂົາເຈົ້າໄດ້ທ້ອນໂຮມກັນ ຕ້ານທານຕໍ່ການກະທຳເຊັ່ນນີ້ ຕລອດມາ. ນີ້ແມ່ນການອອກກົດຫມາຍສະແຕມອາກອນທີ່ມີຊຶ່ສຽງທີ່ ສຸດ. ກົດຫມາຍນີ້ໄດ້ບົ່ງໄວ້ວ່າ ຫນັງສືພິມກະດາດກວ້າງສຳຫລັບ ພິມ, ຫນັງສືເຫລັ້ມນ້ອຍ, ໃບອະນຸຍາດຕ່າງໆ, ຫນັງສືສັນຍາ ຕ່າງໆ ຫລືເອກສານແນວອື່ນໆ ຕ້ອງຕິດສະແຕມອາກອນ ເພື່ອຫາ ຣາຍໄດ້ເພີ້ມຕື່ມໃຫ້ແກ່ອານານິຄົມໂດຍແນໃສ່ຈຸດປະສົງອັນດຽວກັນຄື ເພື່ອປ້ອງກັນຄວາມຫມັ້ນຄົງຂອງອານານິຄົມ. ພຽງແຕ່ຄົນອະເມຣິ ກັນເທົ່ານັ້ນ ທີ່ຈະໄດ້ຮັບແຕ່ງຕັ້ງຫລືມອບຫມາຍໃຫ້ເປັນເຈົ້າຫນ້າທີ່ ເກັບພາສີ ແລະຕໍ່ນັ້ນມາ ບັນຫາຄວາມຫຍູ້ງຍາກຕ່າງໆກໍເບົາບາງ ລົງແດ່ເລັກນ້ອຍ ແລະທາງຣັຖສະພາອັງກິດກໍຮັບຮູ້ໂດຍດີ ໂດຍບໍ່ ໄດ້ຖົກຖຽງກັນ ຫລືສົນໃຈແຕ່ຢ່າງໃດ.

ຍິ່ງຮ້າຍໄປກວ່ານີ້ກໍຄື ການຕ້ອນຮັບໃນອະນານິຄົມສິບສາມ

ບ່ອນ ຊຶ່ງພາໃຫ້ບຸກຄົນທົ່ວໄປ ແປກປະຫລາດໃຈທີ່ສຸດ ເພາະວ່າ ພວກອານານິຄົມທັງຫລາຍ ໂດຍສະເພາະໃນຣະຫວ່າງພວກທີ່ມີອິດທິ ພົນ ຂອງແຕ່ລະອານານິຄົມເກີດຄວາມຄຽດແຄ້ນຕໍ່ທາງການອັງກິດ. ພວກນີ້ໄດ້ແກ່ພວກນັກຫນັງສືພົມ, ທະນາຍຄວາມ, ພຣະທີ່ສອນສາ ສນາ, ພວກພໍ້ຄາ, ແລະນັກທຸຣະກິດ ຊຶ່ງໄດ້ປະກາດໃຫ້ທຸກຄົນຕັ້ງ ແຕ່ເຫນືອຕລອດໃຕ້ ແລະທາງດ້ານຕະວັນຕົກ, ມີສິດທິເທົ່າທຽມກັນ ຫມົດ. ຕໍ່ມາ ຫົວຫນ້າພໍ້ຄາກໍໄດ້ຈັດໃຫ້ມີການເສັຍພາສີສິນຄ້າ ຫລື ຄ່າບັນທຸກຕ່າງໆ ເພື່ອເກັບພາສີຊ່ວຍອານານິຄົມ ໃຫ້ມີລາຍໄດ້ເພີ້ມ ຂຶ້ນ ແລະໄດ້ຈັດຕັ້ງສະມາຄົມ ທີ່ບໍ່ຮັບຊື້ສິນຄ້າ ຈາກຕ່າງປະເທດ. ການຄ້າໃນເວລານັ້ນຢຸດຢູ່ຊົ່ວຄາວ ແລະການຄ້າກັບປະເທດອັງກິດ ໄດ້ຂາດສະບັ້ນລົງ ໃນຣະດູຮ້ອນຂອງປີ ຈກຝ້ຕ. ຜູ້ທີ່ມີອິດທິພົນຫລື ເປັນທີ່ຮູ້ຈັກດີໃນຫມູ່ພວກ ໄດ້ຈັດໃຫ້ມີການຟື້ນຟູເສຣີພາບ ຊຶ່ງຕໍ່ມາ ໄດ້ມີການຄັດຄ້ານຕໍ່ນະໂຍບາຍການເມືອງ ຊຶ່ງກຳລັງຈະຮ້າຍແຮງຢູ່ ປະຊາຊົນໄດ້ລຸກຂຶ້ນເດີນຂະບວນຕາມຖນົນສາຍຕ່າງໆໃນເມືອງບອສ ຕັນ ແລະຈາກເມືອງແມແຊຈູແຊສ່ ລົງໄປຮອດເມືອງ ແຄໂຣໄຣນາ ໃຕ້. ກົດຫມາຍນີ້ໄດ້ຖືກລົບລ້າງ ແລະຄນະທີ່ເດີນຂບວນໄດ້ຈຳໃຫ້ ເຈົ້າຫນ້າທີ່ອາກອນສະແຕມລາອອກຈາກຕຳແຫນ່ງຂອງຕົນ ແລະປະ ຊາຊົນກໍໄດ້ທຳລາຍສະແຕມທີ່ເຂົາເຈົ້າກຽດຊັງທີ່ສຸດນັ້ນຖິ້ມ.

ຄວາມຫມາຍອັນໃຫຍ່ຫລວງຂອງການທຳລາຍກົດຫມາຍກ່ຽວ

ກັບສະແຕມອາກອນນີ້ ບໍ່ພຽງແຕ່ເປັນສິ່ງຊຸກຍູ້ອັນຮີບດ່ວນ ໃຫ້ມີການ
ກໍ່ການປະຕິວັດຂຶ້ນເທົ່ານັ້ນ, ແຕ່ຍັງເຕືອນສະຕິໃຫ້ຊາວອະເມຣິກັນ
ວາງກົດເກນກ່ຽວກັບສັມພັນທະພາບກັບຈັກພັດ ຊຶ່ງຈະເປັນຊ່ອງທາງ
ໃຫ້ຊາວອະເມຣິກັນ ໄດ້ມີວິທີທາງຊ່ວຍ ເປັນຂອງເຂົາເຈົ້າເອງ.
ຕົວຢ່າງຊາວເມືອງເວີຊີເນັຍ ໄດ້ເຫັນດີນຳການຍຸຍົງສົ່ງເສີມຂອງ
ທ່ານແພດຣິກ ແຮນຣີ, ກ່ຽວກັບການປະນາມ ການເກັບພາສີອາ
ກອນ ໂດຍປາສຈາກສິ່ງຕອບແທນ ວ່າເປັນການປ່ຽນແປງ ທີ່ໜ້າວິ
ຕົກທີ່ສຸດ ເພາະວ່ານັ້ນເປັນການຂົ່ມຂູ່ ຕໍ່ເສຣີພາບຂອງຊາວອາມາມິ
ຄົນ. ຕໍ່ນັ້ນມາອີກຫລາຍມື້, ທາງສະພາແມແຊຈູແຊຄສ໌ໄດ້ເຊີນໃຫ້
ອາມາມິຄົນທຸກບ່ອນ ແຕ່ງຕັ້ງຜູ້ແທນຂອງຕົນ ໃຫ້ມາຮ່ວມປະຊຸມໃນ
ເມືອງນິວຢອກ ເພື່ອປຶກສາຫາລື ກ່ຽວກັບການຂົ່ມຂູ່ຂອງກົດໝາຍ
ວ່າດ້ວຍສະແຕມອາກອນໃນເດືອນຕຸລາປີ ຄ.ສ ๑๗๖๕. ການປະຊຸມຣະ
ຫວ່າງອາມາມິຄົນໄດ້ເປີດຂຶ້ນ ເປັນເທື່ອທຳອິດ ໂດຍການນຳຂອງ
ຊາວອະເມຣິກັນ ແລະມີຜົນດາພວກທີ່ກ້າຫານ ແລະມີຄວາມສາມາດ
ຊາວເຈັດຄົນ ໄດ້ສວຍໂອກາດນີ້ ສແດງຄວາມຄິດຄວາມເຫັນຂອງ
ຊາວອາມາມິຄົນໃນການຕໍ່ຕ້ານການແຊກແຊງກິຈການພາຍໃນທີ່ທາງ
ຣັຖສະພາອັງກິດໄດ້ມີຕໍ່ຊາວອະເມຣິກັນ, ແລະຫລັງຈາກມີການ ຖົກ
ຖຽງກັນພໍສົມຄວນແລ້ວ ທາງສະພາກົງແກຣສ໌ຈຶ່ງໄດ້ລົງມະຕິວ່າ "ບໍ່
ມີກົດໝາຍໃດໆ ທີ່ຈະບັງຄັບໃຫ້ເຂົາເຈົ້າເສັຍພາສີໄດ້, ນອກຈາກ

ກົດໝາຍທີ່ຫ້ວງສະພາຂອງພວກອານານິຄົມເປັນຜູ້ອອກເອງ. ແລະ ກົດໝາຍວ່າດ້ວຍອາກອນສະແຕມນີ້ເປັນການສະແດງເຖິງການທັບຖົມ ສິດເສຣີພາບຂອງຊາວອານານິຄົມ".

## ການຜິດຖຽງກັນກ່ຽວກັບການເກັບພາສີລົດນ້ອຍລົງ

ຣັຖທັມມະນູນໄດ້ອອກກົດໝາຍກ່ຽວກັບປັນຫາ ການສະແດງ ຄວາມຄິດຄວາມເຫັນ ຈາກຄວາມຄິດຄວາມເຫັນຂອງຊາວອານາ ນິຄົມແລ້ວຄືສິເປັນໄປບໍ່ໄດ້ທີ່ຊາວອານານິຄົມຈະຖືວ່າຕົວເຂົ້າເຈົ້າເອງ ເປັນຕົວແທນໃນຣັຖສະພາໄດ້, ນອກຈາກວ່າ ເຂົ້າເຈົ້າຈະໄດ້ຮັບ ເລືອກຕັ້ງໃຫ້ມີສິດເຂົ້າມານັ່ງໃນສະພາສາມັນ. ແຕ່ວິນາທີນີ້ ຂັດຕໍ່ ຫລັກການທີ່ຊາດອັງກິດນິຍົມທົ່ວໄປກ່ຽວກັບການເປັນຕົວແທນຢ່າງແທ້ ຈິງ, ອັນນັ້ນກໍຄືການເປັນຕົວແທນ ຊຶ່ງນັບຖືຊັ້ນວັນນະ ແລະຜົນປະ ໂຍດຂອງຕົນ. ເຈົ້າໜ້າທີ່ອັງກິດທຸກຄົນຖືວ່າ ຣັຖສະພາແມ່ນຕົວ ແທນຂອງຈັກພັດຈຶ່ງຈະໄດ້ດຳເນີນກິຈການຕ່າງໆໃນອານານິຄົມເທົ່າ ກັນກັບກິຈການພາຍໃນປະເທດ. ທາງຣັຖສະພາມີສິດ ອອກກົດ ໝາຍໄດ້ແຕ່ໃນເມືອງແມແຊຈູແຊຕສ໌ ຊຶ່ງເໝືອນກັນກັບທີ່ອອກກົດ ໝາຍ ຢູ່ໃນເມືອງເບີກເຊີ ໃນປະເທດອັງກິດ. ແຕ່ພູມຳຂອງ ຊາວອະເມຣິກັນໄດ້ຖຽງວ່າ ບໍ່ມີຣັຖສະພາຂອງຈັກພັດ ຢູ່ໃນອານານິ ຄົມແລະຄວາມສັມພັນອັນດຽວທີ່ເຂົາເຈົ້າມີຕໍ່ປະເທດອັງກິດ ນັ້ນກໍຄື

ກະສັດເທົ່ານັ້ນ. ພຣະເຈົ້າແຜ່ນດິນຊົງພຣະຣາຊອະນຸຍາດໃຫ້ເຂົາ
ເຈົ້າຕັ້ງອານານິຄົມຂຶ້ນໄກຈາກທະເລ ແລະກໍ່ແມ່ນພຣະເຈົ້າມະຫາຊີ
ວິດຈະຊົງພຣະຣາຊທານຣັຖບານໃຫ້ເຂົາເຈົ້າ. ຊາວອານານິຄົມນີ້
ຖືວ່າ ພຣະເຈົ້າມະຫາຊີວິດເມືອງອັງກິດກໍຄື ພຣະເຈົ້າມະຫາຊີວິດ
ເມືອງແມຊຊູແຊຣ, ແຕ່ທາງຣັຖສະພາອັງກິດ ບໍ່ມີສິດໃດໆ ທີ່ຈະ
ອອກກົດໝາຍກຽວກັບເມືອງແມຊຊູແຊຣ ເຊັ່ນດຽວກັນກັບເມືອງ
ແມຊຊູແຊຣ ທີ່ບໍ່ມີສິດອອກກົດໝາຍໃດໆກ່ຽວກັບປະເທດອັງກິດ.
ເຂົາເຈົ້າຢືນຢັນຢ່າງແຮງກ້າ, ຖ້າວ່າພະເຈົ້າມະຫາຊີວິດຕ້ອງການ
ຢາກໄດ້ເງິນຈາກອານານິຄົມ ພຣະອົງອາດຂໍກູ້ຢືມໄດ້, ແຕ່ສຳຫລັບ
ເຣື່ອງຂອງທາງການອັງກິດນັ້ນ ຈະແມ່ນຢູ່ປະເທດອັງກິດແລະບໍ່ແມ່ນ
ຢູ່ເມືອງອະເມຣິກາ ແລະການເກັບພາສີນັ້ນຕ້ອງແມ່ນຜູ້ຕາງໜ້າປະ
ເທດຫລືທ້ອງຖິ່ນເປັນຜູ້ເກັບ. ເຖິງແມ່ນວ່າ ຣັຖສະພາອັງກິດ ບໍ່
ເຫັນດີນຳການຕໍ່ສູ້ຂອງພວກອານານິຄົມ, ພໍ້ຄ້າຊາວອັງກິດຫລາຍຄົນ
ໄດ້ພຍາຍາມສ້າງຄວາມກົດດັນຂຶ້ນ ຢ່າງເປັນພົນດີ. ດ້ວຍຄວາມຮູ
ສຶກຂອງເຂົາເຈົ້າ ທີ່ມີຕໍ່ພໍ້ຄ້າອະເມຣິກັນທີ່ບໍ່ຍອມຕິດຕໍ້ຄ້າຂາຍນຳນັ້ນ
ເຂົາເຈົ້າໄດ້ຮຽກຮ້ອງໃຫ້ທາງຣັຖສະພາດັດແປງກົດຣະບຽບກ່ຽວກັບ
ກົດໝາຍການຄ້າ, ແລະໃນປີ ໑໗໙໙ ທາງຣັຖສະພາໄດ້ສົມຍອມ
ລົບລ້າງກົດໝາຍວ່າດ້ວຍສະແຕມອາກອນ ແລະໄດ້ແກ້ໄຂກົດໝາຍ
ກ່ຽວກັບການຄ້ານ້ຳຕານ ຢ່າງໃຫຍ່ຫລວງ. ຂ່າວນີ້ໄດ້ແຜ່ໄປທົ່ວ

ທຸກໆອານານິຄົມ ແລະພາໃຫ້ພູຄົນຊຸ່ມຊຸ່ມຍິນດີເປັນຢ່າງຍິ່ງ ແລະພໍ່ຄ້າທັ້ງຫລາຍ ກໍພາກັນລົບລ້າງສັນຍາທີ່ບໍ່ສົ່ງສິນຄ້າເຂົ້າມາ. ຂ່າວກ່ຽວກັບການຟື້ນຟູເສຣິພາບກໍເບົາບາງລົງ, ການຄ້າກໍດຳເນີນໄປຄືເກົ່າແລະຄວາມສງົບກໍປາກົດຂຶ້ນ.

ແຕ່ກໍເປັນພຽງການຜ່ອນຜັນຊົ່ວຄາວເທົ່ານັ້ນ ເພາະຕໍ່ມາໃນ ປີ ໑໗໙໗ ທາງການອັງກິດ ໄດ້ສ້າງສະຖານະການປັ່ນປ່ວນຂຶ້ນອີກ ຈົນພາໃຫ້ເກີດບາດໝາງໃຈກັນຂຶ້ນ. ໃນເວລານັ້ນ ທ່ານ ຊາລ ທາວເຊັນ ຣັຖມົນຕີ່ວ່າການຄັງ ຂອງອັງກິດ ໄດ້ຮັບຄຳສັ່ງໃຫ້ຮຽບຮຽງໂຄງການເງິນປະຈຳປີສຳລັບຣັຖບານ. ດ້ວຍເຫດວ່າທາງຣັຖບານມີຈຸດປະສົງ ຈະລົດພາສີທາງປະເທດອັງກິດໃຫ້ນ້ອຍລົງ ໂດຍການເພີ່ມພາສີສິນຄ້າອະເມຣິກັນຂຶ້ນ, ທ່ານໄດ້ກວດຄັນການບໍຣິຫານຂອງພາສີອາກອນ ແລະໃນຂນະດຽວກັນ ກໍ່ໄດ້ສັ່ງໃຫ້ເພີ່ມພາສີສິນຄ້າທີ່ທາງປະເທດອັງກິດຈະສົ່ງອອກໄປຂາຍໃຫ້ອານານິຄົມ ເຊັ່ນວ່າ ກະດາດ, ຈອກແກ້ວ, ເຊືອກ, ແລະຊາ. ການເພີ່ມພາສີຂນນີ້ກໍເພື່ອຫວັງຈະເກັບເອົາລາຍໄດ້ເພີ່ມຕື່ມບາງສ່ວນເພື່ອໄປຊ່ວຍອານານິຄົມ ໃນການເສັຍຄ່າເງິນເດືອນຜູ້ປົກຄອງເມືອງ, ເຈົ້າໜ້າທີ່ສານ, ເຈົ້າໜ້າທີ່ພາສີ ແລະກອງທະຫານອັງກິດ ທີ່ປະຈຳການຢູ່ເມືອງອະເມຣິກາ. ຕໍ່ມາທ່ານ ທາວເຊັນ ໄດ້ສັ່ງໃຫ້ສານສູງຂອງອານານິຄົມ ຂຽນເປັນລາຍລັກອັກສອນຢືນຢັນ ເຖິງການໃຫ້ຄວາມ

ຮ່ວມໄມ້ຮ່ວມມື, ແລະໃຫ້ສິດພິເສດແກ່ເຈົ້າຫນ້າທີ່ ໃນການກວດຄົ້ນ ສິນຄ້າ ຊຶ່ງເຮືອງນີ້ພາໃຫ້ຊາວອາເມຣິກັນກຽດຊັງເປັນທີ່ສຸດ.

ຄວາມປັ່ນປ່ວນກ່ຽວກັບຣະບຽບໃຫມ່ຂອງທ່ານ ທາວເຊັນ ນີ້ ບໍ່ຮ້າຍແຮງເທົ່າການອອກກົດຫມາຍວ່າດ້ວຍອາກອນສະແຕມ, ແຕ່ ເຖິງຢ່າງໃດກໍນັບວ່າຮຸນແຮງຢູ່ ພໍສົມຄວນ. ພວກພໍ້ຄ້າໃນທຸກໆອາ ນາເມຣິກາເລີຍໄດ້ກັບມາໃຊ້ສັນຍາກ່ຽວກັບການບໍ່ສົ່ງສິນຄ້າເຂົ້າມາໃນ ປະເທດອີກ. ທຸກຄົນໄດ້ຊ່ວຍກັນມັທຍັດ, ພວກຜູ້ຊາຍນຸ່ງຫົ່ມດ້ວຍ ຜ້າແພທີ່ຕ່ຳໃນພົ້ນເມືອງ, ພວກຜູ້ຍິງຊອກຫາແມວອົ່ນແທນ, ນັກ ຣຽນພາກັນໃຊ້ກະດາດທີ່ຜລິດໃນອາເມຣິກາ ແລະບ້ານເຮືອນກໍຢູ່ບໍ່ມີ ການທາສີ. ທີ່ເມືອງບອສຕັນ, ຜູ້ຄົນມີຄວາມຮູ້ສຶກໄວຕໍ່ສິ່ງທີ່ປ່ຽນ ແປງຫລີກລ້ຽງແຊກແຊງຕ່າງໆ ຈຶ່ງພາກັນຄິດວ່າ ຣະບຽບໃຫມ່ນີ້ພາ ໃຫ້ເກີດການປັ່ນປ່ວນ ທີ່ຮ້າຍແຮງ. ເມື່ອເຈົ້າຫນ້າທີ່ພາສີໄປເກັບ ພາສີ ເຂົາເຈົ້າກໍຖືກປະຊາຊົນຫຸ້ມໂຈມຕີຢ່າງຫນັກ ຈົນເປັນເຫດໃຫ້ ທາງການອັງກິດໄດ້ສົ່ງທະຫານສອງກົມໄປປະຈຳການຢູ່ເມືອງນີ້ເພື່ອ ໃຫ້ຄວາມຊຸ້ມກັນແກ່ເຈົ້າຫນ້າທີ່ພາສີ.

ການທີ່ທະຫານອັງກິດ ສອງກົມ ໄປປະຈຳການຢູ່ເມືອງຂອງ ພວກປູຣິຕັນ ນີ້ໄດ້ກໍ່ໃຫ້ເກີດການປັ່ນປ່ວນຂຶ້ນແລະການເປັນສັດຕູຕໍ່ກັນ ຣະຫວ່າງປະຊາຊົນ ແລະທະຫານໄດ້ລະເບີດຂຶ້ນໃນວັນທີ ๕ ເດືອນ ມີນາ ປີ ๑๗๗๐ ຫລັງຈາກໄດ້ຄຽດແຄ້ນໃຈກັນມາໄດ້ສິບແປດເດືອນ

ມັກຄິດທະຫານທີ່ແຕ່ງກາຍດ້ວຍເສື້ອແດງສູ້ກັບຝູງຊົນ ແລະຕໍ່ມາໃຜຜູ້ນຶ່ງໄດ້ອອກຄຳສັ່ງໃຫ້ທະຫານຍິງຝູງຊົນ ແລະເປັນເຫດໃຫ້ຊາວບອສຕັນ ສາມຄົນຖືກຍິງຕາຍ ເຮື່ອງນີ້ໄດ້ກາຍເປັນເຮື່ອງໃຫຍ່ ຊຶ່ງສ້າງຄວາມປັ່ນປ່ວນໃຫ້ແກ່ຊາວບ້ານທີ່ສຸດ ແລະໄດ້ກາຍເປັນຕົ້ນເຫດຂອງການໂຄສະນາໃສ່ຮ້າຍປ້າຍສີ ແລະຍຸຍົງສົ່ງເສີມ ໃຫ້ປະຊາຊົນກຽດຊັງ ປະເທດອັງກິດ.

ການຕັ້ງຊື່ "ການຂ້າຄົນເປັນໝູ່ທີ່ເມືອງບອສຕັນ" ເຫດຮ້າຍທີ່ເກີດຂຶ້ນນີ້ກາຍເປັນພະຍານຫລັກຖານ ຊຶ່ງສະແດງເຖິງນ້ຳໃຈໂຫດຮ້າຍທາຣຸນຂອງຊາວອັງກິດ.

ຕໍ່ໜ້າສະພາບການຄັດຄ້ານເຊັ່ນນີ້ໃນປີ ໑໗໗໐ ທາງຣັຖສະພາອັງກິດ ຢາກຜ່ອນຄາຍຄວາມຕຶງຄຽດ ໂດຍໄດ້ສັ່ງໃຫ້ທາງການຜ່ອນຜັນການເກັບພາສີ ຕ່າງໆແຕ່ປະໄວ້ແຕ່ພາສີສິນຄ້າຊາ. ພາສີຊານ້ັ້ນຍັງມີໄວ້ຢູ່ເພາະວ່າ ທ່ານຊອກ໌ ທີສາມໄດ້ກ່າວໄວ້ວ່າ ຕ້ອງມີພາສີຢ່າງນ້ອຍແມ່ນນຶ່ງເພື່ອຣັກສາໄວ້ຊຶ່ງສິດທິ. ສຳລັບຊາວອາມານິຄົນທົ່ວໆໄປແລ້ວຮູ້ສຶກວ່າບົດບາດໃໝ່ຂອງຣັຖສະພານີ້ ໄດ້ບັນເທົາຄວາມທຸກໂສກຂອງເຂົ້າເຈົ້າແດ່ ແລະການໂຄສະນາຄັດຄ້ານ ປະເທດອັງກິດ ກໍເບົາບາງລົງ. ການຫ້າມສັ່ງຊາຈາກປະເທດອັງກິດຍັງມີຢູ່ຕໍ່ໄປ, ແຕ່ຄວາມຫຍຸ້ງຍາກຕ່າງໆໄດ້ສງົບລົງ ແລະການຫ້າມສັ່ງສິນຄ້າເຂົ້າມາກໍບໍ່ໄດ້ເຄັ່ງຄັດປານໃດ. ໂດຍທົ່ວໆໄປແລ້ວ ສະ

ຖານະການຍັງອຳນວຍຄວາມສັມພັນຣະຫວ່າງຈັກກະພັດແລະຊາວອາ
ນານິຄົມໃຫ້ດີຢູ່. ຄວາມນັ່ງມີໃນອານານິຄົມໄດ້ເພີ້ມພູມຂຶ້ນ ແລະຜູ້
ນຳຂອງອານານິຄົມສ່ວນຫລາຍ ປາຖນາຢາກໃຫ້ອານານິຄົມເປັນສິ່ງ
ຊັ້ຊາຕ້ານເມືອງ. ການມືນຊາຕໍ່ເຫດການ ແລະຄວາມປະມາດ
ພາໃຫ້ນະໂຍບາຍການເມືອງ ອັນກ້າຫານສາບສູນໄປ. ຫາດແທ້
ຂອງການຢູ່ພໍປານກາງຂອງທຸກໆ ອານານິຄົມ ເປັນການສລັບສາກ
ຂອງຄວາມສັນຕິສຸກ.

## ປະຊາຊົນຜູ້ຮັກຊາດກໍ່ການປັ່ນປ່ວນ

### ງານລ້ຽງນ້ຳຊາເມືອງບອສຕັນ

ໃນຣະຍະສາມປີແຫ່ງການຢູ້ດ້ວຍຄວາມສງົບສຸກ ໄດ້ມີເຫດ
ເກີດຂຶ້ນຊ້ຳໆກໍ່ໃຫ້ເກີດມີການຜິດຖຽງກັນອີກໂດຍມີປະຊາຊົນຜູ້ຮັກຊາດ
ຈຳນວນນຶ່ງ ໄດ້ລົງຄວາມເຫັນວ່າ ໄຊຊນະຂອງຊາວອານານິຄົມນີ້
ເປັນພຽງແຕ່ສິ່ງຫລອກລວງເທົ່ານັ້ນແລະຕາບໃດທີ່ຍັງມີການເກັບພາ
ສີຊາຢູ່ ຫລັກການ ແລະອຳນາດຂອງຣັຖສະພາຍັງມີຢູ່ໃນອານານິຄົມ
ນີ້. ໃນອະນາຄົດຂ້າງໜ້າຫລັກການອັນສົມບູນອາດຖືກນຳເອົາມາ
ໃຊ້ໃນອານານິຄົມນີ້ ຊຶ່ງຈະໝາຍເຖິງການທຳລາຍເສຣີພາບຂອງ
ຊາວອານານິຄົມນີ້ໂດຍຕົງ.

ຕົວຢ່າງຂອງຜູ້ຮັກຊາດ ທີ່ມີອົດທິພົນທີ່ສຸດນັ້ນຄືຈະບໍ່ມີໃຜເທົ່າ
ທ່ານ ແຊມູຍແອລ ອາດັມ ທີ່ຢູ່ເມືອງແມຊຊຸແຊຸດສ໌, ທ່ານໄດ້ໃຊ້

ຄວາມພຍາຍາມໂດຍບໍ່ນຶກເຖິງຄວາມລຳບາກໃດໆ ເພື່ອແນໃສ່ຈຸດ ປະສົງອັນດຽວຄື ເອກຣາຊ. ຫລັງຈາກທ່ານຮຽນຈົບຈາກມະຫາ ວິທຍາໄລ ຣາວາຍ ແລ້ວ ທ່ານໄດ້ເຂົ້າຮັບໃຊ້ໃນວົງຣາຊການດ້ວຍ ຄວາມສາມາດ ເຊັ່ນວ່າເປັນຜູ້ກວດກາປ່ອງໄຟ, ເປັນຜູ້ເກັບພາສີ ແລະເປັນປະທານ ຂອງການປະຊຸມໃນບ້ານ. ຄວາມລົ້ມລະລາຍທີ່ ເຫັນພ້ອມໃນການຄ້ານັ້ນເປັນສິ່ງສລາດ ແລະພາໃຫ້ມີຄວາມສາມາດ ໃນການເມືອງ. ການປະຊຸມທີ່ເມືອງນິວອັງແລນດ໌ ເປັນເວທີຂອງ ການສະແດງບົດບາດຂອງທ່ານ. ອາວຸດອັນສຳຄັນຂອງທ່ານອາດັມສ໌ ກໍຄື ທ່ານໄດ້ຮັບຄວາມໄວ້ວາງໃຈ ແລະການສນັບສນູນຈາກປະຊາ ຊົນທຸກຊັ້ນວັນນະ ນັບຕັ້ງແຕ່ລູກເຮືອ ໄປຮອດພຣະຜູ້ເປັນທີ່ນັບຖືຂອງ ຄົນທັ່ວຫລາຍ. ຜົນສຳເຣັດອັນຍິ່ງໃຫຍ່ຂອງທ່ານແມ່ນການປົດປ່ອຍ ຜູ້ຄົນທັມມະດາເຫລົ່ານີ້ ໃຫ້ເຊົາຢ້ານຜູ້ຫລັກຜູ້ໃຫຍ່ ໃນດ້ານສັງຄົມ ແລະການເມືອງ ແລະໄດ້ເຕືອນໃຫ້ເຂົາເຈົ້າຮູ້ເຖິງໜ້າທີ່ ແລະ ຄວາມສຳຄັນຂອງເຂົາເຈົ້າ. ຂັ້ນຕໍ່ມາ ແມ່ນການຍຸຍົງສົ່ງເສີມໃຫ້ ພວກນີ້ ເລີ່ມສະແດງບົດບາດ ຂອງເຂົາເຈົ້າ. ທ່ານໄດ້ຂຽນບົດ ຄວາມ ລົງໃນໜັງສືພິມ ກ່ຽວກັບການປະຊຸມໃນບ້ານ ແລະປະຈຳ ແຂວງແລະໄດ້ກ່າວຄຳປາໃສ ຊຶ່ງໝາຍຈະຊັກຈູງໃຫ້ປະຊາຊົນຮູ້ ເຖິງການແກ້ໄຂບັນຫາແບບປະຊາທິປະໄຕ. ໃນການປະຊຸມປະຈຳ ບ້ານທີ່ເມືອງບອສຕັນ ໃນປີ ໑໗໗໘, ທ່ານ ແອດັມສ໌ໄດ້ຊັກຈູງ

ສະມາຊິກທີ່ມາປະຊຸມທັງຫລາຍ ໃຫ້ຕັ້ງຄນະກັມມະການຂຶ້ນ ຄນະນີ້ງ ເພື່ອດູແລຄວາມສຸກທຸກຂອງຊາວອານານິຄົມ ແລະມີຫນ້າທີ່ຕິດຕໍ່ກັບ ອານານິຄົມອື່ນອີກ ກ່ຽວກັບເຣື່ອງນີ້ອີກບໍ່ດົນຄວາມຄິດນີ້ກໍຖືກແຜ່ຜາຍ ໄປທົ່ວທຸກແຫ່ງ ຈົນໃນທີ່ສຸດທຸກໆອານານິຄົມ ກໍໄດ້ຈັດຕັ້ງຄນະກັມມະ ການດັ່ງກ່າວນີ້ຂຶ້ນ ແລະອັນນີ້ແມ່ນພື້ນຖານຂອງການຈັດຕັ້ງ ອົງການ ປະຕິວັດຂຶ້ນ.

ໃນປີ ຈກກຈ, ທາງການອັງກິດໄດ້ຊ່ວຍ ທ່ານ ແອດັມສ້ ແລະຄນະຮ່ວມງານຂອງທ່ານຕາມຄວາມປະສົງໃນເວລານີ້ ບໍຣິສັດ ອິນເດັຍຕະວັນອອກຊຶ່ງນັບວ່ານີອິດທິພົນຢູ່ບໍ້ນອຍທີ່ຕົກຢູ່ໃນພາວະການ ເງີນຝືດເຄືອງຈົ່ງໄດ້ຮ້ອງທຸກຕໍ່ຣັຖບານອັງກິດ ເພື່ອຂໍສົ່ງຊາໄປຂາຍ ທີ່ເມືອງໃນອານານິຄົມຫມົດທຸກບ່ອນແຕ້ຜູ້ດຽວ ແລະຄາໍຂໍ້ຮ້ອງນີ້ບໍ່ໄດ້ ຮັບການຂັດຂ້ອງ ຈາກທາງການອັງກິດແຕ່ຢ່າງໃດ. ກ່ຽວກັບພາສີ ຊາທີ່ທ່ານ ທາວເຊັນເປັນຜູ້ອອກກົດຫມາຍນັ້ນ, ພວກພໍ້ຄາທີ່ຢູ່ໃນອາ ນານິຄົມທຸກໆບ່ອນໄດ້ເຊົາການຕິດຕໍ້ຄາຂາຍກັບບໍຣິສັດຊາ ແລະຫລັງ ຈາກປີ ຈກກຕ ເປັນຕົ້ນມາ ກໍໄດ້ມີການຄ້າຊາເຖື່ອນກັນຢ່າງຫລວງ ຫລາຍ ຊຶ່ງຫມາຍຄວາມວ່າຊາທີ່ເອົາມາຂາຍນີ້ ແມ່ນຊາຫນີພາສີຕໍ່ ມາທາງບໍຣິສັດ ອິນເດັຍຕະວັນຕົກ ໄດ້ຕັດສິນໃຈຂາຍຊາ ໃນຣາຄາ ຕ່າໍກວ່າຣາຄາເດີມ ແລະໃນເວລາດຽວກັນກໍມີຄົນຂົນເອົາຊາບໍ່ເສັຍ ພາສີເຂົ້າມາຂາຍຢ່າງຫລວງຫລາຍ ຊຶ່ງເຮັດໃຫ້ພໍ້ຄາໃນອານານິຄົມ

ບໍ່ມີແນວເຮັດ ດັ່ງນັ້ນພໍ້ຄ້າໃນອານານິຄົມມີຄວາມບໍ່ພໍໃຈເປັນທີ່ສຸດຈີ່ງ ໄດ້ເຂົ້າໄປຮ່ວມກັບຂະບວນຊາດນິຍົມ. ພຶດຕິການດັ່ງກ່າວນີ້ ບໍ່ໄດ້ເຮັດໃຫ້ເສັຍແຕ່ການຄ້າຊາເທົ່ານັ້ນ, ແຕ່ຫລັກການ ການຄ້າຊາແຕ່ຜູ້ດຽວນັ້ນກໍຖືກລົບລ້າງອີກດ້ວຍ. ໃນອານານິຄົມທຸກໆບ່ອນໄດ້ຫ້ານ ບໍ່ໃຫ້ບໍຣິສັດ ອິນເດັຍຕະວັນອອກດຳເນີນກິຈການຄ້າຊາຕໍ່ໄປ. ເອ ເຢັ້ນຂາຍຊາຢູ່ຕາມທ່າເຮືອອື່ນໆ ກໍຖືກສັ່ງບໍ່ໃຫ້ດຳເນີນກິຈການຕໍ່ໄປ ແລະການຂົນຊາມາເທື່ອໃຫມ່ນີ້ຈະຕ້ອງຖືກສົ່ງຄືນເມືອປະເທດອັງກິດ ຫລືເອົາໄປໄວ້ໃນໂກດັງ. ແຕ່ຢູ່ເມືອງ ບອສຕັນ, ພວກເອເຢັ້ນ ຫົວດື້ບໍ່ຍອມຢຸດກິຈການຂອງຕົນ ແລະດ້ວຍການສນັບສນູນ ຂອງຜູ້ປົກຄອງເມືອງ, ທາງເອເຢັ້ນຈີ່ງໄດ້ຈັດແຈງໃຫ້ເຮືອບັນທຸກຊາເຂົ້າມາ ທຽບທ່າໂດຍບໍ່ສົນໃຈນຳສຽງຄັດຄ້ານ. ການໂຕ້ຕອບ ຕໍ່ເຫດການ ນີ້ ຊຶ່ງນຳໂດຍທ່ານ ແອດັມສ້ ນັ້ນປາກົດວ່າ ຮ້າຍແຮງພໍສົມຄວນ. ໃນຄືນວັນທີ ๑ຝ ທັນວາ ๑ກກຮ, ມີກຸ່ມຄົນຄນະນຶ່ງ ໄດ້ປອມຕົວ ເປັນພວກອິນເດັຍແດງຂຶ້ນໄປໃນເຮືອສາມລຳແລ້ວ ກໍ່ຂົນຫໍ່ຊາຖົ້ມລົງ ນຳ້ຫມົດ.

## ເຫດຮ້າຍໃນອານານິຄົມຢຸດຕິລົງບ່ອນອື່ນກໍກຳລັງດີຂຶ້ນ

ປະເທດອັງກິດຕ້ອງພົບກັບສະຖານະການອັນຄັບຂັນ ຊຶ່ງເກີດ ຂຶ້ນເຖີງຂັ້ນເປັນຂັ້ນຕາຍ ຊຶ່ງທາງບໍຣິສັດອິນເດັຍຕະວັນອອກ ໄດ້ດຳ

ເມືນການຍິ່ມຢູ່ ກົດໝາຍຣັຖສະພາວ່າ ຖ້າວ່າການທຳລາຍຊາ ທີ່ ເມືອງ ບອສຕັນ ນັ້ນ ບໍ່ໄດ້ຮັບການ ເອົາໃຈໃສ່ ຫລືພິຈາຣະນາແຕ່ ຢ່າງໃດກໍໝາຍຄວາມວ່າ ຣັຖສະພາໄດ້ແຈ້ງຕໍ່ຊາວໂລກ ທັ້ງຫລາຍ ແລ້ວວ່າ ຕົນບໍ່ມີອຳນາດໃດໆ ໃນອານານິຄົມດັ່ງກ່າວນີ້. ຄວາມ ເຫັນຢ່າງເປັນທາງການຂອງອັງກິດກໍຄືການປະນາມງານລ້ຽງຊາຫລື (ການທຳລາຍຊາທີ່ເມືອງບອສຕັນ) ຢ່າງຮ້າຍແຮງວ່າເປັນການກະ ທຳທີ່ປ່າເຖື່ອນທີ່ສຸດ ແລະຈະສນັບສນູນໃຫ້ຈັບກຸ່ມພວກຂະບົດໃນອາ ນານິຄົມທັ້ງໝົດ ເພື່ອເອົາມາລົງໂທດຕໍ່ໄປ ຕ່ຈາກນັ້ນມາທາງການ ອັງກິດກໍ່ໄດ້ອອກກົດໝາຍຫລາຍປະເພດຊຶ່ງຊາວອານານິຄົມເອ້ີນວ່າ 'ກົດໝາຍບັງຄັບ". ແລະ ກົດໝາຍສບັບທຳອິດ ແມ່ນສັ່ງອັດທ່າ ເຮືອເມືອງ ບອສຕັນ ຈົນກວ່າຈະໃຊ້ຄ່າເສັຍຫາຍຂອງຊາ ທີ່ຖືກທຳ ລາຍນັ້ນໃຫ້ໝົດ. ການກະທຳຊຸ່ນນ້ີ ກໍຄືການຍິ່ມຢູ່ຕໍ່ທຸກໆຊົ່ວໃນ ເມືອງນ້ີ ເພາະວ່າການແຍກເມືອງ ບອສຕັນອອກຈາກທະເລນັ້ນກໍຄື ການເສັຍຫາຍຄັ້ງໃຫຍ່. ຕ່ຈາກນັ້ນມາກົດໝາຍອ່ືນໆ ໄດ້ໃຫ້ສິດ ພຣະເຈ້ົາມະຫາຊົ່ວຕ່ໆ ທີ່ປົກສາຂ້ົນຫລາຍຄົນ ແລະຜູ້ພິພາກສາ ຊຶ່ງແຕ່ກ່ອນແມ່ນກອງປະຊຸມພາຍໃນບ້ານເປັນຜູ້ຄັດເລືອກ ແຕ່ດຽວນ້ີ ແມ່ນເຈ້ົາເມືອງເປັນຜູ້ມີອຳນາດໃນການແຕ່ງຕ້ັງ. ການປະຊຸມພາຍ ໃນບ້ານຕ້ອງໄດ້ຮັບອະນຸຍາດ ຈາກຜູ້ຄອງເມືອງເສັຍກ່ອນ ເພາະ ທ່ານຍັງມີສິດຍົກຍ້ ຍ້ ຍ ຫົວໜ້ າສານ ຫລ ຂ້ ຣ ຊ ການຜ ອ ກ ແລ ອ

ມາດຫ້ວຫມິດນີ້ ຢູ່ໃນກຳມືຂອງທ່ານຫ້ວນັ້ນ. ກົດຫມາຍ ກ່ຽວກັບ ເຮືອນຊານໄດ້ບົ່ງໄວ້ວ່າ ເຈົ້າໜ້າທີ່ໃນທ້ອງຖິ່ນ ຈະຕ້ອງຊອກຫາ ບ່ອນຢູ່ອາໄສ ຢ່າງເຫມາະສົມໃຫ້ແກ່ທະຫານອັງກິດ, ຖ້າວ່າບໍ່ປະຕິ ບັດຕາມຄຳສັ່ງແລ້ວ ຜູ້ປົກຄອງເມືອງ ມີອຳນາດເຕັມທີ່ຈະຍຶດເອົາ ຮ້ານອາຫານ, ຮ້ານຂາຍເຫລົ້າ, ແລະຕຶກອື່ນໆ ໃຫ້ພວກທະຫານນີ້ ຢູ່. ໃນຂນະດຽວກັນນີ້ ທາງເມືອງເກເບັກ ກໍໄດ້ອອກກົດຫມາຍ, ເພື່ອຕໍ່ເຂດແດນຂອງເມືອງເກເບັກ ແລະຮັບຮູ້ສິດທິ ຂອງຊາວຝຣັ່ງ ເສດ ທີ່ຢູ່ໃນເຂດນັ້ນ ໃຫ້ມີເສຣີພາບໃນການນັບຖືສາສນາ ແລະປະ ເພນີອັນຊອບທັມຂອງເຂົາເຈົ້າ ແຕ່ຊາວອານານິຄົມ ໄດ້ຄັດຄ້ານຕໍ່ ການອອກກົດຫມາຍດັ່ງກ່າວນີ້ ໂດຍບໍ່ເອົາໃຈໃສ່ ຄຳຕ່ໍວ່າທັກທ້ວງ ໃດໆ ກ່ຽວກັບການຫວງເອົາທີ່ດິນທາງດ້ານຕະວັນຕົກ ແລະນອກ ຈາກນີ້ກໍຍັງເປັນການຍົ່ວຍຸ ແລະແຊກແຊງໂດຍຂະບວນຄົນອອກໄປຢູ່ ທາງພາກຕະວັນຕົກຫລາຍຂຶ້ນ ຊຶ່ງແຕ່ທາງເຫນືອໄປຫາທາງທິດຕະ ວັນຕົກສຽງເຫນືອໄດ້ຖືກປິດລ້ອມດ້ວຍພວກທີ່ນັບຖືສາສນາ ໂຣມັນຄັດ ໂຕລິກ ຊຶ່ງມີອິດທິພົນທີ່ສຸດໃນເຂດນີ້. ແມ່ນວ່າກົດຫມາຍທີ່ເມືອງ ເກເບັກ ໄດ້ແຕ່ງອອກນີ້ບໍ່ເປັນໄປໃນທຳນອງທຳໂທດແຕ່ຢ່າງໃດ, ແຕ່ຊາວອະເມຣິກັນຖືວ່າເປັນກົດຫມາຍ ຊຶ່ງບັງຄັບເຂົາເຈົ້າເກີນໄປ ແລະເຂົາເຈົ້າຖືວ່າກົດຫມາຍດັ່ງກ່າວນີ້ ຮວມກັບກົດຫມາຍອື່ນໆ ທີ່ ທາງການອັງກິດແຕ່ງອອກມານັ້ນເປັນທີ່ຮູ້ກັນດີວ່າ "ເປັນກົດຫມາຍ

ຫ້ າມ ຕ ຣ ທ ີ ່ ຍ ອ ມ ຮ ັ ບ ເ ອ ົ ້ າ ບ ໍ ່ ໄ ດ ້ ".

ກ ່ ຽ ວ ກ ັ ບ ເ ຣ ື ່ ອ ງ ນ ີ ້ , ແ ທ ນ ທ ີ ່ ຈ ະ ປ າ ບ ຊ າ ວ ແ ມ ແ ຊ ງ ແ ຊ ດ ส ์ ก ็ ว ท ี ่ ไ ด ้ ล า ด ห ม า ย ม า ก ่ อ ม , ห า ง ก า ม อ ั ง ก ิ ด ไ ด ้ ป ะ โ อ ก า ด ใ ห ้ อ า ม า ม ิ ล ิ ม อ ื ่ น ย ื ่ น ม ื เ ข ้ า ม า ช ่ ว ย เ ห ล ื อ อ า ม า ม ิ ล ิ ม น ี ้ โ ด ย ค ำ แ ม ะ ม ำ ข อ ง ช า ว เ ม ื อ ง เ ว ี ย ด ั น ย ท ี ่ ไ ด ้ ส เ ม ิ ใ ห ้ ม ี ก า ม ป ะ ช ุ ม ร ะ ห ว ่ า ง ผ ู ้ แ ท ม ข อ ง แ ต ่ ล ะ อ า ม า ม ิ ล ิ ม ใ น ว ั น ท ี ่ ๕ เ ด ื อ น ก ั น ย า ป ี ๑ ๙ ๙ ๔ เ พ ื ่ อ ป ึ ก ส า ห า ล ิ ก ่ ย ว ก ั บ ป ั ญ ห า ท ี ่ เ ร ็ ว ใ ห ้ ช า ว อ า ม า ม ิ ล ิ ม ข ่ ส ะ บ า ย ใ จ . ก า ม ป ะ ช ุ ม ค ั ้ ง น ี ้ น ั บ ว ่ า เ ป ็ น ก า ม ป ะ ช ุ ม เ ท ื ่ อ ท ำ อ ิ ด ข อ ง ส ะ พ า ก ิ ง แ ก ร ส ์ ใ น ท ะ อ ิ บ ี ้ ห ล ิ เ อ ี ้ ม ว ่ า ก า ม ป ะ ช ุ ม ส า ม ั ้ น , ซ ึ ่ ง ไ ด ้ จ ั ด ข ึ ้ น โ ด ย พ ว ก เ อ ็ า เ จ ้ า เ อ ง ม ี ห ม า ย ค ว า ม ว ่ า น ั ก ช า ต ิ น ิ ย ม ซ ึ ่ ง เ ห ็ น ด ิ น ำ ข ึ ด ข า ด อ ั น เ ห ม ื อ ก ิ ด ห ม า ย ม ี ้ ส า ม า ถ ค ว บ ค ุ ม ส ะ ถ า น ะ ก า ม ไ ว ้ ไ ด ้ แ ต ่ ส ำ ล ั บ ผ ู ้ ท ี ่ ย ั ง น ั บ ถ ื อ บ ุ ด ท ิ ส ม ย ม ห า ย ม ก ่ า ซ ึ ่ ง บ ่ ก ่ ย ว ก ั บ ก า ม ต ้ ต า ม ก ิ ด ห ม า ย ข อ ง ท า ง ก า ม อ ั ง ก ิ ด น ั ้ น บ ่ ไ ด ้ ส ั ่ ง ผ ู ้ ต า ง ห ้ า ไ ป เ ข ้ า ร ่ อ ม ป ะ ช ุ ม . บ ่ ถ ึ ง น ั ้ น , ส ะ ม า ช ิ ก ข อ ง ส ะ พ า ก ิ ง แ ก ร ส ์ จ ะ ต ้ อ ง ก า ย เ ป ็ น ท า ง ล ่ อ ย ก ั น ย ่ อ ม ว ่ า ค ว า ม ค ิ ด ค ว า ม เ ห ็ น ข อ ง ช า ว อ ะ เ ม ร ิ ก ั น แ ย ก อ อ ก เ ป ็ น ส อ ง จ ำ พ ว ก ค ื พ ว ก ห ั ว เ ด ิ น ส า ย ก า ง แ ล ะ อ ี ก จ ำ พ ว ก ห ั ว ม ี น ะ โ ย บ า ย อ า ด จ ะ ธ ุ ม แ ธ ว แ ถ . ท ุ ก ๆ อ า ม า ม ิ ล ิ ม ใ ด ส ่ ง ผ ู ้ ต า ง ห ้ า ข อ ง ต ิ น ไ ป เ ข ้ า ร ่ อ ม ป ะ ช ุ ม ย ่ า ง น ้ อ ย ผ ู ้ ห ั ว ง แ ล ะ ผ ู ้ แ ท ม ท ี ่ เ ข ้ า ร ่ อ ม ท ั ว ห ม ิ ด ม ี ท ้ า ส ิ บ ท ้ า ค ิ น , ซ ึ ่ ง น ั บ ว ่ า ม ี จ ำ น ว น ห ล า ย

ພໍສົມຄວນສຳລັບຜູ້ທີ່ມີຄວາມຄິດຄວາມເຫັນແຕກຕ່າງກັນ ແລະເປັນ
ຈຳນວນທີ່ພຽງພໍສຳລັບຖືກຖ່ຽງ ຫລືແລກປ່ຽນຄວາມຄິດຄວາມເຫັນ
ກັນ ເພື່ອຈະປະຕິບັດວຽກການແນວໃດແນວນຶ່ງ.

ໃນທັສນະຂອງການແບ່ງແຍກຄວາມຄິດຂອງພວກອານານິຄົມ
ນິ, ທາງສະພາກົງແກຣສ໌ ໄດ້ພົບກັບ ສະຖານະການທີ່ຫຍຸ້ງຍາກ
ແລະລຳບາກທີ່ສຸດ ເພາະວ່າຫມິດທຸກຄົນຈະຕ້ອງສະແດງໃຫ້ຮັຖບານ
ອັງກິດເຫັນວ່າເຂົາເຈົ້າເປັນນ້ຳນຶ່ງໃຈດຽວກັນ ເພື່ອໃຫ້ທາງການ
ອັງກິດ ຍອມປະລະນະໂຍບາຍເດີມ, ແລະໃນເວລາດຽວກັນນັ້ນ
ຫມິດທຸກຄົນຈະຕ້ອງບໍ່ສະແດງພຶດຕິການຕ່າງໆໃຫ້ເຂົາເຫັນ ເຊັ່ນວ່າ
ການຟື້ນຟູເອກຣາຊເປັນຕົ້ນ ເພາະຢ້ານວ່າ ມັນຈະເຮັດໃຫ້ຊາວອະ
ເມຣິກັນ ທີ່ມີນະໂຍບາຍພໍປານກາງມີຄວາມແຕກຕື່ນ. ໃນການປະ
ຊຸມເທື່ອນີ້, ໄດ້ເວົ້າເຖິງເຣື່ອງກົດຫມາຍບັງຄັບ ແລະໄດ້ຕົກລົງປະ
ກາດບໍ່ຮັບປະຕິບັດຕໍ່ກົດຫມາຍດັ່ງກ່າວນີ້ ແລ້ວຈາກນັ້ນມາ ກໍໄດ້ ສົ່ງ
ຄຳປະກາດໄປຍັງປະຊາຊົນພົລເມືອງ ທີ່ປະເທດອັງກິດ ແລະທົ່ວທຸກ
ອານານິຄົມໃຫ້ຊາບເຖິງການປະກາດສິດທິ ແລະຄວາມທຸກ ນອກ
ຈາກນີ້ ເຂົາເຈົ້າຍັງໄດ້ສົ່ງຄຳອ້ອນວອນ ໄປຫາເຈົ້າຊີວິດອີກ ຊຶ່ງ
ເຮືອນດັ່ງກ່າວນີ້ໄດ້ນຳເອົາມາຖືກຖ່ຽງກັນແລະທາງການອັງກິດກໍໄດ້
ຍອມຮັບວ່າ ກົດຣະບຽບຂອງຣັຖສະພາ ກ່ຽວກັບການຄ້າກັບປະເທດ
ນອກ ເປັນກິຈການຂອງຈັກພັດໂດຍຕົງ. ພາລະອັນສຳຄັນຂອງສະ

ພາກົງແກຣສ ກໍຄືໃຫ້ຈັດຕັ້ງສະມາຄົມນຶ່ງເພື່ອຟື້ນຟູການຄ້າ ແລະຈັດ
ຕັ້ງຄນະກັມມະການປະຈຳເມືອງ ແລະປະຈຳບ້ານ ເພື່ອໃຫ້ຄຳແນະ
ນຳກ່ຽວກັບສິນຄ້າທີ່ບໍ່ສົ່ງມາແຕ່ປະເທດນອກ ສິນຄ້າທີ່ບໍ່ສົ່ງໄປຂາຍ
ປະເທດນອກ, ແລະສິນຄ້າປະເພດບໍຣິໂພກ ທີ່ບໍ່ເປັນສິ່ງຈຳເປັນ.
ຄນະກັມມະການມີໜ້າທີ່ກວດກາສິນຄ້າຜ່ານພາສີ ແລະພິຈາລະນາ
ຜ່ານຢື່ນຕໍ່ຂໍ້ສັນຍາໃຫ້ຜູ້ອື່ນຮູ້ນຳ ທຳການຍຶດສິນຄ້າບາງປະເພດ ທີ່
ຕ້ານສັ່ງເຂົ້າມາ, ແລະສນັບສນູນການມັທຍັດ ເສຖກິດ ແລະຊຸດສາ
ຫະກັມ. ສະມາຄົມນີ້ໄດ້ແນະນຳການຈັດຕັ້ງຣາກຖານຂອງການປະ
ຕິວັດຊຶ່ງກາຍມາເປັນເຣື່ອງຖືກຖຽງກັນ ແລະຣາກຖານດັ່ງກ່າວນີ້ໄດ້
ຖືກຟື້ນຟູຂຶ້ນໂດຍຄນະກັມມະການທຸກໆອານານິຄົມ ແລະຕໍ່ຈາກນັ້ນມາ
ແຕ່ລະທ້ອງຖິ່ນກໍມີອົງການນຶ່ງສຳລັບດຳເນີນວຽກການຂອງເຂົ້າເຈົ້າ
ເຂົ້າເຈົ້າໄດ້ຈັດການກັບທຸກໆຄົນ ທີ່ຍັງຈົງຮັກພັກດີຕໍ່ເຈົ້າໜ້າທີ່ຂອງ
ຈັກພັດ ພ້ອມທັງໄດ້ຊັກຊວນພວກທີ່ລັງເລໃຈໃຫ້ເຂົ້າຮ່ວມກັບຂະບວນ
ການຂອງປະຊາຊົນອີກເປັນຄັ້ງສຸດທ້າຍ ແລະໄດ້ລົງໂທດຜູ້ທີ່ເປັນປໍ
ຣະປັກຫລີ້ຕາມຂະບວນການກູ້ຊາດນັ້ຍ່າງໜັກ. ເຂົ້າເຈົ້າໄດ້ຮິບ
ໂຮມອາວຸດ ແລະອຸປກອນຕ່າງໆທີ່ໃຊ້ໃນການທະຫານ ແລະຈາກນັ້ນ
ມາກໍມີການຣະດົມພົນທະຫານ ພ້ອມທັງໄດ້ຍຸຍົງສົ່ງເສີມ ຄວາມຄິດ,
ຄວາມເຫັນຂອງປະຊາຊົນອີກດ້ວຍ.

<u>ການປະຕິວັດໄດ້ເປີດສາກົນເປັນເທື່ອທຳອິດ</u>

ກິຈການຂອງຄມະກັມມະການສະມາຄົມນີ້ໄດ້ຂຍາຍອອກເທື່ອ
ລະນ້ອຍຈົນເປັນທີ່ຮູ້ຈັກດີຂອງປະຊາຊົນທົ່ວທຸກແຫ່ງ ຈົນເຖິງຂັ້ນຄົ້ນຄິ
ກັບຣັຖບານອັງກິດບໍ່ໄດ້ອີກແລ້ວ. ມີຊາວອະເມຣິກັນຫລາຍຄົນເຄີຍ
ໄດ້ຄິດຄົ້ນແລ້ວວ່າຢາກໃຫ້ຂະບວນການຕໍ່ສູ້ນີ້ໃຊ້ຄວາມຣະມັດຣະວັງທີ່
ສຸດ ເພາະຈຸດປະສົງໃນນີ້ກໍແມ່ນຄັດຄ້ານທາງການອັງກິດທີ່ກາວກ່າຍ
ສິດທິຂອງຊາວອະເມຣິກັນທົ່ວໄປ, ແຕ່ເຂົາເຈົ້າ ກໍເຫັນດີຢາກໃຫ້
ຊາວອາມານິຄົມ ຫາທາງແກ້ໄຂບັນຫານີ້ ໂດຍທາງເຫມາະສົມແລະ
ແທນທີ່ຈະຕັດຂາດກັບຣັຖບານອັງກິດໂລດ. ພວກທີ່ມີຄວາມຄິດແບບ
ນີ້ແມ່ນພວກປະສົມຂອງຄົນຫລາຍຊັ້ນ ວັນນະ ເຊັ່ນວ່າ ເຈົ້າໜ້າທີ່
ຕ່າງໆຊຶ່ງແມ່ນທາງຈັກພັດອັງກິດເປັນຜູ້ແຕ່ງຕັ້ງ ໃຫ້ດຳຣົງຕຳແຫນ່ງ
ສະມາຊິກສະມາຄົມແຄວກເຄີ ທັງນ້ອຍ ແລະໃຫຍ່ ແລະສະມາຊິກ
ຂອງອົງການສາສນາທີ່ມາຈາກນິກາຍຕ່າງໆ. ພວກນີ້ໄດ້ຄັດຄ້ານຕໍ່
ການໃຊ້ກຳລັງ ແລະນອກຈາກນີ້ ກໍມີພວກພໍ້ຄ້າສ່ວນຫລາຍ ແມ່ນມາ
ຈາກອາມານິຄົມທາງພາກກາງ ພວກຊາວໄຮ່ຊາວສວນ ແລະພວກທີ່
ຢູ່ຕາມຊາຍແດນທາງພາກກາງແລະພາກໃຕ້ ສ່ວນພວກນັກຊາດນິຍົມ
ທັງຫລາຍນັ້ນໄດ້ໃຫ້ການສນັບສນູນຂະບວນການກູ້ຊາດນີ້ ນັບຕັ້ງແຕ່
ປະຊາຊົນຜູ້ຍາກຈົນໄປເຖິງຊັ້ນທີ່ມີອາຊີບເປັນຫລັກຖານເຊັ່ນວ່າ ທະ
ນາຍຄວາມ, ຊາວໄຮ່ຊາວສວນຜູ້ມັ່ງມີທາງພາກໃຕ້ ແລະຈຳນວນພໍ່
ຄ້າຊາວຂາຍອີກຫລາຍຄົນກໍໄດ້ໃຫ້ການສນັບສນູນເຫມືອນກັນ.

ເຫດການຫລັງຈາກກົດຫມາຍບັງຄັບໄດ້ຜ່ານໄປແລ້ວນັ້ນພວກ ທີ່ຈົງຮັກພັກດີຕໍ່ທາງການອັງກິດກໍ່ພາກັນມີຄວາມຢ້ານກົວທີ່ສຸດ. ຜົນ ສຸດທ້າຍ ພຣະເຈົ້ານະຫາຊີວິດ ອາດຫາທາງຄືນດີກັບພວກນີ້ ແລະ ຫລັງຈາກການສົມຍອມຂອງທາງການອັງກິດແລ້ວ ພັກຊາດນິຍົມນີ້ຍິ່ງ ຈະແຂງຂຶ້ນ ແລະກໍຈະເປັນການຍາກທີ່ສຸດທີ່ພວກນີ້ຈະຄືນດີກັບພວກທີ່ ເປັນປໍຣະປັກຕໍ່ເຂົາເຈົ້າ. ແຕ່ພຣະເຈົ້າຊອກຊ່ ທີສາມບໍ່ໄດ້ມີເຈຕ ນາຈະຍິນຍອມພວກນີ້ ຢ່າງງ່າຍດາຍ ໃນເດືອນກັນຍາປີ ຈກຖ້ຖ ໂດຍການດູມິ່ນຄວາມອ້ອນວອນຂອງພວກເຄວກເຄີ ທີ່ຟີລາເດັລເຟັຍ ພຣະອົງຊົງພຣະອັກສອນ ຕອນນີ້ງວ່າ "ຄວາມຕາຍເຂົ້າມາໃກ້ທຸກ ຂນະແລ້ວ ພວກອານານິຄົມຕ້ອງຍອມແພ້ຫລືຊະນະ" ພວກທີ່ເຫັນດີ ນາໍທາງການອັງກິດນີ້ບໍ່ມີທາງເລືອກອີກ ກໍເລີຍຍອມມອບກາຍຖວາຍ ຊີວິດໃຫ້ແກ່ຣັຖບານອັງກິດໂດຍອອກຫນ້າອອກຕາ. ພວກທີ່ມີຄວາມ ຄິດຄວາມເຫັນເຄີ່ງໆກາງໆບໍ່ມີທາງເລືອກອີກ ຈີ່ງຕ້ອງເຂົ້າຮ່ວມນາໍ ຂະບວນຊາດນິຍົມ ຊຶ່ງພັກນີ້ມີຊື່ວ່າ "ວິກ" ແລະພວກທີ່ຈົງຮັກພັກດີຕໍ່ ກະສັດອັງກິດ ກໍເລີ່ມສະແດງບົດບາດກໍ່ກວນ ພ້ອມກັນນັ້ນບໍຣິສັດມິລ ເລີ ບໍ່ຍອມສີເຂົ້າບໍ່ຍອມເຮັດວຽກໃຫ້ ແລະໄດ້ຢຸດກິຈການຊື້ຂາຍ ພວກນີ້ຈີ່ງໄດ້ຖືກປະນາມວ່າ ເປັນຜູ້ທໍຣະຍົດ ແລະຄນະກັມມະການ ຂອງພັກຊາດນິຍົມ ໄດ້ພິມຊື່ຂອງພວກນີ້ ອອກແຜ່ຜາຍເຖີງຄວາມຊົ່ວ ຮ້າຍທີ່ເຂົາເຈົ້າບໍ່ໄດ້ໃຫ້ການຮ່ວມມືກັບພັກຂອງຕົນ.

ໃນເວລານັ້ນນາຍພົນ ທໍນັສ ເກສ໌ ສຸພາບບຸຣຸດອັງກິດຜູ້ໜ້າ ຮັກໄຄ່ ຊຶ່ງມີພະຣິຍາເປັນຄົນອະເມຣິກັນແລະເປັນຜູ້ບັງຄັບກອງທະ ຫານປະຈຳເມືອງ ບອສຕັນ ຊຶ່ງໃນເຂດນີ້ໄດ້ມີບົດບາດການເມືອງ ຫລາຍກວ່າ ການຄ້າ. ໃນວັນທີ ๘๐ ກຸມພາ ๑๗๗๕ ທ່ານດອກ ເຕີ ໂຈເຊຟ ວໍຣັນ ຊຶ່ງເປັນຜູ້ນຳຂະບວນການຮັກຊາດຜູ້ນຶ່ງ ໄດ້ ຂຽນຈົດໝາຍໃຫ້ເພື່ອນທີ່ເປັນຊາດອັງກິດຢູ່ປະເທດອັງກິດວ່າ "ຍັງ ບໍ່ເປັນການຊ້າເກີນໄປທີ່ຈະແກ້ໄຂບັນຫາທີ່ກຳລັງຖົກຖຽງກັນນີ້ ໂດຍ ສັນຕິວິທີ ແລະດ້ວຍຄວາມເປັນມິດ ແຕ່ຕາມຄວາມຄິດຂອງຂ້ອຍແລ້ວ ຂ້ອຍຄິດວ່າ ຖ້ານາຍພົນ ເກສ໌ ນຳກອງທະຫານເຂົ້າໄປໃນເມືອງ ເພື່ອປະຕິບັດຕາມຄຳສັ່ງຂອງຣັຖສະພາແລ້ວ ປະເທດອັງກິດຈະຕ້ອງ ຫາຍສາບສູນໄປຢ່າງນ້ອຍ ແມ່ນໃນອານານິຄົມ ເມືອງນີວອັງແລນ ແລະຖ້າວ່າຂ້ອຍຄາດການບໍ່ຜິດ ປະເທດອັງກິດຈະຢູ່ໃນເມືອງອະເມ ຣິກາທັງໝົດນີ້ບໍ່ໄດ້. ຖ້າວ່າຊາດນີ້ ຍັງມີຄວາມສລຽວສລາດແລະ ຄວາມຄິດອັງລິກຊັ່ງ ຊຶ່ງພຣະເຈົ້າໄດ້ປະທານໃຫ້ແລ້ວກໍຈົງຣິບລົງມື ເສັຍ".

ແຕ່ໜ້າທີ່ຂອງນາຍພົນ ແກສ໌ ກໍຄືການບັງຄັບໃຫ້ປະຊາຊົນ ເຊື່ອຟັງແລະປະຕິບັດຕາມກົດໝາຍທີ່ທາງການໄດ້ແຕ່ງຂຶ້ນໃໝ່ເທົ່າ ນັ້ນ ແຕ່ຕໍ່ມາກໍມີຂ່າວໄປຮອດຫູທ່ານນາຍພົນວ່າ ຂະບວນຮັກຊາດ ຊາວແມຊຊູແຊຸດສ໌ ໄດ້ຫ້ອມໂຮມກຳລັງທະຫານ ຍຸ່ມອກເມືອງກົງ

ກອກຊຶ່ງມີຣະຍະທາງພຽງ ມ້ຫ ຫລັກ. ໃນຄືນວັນທີ ๑๒ ເມສາ. ນາຍພົນ ເກສ່ ໄດ້ສົ່ງກອງທະຫານ ທີ່ມີກຳລັງເຂັ້ມແຂງອອກໄປຍຶດ ເອົາອາວຸດ ແລະອຸປກອນຕ່າງໆຈາກພວກຕຣົງກັນຂ້າມ ແລະໄດ້ສົ່ງ ໃຫ້ຈັບຕົວທ່ານ ແຊມູຍແອລ ແອດັມສ່ ແລະທ່ານຈອນ ແຮນກ້ອກຊຶ່ງ ທາງການໄດ້ສັ່ງໃຫ້ສົ່ງໄປຈຳຄຸກຢູ່ປະເທດອັງກິດຕລອດຊີວິດ. ສ່ວນ ທາງແຖວບ້ານນອກທຸກບ່ອນ ກໍໄດ້ຖືກປຸກໃຫ້ຕື່ນ ແລະຫລັງຈາກໄດ້ ຍ່າງເປັນເວລາຄືນນຶ່ງ ກອງທະຫານອັງກິດ ກໍມາເຖິງບ້ານເລກຊິງ ຕັນ ໃນທ່ານກາງຫມອກຫນາຂອງຍາມເຊົ້າຂອງມື້ນຶ່ງ ພວກທະຫານ ໄດ້ເຫັນ ຄົນຈຳພວກນຶ່ງປະມານຫ້າສິບຄົນ ຊຶ່ງເປັນຊາວອານານິຄົມ ເອງມີປືນຄົບມືຕຽມພ້ອມໃນທ່າຕໍ້ສູ້ ໄດ້ຢືນຍາມຢາຍຢູ່ຕາມຖນົນພ້ອມ ທັງໄດ້ມີຄວາມລັງເລໃຈທັງສອງຝ່າຍ ສຽງຮ້ອງໄຫ້ ສຽງອອກຄຳ ສັ່ງ ແລະໃນຣະຫວ່າງກາງນີ້ໄດ້ມີສຽງປືນ ຊຶ່ງຫມາຍເຖິງວ່າການຕໍ່ ສູ້ກັນໄດ້ເລີ່ມຕົ້ນແລ້ວ ແຕ່ຝ່າຍອະເມຣິກັນເປັນຝ່າຍຖອຍຫນີເພາະມີ ກຳລັງນ້ອຍກວ່າ ໂດຍປະຊາກສົບຄາສນາມຣົບແປດສົບ. ສົງຄາມ ນອງເລືອດຂອງຊາວອະເມຣິກັນທີ່ຕໍ້ສູ້ເອກຣາຊໄດ້ເລີ່ມຕົ້ນແຕ່ນັ້ນມາ

ກອງທະຫານອັງກິດໄດ້ຕີແຫຍ້ເຂົ້າໄປໃນບ້ານກົງກອກ ຊຶ່ງ ໃນນັ້ນພວກຊາວນາ ຊາວສວນໄດ້ຈັດຕັ້ງທີ່ຫມັ້ນໄວ້ ສຳລັບການສູ້ຣົບ ແລະທີ່ຂົວຂ້ານນຳ້ ການສູ້ຣົບໄດ້ເລີ່ມຂຶ້ນ ແລະສຽງປືນ ກໍດັງສນັ່ນ ກ້ອງໂລກ ຈຸດຫມາຍປາຍທາງຂອງກອງທະຫານອັງກິດກໍສຳເຣັດໄປ

ບາງສ່ວນແล้ວ ຕໍ່ຈາກນັ້ນກອງທະຫານກໍຕ່າວກັບຄືນເມືອເມືອງບອສ ຕັນ ແຕ່ໃນຣະຫວ່າງທາງທີ່ເຂົາເຈົ້າຍ່າງຄືນເມືອນັ້ນ ພວກຊາວນາ ໄດ້ບັງຢູ່ເບື້ອງຫລັງກ້ອນຫີນໃຫຍ່ ບັງຢູ່ໂພນດິນ ແລະໃນເຣືອນ ແล้ວຕັ້ງທ່າແນເປົ້າປືນໃສ່ທະຫານເສື້ອແດງ. ພວກຊາວໄຮ່ຊາວ ນາຫມົດທຸກຄົນ ທີ່ອາໄສຢູ່ຕາມເຂດບ້ານນອກ ໄດ້ຕໍ່ສູ້ຢ່າງເອົາຕາຍ ແລະໃນການສູ້ຣົບຄັ້ງທຳອິດຂອງການປະຕິວັດນີ້ ກອງທະຫານອັງກິດ ຊຶ່ງມີພົນທະຫານເຖິງສອງພັນຫ້າຮ້ອຍຄົນໄດ້ຮັບຄວາມເສັຍຫາຍຢ່າງ ໃຫຍ່ຫລວງ ຊຶ່ງທະຫານອັງກິດໄດ້ເສັຍຊີວິດໃນການສູ້ຣົບຄັ້ງນີ້ຫລາຍ ກວ່າຊາວອານານິຄົມຕັ້ງສາມເທົ່າ.

## <u>ສະພາກົງແກຣສ້ພິຈາຣະນາເຣື່ອງເອກຣາຊ</u>

ຂ່າວຂອງການສູ້ຣົບໃນບ້ານ ເລກຊຶງຕັນ ແລະກົງກອກໄດ້ ແຜ່ຜາຍໄປທົ່ວທຸກໆອານານິຄົມ ແລະຊາວອານານິຄົມ ທັງຫລາຍ ມີ ຄວາມຮູ້ສຶກເຫມືອນຖືກໄຟຟ້າຈັບ ເປັນທີ່ເຫັນຢ່າງແຈ່ມແຈ້ງແล้ວວ່າ ສົງຄາມອັນແທ້ຈິງໄດ້ມາຮອດຫົວບ້ານແล้ວແລະສັນຍານປ່າວປະກາດ ພາວະສົງຄາມທົ່ວທຸກສິບສາມອານານິຄົມ ໂດຍອ້າງອິງໃສ່ສະພາບ ຄວາມເປັນຈິງທີ່ເກີດຂຶ້ນໃນບ້ານ ເລກຊຶງຕັນ, ໄດ້ເຕືອນໃຫ້ທຸກໆ ຄົນຢູ່ໃນທ່າຕຽມພ້ອມ ເພື່ອເປັນການປ້ອງກັນ. ໃນຣະຍະຊາວວັນ ຂອງການຕໍ່ສູ້ ຂ່າວກ່ຽວກັບເຣື່ອງນີ້ ກໍກາຍເປັນຂ່າວເປົ່າປົ່ວຫລາຍ

ແນວຊຶ່ງອາດເກີນຄວາມເປັນຈິງໄປກໍມີ ຊຶ່ງເຣື່ອງນີ້ສາມາດປຸກໃຈ
ປະຊາຊົນທົ່ວໄປເປັນທີ່ສຸດ ແລະໄດ້ມາໃຫ້ເກີດນຳ້ໃຈຮັກຊາດຢ່າງ
ແຮງກ້າຂຶ້ນ ຕັ້ງແຕ່ແຖບເມືອງ ເມນຫາເມືອງຊອກເຈັຍ. ໃນ
ຂນະທີ່ເຕືອນໃຫ້ປະຊາຊົນຊາບ ເຖິງອັນຕຣາຍ ທີ່ບ້ານເລກຊິງຕັນ
ແລະກົງກອກນັ້ນ ສະພາກົງແກຣສ່ ແຫ່ງທະວີບນີ້ໄດ້ເອີ້ນປະຊຸມຄັ້ງທີ
ສອງຂຶ້ນໃນວັນທີ ๑๐ ພືສພາ ๑ກກ๕. ທ່ານຈອນແຣນຄອກ ພໍ້ຄາ
ຜູ້ມັ່ງມີຂອງເມືອງບອສຕັນ ໄດ້ເປັນປະທານ ໃນກອງປະຊຸມເທື່ອນີ້
ແລະທ່ານທອມມັສ ເຈພເຟີຊັນ ກໍເຂົ້າຮ່ວມປະຊຸມເຫມືອນກັນ ແລະ
ນອກຈາກນັ້ນກໍມີທ່ານເບນຈາມິນ ແຟຣງຄລິນ ຊຶ່ງເປັນທີ່ນັບຖື ຂອງ
ຄົນທັງຫລາຍ ຫາກໍກັບມາຈາກ ລອນດອນ ຊຶ່ງທ່ານໄດ້ເປັນຕົວແທນ
ຂອງອານານິຄົມຫລາຍບ່ອນແລະໄດ້ພຍາຍາມຜູກມິດກັບຕ່າງປະເທດ
ຢ່າງບໍ່ໄດ້ຜົນ. ການປະຊຸມຄັ້ງນີ້ບໍ່ໄດ້ຕຽມມາກ່ອນ ແລະໄດ້ຮຽກ
ປະຊຸມເພື່ອປຶກສາຫາລືເຣື່ອງການທຳສົງຄາມ ເຖິງແມ່ນວ່ານີສະມາ
ຊິກບາງຄົນຄັດຄ້ານຕໍ່ການທຳສົງຄາມນີ້ກໍຕາມ ແຕ່ຕາມບັນຍາກາດ
ອັນແທ້ຈິງ ຂອງສະພາກົງແກຣສ່ແລ້ວ ຍອມຮັບວ່າ ເປັນເຫດແລະ
ຄວາມຈຳເປັນທີ່ສຸດ ໃນການລຸກຂຶ້ນຖືປືນຕໍ້ສູ ຊຶ່ງທ່ານດິກກິນຊັນແລະ
ທ່ານເຂມເຟີຊັນໄດ້ກ່າວໄວ້ວ່າ:

"ເຫດຜົນຂອງເຮົາເປັນທັມ ການທ້ອນໂຮມຂອງພວກເຮົາ
ເປັນສິ່ງສົມບູນດີ ຊັພຍາກອນຂອງພວກເຮົາມີຫລາຍ ແລະຖ້າຈຳ

ເປັນ ເຮົາອາດຂໍຄວາມຊ່ວຍເຫລືອຈາກຕ່າງປະເທດ ພວກເຮົາຖືກ
ສັດຕູບັງຄັບ ແລະຈະໃຊ້ປືນນີ້ສຳລັບຕໍ່ສູ້ເພື່ອຮັກສາໄວ້ ຊຶ່ງເສຣີພາບ
ແລະຄວາມຮູ້ສຶກນຶກຄິດ ຊຶ່ງເປັນຂອງພວກເຮົາເອງ. ພວກເຮົາ
ຍອມຕາຍເພື່ອຈະໄດ້ພົ້ນຈາກການມີຊີວິດຢ່າງເປັນທາສເຂົາ".

ແມ່ນວ່າຄຳປະກາດຂ້າງເທິງນີ້ຍັງຖືກຖຽງກັນຢູ່ ສະພາ ກົງ
ແກຣສ່ໄດ້ສັ່ງໃຫ້ກອງທະຫານອາສາສມັກເຂົ້າປະຕິບັດຫນ້າທີ່ ແລະ
ແຕ່ງຕັ້ງທ່ານ ຈອກຊ່ ວໍຊິງຕັນ ໃຫ້ເປັນແມ່ທັບກຳລັງທະຫານອະເມ
ຣິກັນ. ຄວາມກ້າຫານ ບວກກັບທ່າທາງອັນສງ່າຜ່າເຜີຍຂອງທ່ານ
ພາໃຫ້ທ່ານເປັນບຸຣຸສ ຜູ້ມີສີມີຊັ້ນນຳຜູ້ນຶ່ງ. ກິເລສ ແລະຄວາມອົດ
ທົນຂອງທ່ານມີເກີງກັນສເມີ ແລະທ່ານເປັນຕົວຢ່າງທີ່ດີຂອງການມີ
ຄວາມປະພຶດດີ ແລະຄວາມກ້າຫານໃນຕົວ ຄວາມສາມາດໃນການ
ເປັນຜູ້ນຳຂອງທ່ານ ຍອດຢ້ຽມທີ່ສຸດ ແລະການຕັດສິນໃຈຂອງທ່ານ
ຮອບຄອບດີ ຊຶ່ງທັງຫມົດນີ້ພາໃຫ້ທ່ານມີຊື່ສຽງໂດ່ງດັງທີ່ສຸດ. ຄວາມ
ນຶກຄິດອັນເລິກເຊິ້ງຂອງທ່ານ ໄດ້ຍົກຖານະຂອງທ່ານໃຫ້ເຂົ້າຂັ້ນຄົນ
ສລາດເລິດໃນດ້ານຄວາມເຊື່ອຖື ເພາະທ່ານຍຶດຫມັ້ນໃນຄວາມຄິດ
ອັນດຽວ, ແນ່ວແນ່ ແລະຫມັ້ນຄົງທີ່ສຸດ. "ການຜ່າຍແພ້ ເປັນ
ພຽງເຫດຜົນອັນນຶ່ງ ຂອງການອອກເຮື່ອແຮງ" ແລະທ່ານໄດ້ຂຽນ
ຕອນນຶ່ງອີກວ່າ "ພວກເຮົາຈະເຮັດໃຫ້ດີກວ່ານີ້ອີກເທື່ອຫນ້າ".

ກຳລັງໃຈ ແລະພອນສວັນ ທີ່ທ່ານວໍຊິງຕັນ ມີໃນການບັນຊາ

ການທະຫານນີ້ ແມ່ນລັກສນະຂອງໄຊຊນະໃນປີຕໍ່ມາ.

ແມ່ນວ່າໄດ້ແຕ່ງຕັ້ງແມ່ທັບແລ້ວກໍຕາມ ແຕ່ຄວາມຄິດໃນການ ແຍກອອກຈາກປະເທດອັງກິດ ຫລືຕັດຂາດຈາກປະເທດອັງກິດນັ້ນຍັງ ມີສະມາຊິກຫລາຍທ່ານ ຂອງສະພາກົງແກຣສ້ ຄິດວ່າບໍ່ເຫມາະສົມ ແລະປະຊາມະຕິກໍຍັງບໍ້ພອມທີ່ຈະຮັບເອົາວິທີການອັນຮູນແຮງນີ້ ຊຶ່ງ ເປັນທີ່ຈະແຈ້ງແລ້ວວ່າ ຊາວອານານິຄົມ ຈະຢູ່ເຄີ່ງໆກາງໆບໍ່ໄດ້. ເຂົາເຈົ້າໄດ້ອອຍໃຈຕົນເອງໂດຍຄິດວ່າ ເຂົາເຈົ້າບໍ່ໄດ້ຕໍ້ສູ້ຄັດຄ້ານ ເຈົ້າຊີວິດແຕ່ຢ່າງໃດ ເຂົາເຈົ້າພຽງແຕ່ຕໍ້ສູ້ກັບກະຊວງທະບວງກົມ ຕ່າງໆເທົ່ານັ້ນ ແລະໃນປາຍເດືອນມະກະຣາປີ ຈກກຝ ຢູ່ທີ່ສະໂມ ສອນທະຫານໄດ້ມີການດື່ມ ເພື່ອເປັນກຽດຂອງພຣະເຈົ້າມະຫາຊີວິດ ນາໍໂດຍນາຍພົນວໍຊິງຕັນ.

## <u>ມະຕິທີ່ບໍ່ລົງລອຍກັນ</u>

ຫລາຍເດືອນຜ່ານມາ ຄວາມຫຍຸ້ງຍາກຕ່າງໆ ກ່ຽວກັບການ ທາໍສົງຄາມຍັງດາໍເນີນຢູ່ຕໍ່ໄປ ໃນຂນະທີ່ຍັງຢູ່ໃນການຄຸ້ມກັນຂອງຈັກ ພັດ. ສ່ວນທາງປະເທດອັງກິດກໍບໍ່ໄດ້ຍອມປານີປານອມແຕ່ຢ່າງໃດ ແລະໃນເດືອນສິງຫາປີ ຈກກ໕, ພຣະເຈົ້າ ຈອກຊ້ ກໍປະກາດວ່າ ພວກອານານິຄົມກາໍລັງຢູ່ໃນຂັ້ນເປັນຂະບົດ ຕໍ່ຈາກນັ້ນມາເປັນເວລາ ຫ້າເດືອນ ທ່ານ ທໍມັສ ເພນ ກໍໄດ້ຂຽນບົດຄວາມ ຊຶ່ງມີຄວາມຍາວ

ເຖິງຫ້າສິບໜ້າ ກ່ຽວກັບເຣື່ອງຄວາມນຶກຄິດອັນເລິກເຊິ້ງ ແລະໄດ້ ພິມອອກຈຳໜ່າຍແກ່ສາຍຕາຂອງປວງຊົນທັງຫລາຍເມື່ອງຈາກ ວ່າ ການຂຽນອັນຈັບຈິດຈັບໃຈຂອງທ່ານ ໄດ້ພາໃຫ້ປະຊາຊົນເຫັນຄວາມ ຈຳເປັນຂອງການໄດ້ມາ ຊຶ່ງເອກຣາຊ. ໂດຍການເຣັດໃຫ້ປະຊາ ຊົນຫລິ້ງເຫັນຊຸປສັກອັນໃຫຍ່ຫລວງ ໃນພາຍຄັ້ງໜ້າ ທ່ານເພນໄດ້ ໂຈມຕີພຣະເຈົ້າມະຫາຊົວິດ ຊຶ່ງເປັນທີ່ສັກກາລະບູຊາຂອງປະຊາຊົນ ໂດຍແນບຄວາມຄິດເຂົ້າໄປວ່າ ຄົນຜູ້ນຶ່ງທີ່ຊໍ່ສັດ ຍັງມີຄຸນຄ່າຕໍ່ສັງຄົມ ຫລາຍກວ່ານັກເລງທັງໝົດ ຊຶ່ງເປັນເຊື້ອພະວົງທີ່ຍັງເຫລືອຢູ່ ທ່ານ ເພນໄດ້ອ້າງເຖິງການເປັນຂ້າທາດຂອງພຣະເຈົ້າມະຫາຊົວິດ ແລະ ຣັຖບານນີ້ມານານແລ້ວແລະຍັງຈະດຳເນີນຢູ່ໄປຈົ່ງຊົ່ວ ຫລ່ວ່າປະຊາ ຊົນຈະຊອກຫາເສຣີພາບ ຄວາມສຸກ ແລະສາທາຣະນະຣັຖ ທີ່ມີເອກ ຣາຊໂດຍສົມບູນ ເປັນຂອງຕົວເອງ. ບໍ່ຕ້ອງເວົ້າກໍຮູ້ວ່າ ໜັງສື ເຫລັ້ມນ້ອຍນີ້ມີອິດທິພົນພຽງໃດ. ໃນຣະຍະບໍ່ພໍເທົ່າໃດເດືອນໜັງ ສືນ້ອຍດົ່ງກ່າວນີ້ມີຈຳນວນຫລາຍພັນສບັບກໍໄດ້ຖືກສົ່ງໄປທົ່ວທຸກອາ ນິຄົມ ເພື່ອເຣັດໃຫ້ປະຊາຊົນເຂົ້າໃຈແຈ່ມແຈ້ງ ໃນການຕັດສິນໃຈ ແລະຊຸມນຸມສິ່ງທີ່ບໍ່ທັນຕັດສິນໃຈຫລືຄວາມລັງເລໃຈ.

ມາບັດນີ້ ປະຊາຊົນເລີ່ມມີຄວາມເຫັນປະສົມກັນກັບຄວາມຄິດ ເຣື່ອງເອກຣາຊ ແຕ່ພາລະອັນໃຫຍ່ຫລວງກໍຍັງມີຢູ່ຄືຄວາມເຫັນພ້ອມ ຂອງແຕ່ລະອານານິຄົມ ເພື່ອຈະປະກາດການແຍກອອກຈາກປະເທດ

ອັງກິດຢ່າງເປັນທາງການ. ທ່ານເພນ ໄດ້ຊີ້ໃຫ້ເຫັນວ່າ ຊາວອານານິຄົມ ທັງຫລາຍ ໄດ້ຢູ່ໃນ "ສຸດຍອດຂອງຄວາມບໍ່ລົງລອຍກັນ" ເຂົາເຈົ້າເປັນຂະບົດໂດຍແທ້ ຊຶ່ງມີກອງທັບບົກ ແລະກອງທັບເຮືອ ແລະມີຣັຖບານຊຶ່ງບໍ່ຣັບຮູ້ຣັຖສະພາ ແລະພຣະມະຫາກະສັດ. ເມື່ອ ມາເຖິງຂັ້ນນີ້ແລ້ວ ຖ້າວ່າຊາວອານານິຄົມບໍ່ດຳເນີນການຈົນເຖິງຈຸດ ຫມາຍປາຍທາງແລ້ວກໍປຽບເຫມືອນວ່າ ເຂົາເຈົ້າບໍ່ມີຄວາມສາມັກຄີ ກັນ.

ການຕົກລົງຮ່ວມກັນໄດ້ປາກົດມີຂຶ້ນວ່າ ທາງສະພາກົງແກຣສ້ ຂອງທະວີບນີ້ຈະບໍ່ເຮັດແນວໃດລົງໄປ ຊຶ່ງເປັນການຕັດສິນໃຈຂັ້ນສຸດ ທ້າຍ ແຕ່ລຳພັງ ເຊັ່ນວ່າ ການປະກາດເອກຣາຊ ໂດຍບໍ່ໄດ້ຣັບ ຄວາມເຫັນຊອບ ຈາກຊາວອານານິຄົມເສັຍກ່ອນ. ແຕ່ໃນການປະ ຊຸມປະຈຳວັນ ທາງສະພາກົງແກຣສ້ ໄດ້ຍິນທຸກມື້ກ່ຽວກັບເຣື່ອງການ ຈັດຕັ້ງຣັຖບານໃຫມ່ຂອງຊາວອານານິຄົມທີ່ຢູ່ເຫນືອກົດຫມາຍ. ໃນ ເວລາດຽວກັນນີ້ ສະມາຊິກທີ່ມີອິດທິພົນເຫນືອຢູ່ໃນສະພາ ກົງແກຣສ້ ກໍໄດ້ເພີ້ມການສນັບສນູນຄນະກັມມະການທີ່ອ່ອນແອ ແລະໄດ້ຊັກຊວນ ໃຫ້ມີການຟື້ນຟູຄວາມຣັກຊາດໃຫ້ຫລາຍຂຶ້ນ.

ແລ້ວຕໍ່ມາ ໃນວັນທີ ๑๐ ພືສພາ ๑ກກຝ ກອງປະຊຸມໄດ້ມີ ການລົງເອົາມະຕິ ການຕັດສັມພັນຈາກປະເທດອັງກິດແລະສິ່ງທີ່ຕ້ອງ ປະຕິບັດໃນຂນະນີ້ ກໍຄືການປ່າວປະກາດຢ່າງເປັນທາງການ. ໃນ

ວັນທີ ກ ມີຖຸນາ ປີດຽວກັນນັ້ນ ທ່ານອິຊາດ ແຮນຣີ ລີ ຊຶ່ງຕັ້ງຖິ່ນ ຖານຢູ່ເມືອງ ເວີຊີເນັຍ ແລະເປັນຜູ້ນຳໃນເມືອງນີ້ ໄດ້ສເນີປະຕິ ສນັບສນູນການເປັນເອກຣາຊ ເປັນພັນທະມິດກັບຕ່າງປະເທດ ແລະ ເປັນສະຫະພັນອະເມຣິກັນ. ໂດຍບໍ່ລໍ້ຊ້າຄນະກັມມະການຊຸດນຶ່ງໄດ້ ຖືກແຕ່ງຕັ້ງຂຶ້ນ ເພື່ອຈັດຕຽມການປະກາດເອກຣາຊ ຢ່າງເປັນທາງ ການ ແລະຄນະກັມມະການນີ້ ປະກອບດ້ວຍສະມາຊິກຫ້າທ່ານ ພາຍ ໃຕ້ການນຳຂອງທ່ານ ທັມັສ ເຈຟ ເຟີຊັນ ຊຶ່ງມີໜ້າທີ່ລຽບລຽງ ຮ່າງເອກສານຕ່າງໆ. ນອກຈາກການ ເປັນຊາວເວີຊີເນັຍແລ້ວ ທ່ານ ເຈຟເຟີຊັນ ມີອາຍຸສາມສິບປີ ແລະມີຊື່ສຽງໂດ່ງດັງໄປຮອດ ເມືອງຟີລາເດລເຟັຍ. ເຖິງແມ່ນວ່າທ່ານຈະເກີດຢູ່ນອກວົງຕະກູນ ຊຸນນາງຂອງເມືອງເວີຊີເນັຍ ຊີວິດຂອງທ່ານ ແຕ່ຍັງໜຸ່ມນ້ອຍຢູ່ກໍ ຕາມການຢູ່ຢ່າງມີປະຊາທິປະໄຕ ດັ່ງນັ້ນທ່ານຈຶ່ງກຽດຊັງສິດທິຂອງ ພວກຊຶນຊັ້ນຊຸນນາງທັ້ງຫລາຍ.

ການຍຶ້ມ ລ້າສັດ ແລະສິ່ງເປັນສິ່ງທີ່ທ່ານເຈຟເຟີຊັນມັກທີ່ ສຸດ ແມ່ນວ່າທ່ານຈະໃຊ້ເວລາວ່າງຂອງທ່ານໄປໃນທຳມອງນີ້ກໍຕາມ ແຕ່ນີ້ບໍ່ໄດ້ຫມາຍຄວາມວ່າທ່ານຝັກໃຝ່ໃນການສແວງຫາວິຊາຄວາມຮູ ທ່ານເຈຟເຟີຊັນຮູ້ດີວ່າ ການປະກາດເອກຣາຊນີ້ຈະນຳພາໃຫ້ອະເມ ຣິກາພົບກັບສົງຄາມອັນໂຫດຮ້າຍ ແຕ່ທ່ານກໍເຊື່ອວ່າ ຕົ້ນຕໍແຫ່ງເສຣີ ພາບຈະຕ້ອງໃຫ້ພົ້ມຢູ່ດ້ວຍເລືອດຂອງຜູ້ຮັກຊາດເລື້ອຍໆ.

ໃນເວລານັ້ນ ຣະບົບການປົກຄອງຂອງຣັຖບານ ບໍ່ທັນແໜ້ນ ໜາພໍທີ່ຈະເອົາມາປົກຄອງກັນຕໍ່ໄປໄດ້ ທ່ານເຈຟເຟີຊັນຈຶ່ງມີຄວາມ ເຫັນວ່າຄວາມໝັ້ນຄົງຖາວອນຂອງຣັຖບານນັ້ນ ຂຶ້ນຢູ່ກັບປະຊາຊົນ. ການປົກຄອງໂດຍບຸກຄົນກຸ່ມນ້ອຍນັ້ນ ເປັນການເບິ່ງຂ້າມຄວາມຮ່ວມ ໄມ້ຮ່ວມມືຂອງປະຊາຊົນ ຊຶ່ງຂັດຕໍ່ຄວາມປະສົງຂອງປະຊາຊົນສ່ວນ ໃຫຍ່ ດັ່ງນັ້ນເພື່ອປະຕິບັດໃຫ້ຖືກຕ້ອງຕາມຫລັກການ ຊຶ່ງບົ່ງໄວ້ໃນ ຄຳປະກາດນັ້ ທ່ານ ເຈຟເຟີຊັນໄດ້ຂຽນທຸກສິ່ງທຸກຢ່າງລົງໃນຄຳປະ ກາດ ຕາມຄວາມປະສົງນຶກຄິດຂອງປະຊາຊົນ. ທ່ານໄດ້ໃຊ້ພາສາ ແລະຄວາມນຶກຄິດຮ່ວມກັນເປັນສ່ວນປະກອບອັນສຳຄັນ ວ່າດ້ວຍການ ປະກາດເອກຣາຊ ຊຶ່ງເຮື່ອງນີ້ທ່ານໄດ້ເຣັດໃຫ້ປະຊາຊົນໃນທະວີບນີ້ ຮູ້ສຶກພາກພູມໃຈທີ່ສຸດ.

## ການປະກາດເອກຣາຊ

ການປະກາດເອກຣາຊຢ່າງເປັນທາງການ ໄດ້ມີຂຶ້ນໃນວັນທີ ๔ ກໍຣະກະດາ ๑๗๗๖ ອັນນີ້ບໍ່ເປັນພຽງແຕ່ການປ່າວປະກາດຂອງ ການເກີດຂອງຊາດໃໝ່ເທົ່ານັ້ນ ແຕ່ຍັງເປັນການຟື້ນຟູ ເສຣີພາບ ຂອງປະຊາຊົນຂອງໂລກຕະວັນຕົກອີກດ້ວຍ. ນີ້ບໍ່ໄດ້ໝາຍເຖິງບຸກ ຄົນບາງຄົນເທົ່ານັ້ນ ແຕ່ໝາຍເຖິງຣາກຖານຂອງການເປັນຈິງຊຶ່ງ ແມ່ເສຣີພາບ ຂອງສ່ວນບຸກຄົນ ທຸກໆຄົນ. ເຣື່ອງນີ້ໄດ້ຮັບການ

ສນັບສນູນຈາກປະຊາຊົນທັງປະເທດແລະນະໂຍບາຍການເມືອງທີ່ໄດ້ປະກາດມີດັ່ງນີ້.

"ພວກເຮົາຖືຄວາມຈິງເຫລົ່ານີ້ເປັນຫລັກຖານຂອງຕົນເອງຄື ມະນຸດທຸກຄົນເກີດມາເທົ່າທຽມກັນຫມົດ ຜູ້ສ້າງມະນຸດໄດ້ປະທານສິດໃຫ້ແກ່ມະນຸດ ຊຶ່ງບໍ່ອາດສາມາດຈະໂອນໃຫ້ກັນໄດ້ນັ້ນ ຄືຊີວິດ ເສຣີພາບ ແລະການສແວງຫາຄວາມສຸກ. ເພື່ອປົກປັກຮັກສາ ສິດທິເຫລົ່ານີ້ໄວ້ ຣັຖບານໄດ້ຕັ້ງຂຶ້ນມາ ເພື່ອເບີ່ງແຍງຄວາມເປັນຢູ່ຂອງປະຊາຊົນແລະບ້ານເມືອງ ເມື່ອໃດປະຊາຊົນຫາກເຫັນວ່າຣັຖບານກຳລັງຈະທຳລາຍສິດທິເຫລົ່ານີ້ ເຂົາເຈົ້າກໍຄວນຢຸດຢັ້ງການກະທຳເຊັ່ນນີ້ເສັຍແລ້ວຈັດຕັ້ງຣັຖບານໃຫມ່ໃຫ້ປະຕິບັດຫນ້າທີ່ນີ້ຕໍ່ໄປເພື່ອຮັກສາໄວ້ຊຶ່ງຫລັກການອັນແທ້ຈິງຂອງການປະກາດເອກຣາຊ".

ຄວາມຈິງເຫລົ່ານີ້ ບໍ່ແມ່ນແຕ່ຢູ່ໃນຄວາມນັກຄິດ ຂອງທ່ານເຈພເຟີຊັນ ເທົ່ານັ້ນ ແຕ່ຍັງໄດ້ຈັດເປັນຫລັກການຂອງນະໂຍບາຍການເມືອງ ໃຫ້ເປັນຫລັກຖານຂອງຕົນເອງຕໍ່ຄົນຮຸ່ນດຽວກັນກັບທ່ານ ແລະບຸກຄົນອື່ນໆ ໃນຮຸ່ນຕໍ່ມາ. ທີ່ມາຂອງຄວາມຄິດ ບາງສິ່ງບາງຢ່າງແລະການໃຊ້ຖ້ອຍຄຳຕ່າງໆນັ້ນທ່ານເຈພເຟີຊັນໄດ້ເບີ່ງຈາກຜົນງານຂອງນັກການເມືອງຊາວອັງກິດ ທີ່ມີຊື່ວ່າເຈມສ້ແຮຣິງຕັນ ແລະຜົນງານຂອງທ່ານ ຈອນລອກສ້ ຊຶ່ງມີຊື່ວ່າ "ຕຳຣາສບັບທີສອງກ່ຽວກັບເຣື່ອງຣັຖບານ" ແຕ່ທີ່ມາຂອງພລັງຂອງເອກສານນີ້ ພາໃຫ້ຄົນ

ຕົ້ນຕໍວ່າຣັຖບານມີຄວາມເປັນຢູ່ເພື່ອຮັບໃຊ້ປະຊາຊົນ ບໍ່ແມ່ນປະຊາ
ຊົນ ຢູ່ເພື່ອຜົນປະໂຍດ ຂອງຣັຖບານ. ໃນຄວາມຮູ້ສຶກ ຂອງທ່ານ
ເຈຟ ເຟີຊັນນັ້ນ ຣັຖບານມີໜ້າທີ່ແລະຈຸດປະສົງທີ່ຈະປ້ອງກັນ ຊີວິດ
ເສຣີພາບ ແລະການສແວງຫາຄວາມສຸກຂອງປະຊາຊົນ ບໍ່ແມ່ນ ຈະ
ນຳເອົາເຈົ້າໃຫ້ກະທຳໃນສິ່ງທີ່ຜິດ.

ການປະກາດເອກຣາຊນີ້ ມີຈຸດປະສົງເລີກໄປກວ່າການປ່າວ
ປະກາດ ໃຫ້ປະຊາຊົນຮູ້ເຖິງການແຍກອອກຈາກຕ່າງປະເທດ ນັ້ນຄື
ການສະແດງອອກ ຊຶ່ງຄວາມຮູ້ສຶກອັນແຮງກ້າຂອງປວງຊົນ ເຖິງສາ
ເຫດຂອງຊາວອະເມຣິກັນ ແລະໄດ້ນຳເອົາຄວາມຄິດໃໝ່ເຂົ້າມາສູ່
ຈິດໃຈຂອງຕົນຄືເສຣີພາບຂອງສ່ວນບຸກຄົນ ຣັຖບານໂດຍປະຊາຊົນ
ແລະຖືເປັນບ່ອນສະງ່າຜ່າເຜີຍໃນສັງຄົມ. ແລະໂດຍການຮ່ວມຈຸດ
ສົນໃຈຂອງເຂົາເຈົ້າທັງໝົດໃສ່ການຟ້ອງສານຂອງເຈົ້າຊີວິດອັງກິດ
ຄືພຣະເຈົ້າ ຈອກຊ໌ທີສາມ, ການປະກາດເອກຣາຊນີ້ ໄດ້ກາຍເປັນ
ການຂັດແຍ້ງ ແລະການແຂ່ງດີຂອງສ່ວນບຸກຄົນ. ບໍ່ແມ່ນເປັນການ
ປະທ້ວງຮູບປັ້ນທີ່ບໍ່ມີວິນຍານຂອງຣັຖສະພາ ແຕ່ເປັນການຕໍ່ສູ້ກັບສັດຕູ
ດ້ວຍເລືອດເນື້ອ ເພື່ອເປັນການຊີ້ແຈງເຫດຜົນດັ່ງກ່າວນີ້ໃຫ້ປະຊາ
ຊົນຮູ້ເຖິງສາເຫດແລະຜູ້ທີ່ເປັນສັດຕູຕໍ່ຕົນແລະຄວາມຄິດ ຄວາມເຫັນ
ໃນຄຳປະກາດເອກຣາຊນີ້ໄດ້ກະຕຸ້ນເຕືອນປະຊາຊົນໃຫ້ມີນ້ຳໃຈປະຕິ
ວັດ ຊຶ່ງກາຍເປັນກຳລັງອັນເຂັ້ມແຂງອັນນຶ່ງ ສຳລັບການເຂື່ອນໄຫວ

ຂອງປະຊາຊົນ.

ສົງຄາມປະຕິວັດໄດ້ຍຶດເຍື້ອໄປຮອດຫົກປີ ໂດຍມີການສູ້ຮົບ ໃນທຸກໆອາມານິຄົມ ປະມານສິບກວ່າບ່ອນ ຊຶ່ງນັບວ່າເປັນສນາມຮົບ ທີ່ສຳຄັນແລະກ່ອນການປະກາດເອກຣາຊນີ ກໍໄດ້ມີການປະຕິບັດທາງ ດ້ານທະຫານ ຊຶ່ງມີອົດທິພົນເຊື່ອມຊຶມເຂົ້າໄປ ຍັງການກໍ່ສົງຄາມຢູ່ ກ່ອນແລ້ວ ເຊັ່ນວ່າການປະທະກັນທີ່ເມືອງ ແຄໂຣໄຣນາ ທາງ ເໜືອຣະຫວ່າງພວກຊາດນິຍົມໃນເດືອນກຸມພາ ໑໙໙໗ ແລະຕໍ່ມາ ໃນເດືອນມີນາຂອງປີດຽວກັນນີ້ກໍມີການປະທະກັນກັບກອງທະຫານອັງ ກິດ ທີ່ກຳລັງເຄື່ອນທີ ອອກຈາກບອສຕັນ. ຫລາຍເດືອນຕໍ່ມາຫລັງ ຈາກປະກາດເອກຣາຊແລ້ວ ຊາວອະເມຣິກັນໄດ້ພົບກັບອຸປສັກຫລາຍ ແນວ ນຶ່ງໃນນີ້ ແມ່ນໃນເມືອງນິວຢອກ ຊຶ່ງທ່ານ ວໍຊິງຕັນໄດ້ຄາດ ການລ່ວງໜ້າຢ່າງຖືກຕ້ອງວ່າ ເມືອງນິວຢອກ ເປັນເມືອງສຳຄັນ ເມືອງນຶ່ງ ໃນການສົ່ງສິ່ງຂອງແລະກຳລັງໜຸນໄປຊ່ວຍເມືອງນິວອິງ ແລນດ໌ ສະນັ້ນເມືອງນີ້ ຈຶ່ງກາຍເປັນເປົ້າໝາຍອັນສຳຄັນ ໃນດ້ານ ການທະຫານຂອງອັງກິດ ແຕ່ນາຍພົນເຊີວິລລຽມໂຮ ແມ່ທັບທະຫານ ອັງກິດບໍ່ໄດ້ຮີບຮ້ອນໃນເຣື່ອງນີ້ແຕ່ຢ່າງໃດ ດ້ວຍການຢາກເປັນມິດ ກັບອະເມຣິກາຕໍ່ໄປ ທ່ານຈຶ່ງໄດ້ໃຊ້ນະໂຍບາຍຜ່ອນຜັນ ຄືທ່ານໄດ້ ປ່າວເຕືອນຊາວອະເມຣິກັນ (ຊຶ່ງຊາວອັງກິດຖືວ່າກຳລັງເປັນຜູ້ກະ ບົດຢູ່) ໃຫ້ຢຸດການສູ້ຮົບ ແລ້ວຈະໄດ້ຮັບການອະໄພຈາກເຈົ້າຊີວິດ

ແຕ່ແນວໃດກໍດີ ທ່ານບໍ່ໄດ້ປະກັນສິດເສຣີພາບຂອງເຂົາເຈົ້າແຕ່ຢ່າງ
ໃດ. ຂໍ້ສເນີຂອງທ່ານນີ້ກໍຖືກປະຕິເສດ ແລ້ວຈາກນັ້ນມາກອງທັບ
ອັງກິດ ຊຶ່ງມີພົນທະຫານສາມສິບພັນຄົນ ໄດ້ທຳການບຸກກອງທັບບົກ
ຂອງທ່ານວໍຊິງຕັນ ຊຶ່ງມີພົນທະຫານພຽງສິບແປດພັນຄົນ.

ການຜ່ານແພ້ຫລາຍເທື່ອແລະການໄດ້ຮັບໄຊຊະນະອັນແນ່ວແນ່

ການປ້ອງກັນເມືອງນິວຢອກ ປາກົດຢ່າງແຈ່ມແຈ້ງວ່າ ບໍ່ມີ
ທາງຈະສູ້ສັດຕູໄດ້ ແຕ່ທ່ານ ວໍຊິງຕັນ ມີຄວາມຮູ້ສຶກວ່າ ທ່ານບໍ່ສາ
ມາດຈະປ່ອຍເມືອງນີ້ ໃຫ້ຕົກເປັນຂອງສັດຕູ ໂດຍບໍ່ມີການຕໍ່ສູ້ຫລືຂັດ
ຂວາງໄດ້. ຜົນຊຶ່ງຕາມມາຈາກການສູ້ຮົບເທື່ອນີ້ປາກົດວ່າ ທ່ານ
ວໍຊິງຕັນຄາດການຜິດໄປ ເພາະແມ່ທັບບໍ່ໄດ້ປະຕິບັດການຕາມໜ້າທີ່
ແລະນອກນີ້ແລ້ວກອງທັບຂອງອັງກິດ ຍັງມີກຳລັງເໜືອກວ່າອີກຢ່າງ
ຫລວງຫລາຍ. ເມື່ອບໍ່ສາມາດຕ້ານຢັ້ນແລ້ວ ທ່ານຈຶ່ງໄດ້ພາກອງ
ທັບຖອຍໜີ ແລະໄດ້ປ່ຽນວິທີໃໝ່ ຄືແບ່ງກຳລັງເປັນກຸ່ມນ້ອຍ ແລ້ວ
ລ່ອງເຮືອຈາກ ບຣຸກລິນ ລົງໄປຕາມແຄມຝັ່ງແມ່ນ້ຳ ແມນແຮດຕັນ
ຢ່າງໃດກໍດີໂຊກດີຍັງເຂົ້າຂ້າງຊາວອະເມຣິກັນຢູ່ໃນຂນະນັ້ນເກີດມີ
ລົມພັດຂຶ້ນເມື່ອທາງເໜືອແລະເຮືອຮົບຂອງອັງກິດບໍ່ສາມາດລ່ອງລົງ
ມາຕາມແມ່ນ້ຳທາງພາກຕະວັນອອກ ທ່ານນາຍພົນ ຣາວ ຈຶ່ງບໍ່ມີໂອ
ກາດຮູ້ວ່າ ມີຫຍັງເກີດຂຶ້ນໃນເຂດນີ້ ແລະທ່ານໄດ້ເສັຍໂອກາດອັນ

ใหย่หลวงในภานเจธะจาภับจุาวอะเมธิภัม ฉึ่งอาถจะเป็ม จุ่องทาง ให้มีภานติภลิง หลีบางที้ถ้วยสันติวิทีได้. ทังนี้ภ็ เพาะว่าถ้าว่า ภองทับของท่านวํจุิงติม ถึภจับในเวลานั้ม ภ็ เป็นภานยาภที่สุถ ที่ทางสะพาภิงแภธส์ จะจุอภหาพิมทะหาม เพื่อทิบแทนภองทับถั่งภ่าวนี้.

ท่านวํจุิงตัม ได้พยายามทุภวิทีทางที่จะติเอิาลืม แต่บ่ี เป็นผิมสำเธัถ จิมธอถปายปีพุ้ม จึ่งสามาถเอิาไจุจุมะได้ที่ เมืองง เตัธมเติม และ ปธิมจุ์ ตัม ฉึ่งไจุจุมะเที่อนี้ พาให้ จุาวอามานิลิมมีลวามหวังอี้มหลาย ต่ำมาลวามหายมะได้เภิถ แภ่จุาวอะเมธิภัมอีภเที่อนึ่งลี ในเถือมภัมยา ๑ภภภ มายพิม ธาว ได้ยึถเมืองง ฟิลลาเถลเฟีย และได้เธัถให้สะพาภิง แภธส์ ถึภยิภย้าย และปะให้ท่านวํจุิงตัม และภำลังพิมของ ท่านทิมหมาวย่างผิถหวัง ที่ธ่อมพู ฟอภจุ์. ทะหามผู้ธัภจุาถ เหลี่านี้ สามาถทิมหมาวยู่ได้ ถ้วยภามฝิงไฟที่ถ้ายและหลาย ลิมภ็เสียจุิวิถไปย้อมทิมหมาวบ่ำได้.

ต่ำมาในธะถูใบไม้ลิ่มของปี ๑ภภภ นี้ จุาวอะเมธิภัม ได้ธับไจุจุมะอันยิ่งใหย่ทังหมิถในภานทำสิงลาม ฉึ่งยู่ในธะ ถับภานปฐมแปง จาภภานปะติวัถ มาเป็นพื้มฐานของภานทะ หาม. มายพิมเบิเภล ฉึ่งเป็นแม่ทับอังภิถได้ลิงมาจาภปะ

24/VII ห้ามจำหน่าย

ເທດການາດາພ້ອມທັງກອງພົນທະຫານເພື່ອຫວັງຈະຄວບຄຸມ ຕາມ
ສາຍແມ່ນ້ຳ ຣັດຊັນ ແລະເຣັດໃຫ້ເມືອງນິວອັງແລນດ໌ ແຍກອອກ
ຈາກອານານິຄົມອື່ນຢ່າງໂດດດ່ຽວ ນາຍພົນເບີໂກລ ໄດ້ພາກອງທະ
ຫານຂອງທ່ານຂຶ້ນເມືອຕາມແມ່ນ້ຳຣັດຊັນ ແລະໄດ້ໄປລໍ້ຖ້າເຄື່ອງສະ
ບຽງຢູ່ຫົ້ນຈົນເຖິງກາງເດືອນກັນຍາກ່ອນຈະລົງໄປທາງໃຕ້. ດ້ວຍ
ການບໍ່ຊຳນານກັບພູມີປະເທດຂອງອະເມຣິກາ, ນາຍພົນ ເບີໂກລ
ຈຶ່ງຄິດວ່າຄົງຈະງ່າຍໃນການນຳພາກອງທະຫານໄປທາງບົກຂ້າມໃສ່
ເວີມອນ ແລະລັດເລາະລົງໄປຕາມແມ່ນ້ຳ ຄໍແນກຕິຄັດ ແລະຂ້າມ
ກັບຄືນມາທາງເກົ່າເພື່ອວ່າຕາມທາງໄປຈະໄດ້ເກັບເກນ້ຳປະມານ
ພັນສາມຮ້ອຍຕົວໃຫ້ທະຫານໃຊ້ຂີ່ໄປ. ພ້ອມດ້ວຍເກນເອົາງົວ ສັດ
ທີ່ໃຊ້ລາກ ແລະກວຽນສຳລັບໄວ້ຂົນເຄື່ອງຂອງກອງທະຫານແລະທັງ
ໝົດນັ້ກະເວລາໃສ່ພຽງສອງອາທິດ. ໃນຂະບວນນີ້ ນາຍພົນໄດ້
ເລືອກທະຫານມ້າ ຊຶ່ງເປັນຊາວເຢີຣະມັນ ແຕ່ຮັບໃຊ້ໃນກອງທັບອັງ
ກິດ ນຶ່ງ໔ ຄົນ ແລະທະຫານກອງໂຈນອີກ ນຶ່ງ໐໐ ຄົນ. ທະຫານ
ດັ່ງກ່າວນີ້ບໍ່ໄດ້ໄປຮອດແຖວ ເວີມອນ ເພາະວ່າຖືກກອງທະຫານອະ
ເມຣິກັນທີ່ນິນຕິໂຕ້ຕອບ ແລະມີທະຫານມ້າຈຳນວນນ້ອຍ ທີ່ສາມາດ
ກັບຄືນເມືອໄດ້ ໃນຂນະນັ້ນຊາວອະເມຣິກັນຊຶ່ງຢູ່ຕາມຮ່ອມພູ ນ້ຳຮອກ
ໄດ້ທຳການສະກັດກັ້ນ ບໍ່ໃຫ້ກອງຫນຸນຂອງອັງກິດ ທີ່ທະເລສາບເອນີ
ໄປສົມທົບກັບຫມູ່ພວກ ຂອງນາຍພົນເບີໂກລ. ການສູ້ຣົບທາງເຂດ

ເມືອງເວີນອນ ພາໃຫ້ພົລເມືອງ ທີ່ຢູ່ທາງເຫນືອ ຂອງເມືອງນີອັງ ແລນດ໌ມີກຳລັງໃຈດີຂຶ້ນ ແລະການຊັກຊ້າຂອງຂະບວນການທະຫານ ຂອງນາຍພົນເບີໂກລພາໃຫ້ທ່ານວໍຊິງຕັນສາມາດນຳກອງພົນທະຫານ ຂອງທ່ານລົງມາ ຕາມແມ່ນ້ຳຮັດຊັນທາງໃຕ້. ໃນເວລາທີ່ນາຍພົນ ເບີໂກລພາກຳລັງເຄື່ອນທີ່ ທ່ານໄດ້ພາກອງທະຫານຍ່າງຜ່ານກອງ ທະຫານອາສາສມັກຂອງພວກທີ່ຢູ່ທາງເຫນືອ ໂດຍຄວາມຫມັ້ນໃຈວ່າ ຄົນຈະໄດ້ຮັບໄຊຊນະ ໃນເທື່ອນີ້ ການສູ້ຮົບໄດ້ມີຂຶ້ນ ໃນຕອນເຊົ້າ ເດິກໆ ການໂຈມຕີຂອງນາຍພົນ ເບີໂກລທັງສອງຄັ້ງໄດ້ຖືກຕີໂຕ້ ຕອບ ແລະໄດ້ແຕກຖອຍຫນີໄປ.

ໃນຣະດູໃບໄມ້ລົ່ນ ເມື່ອຝົນເລີ່ມໂຮຍເມັດ ທະຫານມ້າໄດ້ ແຕກກະຈັດກະຈາຍຫນີແລະທະຫານອະເມຣິກັນ ກໍໄດ້ຢາຍກັນຢູ່ຕາມ ຈຸດຕ່າງໆເຊັ່ນວ່າຕາມເຂດແນວຫນ້າ ແນວຫລັງ ແລະມີຫມົດທຸກ ດ້ານດ້ວຍກຳລັງອັນລົ້ນເຫລືອ. ໃນວັນທີ ໑໗ ຕຸລາ ໑໗໗໗ ນາຍ ພົນເບີໂກລພ້ອມດ້ວຍກອງທະຫານທັງຫມົດປະມານຫ້າພັນຄົນໄດ້ເຂົ້າ ຍອມຈຳນົນ ຕໍ່ນາຍພົນເກດ ຜູ້ນຳຂອງທະຫານອະເມຣິກັນ. ເຫດ ການທັງຫມົດນີ້ ໄດ້ກາຍເປັນແປວໄຟຂອງສົງຄາມເສັຍແລ້ວ ເພາະ ວ່າມັນບໍ່ເປັນພຽງຄວາມສຳຄັນໃນທາງຍຸທສາດເທົ່ານັ້ນ ແຕ່ປະເທດ ຝຣັ່ງເສດ ແລະປະເທດອັງກິດ ຊຶ່ງເປັນສັດຕູກັນມາແຕ່ກ່ອນໆ ແລ້ວ ໄດ້ຫັນຄວາມສົນໃຈມາຍັງຝ່າຍອະເມຣິກັນ.

## ໄຊຊນະແລະຜົນສຳເຮັດໃນການໄດ້ເອກຣາຊ

ສ່ວນປະເທດຝຣັ່ງເສດໄດ້ເຝົ້າເບິ່ງແລະຄອຍຫາໂອກາດແກ້ແຄ້ນເລື່ອຍໆມາຫລັງຈາກທີ່ຕົນຖືກຜ່າຍແພ້ໃນປີ ຈກຝມ ແລະຈຸດສົນໃຈຂອງປະເທດນີ້ ເປັນຕົ້ນເຫດຂອງຊາວອະເມຣິກັນ. ປະເທດຝຣັ່ງເສດນັບວ່າເປັນປະເທດນຶ່ງທີ່ສລາດຫລັກແຫລມທີ່ບໍ່ເຫັນດີ ແລະຄັດຄ້ານລັດທິ ການເປັນເຈົ້າຂອງກັມສິດທີ່ດິນ ແຕ່ພຽງຜູ້ດຽວ ແລະຫລັງຈາກອະເມຣິກາໄດ້ປະກາດເປັນເອກຣາຊແລ້ວ ທ່ານ ເບນຈາມິນ ແຟຣງຄລິນ ກໍຖືກຕ້ອນຮັບຈາກກະສັດຝຣັ່ງເສດ ຢ່າງອົບອຸ່ນ. ຂັ້ນທຳອິດທາງຣັຖບານຝຣັ່ງເສດບໍ່ໄດ້ຕັ້ງຕົນເປັນກາງ ແລະໄດ້ໃຫ້ການຊ່ວຍເຫລືອດ້ານອາວຸດຍຸທໂທປະກອນ ແກ່ສະຫະຣັຖຢ່າງຫລວງຫລາຍ ແຕ່ຍັງເປັນການສອງຈິດສອງໃຈໃນການສ່ຽງໄພເສັຍຄ່າໃຊ້ຈ່າຍໃນການແຊກແຊງໂດຍຕົງ ແລະການທຳສົງຄາມກັບປະເທດອັງກິດຫລັງຈາກຂ່າວການຍອມແພ້ຂອງນາຍພົນເບີໂກລທ່ານແຟຣງຄລິນ ໄດ້ທຳສັນຍາການຄ້າກັບປະເທດພັນທະມິດ ແຕ່ລະປະເທດສັນຍາວ່າ ຈະເຮັດເພື່ອຜົນປະໂຍດສ່ວນຮວມ ຂອງກັນ ແລະກັນ ຈົນກວ່າເອກຣາຊຂອງອະເມຣິກັນຈະໄດ້ຖືກຮັບຮູ້ເປັນທາງການ ກ່ອນຫນ້ານີ້ມີອາສາສມັກຊາວຝຣັ່ງເສດຫລາຍຄົນ ໄດ້ລ່ອງເຮືອ ໄປອະເມຣິກາແລ້ວ ແລະໃນຈຳນວນອາສາສມັກນີ້ມີທ່ານ **Marquis de la fayette** ນາຍທະຫານຫນຸ່ມຊາວຝຣັ່ງເສດ ຊຶ່ງມີຄວາມປຣາຖນາຢ່າງແຮງກ້າ

ເພື່ອຢາກໃຫ້ຊາວອະເມຣິກັນມີເສຣີພາບໂດຍຍົກຍໍປະເທດຝຣັ່ງເສດ ທັບຖົມປະເທດອັງກິດ ແລະສະແດງຄວາມຊຳນານ ໃນດ້ານທະຫານ ທ່ານໄດ້ເຂົ້າຮ່ວມສົມທົບກັບກອງທັບຂອງທ່ານວໍຊິງຕັນ ໂດຍໄດ້ຮັບ ຍົດເປັນນາຍພົນຂອງກອງທັບ ເພື່ອຮັບໃຊ້ໂດຍບໍ່ຄິດຄ່າຈ້າງລາງວັນ ແລະດ້ວຍເຫດນີ້ເອງທ່ານຈຶ່ງເອົາຊນະຈິດໃຈຊາວອະເມຣິກັນໄດ້ຈົນ ມີຜູ້ນັບຖືເປັນຈຳນວນຫລາຍ.

ໃນຣະດູຫນາວຂອງປີ ຈກກຝ-ຊວ ທ່ານ **Lafayette** ໄດ້ກັບໄປຢາມເມືອງ **Versailles** ແລະໄດ້ເຮັດໃຫ້ຣັຖບານ ຝຣັ່ງເສດເຊື່ອຫມັ້ນໃນຄວາມພຍາຍາມ ທີ່ຈະເຮັດໃຫ້ສົງຄາມຍຸຕິລົງ ຕໍ່ນັ້ນມາເຈົ້າຊີວິດຫລູຍສິບຫົກ ໄດ້ສົ່ງກຳລັງທະຫານຫົກພັນຄົນ ໂດຍ ພາຍໃຕ້ການນຳຂອງນາຍພົນ **Rochambean** ໄປອະເມຣິກາ ນອກນີ້ເຮືອຣົບຂອງຝຣັ່ງເສດໄດ້ສ້າງຄວາມຫຍຸ້ງຍາກລຳບາກໃຫ້ແກ່ ຝ່າຍອັງກິດເປັນຢ່າງຍິ່ງ ໃນການລຳລຽງສະບຽງອາຫານໄປສົມທົບ ກອງທັບຂອງຕົນ ແລະການຄ້າຂອງອັງກິດກໍ່ຖືກຝຣັ່ງເສດແລະອະເມ ຣິກາກີດຂວາງເປັນທີ່ສຸດ. ພວກນີ້ແມ່ນພວກເຮືອເອກຊົນຊຶ່ງໄດ້ຮັບ ອະນຸຍາດຈາກຣັຖບານ ໃຫ້ທຳການຂັດຂວາງເຮືອສິນຄ້າຂອງອັງກິດ ໂດຍການນຳຂອງ **Captain John Paul Jones** ຊຶ່ງເຮັດໃຫ້ ອັງກິດຕ້ອງໄດ້ພົບກັບຄວາມລຳບາກໃຈ ໃນການທີ່ປະເທດສະເປນ ແລະປະເທດນິເທີແລນເຂົ້າຮ່ວມໃນການທຳສົງຄາມຄັ້ງນີ້.

ເຖິງຢ່າງໃດກໍດີ ກອງທັບອັງກິດຍັງບໍ່ຍອມຖອຍງ່າຍໆ ແລະ ຍັງຄົ້ວຕໍ້ສູ້ຢູ່ຕໍ່ໄປ. ໃນປີ ໑໗໗໒ ກອງທັບຂອງອັງກິດໄດ້ຖືກໂຈມ ຕີ ໃຫ້ຖອຍອອກຈາກເມືອງຟີລລາເດລເຟັຍ ຍ້ອນວ່າທົນການນາບຊູ ຂອງເຣືອຣົບຝຣັ່ງເສດບໍ່ໄດ້ ແລະໃນປີດຽວກັນນີ້ເຂົາເຈົ້າໄດ້ພົບກັບ ຄວາມເສັຍຫາຍຫລາຍຢ່າງທີ່ຮ່ອມພູເມືອງ ໂອໄຮໂອ ຊຶ່ງເຫດທັງ ຫມົດນີ້ ພາໃຫ້ອະເມຣິກັນ ຍຶດທາງຕະວັນຕົກ ສຽງເຫນືອ ໄດ້ຄືນ. ແຕ່ເຂົາເຈົ້າໄດ້ລ່ວງລັດສີງຄາມລົງໄປທາງໃຕ້. ໃນຕົ້ນປີ ໑໗໘໐ ເຂົາເຈົ້າໄດ້ຍຶດເມືອງຊາລເລີຕັນ ຊຶ່ງເປັນເມືອງທ່າເຣືອໃຫຍ່ໃນ ທາງໃຕ້ຊຶ່ງຢຶດອອກໄປທາງເມືອງແຄໂຣໄຣນາ. ໃນປີຕໍ່ມາ ເຂົາ ເຈົ້າໄດ້ພຍາຍາມຈະຍຶດເມືອງ ເວີຈີເນັຍ, ແຕ່ໃນຣະດູຮ້ອນປີນັ້ນ ເຣືອຣົບຂອງຝຣັ່ງເສດໄດ້ຕີເອົາອ່າວ ເຊຊາພີກ ແລະນ່ານນ້ຳອະ ເມຣິກັນທາງເຂດແຄມຝັ່ງ. ກອງທະຫານຂອງທ່ານວໍຊິງຕັນ ແລະ ທ່ານ **Rochambean** ໄດ້ລ່ວງມານຳກອງທັບເຣືອຣົບມາຕາມອ່າວ ທະເລ ແລະກອງທັບທັງສອງນີ້ ໄດ້ຮ່ວມກັນມີກຳລັງພົນທະຫານເຖິງ ໑໕,ooo ຄົນຫລາຍກ່ວາກອງທະຫານຂອງ **Lord cornwallis** ຊຶ່ງມີກຳລັງພົນທະຫານພຽງ ໘,ooo ຄົນ ເທົ່ານັ້ນ ທີ່ຕັ້ງຄ້າຍຢູ່ ເມືອງ **York town** ຕາມແຄມຝັ່ງເວີຈີເນັຍ. ຫລັງຈາກທ່ານ **Cornwallis** ໄດ້ຍອມແພ້ໃນວັນທີ ໑໗ ຕຸລາ ໑໗໘໑ ແລ້ວ ຄວາມພຍາຍາມ ໃນດ້ານການທະຫານໄດ້ຢຸດຢັ້ງການປະຕິວັດໃຫ້ສຸດ

ສັ້ນລົງແຕ່ນັ້ນມາ.

ເມື່ອຂ່າວການໄດ້ຮັບໄຊຊຸນະຂອງອະເມຣິກັນທີ່ເມືອງ York town ໄດ້ແຜ່ຜາຍໄປຮອດຢູໂຣບທາງສະພາສາມັນຂອງອັງກິດກໍໄດ້ ລົງຄວາມເຫັນ ໃຫ້ຍຸຕິສົງຄາມແຕ່ພຽງເທົ່ານີ້ ຫລັງຈາກນາຍົກຣັຖ ມົນຕີ Lord Nroth ໄດ້ລາອອກຈາກຕຳແໜ່ງບໍ່ພໍເທົ່າໃດ ເຈົ້າຊີ ວິດອັງກິດ ກໍໄດ້ຈັດຕັ້ງຣັຖບານຂຶ້ນ ເພື່ອຫາຊ່ອງທາງທຳສັນຍາສງົບ ເສີກ ແລະຮັບຮູ້ເອກຣາຊຂອງຊາວອະເມຣິກັນ ໃນເດືອນເມສາໃນ ປີ ໑໗໘໓.

ຫລັງຈາກນັ້ນການເຈຣະຈາເພື່ອສັນຕິພາບກໍໄດ້ເລີ່ມຂຶ້ນແລະ ດຳເນີນໄປຮອດເດືອນພຶສຈິກາຈຶ່ງໄດ້ມີການເຊັນສັນຍາຂັ້ນຕົ້ນກັບອັງ ກິດ ນີ້ບໍ່ໄດ້ກໍໃຫ້ເກີດຜົນແຕ່ຢ່າງໃດ ຖ້າຫາກວ່າຝຣັ່ງເສດຍັງບໍ່ໄດ້ ຕົກລົງໂດຍສັນຕິວິທີກັບປະເທດອັງກິດ. ໃນປີ ໑໗໘໓ ທັງສອງ ປະເທດນີ້ໄດ້ຕົກລົງເຊັນສັນຍາສງົບເສີກກັນ ຢ່າງເປັນເອກສັນແລະ ໃນການເຊັນສັນຍາສງົບເສີກນີ້ ອັງກິດ ແລະຝຣັ່ງເສດໄດ້ຮັບຮູ້ເອກ ຣາຊ, ເສຣີພາບ, ແລະອະທິປະໄຕຂອງສິບສາມຣັຖ ຊຶ່ງມີເຂດ ແດນທາງເບື້ອງຕະວັນຕົກໄປຕາມເຂດ ມິຊິຊິບປີ ແລະມີເຂດແດນ ຊຶ່ງຕໍ່ຂຶ້ນເໜືອເຫນືອສຸດ. ທາງສະພາກົງແກຣສ໌ອັງກິດ ໄດ້ບອກໃຫ້ ຣັຖທັງຫລາຍເຫລົ່ານີ້ຊາບວ່າເຂົາເຈົ້າມີສິດທິໃນການທີ່ຈະຄອບຄອງ ທົ່ວໝົດຊຶ່ງແຕ່ກ່ອນໄດ້ເຊົ່າ ຈາກເຈົ້າຊີວິດອັງກິດ ແລະປະຊາຊົນພົລ

ເມືອງຂອງສະຫະຣັຖໄດ້ຮັບສິດພິເສດໃນການຊອກບ່ອນທຳມາຫາກິນ ຫລືບ່ອນຢູ່ອາໃສຕາມຄວາມພໍໃຈຂອງເຂົາເຈົ້າ.

## ແນວຄວາມຄິດທົ່ວໆໄປກ່ຽວກັບການຕ້ອນຮັບເສຣີພາບຂອງສ່ວນບຸກຄົນ

ການໄດ້ຮັບເອກຣາຊບໍ່ພຽງແຕ່ເປັນການປົດແອກອອກໃຫ້ພົ້ນຈາກການຢູ່ກອງອຳນາດຂອງປະເທດອື່ນເທົ່ານັ້ນ ແຕ່ຍັງພາໃຫ້ຊາວອະເມຣິກັນມີເສຣີພາບ ໃນການຂຍາຍສັງຄົມຕາມຮູບແນວຄວາມຄິດຂອງນະໂຍບາຍການເມືອງ ຊຶ່ງເກີດຂຶ້ນໃນສິ່ງແວດລ້ອມໃໝ່ຂອງເຂົາເຈົ້າ. ເປັນຄວາມຈິງທີ່ວ່າ ພວກອານານິຄົມນີ້ ຢູ່ໃນບ່ອນທີ່ມີການຂະບົດ ແຕ່ຈຸດປະສົງສ່ວນໃຫຍ່ ຂອງເຂົາເຈົ້າພຽງແຕ່ຢາກໃຫ້ຣັຖທັມມະນູນອັງກິດ ຮັບຮູ້ສິດທິຂອງເຂົາເຈົ້າເທົ່ານັ້ນ ຈົນມາບັດນີ້ ເຂົາເຈົ້າໄດ້ຕໍ່ສູ້ມາ ເພື່ອຈະໄດ້ມາ ຊຶ່ງຄວາມຄິດນະໂຍບາຍ ການເມືອງໃໝ່ ທີ່ເປັນຂອງເຂົາເຈົ້າເອງ. ເຂົາເຈົ້າມີຣັຖບານ ຊຶ່ງເປັນຂອງປະຊາຊົນ ແລະເປັນພື້ນຖານຂອງຫລັກການນັບຖືຣະບົບປະຊາທິປະໄຕຂອງຊາວອະເມຣິກັນ.

ລັດທິການເມືອງອີກແບບນຶ່ງທີ່ເຂົາເຈົ້າຖືກຄືລັດທິຂອງປະຊາທິປະໄຕຊຶ່ງມີຣັຖບານທ້ອງຖິ່ນເປັນຂອງເຂົາເຈົ້າເອງແລະບໍ່ໝ່ນຈະໃຫ້ກົດໝາຍທີ່ຢູ່ຫ່າງໄກກັນ ຫລາຍພັນຫລັກໝາຍປົກຄອງເຂົາເຈົ້າ.

ຄວາມຮູ້ສຶກນຶກຄິດຂອງຊາວອະເມຣິກັນໄດ້ເຫັນດີນຳການລົບລ້າງກົດ
ໝາຍການແຍກຊົ້ນວັນນະ ແຕ່ລະບຸກຄົນຕໍ່ບຸກຄົນ ຊຶ່ງຄະແນນສຽງ
ໃນການເລືອກຕັ້ງ ໄດ້ບົ່ງໄວ້ແມ່ນແຕ່ໃນຂັ້ນປາຍ ຂອງການປະຕິວັດ
ຈົນວ່າໄດ້ກາຍມາເປັນລັດທິການອອກສຽງທັ່ງຍິງແລະຊາຍທົ່ວໄປ.

ໜັງສືພິມແຕ່ງຊົ້ນ ກ່ຽວກັບແນວຄິດຂອງສິດທິຂອງມະນຸດ ໄດ້
ພິມອອກຈຳໜ່າຍຢ່າງກ້ວາງຂວາງແລະໃນຣະຍະເວລາພຽງສິ່ສິບປີ
ເທົ່ານັ້ນ ທຸກໆອານານິຄົມຂອງປະເທດສະເປັນ ໃນທະວີບອະເມຣິ
ກາກໍໄດ້ເອົາແບບຢ່າງຈາກອານານິຄົມຂອງປະເທດອັງກິດ.

ຢູ່ທະວີບຢູໂຣບ ບ່ອນໃດທີ່ມີການປະຕິວັດທີ່ບໍ່ເປັນຜົນສຳເຣັດ
ຜູ້ຄົນກໍພາກັນຫລົບໜີມາສແວງຫາເສຣີພາບທາງການເມືອງໃນໂລກ
ໃໝ່ ດັ່ງນັ້ນເມືອງອະເມຣິກາ ຈຶ່ງເປັນບ່ອນທີ່ຜູ້ຄົນມາຈາກທົ່ວ ທຸກ
ບ່ອນໃນໂລກ ເພື່ອມາສແວງຫາເສຣີພາບ ຫລັງຈາກການປະຕິວັດ
ໄດ້ສິ້ນສຸດລົງ. ໃນທ່ານກາງສົງຄາມນັ້ນທ່ານ ແຟຣງຄລິນໄດ້ໄປ
ຢ້ຽມຢາມປະເທດຝຣັ່ງ ແລະທ່ານໄດ້ຄາດການຕໍ່ພວກທີ່ອົພຍົບໄປອະ
ເມຣິກາວ່າ "ການປົກຄອງແບບກົດຂີ່ຂົ່ມເຫງໄດ້ມີຢູ່ທົ່ວທຸກບ່ອນໃນ
ໂລກນີ້ ແລະໃນການຂ້າງໜ້ານີ້ອະເມຣິກາຈະເປັນບ່ອນລີ້ໄພສຳລັບ
ບຸກຄົນທີ່ຮັກຫອມເສຣີພາບ".

ໃນປີຕໍ່ມາ ທ່ານ ແຣນຣິສ ສຕີພຟັນ, ຊາວນໍເວໄດ້ຂຽນຮ່ຳ
ຄວາມກ່ຽວກັບຄວາມຮູ້ສຶກຂອງເຂົາແຕ່ຄາວຍັງນ້ອຍໃນວັນທີ ຊາວອ·

ມານິຄົມໄດ້ຮັບໄຊຊຸມະ ແລະໄດ້ພິມປ່າວປະກາດ ຢູ່ໃນປະເທດແຄນ
ນາກ ດັ່ງມີຂໍ້ຄວາມດັ່ງຕໍ່ໄປນີ້:

"ຂ້າພະເຈົ້າຍັງຈົດຈຳວັນແຫ່ງການທຳສັນຍາສົງບເສິກໄດ້ດີ ແລະໄຊຊຸມະຂອງການຕໍ່ສູ້ເອົາເສຣີພາບໄດ້ສເລີມສລອງຂຶ້ນ. ວັນ ດັ່ງກ່າວນີ້ເປັນວັນມະຫາມົງຄຸນສຳລັບຊາວອະເມຣິກັນທົ່ວໄປ. ຕາມ ທ່າເຮືອຕ່າງໆ ເຮືອທຸກໆລຳໄດ້ເອ້ປະດັບປະດາດ້ວຍທຸງອັນງົດງາມ ລົມກໍພັດທຸງເຫລົ່ານີ້ໄປມາຢ່າງເສຣີ..... ພໍ່ໄດ້ເຊີນແຂກບາງຄົນ ມາເຮືອນແລະຕົ້ງກັນອ້ານກັບປະເພນີການສລອງໄຊຊຸມະ ພວກເຮົາ ຊົ່ງເປັນເດັກນ້ອຍບໍ່ໄດ້ເຂົ້າຮ່ວມໂຕະອາຫານນຳແຕ່ກໍພໍຈະອະທິບາຍ ໃຫ້ຟັງເຖິງຄວາມຫມາຍ ຂອງການສລອງຄັ້ງນີ້ໄດ້ ຈອກຂອງພວກ ເຮົາກໍເຕັມໄປດ້ວຍນ້ຳຫວານ ແລະນົມ ເພື່ອໄຊຊຸມະແລະຜົນ ສຳເຣັດຂອງສາທາຣະນະຣັຖໃຫມ່. ຢູ່ເດິນຫນ້າເຮືອນ ຂອງພວກ ເຮົາທຸ່ງຊາດຂອງຊາວແຄນິສ ແລະອະເມຣິກັນປົວໄປປົວມາຢູ່.... ສິ່ງທີ່ຄາດລ່ວງຫນ້າຂອງເຫດການອັນຍິ່ງໃຫຍ່ນີ້ ຢູ່ໃນຄວາມນຶດຄິດ ຂອງພວກທີ່ກຳລັງຊຸ່ມຊຶມຍິນດີນຳໄຊຊຸມະຄັ້ງນີ້..... ເຫດການ ເຫລົ່ານັ້ນກາຍເປັນແສງສວ່າງ ໃນຍາມເຊົ້າ ຂອງວັນແຫ່ງການລົ້ງ ເລືອດໃນພົງສາວະດານ".

# 3

## ການຈັດຕັ້ງຣັຖບານແຫ່ງຊາດ

"ມະນຸດທຸກຄົນແລະທຸກໆຄົນໃນພື້ນແຜ່ນດິນນີ້ມີສິດທີ່ຈະມີຣັຖ
ບານເປັນຂອງເຂົາເຈົ້າເອງ". ຄຳຂວັນຂອງທ່ານ ຫອມມັສເຈຟ
ເຟີໃນປີ ໑໗໙໐.

ພື້ນສຳເຣັດຂອງການປະຕິວັດ ເພື່ອຕໍ້ຕ້ານປະເທດອັງກິດພາ
ໃຫ້ປະຊາຊົນອະເມຣິກັນມີປະເທດທີ່ເປັນເອກຣາຊໃນຄອບຄົວ ຂອງ
ຄົນຫລາຍໆຊາດ; ເຂົາເຈົ້າຈະໄດ້ດັດແປງສັງຄົມໃຫ້ເປັນໄປຕາມ
ແບບແຜນຂອງເຂົາເຈົ້າ ຊຶ່ງການສືບພັນແລະການມີສິດພິເສດ ເປັນ
ເຣື່ອງບໍ່ສຳຄັນແລະຄວາມສຳຄັນສ່ວນໃຫຍ່ແມ່ນຄວາມສະເມີພາບຂອງ
ມະນຸດ ຊຶ່ງທຸກໆຄົນມີສິດເທົ່າທຽມກັນ. ການໄດ້ມາຊຶ່ງເອກຣາຊນັ້
ຈະເປັນອະນຸສອນຂອງຄວາມຫວັງ ແລະການຕໍ່ສູ້ທີ່ຜ່ານມາ ຊຶ່ງທັງ
ຫມົດນີ້ໄດ້ເປັນພະຍານຫລັກຖານຊຶ່ງສະແດງເຖິງຄວາມສາມາດຂອງ

ການໄດ້ບ່ອນຢູ່ໃໝ່ ແລະມີສະມັຖພາບພຽງພໍໃນການມີຣັຖບານເປັນ
ຂອງປະຊາຊົນເອງ.

ຜົນສຳເຣັດຂອງການປະຕິວັດຄັ້ງນີ້ ໄດ້ຊ່ວຍໃຫ້ຊາວອະເມຣິ
ກັນມີໂອກາດໄດ້ສະແດງຄວາມຮູ້ສຶກ ນຶກຄິດອອກມາໃນຮູບກົດໝາຍ
ແລະອຸດົມຄະຕິຂອງນະໂຍບາຍການເມືອງ ຊຶ່ງໄດ້ເອົາໄປຂຽນໃສ່
ຄຳປະກາດເອກຣາຊ ແລະການດັດແປງຣັຖທັມມະນູນໃນຂໍ້ທີ່ເຫັນມາ
ມີການບົກພ້ອງ. ທ່ານເຈມສ໌ ເມດິຊັນ ຜູ້ທີ່ເປັນປະທານາທິບໍດີຄົນທີ
ສີ່ຂອງສະຫະຣັຖ ໄດ້ຂຽນຄຳຂວັນຕອນນຶ່ງວ່າ: "ບໍ່ມີສິ່ງໃດທີ່ພາ
ໃຫ້ເປັນຫນ້າຕື່ນເຕັ້ນ ແລະຊຸ້ນຊຸ້ມຍິນດີທ່ຳການຈັດຕັ້ງຣັຖບານເສຣີ
ໃນປະເທດອະເມຣິກາ, ເພາະວ່າມັນໄດ້ເປັນຕົວຢ່າງເຖິງຫຳອິດ
ທີ່ພົລເມືອງຜູ້ທີ່ອາໄສຢູ່ນີ້ ໄດ້ມີເສຣີພາບໃນການຈັດຕັ້ງຣັຖບານເອງ
ແລະໄດ້ຄັດເລືອກເອົາພົລເມືອງ ຜູ້ທີ່ເຂົາເຈົ້າໄວ້ວາງໃຈໃຫ້ດຳຣົງ
ຕຳແໜ່ງອັນນີ້ຕໍ່ໄປ".

ທຸກວັນນີ້, ຊາວອະເມຣິກັນຫັງຫລາຍ ໄດ້ລົ້ງເລີຍມາແລ້ວ
ໃນການຢູ່ພາຍໃຕ້ ຂອບເຂດຂອງຣັຖທັມມະນູນທີ່ໄດ້ແຕ່ງຂຶ້ນ ຊຶ່ງ
ເຂົາເຈົ້າຖືເອົາເລີຍວ່າເປັນສົມບັດຂອງເຂົາເຈົ້າ. ຣັຖທັມມະນູນ
ດັ່ງກ່າວນີ້ໄດ້ມີກຳເນີດຂຶ້ນມາ ໃນອະເມຣິກາໃນຕອນຕົ້ນຂອງປະວັດ
ສາດ. "ໃນທຸກໆຣັຖເສຣີ, ຣັຖທັມມະນູນເປັນກົດໝາຍສູງສຸດ
ແລະເດັດຂາດ" ອັນນີ້ແມ່ນຄຳຂວັນຕອນນຶ່ງຂອງທ່ານຈອນແອດັມສ໌,

ປະທານາທິບໍດີຄົນທີສອງຂອງ ສະຫະຣັຖ. ຊາວອະເມຣິກັນທີ່ຢູ່ທົ່ວ ທຸກຫົນທຸກແຫ່ງ ໄດ້ຮຽກຮ້ອງໃຫ້ມີກົດໝາຍເປັນຫລັກປະກັນເພື່ອຊຸ້ມ ຄອງເຂົາເຈົ້າ. ນັບຕັ້ງແຕ່ວັນທີ ๑๐ ເດືອນ ເມສາ, ປີ ๑๗๗๖ ເປັນຕົ້ນມາ ສະພາກົງແກຣສ ໄດ້ລົງມະຕິເຫັນດີໃຫ້ອະນາຄົດທົ່ງ ໜົດພ້ອມກັນຈັດຕັ້ງຣັຖບານໃໝ່ຂຶ້ນ ຊຶ່ງຄາດວ່າຈະເປັນຜົນດີ ແລະ ຈະນຳຄວາມສຸກ ແລະຄວາມປອດໄພມາສູ່ສະພາທີ່ມີອຳນາດແກ້ໄຂ ຣັຖທັມມະນູນ. ບາງອານານິຄົມກໍໄດ້ເລີ່ມປະຕິບັດມາແລ້ວ ແລະ ໃນຣະຍະປີໜຶ່ງ ຫລັງຈາກ ການປະກາດເອກຣາຊຸ ທຸກໆອານານິຄົມ ນອກຈາກ ສາມອານານິຄົມເທົ່ານັ້ນ ໄດ້ເຣັດຮ່າງຣັຖທັມມະນູນຂຶ້ນ ໃຫມ່.

ການຂຽນຮ່າງເອກສານເຫລົ່ານີ້ ເປັນໂອກາດອັນດີງາມສຳ ລັບສ່ວນປະກອບ ແບບປະຊາຕິປະໄຕ ເພື່ອແກ້ໄຂຂໍ້ຂອງໃຈຕ່າງໆ ແລະເພື່ອເຣັດໃຫ້ຄວາມປາຖນາ ທີ່ຢາກມີຣັຖບານອັນສົມບູນນັ້ນເປັນ ຈິງຂຶ້ນ. ແລະຜົນທີ່ສືບເນື່ອງມາຈາກຣັຖທັມມະນູນດັ່ງກ່າວນີ້ ແມ່ນ ຄວາມຄິດຄວາມເຫັນ ແບບປະຊາຕິປະໄຕ ແຕ່ຮາກຖານທົ່ງໜົດ ຂອງຄວາມນຶກຄິດໃໝ່ນີ້ ໄດ້ສ້າງຂຶ້ນບົນຫລັກຖານອັນໜັ້ນຄົງໂດຍ ຊາວອະເມຣິກັນເອງ ໂດຍອີງໃສ່ການປະສົບການໃນສມັຍທີ່ຍັງເປັນ ອານານິຄົມຢູ່ ແລະພາກປະຕິບັດບາງຢ່າງກໍຖືກຖ່າຍມາຈາກຂອງອັງ ກິດ ແລະຈາກແນວຄິດຂອງຝຣັ່ງເສດ. ຈຸດປະສົງສ່ວນໃຫຍ່ຂອງຜູ້

ແຕ່ງກົດໝາຍນັ້ນ ກໍເພື່ອໄວ້ຄຸ້ມກັນສິດທີ່ແລກປ່ຽນກັນບໍ່ໄດ້ ຊຶ່ງ ກາຍເປັນການລະເມີດ ແລະແຕກແຍກອອກຈາກຄວາມຄຸ້ມກັນຂອງ ປະເທດອັ່ງກິດອີກຕໍ່ໄປ. ດັ່ງນັ້ນແຕ່ລະມາຕຣາຂອງຣັຖທັມມະນູນ ຈຶ່ງເລີ່ມດ້ວຍການປະກາດສິດທິຂອງສ່ວນບຸກຄົນ ຊຶ່ງໃຊ້ໄວ້ເປັນຕົວ ຢ່າງສຳລັບຜູ້ອື່ນ ຣວມທັ້ງການປະກາດຫລັກການຂອງອຳນາດອະທິ ປະໄຕຊຶ່ງເປັນທີ່ຮູ້ຈັກດີແກ່ຄົນທົ່ວໄປ ການສັບປ່ຽນໜ້າທີ່ການງານ, ເສຣີພາບໃນການເລືອກຕັ້ງ ຣາກຖານຂອງເສຣີພາບອື່ນໆອີກຫລາຍ ຢ່າງ ເຊັ່ນວ່າການປະກັນແລະການລົງໂທດຜູ້ກະທຳຜິດໃຫ້ມີກອງທະ ຫານອາສາສມັກ ແທນກອງທັບ ອັນຖາວອນ, ການຕັດສິນລົງໂທດຜູ້ ກະທຳຜິດຕາມກົດໝາຍຂອງບ້ານເມືອງ, ການຕັດສິນຄວາມໂດຍຜູ້ ພິພາກສາ ເສຣີພາບໃນດ້ານໜັງສືພິມ, ເສຣີພາບໃນການນັບຖື ສາສນາ, ສິດທິຂອງສຽງສ່ວນຫລາຍ ໃນການຈັດຕັ້ງຫລືລົບລ້າງ ຣັຖບານແລະຫ້າມການໃຊ້ສິດທິ່ວໆໄປ. ໃນຣັຖອື່ນໆນັ້ນ ເຂົາເຈົ້າ ໄດ້ຂຍາຍສິດທິດັ່ງກ່າວອອກໄປໃຫ້ກ້ວ້າງຂວາງກວ່ານີ້ອີກ ເຊັ່ນວ່າ ເສຣີພາບໃນການປາກເວົ້າ, ໃນການມີປາກສຽງໃນສະພາ, ໃນ ການເປັນເຈົ້າຂອງອາວຸດ, ສິດທິໃນການຮຽກຕົວຜູ້ຖືກຄຸມຂັງມາ ສານເພື່ອພິຈາຣະນາວ່າ ເຂົາຖືກຄຸມຂັງໂດຍຖືກຕ້ອງຕາມກົດໝາຍ ຫລືບໍ່ ກົດໝາຍການບໍ່ລ່ວງລ້ຳບ້ານເຮືອນຂອງຜູ້ອື່ນແລະຄວາມສະເໝີ ພາຍໃນການດຳເນີນງານຕາມກົດໝາຍ. ນອກຈາກນີ້, ຣັຖທັມ

ມະນຸນທຸກໆມາຕຣາໄດ້ສະແດງຄວາມຊຶ່ສັດຕໍ່ທິສດີ ແລະພາກປະຕິບັດ ທັງດ້ານກົດຫມາຍແລະຜແນກຍຸຕິທັມ, ຊຶ່ງແຕ່ລະຜແນກມີຫນ້າທີໃຫ້ ກຳ້ເກີງກັບອັນອຶ່ນ.

ໃນຂນະທີ່ອານານິຄົມສິບສາມບ່ອນ ກຳລັງປ່ຽນຮູບຮ່າງມາ ເປັນຣັຖ ແລະກຳລັງຖືກປັບປຸງໃຫ້ເຂົ້າກັບຖານະຄວາມເປັນຢູ່ຂອງ ການມີເອກຣາຊ ແລະເຄືອຈັກພົບໃຫມ່ ໄດ້ຂຍາຍຕົວອອກໄປ ຢ່າງ ກວ້າງຂວາງຕັ້ງແຕ່ເບື້ອງຕະວັນຕົກໄປຫາແຄມຝັ່ງທະເລ ຊຶ່ງເປັນ ເຂດທີ່ເຕັມໄປດ້ວຍນັກລ້າເນື້ອຊັ້ນນຳ ແລະທີ່ດິນກໍດີແລະເຫມາະແກ່ ການປູກຝັງ. ດັ່ງນັ້ນພວກນັກຄົ້ນຄວ່າທັງຫລາຍຈຶ່ງໄດ້ຫລັ່ງໄຫລກັນ ໄປທາງດ້ານຕະວັນຕົກຂອງພູເຂົາອາຢາລາຈຽງຕົກມາໃນປີ ຈກກ໕ ຢູ່ຕາມເຂດທີ່ໄກອອກໄປທາງນອກ ຕາມແຄມແມ່ນຳ້ ກໍເຕັມໄປດ້ວຍ ເຮືອນທີ່ເຮັດດ້ວຍຜ້າໃບ ຂອງພວກທີ່ມາຕັ້ງຖິ່ນຖານຢູ່ແຖວນີ້ ຊຶ່ງຢູ່ ຫ່າງໄກຈາກໃຈກາງເມືອງ ທາງດ້ານຕະວັນອອກຫລາຍຮ້ອຍກວ່າ ໄມ ແລະມີສາຍພູຂັ້ນກາງພວກເຂົາເຈົ້າໃຫ້ໄກອອກຈາກໃນເມືອງ, ດັງນັ້ນພົລເມືອງທີ່ອາໄສຢູ່ໃນແຖບນີ້ ຈຶ່ງໄດ້ຈັດຕັ້ງຣັຖບານຂອງເຂົາ ເຈົ້າຂຶ້ນເອງ, ແລະຈາກນັ້ນມາຊົນບົດແຫ່ງນີ້ ກໍໄດ້ຂຍາຍອອກຢ່າງ ຫນ້າຊົມຊຶ່ນ. ພວກທີ່ຢູ່ຕາມເຂດທີ່ຂາດນຳ້ ກໍໄດ້ຝ້າວອົພຍົບມາຢູ່ ຕາມຮ່ອມພູທີ່ອຸດົມສົມບູນນີ້ເພື່ອເຮັດໄຮ່ເຮັດສວນໂດຍຖາກຖາງປ່າທີ່ ມີກົກໄມ້ໃຫຍ່ອອກ. ຕົກມາໃນປີ ຈກຜວ, ພົລເມືອງທີ່ຢູ່ຕາມແຖບ

ສາຍພູອາປາລາຈຽນກໍມີຂຶ້ນຮອດ ๑๘๐,๐๐๐ ຄົນ.

## ບັນຫາທີ່ຊາດເກີດໃຫມ່ຈະຕ້ອງສູ້ຫນ້າ

ຫລັງຈາກການປະຕິວັດໄດ້ຍຸຕິລົງແລ້ວ, ສະຫະຣັຖຍັງມີຄຳ ຖາມເກົ່າຂອງຊາວຕະວັນຕົກ ຊຶ່ງແກ້ໄຂບໍ່ໄດ້ສືບຕໍ່ມາເລື້ອຍໆນັ້ນຄື ບັນຫາຂອງ "ຈັກພັດ" ທີ່ມີຄວາມຫຍຸ້ງຍາກກ່ຽວກັບເຣື່ອງທີ່ດິນເຊັ່ນ ວ່າ ການຄ້າຂົນສັດ, ພວກອິນເດັຍແດງ, ການຕັ້ງຖິ່ນຖານ, ແລະ ຣັຖບານທີ່ຂຶ້ນກັບປະເທດອື່ນ. ກ່ອນສົງຄາມເກີດຂຶ້ນ ອານານິຄົມ ຫລາຍບ່ອນໄດ້ຖືກຫ້ານບໍ່ໃຫ້ຂຍັບຂຍາຍອອກໄປກາຍເຂດພູເຂົາ ອາ ປາລາຈຽນ. ຊ່ອງທາງຂ້າງຫນ້າຂອງຣັຖເຫລົ່ານີ້ ປາກົດວ່າເປັນ ບ່ອນທີ່ອຸດົມສົມບູນດີປຽບເຫມືອນລາງວັນອັນງາມ ຊຶ່ງບໍ່ເປັນການຍຸຕິ ທັມທີ່ຈະຫ້ານບໍ່ໃຫ້ຜູ້ຄົນແຜ່ຂຍາຍອອກໄປທາງດ້ານຕະວັນຕົກ. ທ່ານ ແມຣິແລນຜູ້ທີ່ເປັນໂຄສົກຂອງຄນະນີ້ ໄດ້ສເນີມະຕິວ່າ ແຜ່ນດິນທາງ ພາກຕະວັນຕົກຄວນຖືວ່າເປັນສົມບັດຮ່ວມກັນ ແລະຄວນຈະໃຫ້ສະພາ ກົງແກຣສ່ແບ່ງປັນອອກເປັນສ່ວນໆ ແລະແຕ່ລະສ່ວນມີຣັຖບານເປັນ ຂອງໃຜລາວໂດຍເສຣີ ແຕ່ຄວາມຄິດອັນນີ້ບໍ່ໄດ້ຮັບຄວາມເຫັນຊອບ ແຕ່ປະການໃດ. ຕໍ່ມາໃນປີ ຈກຊວ, ນິວຢອກໄດ້ເປັນຜູ້ນຳ ໃນ ການຍອມຍົກສ່ວນດິນທີ່ຮຽກຮ້ອງນີ້ໃຫ້ເປັນຂອງສະຫະຣັຖແລະຕໍ່ຈາກ ນັ້ນມາອານານິຄົມອື່ນໆກໍເອົາແບບຢ່າງແລະເຮັດຕາມ. ຫລັງຈາກ

ສົງຄາມຍຸຕິລົງແລ້ວ, ປາກົດວ່າສະພາກົງແກຣສ່ ໄດ້ຄອບຄອງແຜ່ນດິນທາງເຂດເຫນືອຂອງແມ່ນ້ຳ ໂອໄຣໂອ ແລະທາງຕະວັນຕົກຂອງພູເຂົາ ອາລເລເກນີ. ການຄອບຄອງແຜ່ນດິນ ອັນໃຫຍ່ຫລວງໃຫ້ເປັນຂອງສ່ວນຣວມນີ້ເປັນຫລັກຖານອັນແນ່ນອນ ທີ່ສະແດງເຖິງຊາດ ແລະຄວາມເປັນອັນນຶ່ງອັນດຽວກັນ ແລະໄດ້ສະແດງເຖິງການມີອຳນາດອະທິປະໄຕໃນຊາດ ໃນຂນະທີ້ບ້ານເມືອງກຳລັງພົບກັບຄວາມຫຍຸ້ງຍາກຢູ່. ແລະໃນເວລາດຽວກັນນີ້ ກໍມີການເລັ່ງລັດໃຫ້ມີການແກ້ໄຂບັນຫາຂຶ້ນ.

ຂໍ້ແກ້ໄຂບັນຫາໄດ້ຈັດເປັນຮູບຮ່າງຂຶ້ນພາຍໃຕ້ການຮ່ວມມືກັນ ຊຶ່ງໄດ້ຫ້ອນໂຮມທຸກໆອານານິຄົມ ໃຫ້ເປັນອັນນຶ່ງອັນດຽວກັນກັບການປົກຄອງ ພາຍໃນເຂດຂອງຣັຖບານໂດຍປະຊາຊົນເອງ ຊຶ່ງໄດ້ນຳເອົາມາໃຊ້ໃນເຂດແດນທາງພາກຕະວັນຕົກນີ້. ຣະບຽບການນີ້ໄດ້ຖືກນຳເອົາມາໃຊ້ ໃນພາກຕະວັນຕົກສຽງເຫນືອ ໃນປີ ຈກຊກ, ແລະຕໍ່ມາກໍໄດ້ນຳເອົາມາໃຊ້ທົ່ວທຸກບ່ອນໃນທະວີບ ຊຶ່ງເປັນກັມສິດຂອງສະຫະຣັຖ. ເທສບັນຍັດຂອງປີ ຈກຊກ ໄດ້ບົ່ງໄວ້ວ່າ ໃຫ້ມີການຈັດຕັ້ງອົງການນຶ່ງຂຶ້ນ ທີ່ເຂດແດນພາກເຫນືອທັງຫມົດ ໃຫ້ຢູ່ພາຍໃຕ້ການປົກຄອງຂອງຜູ້ຄອງເມືອງແລະຕຸລາການສານໂດຍແມ່ນສະພາກົງແກຣສ່ ເປັນຜູ້ຄັດເລືອກບຸກຄົນເຫລົ່ານີ້ໃຫ້ດຳຣົງຕຳແຫນ່ງນີ້. ເມື່ອໃດເຂດແດນດັ່ງກ່າວນີ້ ຫາກມີພົລເມືອງເປັນຊາຍສະກັນ

ເຖິງ ๕,๐๐๐ ຄົນ ແລະຢູ່ໃນອາຍຸປ່ອນບັດເລືອກຜູ້ແທນໄດ້ ເມືອງ
ນັ້ນຈະມີສິດຈັດຕັ້ງຣັຖສະພາທັ້ງສອງຄືສະພາຕ່ຳ ແລະສະພາສູງ ຊຶ່ງ
ເຂົ້າເຈົ້າເອງເປັນຜູ້ເລືອກເອົາ. ນອກຈາກນັ້ນ, ເຂົ້າເຈົ້າຍັງມີ
ສິດສິ່ງຜູ້ຕາງໜ້າເຂົ້າຮ່ວມຟັງໃນສະພາກົງແກຣສ໌ ແຕ່ໃຫ້ມີສິດອອກ
ສຽງຢ່າງຫລາຍບໍ່ໃຫ້ເກີນໜ້າຣັຖ ແລະບໍ່ໃຫ້ນ້ອຍກວ່າສາມຣັຖກ່ຽວ
ກັບການຮ່ວມກັນຈັດຕັ້ງຣະບຽບການປົກຄອງດັ່ງກ່າວນັ້ນ, ແລະເມື່ອ
ໃດ ຣັຖໃດຣັຖນຶ່ງໃນນັ້ນມີພົລເມືອງຮອດ ๗๐,๐๐๐ ຄົນ, ຣັຖນັ້ນຈະ
ຖືກຮັບເຂົ້າໃນສະມາຄົມນີ້ໂດຍ "ພັນຖານທີ່ມີສິດ ເທົ່າທຽມກັບຣັຖ
ອື່ນໆ" ໃນມາຕຣາທີກ2ທີ່ວ່າດ້ວຍຣັຖແຕ່ເດົ້າເດີມ ແລະປະຊາຊົນ
ທີ່ຢູ່ໃນຣັຖນັ້ນແລະຣັຖທີ່ຢູ່ໃນເຂດແດນດັ່ງກ່າວຄືຣັຖທີ່ຕັ້ງຂຶ້ນໃໝ່ຢູ່ທາງ
ພາກຕະວັນຕົກ" ມາຕຣານີ້ໄດ້ຄ້ຳປະກັນສິດເສຣີພາບຂອງປະຊາ
ຊົນໄດ້ສິ່ງເສີມການສຶກສາແລະປະກັນວ່າຈະບໍ່ໃຫ້ມີການເປັນຂ້າທາສ
ຫລືການບັງຄັບໃຫ້ເຮັດວຽກຫລວງໃນເຂດແດນດັ່ງກ່າວນັ້ນ".

ນະໂຍບາຍຂອງອາມາມິຄົມໃໝ່ແຫ່ງນີ້ ແມ່ນຫລັກການຂອງ
ຄວາມສເມີພາບ ແລະກໍໄດ້ປະກາດອອກມາໃຊ້ຢ່າງເປັນທາງການ
ແລະນະໂຍບາຍໃໝ່ນີ້ບໍ່ຍອມຮັບເອົາລັດທິອັນມີກຽດຂອງປະເທດອົງ
ກົດມາໃຊ້ອີກ ເໝືອນດັ່ງທີ່ເຄີຍໃຊ້ກັນມາແຕ່ກ່ອນ. ແນວຄິດນີ້
ແມ່ນໃຊ້ແທນຫລັກການດັ່ງກ່າວຄື ອາມາມິຄົມແຫ່ງນີ້ແມ່ນການຂຍາຍ
ຈາກອອກໄປແລະປະຊາຊົນພົລເມືອງ ກໍມີສິດເທົ່າທຽມກັນກັບຄົນອື່ນ

ໂດຍທົ່ວໆໄປ. ແສງສວ່າງຂອງເທສບັນຍັດນິຕິສາມ ວາງຮາກ ຖານອັນຖາວອນສຳລັບ ເຂດແດນແລະອານານິຄົມຂອງທາງດ້ານຕະ ວັນຕົກ ຫາມະຫາສມຸດ ແປຊີຟິກ ແລະເພື່ອຂຍາຍເຂດແດນຈາກສິບ ສາມຣັຖມາເປັນຫ້າສິບຣັຖ ໂດຍໄດ້ຮັບຄວາມຫຍຸ້ງຍາກພຽງແຕ່ເລັກ ນ້ອຍເທົ່ານັ້ນ.

## ແນວຄວາມຄິດໃຫມ່ທີ່ຣັຖບານຕ້ອງການ

ແຕ່ບໍ່ເປັນຈັ່ງໆນຸ, ຂໍ້ແກ້ປັນຫາຂອງກົດຣະບຽບການຮ່ວມມືບໍ່ ເປັນຜົນສຳເຣັດ. ຜົນທີ່ຕາມມາ ກໍຄືເຂົາເຈົ້າໄດ້ພົບກັບຄວາມລົ້ມ ເຫລວໃນການຈັດຕັ້ງຣັຖບານຂອງຊາດຢ່າງແທ້ຈິງສຳລັບສິບສາມຣັຖ ຊຶ່ງມີຈຸດປະສົງອັນແຮງກ້າ ໃນການທ້ອນໂຮມກັນ ນັບຕັ້ງແຕ່ຜູ້ຕາງ ຫນ້າຂອງແຕ່ລະຣັຖໄດ້ພົບປະກັນເປັນຄັ້ງທຳອິດ ໃນປີ ໑໗໗໔ ເພື່ອ ປ້ອງກັນເສຣີພາບ ຈາກການລ່ວງລ້ຳອິດທີ່ພົ້ນຂອງອັງກິດ. ຄວາມ ກົດດັນ ໄດ້ສືບເນື່ອງມາຈາກການຕໍ່ສູ້ກັບປະເທດອັງກິດ ໃນຣະຍະ ຊາວປີກ່ອນນັ້ນພາໃຫ້ທ່າທີຂອງເຂົາເຈົ້າປ່ຽນແປງໄປຈາກເທົ່າຫລາຍ ກວ່າໃນຄາວທີ່ກອງປະຊຸມຂອງອານານິຄົມໄດ້ປະຕິເສດ ແຜນການ ທ້ອນໂຮມຂອງອານານິ. ດັ່ງນັ້ນເຂົາເຈົ້າຈຶ່ງປະຕິເສດບໍ່ຍອມຣັບ ຂໍ້ສເນີໃດໆທີ່ກ່ຽວກັບການຢູ່ຢ່າງອິສຣະ ຂອງເຂົາເຈົ້າແມ່ນແຕ່ນ້ອຍ ດຽວ. ແຕ່ໃນຣະຫວ່າງການປະຕິວັດ, ການຊ່ວຍເຫລືອ ຊຶ່ງກັນ

ແລະກັນໄດ້ສແດງໃຫ້ເຂົາເຈົ້າເຫັນວ່າເປັນຜົນດີ, ແລະຄວາມຢ້ານ
ເສັຍສິດຂອງຕົນໃນສິ່ງແວດລ້ອມກໍລົດນ້ອຍລົງ.

ກົດຣະບຽບນີ້ໄດ້ຖືກນຳເອົາມາໃຊ້ໃນປີ ໑໙໘໑. ແມ່ນວ່າ
ກົດເຫລົ່ານີ້ໄດ້ປະກອບຂຶ້ນ ໂດຍສະພາກົງແກຣສ໌ ຂອງທະວີບນີ້,
ການດຳເນີນກິຈການຕ່າງໆ ຂອງຣັຖບານ ຍັງມີຈຸດອ່ອນຫລາຍຈົນ
ເປັນເຫດໃຫ້ມີການວິວາດ ຜິດຖຽງກັນຂຶ້ນ ຕາມເຂດຊາຍແດນ.
ຄວາມເຫັນແລະການຕົດສິນໃຈຂອງສານໄດ້ສເນີອອກມາແລະພາໃຫ້
ເກີດການຂັດແຍ້ງກັນຂຶ້ນໃນຣະຫວ່າງພວກເຂົາເຈົ້າເອງ ຣັຖສະພາ
ຂອງຣັຖແມຊຸແຊຼດ, ນິວຢອກ, ແລະເພັນຊິລເວເນັຍ ໄດ້ອອກ
ກົດໝາຍວ່າດ້ວຍການເກັບພາສີ ຊຶ່ງກົດໝາຍດັ່ງກ່າວນີ້ ໄດ້ນຳ
ຄວາມກະທົບກະເທືອນມາສູ່ເພື່ອນບ້ານ ທີ່ຢູ່ຕາມຣັຖນ້ອຍໆ. ການ
ກວດຄົ້ນແລະກົດຣະບຽບຕ່ັງຕົດ ໄດ້ນຳຄວາມຮູ້ສຶກອຶ່ມອຶ້ນມາສູ່ຜູ້ຄົນ
ທີ່ຢູ່ໃນແຕ່ລະຣັຖນີ້, ຕົວຢ່າງ ຊາວເມືອງນິວເຈີຊີ ທີ່ຈະຂ້າມແມ່ນ້ຳ
ຮັດຊັນ ເພື່ອໄປຂາຍຜັກທີ່ຕລາດເມືອງນິວຢອກນັ້ນ ຈະຕ້ອງເສັຍຄ່າ
ທຳນຽມເຂົ້າເມືອງ ແລະເສັຍພາສີຢ່າງໜັກຈຶ່ງຈະມີສິດເຂົ້າເມືອງ
ໄດ້.

ຣັຖບານແຫ່ງຊາດ ຄວນຈະມີອຳນາດພຽງພໍ ໃນການວາງ
ຣະບຽບກ່ຽວກັບການເກັບພາສີ ຊຶ່ງຈຳເປັນໃນດ້ານການຄ້າ, ແຕ່
ຣັຖບານບໍ່ໄດ້ເຮັດແນວໃດເລີຍ ແລະຣັຖບານຄວນມີສິດໃນການເກັບ

ພາສີ ເພື່ອຈຸດປະສົງຂອງຊາດ. ແຕ່ຣັຖບານກໍບໍ່ໄດ້ເຣັດຫຽງອີກຄືກັນ. ຣັຖບານຄວນມີການຄວບຄູມທັງຫມົດ ກ່ຽວກັບການຕິດຕໍ່ພາຍນອກ ແຕ່ມີຫລາຍຣັຖ ຍັງມີການຕິດຕໍ່ໂດຍຕົງ ກັບຕ່າງປະເທດຢູ່. ເກົ້າຣັຖໃນຈຳນວນທັງຫມົດນີ້ໄດ້ຈັດໃຫ້ມີກອງທັບເປັນຂອງເຂົາເຈົ້າເອງ ແລະອີກຫລາຍຣັຖ ກໍມີກອງທັບເຣືອເປັນຂອງເຂົາເຈົ້າເອງ. ເງີນຫລຽນທີ່ໃຊ້ກັນໃນເວລານັ້ນ ແມ່ນຫລຽນທີ່ມາຈາກສິບກວ່າປະເທດ ຊຶ່ງສັບປົນຄົນຄວາກັນຢູ່ ແລະທະນະບັດ ທີ່ພິມຂຶ້ນໃຊ້ຢູ່ໃນແຕ່ລະຣັຖນັ້ນ ແຕກຕ່າງກັນ ແລະຕໍ່ມາບໍ່ດົນຄຸນຄ່າຂອງທະນາບັດ ກໍເສື່ອມລົງຢ່າງໄວ.

ຫລັງຈາກສົງຄາມສັ້ນສຸດລົງເສຖກິດ ໄດ້ພົບກັບຄວາມຝືດເຄືອງຊຶ່ງພາໃຫ້ຜູ້ຄົນໂດຍສະເພາະແມ່ນພໍ່ໄຮ່ພໍ່ນາເກີດຄວາມບໍ່ພໍໃຈເປັນຢ່າງຍິ່ງ. ຜົນປູກອັ່ງຕລາດແລະຄວາມບໍ່ສງົບທົ່ວໆໄປເກີດ ຂຶ້ນສ່ວນຫລາຍແມ່ນຈາກຊາວນາຊາວສວນ ຜູ້ທີ່ເປັນລູກຫນີ້ ແລະ ຕ້ອງການຢາກໃຫ້ມີການດັດແປງກົດຫມາຍກ່ຽວກັບກຈນຈຳຊັບສົມບັດຂອງເຂົາເຈົ້າຢ່າງແຮງກ້າ ເພື່ອຫລີກເວັ້ນຈາກການຖືກຈຳຄຸກ ເນື່ອງຈາກມີຫນີ້ສິນແລະສານກໍຖືກປະຊາຊົນຂັດຂວາງບໍ່ໃຫ້ຕັດສິນກ່ຽວ ກັບຫນີ້ສິນນີ້.

ໃນຣະດູຮ້ອນຂອງປີ ຈກຊຝ, ປະຊາຊົນທົ່ວທຸກບ່ອນໄດ້ຈັດໃຫ້ມີການປະຊຸມຂຶ້ນ ແລະນອກນີ້ກໍຍັງມີການພົບປະກັນຢູ່ຫາງນອກອີກ

ປະຊາຊົນທົ່ວໜຸກບ່ອນ ໄດ້ຮ້ອງໃຫ້ມີການປ່ຽນແປງ ຣະບົບການປົກ
ຄອງໃຫມ່ພາຍໃນຣັຖແລະຫລັງຈາກມີເຫດຮ້າຍເກີດຂຶ້ນແລ້ວ ທາງ
ຣັຖສະພາຈຶ່ງໄດ້ພິຈາຣະນາໃຫ້ຄວາມເປັນທັມແກ້ຂໍ້ຂັດຂ້ອງຫມອງໃຈ
ຂອງປະຊາຊົນແລະໄດ້ເລີ່ມບົດບາດແກ້ໄຂແຕ່ນັ້ນມາ.

## ຜົນຂອງການຖືກຖຽງເປັນໄປດ້ວຍອຸປສັກ

ໃນເວລານີ້, ທ່ານວໍຊິງຕັນໄດ້ຍອມໄວ້ວ່າ ຫມົດທຸກຣັຖໄດ້
ທ້ອນໂຮມກັນແລ້ວ ແຕ່ບໍ່ມີຄວາມສາມັກຄີ ຫລືຄວາມເປັນອັນນຶ່ງອັນ
ດຽວກັນແລະກຽດ ແລະຊື່ສຽງຂອງສະພາກົງແກຣສ໌ກໍໄດ້ລຸດລົງເຖິງ
ຂີດຕ່ຳແລ້ວ. ການຜິດຖຽງກັນຣະຫວ່າງຣັຖແມຣິແລນ ແລະເວີຊີ
ເນັຍໃນເຣື່ອງການເດີນເຮືອ ໃນນ່ານນ້ຳໂປໂຕມັກ ໄດ້ເປັນເຫດ
ໃຫ້ມີການຮຽກຮ້ອງປະຊຸມຂຶ້ນຣະຫວ່າງຜູ້ຕາງຫນ້າຂອງຫ້າຣັຖທີ່ແອນ
ນາໂປລິສ໌ ໃນປີ ຄ.ສ. ຜູ້ຕາງຫນ້າທີ່ເຂົ້າຮ່ວມປະຊຸມນຶ່ງໃນນັ້ນ
ທ່ານອາເລັກເຊັນເດີ ແຮມິລຕັນ ຊຶ່ງໄດ້ກ່າວຕໍ່ທີ່ປະຊຸມວ່າການຄ້າ
ມີຄວາມກ່ຽວພັນກັບບັນຫາອື່ນ ຫລາຍແນວແລະສະຖານະການກໍຢູ່ໃນ
ຂັ້ນທີ່ຫນ້າວິຕົກ, ສະນັ້ນບໍ່ເປັນການເຫມາະສົມເລີຍ ທີ່ຈະມາແກ້ໄຂ
ບັນຫາເຫລົ່ານີ້ ໃຫ້ລຸລ່ວງໄປໄດ້ ໂດຍບໍ່ໃຫ້ບຸກຄົນຜູ້ກ່ຽວຂ້ອງ ໃນ
ເຣື່ອງນີ້ເຂົ້າຮ່ວມພິຈາຣະນາ. ທ່ານໄດ້ຊຸກຊວນ ເພື່ອນສະມາ
ຊິກໃຫ້ຮ້ອງໃຫ້ຫມົດທຸກຣັຖແຕ່ງຕັ້ງຜູ້ຕາງຫນ້າຂອງຣັຖ ເພື່ອໃຫ້ຄຳ

ແນະນຳ ຊຶ່ງປາກົດເຫັນເປັນສິ່ງຈຳເປັນໃນການແຕ່ງຕັ້ງຣັຖທັມມະ
ນູນຂຶ້ນ ເພື່ອໃຫ້ຣັຖບານກາງ ສົມກັບຄວາມຕ້ອງການຂອງພວກທີ່
ຫ້ອນໂຮມກັນນີ້ ຂັ້ນທຳອິດສະພາກົງແກຣສ່ກໍຂຸ່ນເຄືອງຕໍ່ບາດກ້າວອັນ
ກ້າຫານນີ້ ແຕ່ການຄັດຄ້ານໄດ້ສິ້ນສຸດລົງເມື່ອມີຂ່າວແຜ່ທົ່ວໄປວ່າເວີ
ຊີເນັຍໄດ້ຄັດເລືອກເອົາ ຊອກຊ່ວໍຊຶງຕັນ ໃຫ້ເປັນຜູ້ຕາງຫນ້າຣັຖ
ເພື່ອຈະເຂົ້າແຂ່ງຂັນຊຶງຕຳແຫນ່ງປະທານາທິບໍດີ ໃນຣະດູການໃບ
ໄມ້ລົ່ນ ແລະຣະດູຫນາວນີ້ແລະການເລືອກຕັ້ງຈະມີຢູ່ທົ່ວທຸກຣັຖ ນອກ
ຈາກໂຣດໄອແລນເທົ່ານັ້ນ. ໃນເດືອນພືສພາປີ ຈກຊກ, ທີ່ຫໍປະ
ຊຸມເມືອງຟິລາເດັລເຟັຍ ໄດ້ເປີດການປະຊຸມໃຫຍ່ຂຶ້ນ ຊຶ່ງສະມາຊິກ
ທີ່ເຂົ້າຮ່ວມປະຊຸມນີ້ລ້ວນແຕ່ແມ່ນບຸກຄົນທີ່ມີຊື່ສຽງທັງນັ້ນ. ທາງຣັຖ
ສະພາໄດ້ສົ່ງຜູ້ນຳທີ່ມີຄຸນວຸທິແລະປະສົບການມາແລ້ວ ກ່ຽວກັບເຣື່ອງ
ການປົກຄອງ ອານານິຄົມແລະຣັຖໃຫ້ເຂົ້າຮ່ວມໃນສະພາກົງແກຣສ່.
ທ່ານຈອຊ່ວໍຊຶງຕັນ ໄດ້ກາຍເປັນພົລເມືອງທີ່ດີເລີດຄົນນຶ່ງ ດ້ວຍວ່າ
ທ່ານໄດ້ເປັນຜູ້ນຳທີ່ຍອດຢ້ຽມໃນສມັຍປະຕິວັດ ແລະດ້ວຍຊື່ສຽງອັນດີ
ແລະຄວາມສາມາດຂອງທ່ານນີ້ເອງຈອດຊ່ວໍຊຶງຕັນ ຈຶ່ງຖືກຄັດເລືອກ
ໃຫ້ເປັນປະທານາທິບໍດີຂອງສະຫະຣັຖ. ທ່ານນັກປຣາຊ ເບນຈາ
ມິນແຟຣງຄລິນ ຊຶ່ງມີອາຍຸໄດ້ສີ່ສິບເອັດປີ ໄດ້ຊ່ວຍແກ້ໄຂຄວາມຫຍຸ້ງ
ຍາກຕ່າງໆ ທີ່ມີຂຶ້ນຣະຫວ່າງພວກຜູ້ແທນດ້ວຍກັນ. ບຸກຄົນທີ່ເປັນທີ່ຮູ້
ຈັກດີໃນຣະຫວ່າງພວກທີ່ເອົາການເອົາງານນີ້ ກໍແມ່ນທ່ານກູແວກເນີ

ນໍ່ຣິສ, ຊຶ່ງທ່ານມີຄວາມສາມາດຊ່ອງເຫັນ ຄວາມຕ້ອງການຂອງຣັຖ ບານແຫ່ງຊາດ ແລະນອກນີ້ກໍ່ມີທ່ານເຈັມສ້ວິລສັນ, ທີ່ມາຈາກຣັຖ ເພັນຊິລວາເນັຍ ຊຶ່ງທ່ານຜູ້ນີ້ໄດ້ຕັ້ງຫນ້າຕັ້ງຕາເຣັດວຽກການຢ່າງບໍ່ ຮູ້ຈັກເມື່ອຍ ເພື່ອຜົນປະໂຍດຂອງຊາດ ຈາກເມືອງເວີຈີເນັຍແມ່ນ ທ່ານເຈັມຊ່ເມີດີສັນ, ຣັຖບຸຣຸດຫນຸ່ມ ຊຶ່ງເປັນນັກຮຽນຝ່າຍຣັຖສາດ ແລະປະວັດສາດ ໂດຍສະເພາະ ແລະຕາມທີ່ເພື່ອນຮຽນຮ່ວມຫ້ອງ ເວົ້ານັ້ນ ເຂົາເຈົ້າກ່າວວ່າ ທ່ານເມດີສັນນີ້ "ຄວາມນຶກຄິດໃນດ້ານ ການອຸດສາຫະກັມແລະພາກປະຕິບັດ ແລະເປັນຜູ້ທີ່ຮອບຮູ້ຊຶ່ງຈະຫາຜູ້ ປຽບທຽບໄດ້ຍາກ", ຈາກຣັຖແມແຊຈູແຊດສ້ ແມ່ນທ່ານ Rufus King ແລະ Elbridge Gerny, ສອງຊາຍຫນຸ່ມຊຶ່ງມີຄວາມ ສາມາດແລະປະສົບການເພື່ອເຂົ້າຮ່ວມໃນກອງປະຊຸມ ທ່ານ Roger Sherman ຊຶ່ງເດີມເປັນຊ່າງຕັດເກີບ, ຕໍ່ມາໄດ້ຖືກແຕ່ງຕັ້ງໃຫ້ ເປັນຕຸລາການສານແລະຕໍ່ມາຖືກເລືອກໃຫ້ເປັນຜູ້ແທນຈາກຣັຖຄໍແນກ ຕິຄັດ. ທ່ານອາເລກແຊນເດີແຮມິລຕັນ ໄດ້ຖືກເລືອກໃຫ້ເປັນຜູ້ຕາງ ຫນ້າຂອງຣັຖນິວຢອກ ແລະທ່ານນີ້ຫາກໍ່ມີອາຍຸເຂົ້າສາມສິບເທົ່ານັ້ນ ແຕ່ຊຶ່ສຽງກໍ່ດົ່ງດັງພໍສົມຄວນ. ບຸກຄົນຜູ້ທີ່ຍິ່ງໃຫຍ່ໃນອານານິຄົມທີ່ບໍ່ ໄດ້ປາກົດຕົວໃນຄນະກັມມະການດັ່ງກ່າວນີ້ກໍຄືທ່ານ ທອມມັສເຈພເຟີ ຊັນ ທີ່ໄດ້ຖືກແຕ່ງຕັ້ງໃຫ້ໄປຣາຊການຢູ່ປະເທດຝຣັ່ງເສດ ຊຶ່ງຖືກນັບ ເຂົ້າໃນບັນດາຜູ້ແທນຫ້າສິບຫ້າຄົນ ທີ່ຍັງຫນຸ່ມຢູ່ໂດຍມີອາຍຸປະມານສີ່

ສິບສອງປີ.

ການປະຊຸມເທື່ອນີ້ ໄດ້ອະນຸຍາດໃຫ້ເຣັດຮ່າງແກ້ໄຂມາຕຣາ ຂອງສະຫະພັນນີ້ ແຕ່ຕໍ່ມາທ່ານເມດີຊັນໄດ້ຂຽນໄວ້ວ່າ ຜູ້ແທນຫັ ຫລາຍ ທີ່ມີຄວາມເຊື່ອຫມັ້ນ ໃນປະເທດຂອງຕົນ ຄວນຖືມມາຕຣາ ເຫລົ່ານີ້ເສັຍ ແລ້ວພາກັນຫັນມາສົນໃຈນໍາການຈັດຕັ້ງຣັຖບານໃຫມ່ ຂຶ້ນຍັ ງຈະດີກວ່າ. ໃນການດໍາເນີນງານເທື່ອນີ້ສະມາຊິກທີ່ກອງປະ ຊຸມຕ່າງກໍຣັບຮູ້ວ່າ ຄວາມຈໍາເປັນກ່ອນອື່ນນັ້ນແມ່ນການເຣັດໃຫ້ອໍ ານາດສອງຝ່າຍທີ່ຕ່າງກັນນີ້ກົມກຽວກັນກ່ອນ, ນັ້ນຄືອໍານາດຂອງຝ່າຍ ປົກຄອງທ້ອງຖິ່ນ ຊຶ່ງໄດ້ໃຊ້ກັນມາແລ້ວ ໃນສິບສາມຣັຖທີ່ເປັນເກົ່າ ເອກຣາຊ ແລະອໍານາດຂອງຣັຖບານກາງ ເຂົ້າເຈົ້າພາກັນຣັບເອົາ ຫລັກການທີ່ວ່າ ຫນ້າທີ່ ແລະອໍານາດຂອງຣັຖບານກາງເປັນອໍານາດ ການປົກຄອງທີ່ຕົ້ວຂຶ້ນໃຫມ່ທີ່ຈະເອົາມາປະຕິບັດໂດຍທົ່ວໆໄປ ເພື່ອ ໃຊ້ຮວມທັງຫມົດນັ້ນ ຈະຕ້ອງຖືກບັນຍາຍຢ່າງແຈ່ມແຈ້ງ ໃນຂນະທີ່ ຫນ້າທີ່ອື່ນໆ ແລະອໍານາດບາງຢ່າງ ຍັງເປັນຂອງຣັຖຕາມເດີມຢູ່. ເຂົ້າເຈົ້າເຫັນຄວາມຈໍາເປັນ ໃນການມອບອໍານາດອັນແທ້ຈິງໃຫ້ແກ່ ຣັຖບານແຫ່ງຊາດ ແລະໄດ້ຍອມຣັບຂໍ້ເທັດຈິງທີ່ວ່າຣັຖບານແຫ່ງຊາດ ຄວນມີອໍານາດເຕັມ ໃນການກະທໍາບາງສິ່ງບາງຢ່າງ ເຊັ່ນການສະ ແວງຫາສັນຕິພາບເປັນຕົ້ນ. ຫນ້າທີ່ທີ່ມີຄວາມຈໍາເປັນ ດັ່ງກ່າວນີ້ ເອີ້ນວ່າເຄື່ອງຈັກຂອງຣັຖບານແຫ່ງຊາດ.

## ບັນດາຜູ້ນຳສນັບສນູນການແຍກອຳນາດ

ຣັຖບຸຣຸດຂອງສັຕວັດທີສິບແປດທີ່ພົບກັນຢູ່ຝົລາເດັລເຟັຍໄດ້ຍຶດ ຫມັ້ນໃນແນວຕິດຂອງທ່ານ Montesquieu ທີ່ວ່າ ການສົມດູນ ແຫ່ງອຳນາດໃນການເມືອງ. ແນ່ນອນ, ຫລັກການນີ້ໄດ້ຮັບການ ສນັບສນູນ ໂດຍອິງໃສ່ປະສົບການຕ່າງໆ ຂອງອານານິຄົມ ແລະມີ ຄວາມແຫນ້ນແຟ້ນຍິ່ງຂຶ້ນ ເມື່ອທ່ານ Locke ຂຽນບົດຄວາມກ່ຽວກັບ ເຣື່ອງນີ້ ຊຶ່ງເປັນທີ່ຮູ້ຈັກກັນດີ ໃນຣະຫວ່າງບັນດາຜູ້ແທນທັງຫລາຍ. ການຈູງໃຈເຫລົ່ານີ້ໄດ້ນຳພາໄປສູ່ຄວາມເຂົ້າໃຈໃນສິ່ງທີ່ວ່າ ຄວນ ຈະຈັດໃຫ້ມີສາມຜແນກຕ່າງກັນ ໃນຣັຖບານນີ້ແລະແຕ່ລະຜແນກມີສິດ ເທົ່າທຽມກັນແລະໃຫ້ຄວາມຮ່ວມໄມ້ຮ່ວມມືຕໍ່ກັນ.

ອຳນາດຣັຖສະພາ, ອຳນາດໃນການບໍຣິຫານ ແລະອຳນາດ ສານຄວນຈະຕ້ອງຈັດໃຫ້ເປັນຣະບຽບແລະຕໍ່ເນື່ອງກັນເພື່ອຄວາມສະ ດວກແກ່ການດຳເນີນງານ. ໃນເວລາດຽວກັນນັ້ນ ອຳນາດເຫລົ່າ ນີ້ກໍສົມດູນກັນດີ ແລະບໍ່ມີອຳນາດຝ່າຍນຶ່ງຝ່າຍໃດ ຢາກຄວບຄຸມກິຈ ການທີ່ວຫມົດແຕ່ຜູ້ດຽວ. ບັນດາຜູ້ແທນທັງຫລາຍເຫັນວ່າ ຕາມທັມ ມະຊາດແລ້ວ ຣັຖສະພາຄວນຈະປະກອບດ້ວຍສອງຜແນກ ເຫມືອນ ກັບຣັຖສະພາຂອງພວກອານານິຄົມ ແລະຂອງພວກອັງກິດ, ແຕ່ໃນ ຄວາມເຫັນ ອັນກວ້າງໄກ ແລະທີ່ວໆໄປແລ້ວ ກໍປະກອບດ້ວຍສ່ວນ ທີ່ເຫມືອນກັນຢູ່ ຜູ້ແທນທີ່ມາຈາກຣັຖນ້ອຍໆເຊັ່ນວ່າຣັຖນິເຈີຊີຢ້ານວ່າ

ຕົນຈະມີຄວາມສຳຄັນນ້ອຍລົງໃນຣັຖບານກາງຈຶ່ງໄດ້ສເນີວ່າ ຜູ້ຕາງ
ໜ້າຂອງຣັຖຄວນຈະເລືອກເອົາຕາມຈຳນວນຂອງພົລເມືອງທີ່ມີຢູ່ໃນ
ຣັຖແທນທີ່ຈະເລືອກເອົາຕາມຂນາດນ້ອຍໃຫຍ່ຂອງຣັຖດັ່ງໃນມາຕຣ
ຂອງສະຫະພັນ. ໃນຂນະດຽວກັນນັ້ນ ຜູ້ແທນທີ່ມາຈາກຣັຖໃຫຍ່ໆ
ເຊັ່ນຣັຖເວຊີເນັຍກໍອອກສຽງຢ່າງໜັກແໜ້ນວ່າ ການເລືອກເອົາຜູ້
ແທນເພື່ອຕາງໜ້າຣັຖນັ້ນ ຕ້ອງກະທຳຕາມສັດສ່ວນ. ກ່ຽວກັບນັ້ນ
ຫາມີປາກົດວ່າໄດ້ມີການຖົກຖຽງກັນຢູ່ຢ່າງບໍ່ມີຫາງຈົບສິ້ນ ແລະໃນທີ່
ສຸດຜູ້ແທນຈາກຣັຖຄໍແນກຕິຄັດໄດ້ໃຫ້ຄວາມຄິດຄວາມເຫັນຢ່າງສລຽວ
ສລາດໂດຍໃຫ້ການສນັບສນຸນແຜນການຈັດຕັ້ງຜູ້ຕາງໜ້າຂອງສະພາ
ກົງແກຣສ ແລະໄດ້ຈັດໃຫ້ມີຜູ້ຕາງໜ້າຂອງຣັຖ ຊຶ່ງທຸກໆຣັຖໃຫ້ມີຈຳ
ນວນຜູ້ຕາງໜ້າເທົ່າກັນຢູ່ໃນອີກສະພານຶ່ງ ດັ່ງນັ້ນການຈັດໃຫ້ຢູ່ໃນ
ເສັ້ນຊີ ຂອງຣັຖໃຫຍ່ຕໍ່ຣັຖນ້ອຍຈຶ່ງໄດ້ລຸລ່ວງໄປ ແລະປັນຫາຕໍ່ມາຈະ
ຕ້ອງໄດ້ຮັບການແກ້ໄຂ ຈາກການຜ່ອນສັ້ນ ຜ່ອນຍາວ. ສະມາຊິກ
ບາງຄົນ ປຣາຖນາບໍ່ຢາກໃຫ້ປະຊາຊົນເລືອກຜູ້ແທນ ຂອງສະພາຫົວ
ສອງນີ້ໂດຍຕຣົງ; ບາງຄົນມີຄວາມເຫັນວ່າ ຈະຕ້ອງໃຫ້ພົ້ນຖານ
ກ້ວາງຂວາງກວ່ານີ້; ບາງຄົນປຣາຖນາບໍ່ຢາກໃຫ້ຣັຖບານຍອມຮັບ
ການຂຍາຍຂອງພາກຕະວັນຕົກ ເຂົ້າເປັນຣັຖ; ບາງຄົນສນັບສນຸນ
ຫລັກການຊຶ່ງຈັດໄວ້ໃນເທສບັນຍັດຂອງປີ ຈກຕກ ຊຶ່ງບໍ່ມີມະຕິແຕກ
ຕ່າງກັນຫລາຍກ່ຽວກັບປັນຫາເສຖກິດຂອງຊາດເຊັ່ນທະນາບັດ, ກົດ

ໝາຍວ່າດ້ວຍການຈ່າຍເງິນ, ແລະກົດໝາຍວ່າດ້ວຍການເຮັດສັນ
ຍາຕ່າງໆ. ແຕ່ຍັງມີຄວາມຈຳເປັນຢູ່ອີກໃນການແຍກຄວາມສົມດູນ
ພົນຂອງເສຖກິດ ແຕ່ລະຜແນກແລະເພື່ອແກ້ໄຂບັນຫາກ່ຽວກັບຣະຍະ
ເວລາໃນການຄອງຕຳແໜ່ງຂອງຊຸມສານ ແລະປະເທດຂອງສານທີ່
ຈະໄດ້ຕັ້ງຂຶ້ນ.

ດ້ວຍຄວາມຮອບຄອບ ແລະດ້ວຍຄວາມຕັ້ງໃຈທີ່ກອງປະຊຸມ
ໄດ້ດຳເນີນວຽກການຕລອດຣະດູຮ້ອນ ຢູ່ໃນເມືອງຟິລາເດັລເຟັຍ,
ປະຊຸມໄດ້ແກ້ໄຂປັນຫາຫລາຍອັນໃຫ້ລຸລ່ວງໄປແລະໃນທີ່ສຸດການເຮັດ
ຮ່າງກົດໝາຍຫລືເອກສານກ່ຽວກັບອົງການຂອງຣັຖບານອັນສັບສົນນີ
ໄດ້ຮັບຄວາມພໍໃຈເປັນຢ່າງຍິ່ງ ໂດຍແມ່ນບຸກຄົນເຫລົ່ານີ້ເປັນຜູ້ວາງ
ໂຄງການ. ມາຕຣາທີ່ສິບ ໄດ້ບົ່ງໄວ້ຢ່າງແຈ່ມແຈ້ງໃນປີ ຄ.ສ.໑
ວ່າ "ອຳນາດໃດທີ່ບໍ່ໄດ້ມອບໝາຍໃຫ້ແກ່ສະຫະຣັຖໃນຣັຖທັມມະນູນ
ແລ້ວ ຫລືບໍ່ໄດ້ບົ່ງຂໍ້ຫ້າມແກ່ຣັຖແລ້ວ ອຳນາດທັງໝົດນັ້ນຕ້ອງໄດ້
ສງວນໄວ້ໃຫ້ເປັນຂອງຣັຖຫລືຂອງປະຊາຊົນ". ແລະ ກົດໝາຍສູງ
ສຸດຂອງຣັຖບານກໍໄດ້ຈຳກັດຢູ່ໃນຣັຖທັມມະນູນ". ຣັຖທັງຫລາຍມີ
ຄວາມເປັນໃຫຍ່ເທົ່າທຽມກັນ ໃນສິ່ງແວດລ້ອມພາຍໃນຣັຖ; ໃນ
ຣັຖບານຂອງຣັຖ; ແລະໃນຣັຖບານກາງທີ່ມີພົນຖານອັນກ້ວາງຂວາງ
ອັນດຽວກັນ ຄືອະທິປະໄຕຂອງປະຊາຊົນ ໃນປີຕໍ່ມາ ໃນຂອບເຂດ
ອຳນາດຂອງຣັຖບານ ທີ່ໄດ້ຂຍາຍອອກດ້ວຍການດັດແປງ ສິ່ງກ່ຽວ

ຂ້ອງ ໃນຄວາມໝາຍຂອງອຳນາດສານແລະຄວາມຈຳເປັນໃນຍາມ
ສຸກເສີນຂອງຊາດ. ຣັຖກໍຢູ່ໃນສະພາບເຊັ່ນດຽວກັນ, ແມ່ນແຕ່ໃນ
ສັຕວັດທີຊາວ, ພິລເມືອງຊາວອະເມຣິກັນ ມີການຕິດຕໍ່ກັບຣັຖຂອງ
ເຂົ້າເຈົ້າຂອງຫລາຍກວ່າກັບຣັຖບານແຫ່ງຊາດ ທັງນີ້ກໍເພາະວ່າຣັຖ
ຢູ່ໄດ້ບໍ່ແມ່ນ້ອຍຄວາມດີຂອງຣັຖທັມມະນູນຂອງຣັຖບານກາງ ແຕ່ຢູ່
ໄດ້ຍ້ອນອຳນາດອະທິປະໄຕ ຂອງຣັຖເອງ, ເຊັ່ນການຄວບຄຸມກຳ
ແພງເມືອງແລະຣັຖບານທ້ອງຖິ່ນ, ອຳນາດການປົກຄອງຕຳຣວດ,
ການອອກກົດໝາຍ ກ່ຽວກັບໂຮງງານ ແລະແຮງງານ, ບໍຣິສັດ.
ການຂຍາຍການປົກຄອງຝ່າຍສານທັງດ້ານກົດໝາຍແພ່ງ ແລະກົດ
ໝາຍອາດຍາ, ການຄວບຄຸມການສຶກສາ, ແລະການດູແລສຸຂພາບ
ທົ່ວໆໄປ ຂອງປະຊາຊົນ, ການໃຫ້ຄວາມປ້ອງກັນ ແລະການສົ່ງ
ເຄາະປະຊາຊົນ.

ໃນການໂຮມອຳນາດ ທັງໝົດນີ້, ທີ່ປະຊຸມໄດ້ໃຫ້ອຳນາດ
ຣັຖບານກາງຢ່າງເສຣີ ໃນການເກັບພາສີ ໃນການກູ້ຢືມເງິນ, ໃນ
ການອອກແບບເຄື່ອງນຸ່ງຂອງເຈົ້າໜ້າທີ່, ແລະການເກັບພາສີຈາກ
ສິນຄ້າຂາເຂົ້າ. ຣັຖບານກາງໄດ້ຮັບມອບສິດໃຫ້ຫາເງິນເຂົ້າຣັຖ,
ອອກກົດໝາຍວ່າດ້ວຍການຈົດທະບຽນ ແລະສ່ວນເອກສິດ, ຈັດ
ຕັ້ງໂຮງການໄປສນີແລະຄົມນາຄົມ. ຣັຖບານກາງມີອຳນາດ ເຕັມ
ໃນການຈັດຕັ້ງກອງທັບບົກ ແລະກອງທັບເຮືອ ແລະກົດຣະບຽບກ່ຽວ

ກັບການຄ້າຂະຫວ່າງຣັຖຕໍ່ຣັຖ. ຣັຖບານກາງ ມີອຳນາດເຕັມ ໃນ
ການຈັດການທັງຫມົດກ່ຽວກັບພວກອິນເດັຍເອງ, ການເຊື່ອມສັມພັນ
ກັບຕ່າງປະເທດ ແລະການເຣັດເສີກສົງຄາມ. ຣັຖບານກາງມີອຳ
ນາດເຕັມ ໃນການອອກກົດຫມາຍ ວ່າດ້ວຍການຕັດຊາດ ຂອງຊາວ
ຕ່າງດ້າວ ການຄວບຄຸມທີ່ດິນສາທາຣະນະ ແລະສາມາດຮັບເອົາ
ຣັຖໃຫມ່ເຂົ້າຮ່ວມ ໂດຍໃຫ້ສິດເທົ່າທຽມກັນກັບຣັຖເກົ່າ. ອຳນາດ
ໃນການອອກກົດຫມາຍທີ່ຈຳເປັນໃນການບໍຣິຫານປະເທດນີ້ ໄດ້ມອບ
ໃຫ້ແກ່ຣັຖບານກາງຫມົດແລ້ວ ແລະຣັຖບານກາງມີອຳນາດພຽງພໍສຳ
ລັບບໍຣິຫານປະເທດ ຕາມຄວາມເຫມາະສົມ ແລະຄວາມຕ້ອງການ
ຂອງຄົນຮຸ່ນຫນ້າ, ແລະໂຄງຮ່າງຂອງການເມືອງກໍຖືກຂຍາຍອອກ
ຢ່າງຫລວງຫລາຍ.

## ຫລັກການທີ່ໄດ້ເອົາມາປະຕິບັດຢ່າງດີ

ໃນການສ້າງໂຄງຮ່າງຂອງຣັຖບານນີ້, ລັກສນະທັງຫມົດໄດ້
ສະແດງເຖິງການລຽງເອົາແບບຣັຖທັມມະນູນ ຂອງຈັກພັດອັງກິດ,
ແລະເກືອບຈະບໍ່ມີອະນຸມາຕຣາໃດ ທີ່ບໍ່ສາມາດເອົາມາໃຊ້ໃນຣັຖທັມ
ມະນູນຂອງສິບສາມຣັຖນີ້ ຫລືເອົາມາປະຕິບັດ ໃນ່ອາມານີ້ຄົມໄດ້.
ຫລັກການຂອງການແຍກອຳນາດ ຊຶ່ງຄ້າຍຄືກັນກັບຣັຖບານອາມານີ
ຄົມ, ໄດ້ເອົາມາທົດລອງໃຊ້ໃນຣັຖທັມມະນູນຂອງຣັຖ ແລະປາກົດ

ວ່າໄດ້ຜິນດີເລີດ. ດັ່ງນັ້ນທີ່ປະຊຸມຈຶ່ງໄດ້ຈັດຕັ້ງຣະບົບຂອງຣັຖບານ ຊຶ່ງແຍກອຳນາດຣັຖສະພາ, ອຳນາດຝ່າຍບໍຣິຫານ ອຳນາດສານ ແລະອຳນາດແຕ່ລະສ່ວນໃຫ້ເປັ່ງແຍງຊຶ່ງກັນແລະກັນ. ກົດໝາຍທີ່ ສະພາກົງແກຣສ໌ ແຕ່ງອອກມານັ້ນຈະບໍ່ຖືກຕ້ອງຕາມກົດໝາຍຖ້າວ່າ ບໍ່ໄດ້ຮັບຄວາມເຫັນຊອບຈາກປະທານາທິບໍດີ. ແລະປະທານາທິບໍດີມີ ໜ້າທີ່ສເນີນັດໝາຍອັນສຳຄັນ ແລະສັນຍາຕ່າງໆຕໍ່ສະພາເຊເນດ ເພື່ອພິຈາຣະນາຕໍ່ໄປ ປະທານາທິບໍດີ ອາດຈະຖືກສະພາກົງແກຣສ໌ ກ່າວຫາຫລືປົດກໍໄດ້ ຕາມອຳນາດພິພາກສາຄະດີຕ່າງໆ ພາຍໃຕ້ກົດ ໝາຍແລະຣັຖທັມມະນູນດັ່ງນັ້ນ ສານຈຶ່ງໄດ້ກໍໃຫ້ເກີດຜົນໃນການມີ ອຳນາດເຕັມຕາມພື້ນຖານຂອງກົດໝາຍ. ແຕ່ອຳນາດພິພາກສາທີ່ ແຕ່ງຕັ້ງຂຶ້ນໂດຍປະທານາທິບໍດີ ແລະພ້ອມກັບຄວາມເຫັນຊອບຂອງ ສະພາເຊເນດນັ້ນ ອາດຖືກສະພາກົງແກຣສ໌ລົງໂທດກໍເປັນໄດ້.

ສ່ວນການຫລົງເຫັນຄວາມຈຳເປັນໃນອະນາຄົດເພື່ອເອົາມາ ດັດແປງ ຫລືຕົ້ມເຂົ້າໃນເອກສານໃໝ່ນັ້ນ ທີ່ປະຊຸມໄດ້ຮັບເອົາມາ ຕຣານຶ່ງເຂົ້າຮ່ວມກ່ຽວກັບວິທີດັດແປງ. ດັ່ງນັ້ນ, ເພື່ອປ້ອງກັນຣັຖ ທັມມະນູນບໍ່ໃຫ້ແຍກອອກຈາກການດັດແປງ, ມາຕຣາຫ້າ ກໍໄດ້ຜົນດີ ເໝືອນກັນແລະເຄີຍໃຊ້ມາແລ້ວຢ່າງໄດ້ຜົນດີຊາວສາມເທື່ອ. ມາ ຕຣານີ້ ໄດ້ກຳນົດໄວ້ວ່າສອງສ່ວນສາມຂອງສະພາທັ້ງສອງ ຫລືສອງ ສ່ວນສາມຂອງຣັຖທັ້ງໝົດ ໃນທີ່ປະຊຸມອາດຈະດຳເນີນການດັດແປງ

ຣັຖທັມມະນູນໄດ້ ແລະຂໍ້ສເນີນີ້ໄດ້ກາຍມາເປັນກົດຫມາຍວິທີນຶ່ງ ໃນ
ສອງວິທີ ໂດຍໄດ້ຮັບການໃຫ້ສັຕຍາບັນ ຈາກສຽງສອງສ່ວນສາມ
ຂອງຣັຖສະພາ ຫລືການອອກສຽງສາມສ່ວນສີ່ ຂອງການປະຊຸມຣັຖ
ຕໍ່ມາສະພາກົງແກຣສ໌ກໍໄດ້ສເນີໃຫ້ລົງຄວາມເຫັນວ່າຈະເລືອກເອົາວິ
ທີໃດໃຊ້ຈຶ່ງຈະດີ.

ໃນທີ່ສຸດ ການປະຊຸມໄດ້ພົບກັບບັນຫາທີ່ສຳຄັນກວ່າຫມູ່ເຊັ່ນ:
ອຳນາດທີ່ມອບໃຫ້ຣັຖບານໃຫມ່ນັ້ນຈະເອົາມາໃຊ້ຈັ່ງໃດ? ພາຍໃຕ້
ກົດຫມາຍເກົ່າຂອງສະມາຄົມນີ້, ຣັຖບານກາງມີອຳນາດຢ່າງພຽງພໍ
ໃນການບໍຣິຫານ, ແຕ່ໃນດ້ານປະຕິບັດແລ້ວ ອຳນາດ ບໍ່ມີປະໂຍດ
ຫຍັງເລີຍ ເພາະວ່າ ຣັຖທັງຫລາຍເຫລົ່ານີ້ ບໍ່ສົນໃຈນຳອຳນາດດັ່ງ
ກ່າວນີ້ເລີຍ.

ຈະເຮັດແນວໃດ ຈຶ່ງຈະຊ່ວຍໃຫ້ຣັຖບານໃຫມ່ຫລີກເວັ້ນການ
ພົບປັນຫາດັ່ງກ່າວນີ້ອີກ? ໃນການເລີ່ມຕົ້ນ, ບັນດາຜູ້ແທນທັງຫມົດ
ທີ່ໃຫ້ຄຳຕອບເປັນສຽງດຽວກັນນັ້ນຄື ການໃຊ້ກຳລັງບັງຄັບ, ແຕ່ຖ້າ
ຈະໃຊ້ກຳລັງບັງຄັບຫນີບເຕັງຣັຖເຫລົ່ານີ້, ຄວາມສາມັກຄີ ຫລືການ
ທ້ອນໂຮມກັນກໍຈະແຕກສລາຍໄປ. ເມື່ອການປຶກສາຫາລືກັນກຳລັງ
ດຳເນີນໄປຢູ່ນັ້ນ, ທີ່ປະຊຸມກໍໄດ້ລົງຄວາມເຫັນວ່າຣັຖບານບໍ່ຄວນກະ
ທຳສິ່ງໃດຕາມໃຈຣັຖ ແຕ່ຄວນກະທຳຕາມປະຊາຊົນໃນຣັຖແລະການ
ອອກກົດຫມາຍນັ້ນກໍເພື່ອສ່ວນບຸກຄົນທີ່ຢູ່ໃນປະເທດ ໂດຍຖືເປັນຫົວ

ใจຂອງຣັຖທັມມະນູນ ທີ່ປະຊຸມໄດ້ຣັບເອົາແຜນການອັນສັ້ນໆ ແຕ່ມີ ຄວາມຫມາຍທີ່ສຸດນັ້ນຄື: "ສະພາກົງແກຣສ່ຈະມີອຳນາດເຕັມ ໃນ ການອອກກົດຫມາຍທີ່ຈຳເປັນ ສຳລັບ ການບໍຣິຫານບ້ານເມືອງອຳ ນາດນີ້ໄດ້ບົງໄວ້ໃນຣັຖທັມມະນູນຂອງຣັຖບານຂອງສະຫະຣັຖ (ມາ-ຕຣານຶ່ງ, ວັກທີແປດ)

"ຣັຖທັມມະນູນແລະກົດຫມາຍຂອງສະຫະຣັຖ ຊຶ່ງຈະແຕ່ງຂຶ້ນ ເພື່ອເອົາມາໃຊ້ ໃນການດຳເນີນງານດັ່ງນີ້ເຊັ່ນ ສັນຍາຣະຫວ່າງ ຊາດທີ່ຈະເຣັດຂຶ້ນ ພາຍໃຕ້ອຳນາດຂອງສະຫະຣັຖຈະຕ້ອງເປັນ ກົດ ຫມາຍສູງສຸດຂອງແຜ່ນດິນ, ແລະຜູ້ພິພາກສາທັງຫລາຍໃນທຸກຣັຖຈະ ຕ້ອງປະຕິບັດຕາມຣັຖທັມມະນູນຂອງສະຫະຣັຖແມ່ນວ່ານັນຈະຂັດຕໍ່ກົດ ຫມາຍຂອງຣັຖກໍຕາມ" (ມາຕຣາຫົກ)

ດັ່ງນັ້ນ, ກົດຫມາຍຂອງສະຫະຣັຖ ຈຶ່ງກາຍເປັນກົດບັງຄັບ ຂອງຊາດ ໂດຍພາຍໃຕ້ການຄວບຄຸມຂອງຜູ້ພິພາກສາ ແລະເລຂານຸ ການຂອງຜູ້ພິພາກສາເອງ. ກົດຫມາຍເຫລົ່ານີ້ຈຶ່ງບັງຄັບໃຊ້ໄດ້ໃນ ອົງການຂອງຣັຖ ໂດຍຜ່ານຜູ້ພິພາກສາຂອງສານໃນຣັຖ ແລະເຈົ້າ ຫນ້າທີ່ຝ່າຍກົດຫມາຍໃນຣັຖ.

ໃນທ້າຍອາທິດທີ່ສິບຫົກຂອງການປົກສາຫາລືກັນ ຊຶ່ງເປັນວັນ ທີ່ສິບເຈັດເດືອນກັນຍາປີ ຈກຊກ, ການຂຽນຮ່າງຣັຖທັມມະນູນກໍໄດ້ ສິ້ນສຸດລົງແລະໄດ້ຕົກລົງເຊັນເອົາໂດຍ ຜູ້ຕາງຫນ້າຂອງຣັຖທັງຫມົດ

ທີ່ມາຮ່ວມປະຊຸມ. ຄນະຜູ້ແທນທັງຫມົດນີ້ໄດ້ຖືເອົາວ່າ ເວລາແຫ່ງ ຄວາມສຳຄັນໃນວາຣະນີ້ເປັນສິ່ງປະທັບໃຈເປັນທີ່ສຸດ ແລະຄວາມນຶກ ຄິດດັ່ງກ່າວນີ້ພາໃຫ້ທ່ານ ວໍຊິງຕັນເອົາໃຈໃສ່ຕໍ່ການງານທີ່ສຸດ, ແຕ່ ທ່ານແຟຣງຄລິນ ຮູ້ສຶກໂລ່ງໃຈທີ່ບັນຍາກາດການໂຕ້ຖຽງກັນໄດ້ຜ່ອນ ຄາຍລົງ. ຊຶ່ໃສ່ຮູບຂອງຕະວັນເຄິ່ງນຶ່ງ ຊຶ່ງແຕ້ມດ້ວຍສີເຫລືອງສົດ ໄສ ຢູ່ທາງຫລັງຕັ່ງນັ່ງຂອງທ່ານວໍຊິງຕັນ, ທ່ານແຟຣງຄລິນໄດ້ໃຫ້ ຄວາມເຫັນວ່ານັກສິລປິນກໍຮູ້ສຶກລຳບາກໃຈທີ່ຈະຕັດສິນໃຈວ່າ ຮູບນີ້ ເປັນຮູບຕະວັນຕົກຫລືຕະວັນອອກ.

ທ່ານໄດ້ໃຫ້ຂໍ້ສັງເກດດັ່ງນີ້: "ໃນທ່າມກາງ ການປະຊຸມ, ຄວາມບໍ່ແນ່ນອນໃນຄວາມຫວັງແລະຄວາມຢ້ານຂອງຂ້າພະເຈົ້າ ໄດ້ ແນມເບິ່ງຂ້າງຫລັງປະທານ ໂດຍບໍ່ສາມາດຈະເດົາໄດ້ວ່າ ມັນເປັນ ພາບຂອງການຂຶ້ນຫລືການລົງ; ແຕ່ດຽວນີ້ຂ້າພະເຈົ້າດີໃຈຫລາຍທີ່ຮູ ວ່າ ຮູບດັ່ງກ່າວນີ້ເປັນຮູບຂອງຕະວັນພວມຂຶ້ນ ບໍ່ແມ່ນຮູບຂອງຕະ ວັນຕົກດິນ".

ການປະຊຸມໄດ້ສິ້ນສຸດລົງແລ້ວແລະສະມາຊິກທັງຫລາຍໄດ້ມາ ຮວມຢູ່ຮ້ານອາຫານໃນເມືອງ ເພື່ອຮັບປະທານອາຫານຄ່ຳພ້ອມໆກັນ ແລະຈາກນັ້ນກໍສົ່ງລາກັນດ້ວຍຄວາມອາໄລອາວອນ. ແຕ່ຢ່າງໃດກໍ ດີບົດບາດອັນສຳຄັນ ໃນການຕໍ່ສູ້ເພື່ອເຮັດໃຫ້ຄວາມສາມັກຄີຂຶ້ນຍັງ ເປັນບັນຫາສະເພາະໜ້າຢູ່ ເພາະວ່າຍັງຈະຕ້ອງໄດ້ຮັບຄວາມເຫັນ

ຊອບຈາກການປະຊຸມທົ່ວໄປພາຍໃນຣັຖເສັຍກ່ອນ, ຮ່າງກົດຫມາຍທີ່ເຣັດຂຶ້ນນີ້ຈຶ່ງຈະກາຍເປັນກົດຫມາຍອັນຖາວອນແລະໃຊ້ການໄດ້.

ທີ່ປະຊຸມໄດ້ລົງຄວາມເຫັນວ່າຣັຖທັມມະນູນ ນີ້ຈະກາຍເປັນກົດຫມາຍຖາວອນຖ້າຫາກວ່າກອງປະຊຸມຂອງເກົ້າຣັຖຣັບຮອງເອົາ. ໃນປາຍປີ ຈກຊກ, ສາມຣັຖໄດ້ໃຫ້ສັຕຍາບັນແລ້ວ ແຕ່ອີກຫົກຣັຖເດ ຈະໃຫ້ຫລືບໍ່? ໃນສາຍຕາຂອງບຸກຄົນທົ່ວໄປແລ້ວ ຮ່າງກົດຫມາຍນີ້ເຕັມໄປດ້ວຍອັນຕລາຍ ເພາະຢ້ານວ່າ ເມື່ອຣັຖບານກາງມີອຳນາດເຂັ້ມແຂງແລ້ວ ພວກຕົນຈະກາຍເປັນຂ້າທາສ, ຈະຖືກຫນີບເຕັງດ້ວຍການເສັຍພາສີຫນັກ ແລະດຶງເອົາເຂົາເຈົ້າເຂົ້າໄປພົວພັນ ໃນສົງຄາມອີກ ດັ່ງນັ້ນບັນຫາດັ່ງກ່າວນີ້ກໍໄດ້ກາຍເປັນຮູບຮ່າງຂອງສອງພັກ, ຄືພັກນິຍົມຣັຖບານ ແລະພັກຕໍ້ຕ້ານຣັຖບານ. ພວກນຶ່ງນິຍົມການມີຣັຖບານອັນຫມັ້ນຄົງ ແລະອີກພວກນຶ່ງຢາກຢູ່ເປັນຣັຖຂອງໃຜຂອງລາວ ໂດຍມີການຄົບຄ້າສະມາຄົມກັນພຽງເຄື່ງໆກາງໆເທົ່ານັ້ນ ຄວາມຂັດແຍ້ງເຫລົ່ານີ້ ໄດ້ລຸກລາມໄປຮອດຫນັງສືພິມ ຮອດ ຣັຖສະພາແລະການປະຊຸມຣັຖ. ການຖົກຖຽງກັນດ້ວຍອາລົມອັນຮ້ອນແຮງໄດ້ ລະບາຍອອກມາທັງສອງຝ່າຍ, ຜູ້ທີ່ມີຄວາມສາມາດກວ່າຫມູ່ໃນນີ້ແມ່ນພວກທີ່ສນັບສນູນຣັຖບານ ຊຶ່ງໃນນີ້ມີທ່ານແຮມິລຕັນ, ທ່ານເມດີຊັນ, ແລະຈອນເຈ ຊຶ່ງໄດ້ຂຽນບົດຄວາມລົງໃນຫນັງສືພິມໃນນາມນະໂຍບາຍການເມືອງແລະຣັຖທັມມະນູນໃຫມ່. ຜົນຂອງການແຂ່ງ

ຂັນໃນຣັຖແມແຊຈູແຊດ ຊຶ່ງເກີດຈາກຄວາມບໍ່ພໍໃຈນຳການແບ່ງທີ່ດິນ ໄຮ່ນາ, ໄດ້ເຮັດໃຫ້ມີການເພີ່ມຕື່ມກົດຫມາຍ ວ່າດ້ວຍສິດທິຂອງມະນຸດເຂົ້າໃນຣັຖທັມມະນູນ, ແລະສິດທິດັ່ງກ່າວນີ້ ແຕ່ກ່ອນກໍໄດ້ບົງໄວ້ໃນກົດຫມາຍຂອງຣັຖ, ດັ່ງນັ້ນຈຶ່ງຖືວ່າ ເປັນກົດຫມາຍສູງສຸດຂອງແຜ່ນດິນ ຣວມເຂົ້າເປັນສິບຂໍ້ກັບເອກສານເກົ່າຂອງຣັຖທັມມະນູນນີ້.

ການແກ້ໄຂກົດຫມາຍນີ້ໄດ້ໃຫ້ຄວາມຄຸ້ມກັນແກ່ພົລເມືອງຂອງສະຫະຣັຖເປັນຢ່າງດີເຊັ່ນ: ເສຣີພາບໃນການນັບຖືສາສນາ, ເສຣີພາບໃນການປາກເວົ້າ, ເສຣີພາບແຫ່ງການຫນັງສືພິມ ແລະການປະຊຸມ; ມີກອງທະຫານອາສາສມັກ ແທນທີ່ຈະແມ່ນກອງທັບປະຈຳ; ມີສິດທິໃນການຕັດສິນຄວາມໂດຍນັກກົດຫມາຍ ແລະໂດຍກົດຫມາຍຂອງແຜ່ນດິນ, ແລະຫ້າມການໃຊ້ອຳນາດທີ່ວໆໄປ. ຜົນຈາກການເພີ່ມຕື່ມສິດທິຂອງບຸກຄົນ ເຂົ້າໃນຣັຖທັມມະນູນນີ້ພາໃຫ້ຣັຖທັງຫລາຍຍິນດີສນັບສນູນຣັຖທັມມະນູນແລະຮັບຮອງເອົາເປັນກົດຫມາຍໃນວັນທີ ๘๑ ມີຖຸນາ ປີ ๑ກຊຊ, ສະພາກົງແກຣສ້ໄດ້ຈັດໃຫ້ມີການຄັດເລືອກເອົາປະທານາທິບໍດີ ເປັນເທື່ອທຳອິດ ແລະໄດ້ປະກາດວ່າຣັຖບານໃຫມ່ຈະເລີ່ມການບໍຣິຫານປະເທດຕັ້ງແຕ່ວັນທີ ๔ ປີ ๑ກຊຊ ຊຶ່ງທ່ານວໍຊິງຕັນໄດ້ວາງແຜນການໄວ້ຢ່າງຮອບຄອບ.

ຊື່ຂອງທ່ານວໍຊິງຕັນເປັນທີ່ຮູ້ຈັກດີແກ່ທຸກໆຄົນ ໃນການເລືອກເອົາຜູ້ນຳໃຫມ່ນີ້, ແລະໃນທີ່ສຸດທ່ານວໍຊິງຕັນກໍຖືກຄັດເລືອກໃຫ້ເປັນ

ປະທານາທິບໍດີຂອງສະຫະຣັຖ. ໃນວັນທີ ມ້ວ ເດືອນ ເມສາ ປີ ຈກຊຜ, ທ່ານໄດ້ເຂົ້າສາບານຕົວ ເພື່ອຮັບຕຳແຫນ່ງປະທານາທິບໍດີ ຂອງສະຫະຣັຖ ແລະໄດ້ໃຫ້ຄຳຫມັ້ນສັນຍາວ່າ ຈະບໍຣິຫານປະເທດ ໂດຍສຸດຄວາມສາມາດ ເພື່ອຮັກສາໄວ້ ແລະປ້ອງກັນຣັຖທັມມະນູນ ຂອງສະຫະຣັຖ.

ຄັ້ງທຳອິດຂອງການເປັນສາທາຣະນະຣັຖ, ບັນຫາເສຖກິດ ເນື່ອງຈາກໄພສົງຄາມກໍກຳລັງໄດ້ຮັບການແກ້ໄຂ ແລະປະເທດຊາດ ກໍກຳລັງຈເຣີນຂຶ້ນຕາມລຳດັບ, ການເຮັດໄຮ່ເຮັດສວນ ກໍໄດ້ຜົນດີ, ແລະຕ້ອງການແຮງງານກໍມີຫລາຍຂຶ້ນ. ຮ່ອມພູທີ່ອຸດົມສົມບູນ ຊຶ່ງຢູ່ ຕໍ່ຈາກເມືອງນິວຢອກໄປຫາເພັນຊິລເວເນັຍ ແລະເວີຊິເນັຍໄດ້ກາຍ ເປັນບ່ອນປູກເຂົ້າທີ່ໃຫຍ່ທີ່ສຸດແລະເຖີງແມ່ນວ່າເຄື່ອງໃຊ້ຫລາຍແນວ ນັ້ນລ້ວນແຕ່ເປັນສິ່ງຂອງ ທີ່ຜລິດເອົາເອງ, ແຕ່ໂຮງງານກໍກຳລັງ ເກີດຂຶ້ນເຫມືອນກັນ ຣັຖແມແຊຈູແຊສ່ ແລະຣັຖໄອແລນໄດ້ວາງພື້ນ ຖານ ຂອງການອຸດສາຫະກັມຕຳຜ້າ; ຣັຖຄໍແນກຕິຄັດໄດ້ເລີ່ມການ ຜລິດເຄື່ອ່ງໃຊ້ປະເພດກະປ່ອງແລະນາລິກາ; ຣັຖນິວຢອກ, ນິວເຈີ ຊີແລະເພັນຊີເວເນັຍໄດ້ຜລິດກະດາດ, ຈອກແກ້ວ, ແລະເຫລັກ, ສ່ວນການເດີນເຮືອ ກໍກ້າວຫນ້າດີ ແລະຢູ່ໃນອັນດັບຮອງຕໍ່ຈາກປະ ເທດອັງກິດ. ກ່ອນປີ ຈກຜວ, ເຮືອເດີນທະເລຂອງອະເມຣິກັນ ໄດ້ໄປຮອດເມືອງຈີນເພື່ອຂາຍຂົນສັດ ແລະຂາກັບກໍຊຶ້ຊາ, ເຄື່ອງ

ເຫດແລະໃຫມມາ.

ຄວາມຂຍັນຂັນແຂງອັນຮີບດ່ວນຂອງຊາວອະເມຣິກັນໃນຂນະນີ້ ແມ່ນການແຜ່ຂຍາຍ ອອກໄປທາງພາກຕະວັນຕົກ. ຊາວນິວອິງແລນດ່ ແລະພວກທີ່ຢູ່ໃນຮັຖເພັນຊີລເວເນັຍໄດ້ຍົກຍ້າຍມາຢູ່ທາງຮັຖໂອໄຮໂອແລະຊາວເມືອງເວີຊີເນັຍ ແລະແຄໂຮໄຮນາໄດ້ພາກັນມູ້ງຫນ້າໄປຢູ່ທາງແຖບຮັຖເຄນຕັກກີ ແລະເທເນຊີ. ຕາມຈ້າຍພູເຂົາອາເລເກນີສກໍປາກົດມີແຕ່ຫລັງຄາຂອງຮົຖໄຟ ທີ່ຂົນຜູ້ຄົນຍົກຍ້າຍຄົວແລະໃກ້ເຂດປ່າເຄນຕັກກີ ນີ້ກໍເຕັມໄປດ້ວຍນັກລ້າສັດທີ່ນຸ່ງຫົ່ມດ້ວຍຂົນສັດ ແລະນັກຄົ້ນຄວ່າພ້ອມດ້ວຍວຽກເຄື່ອງເຮືອນ, ແກ່ນຜັກ, ເຄື່ອງອຸປກອນເຮັດໄຮ່ເຮັດສວນ ແລະສັດລ້ຽງ. ໃນປ່າຮົກທີ່ຖາກຖາງແລ້ວກໍມີພວກຊາວໄຮ່ຊາວນາຢູ່ຕາມເຂດຊາຍແດນ ແລະເພື່ອນບ້ານໃກ້ຄຽງກໍພາກັນເຮັດຕູບໄມ້ເປັນທີ່ຢູ່ອາໄສ. ທຸກປີໃດກໍມີເຮືອບັນທຸກສິນຄ້າແກ່ນພືດຜັກ, ເນື້ອເຄັມ, ແລະ ໂພທາສລົງໄປ ຂາຍຕາມແມ່ນ້ຳມີຊີຊີບປີໄປນິວອອກລິນສ່ແລະແຕ່ລະປີເມືອງທາງເຂດຕະວັນຕົກກໍໄດ້ກາຍເປັນເມືອງທີ່ສາໍຄັນຂຶ້ນເລື້ອຍໆ, ສັດປ່າ, ພຍາດແລະອັນຕຣາຍ, ແລະຄວາມຍາກລາໍບາກເປັນສິ່ງທີ່ຕ້ອງສູ້ຫນ້າ ແຕ່ຈາໍນວນຜູ້ທີ່ຕັ້ງຖິ່ນຖານຢູ່ຕາມແຄມແມ່ນ້ຳມີຈາໍນວນສິບພັນຄົນຍັງ ບຸກເບີກປ່າດົງເຫລົ່ານີ້ຢູ່. ຄາໍຂວັນຂອງສມັຍກ່ອນມີຢູ່ວ່າ ການແຜ່ຜາຍອອກໄປທາງພາກຕະວັນຕົກແມ່ນການແປງທາງໄປສູ່ຈັກພັດ.

ອັນນີ້ແມ່ນສະພາບການຂອງປະເທດໃນເວລາທີ່ທ່ານວໍຊິງຕັນ ເຂົ້າຮັບຕຳແໜ່ງປະທານາທິບໍດີ. ຣັຖທັມມະນູນໃໝ່ໃນເວລານັ້ນ ປຽບເໝືອນລາຍການສິ່ງທີ່ຈະເກີດຂຶ້ນ ໂດຍບໍ່ມີຂໍ້ບົ່ງຊີ້ ການສນັບສນູນຈາກປະຊາມະຕິແຕ່ຢ່າງໃດ. ສອງພັກດັ່ງກ່າວນີ້ໄດ້ ເກີດມີຂຶ້ນໃນສໄມການໃຫ້ສັຕຍາບັນ ແລະການຕໍ່ຕ້ານກັນຍັງມີຢູ່ຕໍ່ໄປ ພັກທີ່ຍຶດຖືເອົາສິດທິຂອງຣັຖ ແລະຣະບົບການແບ່ງປັນທີ່ດິນເທົ່າໆກັນ ເປັນໃຫຍ່ ຣັຖບານໃໝ່ຈະຕ້ອງສ້າງເຄື່ອງມືດ້ວຍຕົນເອງ ແລະບໍ່ມີ ເງິນຊ່ວຍເຂົ້າຄັງຫລວງ. ກົດໝາຍນີ້ຈະບໍ່ຖືກນຳອອກມາໃຊ້ ຈົນ ກວ່າຈະມີການແຕ່ງຕັ້ງ ຂອງຜູ້ພິພາກສາທັງໝົດເສັຍກ່ອນ ເພາະ ກອງທັບບົກກໍມີຈຳນວນນ້ອຍແລະກອງທັບເຮືອກໍບໍ່ປາກົດຕົວມີເລີຍ.

ຍ້ອນການເປັນຜູ້ນຳທີ່ມີຄວາມສລຽວສລາດຂອງທ່ານວໍຊິງຕັນ ລາວຈຶ່ງຈຳເປັນທີ່ສຸດສຳລັບປະເທດຊາດໃນເວລານັ້ນເພາະວ່າ ຄຸນ ງາມຄວາມດີທີ່ໄດ້ຊ່ວຍໃຫ້ທ່ານເປັນທະຫານຊັ້ນຢ່ຽມໃນການປະຕິວັດ ໄດ້ຊ່ວຍໃຫ້ທ່ານໄດ້ເປັນຣັຖບຸຣຸດ ຜູ້ເປັນຫົວໜ້າຂອງປະເທດທີ່ເກີດໃໝ່ ຄືກັນ. ທ່ານມີອິດທິພົນໃນການວາງແຜນການໄວ້ໄກ ແລະມີຄວາມ ສາມາດຢ່າງບໍ່ສິ້ນສຸດ ໃນການພົບພໍ້ຄວາມຫຍຸ້ງຍາກຕ່າງໆ. ທ່ານ ໄດ້ເຮັດໃຫ້ປະຊາຊົນນິຍົມຊົມຊອບ ແລະຮັກໃຄ່ ທັງໄວ້ວາງໃຈອີກ ດ້ວຍ; ທ່ານມີຄວາມຊື່ຕຣົງແທນການຄິດລ່ຽວ; ທ່ານມີຄວາມອົດ ທົນເໝືອກວ່າການໂອນອ່ຽງ, ແລະເປັນຄົນທີ່ມີລັກສນະອັນຜ່າເຜີຍ

ພ້ອມທັງມີຄວາມອິດທົນແລະການບັງຄັບຕົນເອງໄດ້.

## ທັສນະສອງຢ່າງຍັງແຂ່ງດີກັນຢູ່ຢ່າງຍາວນານ

ການຈັດຕັ້ງຣັຖບານ ບໍ່ແມ່ນພາລະອັນນ້ອຍ. ສະພາກົງ ແກຣສ໌ໄດ້ຟ້າວຈັດຕັ້ງກະຊວງການຕ່າງປະເທດແລະກະຊວງການຄັງ ສ່ວນທ່ານວໍຊິງຕັນໄດ້ແຕ່ງຕັ້ງທ່ານທອມັສ ເຈຟຟັຽນ ໃຫ້ດຳຣົງຕຳແໜ່ງຣັຖມົນຕີກະຊວງຕ່າງປະເທດ ແລະໄດ້ແຕ່ງຕັ້ງ ທ່ານອາເລກ ແຊນເດີ ແຮມິລຕັນ ຊຶ່ງເປັນຜູ້ຊ່ວຍຄົນໃກ້ຊິດໃນສໄມປະຕິວັດ, ໃຫ້ວ່າຫນ້າທີ່ຣັຖມົນຕີການຄັງ. ພ້ອມກັນນີ້, ທາງສະພາກົງແກຣສ໌ ກໍໄດ້ແຕ່ງຕັ້ງຜູ້ພິພາກສາ ແລະໄດ້ຈັດຕັ້ງໃຫ້ມີສານສູງຊຶ່ງມີ ທ່ານຈອນ ເຈ ເປັນຫົວຫນ້າຝ່າຍຍຸຕິທັມ ແລະຜູ້ຊ່ວຍອີກຫ້າທ່ານຊຶ່ງລ້ວນແຕ່ເປັນຜູ້ພິພາກສາແລະນອກນັ້ນກໍຍັງໄດ້ແຕ່ງຕັ້ງຜູ້ພິພາກສາອີກສາມທ່ານ ຊຶ່ງມີຫນ້າທີ່ໄປກວດຣາຊການເປັນຮອບໆໄປ ຈາກແຂວງນຶ່ງໄປຫາອີກແຂວງນຶ່ງ ແລະໄດ້ຈັດຕັ້ງໃຫ້ມີສານຢູ່ສິບສາມບ່ອນ. ໃນການປົກຄອງຄັ້ງທຳອິດນີ້, ທັງຣັຖມົນຕີກະຊວງປ້ອງກັນປະເທດ ແລະທະນາຍຄວາມທົ່ວໆໄປກໍຖືກແຕ່ງຕັ້ງຂຶ້ນຄືກັນ. ໂດຍທົ່ວໆໄປແລ້ວກ່ອນທ່ານວໍຊິງຕັນຈະຕັດສິນໃຈແນວໃດ ທ່ານມັກຈະປຶກສາຫາລືກັບບຸກຄົນທີ່ທ່ານເຊື່ອຖື ດັ່ງນັ້ນຈຶ່ງປາກົດມີຫ້ອງການຂອງອະເມຣິກັນ ຊຶ່ງປະກອບດ້ວຍຫົວຫນ້າຂອງທຸກໆກະຊວງ ຊຶ່ງສະພາກົງແກຣສ໌ ແຕ່ງຕັ້ງ

ຂັ້ນ, ແມ່ນວ່າກົດໝາຍບໍ່ໄດ້ຮັບຮູ້ຢ່າງເປັນທາງການ ຈົນເຖິງປີ ໑໙໐ກ ກໍ່ຕາມ.

ອະເມຣິກາໃນຂນະທີ່ກຳລັງພົວພັນໃນການປະຕິວັດຢູ່ໄດ້ມີບຸກ ຄົນຊຶ່ງເປັນທີ່ຮູ້ຈັກດີແກ່ຄົນທົ່ວໂລກນັ້ນຄື: ທ່ານວໍຊິງຕັນ ແລະທ່ານ ແຟຣງຄລິນ ນອກນີ້ກໍ່ຍັງມີຜູ້ສລຽວສລາດ ແລະມີຄວາມສາມາດເປັນ ຢ່າງດີອີກເຊັ່ນ ທ່ານແຮມິລຕັນ ແລະທ່ານເຈຟເຟີຊັນ ຊຶ່ງຊື່ສຽງ ຂອງທ່ານທັງສອງນີ້ ໄດ້ແຜ່ຜາຍຂ້າມທະເລໄປຟຸ້ນ. ດ້ວຍການມີ ພອນສວັນອັນປະເສີດແລະຄວາມຍິ່ງໃຫຍ່ໃນຕົວ, ເຂົາເຈົ້າຈຶ່ງໄດ້ມີ ຊື່ສຽງຢູ່ໃນປະວັດສາດ ແມ່ນວ່າເຂົາເຈົ້າເປັນຕົວແທນຂອງອິດທິພົນ ທີ່ຈຳເປັນຂອງສອງຝ່າຍ ຊຶ່ງບາງເທື່ອ ກໍໄດ້ຜ່ານການຕໍ່ສູ້ໃນຊີວິດ ຊາວອະເມຣິກັນກໍຕາມ ທ່ານແຮມິລຕັນ ຍັງອຽງໄປທາງການທ້ອມ ໂຮມກັນຢ່າງແໜ້ນແຟ້ນ ແລະການມີຣັຖບານແຫ່ງຊາດອັນແຂງແຮງ ສ່ວນທ່ານເຈຟເຟີຊັນ ກໍມີຄວາມຄິດກວ້າງໄກກວ່ານັ້ນຄືມັກການມີເສຣີ ປະຊາທິປະໄຕ.

ຈຸດອັນສຳຄັນຂອງການດຳເນີນງານ ໃນດ້ານສາທາຣະນະ ຂອງທ່ານແຮມິລຕັນ ແມ່ນການມັກຄວາມພຽງພໍຄວາມເປັນຣະບຽບ ແລະການຈັດການດ້ວຍຜົນຂອງຄວາມອ່ອນແອ ແລະຂາດຕົກບົກ ພ່ອງຊຶ່ງທ່ານໄດ້ພົບພໍ້ມາຕັ້ງແຕ່ປີ ໑໗໗໕ ຫາປີ ໑໗໘໙ ນັ້ນ ໄດ້ ຊ່ວຍໃຫ້ທ່ານມີຄວາມເຂົ້າໃຈດີຕໍ່ເຫດການແລະເປັນກຳລັງຊຸກຍູ້ ທີ່

ພາໃຫ້ທ່ານຍິນດີ ເຂົ້າຮັບໃຊ້ປະເທດຊາດ. ທ່ານແຮມິລຕັນມີແຜນ ການອັນກ້າຫານ ແລະມີນະໂຍບາຍທີ່ແນ່ວແນ່ຊຶ່ງຖ້າປຽບໃສ່ບຸກຄົນ ອື່ນແລ້ວກໍມີຄວາມເຫັນ ແລະຫລັກການອັນເລື່ອນລອຍ, ເພື່ອສນອງ ຕໍ່ຄວາມຮຽກຮ້ອງຂອງສະພາຕາໍ່ ໃນການວາງແຜນແລະໃຫ້ຄວາມ ສນັບສນູນເຄຮດິດຂອງສາທາຮະນະຢ່າງພຽງພໍ, ທ່ານແຮມິລຕັນໄດ້ ວາງຫລັກການໃນການສນັບສນູນເສຖກິດຂອງສາທາຮະນະຊຶ່ງຈະນາໍ ຜົນດີມາສູ່ຮັຖບານ. ອະເມຣິກາຈະຕ້ອງມີທຶນ ສາໍລັບຂຍາຍອຸດສາ ຫະກັມ, ການຄ້າ, ແລະການປະຕິບັດງານຂອງຮັຖບານ. ຮັຖບານ ຈະຕ້ອງໄດ້ຮັບຄວາມໄວ້ວາງໃຈ ແລະການສນັບສນູນຈາກປະຊາຊົນ ຊຶ່ງມີຫລາຍຄົນປຮາຖນາຢາກຍົກເລີກຫນີ້ສິນຂອງຊາດ ຫລືໃຫ້ໃຊ້ຄືນ ແຕ່ພຽງບາງສ່ວນເທົ່ານັ້ນ. ແຕ່ແນວໃດກໍດີ, ທ່ານແຮມິລຕັນໄດ້ ຢືນຢັນໃນການຊາໍລະຫນີ້ສິນຂອງຮັຖບານຮ່ວມ ແລະຮັຖບານຈະຕ້ອງ ຊາໍລະຫນີ້ສິນທັງຫມົດໃຫ້ແກ່ຮັຖ ເພື່ອເປັນການຊ່ວຍໃນການໃຊ້ຈ່າຍ ໃນສໄມປະຕິວັດ. ທ່ານໄດ້ຄິດຕັ້ງທະນາຄານຂອງສະຫະຮັຖ ພ້ອມ ທັງມີສິດແຕ່ງຕັ້ງສາຂາຂຶ້ນຕາມບ່ອນຕ່າງໆພາຍໃນປະເທດ. ທ່ານ ໄດ້ອຸປຖັມໂຮງພິມເງີນຫລຽນ ທີ່ທ່ານໄດ້ເຫັນດີນາໍການວາງອັຕຮາ ເກັບພາສີ ເພື່ອຮັກສາໄວ້ຊຶ່ງຫລັກການຂຍາຍອຸດສາຫະກັມຂອງຊາດ ວິທີການດັ່ງກ່າວນີ້ໄດ້ກໍ່ໃຫ້ເກີດຜົນຢ່າງກະທັນຫັນ ໃນການວາງເຄຮ ດິດຂອງຮັຖບານກາງ ໃຫ້ຢູ່ເທິງພື້ນຖານອັນແຫນ້ນຫນາແລະເອົາຂາ

ເຂົ້າທັງຫມົດໃຫ້ຣັຖບານດັ່ງຄວາມຕ້ອງການ ຊຶ່ງວິທີການດັ່ງກ່າວນີ້ ຍັງໄດ້ສົ່ງເສີມການຄ້າ ແລະອຸດສາຫະກັມ ດ້ວຍເຫດນີ້ຈຶ່ງມີຄນະນັກ ທຸຣະກິດ ຊຶ່ງຣວມກັນເປັນຄນະໃຫຍ່ຢືນຢູ່ທາງຫລັງຣັຖບານແຫ່ງຊາດ ແລະພ້ອມສເມີທີ່ຈະຕໍ້ຕ້ານຄວາມອ່ອນແອຕ່າງໆ.

ສຳລັບທ່ານ ທອມມັສເຈພເຟີຊັນ ນັ້ນ, ທ່ານເປັນຄົນທີ່ໃຫ້ ຄວາມນຶກຄິດ ແລະຄວາມຄິດຄວາມເຫັນຂອງທ່ານ ແທນທີ່ຈະເປັນຜູ້ ເຣັດເອງ ຄວາມສາມາດຂອງທ່ານແຣມິລຕັນນັ້ນ ກໍຄືການບໍຣິຫານ ງານແຕ່ສຳລັບທ່ານເຈພເຟີຊັນນັ້ນ ທ່ານມັກໃຊ້ແຕ່ຄວາມຄິດກ່ຽວກັບ ປຣັຊຍາ ໃນຣະຫວ່າງບັນດານັກການເມືອງ ແລະນັກຂຽນທັງຫລາຍ ແລະໃນດ້ານການເມືອງແລ້ວທ່ານມີທ່າທາງອັນແປກປລາດແລະແຕກ ຕ່າງຈາກທ່ານແຣມິລຕັນ. ໃນເວລາທີ່ທ່ານໄປຣາຊການທີ່ປະເທດ ຝຣັ່ງເສດໃນນາມຂອງຣັຖມົນຕີນັ້ນ, ທ່ານໄດ້ສຳນຶກເຖິງຄຸນຄ່າຂອງ ຣັຖບານກາງອັນແຂງຂັນໃນການເສື່ອມສຳພັນກັບຕ່າງປະເທດ, ແຕ່ ທ່ານກໍຍັງບໍ່ຕ້ອງການໃຫ້ຣັຖບານນີ້ແຂງເກີນໄປ ເພາະຢ້ານວ່ານັນ ຈະມັດຫລີຕັດສິດຂອງມະນຸດເກີນໄປ. ແມ່ນວ່າທ່ານໄດ້ເກີດມາໃນ ສິ່ງແວດລ້ອມຂອງພວກ ຂຸນນາງກໍຈິງ ແຕ່ທ່ານມີຄວາມໂນ້ມອຽງ ແລະຄວາມເຊື່ອຖືໃນຄວາມສເມີພາບ ແລະການເປັນປະຊາທິປະໄຕ ຊຶ່ງທ່ານໄດ້ຕໍ້ສູ້ເລື່ອຍມາ ເພື່ອນຳມາຊຶ່ງເສຣີພາບຈາກຣາຊາອານາ ຈັກອັງກິດ, ຈາກການຄວບຄຸມຂອງທາງການສາສນາ ຈາກແຜ່ນດິນ

ຂອງພວກຊຸນນາງແລະຈາກການບໍ່ມີຄວາມສະເໝີພາບໃນດ້ານຊັບສິນ.

ຈຸດປະສົງສ່ວນໃຫຍ່ ຂອງທ່ານແຮມິນຕັນ ແມ່ນຊ່ວຍໃຫ້ປະເທດມີອົງການທີ່ມີສະມັດຖພາບດີ, ແຕ່ຈຸດປະສົງຂອງທ່ານເຈຟເຟີຊັນ ນັ້ນ ແມ່ນໃຫ້ສ່ວນບຸກຄົນມີເສຣີພາບອັນກ້ວາງຂວາງ ໂດຍເຊື່ອວ່າ: "ທຸກໆຄົນເກີດມາໃນໂລກນີ້ ມີສິດທິໃນການມີຣັຖບານເປັນຂອງເຂົ້າເຈົ້າເອງ". ທ່ານແຮມິລຕັນມີຄວາມຢ້ານກົວ ຕໍ່ການອິລວົມ ຊຶ່ງໝາຍເຖິງການບໍ່ມີຣະບຽບອັນດີງາມພາຍໃນປະເທດ; ທ່ານເຈຟເຟີຊັນ ຢ້ານການເປັນຂ້າທາສແລະຢ້ານເສັຍເສຣີພາບ ຊຶ່ງໝາຍຄວາມວ່າສະຫະຣັຖ ຕ້ອງການອິດທິພົນຈາກບຸກຄົນທັ້ງສອງນີ້. ຣັຖບານແຫ່ງຊາດເຂັ້ມແຂງແລະການບໍ່ຜູກມັດປະຊາຊົນເກີນໄປ, ເປັນຄວາມຕ້ອງການຂອງຣັຖບານແລະການປາກົດຕົວຂອງບຸກຄົນທັ້ງສອງນີ້ ນັບວ່າເປັນສົມບັດອັນລ້ຳຄ່າຂອງປະເທດຊາດ ເພາະວ່າເຂົ້າເຈົ້າຈະໄດ້ເຣັດປະໂຍດໃຫ້ແກ່ປະເທດຊາດຢ່າງຫລວງຫລາຍ.

ການມີທັສນະແຕກຕ່າງກັນເຊັ່ນນີ້ໄດ້ສະແດງອອກມາໃຫ້ເຫັນເມື່ອເວລາທ່ານເຈຟເຟີຊັນ ເຂົ້າຮັບຕຳແໜ່ງຣັຖມົນຕີຕ່າງປະເທດ ຊຶ່ງໄດ້ນຳພາໃຫ້ມີການປ່ຽນແປງອັນສຳຄັນໃນຣັຖທັມມະນູນ ທັງນີ້ກໍເພາະວ່າເມື່ອທ່ານແຮມິລຕັນ ສເນີກົດໝາຍກ່ຽວກັບການຈັດຕັ້ງທະນາຄານແຫ່ງຊາດ, ທ່ານເຈຟເຟີຊັນບໍ່ເຫັນດີນຳກົດໝາຍດັ່ງກ່າວນີ້ ໂດຍໃຫ້ຄວາມເຫັນວ່ານັ້ນເປັນການຂັດຕໍ່ສິດທິຂອງຣັຖ ແລະທ່ານໄດ້

ປະກາດວ່າຣັຖທັມມະນູນໄດ້ບົ່ງອຳນາດບາງຢ່າງໃຫ້ແກ່ຣັຖບານກາງ ແລ້ວ, ສະນັ້ນສິດທີ່ຂໍ້ໃດທີ່ບໍ່ໄດ້ບົ່ງໄວ້ໃນຣັຖທັມມະນູນຄວນຈະສ່ວນ ໃຫ້ເປັນສິດທິຂອງຣັຖ, ດັ່ງນັ້ນການຈັດຕັ້ງທະນາຄານຈຶ່ງບໍ່ຄວນມີຂັ້ນ ທ່ານແຮມິລຕັນໄດ້ໃຫ້ຄວາມເຫັນວ່າ ອຳນາດຂອງຣັຖບານກາງບໍ່ສາ ມາດຈະອະທິບາຍເປັນແຕ່ລະຄຳໄດ້ ເພາະວ່າລາຍລະອຽດທີ່ບໍ່ຫນ້າ ອະໄພໃຫ້ເປັນສິ່ງຈຳເປັນທີ່ສຸດ ແລະອຳນາດຈະຕ້ອງຢູ່ໃນຂອບເຂດ ຂອງມາຕຣາຂອງຣັຖທັມມະນູນ ແລະສະພາກົງແກຣສ ຊຶ່ງໝ່ນ ທີ່ໄດ້ຮັບອະນຸຍາດ ໃນການອອກກົດຫມາຍ ຊຶ່ງຖືວ່າຈຳເປັນແລະ ເຫມາະສົມທີ່ສຸດ ໃນການຈະນຳອຳນາດນັ້ນອອກໃຊ້. ຣັຖທັມມະນູນ ໄດ້ບົ່ງໄວ້ວ່າ ຣັຖແຫ່ງຊາດມີສິດເກັບພາສີອາກອນ ຊຳລະຫນີ້ສິນ ແລະກູ້ຢືມເງິນ. ທະນາຄານແຫ່ງຊາດຈະເປັນຜູ້ຈັດການໃຫ້ຄວາມ ສະດວກເປັນຢ່າງດີໃນເຣື່ອງນີ້ ແລະສະພາກົງແກຣສ໌ມີຫນ້າທີ່ຈັດຕັ້ງ ທະນາຄານຕາມອຳນາດທີ່ມີຢູ່ໃນທີ່ສຸດ ທ່ານວໍຊິງຕັນແລະສະພາກົງ ແກຣສ໌ກໍໄດ້ຮັບເອົາວິທີການຂອງທ່ານແຮມິລຕັນນີ້ ແລະຕໍ່ມາກໍຖືວ່າ ເປັນທາງການຕໍ່ໄປ.

ແມ່ນວ່າພາລະຂັ້ນທຳອິດນັ້ນ ແມ່ນການສ້າງຖານະເສຖກິດ ພາຍໃນໃຫ້ຫມັ້ນຄົງ ແລະຄວາມປອງດອງໃນຊາດໃຫ້ແຫ້ນຫນາ, ປະເທດທີ່ເກີດໃຫມ່ ກໍຍັງຫລີກລ້ຽງເຫດການຂອງການເມືອງທີ່ເກີດ ຂຶ້ນໃນຕ່າງປະເທດບໍ່ໄດ້. ພື້ນຖານຂອງນະໂຍບາຍ ຕ່າງປະເທດ

ຂອງທ່ານວໍຊິງຕັນນັ້ນແມ່ນການຮັກສາຄວາມສງົບດ້ວຍວ່າປະເທດຈະ
ໄດ້ມີເວລາຟື້ນຈາກພິດຂອງສົງຄາມ ແລະຈະໄດ້ມີໂອກາດສ້າງບ້ານ
ແປງເມືອງໃນຂັ້ນຕໍ່ໄປ. ແຕ່ເຫດການທາງຢູໂຣບ ໄດ້ຂົ່ມຂູ່ຜົນສາໍ
ເຮັດຂອງຈຸດຫມາຍນີ້ ແລະຊາວອະເມຣິກັນຫລາຍຄົນໄດ້ພາກັນເຝົ້າ
ເບິ່ງການປະຕິວັດຂອງຊາວຝຣັ່ງເສດດ້ວຍຄວາມສົນໃຈ ແລະຄວາມ
ເຫັນອົກເຫັນໃຈ. ໃນເດືອນເມສາປີ ຈກຸຜນ, ໄດ້ມີຂ່າວຍິ່ງໃຫຍ່
ກ່ຽວກັບປະເທດຝຣັ່ງເສດ ຊຶ່ງພາໃຫ້ນະໂຍບາຍການເມືອງຂອງອະ
ເມຣິກັນ ພົບພໍ້ກັບຂໍ້ຂັດແຍ້ງອີກ ເພາະວ່າປະເທດຝຣັ່ງເສດ ໄດ້ປະ
ກາດສົງຄາມກັບປະເທດອັງກິດ ແລະປະເທດສະເປັນ ຊຶ່ງເປັນເຫດ
ໃຫ້ທ່ານເຊີເນ, ຣັຖມົນຕີຊາວຝຣັ່ງເສດ ຕ້ອງໄດ້ມາຢ້ຽມສະຫະຣັຖ
ອະເມຣິກາ.

ໃນເວລານັ້ນອະເມຣິກາຍັງເປັນພັນທະມິດຂອງປະເທດຝຣັ່ງ
ເສດຢູ່, ດັ່ງນັ້ນຊາວອະເມຣິກັນຈະຕ້ອງສະແດງນ້ຳໃຈອອກມາເພື່ອ
ຕອບແທນບຸນຄຸນປະເທດຝຣັ່ງເສດທີ່ມີຕໍ່ຕົນໃນຍາມສົງຄາມ ແລະຍັງ
ມີຄວາມຄຽດແຄ້ນຕໍ່ປະເທດອັງກິດ, ແມ່ນວ່າຄນະບໍຣິຫານປະເທດ
ຂອງສະຫະຣັຖ ຕ່າງກໍອວຍພອນໃຫ້ຝຣັ່ງເສດ ໄດ້ຣັບໄຊຊນະໃນສົງ
ຄາມຄັ້ງນີ້ກໍຕາມ, ແຕ່ເລີກລົງໄປກວ່ານັ້ນ ເຂົາເຈົ້າປຣາຖນາຢາກ
ໃຫ້ອະເມຣິກາຢູ່ຫ່າງຈາກສົງຄາມ. ດັ່ງນັ້ນ, ເມື່ອທ່ານເຊີເນີມາ
ເຖິງສະຫະຣັຖ, ທ່ານໄດ້ຖືກຕ້ອນຣັບ ເປັນທາງການ ຢ່າງເຄັ່ງຄັດ

ແລະດ້ວຍຄວາມບໍ່ພໍໃຈ ໃນການຮັບຕ້ອນນີ້, ທ່ານໄດ້ພຍາຍາມລະເມີດຄຳສັ່ງທີ່ຫ້ານບໍ່ໃຫ້ປະເທດຝຣັ່ງເສດໃຊ້ທ່າເຮືອອະເມຣິກັນເປັນຖານທັບ ແລະຈາກການຮຽກຮ້ອງມີຣັຖບານຝຣັ່ງເສດ ກໍຍອມຮັບຟັງແລະປະຕິບັດຕາມ.

ໃນຣະຫວ່າງປີ ໑໗໙໓-໑໗໙໕, ແມ່ນສໄມຂອງການຊ່ອງເຫັນປະຊາມະຕິຂອງຊາວອະເມຣິກັນເພາະວ່າການປະຕິວັດຂອງປະເທດຝຣັ່ງເສດນີ້ ປຽບເໝືອນການແຂ່ງຂັນ ຍາດແຍ່ງອຳນາດ ຣະຫວ່າງຣາຊາທິປະໄຕ ແລະລັດທິ ແຫ່ງການເປັນສາທາຣະນະຣັຖ ການຫມິ່ນເຕັ້ງແລະເສຣີພາບ, ຣະບອບອັດຕາທິປະໄຕ, ແລະຣະບອບປະຊາທິປະໄຕ, ແຕ່ຄົນອື່ນຄິດວ່າ ມັນແມ່ນການປ່ຽນແປງຂອງການຕໍ່ສູ້ຣະຫວ່າງອະນາທິປະໄຕ ແລະຄຳສັ່ງ, ລັດທິການບໍ່ເຊື່ອຖືພະເຈົ້າ ແລະສາສນາ, ຄວາມທຸກຍາກແລະຄວາມມັ່ງມີ. ພວກກ່ອນໄດ້ຮ່ວມກັບພັກຣີພັບລີກັນ ຊຶ່ງແມ່ນພັກປະຊາທິປະໄຕຂອງທຸກວັນນີ້, ແລະອີກພັກນຶ່ງຮ່ວມກັບຄນະຣັຖບານ ຊຶ່ງແມ່ນພັກຣີພັບລີກັນໃນສໄມປັດຈຸບັນນີ້.

ຜົນທີ່ເກີດຂຶ້ນຈາກການຢ້ຽມຢາມຂອງທ່ານເຊີເນ ກໍຄືຄວາມຮູ້ສຶກຂອງຊາວອະເມຣິກັນທີ່ເຄີຍມີຕໍ່ປະເທດຝຣັ່ງເສດໄດ້ລຶ້ນຍ້ອຍລົງ. ໃນເວລາດຽວກັນນີ້, ຄວາມສັມພັນຂອງສະຫະຣັຖ ທີ່ມີຕໍ່ປະເທດອັງກິດກໍເຕີ້ນຫ່າງຕາມທີ່ກອງທະຫານຂອງອັງກິດຍັງຄອບຄອງທີ່

ຫມັ້ນທາງພາກຕະວັນຕົກຢູ່ ແລະຊັບສິນທີ່ທະຫານອັງກິດໃຊ້ສອຍ ໃນ ສໄມປະຕິວັດກໍຍັງບໍ່ໄດ້ຊຳລະຫນີ້ເທື່ອ, ແລະກອງທະຫານຂອງອັງ ກິດກໍຍັງທຳລາຍການຄ້າຂອງອະເມຣິກັນອີກ. ເພື່ອເຈຣະຈາກ່ຽວ ກັບເຣື່ອງນີ້, ທ່ານວໍຊິງຕັນໄດ້ສົ່ງທ່ານຈອນເຈ, ຊີ່ງເຄີຍເປັນທູດຜູ້ ຊຳນານ, ແລະໃນຂນະດຽວກັນນັ້ນໄດ້ດຳຣົງຕຳແຫນ່ງຫົວຫນ້າສານ ສູງສຸດ ໃຫ້ເປັນທູດພິເສດໄປເຈຣະຈາບັນຫານີ້ ທີ່ລອນດອນ. ໃນ ການເຈຣະຈາຄັ້ງນີ້ ທ່ານເຈໄດ້ຕິດຕໍ່ກັບເຈົ້າຫນ້າທີ່ອັງກິດໃຫ້ມີການ ຮ່ວມເຊັນສັນຍາກັນ ແລະໃຫ້ມີການຕົກລົງ ຖອນກອງທະຫານອັງກິດ ອອກຈາກທີ່ຫມັ້ນທາງພາກຕະວັນຕົກຂອງສະຫະຣັຖ ແລະໃຫ້ໄກ່ເກັ່ຍ ເຣື່ອງການຄ້າ. ແຕ່ບໍ່ໄດ້ມີການລັບລອງວ່າຈະສົ່ງຊັບສິນຄືນ, ຫລື ຈະຍຶດເຣືອຂອງອະເມຣິກັນໃນອະນາຄົດ ຫລືຈະບັງຄັບໃຫ້ທະຫານ ເຣືອອະເມຣິກັນເຂົ້າຮັບໃຊ້ໃນກອງທະຫານເຣືອຂອງອັງກິດແຕ່ຢ່າງ ໃດ.

ການເຈຣະຈາຂອງທ່ານເຈນີ້ ໄດ້ພາໃຫ້ເກີດຄວາມບໍ່ພໍໃຈ ທີ່ວໆໄປ, ແຕ່ເມື່ອໃກ້ຈະເຖິງການຄອງຕຳແຫນ່ງຄັ້ງທີ່ສອງ ຂອງ ທ່ານວໍຊິງຕັນແລ້ວ ຜົນປາກົດກໍຄື ຄວາມສຳເຣັດໃນດ້ານຕ່າງໆ. ຣັຖບານ ໄດ້ຈັດຕັ້ງເຄຣດິດຂອງຊາດຂຶ້ນແລະການຄ້າທາງທະເລໃຫ້ ດີຂຶ້ນ, ແລະແຜ່ນດິນທາງພາກຕະວັນຕົກສຽງເຫນືອກໍໄດ້ຄືນມາເປັນ ກັມສິດ ແລະໃນທີ່ສຸດທົ່ວປະເທດກໍ່ໄດ້ພົບກັບຄວາມສງົບສຸກ.

ທ່ານວໍຊິງຕັນໄດ້ຖອນຕົວ ອອກຈາກຣັຖບານໃນປີ ໑໗໙໓, ໂດຍຢືນຢັນວ່າຈະບໍ່ເປັນຜູ້ນຳຂອງປະເທດນານເກີນແປດປີ. ທ່ານຈອນແອດັມສ໌, ຊຶ່ງເປັນຜູ້ທີ່ມີຄວາມສາມາດ ແລະຄວາມຄິດສູງຢ່າງເອົາການເອົາງານ, ໄດ້ຖືກຄັດເລືອກໃຫ້ເປັນປະທານາທິບໍດີ ຄົນໃໝ່ແລະກ່ອນຈະເຂົ້າຮັບຕຳແໜ່ງປະທານາທິບໍດີທ່ານແອດັມສ໌ ໄດ້ມີປາກສຽງກັບທ່ານແຮມິລຕັນ ຜູ້ທີ່ໄດ້ເຮັດຄຸນງານຄວາມດີ ໃຫ້ແກ່ຣັຖບານກ່ອນຢ່າງຫລວງຫລາຍ. ອຸປສັກຂອງທ່ານແອດັມສ໌ກໍຄືທ່ານໄດ້ເຮັດໃຫ້ພັກພວກແຕກຄວາມສາມັກຄີກັນ ແລະໄດ້ເຮັດໃຫ້ຄນະຣັຖມົນຕີແຕກແຍກກັນ. ບັນຍາກາດຂອງນາໆຊາດໄດ້ຕື່ມຄວາມມືດມົວ ແລະໄດ້ເຮັດໃຫ້ເຮືອງນີ້ຍຸດໂຍມລົງ. ສຳລັບປະເທດຝຣັ່ງເສດນັ້ນ ຍັງມີຄວາມຄຽດແຄ້ນ ແກ່ສິ່ງທີ່ທ່ານເຈໄດ້ຕົກລົງ ເຊັນສັນຍາກັບປະເທດອັງກິດ, ແລະໄດ້ປະຕິເສດບໍ່ຍອມຮັບຮັຖມົນຕີຂອງທ່ານແອດັມສ໌ ເມື່ອທ່ານແອດັມສ໌ ສົ່ງຜູ້ຕາງໜ້າສະຫະຣັຖສາມຄົນ ໄປທີ່ຝຣັ່ງເສດ ເຂົາເຈົ້າກໍຖືກທາງການຝຣັ່ງເສດຢຽດຫຍາມເປັນທີ່ສຸດ ຊຶ່ງເຮັດໃຫ້ຊາວອະເມຣິກັນ ມີຄວາມຄຽດແຄ້ນທະວີຂຶ້ນ. ຕໍ່ມາການກຽມທະຫານກອງທັບເຮືອ ກໍໄດ້ຖືກປັບປຸງ ໃຫ້ເຂັ້ມແຂງດີຂຶ້ນ ແລະໃນປີ ໑໗໙໒ ຫລັງຈາກມີການປະທະກັນຫລາຍຄັ້ງ ກັບກອງທັບເຮືອຝຣັ່ງເສດ ຊຶ່ງເຮືອຮົບຂອງອະເມຣິກາເປັນຝ່າຍໄດ້ຮັບໄຊຊະນະທຸກໆເທື່ອ ແລະສິ່ງຄາມປາກົດວ່າ ເປັນສິ່ງທີ່ຫລີກລ້ຽງບໍ່ໄດ້ເສັຍແລ້ວ. ໃນ

ເຫດການທີ່ເກີດຂຶ້ນນີ້, ທ່ານແອດັມສ໌ບໍ່ໄດ້ສົນໃຈນຳຄຳແນະນຳຂອງ ທ່ານແຮມິລຕັນ ເພາະທ່ານຕ້ອງການກໍ່ເສີກສົງຄາມ, ແລະໄດ້ສົ່ງ ຣັຖມົນຕີຄົນໃຫມ່ໄປປະເທດຝຣັ່ງເສດອີກ. ໃນເວລານັ້ນທ່ານ ນາໂປລຽນກຳລັງຂຶ້ນເຄືອງອຳນາດໃຫມ່ແລະໄດ້ໃຫ້ການຕ້ອນຮັບແກ່ຄນະ ນີ້ຢ່າງເປັນກັນເອງ ແລະອັດຕຣາຂອງຄວາມຂັດແຍ້ງກັນກໍໄດ້ສາບ ສູນໄປ

## ຄວາມນຶກຄິດແບບປະຊາທິປະໄຕຂອງທ່ານເຈຟເຟີຊັນ

ກ່ຽວກັບເຫດການພາຍໃນປະເທດ ໃນເວລານັ້ນ ປາກົດວ່າ ປະຊາຊົນບໍ່ມັກທ່ານແອດັມສ໌ເລີຍ ແລະໃນປີ ๑๗๐๐, ປະຊາຊົນອະ ເມຣິກັນປຣາຖນາຢາກໃຫ້ມີການປ່ຽນແປງພາຍໃນປະເທດແລະພາຍ ໃຕ້ການນຳຂອງທ່ານວໍຊິງຕັນແລະທ່ານແອດັມສ໌, ພັກທີ່ນິຍົມຣັຖບານ ກາງໄດ້ຈັດຕັ້ງຣັຖບານອັນແຫ້ນໜາຂຶ້ນ ແຕ່ກໍຈະຕ້ອງຍອມຮັບຮູ້ວ່າ ຣັຖບານຕ້ອງຕອບສນອງຕາມຄວາມປຣາຖນາຂອງປະຊາຊົນ ຊຶ່ງນະ ໂຍບາຍຂອງຣັຖບານທີ່ດຳເນີນຢູ່ໃນຂນະນັ້ ກໍຄືນະໂຍບາຍທີ່ໄກອອກ ໄປຈາກມວນຊົນສ່ວນຫລາຍ. ທ່ານເຈຟເຟີຊັນຜູ້ທີ່ໄດ້ເກີດມາເປັນ ຜູ້ນຳທີ່ມີປະຊາຊົນນິຍົມຫລາຍທີ່ສຸດ ໄດ້ຮ່ວມໃຈກັບປະຊາຊົນ ສ່ວນ ຫລາຍ ເຊັ່ນວ່າພວກຊາວໄຮ່ຊາວນາມ້ອຍໆ ພວກພໍ້ຄ້າ ແລະຄົນ ງ່ວນອື່ນໆ ຊຶ່ງເຂົາເຈົ້າໄດ້ຍົ່ນມືເຂົ້າໄປ ແລະມີອຳນາດຍິ່ງຫລວງ ຫລາຍໃນການເລືອກຕັ້ງຂອງປີ ๑๗๐๐. "ຂ້າງແຂ່ງຂອງເຮືອຄ້າ

ໃຫຍ່ໃນສໄໝໂບຮານ ທີ່ໄດ້ຖືກທົດລອງມາແລ້ວ" ອັນນີ້ແມ່ນຂໍ້ຂຽນ ຕອນນຶ່ງ ຂອງທ່ານເຈພເຟີຊັນ ທີ່ໄດ້ຂຽນເຖິງເພື່ອນຄົນນຶ່ງ ວ່າ "ພວກເຮົາຈະປ່ອຍເຮືອລຳນີ້ໄປ ຕາມເສັ້ນທາງຂອງພັກຣິພັບລີກັນ ແລະຄວາມງາມຂອງການເຄື່ອນໄຫວຂອງເຮືອລຳນີ້ ຈະບອກເຖິງ ຄວາມຊຳນານຂອງຜູ້ສ້າງເຮືອລຳນີ້.

ຕາມຄວາມເປັນຈິງແລ້ວ, ທ່ານເຈພເຟີຊັນຢາກຂົ່ມຄອງອຳ ນາດເພາະວ່າທ່ານມີອຸດົມຄະຕິ ຄວາມຮຽບຮ້ອຍ ເຂັ້ມແຂງ ແລະມີ ອະນາຄົດແລະຄວາມຫວັງຂອງອະເມຣິກາ ແລະການທີ່ທ່ານໄດ້ຂົ່ມ ຄອງຕຳແໜ່ງປະທານາທິບໍດີໃນປີ ໑໗໐໑ ນັ້ນ ໄດ້ສະແດງໃຫ້ເຫັນ ຄວາມຈິງວ່າຣະບອບປະຊາທິປະໄຕ ກຳລັງມີອຳນາດ. ດັ່ງທີ່ເຄີຍ ປະຕິບັດມາ, ທ່ານເຈພເຟີຊັນມັກຍ້າງຈາກເຮືອນຂອງທ່ານໄປໂຮງ ການກັບໝູ່ສອງສາມຄົນທີ່ຢູ່ໃນຕຶກແກປິຕອລ. ເມື່ອເຂົ້າໄປໃນສະ ພາເຊເນດແລ້ວ ທ່ານກໍໄດ້ໄປຈັບມືທ່ານເບີ ຊຶ່ງເປັນຄູ່ແຂ່ງໃນ ການເລືອກຕັ້ງວ່າງໝໍ່ໆມານີ້ ແລະຈາກນັ້ນກໍໄດ້ສາບານຕົວເຂົ້າຮັບ ຕຳແໜ່ງຂອງຫ້ວາທ່ານ ຈອນມາຣ໌ຊຳລທີຫາກໍໄດ້ຮັບແຕ່ງຕັ້ງ ໃຫ້ ເປັນຫົວໜ້າສານສູງສຸດວ່າງໝໍ່ໆນີ້. ໃນຄຳປາໄສທີ່ທ່ານເຈພເຟ ຊັນກ່າວໃນໂອກາດເຂົ້າຮັບຕຳແໜ່ງປະທານາທິບໍດີນັ້ນ, ທ່ານໄດ້ໃຫ້ ຄຳໝັ້ນສັນຍາວ່າຣັຖບານນີ້ຈະເປັນຣັຖບານທີ່ຮອບຄອບ ແລະຖ້ວນ ທີ່ສຸດ ເພື່ອຈະຮັກສາຣະບຽບວິໄນຂອງປະຊາຊົນແຕ່ຈະປະໃຫ້ປະຊາ

ຊົນມີເສຣີພາບໃນການສແວງຫາຄວາມກ້າວຫນ້າ ໃນດ້ານອຸດສາຫະ
ກັມ.

ການປາກົດຕົວຂອງທ່ານເຈພເຟີຊັນທີ່ທຳນຽບຂາວ ໄດ້ເລີ່ມ
ສນັບສນູນການປະຕິບັດແບບປະຊາທິປະໄຕ ເພາະໃນສາຍຕາຂອງ
ທ່ານແລ້ວພົລເມືອງທັມມະດາຄົນນີ່ງກໍເປັນທີ່ຫນ້ານັບຖືເຫມືອນກັນກັບ
ຂ້າຣາຊການຊັ້ນສູງ. ທ່ານໄດ້ສັ່ງສອນລູກນ້ອງ ແລະຜູ້ຮ່ວມງານ
ຂອງທ່ານວ່າ ເຂົາເຈົ້າຈະຕ້ອງຖືວ່າຕົນເປັນທີ່ເຊື່ອຖືຂອງປະຊາຊົນ
ແລະທ່ານໄດ້ສນັບສນູນການກະສິກັມແລະການຂຍາຍດິນແດນອອກໄປ
ທາງພາກຕະວັນຕົກ. ທ່ານໄດ້ສນັບສນູນ ການປ່ຽນແປງກົດຫມາຍ
ຕາມແບບເສຣີນິຍົມ ແລະເຊື່ອວ່າ ອະເມຣິກາແມ່ນສວັນຂອງພວກທີ່
ຖືກກົດຂີ່. ໃນປາຍປີ ຈຊ໐ຈ, ທ່ານແອລເບີດ ກາລາຕິນ, ຣັຖ
ມົນຕີການຄັງຂອງທ່ານໄດ້ສາມາດເຮັດໃຫ້ຫນີ້ສິນຂອງຣັຖລຸດນ້ອຍລົງ
ຮອດຫົກສິບລ້ານດອນລາ ຊຶ່ງໄດ້ເຮັດໃຫ້ແນວຄິດຂອງທ່ານເປັນທີ່ຮູ້
ຈັກກັນທົ່ວມຸມເມືອງແລ້ວ ແຕ່ລະຣັຖໄດ້ລົບລ້າງກົດຫມາຍວ່າດ້ວຍຄຸນ
ສົມບັດຂອງການເປັນເຈົ້າຂອງຊັບ ແລະໄດ້ອອກກົດຫມາຍວ່າດ້ວຍ
ຄວາມເມຕຕາກະຮຸນາ ຊຶ່ງໃຫ້ມີການຜ່ອນຜັນແກ່ລູກຫນີ້ແລະນັກໂທດ
ຕາມທາງຄວນ.

ບາດກ້າວດຽວຂອງທ່ານເຈພເຟີຊັນ ໄດ້ເພີ້ມທີ່ດິນຂອງຊາດ
ຂຶ້ນອີກທົບນີ່ງ. ປະເທດສະເປັນ ເຄີຍໄດ້ປົກຄອງເຂດແດນ ທາງ

ພາກຕະເວັນຕົກຂອງແມ່ນ້ຳມິຊິຊິບປີ, ໂດຍມີທ່າເຮືອນິວອອກລິນຢູ່ ທີ່ປາກນ້ຳ ຕໍ່ມາບໍ່ດົນເມື່ອທ່ານເຈຟເຟີຊັນ ເຂົ້າຮັບຕຳແໜ່ງແລ້ວ, ທ່ານນະໂປລຽນໄດ້ບັງຄັບໃຫ້ຣັຖບານອັນອ່ອນແອຂອງສະເປັນຍົກບໍຣິເວນອັນກ້ວາງໃຫຍ່ຶ່ງເອີ້ນວ່າລູຍຊິອານາຄືນໃຫ້ຝຣັ່ງເສດ ແລະໃນ ຂນະທີ່ຝຣັ່ງເສດດຳເນີນການເຊັ່ນນີ້, ຊາວອະເມຣິກັນກໍພາກັນສັນ ສະທ້ານດ້ວຍຄວາມຢ້ານກົວແລະຄວາມຄຽດຊັງ ເພາະວ່ານິວອອກ ລິນສ໌ ເປັນທ່າເຮືອທີ່ຈຳເປັນທີ່ສຸດສຳລັບຫ້ວຍໂອໄຮໂອ ແລະມິຊິຊິບ ປີ ແລະແຜນການປົກຄອງອານານິຄົມອັນກ້ວາງໃຫຍ່ຂອງຈັກພັດ ຊຶ່ງ ຢູ້ຂ້າງໆສະຫະຣັຖນີ້ເປັນການຂົ່ມຂູ່ຕໍ່ສິດທິໃນການທຳມາຄ້າຂາຍແລະ ຄວາມປອດໄພພາຍໃນປະເທດດ້ວຍ.

ທ່ານເຈຟເຟີຊັນໄດ້ຮູ້ວ່າ ຖ້າຫາກວ່າປະເທດຝຣັ່ງເສດຄອບ ຄອງດິນແດນຂອງລູຍຊິອານານີ້ໃດ ສະຫະຣັຖຈະເຂົ້າຮ່ວມກັບອັງກິດ ແລະຈະເພິ່ງເຮືອຮົບອັງກິດໃຫ້ຊຸມກັນໂລດ, ແລະຖ້າຫາກວ່າມີສຽງ ປືນດັງໃນເວລາໃດ ຊຶ່ງຈະເປັນສັນຍາຂອງການເຣັດເສິກສົງຄາມ ກັບຢຸໂຣບ ທະຫານອະເມຣິກັນແລະອັງກິດຈະຕໍ້ຕ່ານນິວອອກລິນສ໌ທັນ ທີ ມາໂປລຽນຮູ້ສຶກຕິດອົກຕິດໃຈ ໃນຄວາມແມ່ວແມ່ຂອງສະຫະຣັຖ ແລະປະເທດອັງກິດໃນການຂັດຂືນເທື່ອນີ້. ດັ່ງນັ້ນທ່ານຮູ້ດີວ່າການ ປະກາດເສິກສົງຄາມກັບປະເທດອັງກິດນັ້ນເປັນສິ່ງທີ່ຈະຕ້ອງໂຈະໄວ້ ເພາະວ່າໄດ້ເຊັນສັນຍາສງົບເສິກ ໄວ້ແລ້ວ ແລະຖ້າວ່າມີການສູ້ຣົບ

ກັນອີກ ແນ່ນອນຝຣັ່ງເສດຈະຕ້ອງເສັຍລູຍຊີອານາ ເພື່ອບໍ່ໃຫ້ລູຍຊີ
ອານາຕົກຢູ່ໃນກຳມືຂອງອັງກິດແລະເພື່ອຄວາມເຊື່ອມສັມພັນອັນດີກັບ
ອະເມຣິກັນຕໍ່ໄປ ຝຣັ່ງເສດຈື່ງໄດ້ສເນີຂາຍບໍຣິເວນດັ່ງກ່າວນີ້ ໃຫ້
ສະຫະຣັຖໃນຣາຄາສິບຫ້າລ້ານດອນລາ ແລະຈາກນັ້ນມາບໍຣິເວນອັນ
ກວ້າງໃຫຍ່ນີ້ກໍກາຍມາເປັນກັມສິດຂອງສາທາຣະນະພ້ອມກັນນັ້ນເຈພ
ເຟີຊັນໄດ້ຕໍ່ຣັຖທັມມະນູນອອກໄປໃຫ້ກວ້າງອີກເພາະວ່າໃນຣັຖທັມມະ
ນູນເກົ່າບໍ່ໄດ້ບົ່ງໄວ້ວ່າຣັຖບານຊື້ດິນແດນປະເທດນອກ ທ່ານເຈພເຟີ
ຊັນກໍໄດ້ດຳເນີນການໄປ ໂດຍບໍ່ໄດ້ຖາມຄວາມເຫັນພ້ອມຂອງສະພາ
ກົງແກຣສ່ແຕ່ຢ່າງໃດເລີຍ. ຜົນປາກົດກໍຄືໃນປີ ຈຊ໐໘ ສະຫະຣັຖ
ໄດ້ດິນແດນຫລາຍຂຶ້ນລ້ານກວ່າໄມ ແລະດ້ວຍການມີທ່າເຮືອນິວອອກ
ລິນສ່ ຕົວເມືອງນິວອອກລິນສ່ ກໍຖືກສ້າງຂຶ້ນຢູ່ ອ້ອມຫ້ວຍມີຊີຊິບປີ
ໂດຍມີປ່າຢູ່ເບື້ອງຫລັງ ຕໍ່ນັ້ນມາອະເມຣິກາເປັນປະເທດທີ່ມີທີ່ງອັນ
ອຸດົມສົມບູນແລະພາຍໃນແປດສິບປີຕໍ່ມາ ປະເທດນີ້ໄດ້ກາຍເປັນບ່ອນ
ທີ່ມີຜົນປູກຫລາຍທີ່ສຸດໃນໂລກ ແລະນອກນີ້ຍັງໄດ້ຄວບຄຸມຣະບົບຂອງ
ຫ້ວຍໃຫຍ່ໃນທະວີບນີ້ ຊຶ່ງບໍ່ດົນເຮືອຂອງຊາວຕະວັນຕົກກໍເຕັມຢູ່ໃນ
ແມ່ນ້ຳເຫລົ່ານີ້ ເພື່ອຂົນຜູ້ຄົນມາຢູ່ແຖວນີ້ ເພື່ອຂົນສິນຄ້າໄປຂາຍໃນ
ຫ້ອງຕລາດ ເຊັ່ນວ່າຂົນສັດ, ແກ່ນພືດ, ເນື້ອເຄັມແລະຜົລປູກ
ຫລາຍໆແນວ.

## ສາເຫດທີ່ພາໃຫ້ເກີດສົງຄາມກັບປະເທດອັງກິດ

ຈົນເຖິງເວລາໃກ້ຈະຈົບກຳນົດຂອງຕຳແໜ່ງປະທານາທິບໍດີ ຄັ້ງທີ່ໜຶ່ງ, ທ່ານເຈຟເຟີຊັນ ຍັງມີປະຊາຊົນນິຍົມຢູ່ຢ່າງກວ້າງຂວາງ ເພາະເມືອງລູຍຊີອານາໄດ້ກາຍເປັນເມືອງຕົວຢ່າງອັນດີທີ່ສຸດ ແລະ ເປັນເຂດທີ່ຮັ່ງມີແລະອຸດົມສົມບູນດີ. ດັ່ງນັ້ນ ປະທານາທິບໍດີ ກໍໄດ້ ໃຊ້ຄວາມພຍາຍາມເປັນທີ່ສຸດທີ່ຈະເຮັດທຸກສິ່ງຢ່າງ ໃຫ້ປະຊາຊົນ ມີ ຄວາມພໍໃຈທົ່ວເຖິງກັນ ແລະການເລືອກຕັ້ງຄັ້ງໃຫມ່ນີ້ ເປັນທີ່ ແນ່ ນອນແລ້ວວ່າ ທ່ານຈະສາມາດຊອງຕຳແໜ່ງຄັ້ງທີສອງ ຊຶ່ງຈະໄດ້ ຕັ້ງຕົ້ນໃນປີ ໑໘໐໔ ນີ້. ຢ່າງໃດກໍດີ ທ່ານເຈຟເຟີຊັນ ໄດ້ໃຊ້ສິດ ຂອງຣັຖບານທຸກຢ່າງທີ່ຈະເຮັດໃຫ້ອະເມຣິກາຢູ່ເປັນກາງ ໃນສໄມ ການຕໍ່ຕ້ານຣະຫວ່າງປະເທດອັງກິດແລະປະເທດຝຣັ່ງເສດ, ແຕ່ກຳ ລັງທັງສອງຝ່າຍໄດ້ປິດລ້ອມທາງເດີນເຮືອຊຶ່ງໄດ້ພາໃຫ້ການຄ້າຂອງ ອະເມຣິກັນຕ້ອງພົບກັບອຸປສັກຢ່າງຫນັກ ເພາະອັງກິດໄດ້ຕັດຫົນທາງ ເຮືອສິນຄ້າລຳໃຫຍ່ຊຶ່ງບັນທຸກສິນຄ້າທີ່ອຸດົມສົມບູນ ຈາກປະເທດຝຣັ່ງເສດ ແລະ ຫມູ່ເກາະອິນເດັຍຕະວັນຕົກ, ແລະດ້ວຍການປ່າວປະກາດນີ້, ອັງ ກິດໄດ້ສັ່ງໃຫ້ປິດລ້ອມຝັ່ງຂອງຢຸໂຣບຈາກແມ່ນ້ຳ **Brest** ຫາແມ່ນ້ຳ **Elbe.** ຝ່າຍຝຣັ່ງເສດໄດ້ສັ່ງໃຫ້ຈັບກຸມເຮືອອະເມຣິກັນທຸກໆລຳ ທີ່ເຂົ້າທຽບທ່າຂອງອັງກິດ ແລະສົງຄາມໄດ້ເຖິງຂັ້ນທີ່ວ່າ ເຮືອສິນ ຄ້າຂອງອະເມຣິກັນທີ່ຕິດຕໍ່ຄ້າຂາຍກັບຝຣັ່ງ ຈະຕ້ອງຖືກເຮືອຂອງອັງ

ກິດຈັບກຸມແລະເຮືອສິນຄ້າຂອງອະເມຣິກັນ ທີ່ຕົກຕໍ້ຄ້າຂາຍກັບອັງກິດ ຈະຕ້ອງໄດ້ຮັບອັນຕລາຍ ຈາກປະເທດຝຣັ່ງເສດ. ຕໍ່ໜ້າສະພາບການເຊັ່ນນີ້ ການຄ້າຂອງອະເມຣິກັນຈຶ່ງປຽບເໝືອນຄົນພິການ.

ແຕ່ແນວໃດກໍດີ, ຊາວອະເມຣິກັນຍັງມີຄວາມຂັດຂ້ອງໝອງໃຈກັບປະເທດອັງກິດຢູ່ ເພື່ອຈະເອົາໄຊຊະນະໃນສົງຄາມຄັ້ງນີ້ໃຫ້ໄດ້, ອັງກິດໄດ້ສ້າງເຮືອຮົບໄດ້ເຈັດຮ້ອຍລຳ ແລະມີທະຫານເຮືອຮອດຮ້ອຍຫາສິບພັນຄົນ ແລະກອງທັບເຮືອອັນຫນາແໜ້ນເຊັ່ນນີ້ ໄດ້ລູມຄອງໃຫ້ອັງກິດສາມາດຕິດຕໍ່ກັບປະເທດອາມາລິຄົນຂອງຕົນ ຢ່າງປອດໄພ ແຕ່ແນວໃດກໍດີ ພະນັກງານ ທີ່ປະຈຳຢູ່ໃນເຮືອຮົບອັງກິດບໍ່ໄດ້ຮັບເບ້ຍລ້ຽງພຽງພໍ, ອາຫານການກິນບໍ່ສດວກດີ, ແລະຂາດການປົກຄອງທີ່ດີ, ດັ່ງນັ້ນ ຈຶ່ງເປັນການຍາກທີ່ສຸດທີ່ຈະຫາທະຫານອາສາສມັກເຂົ້າມາຮັບໃຊ້ໃນກອງທັບເຮືອ ແລະພວກລູກເຮືອຫລາຍຄົນໄດ້ຫນີຈາກເຮືອຂອງຕົນແລ້ວ ຂໍ້ໄພຢູ່ນຳເຮືອຂອງອະເມຣິກາ. ຕໍ່ໜ້າສະພາບການເຊັ່ນນີ້, ເຈົ້າໜ້າທີ່ອັງກິດຖືວ່າ ເປັນການຈຳເປັນທີ່ຈະຕ້ອງກວດຄົ້ນເຮືອຂອງອະເມຣິກັນ ແລະເກັບເອົາລູກເຮືອຂອງຕົນໃຫ້ກັບຄືນມາ ແຕ່ໃນເມື່ອທະຫານເຮືອທຸກຄົນປາກພາສາອັງກິດໄດ້ຫມົດນັ້ນ, ກໍເປັນການຍາກຢູ່ທີ່ຈະບອກວ່າເຂົາເປັນຄົນອະເມຣິກັນຫລືອັງກິດ. ແຕ່ໃນເວລານັ້ນ, ຣັຖບານຂອງສະຫະຣັຖ ກໍໄດ້ຖືກຈັດຕັ້ງຂຶ້ນເປັນທີ່ຮຽບຮ້ອຍແລ້ວ ແລະເປັນຊາດທີ່ມີເອກຣາຊແລ້ວ

ດ່ັ່ງນັ້ນ, ກໍຣະນີນັ ້ ຈ ່ ງແຕກຕ ່ າງກັບສໄໝ ກ ່ ອນ ເພາະມັນເປັນການ ປຽດຫຍາມເຣ ຶ ອຂອງອະເມຣິກັນເກີນໄປ ໃນການທ ີ ່ ເຈ ້ ົ ້ າໜ ້ າທ ີ ່ ຂອງ ເຣ ຶ ອອັ ງ ກິ ດບັ ງ ຄັ ບໃ ້ ຫ ້ ທະຫານເຣ ຶ ອຊ ັ ້ ນນ ່ ຍ ້ ອຍແລະທະຫານເຣ ຶ ອຫ ັ ງ ຫລາຍຢ ຶ ນລຽນແຖວ ໃ ້ ນ ່ ຍທະຫານເຣ ຶ ອຂອງອັ ງ ກິ ດ ກວດແຖວທະ ຫານເພ ື ່ ອ ລ ົ ້ ມຫ ້ າທະຫານຂອງຕ ົ ນ. ນອກຈ ່ ານ ັ ້ ນ, ເຈ ້ ົ ້ າໜ ້ າທ ີ ່ ຂອງ ອັ ງ ກິ ດຍ ັ ງ ຖ ຶ ກກ ່ າວຫ ່ າວ ່ າ ພວກເຂ ົ ້ າໄ ້ ສ ແ ດ ງ ທ ່ າທ ່ າ ງ ຈ ອ ງ ຫ ອ ງ ແ ລ ະ ບ ໍ ່ ສ ຸ ພ າ ບ ຕ ໍ ່ ທ ະ ຫ ານ ເ ຣ ຶ ອ ອ ະ ເ ມ ຣ ິ ກ ັ ນ ຊ ຶ ່ ງ ການກະທ ໍ າ ເ ຊ ັ ່ ນ ນ ີ ້ ໄ ້ ຝ ັ ງ ຢ ູ ່ ໃ ນ ຄວາມ ຊ ຶ ງ ຈ ໍ າ ຂ ອ ງ ຊ າ ວ ອ ະ ເ ມ ຣ ິ ກ ັ ນ ຈ ໍ ານ ວ ນ ຫ ລ າ ຍ ພ ັ ນ ຄ ົ ນ.

ເ ພ ື ່ ອ ເ ຮ ັ ດ ໃ ້ ປ ະ ເ ທ ດ ອ ັ ງ ກ ິ ດ ແ ລ ະ ປ ະ ເ ທ ດ ຝ ຣ ັ ່ ງ ເ ສ ຄ ນ ິ ທ ່ າ ທ ິ ດ ຂ ັ ້ ນ ໂ ດ ຍ ປ າ ສ ຈ າ ກ ສ ົ ງ ຄ າ ມ, ທ ່ ານ ເ ຈ ພ ເ ຟ ຊ ັ ້ ນ ໄ ້ ສ ເ ນ ີ ແ ນ ະ ໃ ້ ສ ະ ພ າ ກ ົ ງ ແ ກ ຣ ສ ์ ອ ອ ກ ກ ິ ດ ໝ າ ຍ ວ ່ າ ດ ້ ວ ຍ ການ ຫ ້ າ ມ ສ ິ ່ ງ ສ ິ ນ ຄ ້ າ ເ ຂ ້ ົ ້ າ ມ າ ໃ ນ ປ ະ ເ ທ ດ, ຊ ຶ ່ ງ ກ ິ ດ ໝ າ ຍ ນ ີ ້ ໄ ້ ຫ ້ າ ມ ບ ໍ ່ ໃ ້ ມ ີ ການ ຕ ິ ດ ຕ ໍ ່ ຄ ້ າ ຂ າ ຍ ກ ັ ບ ຕ ່ າ ງ ປ ະ ເ ທ ດ ເ ປ ັ ນ ພ ິ ນ ສ ະ ຫ ້ ອ ມ ແ ລ ະ ຫ າ ຍ ນ ะ ທ ี ່ ສ ຸ ດ ເ ພ າ ะ ພ ິ ນ ປ ะ ໂ ຍ ດ ຂ ອ ງ ການ ເ ດ ີ ນ ເ ຮ ຶ ອ ໄ ້ ພ ັ ງ ທ ะ ລ າ ຍ ລ ົ ງ ໝ ົ ດ, ແ ລ ะ ຄ ວ າ ມ ບ ໍ ่ ພ ໃ ຈ ໄ ້ ມ ີ ຂ ັ ້ ນ ທ ี ่ ອ ເ ມ ຶ ອ ງ ນ ິ ວ ອ ິ ງ ແ ລ ນ ด ์ ແ ລ ะ ນ ิ ວ ຢ ອ ກ. ພ ิ ນ ປ ะ ໂ ຍ ດ ທ າ ງ ການ ກ ะ ສ ิ ກ ັ ນ ກ ໍ ໄ ้ ຮ ັ ບ ການ ເ ສ ັ ຍ ຫ າ ຍ ຢ ่ າ ງ ຫ ລ ວ ງ ຫ ລ າ ຍ ເ ພ າ ะ ວ ่ າ ຣ າ ຄ າ ພ ืช ປ ูก ກ ิ ຕ ิ ກ ต ่ ำ ດ ้ ວ ຍ ວ ่ າ ເ ຂ ົ ้ າ ເ ຈ ้ ົ ้ າ ບ ่ ส ามาถ ส ิ ่ ง พ ืช ผ ิ ม ของเขาเจ้าไป ขายในต ่ างประเทศ. ภายในปีครึ่งเท ่ านั ้ น, สินค ้ าขาออก ได ้ ต ิ กต ่ ำลงโดยยังเหลือแต ่ ปีเศษของปีก ่ อนๆ, แต ่ ละปะ

ສ່ວນຂອງກົດໝາຍວ່າດ້ວຍການຫ້າມສົ່ງສິນຄ້າເຂົ້າມາໃນປະເທດນັ້ນ ກໍ ໝາຍຢາກໃຫ້ປະເທດອັງກິດ ປ່ຽນນະໂຍບາຍການເມືອງຂອງເຂົາ ເຈົ້າ. ເມື່ອມີສຽງຈົ່ມກັນຢູ່ພາຍໃນປະເທດຫລາຍຂຶ້ນ, ທ່ານເຈຟ ເຟີຊັນຈຶ່ງໄດ້ຜ່ອນລາຍວິທີການລົງແດ່ເລັກນ້ອຍ ໂດຍຜ່ອນຜັນໃຫ້ການ ເດີນເຮືອພາຍໃນປະເທດມີຄວາມສດວກ. ການທົດແທນກົດໝາຍ ວ່າດ້ວຍການຫ້າມສິນຄ້າເຂົ້າມາໃນປະເທດບໍ່ແມ່ນເປັນການກະທຳທີ່ ບໍ່ຖືກຕ້ອງຕາມກົດໝາຍ ເພາະວ່າກົດໝາຍນີ້ ໄດ້ອະນຸຍາດໃຫ້ປະ ເທດຂອງຕົນທຳມາຄ້າຂາຍກັບປະເທດຕ່າງໆໄດ້ ນອກຈາກປະເທດ ອັງກິດ ຫລື ຝຣັ່ງເສດເທົ່ານັ້ນ, ແລະຍັງໄດ້ປູທາງໃຫ້ມີການເຈຣະ ຈາໂດຍອະນຸຍາດໃຫ້ປະທານາທິບໍດີງົດການນຳເອົາກົດໝາຍນີ້ອອກ ມາໃຊ້ນຳການຄ້າຂອງອະເມຣິກາ. ໃນປີ ໑໗໑໐, ນະໂປລຽນ ໄດ້ບ່າວປະກາດຢ່າງເປັນທາງການວ່າ ທ່ານໄດ້ຍົກເລີກກົດຣະບຽບ ເດີມແລ້ວ, ແມ່ນວ່າ ທ່ານຍັງຮັກສາຣະບຽບເດີມໄວ້ກໍຕາມ ແຕ່ ສະຫະຣັຖເຊື່ອທ່ານ ນະໂປລຽນຢ່າງແທ້ຈິງ ຈຶ່ງໄດ້ດັດແປງຣະບຽບ ການຂອງກົດໝາຍໂດຍຍົກເວັ້ນແຕ່ກັບປະເທດອັງກິດເທົ່ານັ້ນ.

ຕໍ່ມາ ອາຍຸການຄອງຕຳແໜ່ງ ຄັ້ງທີສອງຂອງທ່ານເຈຟເຟີ ຊັນກໍໄດ້ໝົດເວລາລົງແລ້ວ, ແລະທ່ານເຈມສ໌ ເມດີຊັນ ໄດ້ຖືກ ເລືອກເຂົ້າຮັບຕຳແໜ່ງໃນປີ ໑໘໐໗ ແຕ່ຄວາມສັມພັນທ໌ຕໍ່ປະເທດ ອັງກິດກໍຍັງຂຸດໂຂມລົງ ແລະສອງປະເທດນີ້ ກໍໄດ້ຖືກຊຸກຍູ້ເຂົ້າສູ່ສົງ

ຄາມຢ່າງອ່ອງໄວ. ປະທານາທິບໍດີຄົນໃຫມ່ໄດ້ອ່ານລາຍງານຕໍ່ສະ ພາກົງແກຣສ ກ່ຽວກັບເຫດທີ່ອັ້ງກິດໄດ້ກໍ່ຂຶ້ນກັບຊາວອະເມຣິກັນປະ ມານ ๕,๐๕๗ ຕົວຢ່າງໃນຣະຍະສາມປີ ຊຶ່ງນອກຈາກນີ້, ພວກທີ່ຢູ່ ທາງເຂດຕະວັນຕົກສຽງເຫນືອ ຍັງຖືກພວກອິນດັຍແດງໂຈມຕີຢ່າງ ຫນັກ ແລະເຮືອງນີ້ເຂົ້າເຈົ້າເຊື່ອວ່າ ຕ້ອງແມ່ນເຈົ້າຫນ້າທີ່ຂອງອັ້ງ ກິດທີ່ກາມາດາເປັນຜູ້ສົ່ງເສີມເຫດການທັ້ງຫມົດນີ້ ແລະໃນປີ ๑๘๑๘ ສະຫະຣັຖຈຶ່ງໄດ້ປະກາດສົງຄາມກັບອັ້ງກິດ.

## ສັນຍາຂອງ Ghent ໄດ້ເຮັດໃຫ້ສົງຄາມຍຸຕິລົງ

ສະຫະຣັຖໄດ້ພົບກັບການແຕກສາມັກຄີ ຂອງຄົນພາຍໃນປະ ເທດຢ່າງສາຫັດ ໃນເວລາທີ່ທາງພາກໃຕ້ ແລະພາກຕະວັນຕົກສນັບ ສນູນການເຮັດສົງຄາມນີ້, ທາງນິວຢ່ອກແລະນິວອິງແລນດ໌ ຊໍ້າພາ ກັນຄັດຄ້ານຢ່າງຫນັກຫນ່ວງ. ໃນການປະກາດສົງຄາມ ຄັ້ງນີ້, ການຕຽມທະຫານ ຍັງບໍ່ພຽງພໍເທື່ອ ໂດຍມີທະຫານທັ້ງຫມົດບໍ່ເຖິງ ເຈັດພັນຄົນ ແລະໄດ້ຍ່າຍກໍາລັງທະຫານ ຕາມທີ່ໜ້ັນຕ່າງໆ ·ແຄມ ຝັ່ງໃກ້ອຸາຍແດນການາດາ ແລະຕາມບ່ອນສໍາຄັນຕ່າງໆທາງເຂດໃນ ແຕ່ກໍໄດ້ຮັບການສນັບສນູນຈາກທະຫານອາສາສມັກຂອງຫລາຍຣັຖທີ່ບໍ່ ໄດ້ຕັ້ງຕົນເປັນທະຫານຕາມຣະບຽບຂອງກອງທັບ.

ການເປັນສັດຕຣູກັນ ໄດ້ເລີ່ມຕົ້ນ ດ້ວຍການເຄື່ອນໄຫວສາມ
ທາງ, ໂດຍການບຸກການາດາ ຊຶ່ງຖືວ່າທຸກຢ່າງຮຽບຮ້ອຍດີແລ້ວກໍ
ຈະໄດ້ທຳການຕໍ່ສູ້ກັບ **Montreal,** ແຕ່ການຈູ່ໂຈມທັງຫມົດນີ້ບໍ່ໄດ້
ຜົນແລະໃນທີ່ສຸດກອງທະຫານຂອງອັງກິດໄດ້ຍຶດເອົາເມືອງດີທຣອຍ.
ໃນຂນະທີ່ພາກປະຕິບັດທາງບົກບໍ່ໄດ້ຜົນດີ, ທາງກອງທັບເຮືອຂອງ
ສະຫະຣັຖໄດ້ພົ້ມຄວາມເຂັ້ມແຂງຂຶ້ນ ແລະເຮືອຣົບທີ່ຊື່ວ່າ **Consti**
**tution** ພາຍໃຕ້ການບັງຄັບບັນຊາຂອງ **Captain Isaac Hull**
ໄດ້ປະທະກັບເຮືອຣົບຂອງອັງກິດທີ່ຊື່ວ່າ **Guerriere** ຢູ່ທາງດ້ານ
ຕະວັນອອກສຽງໃຕ້ຂອງບອສຕັນ ໃນວັນທີ່ສິບເກົ້າເດືອນສິງຫາ,
ແລະຫລັງຈາກໄດ້ສູ້ຣົບກັນເປັນເວລາເຄິ່ງຊົ່ວໂມງ, ເຮືອຣົບຂອງ
ສະຫະຣັຖສາມາດເຮັດໃຫ້ເຮືອຂອງຝ່າຍສັດຕຣູ ໄດ້ຮັບຜົນເສັຍຫາຍ
ຢ່າງຫນັກສົ້ນ. ສອງເດືອນຕໍ່ມາ, ເຮືອຣົບຂອງອະເມຣິກັນ ທີ່ມຊື
ວ່າ **Wasp** ໄດ້ປະທະກັບເຮືອຣົບຂອງອັງກິດທີ່ຊື່ວ່າ **Frolic** ແລະ
ເຮືອຣົບຂອງສະຫະຣັຖ ກໍສາມາດທຳລາຍເຮືອຂອງສັດຕຣູໄດ້ອີກ,
ນອກນີ້ ເຮືອເອກຊົນຂອງອະເມຣິກັນທີ່ໄດ້ຮັບອະນຸຍາດຈາກຣັຖບານ
ໃຫ້ໂຈມຕີເຮືອຂອງສັດຕຣູ ກໍໄດ້ຈັບກຸມເຮືອຂອງອັງກິດໄດ້ຫາລຳໃນ
ເວລາຣະດູໃບໄມ້ລົ່ນ ແລະໃນຍາມຫນາວຂອງປີ ໑໘໑໘-໑໙.

ການໂຈມຕີໃນປີ ໑໘໑໙ ແມ່ນໂຮມຢູ່ທະເລສາບເອຣີ ທີ່ຣັຖ
ນິວຢອກ. ນາຍພົນ ວິລລຽມ ແຮນຣີ ແຮຣິຊັນ ໄດ້ບັງຄັບບັນຊາ



ภาพสเลิมสลอฯวัมเอกธาจุออฯสะตะธัฐโมวันที่ ๔ ก๋ธะกะดา จึ่ฯเป็นภาพไปท่ธวพักผ่อนย่อนใจ และมีภาพก่าวสุนทอนผิด และได้ภายเป็นปะเผนีสิบต่ำกันมาเท้าเจ๊ฯทุกวันนี้.



ຈາກຮູບແຕ້ມຂອງຊາລສ່ ຣັສຊຈລ່ ເມື່ອລວິສແລະຄລ້າກມາພົບຸກັບພວກອິນດຽນທີ່ອາສັຍຢູ່ທາງພາກຕາເວັນຕົກສຽງຫນືອ ເທິງຂວາ: ແດນຽລ ບູນ ກຽາ້ລັງນຸາໍທາງພາພວກອົພຸຍົບມາຕຸາມຮ່ອມພູຄັຸມເບີຣ່ແລນດ່ໄປສູ່ຄນຕັກກີ້ ລຸ່ມຂວາ: ພາບຊີວິດ ໃນຖນົນຫລວງ ມີກວຽນທີ່ໃຊ້ມາແກ ກາໍລັງໂຮມກັນຢູ່ ເພື່ອມຸງຫນ້າໄປສູ່ພາກຕາເວັນຕົກ ໃນເວລາຕໍ່ມາກໍ່ມີໂຮງແຮມ ເຊັ່ນ ໂຮງແຮມແຟຣ່ວິວ ເພື່ອຕ້ອນຮັບຜູ້ເດີນທາງ.







ภาพจับปาสลามที่ปับตาป้าน มีซับเธัดใช้ทำเอ๊าบน้ำมันออกมันมาใช้สำลับใต้ตะภฐกก่อนที่จะค้นพิบบั่นน้ำมัน ลุ่ม: ภาพเธัดมาในอุ๊บนะบิด อุ๊กมีเดัภน้อยๆเธัดไปด้วย.





ໃນຂະນະທີ່ການປະຕິວັດທາງອຸດສາຫະກັມຂະຍາຍຫົ່ວໄປຕາມຣັຖຕ່າງໆໃນພາກຕເວັນ ໂຮງງານຫລໍ່ຫລັກ ພາຍເທິງ: ໄດ້ປ່ຽນຈາກກິຈການນ້ອຍໆເປັນກິຈການຂນາດໃຫຍ່ ມີຄົນງານເປັນຈຳນວນຫລວງຫລາຍ ລຸ່ມ: ເຈ້ົາຂອງກິຈການຫລໍ່ຫລັກກຳລັງທຳງານຮ່ວມກັບພູ້ຊ່ວຍຂອງເຂົ້າ ໃນຂະນະທີ່ລູກຄ້າກຳລັງນັ່ງຄອຍຖ້າຢູ່.



ຊາວອົພຍົບທີ່ມາກັບເຮືອ "ດຼອະ ແບຕເຕີຣ້" ແລະຊາວອົພຍົບອີກຈຳນວນລ້ານ ໄດ້ປ່ຽນໂສມຫນ້າປວັດສາດຂອງອະເມຣິກາ ຖ້າຫາກບໍ່ມີຊາວອົພຍົບຫຼົ່ານີ້ແລ້ວ ຄອງອີຣີ ອາດຈະບໍ່ສາມາດເຊື່ອມຕໍ່ກັບທະເລສາບ ເກຣຕ ເລຄຊ້ ກັບມະຫາສມຸດ ແອຕ ແລນຕິກໄດ້ ຊຶ່ງທຳໃຫ້ເກີດຍຸກໃຫມ່ຂອງການຂົນສົ່ງແລະອຸດສາຫະກັມຂອງອະເມຣິກາ.






ภาบโคสะบาซาสฮวเลือกตั้วเมื่อปี ๑๙๔๙ ใบพาบ ลิวคอลบ์ ภำลัวโต้ตอบกับดักลาส.

ກອງທະຫານອາສາສມັກ ແລະທະຫານປະຈຳການຈາກຣັຖເຄນເຕີກີ ໂດຍຈຸດປະສົງຈະຍຶດເອົາດິຫຣອຍຄືນຈາກສັດຕຣູ ໃນວັນທີ່ສິບສອງ ເດືອນກັນຍາ, ແຕ່ໃນຂນະທີ່ທ່ານຍັງຢູ່ດ້ານເໜືອຂອງຣັຖໂອໄຣໂອ ທ່ານໄດ້ຮູ້ຂ່າວວ່າ ຜູ້ບັນຊາການ ໂອລິເວີ ແປຣີ ໄດ້ທຳລາຍເຮືອ ຣົບຂອງສັດຕຣູທີ່ ທະເລສາບເອຣີ. ໃນສອງມື້ ກ່ອນການສູ້ຣົບ, ທ່ານແປຣີໄດ້ກ່າວວ່າ "ພວກເຮົາໄດ້ພົບສັດຕຣູແລ້ວ ແລະເຂົາເຈົ້າ ແມ່ນສັດຕຣູຂອງເຮົາ" ຈາກນັ້ນມາ ທະເລສາບແຫ່ງນີ້ກໍຢູ່ໃນຄວາມ ຄວບຄຸມຂອງອະເມຣິກັນ ແລະໃນເວລາດຽວກັນນັ້ນ ນາຍພົນເຣຣິ ຊັນກຳລັງໄດ້ທຳການໂຈມຕີ ແລະພາຍໃນເດືອນດຽວເທົ່ານັ້ນ ພາກ ເໜືອຂອງການາດາກໍຕົກຢູ່ໃນການຄວບຄຸມຂອງອະເມຣິກັນ. ໃນ ທ້າຍປີດຽວກັນນັ້ນ ອັງກິດຍັງສາມາດຄອງທະເລສາບອັງຕາຣິໂອຢູ່ ແລະໃນປີຕໍ່ມາ ຈຳນວນເຂດແດນທາງບົກ ແລະທາງທະເລຍັງຕົກຢູ່ ໃນການອັບຈົນຂອງສະຖານະການທະຫານຢ່າງແທ້ຈິງ.

ໃນທີ່ສຸດ, ສົງຄາມນີ້ໄດ້ຍຸຕິລົງໂດຍສັນຍາເກຣທ໌ ຊຶ່ງສະຫ ຣັຖ ໄດ້ຕົກລົງເຊັນເອົາ ໃນເດືອນກຸມພາປີ ໑໘໑໕. ໃນເວລາທີ່ ການເຈຣະຈາສົງບເສິກ ກຳລັງດຳເນີນການຢູ່ນັ້ນ, ແຕ່ລະມື້ທັງສະ ຫະຣັຖແລະອັງກິດໄດ້ລົດຜ່ອນຄວາມຮຽກຮ້ອງຂອງຕົນລົງ ຊຶ່ງຜົນປາ ກົດກໍແປກປລາດຢູ່ ເພາະວ່າບໍ່ມີຂ້າງໃດໄດ້ປຽບຫລືເສັຍປຽບ ແລະ ພຽງແຕ່ໃຫ້ຍຸຕິການເປັນສັດຕູຕໍ່ກັນເທົ່ານັ້ນ.

ການຮັກສາເຂດແດນທີ່ຝ່າຍຂອງຕົນໄດ້ໄຊຊນະ ແລະການຈັດຕັ້ງຄນະກັມມະການນຶ່ງຂຶ້ນເພື່ອຕິກລົງເຮື່ອງບັນຫາຊາຍແດນບໍ່ໄດ້ ມີການກ່າວເຖິງເຮື່ອງຄວາມຮູ້ສຶກນຶກຄິດ ແລະສິດທິຂອງຄວາມເປັນ ກາງແຕ່ຢ່າງໃດ, ແມ່ນວ່າເຮື່ອງນີ້ໄດ້ເປັນສາເຫດທີ່ໃຫ້ມີການສູ້ຮົບ ຢ່າງຫນັກຫນ່ວງມາແລ້ວກໍຕາມ, ແຕ່ໄຊຊນະທີ່ຫນ້າຕື່ນເຕັ້ນຊຶ່ງແມ່ນ ພວກທີ່ຢູ່ຕາມຊາຍແດນໄດ້ຕໍ່ສູ້ຢ່າງເອົາເປັນເອົາຕາຍ ໂດຍການນໍາ ຂອງແອນດຣູ ແຈກຊັນ, ເຂົາເຈົ້າສາມາດປາບກອງທະຫານອັງກິດ ທີ່ມີກໍາລັງອັນເຂັ້ມແຂງໄດ້ທີ່ເມືອງນິວອອກລີນສ໌ ຊຶ່ງເຮື່ອງນີ້ໄດ້ເປັນ ສາເຫດທີ່ພາໃຫ້ສະຫະຣັຖມີຄວາມຍິນດີ. ແລະພາກພູມໃຈເປັນທີ່ສຸດ. ເຮື່ອງນີ້ໄດ້ເກີດຂຶ້ນເມື່ອວັນທີ ຊ ມະກະຣາ ໑໘໑໔ ຫລັງຈາກສັນ ຍາສງົບເສິກໄດ້ຖືກເຊັນເປັນທີ່ຮຽບຮ້ອຍແລ້ວ, ແຕ່ກໍເປັນທີ່ຮັບ ຮູ້ ກັນໃນອະເມຣິກາ ຫລັງຈາກເຮື່ອງນີ້ເກີດຂຶ້ນແລ້ວເທົ່ານັ້ນ.

ເຫມືອນດັ່ງໃນທຸກໆສົງຄາມ, ຄວາມເສັຍຫາຍໄດ້ລາງຜານ ປະເທດ ໂດຍສະເພາະແມ່ນປະເທດທີ່ກໍາລັງເກີດໃຫມ່ ຊຶ່ງການສູນ ເສັຍ ທະຫານເຮືອ ຮອດ ๔๑,๐๐๐ ຄົນ ແລະທະຫານບົກອີກ ๓๐,๐๐๐ ຄົນກໍນັບວ່າເປັນການເສັຍຫາຍຢ່າງໃຫຍ່ຫລວງທີ່ສຸດແລະ ນອກຈາກນີ້ກໍຍັງມີການສູນເສັຍເຮືອຮົບອີກຕັ້ງ ๑๔๐๐ ລໍາ ຊຶ່ງນັບ ວ່າ ເປັນມູນຄ່າເສັຍຫາຍຢ່າງຫລວງຫລາຍ. ດ້ວຍເຫດນີ້ ນັກປະ ວັດສາດທັງຫລາຍຈຶ່ງລົງຄວາມເຫັນວ່າ ສົງຄາມຂອງປີ ๑๘๑๔ ນັ້ນ

ມີຄວາມສຳຄັນທີ່ສຸດ, ຄືມັນໄດ້ພາໃຫ້ມີການຫ້ອນໂຮມ ສາມັກຄີກັນ ແລະໄດ້ເຮັດໃຫ້ເກີດ ຄວາມຮັ່ງເຮືองຂຶ້ນມາ. ການທີ່ ຜູ້ຄົນຈາກ ຫລາຍໆຮັຖຮ່ວມກັນສູ້ຮົບຄຽງບ່າຄຽງໄຫລ່ກັນ ແລະການເປັນຜູ້ບັງ ຄັບບັນຊາຂອງກອງທັບພາກເໜືอ ທີ່ມີຄວາມສາມາດທີ່ສຸດຂອງທ່ານ ວິນຟິລສະກອດ, ໄດ້ສະແດງໃຫ້ຊາວໂລກເຫັນ ຢ່າງແຈ່ມແຈ້ງເຖິງ ສັນຍາລັກຂອງການຫ້ອນໂຮມຄົນໃນຊາດ. ກອງທະຫານທາງພາກ ຕະວັນຕົກໄດ້ຮ່ວມກັນຕໍ່ສູ້ກັບເພື່ອນຮ່ວມຊາດທີ່ຢູ່ຕາມແຄມຝັ່ງທະເລ, ແລະຈາກນີ້ຕໍ່ໆໄປ ຄວາມຮູ້ສຶກນຶກຄິດຂອງເຂົາເຈົ້ານັ້ນ ກໍແມ່ນເພື່ອ ຊາດ ຊຶ່ງກາຍເປັນສ່ວນສຳຄັນໃນຊີວິດຂອງຊາວອະເມຣິກັນ.

ທ່ານ ແອລເບີຕ ແກລລາຕິນ, ຜູ້ຊ່ວຍດຳຣົງຕຳແໜ່ງຮັຖມົນ ຕຣີການຄັ້ງມາຕັ້ງແຕ່ປີ ໑໘໐໑ ຫາ ປີ ໑໘໑໗ ຍອມຮັບວ່າ ຄວາມ ຂັດແຍ້ງຂອງຊາວອະເມຣິກັນ ແຕ່ກ່ອນໆນັ້ນກາຍເປັນເຣື່ອງທີ່ເຫັນ ແກ່ຕົວ ແລະມີຈິດໃຈຄັບແຄບ, ຖ້າຈະປຽບໃສ່ສະພາບການທຸກວັ້ນ ນີ້. ທ່ານໄດ້ກ່າວຕໍ່ໄປອີກວ່າ, "ສົງຄາມໄດ້ເຮັດໃຫ້ ຄົນໃນຊາດ ມີຄວາມນຶກຄິດໃໝ່ໆ ແລະໄດ້ປຽນແປງບຸກຄລິກລັກສນະ ສືบເນື່ອງ ມາຈາກການປະຕິວັດ. ປັດຈຸບັນນີ້, ໂດຍທົ່ວໆໄປແລ້ວ ປະຊາຊົນ ມີຈຸດປະສົງໃນການຫ້ອນໂຮມກັນດ້ວຍຄວາມປິຕິຍິນດີ ແລະຄວາມຄິດ ຄວາມເຫັນ ໃນເຣື່ອງການເມືองຂອງເຂົາເຈົ້າ ທີ່ສອດຄ້ອງກັນ. ເຂົາເຈົ້າເປັນຄົນອະເມຣິກັນໂດຍແທ້ຈິງຫລາຍກວ່າຖືຕົນວ່າເປັນຄົນ

24 / VII
ทามจำหน่าย

ຊາດອື່ນ, ຊຶ່ງຄວາມຮູ້ສຶກນຶກຄິດ ແລະການກະທຳຂອງເຂົາເຈົ້າໄດ້ ສະແດງອອກເຖິງການເປັນຊາດນຶ່ງ, ແລະຂ້າພະເຈົ້າຫວັງວ່າການ ທ້ອນໂຮມກັນນີ້ຄົງຈະຫມັ້ນຄົງເລື້ອຍໄປ".

# 4

ການແຜ່ຂຍາຍອອກໄປ ທາງພາກຕະເວັນຕົກ ແລະຄວາມ
ແຕກຕ່າງຣະຫວ່າງພາກ.

"ຈົ່ງໄປທາງພາກຕະເວັນຕົກ, ທ່ານທີ່ຍັງໜຸ່ມນ້ອຍ ແລະ
ໃຫຍ່ຂຶ້ນກັບປະເທດ".

ເປັນຄຳຂວັນຂອງທ່ານ Horace Greeley, ໑໘໔໐
ສົງຄາມໃນປີ ໑໘໑໔ ນັບວ່າເປັນສົງຄາມທີ່ໄດ້ຕໍ່ສູ້ເພື່ອເອກ
ຣາຊຄັ້ງທີສອງ ເພາະຈົນເຖິງເວລານັ້ນ, ສຫະຣັຖຍັງບໍ່ໄດ້ຕົກລົງ
ເຮື່ອງຖານະຂອງຄວາມສະເມີພາບ ໃນການເປັນຄອບຄົວດຽວຂອງ
ຊາດເທື່ອ. ແລະຫລັງຈາກໄດ້ມີສົນທິສັນຍາສົງບເສິກແລ້ວ, ສະ
ສະຣັຖບໍ່ເຄີຍປະຕິເສດການເປັນເອກຣາຊໃໝ່ຂອງຊາດແຕ່ຢ່າງໃດ
ຄວາມຫຍຸ້ງຍາກຕ່າງໆຊຶ່ງປະເທດທີ່ເກີດໃໝ່ໄດ້ຟັນຝ່າອຸປສັກມາໃນ

ສມັຍປະຕິວັດ ກໍໄດ້ຜ່ານພົ້ນສາຍຕາໄປແລ້ວແລະດ້ວຍຄວາມສາໍເຮັດ ໃນການທ້ອນໂຮມຄົນໃນຊາດເຊັ່ນນີ້ ຈຶ່ງພາໃຫ້ມີການສມ່າໍສເມີຮະ ຫວ່າງເສຣີພາບແລະຮະບຽບ, ຈາໍນວນຫນີ້ສິນຂອງຊາດ ແລະທີ່ດິນ ຂອງທະວີບທີ່ຍັງບໍຣິສຸດ ເພື່ອຄອຍຖ້າການຖາກຖາງຢູ່, ອັນນີ້ເປັນ ຊ່ອງທາງທີ່ຈະນາໍມາ ຊຶ່ງຄວາມສງົບ, ຄວາມຈະເຣີນຮູ່ງເຮືອງ, ແລະຄວາມກ້າວຫນ້າຂອງສັງຄົມ.

ໃນດ້ານການເມືອງແລ້ວ, ເວລານີ້ນັບວ່າເປັນໂອກາດແຫ່ງ "ຄວາມສະບາຍໃຈ" ຊຶ່ງເອີ້ນກັນຊື່ວຄາວໃນຂນະນັ້ນ ແລະເປັນນາໍ້ ໃຈຂອງຄວາມສາມັກຄີ ທີ່ໄດ້ແຜ່ໄປເຖິງການສ້າງຊາດບ້ານເມືອງ ຊຶ່ງເປັນຊ່ອງທາງທີ່ນາໍຄວາມສງົບສຸກມາສູ່ປະເທດຊາດ. ນອກຈາກ ນັ້ນ, ການຄ້າກໍຊ່ວຍໃຫ້ເປັນຮາກຖານຂອງຄົນອະເມຣິກັນ ແລະໃຫ້ ຊາດເປັນຈິງຂຶ້ນມາ. ຄວາມຂາດແຄນໃນສໄມສົງຄາມ, ໄດ້ເຮັດ ໃຫ້ເຂົາເຈົ້າຮູ້ເຖິງຄວາມສາໍຄັນ ຂອງການປ້ອງກັນໂຮງງານຫັຖກັມ ຂອງອະເມຣິກາ ຈົນກວ່າເຂົາເຈົ້ານີຄວາມສາມາດແຂ່ງຂັນກັບຕ່າງ ປະເທດໄດ້ດ້ວຍຕົນເອງ. ການມີເອກຣາຊ ໃນດ້ານການເສຖກິດ ນັ້ນເປັນສິ່ງຈາໍເປັນເທົ່າໆກັນກັບການມີເອກຣາຊໃນດ້ານການເມືອງ ເພາະວ່າ ເອກຣາຊທາງການເມືອງ ທີ່ປາສຈາກການເປັນທີ່ເພິ່ງ ຂອງຕົນເອງໄດ້ໃນດ້ານເສຖກິດແລ້ວແມ່ນເປັນໄປບໍ່ໄດ້. ເຫມືອນ ດັ່ງສົງຄາມປະຕິວັດທີ່ໄດ້ເກີດຂຶ້ນມາແລ້ວຄັ້ງນຶ່ງ, ທ່ານແຮນຣີເກລ

ແລະທ່ານຈອນຊ ແຄລຮູນ ຊຶ່ງໃນເວລານັ້ນທ່ານທັງສອງໄດ້ເປັນຜູ້ນຳຂອງຣັຖສະພາ ໄດ້ເຊຶ່ອວ່າ "ການປ້ອງກັນ" ນັ້ນຄືການວາງອັດຕຣາການເກັບພາສີ ຊຶ່ງຈະຊ່ວຍໃຫ້ອຸດສາຫະກັມ ຂອງອະເມຣິກາຂຍາຍກວ້າງຂວາງອອກໄປ.

ນັນເປັນເລີກງານຍານດີແລ້ວ ທີ່ຈະຂຶ້ນອັດຕຣາພາສີ. ດັ່ງນັ້ນ ຄົນລ້ຽງແກະທີ່ເມືອງ ເວີມອນແລະໂອໄຮໂອຢາກໃຫ້ມີການຄູ້ມກັນດັ່ງກ່າວນີ້ ເພື່ອປ້ອງກັນບໍ່ໃຫ້ຂົນສັດຂອງອັງກິດຫລັ່ງໄຫລເຂົ້າມາໃນປະເທດ; ທີ່ຣັຖ ເຄນເຕີກີ, ແມ່ນປ້ອງກັນໂຮງງານອຸດສາຫະກັມຕ່ຳຜ້າຫຍາບໆຂອງສະກອດ; ທີ່ຣັຖພິສເບີກຕັ້ງເຕົາເຜົາເຫລັກທີ່ກຳລັງຈະເຣີນງອກງານດີ, ແລະກະວ່າຈະຜລິດຈຳນວນເຫລັກໃຫ້ພຽງພໍຕາມຄວາມຕ້ອງການຊຶ່ງແຕ່ກ່ອນແມ່ນສັ່ງຊຶ້ມາຈາກປະເທດອັງກິດ ແລະປະເທດສວີດເດີນ. ດັ່ງນັ້ນ, ຣັຖບານ ຈຶ່ງໄດ້ວາງອັດຕຣາເກັບຄ່າພາສີສິນຄ້າຂາເຂົ້າໃຫ້ສູງຂຶ້ນ ເພື່ອໃຫ້ຄວາມຄູ້ມກັນແກ່ໂຮງງານຫັຖກັມຢ່າງເຕັມເມັດເຕັມຫນ່ວຍ. ນອກຈາກນີ້ ຣັຖບານຍັງໄດ້ປັບປູງຣະບົບການຄົມມະນາຄົມໃຫ້ດີຂຶ້ນ ເພື່ອການຕິດຕໍ່ໄປມາຣະຫວ່າງພວກທີ່ຢູ່ທາງພາກຕະເວັນຕົກໃຫ້ສະດວກ ແລະມີຄວາມໃກ້ຊິດຍິ່ງຂຶ້ນ.

ພາຍຫລັງຈາກການປະກາດຂອງສານສູງສຸດ, ຖານະຂອງຣັຖບານກໍຍິ່ງແຫນ້ນແຟ້ນຂຶ້ນ. ມີຜູ້ທີ່ສນັບສນູນຣັຖບານຄົນນຶ່ງຄືທ່ານ

ຈອມມາຊາລ ທີ່ມາຈາກຣັຖເວີຊີເນັຍ ໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວ
ໜ້າສານຕັ້ງແຕ່ປີ ໑໘໐໑ ແລະໄດ້ດຳຣົງຕຳແໜ່ງນີ້ເລື້ອຍໄປຈົນ
ຮອດວາຣະສຸດທ້າຍ ແຫ່ງການມີຊີວິດຂອງທ່ານໃນປີ ໑໘໓໕. ແຕ່
ກ່ອນ ສານສູງນີ້ມີຄວາມອ່ອນແອຫລາຍ ແຕ່ຫລັງຈາກທ່ານໄດ້ມາດຳ
ຣົງຕຳແໜ່ງນີ້ມາ ທ່ານໄດ້ປ່ຽນແປງສະພາບຂອງສານທີ່ອ່ອນແອໃຫ້
ມາເປັນສານຍຸຕິທັມທີ່ເຕັມໄປດ້ວຍອິດທິພົນຊຶ່ງນັບວ່າທ່ານໄດ້ກຳໜ້າ
ທີ່ນຶ່ງເທົ່າທຽມກັບໜ້າທີ່ຂອງຣັຖສະພາ ຫລືຂອງປະທານາທິບໍດີໃນ
ການສືບຕໍ່ການຕັດສິນໃຈ ຊຶ່ງນັບວ່າເປັນປະວັດການນີ້ ໂດຍບໍ່ເຄີຍ
ເອົນອຽງໄປຈາກຫລັກການອັນສຳຄັນ ອັນໃດອັນນຶ່ງຂອງອະທິປະໄຕ
ຂອງຣັຖບານກາງເລີຍ.

ທ່ານມາຊາລບໍ່ພຽງແຕ່ເປັນຜູ້ພິພາກສາ ທີ່ຍິ່ງໃຫຍ່ເທົ່ານັ້ນ,
ແຕ່ທ່ານຍັງເປັນຣັຖບຸຣຸດຜູ້ຍິ່ງໃຫຍ່ອີກດ້ວຍ. ໃນຂນະທີ່ທ່ານໄດ້ຮັບ
ຣາຊການຢູ່ເປັນເວລາຄົນນານ, ທ່ານເຄີຍເປັນຜູ້ຕັດສິນກໍຣະນີ ຕ້ານ
ສົນທ່ວຢ່າງ ກ່ຽວກັບການກວດຣັຖທັມມະນູນ ດັ່ງນັ້ນຣັຖທັມມະນູນທີ່
ສານທຸກບ່ອນໄດ້ນຳເອົາມາໃຊ້ທົ່ວປະເທດແມ່ນກົດໝາຍອັນຍິ່ງໃຫຍ່
ຊຶ່ງແມ່ນທ່ານມາຊາລ ເປັນຜູ້ແຕ່ງອອກມາ. ກ່ຽວກັບການອອກ
ຄວາມຄິດຄວາມເຫັນຂອງທ່ານມາຊາລ ຊຶ່ງເປັນທີ່ຮູ້ຈັກດີແກ່ຄົນທັ່ວ
ຫລາຍນັ້ນ ກໍຄືກໍຣະນີຂອງມາເບີຣີ ແລະເມດີຊັນ ໃນປີ ໑໘໐໓ ຊຶ່ງ
ເປັນເວລາທີ່ທ່ານຕັດສິນໃຈຢ່າງແນ່ວແນ່ ໃນການຈັດຕັ້ງສານສູ່ງສຸດ

ใช้ມີສິດທິໃນການກວດກົດຫມາຍຕ່າງໆຂອງສະພາກົງແກຣສ່ ແລະ ຂອງຣັຖ. ຕໍ່ມາກໍແມ່ນ ໃນກໍຣະນີແມກຄັລລອກ ຕໍ້ສູຄະດີກັບແມຣີ ແລນ ໃນປີ ๑๙๑ຝ, ຊຶ່ງທ່ານໄດ້ໄກ່ເກັ່ຍບັນຫາເກົ່າໆທີ່ຫມາຍເຖິງ ອຳນາດຂອງຣັຖບານພາຍໃຕ້ຣັຖທັມມະນູນ ກ່ຽວກັບເຣື່ອງນີ້ ທ່ານ ໄດ້ໃຫ້ການສນັບສນູນນະໂຍບາຍ ຫລືທິສດີຂອງທ່ານແຣມິລຕັນຊຶ່ງບົ່ງ ໄວ້ວ່າ ຣັຖທັມມະນູນຄວນໃຫ້ສິດແກ່ຣັຖບານນອກເຫນືອໄປກວ່າສິ່ງທີ່ ໄດ້ບົ່ງໄວ້ໃນກົດຫມາຍຂອງຣັຖ. ດ້ວຍການຕັດສິນໃຈ ດັ່ງກ່າວນີ້, ທ່ານມາຊາລໄດ້ກາຍເປັນຜູ້ນຳຜູ້ນຶ່ງເຫມືອນຜູ້ນຳທົ່ວໆໄປ ທີ່ໄດ້ເຮັດ ໃຫ້ຣັຖບານກາງຂອງຊາວອະເມຣິກັນມີຊີວິດຊີວາ, ແລະມີກຳລັງຂຶ້ນ ໄປເລື້ອຍໆ.

## ວັນນະຄະດີແລະຊາຍແດນ

ຢູ່ໃນຖິ່ນທີ່ແຕກຕ່າງ ໄປຈາກບ່ອນອື່ນນີ້, ເປັນທີ່ເຫັນຢ່າງ ແຈ່ມແຈ້ງແລ້ວວ່າ ຄວາມຮູ້ສຶກຂອງຄົນໃນຊາດນັ້ນ ຖືກບຸກໃຫ້ຕື່ນຕົວ ຊຶ່ງສໄມນັ້ນ ກໍແມ່ນການປາກົດຕົວຂອງວັນນະຄະດີ ຂອງອະເມຣິກັນ ຢ່າງແທ້ຈິງ. ນັກຂຽນຮຸ່ນກ່ອນ ຈາກໂຮງຮຽນໃຫມ່ ຂອງອະເມຣິ ກັນນີ້ກໍມີທ່ານ ວໍຊິງຕັນ, ທ່ານເອີວິງ, ແລະທ່ານເຈມສ່ ເຢນີມໍຄູ ເປີ. ຫນັງສືເຣື່ອງຊວນຫົວ ຂອງທ່ານເອີວິງ ຊຶ່ງທ່ານໃຫ້ຊຶ່ຂອງ ເຣື່ອງວ່າ: "ເຣື່ອງຂອງເມືອງ ນິວຢອກ" ຊຶ່ງໄດ້ພິມອອກຈຳ

ຫນ່າຍໃນປີ ๑๙๐ຈ, ໄດ້ສາມາດດຶງດູດຄວາມສົນໃຈ ຂອງຊາວອະ ເມຣິກັນເປັນຢ່າງຍິ່ງ. ຜົນງານຊິ່ງນັບວ່າດີທີ່ສຸດ ຂອງທ່ານເອີວິງ ນັ້ນກໍຄື ເຣື່ອງ " Rip Van Wrinkle " ຊຶ່ງເຫດການຕ່າງໆ ໃນເຣື່ອງນີ້ໄດ້ເກີດຂຶ້ນທີ່ຮ່ອມຫ້ວຍຮັດຊັນ ໃນເມືອງນິວຢອກ ແລະກໍ ເປັນເຣື່ອງໂລດໂຜນອີກດ້ວຍ, ແລະທ່ານຄູເປີກໍເຊັ່ນດຽວກັນເພາະ ລາວມີຄວາມສາມາດເປັນພິເສດໃນການບັນລະຍາຍ ເຣື່ອງກ່ຽວກັບ ພື້ນເມືອງ. ຫລັງຈາກໄດ້ພຍາຍາມໃຫ້ການຂຽນນີ້ເຂົ້າຂັ້ນນະວະນິ ຍາຍເຫມືອນຂອງຊາວອັງກິດ, ທ່ານໄດ້ຂຽນເຣື່ອງ "ນັກສືບ" ຊຶ່ງ ມີເຣື່ອງກ່ຽວພັນໄປເຖິງການປະຕິວັດແລະນະວະນິຍາຍເຣື່ອງນີ້ກໍມີ້ຜູ ຄົນນິຍົມເປັນທີ່ສຸດ. ຕໍ່ຈາກນັ້ນມາ, ທ່ານກໍໄດ້ຂຽນເຣື່ອງ "ນັກ ຄົ້ນຄົ້ວ" ຊຶ່ງທ່ານໄດ້ວາດພາບຊີວິດທັມມະດາຂອງຊາວອະເມຣິກັນທີ່ ຢູ່ຕາມຊາຍແດນ. ອີກຈຳນວນຫລາຍໆເຣື່ອງຊຶ່ງເອີ້ນວ່ານິທານຖິງ ຍາວ ຊຶ່ງທ່ານ ຄູເປີ ໄດ້ພິມອອກຈຳຫນ່າຍ ໃນຣະຫວ່າງປີ ๑๙๘ມ ແລະ ๑๙๑๔. ທ່ານຄູເປີ ໄດ້ວາດພາບຂອງນັກຄົ້ນຄົ້ວ ຊຶ່ງມີຊຶ່ວ່າ ແນດຕີບັມໂພ ແລະຫົວຫນ້າອິນເດັຍແດງ ອັງຄາສ ເປັນຕົວລະຄອນ ທີ່ຖາວອນຂອງວັນນະຄະດີຂອງໂລກ ນອກຈາກນີ້ ທ່ານຄູເປີ ກໍໄດ້ ຂຽນນິທານກ່ຽວກັບທະເລ ແລະເຣື່ອງນີ້ ກໍແມ່ນຜົນທີ່ສືບເນື່ອງມາ ຈາກອິດທິພົນຂອງຊາວອະເມຣິກັນ. ເຫດການອັນສຳຄັນທີ່ເກີດຂຶ້ນ ກັບໂລກຂອງວັນນະຄະດີກໍຄືການເກີດຂອງ "ການທົບທວນອະເມຣິ

ກາເຫນືອ" ເປັນຈົດຫມາຍເຫດທົບທວນການໃນອະເມຣິກາເຫນືອ ຊຶ່ງປາກົດຕົວຂຶ້ນ ໃນປີ ๑๘๑๔, ດ້ວຍຄວາມສາມາດຂອງບັນນາທິ ການຄື່ທ່ານ **Jared Sparks** ດັ່ງນັ້ນ ຈົດຫມາຍເຫດ ດັ່ງກ່າວນີ້ ຈຶ່ງເປັນທີ່ນິຍົມຂອງພວກປັນຍາຊົນຜູ້ຫນຸ່ມນ້ອຍໃນເມືອງນິວອິງແລນດ້ ຊຶ່ງໄດ້ກາຍເປັນບ່ອນນຶ່ງຂອງການຂຍາຍວັທນະທັມຂອງຊາດ.

ກຳລັງດ້ານນຶ່ງອີກ ຊຶ່ງນັບວ່າເປັນແຮງດັນສ່ວນໃຫຍ່ໃນການ ປັ້ນຊີວິດຊາວອະເມຣິກັນ ຫລາຍກວ່າສາເຫດອື່ນໆນັ້ນຄື ຊາຍແດນ ເພາະການເປັນຢູ່ທາງແຄມຝັ່ງທະເລແອດແລນຕິກ ໄດ້ຊັກຊວນໃຫ້ຜູ້ ອົພອົບໄປຢູ່ທາງເຂດໃຫມ່. ດິນທາງແຖບເມືອງນິວອິງແລນດ້ເປັນ ດິນທີ່ບໍ່ເຫມາະແກ່ການປູກຝັງ ແລະບໍ່ສາມາດຈະປຽບໃສ່ ກັບດິນທີ່ ຂາຍໃນຣາຄາຖືກທາງເຂດຕະວັນຕົກ ຊຶ່ງເປັນດິນທີ່ອຸດົມສົມບູນແລະ ເຫມາະສຳຫລັບການປູກຝັງຫລາຍ. ຕໍ່ມາຜູ້ຄົນທັງຍິງ ແລະຊາຍກໍ ໄດ້ພາກັນຫນີຈາກໄຮ່ນາຂອງຕົນທີ່ຢູ່ຕາມເມືອງແຄມຝັ່ງທະເລ ໂດຍ ອົພຍົບໄປຢູ່ບ່ອນດິນທີ່ອຸດົມສົມບູນທາງພາກກາງ. ທາງໃຕ້ກໍຄືກັນ, ສະພາບການເປັນຢູ່ ໄດ້ຊັກຊວນໃຫ້ຜູ້ຄົນອົພຍົບ ໄປຢູ່ໃນເຂດນັ້ນ, ແຕ່ພວກທີ່ອາໄສຕາມເຂດທາງນອກຂອງຮັຖແຄໂຣໄລນາແລະຮັຖເວີ ຊີເນັຍໄດ້ພົບອຸປສັກໃນການຂາດແຄນຖນົນຫົນທາງແລະຄອງນ້ຳທີ່ຈະ ໄປມາຫາສູ່ຕລາດກັບເມືອງແຄມຝັ່ງທະເລ, ແລະນອກຈາກນີ້ ເຂົາ ເຈົ້າກໍຍັງຖືກກົດດັນຈາກການຄວບຄູມ ທາງການເມືອງຂອງຊາວໄຮ່

ຊາວນາຜູ້ຮັ່ງມີອີກດ້ວຍ. ແລະດ້ວຍເຫດນີ້ເອງ ເຂົາເຈົ້າ ຈຶ່ງໄດ້ຍົກຍ້າຍຄອບຄົວທີລະນ້ອຍຈາກແຄມຝັ່ງທະເລແອດແລນຕົກໄປສູ່ເຂດທີ່ເປັນຫົນ. ຂະບວນການຍົກຍ້າຍນີ້ ໄດ້ສະແດງເຖິງບຸກຄລິກລັກສນະຂອງຊາວອະເມຣິກັນຢ່າງເລີກເຊິ່ງເພາະວ່າເຣື່ອງນີ້ ໄດ້ເຮັດໃຫ້ການເມືອງແລະເສຖກິດມີປະຊາທິປະໄຕ; ມີທ່າທີແບບທີ່ວ່າອາດຈະແຂ່ງເກີນໄປ; ໄດ້ພາໃຫ້ການນິຍົມແບບການຮັກສາຂນົບທັມນຽມເກົ່າໆນັ້ນສູນຫາຍໄປ, ແລະພ້ອມກັນນີ້ປະຊາຊົນໃນທ້ອນຖິ່ນກໍເກີດມີນຳ້ໃຈອັນນຶ່ງອັນດຽວກັນ ດ້ວຍການນັບຖືອຳນາດ ອະທິປະໄຕຂອງຊາດ. ຂບວນການຍົກຍ້າຍນີ້ ມີຢູ່ບໍ່ໄດ້ຂາດສາຍ ຕາມແມ່ນຳ້ຫາງພາກຕະວັນຕົກ ທີ່ໄຫລຜ່ານຊາຍແດນບ່ອນທຳອິດ, ຕາມທາງເຂດແຄມຝັ່ງແອດແລນຕົກ, ກາຍຂຶ້ນໄປທາງເຫນືອແມ່ນນຳ້ຫ້ວຍ ທາງແຄມຝັ່ງແລະຜ່ານຂຶ້ນເມືອທາງເຂດພູອາປາລາຊຽນ ແລະຕົກມາໃນປີ ຈຊ00, ຮ່ອມຫ້ວຍມີຊີຊິບປີ ແລະໂອໄຮໂອໄດ້ກາຍເປັນເຂດຊາຍແດນທີ່ໃຫຍ່ບ່ອນນຶ່ງ. "ໄຮໂອ, ໄປພວກເຮົາໄປ, ລ່ອງໄປຕາມແມ່ນຳ້ໂອໄຮໂອ", ອັນນີ້ໄດ້ກາຍເປັນເພັງ ຂອງພວກອົພຍົບຊຶ່ງນິຍົມຮ້ອງກັນ ເລື່ອຍໆ ມາ. ໃນຕົ້ນສັຕວັດທີສິບເກົ້າ ນັ້ນ, ຜົລເມືອງມີການປ່ຽນແປງຫລາຍ ແລະພາໃຫ້ມີການແບ່ງແຍກເຂດແດນ ແລະການຈັດຕັ້ງເຂດແດນໃຫມ່ ຂຶ້ນອີກຢ່າງໄວ. ດັ່ງນັ້ນ, ເມື່ອຮັຖໃຫມ່ໄດ້ກຳນົດຮ່ວມເຂົ້ານຳສຫະພັນແລ້ວ, ແຜນທີ່ທາງການ

ເມືອງກໍໄດ້ຂຍາຍອອກໄປທາງດ້ານຕະວັນອອກຂອງແມ່ນຳ້ມີຊຸີຊຸບປີ. ໃນຣະຍະຫ້າຫົກປີນີ້ ມີຫົກຣັຖໄດ້ເກີດຂຶ້ນໃຫມ່ ເຊັ່ນຣັຖ ອິນເດັຍນາ ມີກຳເນີດຂຶ້ນມາໃນປີ ๑๗๑ກ, ຣັຖອິລລີນອຍໃນປີ ๑๗๑๗, ຣັຖອາ ລາບາມາໃນປີ ๑๗๑ຈ, ຣັຖເມນໃນປີ ๑๗๘๐ ແລະຣັຖມີຊູຣີໃນປີ ๑๗๘๑. ຊາຍແດນບ່ອນທຳອິດ ໄດ້ມີເຂດແດນໃກ້ກັບພວກຢູໂຣບ, ບ່ອນທີສອງໃກ້ກັບພວກທີ່ມາຕັ້ງຖິ່ນຖານຢູ່ແຖວແຄມຝັ່ງທະເລ, ແຕ່ ຮ່ອມຫ້ວຍມີຊຸີຊຸບປີ ເປັນບ່ອນທີ່ເປັນເອກຣາຊ ແລະປະຊາຊົນກໍຫັນ ຄວາມສົນໃຈໄປທາງດ້ານຕະວັນຕົກຫລາຍກວ່າອ່ວຍມາທາງດ້ານຕະ ວັນອອກ.

ແນ່ນອນ, ພວກທີ່ມາຕັ້ງຖິ່ນຖານຕາມເຂດຊາຍແດນແມ່ນປະ ກອບດ້ວຍບຸກຄົນຫລາຍຈຳພວກ. ມີຜູ້ໂດຍສານຊາວອັງກິດຄົນນຶ່ງຊຶ່ ວ່າ ຟອດແຮມ ໄດ້ບັນລະຍາຍວ່າ "ໃນຂະບວນຣົຖມ້າບັນທຸກພວກ ອົພຍົບ, ນັກລ້າສັດ, ແລະນາຍພານໄດ້ພາກັນຢູ່ໃນຕູບທີ່ທຸກຍາກ ແທນການຢູ່ໃນເຮືອນຊານອັນຈົບດີ... ແຕ່ຜູ້ຄົນພວກນີ້ ມີອັດທະ ຍາໄສຕໍ່ຄົນແປກຫນ້າດີແທ້ໆ ເພາະເຂົາເຈົ້າຊຶ່ສັດ ແລະເປັນທີ່ຫນ້າ ນັບຖືທີ່ສຸດ. ເຂົາເຈົ້າພາກັນປູກຫມາກສາລີ, ຫມາກອໍ, ແລະ ລ້ຽງຫມູ ແລະບາງເທື່ອກໍລ້ຽງງົວຕົວນຶ່ງຫລືສອງຕົວ... ແຕ່ປືນ ເຫລັກຍາວແມ່ນປັດຈັຍອັນສຳຄັນທີ່ໃຊ້ໃນການປ້ອງກັນຕົວ. ພວກຜູ້ ຊາຍເຫລົ່ານີ້ຊຳນານໃນການໃຊ້ຂວານ, ແຮ້ວ ແລະຄັນເບັດ ແລະ

24/VII
ตามจำพวย

ເຂົ້າເຈົ້າເປັນຜູ້ຕິດຕາມຂບວນຣົຖ ປູກຕູບໄມ້ ເພື່ອເປັນທີ່ຢູ່ອາໄສ, ແລະຕ້ານທານພວກອິນເດັຍແດງ.

## ພວກທີ່ຢູ່ຕາມຊາຍແດນຕ້ອງເປັນທີ່ເພິ່ງຂອງຕົນເອງ

ເມື່ອເຂົ້າໄປຢູ່ໃນປ່າດົງອັນກ້ວາງໃຫຍ່ແລ້ວ, ພວກທີ່ມາຕັ້ງຖິ່ນຖານຢູ່ຕາມແຖບນີ້ເປັນຫົວຊາວໄຮ່ຊາວສວນແລະນັກລ່າສັດພ້ອມ. ແທນທີ່ຈະປູກຕູບ, ເຂົ່າເຈົ້າໄດ້ປູກເຮືອນໄມ້ຢ່ຽງສະດວກສະບາຍ ໂດຍມີປ່ອງຢ້ຽມເປັນແວ່ນແກ້ວ, ມີຫໍ່ຄວັນໄຟທີ່ດີ ແລະຂັ້ນເຮືອນເປັນຫລາຍໆຫ້ອງ ແລະແທນທີ່ຈະໃຊ້ນ້ຳຕາມບໍ່, ເຂົ້າເຈົ້າກໍໄດ້ຂຸດນ້ຳສ້າງໃຊ້. ຜູ້ທີ່ຂຍັນຫມັ່ນພຽນ ກໍຈະຕ້ອງຖາກຖາງປ່າແລ້ວຈູດເພື່ອເກັບເອົາຝຸ່ນໂພຕາສແລະປະໄວ້ແຕ່ຕໍ່ໄມ້, ແລະຕໍ່ຈາກນັ້ນກໍຕັ້ງຕົ້ນປູກພືດຜັກແລະຫມາກໄມ້. ປ່າດົງແຫ່ງນີ້ ເຕັມໄປດ້ວຍກວາງ, ໄກ່ງວງປ່າ ແລະນົກເຜົ້ງ; ປາກໍມີເຕັມຫ້ວຍໃກ້ໆ ແລະເຂົ້າເຈົ້າຍັງພາກັນລ່ຽງງົວຄວາຍແລະຫມູອີກດ້ວຍ. ພວກທີ່ຖຫມັ່ນຖາກຖາງປ່າຢູ່ບໍ່ໄດ້ເຊົາ ຍິ່ງໄດ້ດິ້ນໄວ້ປູກຝັ່ງຢ່າງຫລວງຫລາຍ ແລະພວກທີ່ຢູ່ທາງເຂດທີ່ດິນເປັນຣາຄາກໍໄດ້ຂາຍຮ້ອຂາຍສວນຂອງຕົນແລ້ວອົພຍົບອອກໄປຢູ່ທາງພາກຕະວັນຕົກ.

ຕໍ່ມາ, ທາງເຂດນັ້ນອກຈາກມີຊາວໄຮ່ຊາວນາແລ້ວ ກໍ ມີ ທ່ານຫມໍ, ນັກກົດຫມາຍ, ເຈົ້າຂອງຮ້ານຂາຍເຄື່ອງ, ບັນນາທິ

ການຫນັງສືພິມ, ພຣະ, ຊ່າງແປງເຄື່ອງຈັກ, ນັກການເມືອງ ຊຶ່ງ ທັງຫມົດນີ້ ໄດ້ຮ່ວມກັນສ້າງສັງຄົມ ຂອງພາກຕະວັນຕົກ. ຊາວໄຮ່ ຊາວສວນມີຄວາມສຳຄັນທີ່ສຸດ, ເພາະເຂົາເຈົ້າມັກຢູ່ບ່ອນ ທີ່ເຂົາ ເຈົ້າໄດ້ສ້າງສາມາແລ້ວແລະຍັງຫວັງໄວ້ອີກວ່າ ຢາກໃຫ້ລູກຫລານ ຂອງຕົນຢູ່ບ່ອນດຽວນີ້ ສືບຕໍ່ໆກັນໄປ. ເຂົາເຈົ້າປຸກເລົ້າເຂົ້າໃຫຍ່ ກວ່າຜູ້ທີ່ມາຢູ່ກ່ອນ ແລ້ວກໍດ້ວຍດິນຈີຫລືສ້າງດ້ວຍໄມ້ຢ່າງແຫ້ນຫນາ ເຂົາເຈົ້າໄດ້ນຳເອົາແມວສັດທີ່ດີມາລ້ຽງ ແລະໄດ້ໄຖດິນດ້ວຍຄວາມ ຊຳນິຊຳນານແລະປູກພືດຜົນທີ່ໄດ້ຜົນດີກວ່າຄົນຮຸ່ນກ່ອນ. ເຂົາເຈົ້າ ໄດ້ຕ້ັງເຄື່ອງຈັກບິດແປ້ງ, ໂຮງສີເຂົ້າແລະໂຮງງານກັ່ນ ນ້ອມທັງ ໄດ້ສ້າງຖນົນຫົນທາງ, ໂບດແລະໂຮງຮຽນ. ຕໍ່ມາ, ບ້ານເມືອງ ທາງພາກຕະວັນຕົກນີ້ໄດ້ຂຍາຍ ແລະຈະເຣີນໄວທີ່ສຸດ ຊຶ່ງສະພາບ ການປ່ຽນແປງດັ່ງກ່າວນີ້ ໄດ້ເປັນໄປຢ່າງບໍ່ໜ້າເຊື່ອເລີຍ. ຕົວ ຢ່າງ, ໃນປີ ໑໘໓໐ ເມືອງຊິກາໂກ ບໍ່ຊົ່ວຈະເປັນເມືອງການຄ້າ ເລີຍ, ແຕ່ດຽວນີ້ເມືອງນີ້ໄດ້ກາຍເປັນເມືອງທີ່ຮ່ຳຮວຍທີ່ສຸດຂອງຊາດ.

ຜູ້ຄົນຫລາຍເຊື້ອຊາດສັບປົນກັນ ໄດ້ເຂົ້າມາຢູ່ໃນພາກຕະວັນ ຕົກ ຊຶ່ງຊາວມາຊາວສວນ ທີ່ຢູ່ໃນເຂດເໜືອຮູ້ຈັກເຣື່ອງນີ້ດີ. ຕົວ ຢ່າງແມ່ນທ່ານອາບຣາແຮມ ລິງຄອນ ທີ່ໄດ້ມີກຳເນີດມາພາຍໃນຕູບ ໄມ້ຢູ່ໃນເມືອງເຄນເຕີກີ ແລະພວກທີ່ອົພຍົບມາຕ້ັງຖິ່ນຖານ ຢູ່ທາງ ແຖບນີ້ ກໍມີພວກສະກອດ, ໄອຣິສ, ຊາວເຢີຣະມັນ ທີ່ມາຈາກຣັຖ

ເພນຊິລເວເນັຍ, ຊາວເມືອງນິວອິງແລນດ໌ ແລະບຸກຄົນຖືສັນຊາດ
ອື່ນໆອີກ. ໃນປີ ໑໘໓໐, ປະມານເຄິ່ງນຶ່ງຂອງພົລເມືອງ ທີ່ຢູ່ອະ
ເມຣິກາສ່ວນຫລາຍໄດ້ປາກົດຕົວຂຶ້ນມາ ໃນສິ່ງແວດລ້ອມຊຶ່ງຂນົບປະ
ເພນີອັນເກົ່າແກ່ຂອງໂລກໄດ້ເຊື່ອມລົງແລ້ວ. ແລະຜູ້ຄົນ ທີ່ຢູ່ທາງ
ປະເທດຕະວັນຕົກຮູ້ຈັກຄຸນຄ່າອັນສູງສົ່ງ ບໍ່ແມ່ນຈາກປະວັດຂອງຄອບ
ຄົວ ຫລືຈາກມໍຣະດົກທີ່ເຂົາເຈົ້າໄດ້ຮັບຈາກພໍ່ແມ່ມາ ຫລືຈາກການ
ຮ່ຳຮຽນສຶກສາຂອງເຂົາເຈົ້າ, ແຕ່ເຂົາເຈົ້າຮູ້ສຶກພາກພູມໃຈ ໃນ
ການເປັນຢູ່ ແລະໃນສິ່ງທີ່ເຂົາເຈົ້າສາມາດເຮັດຂຶ້ນໄດ້. ການຈັບ
ຈອງທີ່ດິນ ສຳລັບໄວ້ເຮັດນາຫລືສວນນັ້ນ ກໍພໍຫາໄດ້ຕາມຄວາມຕ້ອງ
ການ ທຸກໆຄົນຊຶ່ງຫລັງຈາກປີ ໑໘໔໐ ຖ້າຈະຊື້ດິນຈາກຣັຖບານກໍໄດ້
ເພາະມີຂາຍກັນໃນຣາຄານຶ່ງໂດລາຊາວຫ້າເຊັນ ຫລືຫົກຮ້ອຍຊາວ
ຫ້າຫົບ ຕໍ່ຮ້ອຍແມດມົນທົນ... ແລະອຸປກອນການຂຸດດິນຕ່າງໆກໍມີບໍ່
ອົດ. ເຫມືອນດັ່ງທີ່ນັກຫນັງສືພິມຄົນນຶ່ງມີນາມວ່າ ໂຮຣາສ ກຣີນລີ
ໄດ້ກ່າວຕອນນຶ່ງວ່າ: "ຜູ້ທີ່ຍັງຫນຸ່ມນ້ອຍ ຄວນອອກໄປຢູ່ທາງພາກ
ຕະວັນຕົກແລະໃຫຍ່ຂຶ້ນມາພ້ອມກັບຄວາມຈະເຣີນຂອງປະເທດ".

ການມີໂອກາດຂອງຄວາມສເມີພາບໃນດ້ານການເມືອງແລະ
ເປັນຊ່ອງທາງເປີດໂອກາດໃຫ້ພວກຜູ້ນຳທັງຫລາຍ ໄດ້ພົບກັບຄວາມ
ກ້າວໜ້າຢ່າງວ່ອງໄວ. ການມີຄວາມຄິດ, ຄວາມກ້າຫານ ແລະ
ຄວາມເຂັ້ມແຂງຂອງສ່ວນບຸກຄົນ ໄດ້ເປັນປັດຈັຍສຳຄັນສຳລັບນັກຄົ້ນ

ຄ້ວທີ່ດີ.

ເມື່ອເວລາອົພຍົບ ຍ້າຍໄປຢູ່ພາກຕະວັນຕົກນີ້ ເຂົາເຈົ້າ ເຄີຍນັບຖືມາແຕ່ກ່ອນໄປພ້ອມ, ແລະພວກທີ່ຢູ່ທາງພາກໃຕ້ກໍປະຕິບັດ ຄືກັນ. ບັນຫາຂ້າທາສ ບໍ່ເຄີຍເປັນເຣື່ອງທີ່ພາໃຫ້ຊາວບ້ານສົນໃຈ ແຕ່ມາບາດນີ້ໄດ້ມີການຕື່ນຕົວ ຊຶ່ງປຽບເຫມືອນ "ສັນຍານ ໄຟໄຫມ້ ໃນຍາມກາງຄືນ", ອັນນີ້ເປັນບົດຄວາມຕອນນຶ່ງທີ່ທ່ານ ເຈມເຟີຊັນ ໄດ້ຂຽນໄວ້, ແລະໃນເວລາຕັ້ງຕົ້ນເປັນສາທາຣະນະຣັຖເທື່ອທຳອິດ ມີບາງເທື່ອທີ່ຢູ່ທາງພາກເຫນືອໄດ້ຈຳຫນ່າຍ ຫລືຂາຍທາສ ຜູ້ຊຶ່ງພາ ໃຫ້ມີຜູ້ນຳປະເທດຫລາຍຄົນ ໄດ້ຄິດສົ່ມມຸດໄວ້ແລ້ວວ່າ ວາຣະ ການ ເປັນຂ້າທາສນີ້ ຈະຕ້ອງສິ້ນສຸດລົງໃນມື້ນຶ່ງ. ຕໍ່ມາໃນປີ ๑ກຊຝ, ທ່ານວໍຊິງຕັນໄດ້ຂຽນວ່າ ທ່ານປຣາຖນາຢ່າງແຮງກ້າ ເພື່ອຢາກໃຫ້ ມີການຈັດຕັ້ງໂຄງການລົບລ້າງການເປັນຂ້າທາສນີ້ເທື່ອລະນ້ອຍ ແຕ່ ແນ່ນອນແລະໃຫ້ເລື່ອນລອຍໄປຢ່າງບໍ່ຮູ້ສຶກຕົວ ແລະພ້ອມກັນນີ້ ທ່ານ ເຈພເຟີຊັນ, ທ່ານມອນໂຣ, ແລະຜູ້ນຳທາງຣັຖພາກໃຕ້ກໍໄດ້ສແດງ ຄວາມຄິດເຫັນແບບດຽວກັນນີ້ອອກມາ. ໃນທ້າຍປີ ๑ຊ๐ຊ, ເມື່ອ ການຄ້າຂາຍຂ້າທາສໄດ້ຖືກຍຸບເລີກໄປນັ້ນ, ຣາຊດອນທາງພາກໃຕ້ ຫລາຍຄົນຄິດວ່າ ເຫດການນີ້ເປັນພຽງ... ຄວາມຊົ່ວຮ້າຍທີ່ບໍ່ຍືດ ຍາວຕລອດໄປເທົ່ານັ້ນ.

## ການປູກຝ້າຍໄດ້ສິ່ງເສີມໃຫ້ມີຂ້າທາສຫລາຍຂຶ້ນ

ໃນວາຣະຂອງຄົນຮູ່ນຫນ້ານີ້, ທາງພາກໃຕ້ໄດ້ປ່ຽນສະພາບ ພາຍໃນເຂດຂອງຕົນຄື ທຸກໆຣັຖທາງໃຕ້ໄດ້ໂຮມກັນເຂົ້າເປັນສະຖາ ບັນອັນນຶ່ງທີ່ມີຂ້າທາສ. ການປ່ຽນແປງເຊັ່ນນີ້ ມີເຫດຜົນຫລາຍປະ ການ ຊຶ່ງຫົວໃຈຂອງລັດທິເສຣີນິຍົມ ຊຶ່ງຄັ້ງນຶ່ງໄດ້ລຸກຂຶ້ນສູງເຫນືອ ແປວໄຟ, ແຕ່ຕໍ່ມາໄດ້ຄ່ອຍມອດໄປທີ່ລະນ້ອຍ ແລະຄວາມກຽດຊັງ ທີ່ວໆໄປຣະຫວ່າງພວກປູຣິຕັນຢູ່ໃນເມືອງນິວອິງແລນດ້ ແລະການຮັກ ສາຣະບົບຂ້າທາສທາງພາກໃຕ້ກໍໄດ້ກາຍມາເປັນຄວາມຈິງອີກຄັ້ງນຶ່ງ ນອກເຫນືອຈາກນີ້, ສາເຫດສາໍຄັນຂອງເສຖກິດໃຫມ່ ໄດ້ເຮັດໃຫ້ ຄວາມຕ້ອງການຂ້າທາສຫລາຍຂຶ້ນກວ່າກ່ອນປີ ๑ກຜວ.

ສ່ວນປະກອບໃນການປ່ຽນແປງຂອງເສຖກິດນີ້ກໍມີການເພີ້ມພູນ ອຸດສາຫະກັມການປູກຝ້າຍຫລາຍຂຶ້ນ ເພາະແນວຂອງຝ້າຍທີ່ເອົາມາ ປູກໄດ້ຖືກປັບປູງໃຫ້ດີຂຶ້ນ. ທ່ານເອລີ ວິດນີສ້ ໄດ້ປະດິດເຄື່ອງຈັກ ແຍກຝ້າຍອອກຈາກເມັດ ແລະວິທີນີ້ໄດ້ເຮັດໃຫ້ການປູກຝ້າຍໄວຍິ່ງ ຂຶ້ນ. ໃນເວລາດຽວກັນນີ້, ໂຮງງານອຸດສາຫະກັມຕ່າໍຝ້າຍ ກໍມີ ຄວາມຕ້ອງການຊຶ້ຝ້າຍຫລາຍຂຶ້ນ ເພື່ອເອົາມາຕ່າໍຜ້າແພຈາໍຫນ່າຍ ໃນປະເທດ ແລະຫລັງຈາກແຜ່ນດິນໃຫມ່ທາງພາກຕະວັນຕົກໄດ້ເປີດ ໂອກາດໃຫ້ແກ້ຜູ້ຄົນໃນປີ ๑ຊ๑๘ ກໍໄດ້ມີການແຜ່ຂຍາຍທີ່ດິນສາໍລັບ ປູກຝ້າຍອີກ.

ການปูກฝ้าย ได้ແຜ່ຜາຍອອກໄປທາງພາກຕະວັນຕົກ ຢ່າງວ່ອງໄວ ແລະໄດ້ຂຍາຍອອກໄປທາງໃຕ້ຂອງແມ່ນຳ້ມີຊີຊີບປີ ແລະຕໍ່ລົງມາຮອດເທັກຊັສ. ສາເຫດອັນອື່ນອີກທີ່ພາໃຫ້ການເປັນຂ້າທາສຍັງມີຢູ່ຕໍ່ໄປນັ້ນກໍຄື ການປູກຕົ້ນອ້ອຍ.

ທາງພາກໃຕ້ຂອງຣັຖລູຍຊີອານາເປັນດິນທີ່ອຸດົມສົມບູນ, ອາກາດທາງແຖບນີ້ຮ້ອນແດ່ ແຕ່ເປັນບ່ອນທີ່ເຫມາະສົມທີ່ສຸດສຳລັບການປູກອ້ອຍ ແລະໃນທ້າຍສັຕວັດທີສິບແປດ, ຣັຖນີ້ໄດ້ຜລິດນຳ້ຕານອອກຈຳຫນ່າຍທົ່ວປະເທດ ມີປະຣິມານເຄື່ງນື່ງຂອງນຳ້ຕານທັງຫມົດທີ່ບໍຣິໂພດພາຍໃນປະເທດ. ດ້ວຍເຫດນີ້, ຈື່ງເກີດມີຄວາມຕ້ອງການຂ້າທາສຫລາຍຂຶ້ນ ເພື່ອເອົາມາໃຊ້ເຮັດວຽກຫນັກເຊັ່ນນີ້ ແລະຂ້າທາສເຫລົ່ານີ້ກໍຖືກຊຶ້ມາຈາກຝັ່ງທະເລດ້ານຕະວັນອອກ. ໃນທີ່ສຸດ, ການປູກຢາກໍໄດ້ແຜ່ຜາຍອອກໄປທາງພາກຕະວັນຕົກ ແລ້ວກໍມີການໃຊ້ຂ້າທາສເຫມືອນກັນ.

ສັງຄົມຂອງພວກທີ່ຢູ່ທາງເຫນືອນັ້ນ ເປັນສັງຄົມທີ່ທຸກຄົນມີສິດເສຣີພາບເທົ່າທຽມກັນ ແຕ່ສັງຄົມທາງໃຕ້ເປັນສັງຄົມທີ່ຍັງມີຣະບົບການມີຂ້າທາສແລະໄດ້ແຜ່ຜາຍອອກໄປທາງພາກຕະວັນຕົກ ຊຶ່ງເປັນເຫດໃຫ້ທັສນະທາງການເມືອງ ໄດ້ພົບກັບຄວາມລຳບາກທີ່ສຸດ ທີ່ຈະເຮັດໃຫ້ຣັຖໃຫມ່ມີຄວາມສເມີພາບກັນ. ໃນປີ ๑๗๑๗, ເມືອງອິລລິນອຍ ໄດ້ເຂົ້າຮ່ວມໃນສະຫະພັນຂອງຣັຖທັງຫລາຍ ແລະໃນເວລາ

ນັ້ນ ປາກົດວ່າ ນິສິບຣັຖທີ່ຖືກອະນຸຍາດໃຫ້ມີຂ້າທາສເດັດຂາດ. ຕໍ່ມາເມື່ອຣັຖອາລາບາມາໄດ້ເຂົ້າຮ່ວມໃນສະຫະພັນຂອງຣັຖນັ້ນ ອາລາບາມາໄດ້ເຂົ້າຮ່ວມໃນຖານະຂອງຣັຖທີ່ມີຂ້າທາສ ແລະຈາກນັ້ນຄວາມສມ່ຳສເມີກໍເກີດຂຶ້ນ. ຄັ້ງນຶ່ງນັ້ນ ຊາວເຫນືອຫລາຍຄົນໄດ້ຄັດຄ້ານບໍ່ໃຫ້ຮັບເອົາຣັຖມີຊູຣີ ເຂົ້າຮ່ວມໃນສະຫະພັນ ນອກຈາກວ່າຣັຖນີ້ຈະເປັນຣັຖເສຣີເສັຍກ່ອນ ແລະປາກົດວ່ານີການຄັດຄ້ານຂຶ້ນທົ່ວປະເທດ ແລະສະພາກົງແກຣສ່ ກໍຢູ່ໃນພາວະການທີ່ການເຈຣະຈາບໍ່ຄືບຫນ້າ. ດ້ວຍການເປັນຜູ້ນຳ ທີ່ມີຈິດໃຈເຢືອກເຢັນ ຂອງທ່ານແຮນຣີເກລ, ທ່ານຈຶ່ງໄດ້ມີການຜ່ອນສັ້ນຜ່ອນຍາວ ແລະຍຸຍານແດ່, ດັ່ງນັ້ນຣັຖມີຊູຣີຈຶ່ງໄດ້ເຂົ້າຮ່ວມໃນສະຫະພັນໃນຖານະຂອງຣັຖທີ່ມີຂ້າທາສແລະໃນເວລາດຽວກັນນັ້ນຣັຖກໍໄດ້ເຂົ້າຮ່ວມໃນສະຫະພັນໃນຖານະເປັນຣັຖເສຣີແລະທາງສະພາກົງແກຣສ່ ກໍໄດ້ອອກຄຳສັ່ງວ່າຣະບົບການມີຂ້າທາສນີ້ຕ້ອງແຍກອອກຈາກທີ່ດິນຂອງລູຍຊີອານາທີ່ຢູ່ທາງເຂດເຫນືອຂອງຣັຖມີຊູຣີລົງໄປຮອດທາງໃຕ້ ຊຶ່ງເປັນແຕ່ພຽງທາງອອກໄປສູ່ທະເລຊົ່ວຄາວ. ຕໍ່ມາ ທ່ານເຈພເຟີຊັນຄິດວ່າ ສັນຍານໄຟໄຫມ້ໃນຍາມກາງຄືນ ໄດ້ມິດລົງໄປຊົ່ວຣະຍະນຶ່ງແລ້ວ ແລະທ່ານໄດ້ຂຽນຂໍ້ຄວາມຕອນນຶ່ງໄວ້ວ່າ: "ນີ້ເປັນພຽງການບັນເທົາ ເທົ່ານັ້ນ, ແຕ່ບໍ່ແມ່ນການຕັດສິນໃຈຂັ້ນສຸດທ້າຍ. ເສັ້ນແຖວ ຂອງພູມີສາດ ກໍບັງເອີນ ຄືກັນກັບຫລັກການທີ່ໄດ້ແຕ່ງໄວ້ແລ້ວ ເພາະວ່າ

ຄວາມປະພຶດ ແລະການເມືອງເມື່ອໄດ້ກໍ່ຕັ້ງຂຶ້ນແລ້ວ ກໍພາໃຫ້ຄົນມີ
ຄວາມໂກດເຄືອງ ແລະຄວາມຮັກ ແລະບໍ່ມີທາງຈະລົບລ້າງໄດ້;
ແລະຄວາມໂກດເຄືອງນັ້ນ ກໍຈະຝັງເລິກລົງໄປທຸກໆມື້. ເພື່ອຊ່ວຍ
ບໍ່ໃຫ້ຜູ້ຄົນອົພຍົບ ເຂົ້າໄປໃນເມືອງຕັກຊັສ ຊຶ່ງກາຍອອກໄປຈາກ
ເຂດແດນຂອງສຫະຣັຖ, ຈຶ່ງໄດ້ຊັກຊວນໃຫ້ມີການປູກຝັງຂຍາຍອອກ
ໄປຕາມຊາຍແດນ ແຕ່ບໍ່ໃຫ້ກາຍຣັຖມີຊຸຣິກ່ອນປີ ໑໗໔໐. ໃນຂນະ
ດຽວກັນນີ້, ຢູ່ທາງດ້ານຕະວັນຕົກ, ໄດ້ກາຍເປັນບ່ອນທີ່ມີກິຈການ
ໃຫຍ່ເຊັ່ນການຄ້າຂົນສັດ ຊຶ່ງນັບວ່າມີຄວາມໝາຍທີ່ສຸດ ໃນປະວັດ
ສາດ ເພາະມັນມີຣາຄາຫລາຍກວ່າໜັງສັດ ທີ່ໄດ້ຮີບໂຮມຫລືສະສົມ
ເອົາໄວ້. ເໝືອນກັນກັບເຫື່ອທຳອິດ ທີ່ຊາວຝຣັ່ງເສດໄດ້ທຳການ
ສຳຣວດຮ່ອມພ້ອຍມີຊຸບປີ ແລະເໝືອນກັນກັບບາດກ້າວທຳອິດ ທີ່
ຊາວອັງກິດແລະຊາວດັສທີ່ໄດ້ມາຝັ່ງແອດແລນຕິກແລະພາກຕະວັນຕົກ
ຊຶ່ງລ້ວນແຕ່ເປັນພວກທີ່ມາຫາຊ່ອງທາງເພື່ອການທຳມາຫາກິນທັ້ງນັ້ນ
ຊາວຝຣັ່ງເສດ ແລະຊາວສະກອດທີ່ເຊື່ອໄອຣິສໄດ້ທຳການສຳຣວດ
ຫ້ວຍ, ນ້ຳໃຫຍ່, ແລະສາຂາອື່ນໆອີກຫລາຍບ່ອນ ແລະໄດ້ພົບຊ່ອງ
ທາງ ທີ່ນຳໄປສູ່ພູຫິນ ແລະພູເຂົາຊິເອຣາ. ໂດຍການຮູ້ຈັກພູມີປະ
ເທດຂອງພາກຕະວັນຕົກນີ້ດີ, ພວກພໍ້ຄ້າຫັ້ງຫລາຍ ຈຶ່ງໄດ້ພາກັນອົພ
ຍົບມາຢູ່ໃນແຖບນີ້ ແລະຕໍ່ມາ ກໍໄດ້ຄອບຄອງທີ່ດິນຢູ່ແຖບໃນ ເພື່ອ
ສນັບສນູນການຂຍາຍອອກໄປ ທາງພາກຕະວັນຕົກ ຂອງພວກອົພຍົບ

ນີ້, ສະຫະຣັຖໄດ້ຮັຖຟລໍຣິດາຈາກປະເທດສະເປັນ ຄິດເປັນມູນຄ່າ ๔ ລ້ານໂດລາ, ແຕ່ຫລັງຈາກນັ້ນ ສະເປັນຍັງຄອບຄອງເມືອງອໍຣິກັນ ຢູ່ພາກຕະວັນຕົກຕໍ່ໄປ.

## ເອກຣາຊຂອງຊາວອະເມຣິກາໃຕ້

ໃນປີ ๑๘๑๓, ທ່ານເຈມສ໌ມອນໂຣ ໄດ້ສືບຕຳແໜ່ງປະທານາທິບໍດີຂອງສະຫະຣັຖຕໍ່ຈາກທ່ານ ເຈມສ໌ເມດີຊັນ. ກ່ອນຈະເຂົ້າມາຮັບຕຳແໜ່ງປະທານາທິບໍດີນີ້, ທ່ານມອນໂຣໄດ້ຮັບໃຊ້ສາທາຣະນະປະໂຍດມາຫລາຍປີແລ້ວຈົນເປັນທີ່ຮູ້ຈັກດີແກ່ຄົນທົ່ວໄປ. ທ່ານມີຄຸນງາມຄວາມດີ ພິເສດສອງຢ່າງຄື: ການມີໄຫວພິບ ແລະການມີຄວາມເຂັ້ມແຂງເປັນເດີມພັນ. ທ່ານຈອນຄວິນ ຊີແອດັມສ໌, ຜູ້ທີ່ສືບຕໍ່ທ່ານມອນໂຣໄດ້ເວົ້າວ່າ, "ທ່ານມອນໂຣມີຄວາມເຫັນຫລີໄດ້ໃຫ້ການພິຈາຣະນາຕ່າງໆ ຊຶ່ງນຳພາໃຫ້ມີຄວາມແໜ້ນໜາ ແລະໝັ້ນຄົງ". ໃນເວລາທ່ານຢູ່ໃນຕຳແໜ່ງນັ້ນ, ເຫດການອັນນຶ່ງທີ່ພາໃຫ້ທ່ານມີຊື່ສຽງໂດ່ງດັງແລະບໍ່ຕາຍຈາກຄວາມນຶກຄິດຂອງຄົນທົ່ວໄປນັ້ນຄື ການປະກາດລັດທິຂອງມອນໂຣ.

ສ່ວນປະກອບສາມຢ່າງ ຂອງນະໂຍບາຍນີ້, ໄດ້ແຕ່ງໃຫ້ມີຫລັກການຂອງອະເມຣິກັນຂຶ້ນຢ່າງຖ້ຽວນ. ຄັ້ງທຳອິດ, ທ່ານຈໍຊີ ຕັນ, ທ່ານເຈຟເຟີຊັນ, ແລະທ່ານເມດີຊັນໄດ້ຄັດຄ້ານນະໂຍບາຍທີ່

ຈະພາໃຫ້ສະຫະຣັຖເຂົ້າໄປພົວພັນກັບສັມພັນທະມິດຕລອດໄປ. ແລ້ວ ຕໍ່ມາ, ທ່ານເຈຟເຟີຊັນ ໄດ້ປະກາດນະໂຍບາຍຂອງຝີ່ນປະໂຍດອັນ ສຳຄັນຂອງສະຫະຣັຖໃນຊາຕາກັນຂອງເພື່ອນບ້ານໃນຄາວທີ່ທ່ານຄັດ ຄ້ານການປ່ຽນ ລູຍຊີອານາໃຫ້ເປັນຂອງປະເທດສະເປັ່ນ ແລະຢືນ ຢັ່ນວ່າບໍ່ຢາກໃຫ້ຣັຖນີ້ ຢູ່ພາຍໃຕ້ການປົກຄອງຂອງໃຜໜົດ ນອກ ຈາກຂອງສະຫະຣັຖເທົ່ານັ້ນ. ສ່ວນປະກອບ ທີ່ສາມ, ແມ່ນຫລັກ ການຂອງຄວາມຕັ້ງໃຈໃນຕົນເອງ ຊຶ່ງປະຊາຊົນໃນສະຫະຣັຖໄດ້ສະ ແດງອອກມາຊຶ່ງຄວາມເຫັນອົກເຫັນໃຈຊາວອະເມຣິກັນທີ່ອາໄສຢູ່ໃນ ອານານິຄົມຂອງສະເປັນທີ່ກຳລັງຕໍ່ສູ້ເພື່ອເອກຣາຊຂອງຕົນ.

ຫລັງຈາກອານານິຄົມຂອງອັງກິດໄດ້ຖືກປົດປ່ອຍແລະມີອິສຣະ ພາບແລ້ວ, ຄວາມຫວັງຂອງຊາວອະເມຣິກາໃຕ້ ກ່ຽວກັບການຢາກ ໄດ້ມາຊຶ່ງເອກຣາຊ ແລະອິສຣະພາບ, ໄດ້ພາໃຫ້ປະຊາຊົນເກີດມີ ຄວາມປັ່ນປ່ວນເປັນທີ່ສຸດ. ກ່ອນປີ ๑๗๘๑, ປະເທດອາເຢັນຕິນາ ແລະຊີລີ, ໄດ້ປະກາດການເປັນເອກຣາຊ ແລະໃນປີ ๑๗๘๘ ໂດຍ ພາຍໃຕ້ການນຳຂອງທ່ານ ໂອເຊເດີຊານມານີຕິນ ແລະທ່ານຊີມອນ ໂບລີວາ, ຫລາຍຣັຖທີ່ຢູ່ໃນອະເມຣິກາໃຕ້ ໄດ້ຮັບເອກຣາຊ. ຕົກ ມາໃນປີ ๑๗๘๔, ມີແຕ່ອານານິຄົມນ້ອຍໆ ເທົ່ານັ້ນ ທີ່ຍັງເປັນຂອງ ຊາວຢຸໂຣບຢູ່ ເຊັ່ນວ່າ ໃນໝູ່ເກາະອິນເດັຍຕະວັນຕົກ ແລະຕາມ ແຄມຝັ່ງທາງພາກເໜືອ ຂອງອະເມຣິກາໃຕ້. ອານານິຄົມທີ່ກ່າວ

ມານ້ຳຮ່ວມກັບບ່ອນທີ່ຊາວອັງກິດຢຶດໄດ້ສອງສາມບ່ອນທີ່ຍັງເຫລືອ ຍັງ
ເປັນອານານິຄົມຂອງຊາວຢຸໂຣບຢູ່.

ດັ່ງນັ້ນ, ປະຊາຊົນຂອງສະຫະຣັຖອະເມຣິກາມີຄວາມສົນໃຈ
ຢ່າງເລິກເຊິ່ງ ໃນປະສົບການທີ່ຜ່ານມາຂອງເຂົາເຈົ້າກ່ຽວກັບການ
ຕັດສົມພັນຈາກຣັຖບານຂອງຢຸໂຣບ. ໃນປີ ໑໗໘໘, ພາຍໃຕ້ອິດທິ
ພົນແລະຄວາມກົດດັນຂອງປະຊາຊົນ, ທ່ານປະທານາທິບໍດີມອນໂຣ
ໄດ້ຣັບອະນຸຍາດໃຫ້ຣັບຮູ້ປະເທດໃໝ່ເຊັ່ນ: ປະເທດໂກໂລມເບັຍ
ປະເທດຊິລີ, ແມກຊິໂກ, ແລະປະເທດບຣາຊິລ ຊຶ່ງຕໍ່ມາ ກໍໄດ້ມີ
ການແລກປ່ຽນການທູດ ກັບບັນດາປະເທດເຫລົ່ານັ້ນ. ໃນການກ້າວ
ເຂົ້າສູ່ບາດກ້າວເຊັ່ນນີ້, ສະຫະຣັຖໄດ້ຍອມຣັບເອົາຫລັກການທີ່ວ່າ
ປະເທດເຫລົ່ານັ້ນຈະຢູ່ໂດຍຕົນເອງ ເປັນປະເທດທີ່ມີເອກຣາຊສົມບູນ
ແລະຈະແຍກອອກຈາກການຢູ່ໃຕ້ການປົກຄອງຂອງຊາວຢຸໂຣບ ໂດຍ
ເດັດຂາດ. ສະຫະຣັຖໄດ້ໃຫ້ຄວາມໄວ້ວາງໃຈແກ່ປະເທດເຫລົ່ານີ້
ໃນນາມເປັນປະເທດບ້ານໃກ້ ເຮືອນຄຽງກັນ ປຽບເໝືອນຄອບຄົວ
ດຽວກັນແລະເປັນສ່ວນນຶ່ງຂອງອະເມຣິກາເສຣີ.

ໃນເວລານີ້ ກໍໄດ້ມີການຮ່ວມອຳນາດກາງ ຂອງຊາວຢຸໂຣບ
ຊຶ່ງເອີ້ນວ່າສັນພັນທະໄມຕຣີອັນສັກສິດ, ໄດ້ຈັດຕັ້ງຂຶ້ນມາເພື່ອຣັກສາ
ຫລັກການອັນຖືກຕ້ອງແລະຊອບທັມຂອງຢຸໂຣບ ເພື່ອຕໍ້ຕ້ານການປະຕິ
ວັດ. ອົງການນີ້ໄດ້ຈັດຕັ້ງຂຶ້ນມາເພື່ອຢຸດຢັ້ງຂໍ້ບ່ວນການຂອງປະຊາ

ຊຶ່ນໃນປະເທດໃດປະເທດນຶ່ງ ທີ່ຈະນຳພົນເສັຍຫາຍມາສູ່ບັນລັງຂອງ ພະມະຫາກະສັດ ແລະເພື່ອຫວັງຈະກຳຈັດ ບໍ່ໃຫ້ການປະຕິວັດແຜ່ໄປ ເຖິງປະເທດໃນເຄືອຈັກພົບອັງກິດ. ແຕ່ນະໂຍບາຍດັ່ງກ່າວນີ້ ໄດ້ ຂັດຕໍ່ຫລັກການ ຂອງຄວາມຕັ້ງໃຈ ຂອງຊາວອະເມຣິກັນ. ຕໍ່ມາ ຄວາມໄວ້ວາງໃຈຂອງສະຫະຣັຖທີ່ມີຕໍ່ຄວາມໝັ້ນຄົງຖາວອນຂອງຣັຖ ບານໃໝ່ ໄດ້ຮັບຄວາມກະທົບກະເທືອນ ເປັນຢ່າງຍິ່ງ ເພາະວ່າ ພວກສັມພັນທະມິດໄດ້ເບັດຄວາມສົນໃຈ ມາໃສ່ປະເທດສະເປັນແລະ ອານຈັກິລິສ ໃນໂລກໃໝ່ນີ້. ໃນສາຍຕາຂອງສະຫະຣັຖແລ້ວ ເຫັນວ່າ ອຳນາດສ່ວນໃຫຍ່ຂອງຢຸໂຣບ ກຳລັງພຍາຍາມຈະເຂົ້າມາ ຄອບຄອງເຂດແດນສ່ວນນີ້ ຊຶ່ງເຂົາເຈົ້າໄດ້ປົດປ່ອຍຕົວ ອອກຈາກ ການຄອບຄອງ ຂອງປະເທດ ສະເປັນແລ້ວ. ນັບວ່າ ເປັນເວລາ ຫລາຍປີມາແລ້ວ ທີ່ຣັຖບານອະເມຣິກັນໄດ້ດຳເນີນນະໂຍບາຍການ ຫ່າງເຫີນອອກຈາກຢຸໂຣບ ຊຶ່ງເລີ່ມຕັ້ງແຕ່ທ່ານວໍຊິງຕັນ, ທ່ານແຮ ມິລຕັນ, ທ່ານເຈັຟເຟີຊັນ ແລະທ່ານຈອນແອດດັມສ໌ ແລະຣັຖບຸຣຸດ ຄົນອື່ນເປັນຕົ້ນມາ. ຄວາມໝາຍສ່ວນໃຫຍ່ໃນນີ້ກໍຄືວ່າ ສະຫະ ຣັຖບໍ່ໄດ້ມີສ່ວນຮູ້ຮ່ວມຄິດ ໃນນະໂຍບາຍແບບປະສົມຂອງຊາວຢຸໂຣບ ແຕ່ຢ່າງໃດ, ແລະບໍ່ໄດ້ເປັນຄູ່ ຮ່ວມເຮັດສົງຄາມກັບຢຸໂຣບດ້ວຍ, ແລະຈະດຳເນີນນະໂຍບາຍ ໃນການພັທນາຕົວເອງໃຫ້ເປັນຣັຖຂອງ ຊາວອະເມຣິກາ. ຈາກນະໂຍບາຍນີ້, ຖືວ່າເປັນການງ່າຍທີ່ສຸດ

ໃນການດຳເນີນນະໂຍບາຍຕາມແບບສະບັບຂອງສຫະຣັຖ, ແຕ່ທາງ
ຝ່າຍອຳນາດຢຸໂຣບບໍ່ຄວນເຂົ້າມາແຊກແຊງໃນກິຈການພາຍໃນຂອງ
ຊາວອະເມຣິກັນແຕ່ຢ່າງໃດ.

## <u>ສະຫະຣັຖຄັດຄ້ານຕໍ່ການຍຶ່ນຍູ່ຂອງຢຸໂຣບ</u>

ປາກົດວ່າ ປີ ๑๘๒๓ ເປັນປີຂອງການຕໍ່ສູ້ ເພື່ອຕ້ານທານ
ການແຊກແຊງຂອງບຸກຄົນທີ່ສາມາດເຂົ້າມາແຊກແຊງ ໃນນາມຂອງ
ປະເທດສະເປັນ. ໃນວັນທີສອງເດືອນທັນວານີ້, ທ່ານມອນໂຣໄດ້
ອອກຖແລງການປະຈຳຮອບປີຂອງທ່ານຕໍ່ສະພາສູງ ຊຶ່ງຖ້ອຍຖແລງ
ຫລາຍຕອນໃນນີ້ໄດ້ກາຍມາເປັນຫລັກການຂອງມອນໂຣ ຊຶ່ງເອີ້ນວ່າ
(Monroe Doctrine) ຫລັກການສຳຄັນໃນຂໍ້ຖແລງການເທື່ອ
ນີ້ແມ່ນຄຳເວົ້າຂອງ ທ່ານມອນໂຣເອງ; ๑. "ທະວີບຂອງຊາວ
ອະເມຣິກັນນີ້ມີຖານະການເປັນຢູ່ຢ່າງເສຣີ ແລະມີເອກຣາຊຶ່ງເຂົາ
ເຈົ້າຈະໄດ້ພາກັນຮັກສາໄວ້ ແລະຈາກເວລານີ້ໄປທະວີບນີ້ຈະບໍ່ເປັນ
ເລື່ອງມືໃນການເປັນຫົວເມືອງຂຶ້ນ ໃນອານາຄົດຂອງອຳນາດຂອງຢຸ
ໂຣບ". ๘. "ຣະບົບການເມືອງຂອງອຳນາດພັນທະມິດນັ້ນແຕກ
ຕ່າງກັນຫລາຍກັບຣະບົບການເມືອງຂອງອະເມຣິກາ. ພວກເຮົາບໍ່
ຄວນໃຫ້ການສນັບສນຸນ ແກ່ມະຫາອຳນາດເຫລົ່ານີ້ແຕ່ຢ່າງໃດ, ໃນ
ການແຜ່ຂຍາຍອິດທິພົນຂອງເຂົາເຈົ້າໃນດິນແດນນີ້ ເພາະມັນອາດ

ຈະເປັນອັນຕລາຍແກ່ຄວາມສງົບສຸກແລະຄວາມປອດໄພຂອງເຮົາ". ມ. "ສຳລັບປະເທດທີ່ຍັງເປັນຫົວເມືອງຂຶ້ນ ຂອງອິດທິພົນຢຸໂຣບຢູ່ນັ້ນ, ພວກເຮົາຈະບໍ່ເຂົ້າແຊກແຊງແລະຈະບໍ່ຫຍັງກ່ຽວນຳໂດຍເດັດຂາດ". ๔. "ໃນກໍຣະນີ ທີ່ກ່ຽວຂ້ອງກັບສົງຄາມ ຂອງອິດທິພົນຂອງປະເທດຢຸໂຣບນັ້ນ, ພວກເຮົາບໍ່ເຄີຍເຂົ້າຮ່ວມນຳຈັກເທື່ອແລະກໍບໍ່ເໝາະສົມກັບນະໂຍບາຍຂອງເຮົາອີກດ້ວຍ".

ໃນຂນະທີ່ຫລັກການຂອງມອນໂຣກຳລັງໄດ້ໃຫ້ຄວາມກະຈ່າງແຈ້ງແກ່ນະໂຍບາຍຂອງຊາວອະເມຣິກັນທີ່ມີຕໍ່ກິຈການຂອງໂລກຢູ່ນັ້ນ ຄວາມສົນໃຈຂອງປວງຊົນພາຍໃນປະເທດ ໄດ້ໂຮມຢູ່ກັບການໂຄສະນາຫາສຽງ ໃນການເລືອກຕັ້ງປະທານາທິບໍດີ. ໃນການເລືອກຕັ້ງເທື່ອນີ້, ມີຜູ້ສມັກທັງຫມົດຫ້າທ່ານ ຄື: ທ່ານແອນດຣູ ແຈກຊັນໄດ້ມີຊື່ວ່າເປັນຜູ້ຮູ້ແລະມີປະສົບການຫລາຍທີ່ສຸດ ແຕ່ກົງກັນຂ້ວມກັບທ່ານຈອນ ຄວິນຊີ ແອດັມສ໌ ຊຶ່ງມີຄວາມເປັນຣັຖບຸຣຸດຢ່າງພຽບພ້ອມທີ່ມີອຸປນິໄສດີ, ມີຈິດໃຈເອື້ອເຟື້ອຕໍ່ສາທາຣະນະຊົນສເມີ ອຸປສັກຂອງທ່ານແຈກຊັນກໍຄືວ່າ ທ່ານເຄັ່ງຄັດເກີນໄປ, ການຕັດສິນໃຈກໍຣິບ ດ່ວນແລະມີອາຣົມຮຸນແຮງເກີນໄປ.

ໃນຣະຫວ່າງການປົກຄອງຂອງທ່ານແອດັມສ໌ນັ້ນ, ພັກການເມືອງໃຫມ່ໆ ກໍໄດ້ມີການຮ່ວມມືກັນເປັນຢ່າງດີ ແລະຜູ້ຕິດຕາມທ່ານແອດັມສ໌ ໄດ້ຕັ້ງຊື່ພັກຂອງຕົນວ່າ ພັກຣິພັບບລິແກນແຫ່ງຊາດ, ແລະ

ຕໍ່ມາກໍໄດ້ປ່ຽນຊື່ມາເປັນພັກວິກ ຊຶ່ງຣັຖບານຂອງທ່ານໄດ້ໃຫ້ລັກສນະ
ໃຫມ່ແກ່ພັກປະຊາທິປະໄຕ. ທ່ານແອດັມສ໌ໄດ້ປົກຄອງປະເທດດ້ວຍ
ຄວາມຊື່ສັດສຸຈຣິດ ແລະໄດ້ພົນດີທີ່ສຸດ. ທ່ານໄດ້ພຍາຍາມຈັດຕັ້ງ
ຣະບຽບການທາງຫລວງແລະຄອງນ້ຳຂຶ້ນ.

ຣັຖບານຂອງທ່ານ ເປັນຣັຖບານທີ່ເອົາການເອົາງານ ແລະ
ເປັນການໂຄສະນາໄປໃນຕົວສຳລັບການເລືອກຕັ້ງຂອງປີ ໑໙໔໙ ທີ່
ມີສະພາບເຫມືອນແຜ່ນດິນໄຫວ. ຕໍ່ມາ ກຳລັງຂອງພັກແຈກຊັນ ກໍ
ສນັບສນູນທ່ານແອດັມສ໌.

ການມີຄວາມເຊື່ອຫມັ້ນຂອງຄນະຊາວປ່າຊາວສວນທີ່ໄດ້ສ້າງ
ຄວາມນັ່ງມີໃຫ້ແກ່ທາງພາກຕະວັນຕົກຕາມແຖບພູອາເລເກນີແລະໄດ້
ແຕ່ງກົດຫມາຍຣັຖທັມມະນູນໂດຍຖືເອົາຣະບົບປະຊາທິປະໄຕມາເປັນ
ຂອງເຂົາເຈົ້າກໍໄດ້ຖືກມອບສິດທິໃຫ້ໃນການເລືອກຕັ້ງແກ່ປວງຊົນທົ່ວ
ໄປທີ່ຢູ່ຕາມຣັຖເກົ່າໆ. ຕັ້ງແຕ່ສົງຄາມໃນປີ ໑໙໑໔ ເປັນຕົ້ນມາ,
ທາງພາກຕະວັນຕົກນີ້ໄດ້ມີອຳນາດກ້າເກີ່ງກັນ ໃນການເຂົ້າຮ່ວມໃນ
ສຫະພັນນຳຫມູ່. ມາບັດນີ້ສູນກາງຂອງການເມືອງເຊັ່ນດຽວກັນກັບ
ປະຊາຊົນໄດ້ພາກັນຫນີຈາກແຄມຝັ່ງທະເລ ແລະໄດ້ພາກັນຫລັ່ງໄຫລ
ມາຢູ່ຕາມພາກຕະວັນຕົກ. ໂດຍການອຸ່ຍເຫລືອ ຂອງພວກທີ່ສນັບ
ສນູນທາງດ້ານຕະວັນອອກ, ທ່ານແຈກຊັນ ຈຶ່ງໄດ້ກາຍເປັນບຸກຄົນ
ຂອງດິນແດນແຫ່ງນີ້ ແລະໃນທີ່ສຸດກໍຖືກເລືອກ ໃຫ້ເປັນຜູ້ນຳຂອງປະ

ເຫດ.

## ທ່ານແຈກຊັນເປັນປະທານາທິບໍດີທີ່ເຂັ້ມແຂງ

ທີ່ກູງວໍຊິງຕັນດີຊີ, ການເຂົ້າຮັບຕຳແຫນ່ງຂອງທ່ານແຈກຊັນເປັນຫລັກຖານອັນດັງກ້ອງ ຈາກຄວາມເຊື່ອຖືຂອງປະຊາຊົນ ທີ່ວ່າເຂົາເຈົ້າໄດ້ມີຮັຖບານເປັນກັມສິດແລ້ວ ແລະມີຜູ້ຄົນປະມານສິບກວ່າພັນຄົນທີ່ມາຈາກຮັຖຕ່າງໆໄດ້ເຂົ້າມາເປັນສັກຂີພະຍານໃນໂອກາດນີ້ ທ່ານແຈກຊັນເປັນຄົນມີຮ່າງກາຍຜອມສູງ, ແຕ່ງຊຸດໃຫຍ່ສີດຳ, ທ່າທາງສຸຂຸມ ແຕ່ບໍ່ມີຂບວນແຫ່ຢ່າງເປັນທາງການ ແລະມີແຕ່ພຽງຫມູ່ເພື່ອນທີ່ສນິດສນົມເທົ່ານັ້ນທີ່ຢ່າງນຳທ່ານ. ຢູ່ເບື້ອງເທິງຂອງ ຂັ້ນໄດຫີນໃຫຍ່ ໄປຫາເບື້ອງຕະວັນອອກຂອງທາງເຂົ້າທີ່ຕົກແຄປິຕອລ, ທ່ານແຈກຊັນໄດ້ເຂົ້າພິທີສາບານຕົວເພື່ອຮັບຕຳແຫນ່ງປະທານາທິບໍດີ ແລະຈາກນັ້ນ ທ່ານກໍໄດ້ກ່າວຄຳປາໄສເນື່ອງໃນໂອກາດນີ້. ຫລັງຈາກນັ້ນ, ທ່ານໄດ້ຢ່າງຜ່າຟູງຊົນອັນຫນາແຫນ້ນທີ້ຮ້ອງໂຮແລະຢາກສັມຜັດມືກັບທ່ານ ແລະຈາກນັ້ນທ່ານແຈກຊັນໄດ້ຂີ້ມ້າ ໄປຍັງທຳນຽບຂາວຊຶ່ງຕິດຕາມທ່ານໄປກໍມີຂບວນຣົຖລາກ, ຣົຖຊາວນາ ແລະຜູ້ຄົນຫຸກຊັ້ນວັນນະທັງຫນຸ່ມແລະເຖົ້າ.

ທ່ານແຈກຊັນມີຊີວິດຈິດໃຈແບບຄົນທັມມະດາທັງຫລາຍເພາະທ່ານມາຈາກຄອບຄົວທີ້ຂ້ອນຂ້າງຈະຍາກຈົນແດ່ ແລະບິດາຂອງທ່ານ

ໄດ້ເສັຍຊີວິດ ຕັ້ງແຕ່ທ່ານບໍ່ທັນເກີດພຸ້ນ. ເມື່ອງດ້ວຍການໄດ້ຜ່ານ
ຄວາມລຳບາກຢາກຈົນ ມາແຕ່ຍັງນ້ອຍ, ທ່ານຈຶ່ງມີຄວາມເຫັນອົກ
ເຫັນໃຈຜູ້ທີ່ຕົກທຸກໄດ້ຍາກເປັນທີ່ສຸດ ເພາະໃນສໄໝທີ່ຍັງຫນຸ່ມນ້ອຍ
ນັ້ນ ທ່ານແຈກຈັນໄດ້ຮ່ວມຕໍ່ສູ້ໃນສົງຄາມປະຕິວັດ ຊຶ່ງໃນເວລານັ້ນ
ອ້າຍເອງທ່ານທັງສອງຄົນ ກໍໄດ້ເສັຍຊີວິດໄປ ໃນຄາວສູ້ຮົບເທື່ອນັ້ນ
ດ້ວຍ. ເມື່ອທ່ານແຈກຈັນມີອາຍຸໄດ້ສິບສີ່ປີ, ທ່ານໄດ້ຢູ່ຢ່າງໂດດ
ດ່ຽວໃນໂລກ. ໃນເວລາທີ່ທ່ານສຳເຣັດການສຶກສາ ແລະໄດ້ເຂົ້າ
ຮັບຕຳແໜ່ງເປັນທະນາຍຄວາມ, ທ່ານເຄີຍເປັນທັງນັກປຸກຝັງແລະ
ພໍ້ຄ້າ, ແລະຍັງໄດ້ເຮັດໃຫ້ອົງການເງິນ ຂອງພາກຕະວັນອອກຂາດ
ຄວາມໄວ້ວາງໃຈ ຊຶ່ງເຮົ້ອງນີ້ໝາຍເຖິງການຄ້າທາງພາກຕະວັນ
ຕົກມີອິດທິພົນເຂັ້ມແຂງ. ນອກຈາກນັ້ນ, ທ່ານແຈກຈັນຍັງມີຄວາມ
ເຊື່ອຖືໃນຄວາມສາມາດຂອງຄົນທັມມະດາສາມັນກ່ຽວກັບ ການເຮັດ
ແນວໃດແນວນຶ່ງໃຫ້ເປັນພົນສຳເຣັດ. ແມ່ນວ່າອຸດົມຄະຕິຂອງທ່ານນີ້
ເປັນຂອງທັມມະດາຊຶ່ງທ່ານແຈກຈັນມີຄວາມເຊື່ອໝັ້ນໃນບຸກຄົນທົ່ວໆ
ໄປແລະເຫັນດີນຳຄວາມສເມີພາບໃນດ້ານການເມືອງແລະເຫັນດີໃຫ້
ທຸກໆຄົນມີໂອກາດເທົ່າທຽມກັນໃນການຄອງຊີບ, ແຕ່ສິ່ງທີ່ທ່ານກຽດ
ຊັງທີ່ສຸດນັ້ນກໍຄືຣະບົບການຜູກຂາດແລະການໃຊ້ສິດພິເສດ.

ເມື່ອໄດ້ມີອຳນາດເຕັມໃນການບໍຣິຫານແລ້ວ, ທ່ານແຈກຈັນ
ກໍໄດ້ປະຕິບັດຕາມອຸດົມຄະຕິນີ້ໂດຍທັນທີ ແລະທ່ານໄດ້ຈັດການຢ່າງ

ເຂັ້ມງວດກວດຂັນ ໃນບັນຫາເຣື່ອງການຄຸ້ມກັນທີ່ມີແຕ່ພວກເຈົ້າຂອງ ໂຮງງານຫັຖກັມທາງພາກເໜືອໄດ້ຮັບແຕ່ຜູ້ດຽວ ໃນຂນະທີ່ຊາວໄຮ່ ຊາວສວນທາງພາກໃຕ້ກຳລັງຕ້ອງສູ້ໜ້າກັບບັນຫາໜັກໃນການເສັຍ ອັດຕຣາພາສີສູງ. ໃນຂນະທີ່ທາງສະພາກົງແກຣສ ໄດ້ອອກກົດ ໝາຍເພີ່ມອັດຕຣາເສັຍພາສີຂຶ້ນຕາມລຳດັບນັ້ນ, ທ່ານແຈກຊັນໄດ້ເປັນ ໂຮມກັນເປັນອັນດຽວແລ້ວພໍໄດ້ພົບກັບຄວາມຮ່ຳມືເລັ່ອຍໆ, ແຕ່ທາງ ຣັຖແຄໂຣໄຮນາທາງພາກໃຕ້ກໍຍັງຢູ່ຫ່າງໄກຈາກຄວາມມ່ຳມີຫລາຍ. ປະຊາຊົນຢູ່ໃນເຂດນັ້ນຕ່າງກໍສ້າງຄວາມຫວັງໄວ້ວ່າ ທ່ານແຈກຊັນຈະ ໃຊ້ອຳນາດຂອງການເປັນປະທານາທິບໍດີເພື່ອແກ້ໄຂແລະດັດແປງກົດ ໝາຍວ່າດ້ວຍການເກັບພາສີ ຊຶ່ງປະຊາຊົນໄດ້ຄັດຄ້ານມາເປັນເວ ລານານແລ້ວ. ແຕ່ຄວາມຄາດໝາຍຂອງເຂົາເຈົ້າກໍໄດ້ລົ້ມເຫລວ ໄປ ເພາະວ່າ ທ່ານແຈກຊັນບໍ່ໄດ້ແບ່ງປັນຄວາມຄິດຄວາມເຫັນໃນ ການໃຫ້ຄວາມຄຸ້ມກັນແກ່ເຂົາເຈົ້າ ທີ່ຂັດຕໍ່ກົດໝາຍ ຂອງຣັຖທັມມະ ນູນໃນປີ ໑໙໓໘ ເມື່ອສະພາກົງແກຣສໄດ້ອອກກົດໝາຍວ່າດ້ວຍອັດ ຕຣາເສັຍພາສີ, ທ່ານແຈກຊັນກໍໄດ້ເຊັນຮັບຮອງເອົາຢ່າງບໍ່ຊັກຊ້າ. ເມື່ອເປັນເຊັ່ນນັ້ນ, ປະຊາຊົນຊາວແຄໂຣໄຮນາທາງພາກໃຕ້ຈຶ່ງໄດ້ ຈັດຕັ້ງພັກນ້ອຍນີ້ຂຶ້ນ ເຊ່ິ ວ່າ "ພັກທີ່ຍຶດຖືສິດທິຂອງຣັຖ". ພັກນີ້ເປັນຕົວ ແທນຂອງບຸກຄົນທີ່ເຊື່ອໃນຫລັກການທີ່ຢາກໃຫ້ມີການລົບລ້າງ ຄື ວ່າ ຕົວແທນຂອງກອງປະຊຸມພາຍໃນຣັຖ ມີສິດອອກຄວາມຄິດຄວາມເຫັນ

ວ່າ ການອອກກົດໝາຍຂອງສະພາກົງແກຣສຖືກຕ້ອງຕາມຣັຖທັມມະ
ນູນຫລືບໍ່, ແລ້ວກົດໝາຍດັ່ງກ່າວນີ້ກໍຈະຖືກລົບລ້າງແລະຖືວ່າ ເປັ
ໂມຄະຢູ່ພາຍໃນຣັຖທີ່ຖືກລົບລ້າງ ຕໍ່ມາຣັຖສະພາໃໝ່ນີ້ໄດ້ໄຂກອງ
ປະຊຸມຂຶ້ນພ້ອມທັງໄດ້ມີການອອກສຽງແລະປາກົດວ່າສຽງສ່ວນຫລາຍ
ເຫັນດີນຳການລົບລ້າງ, ດັ່ງນັ້ນຣັຖສະພາຈຶ່ງໄດ້ເຣັດກົດໝາຍອອກ
ມາ ຄືກົດໝາຍວ່າດ້ວຍອັດຕຣາເສັຍພາສີຂອງປີ ໑໗໘໗ ແລະປີ
໑໗໘໘ ນັ້ນບໍ່ຖືກຕ້ອງຕາມທັມມະນູນແລະຖືເປັນໂມຄະ ສຳລັບຣັຖ ທີ່
ກຽວຂ້ອງນີ້ແລະພ້ອມທັງຂໍຮ້ອງໃຫ້ເຈົ້າໜ້າທີ່ທຸກຄົນຈົ່ງນັບຖືແລະປະ
ຕິບັດຕາມກົດໝາຍທີ່ອອກມາໃໝ່ນີ້ ໃນທີ່ສຸດເຣື່ອງນີ້ໄດ້ກາຍເປັນ
ການຍຶ່ມຢູ່ ໃນການແຍກ ອອກຈາກສຫະພັນ ແລະຄວນທີ່ສະພາກົງ
ແກຣສຈະອອກກົດໝາຍໃຫ້ໃຊ້ກຳລັງທະຫານເຕັ້ງຣັຖດັ່ງກ່າວນີ້ຫລືບໍ່?

ໃນເດືອນພຶສຈິກາປີ ໑໗໘໘, ທ່ານແຈກຊັນໄດ້ສັ່ງໃຫ້ເຣືອ
ນ້ອຍເຈັດລຳແລະເຣືອລົບລຳນຶ່ງມຸ້ງໜ້າໄປເມືອງຊາເລັ້ມ ພ້ອມ
ກັບໃຫ້ຄຳສັ່ງຕຽມພ້ອມໃນການສູ້ຣົບທີ່ອາດຈະມີຂຶ້ນ. ໃນວັນທີ ໑໐
ເດືອນທັນວາ, ທ່ານໄດ້ປ່າວປະກາດ ຄັດຄ້ານກົດໝາຍລົບລ້າງນີ້
ໂດຍມີເນື້ອຄວາມວ່າ ຣັຖແຄໂຣໄຣນາໃຕ້ກຳລັງຈະເປັນຂະບົດແລະ
ຜູ້ທໍຣະຍົດ, ແລະທ່ານໄດ້ຮຽກຮ້ອງໃຫ້ປະຊາຊົນໃນທຸກໆຣັຖສະແດງ
ຄວາມຮຸ້ສຶກແລະຈົງຮັກພັກດີຕໍ່ສຫະພັນຮຸ້ງບັນພະບຸຣຸດໄດ້ຕໍ່ສູ້ເອົາມາ.
ເຊັ່ນທ່ານເດນຽລເວບສະເຕີ, ຣັຖບຸຣຸດຊັ້ນນຳໃນສໄມນັ້ນ ທ່ານໄດ້

ຢືນຢັນວ່າ ປະເທດອະເມຣິກາມີແທນທີ "ຈະໂຮມກັນເຂົ້າເປັນອຳ
ນາດອະທິປະໄຕອັນເຂັ້ມແຂງ" ແລະຈັດໂຮມກັນເຂົ້າເປັນຣັຖບານ
ຊຶ່ງມີຜູ້ຕາງໜ້າຂອງແຕ່ລະຣັຖເຂົ້າຮ່ວມນຳດ້ວຍ".

## ໄຊຊນະຂອງຫລັກການໂຮມກັນ

ໃນເວລາດຽວກັນນັ້ນ, ບັນຫາເຣື່ອງອັດຕຣາເສັຍພາສີໄດ້
ຖືກນຳມາພິຈາຣະນາໃນສະພາກົງແກຣສ ແລະເປັນທີ່ແຈ່ມແຈ້ງແລ້ວ
ວ່າ ມີແຕ່ຄົນດຽວເທົ່ານັ້ນ ທີ່ສາມາດຫາຊ່ອງທາງຜ່ອນສັ້ນຜ່ອນຍາວ
ໄດ້ໃນສະພາກົງແກຣສ. ບຸກຄົນດັ່ງກ່າວນີ້ແມ່ນສະມາຊິກສະພາສູງ
ແຮນຣິເຄລ ຜູ້ທີ່ໄດ້ໃຫ້ການສນັບສນຸນກົດໝາຍນີ້ຢ່າງແຂງແຮງແລະ
ໄດ້ເຮັດໃຫ້ກົດໝາຍກ່ຽວກັບການວາງອັດຕຣານີ້ມີການຜ່ອນສັ້ນຜ່ອນ
ຍາວແລະກົດໝາຍນີ້ ໄດ້ຖືກຜ່ານໃນປີ ໑໙໓໓. ກ່ຽວກັບອັດຕຣາ
ການເກັບພາສີນີ້ ໄດ້ບົ່ງໄວ້ວ່າ ການເກັບພາສີໃດໆຫາກຫລາຍກວ່າ
ຊາວເປີເຊັນຂອງຣາຄາສິນຄ້າທີ່ສົ່ງເຂົ້າມາໃນປະເທດແລ້ວ, ອັດ
ຕຣາການເກັບພາສີນັ້ນຈະຕ້ອງລົດຜ່ອນລົງຕາມທີ່ເຫັນສົມຄວນ ເພື່ອ
ວ່າຮອດປີ ໑໙໔໘ ອັດຕຣາພາສີຂອງສິນຄ້າທຸກໆຊນິດຈະເຖິງອັນດັບ
ມາຕຣາການເກັບພາສີໃນປີ ໑໙໑໗.

ຜູ້ນຳຂອງການສນັບສນຸນຢາກໃຫ້ມີການລົບລ້າງກົດໝາຍວ່າ
ດ້ວຍອັດຕຣາເກັບພາສີນີ້ ຫວັງວ່າຈະໄດ້ຮັບການສນັບສນຸນ ຈາກຣັຖ

ຕ່າງໆທາງພາກໃຕ້ດ້ວຍກັນ, ແຕ່ເຫດການເລີຍຕົ້ງກັນຂ້ານ ຄືວ່າ ພວກຜູ້ນຳຂອງຣັຖອື່ນທາງໃຕ້ເຫັນວ່າ ການກະທຳຂອງຣັຖແຄໂຮໄຮ ນາໃຕ້ ບໍ່ຖືກຕ້ອງຕາມກົດຂອງຣັຖທັມມະນູນ ກົດໝາຍເຫສບັນຍັດນີ້ ໄດ້ກະວ່າຈະຖືກນຳເອົາອອກມາປະຕິບັດ ໃນເດືອນກຸມພາ, ແຕ່ຕົກ ມາໃນເດືອນມະກະຣາ ກໍໄດ້ມີການປະຊຸມຄນະຜູ້ນຳຂອງຣັຖຕ່າງໆ ແລະທີ່ປະຊຸມເຫັນດີວ່າ ໃຫ້ງົດເຣື່ອງນີ້ໄວ້ກ່ອນ. ຕໍ່ມາໃນເດືອນມີ ນາ, ຣັຖແຄໂຮໄຮນາໃຕ້ ໄດ້ຮຽກປະຊຸມອີກ ແລະໄດ້ຍົກເລີກກົດ ໝາຍກ່ຽວກັບການລົບລ້າງນີ້ຢ່າງເປັນທາງການ.

ຕ່າງຝ່າຍຕ່າງຍ່າງອອກຈາກສນາມໂດຍຖືທຸງປົວໄປມາເພື່ອ ສະແດງເຖິງການໄດ້ມາ ຊຶ່ງໄຊຊນະຄັ້ງຍິ່ງໃຫຍ່. ສ່ວນທາງຝ່າຍ ປົກຄອງກໍໄດ້ຍອມຮັບວ່າ ທາງຣັຖບານກາງບໍ່ມີອຸນສົມບັດພຽງພໍ ໃນ ຫລັກການສ່ວນໃຫຍ່ຂອງການຢູ່ໂຮມກັນ, ແຕ່ຖ້າຈະເວົ້າໄປອີກທາງ ນຶ່ງແລ້ວ ຣັຖແຄໂຮໄຮນາໃຕ້ ສະແດງການຕໍ່ຕ້ານຕໍ່ກົດໝາຍນີ້ໂດຍ ຍົກຄຳຮຽກຮ້ອງຫລາຍຢ່າງຕໍ່ຣັຖບານ ຊຶ່ງຫາກໍໄດ້ຮັບການພິຈາຣະ ນາເປັນຢ່າງດີແລະໃນທີ່ສຸດກໍເປັນທີ່ປະຈັກຕໍ່ສາຍຕາຄົນທົ່ວໄປ ແລ້ວ ວ່າຣັຖແຄໂຮໄຮນາໃຕ້ເປັນຣັຖດຽວເທົ່ານັ້ນທີ່ສາມາດສະເໜີສິ່ງທີ່ຣັຖນັ້ ຕ້ອງການຕໍ່ສະພາກົງແກຣສ. ໃນຄາວທີ່ໄດ້ສະເໜີໃຫ້ມີການລົບລ້າງ ກົດໝາຍນັ້ນປາກົດວ່າໄດ້ນຳພົນຢ່າງເລິກເຊິ່ງມາສູ່ການຂຍາຍທີ່ສດີ ຂອງຣັຖ, ແຕ່ບັນດາຜູ້ນຳຂອງຣັຖທາງພາກໃຕ້ຫົ້ວຫລາຍ ເຫັນວ່າ

ການລົບລ້າງນີ້ ຈະເອົາມາປະຕິບັດກໍບໍ່ໄດ້ຜົນ. ກ່ຽວກັບເຣື່ອງນີ້, ໃນຣະຍະສາມສິບປີຂ້າງໜ້າ ຣັຖທັງຫລາຍນີ້ໄດ້ເນັ້ນຄວາມສຳຄັນຢູ່ ທີ່ສິດທິຂອງຣັຖທີ່ໄດ້ຮັບຄວາມກະທົບກະເທືອນ ຈາກການແຍກສິດທິນັ້ ອອກຈາກການຢູ່ຮ່ວມກັນ.

ໃນຂນະທີ່ຄວາມຂັດແຍ້ງ ກ່ຽວກັບເຣື່ອງການລົບລ້າງ ກົດ ໝາຍນີ້ຍັງບໍ່ທັນໄດ້ພິຈາຣະນາເທື່ອ, ທະນາຄານຫລັງທີ່ສອງກໍ່ກຳ ລັງຄອຍຖ້າຄຳສັ່ງເພື່ອອະນຸຍາດການແຕ່ງຕັ້ງ ແລະເຣື່ອງນີ້ ໄດ້ພາ ໃຫ້ຣັຖບານຂອງທ່ານແຈກຊັນ ຫຍຸ້ງຍາກຂຶ້ນອີກ. ພາຍໃຕ້ການນຳ ຂອງທ່ານແຮມລີຕັນ, ທະນາຄານຫລັງທຳອິດຂອງສະຫະຣັຖ ໄດ້ຕັ້ງ ຂຶ້ນໃນປີ ໑໗໙໑ ແລະໄດ້ດຳເນີນກິຈການເລື້ອຍໆມາ ຈົນຮອດຊາວ ກວ່າປີແລ້ວ. ແມ່ນວ່າຣັຖບານຈະຖືຫຸ້ນສ່ວນບາງສ່ວນກໍຕາມ, ແຕ່ ທະນາຄານດັ່ງກ່າວນີ້ບໍ່ແມ່ນທະນາຄານຂອງຣັຖບານ ເພາະມັນເປັນ ທະນາຄານຂອງອົງການທຸຣະກິດເອກຊົນຊຶ່ງກຳໄຣສ່ວນໃຫຍ່ແມ່ນຜູ້ຖື ຫຸ້ນສ່ວນເປັນຜູ້ແບ່ງປັນກັນ. ແມ່ນວ່າຈຸດມຸ້ງໝາຍຂອງທະນາຄານ ນັ້ນພຽງແຕ່ເຣັດໃຫ້ຄ່າຂອງເງິນຕຣາຄົງເດີມແລະຊ່ວຍໃຫ້ການຄ້າສະ ດວກແລະໝູນວຽນດີເທົ່ານັ້ນ, ແຕ່ບາງຄົນໄດ້ຄັດຄ້ານ ຕໍ່ການດຳ ເນີນງານຂອງທະນາຄານນີ້ໂດຍອ້າງວ່າ ຣັຖບານໄດ້ໃຫ້ສິດພິເສດ ແກ່ບຸກຄົນຜູ້ມີອິດທິພົນ ບາງຄົນຫລາຍໂພດ ແລະເມື່ອການອະນຸຍາດ ຂອງທະນາຄານນີ້ໝົດອາຍຸໄປໃນປີ ໑໙໑໑, ສະພາກົງແກຣສບໍ່ໄດ້

ຕໍ່ອາຍຸໃຫ້ໃຫມ່ອີກ. ອີກຫລາຍປີຕໍ່ມາ, ກິຈການຂອງທະນາຄານ ຕ່າງໆກໍຕົກຢູ່ໃນກຳມືຂອງທະນາຄານຂອງຣັຖ ຊຶ່ງໄດ້ກຳຫນ້າທີ່ພິມ ທະນາບັດເກີນຈຳນວນຂອງເງີນທີ່ມີຢູ່, ເຣື່ອງນີ້ພາໃຫ້ເກີດມີການ ປັ່ນປ່ວນທີ່ສຸດ. ເປັນທີ່ເຫັນກັນຢ່າງແຈ່ມແຈ້ງແລ້ວວ່າ ທະນາຄານ ຂອງຣັຖບໍ່ມີກຳລັງພຽງພໍໃນການພິມທະນະບັດໃຫ້ເປັນແບບແຜນຢ່າງ ດຽວກັນໄດ້ ເພື່ອນຳເອົາໄປໃຊ້ທົ່ວປະເທດ, ດັ່ງນັ້ນ ໃນປີ ๑๗๑ຝ ທະນາຄານຫລັງທີສອງຂອງສະຫະຣັຖຊຶ່ງໄດ້ຕັ້ງຂຶ້ນຄ້າຍຄືກັນກັບຫລັງ ທຳອິດຈຶ່ງໄດ້ດຳເນີນກິຈການມາເປັນເວລາເຖິງຊາວປີຄືກັນ.

ເມື່ອເວົ້າເຖິງພື້ນຖານແລ້ວ, ທະນາຄານຫລັງທີສອງນີ້ ບໍ່ ຄ່ອຍຈະເປັນທີ່ນິຍົມແກ່ປະຊາຊົນຕາມພາກໃຫມ່ຕ່າງໆ ຂອງປະເທດ ແລະກໍບໍ່ມີປະຊາຊົນຮັ່ງມີ ຫລາຍທົ່ວທຸກບ່ອນ. ເປັນທີ່ຊາບກັນແລ້ວ ວ່າ ທະນາຄານນີ້ມີສິດຜູກຂາດໃນການອອກເຄຣດິດ ແລະພິມທະນະ ບັດຂອງປະເທດ, ແລະກິຈການຂອງທະນາຄານນີ້ ເປັນແຕ່ພຽງຕົວ ແທນຂອງຄວາມມັ່ງມີສ່ວນນ້ອຍ, ແຕ່ໂດຍສ່ວນຮວມແລ້ວ ທະນາ ຄານນີ້ໄດ້ເຮັດປະໂຍດໃຫ້ແກ່ຊາດຢູ່ຢ່າງຫລວງຫລາຍ. ແຕ່ເປັນທີ່ ຮູ້ກັນທົ່ວໄປແລ້ວວ່າ, ທ່ານແຈກຊັນໄດ້ຄັດຄ້ານ ຕໍ່ການດຳເນີນງານ ຂອງທະນາຄານນີ້ ແລະທ່ານໄດ້ປະຕິເສດຢ່າງສຽງແຂງ ກ່ຽວກັບ ການຕໍ່ອາຍຸອະນຸຍາດ ໃຫ້ທະນາຄານນີ້ ດຳເນີນກິຈການອີກຕໍ່ໄປ. ຖ້າວ່າທ່ານແຈກຊັນ ສະແດງໃຫ້ປະຊາຊົນເຫັນເຖິງຄວາມຮູ້ ອັນຕື້ນ

ຂອງທ່ານກ່ຽວກັບຫລັກການຂອງການທະນາຄານ ແລະການຄັງແລ້ວ ທ່ານກໍຈະເຮັດໃຫ້ຊາວນາຊາວສວນ ນາຍຊ່າງຈັກແລະກັມມະກອນ ທັງຫລາຍເຫັນໄດ້ຢ່າງແຈ່ມແຈ້ງແລ້ວວ່າ ທ່ານໄດ້ຄັດຄ້ານການອອກ ກົດຫມາຍຊຶ່ງຈະເຮັດໃຫ້ອຳນາດຂອງຝ່າຍຄ້ານມີອິດທິພົນຫລາຍຂຶ້ນ. ສິດທິໃນການຫ້ານເທື່ອນີ້ ໄດ້ພາໃຫ້ເຮື່ອງນີ້ຕື່ນເຕັ້ນຍິ່ງຂຶ້ນ ຈົນເປັນ ເຫດໃຫ້ຫນັງສືພິມວໍຊິງຕັນກ່າວອ້າງວ່າ ນີ້ເປັນວິທີປົດປ່ອຍປະເຫດ ໃຫ້ອອກຈາກລັດທິການຜູກຂາດການເງີນ, ແຕ່ສຳລັບຣັຖບຸຮຸດອື່ນໆ ແລະນັກການທະນາຄານແລ້ວ ກໍໄດ້ຄັດຄ້ານເຫດການເຫລົ່ານີ້ເປັນທີ່ ສຸດ. ຈະແມ່ນສະພາກົງແກຣສຫລືປະທານາທິບໍດີເປັນຜູ້ຫຍັ່ງຄວາມ ປຣາຖນາທີ່ແທ້ຈິງຂອງປະຊາຊົນ, ເຮື່ອງນີ້ຈະຕ້ອງຄອຍຟັງຜົນຈາກ ການເລືອກຕັ້ງປະທານາທິບໍດີທີ່ໃກ້ຈະມາເຖິງນີ້.

ໃນການໂຄສະນາຫາສຽງ ຊຶ່ງສືບຕໍ່ເນື່ອງກັນມາ ເທື່ອນີ້, ບັນຫາໃຫຍ່ທີ່ວິຈານກັນຫລາຍທີ່ສຸດ ແມ່ນບັນຫາເຮື່ອງທະນາຄານຊຶ່ງ ເຮື່ອງນີ້ພາໃຫ້ມີການແບ່ງແຍກຄວາມຄິດຄວາມເຫັນ ຣະຫວ່າງພໍ້ຄາ ເຈົ້າຂອງໂຮງງານຫັຖກັມ ຊຶ່ງຈັດຢູ່ໃນຈຳພວກຊົນຊັ້ນຜູ້ມີເງີນ ແລະ ຊົນຊັ້ນກັມມະກອນ ຊຶ່ງເຂົາເຈົ້າຢ້ານວ່າ ການປ່ຽນແປງຂນານໃຫຍ່ ຕາມແບບປະຊາທິປະໄຕນີ້ຈະພາໃຫ້ມີການກະທົບກະເທືອນແລະບາງ ຄົນກໍ້ພອມແລ້ວທີ່ຈະໃຫ້ການສນັບສນູນ ແກ່ທ່ານແຈກຊັນຢ່າງຈິງໃຈ. ຜົນຈາກການເລືອກຕັ້ງຄັ້ງນີ້ ເປັນການໂອນສິດທິຫນ້າຕື່ນເຕັ້ນໃຫ້ແກ່

ພັກຂອງທ່ານແຈກຊັນ.

ທ່ານແຈກຊັນໄດ້ຕີຄວາມຫມາຍຂອງການທີ່ທ່ານໄດ້ຮັບເລືອກຕັ້ງຄັ້ງໃຫມ່ນີ້ວ່າ ປະຊາຊົນໄດ້ມອບອຳນາດ ໃຫ້ທ່ານອີກຄັ້ງນຶ່ງ ໃນການຈັດຕັ້ງທະນາຄານໃຫມ່ຂຶ້ນ ອາວຸດສຳຄັນທີ່ທ່ານມີໄວ້ໃນກຳມືນັ້ນກໍຄື, ທ່ານສາມາດໃຫ້ສິດປະຊາຊົນ ຖອນເງີນທຶນອອກຈາກທະນາຄານໄດ້. ໃນປາຍເດືອນກັນຍາປີ ຈຊມໝ, ຣັຖບານໄດ້ອອກຄຳສັ່ງບໍ່ໃຫ້ນຳເງີນທຶນຂອງຣັຖບານ ເຂົ້າຝາກໄວ້ນຳທະນາຄານສະຫະຣັຖແລະເງີນທີ່ມີເຫລືອຢູ່ນັ້ນ ຈະໄດ້ຖອນອອກມາໄວ້ເປັນຄ່າໃຊ້ຈ່າຍຂອງຣັຖບານ ຕາມທີ່ກອງປະຊຸມເຫັນສົມຄວນ. ໃນການປ່ຽນແປງຝາກເງີນນີ້, ທາງຣັຖບານໄດ້ເລືອກຝາກໄວ້ທີ່ທະນາຄານຂອງຣັຖທີ່ມີສະມັຖພາບເຂັ້ມແຂງແລະກວດຂັນທີ່ສຸດ.

ວິທີການດຳເນີນກິຈການແລະການບໍຣິຫານພາຍໃນປະເທດນີ້ໄດ້ເຮັດໃຫ້ເຮົາເຫັນວິທີການດຳເນີນງານຂອງທ່ານແຈກຊັນກ່ຽວກັບການເສື່ອມສັມພັນ ກັບຕ່າງປະເທດຂອງທ່ານດ້ວຍ. ເມື່ອປະເທດຝຣັ່ງເສດງົດຈ່າຍເງີນຕາມພາລະຫນ້າທີ່ຂອງຕົນແລ້ວ, ທ່ານແຈກຊັນຈຶ່ງໄດ້ສັ່ງໃຫ້ຍຶດຊັບສິນ ຊຶ່ງເປັນຂອງຊາວຝຣັ່ງເສດໃນທັນໃດນັ້ນໂລດ. ເມື່ອເວລາເມືອງເທັກຊັສເກີດຂະບົດ ຕໍ່ໄປເທດເມັກຊິໂກແລະໄດ້ຮຽກຮ້ອງໃຫ້ສະຫະຣັຖຮັບເອົາເປັນສ່ວນນຶ່ງຂອງປະເທດຕົນ ທ່ານແຈກຊັນກໍໄດ້ມີທ່າທີຄອຍຖ້າເບິ່ງຢ່າງສລາດສລຽວ ເມື່ອຄົບກຳ

ນິດຂອງການຮັບຕຳແໜ່ງເທື່ອທີສອງຂອງທ່ານແລ້ວ, ທ່ານແຈກອັນ ໄດ້ເປັນຜູ້ມີຊື່ສຽງໂດ່ງດັງແລະເປັນທີ່ຮູ້ຈັກດີແກ່ປວງຊົນທົ່ວໄປ.

ພັກການເມືອງທີ່ຄັດຄ້ານນະໂຍບາຍຂອງທ່ານແຈກອັນເລີ້ຍ ມານັ້ນບໍ່ມີທາງຈະບັນລຸຜົນສຳເຣັດໄດ້ ຕາບໃດ ທີ່ເຂົາເຈົ້າຍັງແຕກ ແຍກກັນຢູ່ ແລະຕ່າງຄົນຕ່າງມີຄວາມມຸ້ງຫວັງໄປຄົນລະທາງ ຜົນທີ່ ຕາມມາກໍຄືການທົດລອງຮວບຮວມສ່ວນປະກອບຕ່າງໆທີ່ເຫັນວ່າເປັນ ສິ່ງບໍ່ພໍໃຈເຂົ້າມາເປັນອັນດຽວກັນ ແລະຕັ້ງຊື່ພັກການເມືອງໃໝ່ຂຶ້ນ ໂດຍມີຊື່ວ່າ ວິກ. ແມ່ນວ່າພັກນີ້ໄດ້ພຍາຍາມຈັດໃຫ້ມີການແຂ່ງຂັນ ຊິງຕຳແໜ່ງປະທານາທິບໍດີໃນການເລືອກຕັ້ງປີ ໑໙໓໘ ກໍຕາມ ແຕ່ ກໍບໍ່ໄດ້ບັນລຸຜົນສຳເຣັດດັ່ງທີ່ຄາດໝາຍ ແລະຈົນກວ່າຈະເຣັດໃຫ້ສະ ມາຊິກທຸກຄົນມີຄວາມເຂົ້າອົກເຂົ້າໃຈກັນດີໄດ້ ກໍກິນເວລາເກືອບສິບ ກວ່າປີພູ້ນ. ດ້ວຍການມີຄຸນສົມບັດແລະລັກສນະອັນດີເດັ່ນຂອງທ່ານ ແຣນຣິ ແກລ ແລະທ່ານແດນຽນ ເວບສເຕີ, ພັກການເມືອງ ວິກ ຈຶ່ງສາມາດດຶງດູດຄວາມສົນໃຈ ຂອງປະຊາຊົນຫລາຍທີ່ສຸດ ແລະໄດ້ ເຣັດໃຫ້ພັກການເມືອງນີ້ ແໜ້ນແຟ້ນຍິ່ງຂຶ້ນ. ໂດຍທົ່ວໆ ໄປແລ້ວ ສະມາຊິກຂອງພັກວິກນີ້ ລ້ວນແຕ່ເປັນຄົນມີຖານະ ແລະໜ້າທີ່ການ ງານດີທັ້ງນັ້ນ ແລະໃນການເລືອກຕັ້ງປີ ໑໙໓໙ ນັ້ນ, ພັກການ ເມືອງວິກ ຍັງເປັນພັກຂອງຄົນກຸ່ມນຶ່ງ ຊຶ່ງມີລັກສນະແຕກຕ່າງໃນ ການກ້າວຂຶ້ນສູ່ເວທີ. ທ່ານມາຣຕິນແວນ ບູເຣັນ ຜູ້ທີ່ໄດ້ຮັບການ

ສນັບສນູນຈາກທ່ານ ແຈກຊັນໄດ້ຮັບໄຊຊະນະ ໃນການເລືອກຕັ້ງຄວ
ນັ້ນ. ແຕ່ໃນວາຣະຂອງການປັ່ນປ່ວນທາງເສຖກິດ ຊຶ່ງໄດ້ມີຂຶ້ນໃນ
ຂນະທີ່ທ່ານດຳຣົງຕຳແໜ່ງຢູ່ແລະບຸຄລິກລັກສນະທີ່ເດັ່ນເປັນຈຸດຂອງ
ປະທານາທິບໍດີຜູ້ກ້ອນໆ, ໄດ້ກາຍເປັນຄວາມມືດມົນແລະໄດ້ກືນເອົາ
ຄວາມດີຂອງທ່ານໄປໝົດ. ພາຍໃຕ້ການເປັນຜູ້ນຳຂອງທ່ານແອນ
ບູເຣັນນີ້, ຂ້າຣາຊການທຸກຄົນ ຈະຕ້ອງປະຕິບັດໜ້າທີ່ການ ຂອງ
ໃຜລາວມີນຶ່ງສິບຊົ່ວໂມງ, ແຕ່ອັນນີ້ບໍ່ໄດ້ເຮັດໃຫ້ການງານ ມີຊົ່ວດີ
ວ່າແຕ່ຢ່າງໃດ ເພາະວ່າ ທ່ານຂາດລູມສົມບັດຂອງການເປັນຜູ້ນຳທີ່
ດີຊຶ່ງລຸມລັກສນະເຊັ່ນນີ້ແຕກຕ່າງກັນກັບທ່ານແຈກຊັນປານຟ້າແລະດິນ
ປາກົດວ່າເມື່ອເຖິງເວລາເລືອກຕັ້ງອີກໃນປີ ໑໙໔໐, ປະເທດຊາດ
ໄດ້ພົບກັບຄວາມຫຍຸ້ງຍາກລຳບາກເປັນທີ່ສຸດ ເພາະປະຊາຊົນມີລາຍ
ໄດ້ນ້ອຍ ແລະພັກປະຊາທິປະໄຕກໍຢູ່ໃນຫ່າປ້ອງກັນຕົວ.

ມີສະມາຊິກຂອງພັກວິກຄົນນຶ່ງຊື່ ທ່ານວິນລຽມ ແຣນດີ ແຣນ
ຊັນ ທີ່ມາຈາກຣັຖໂອໄຮໂອ ໄດ້ສມັກເຂົ້າແຂ່ງຂັນໃນການເລືອກຕັ້ງ
ປະທານາທິບໍດີຄັ້ງນີ້, ໂດຍອ້າງຕົນເອງວ່າເປັນຜູ້ຕາງໜ້າຢ່າງແທ້
ຈິງ ຂອງພັກປະຊາທິປະໄຕ ທາງພາກຕະວັນຕົກ. ໃນສົງຄາມປີ
໑໙໑໘ ນັ້ນ, ທ່ານແຣນດີຊັນກໍເປັນທີ່ຮູ້ຈັກແກ່ຄົນທົ່ວໄປໃນການເປັນຜູ້
ນ້ຳຫານ ແລະໄດ້ຮັບໄຊຊະນະໃນການສູ້ຣົບທີ່ຕິບເປແຄນ ແລະທ່ານ
ຈອນທີເລີ ຜູ້ທີ່ໃຫ້ຄວາມນິກຄິດກ່ຽວກັບສິດທິຂອງມົລຣັຖ ແລະຄຳອັດ

ຕຣາເສັຍພາສີຕ່ຳ, ກໍເປັນທີ່ຮູ້ຈັກດີ ແກ່ຄົນທົ່ວໄປ ທາງພາກໃຕ້. ທ່ານໄດ້ເຂົ້າສມັກ ໃນນາມເປັນຮອງປະທານາທິບໍດີສະຫະຣັຖ ການ ໂຄສະນາຫາສຽງໃນການເລືອກຕັ້ງ ຂອງພັກ ວິກ ເທື່ອນີ້ເປັນການ ແຂ່ງຂັນທີ່ມ່ວນຊື່ນແລະຕື່ນເຕັ້ນທີ່ສຸດ. ປະຊາຊົນໄດ້ຊຸມນຸມກັນແລະ ໄດ້ນຳເອົາເຣື່ອງນີ້ຂຶ້ນມາພິຈາຣະນາຖົກຖຽງກັນ ຊຶ່ງບໍ່ມີແຕ່ຜູ້ຊາຍ ເທົ່ານັ້ນທີ່ສົນໃຈໃນເຣື່ອງນີ້, ຜູ້ຍິງກໍມີການຕື່ນຕົວຄືກັນ. ປະຊາ ຊົນທຸກຄົນໄດ້ພາກັນຮ້ອງເພັງ "ເດໂອລຕິບເປແຄນູ" ຈົນຕິດປາກ ແລະຜົນປາກົດຂອງການເລືອກຕັ້ງ ກໍຄືພັກການເມືອງວິກ ໄດ້ຮັບໄຊ ຊນະ. ແມ່ນວ່າພັກວິກນີ້ ໄດ້ຮັບໄຊຊນະ ໃນການເລືອກຕັ້ງກໍຈິງ, ແຕ່ສະມາຊິກພາຍໃນພັກກໍຍັງມີຄວາມຄິດຄວາມເຫັນແຕກຕ່າງກັນ ຢູ່ ເມື່ອດຳຣົງຕຳແຫນ່ງປະທານາທິບໍດີ ໄດ້ພຽງເດືອນດຽວເທົ່ານັ້ນ. ທ່ານແຮຣີຊັນມີອາຍຸ ຝຊ ປີ ກໍໄດ້ພົບກັບບັ້ນປາຍໃນຊີວິດຂອງທ່ານ, ດັ່ງນັ້ນທ່ານທິລເລີ ຈຶ່ງໄດ້ຂຶ້ນຄອງຕຳແຫນ່ງປະທານາທິບໍດີແທນ ແຕ່ ເວລານັ້ນເປັນຕົ້ນມາ. ທ່ານທິລເລີມີຄວາມເຊື່ອຖື ຊຶ່ງແຕກ່ຕ່າງ ໄປກວ່າທ່ານເກລແລະທ່ານເວບສະເຕີແຕ່ຍັງເປັນບຸຮຸດທີ່ມີອິດທິພົນຜູ້ ນຶ່ງໃນປະເທດ ແລະຄວາມແຕກຕ່າງກັນນີ້ ໄດ້ນຳໄປສູ່ການແຕກຫັກ ກ່ອນຫນ້າການສິ້ນອາຍຸປີການຂອງທ່ານທິລເລີ ແລະທ່ານໄດ້ຖືກພັກ ການເມືອງຂອງທ່ານເອງ ຊຸກອອກຈາກຕຳແຫນ່ງນີ້.

## ການປ່ຽນປ່ອນທາງການເມືອງມີຂຶ້ນຢູ່ໃນທຸກໆສັງຄົມ

ເມື່ອທ່ານແອນດຣູ ແຈກຊັນເຂົ້າຮັບຕຳແໜ່ງປະທານາທິບໍດີ ໃນປີ ໑໙໘໙ ນັ້ນ, ຄວາມບໍ່ສງົບສຸກ ແລະການປະຕິວັດຍັງມີຢູ່ທົ່ວ ທຸກບ່ອນຂອງໂລກຕະວັນຕົກ. ໃນຂນະທີ່ ມີການປ່ຽນແປງພາຍໃນ ຂອງອະເມຣິກາຊຶ່ງໄດ້ມີການສນັບສນູນຈາກທາງໃນ ແລະເປັນສິ່ງທີ່ ໜ້າຊຸ້ນຊຸ້ມສຳລັບການພັທນາໂລກແຫ່ງນີ້, ການປ່ຽນແປງ ຂນານ ໃຫຍ່ຂອງນະໂຍບາຍການເມືອງໃນຣະບອບປະຊາທິປະໄຕກໍໄດ້ເປັນ ຕົວຢ່າງຂອງການເຄື່ອນໄຫວຊຶ່ງເປັນຜົນທີ່ນຳມາໃຫ້ທ່ານແຈກຊັນໄດ້ ເຂົ້າຮັບຕຳແໜ່ງປະທານາທິບໍດີ ແລະກໍເປັນຍາດກ້າວແຫ່ງຄວາມ ກ້າວໜ້າຂອງປະຊາຊົນທີ່ໄດ້ມີສິດທິແລະໂອກາດເທົ່າທຽມກັນກັບຄົນ ອື່ນໆ.

ໃນຣະຍະເວລາຂອງປີ ໑໙໓໐ ຫາປີ ໑໙໔໐ ນັ້ນ ໄດ້ບອກ ເຖິງລັກສນະຂອງການມີສັດທາອັນແຮງກ້າ ໃນການຮັດໃຫ້ດີທີ່ສຸດ ເທົ່າທີ່ມະນຸດຈະຮັດໄດ້ ແລະໄດ້ນຳຜົນມາຈາກການປົດປ່ອຍ ຂອງ ຄນະປັນຍາຊົນເຊັ່ນດຽວກັນກັບວັດຖຸແຫ່ງຊີວິດຂອງຄົນເຮົາ.

ດຽວຄູ່ກັນໄປກັບການເຄື່ອນໄຫວຂອງການເມືອງແບບ ເສຣີ ນິຍົມນັ້ນ, ແມ່ນການເລີ່ມຕົ້ນຂອງສະມາຄົມກັມມະກອນ ຕົກມາເຖິງ ປີ ໑໙ນ໗, ສະມາຊິກ ທີ່ມາຈາກແຄມຝັ່ງທະເລ ທາງພາກເໜືອມີ ຮອດສາມແສນຄົນ ພ້ອມທັງມີຖານະ ແລະການງານດີທຸກໆ ບ່ອນ.

ໃນປີ ໑໙ສ້ຄ, ກຳລັງຂອງຄນະກັມມະກອນທີ່ເມືອງ ຟິລາເດັລເຟັຍ ໄດ້ບັນລຸຜົນສຳເຮັດ ໃນການດັດແປງແບບແຜນຂອງການເຮັດວຽກ ເຮັດການ ໑໐ ຊົ່ວໂມງ ເທົ່ານັ້ນ. ນີ້ແມ່ນພຽງແຕ່ ການຕັ້ງຕົ້ນ ຂອງການປ່ຽນແປງໃນເມືອງຕ່າງໆເຊັ່ນ ນິວແຮມເຊັຍ, ໂຮດໄອ ແລນ, ໂອໄຮໂອ ແລະເມືອງແຄລິຟໍເນັຍ ຊຶ່ງຫາກໍເຂົ້າຮ່ວມໃນ ສະຫະພັນໃນປີ ໑໙ຄ້ວ ນີ້.

ກິຈການຂອງຄນະກັມມະກອນແລະການດັດແປງທີ່ຈຳເປັນສຳ ລັບມະນຸດຊາດເຮົານີ້ ເປັນປັດຈັຍທີ່ຈຳເປັນທີ່ສຸດໃນການເຄື່ອນໄຫວ ທີ້ກ້າວຫນ້າແກ່ເວລາຂອງເຮົານີ້. ການຕໍ່ສູ້ເພື່ອປະຊາທິປະໄຕໃນ ການສຶກສາເປັນສິ່ງທີ່ມີຄວາມຫມາຍອັນເລິກເຊິ່ງທີ່ສຸດ ແລະການແຜ່ ຜາຍຂອງສິດທິຂອງມະນຸດ ໃນການເລືອກຜູ້ນຳຂອງປະເທດນັ້ນເປັນ ສິ່ງສຳຄັນແກ່ການສຶກສາ ເພາະວ່າການເລືອກຜູ້ນຳຂອງປະເທດນັ້ນ ເປັນສິ່ງສຳຄັນແລະກັນດານທີ່ສຸດ ຖ້າຜູ້ມີສິດປ່ອນບັດ ບໍ່ຮູ້ຈັກຄຸນຄ່າ ຂອງສິດທິ ໃນການປ່ອນບັດແລ້ວ ໂລກນີ້ກໍຈະເຕັມໄປດ້ວຍຄົນໂງ່. ຄວາມພຍາຍາມຂອງບຸກຄົນເຫລົ່ານີ້ ເຊັ່ນ ທ່ານເດວິດແລນຕັນ ທີ່ ມາຈາກຮັຖນິວຢອກ, ທ່ານອາບຮາແຮມ ລິງຄອນ, ຈາກຮັຖ ອິລລີ ນອຍ ແລະທ່ານໂຮຮາສແມນ ທີ່ມາຈາກຮັຖແມແຊຈູແຊດສ້ ໄດ້ຮັບ ການສນັບສນູນຈາກສະມາຄົມກັມມະກອນໃນເມືອງນັ້ນໆຢ່າງເຕັມທີ່. ຫົວຫນ້າຜູ້ນຳກັມມະກອນໄດ້ຮຽກຮ້ອງໃຫ້ຮັຖບານເປີດໂຮງຮຽນແບບ

24 / VII
ห้ามจำหน่าย

ເສຣິໃຫ້ເດັກນ້ອຍໄດ້ເຂົ້າໂຮງຮຽນທ່ວເຖິງກັນ, ໂດຍເອົາ ເງິນ ຣາຍໄດ້ຈາກພາສີອາກອນນີ້ມາສ້າງໂຮງຮຽນແລະບໍ້ຕ້ອງເອົາໄປພົວ ພັນກັບການກຸສົນແຕ່ຢ່າງໃດ. ໃນປີ ໑໘໓໐, ຄົນງານທີ່ເມືອງ ຟິ ລາເດລເຟັຍໄດ້ເວົ້າວ່າ: "ເສຣິພາບອັນແທ້ຈິງນັ້ນ ຈະມີໄດ້ກໍຕໍ່ ເມື່ອມີການແຈກຢາຍຄວາມຮູ້ຄວາມສລາດຢ່າງກ້ວາງຂວາງ... ນີ້ ຫມາຍຄວາມວ່າ ທຸກຄົນຈະຕ້ອງມີໂອກາດເທົ່າທຽມກັນ ໃນການສຶກ ສາ ບໍ່ດັ່ງນັ້ນແລ້ວ ຄວາມຫມາຍຂອງຄຳວ່າ "ສເມີພາບ" ກໍຈະບໍ່ມີ ຄວາມຫມາຍແລະກາຍເປັນຄວາມວ່າງເປົ່າໃນເວົ້າມື້ດໄປ.

ຕ່ຈາກນັ້ນມາ ແຕ່ລະຣັຖກໍໄດ້ຈັດຫາໂຮງຮຽນ ໃຫ້ເດັກນ້ອຍ ໄດ້ຮຽນຟຣີຕາມກົດຫມາຍທີ່ແຕ່ງອອກມາໃຫ່ແລະຣະບຽບຂອງໂຮງ ຮຽນສາທາຣະນະ ກໍໄດ້ແຕ່ງຂຶ້ນແບບດຽວກັນຫມົດທ່ວທຸກໆບ່ອນຕາມ ພາກເຫນືອຂອງປະເທດໃນປີ ໑໘໔໐ ແລະທາງເຂດຣັຖອື່ນກໍຍັງດຳ ເນີນການຕໍ່ສູ້ຈົນກວ່າຄຳຮຽກຮ້ອງຂອງເຂົາເຈົ້າຈະໄດ້ຮັບການຕອບ ສນອງ.

ແນວຄິດເຫັນແບບອຸດົມຣະຕິ ໄດ້ປ່ອຍຄົນໃຫ້ເປັນອິສຣະຈາກ ການເປັນທາສຂອງປະເພນີເກ່ົາກ່ອນ ຊຶ່ງໄດ້ເຮັດໃຫ້ບັນດາຜູ້ຍິງຫັວ ຫລາຍຕື່ນຕົວ ແລະຮູ້ເຖິງຄວາມຈິງ ກ່ຽວກັບຖານະຂອງເຂົາເຈົ້າທີ່ ຂາດຄວາມສເມີພາບໃນສັງຄົມ. ຕັ້ງແຕ່ປາງສໄມເປັນເມືອງເອກ ຣາຊມາ, ບັນດາຜູ້ຍິງໂສດມີສິດທິເທົ່າທຽມກັນກັບຜູ້ຊາຍຕາມ ທີ່ກົດ

ຫມາຍໄດ້ບິ່ງໄວ້, ແຕ່ຣິດຄອງປະເພນີ ໄດ້ບັງຄັບໃຫ້ຜູ້ຍິງແຕ່ງດອງ ແຕ່ອາຍຸຍັງເປັນສາວນ້ອຍຢູ່, ດັ່ງນັ້ນເມື່ອມີຄອບຄົວໄປແລ້ວ ຮີດ ເຈົ້າຈຶ່ງຫມົດສິດໄປໃນສາຍຕາຂອງກົດຫມາຍ. ການຮຽນສຳລັບຜູ້ ຍິງກໍມີຂອບເຂດຈຳກັດ ເຊັ່ນວ່າ: ຮຽນອ່ານ, ຮຽນຂຽນ, ຮຽນ ດົນຕຣີ, ຮຽນຟ້ອນລຳ, ຮຽນຫຍິບຖັກປັກແສ່ວ ເຫລົ່ານີ້ເປັນຕົ້ນ. ຕາມທັມມະດາແລ້ວຜູ້ຍິງບໍ່ມີສິດປ່ອນບັດເລືອກຕັ້ງ ແຕ່ບັນດາຜູ້ຍິງຫາ ກໍມາຕົ້ນຕໍເມື່ອຄາວນາງແຟຣນຊິສໄຣ, ຜູ້ຍິງສກອດແລນ ທີ່ໄດ້ມາ ຢ້ຽມຢາມອະເມຣິກາ. ນາງຜູ້ນັ້ນມີຄວາມຄິດ ທີ່ກ້າວໜ້າດີ ແລະ ນາງໄດ້ປາກົດຕົວຕໍ່ໜ້າຜູ້ຄົນຫລວງຫລາຍແລະໄດ້ສແດງ ປາຖະກະ ຖາເຣື່ອງ ທັມມະ ແລະສິດທິຂອງຜູ້ຍິງ. ການປາກົດຕົວຂອງນາງ ເທື່ອນີ້ເຮັດໃຫ້ປວງຊົນຕົກຕະລຶງແລະແປກໃຈທີ່ສຸດ.

ການປາກົດຕົວຂອງນາງເທື່ອນີ້ ໄດ້ກະຕຸ້ນເຕືອນໃຫ້ບັນດາຜູ້ ຍິງປ່ຽນທ່າທີໃຫມ່. ຕ່ຈາກນັ້ນມາ ກໍມີການເຄື່ອນໄຫວຂອງຜູ້ຍິງ ຊຸ່ງນຳໂດຍນາງ ລູເກຣເຊັຍໂມດ, ສະມາຊິກຂອງສະມາຄົມແຫ່ງ ມິດທີ່ຣັຖຟີລາເດັລເຟັຍ, ນາງຊູຊານ ບີ ແອນໂທນີ, ແລະນາງເອ ລີຊາເບັດ ເຄດີສະແຕນຕັນ ຊຸ່ງມີຄວາມກ້າຫານ ເຫມືອນຜູ້ຊາຍ. ພວກນາງໄດ້ສລະທັງກຳລັງກາຍ ແລະກຳລັງໃຈ ເພື່ອຕໍ່ຕ້ານຣະບົບ ການເປັນຂ້າທາສ, ຕໍ່ຕ້ານເພື່ອສິດທິຂອງຜູ້ຍິງ, ແລະໃຫ້ການສົ່ງ ເຄາະແກ່ພວກທັມມະກອນ ໃນປີ ໑໘໔໘ ເຂົາເຈົ້າ ໄດ້ມີການຮຽກ

ປະຊຸມບັນດາສະຕີຂຶ້ນເປັນເທື່ອທຳອິດ ທີ່ເມືອງເຊນາກາຟອລ, ນິວ ຢອກ ແລະສະມາຊິກໃນທີ່ປະຊຸມໄດ້ລົງຄວາມເຫັນໃຫ້ບັນດາຜູ້ຍິງຍື່ນ ຄຳຮຽກຮ້ອງເພື່ອທວງເອົາສິດທິເທົ່າທຽມກັນກັບຜູ້ຊາຍຢ່າງຖືກຕ້ອງ ຕາມກົດຫມາຍກ່ຽວກັບດ້ານການສຶກສາ ແລະເສຖກິດ ແລະສິດທິໃນ ການປ່ອນບັດເລືອກຕັ້ງດ້ວຍ. ບັນດາຜູ້ນຳຂອງຜູ້ຍິງບໍ່ແມ່ນເປັນຄົນ ໄຮ້ຍາດຂາດມິດແຕ່ຢ່າງໃດ, ແຕ່ມີບຸກຄົນທີ່ມີຊື່ສຽງເຊັ່ນ ທ່ານຣາຟ ວອລໂດ ເອເມີຊັນ, ທ່ານລິງຄອລ ແລະທ່ານໂຮຣາສ ຫລີລີ ໄດ້ ໃຫ້ການສນັບສນູນຢ່າງເຕັມທີ ດ້ວຍການໂຄສະນາ ຊ່ວຍເຂົາເຈົ້າ. ແມ່ນວ່າສໄມນີ້ເປັນສໄມທີ່ປັ່ນປ່ວນຢູ່ບໍ້ນ້ອຍກໍຕາມ, ແຕ່ແນ່ນອນການ ຕັດແປງນັ້ນກໍຈະຕ້ອງມີຂຶ້ນ. ໃນປີ ຈຊນ້ຍ, ຣັຖມີຊີຊິບປີ ໄດ້ຣັບຮູ້ ສິດທິຂອງຜູ້ຍິງ ທີ່ມີຄອບຄົວແລ້ວ ໃຫ້ມີການຄວບຄູມຊັບສິນຂອງເຂົາ ເຈົ້າແລະກົດຫມາຍຄ້າຍຄືກັນນີ້ ກໍໄດ້ນຳອອກມາໃຊ້ໃນເຈັດຣັຖອື່ນໆ ໃນຣະຍະສິບປີຂ້າງຫນ້າ. ໃນປີ ຈຊ೭ວ, ທ່ານເອມມາວິລລາດ ໄດ້ໄຂການສັມມະນາຂຶ້ນສຳລັບຜູ້ຍິງ ແລະໃນປີ ຈຊນ້ກ, ສະຖາບັນ ການສຶກສາຂອງຜູ້ຍິງ ຂັ້ນວິທຍາໄລ ກໍໄດ້ຖືກຕັ້ງຂຶ້ນທີ່ເມືອງມາວຕ່ ໂຣລີໂອກ ການສ່ຽງໄພຍິ່ງກວ່ານີ້ອີກກໍຄືການຈັດຕັ້ງໂຮງຮຽນປະສົມ (ນັກຮຽນຊາຍແລະຍິງຮ່ວມກັນ) ແບບວິທຍາໄລອີກສາມບ່ອນທີ່ຣັຖ ໂອໄຮໂອ. ວິທຍາໄລ ໂອເບີລິນໄດ້ຕັ້ງຂຶ້ນໃນປີ ຈຊນ້ນ, ວິທຍາ ໄລ ເອີບານາໄດ້ຕັ້ງຂຶ້ນໃນປີ ຈຊ೫ວ ແລະວິທຍາໄລ ອັງຕິອົດຊ່ໄດ້

ຕ້ວ ສ ົ ນ ໃ ນ ປ ີ ໑ ໗ ໔ ໓.

## ວັ ທ ມ ະ ທ ັ ມ ແ ລ ະ ອ ຸ ດ ສ າ ຫ ະ ກ ັ ມ ໄ ດ ້ ປ າ ກ ິ ດ ຕ ິ ວ ໃ ຫ ້ ເ ຫ ັ ນ ຄ ວ າ ມ ເ ຂ ັ ້ ມ ແ ຂ ວ ງ

ກ ຳ ລ ັ ງ ຂ ອ ງ ຄ ວ າ ມ ເ ຊ ື ່ ອ ຫ ມ ັ ້ ນ ໃ ນ ອ ຳ ດ ຈ ະ ເ ຫ ັ ນ ໄ ດ ້ ຈ າ ກ ກ ານ ສ ະ ແ ດ ງ ຄ ວ າ ມ ຄ ິ ດ ຄ ວ າ ມ ເ ຫ ັ ນ ອ ອ ກ ມ າ ເ ປ ັ ນ ຮ ູ ບ ຂ ອ ງ ວ ັ ນ ຄ ะ ດ ิ. ໃ ນ ຣ ะ ຍ ะ ສ ิ ບ ປ ี ນ ับ ຕ ั ้ ง ແ ต ่ ป ี ໑ ໗ ໓ ๐ ເ ป ็ น ต ้ น ม า ເ ป ็ น ป ี ข อ ง ก า ร ท ้ อ ม โ ร ม ห ม ั ว ส ี แ ล ะ จ ิ ต ห ม า ย เ ห ต ุ ข อ ง อ ะ เ ม ร ิ ก ั น ซ ึ ่ ง ใ น เ ว ล า น ั ้ น ท ่ า น แ ธ น ธ ิ เ อ ด ส ะ เ อ ิ ด ล อ ง แ ฟ ล โ ล แ ล ะ ท ่ า น เ จ ม ร ั ด เ อ ุ ล โ ล แ อ ล ไ ด ้ เ ล ็ ม อ า ช ี พ ใ น ก า ร ย ุ ม ก า บ ก อ ม. ท ่ า น เ อ ม ี ช ั ย ไ ด ้ ย ุ ม โ ล ง ก า บ ก อ ม โ ด ย ส อ ด แ ท ร ก ห ล ั ก ก า ร ข อ ง ล ั ท ธ ิ ท ี ่ ม ี ค ว า ม เ ห ็ น เ ป ็ น ส ่ อ ม ต ิ ว แ ล ะ ค ว า ม เ ป ็ น ผ ู ้ ด ี ข อ ง ค ิ ม. ท ่ า น ม า ท ิ น ย ม ธ อ ม แ ล ะ ท ่ า น แ อ ด เ ว ิ ร ์ แ อ ล ม โ พ, ย ุ ม แ บ บ ต ิ อ ย ่ า ง ข อ ง ค ว า ม ม ึ ก ค ิ ด ข อ ง อ า ว อ ะ เ ม ร ิ ก ั น โ ด ย ก า ร ย ุ ม... ค ว า ม ม ึ ก ค ิ ด อ อ ก ม า ใ น ร ู ป ว ั น ค ะ ด ิ แ บ บ เ ส ้ า แ ล ะ เ ห ม ื อ ก ว ่ า ท ั ม ม ะ ช า ต ิ ใ น ป ะ ส ิ บ ก า ม ข อ ง ม ะ น ุ ด แ ม ่ ว ่ า พ ว ก น ั ก ย ุ ม เ ห ล ่ า น ั ้ น ม ี อ ุ ส ย ว ์ ท ี ่ ส ุ ด ใ น ก า ร ย ุ ม ค ำ ก อ ม เ ร ื ่ อ ง ก า ร ต ิ ต า ม ค ว า ม เ ป ็ น อ ้ า ท า ด, ท ่ า น ล อ ง แ ฟ ล โ ล ไ ด ้ พ ิ ม ก า บ ก อ ม ข อ ง ท ่ า น เ ร ื ่ อ ง อ ้ า ท า ส ใ น ป ี ๑ ๗ ๔ ๘, ท ่ า น โ ล แ อ ด ไ ด ้ เ ป ็ น บ ั น ท ึ ก ก า ร ข อ ง ห ม ั ว ส ี พ ิ ม เ พ ็ น อ ิ ล

ເວເນັຍ ຟຣິແມນ, ທ່ານຈອກຸ ແບນກຣອຟ ໄດ້ເປັນຜູ້ທີ່ມີຄວາມ
ຄິດຕໍ່ຕ້ານນັກທະນາຄານເປັນທີ່ສຸດ, ແລະທ່ານໄບຣອັນ ໄດ້ເປັນຜູ້
ທີ່ມີອາຊີບໃນການຂຽນກາບກອນຢ່າງດີ ແລະໄດ້ເຂົ້າຮັບຕຳແໜ່ງ
ເປັນບັນນາທິການຂອງໜັງສືພິມນິວຢອກ ອີເວນິ້ງ ໂປສ໌ ຕັ້ງແຕ່
ປີ ໑໒໘໗ ຫາປີ ໑໒ກ໒.

ແນວທາງຂອງການລະເວລາ ໄດ້ພາໃຫ້ເກີດມີການສົນໃຈໃນ
ປະວັດສາດ ຂອງສາທາຣະນະຣັຖ ແລະໄດ້ບັນທຶກໄວ້ເຖິງການເລີ້ມ
ຕົ້ນຂອງປີການຮຽນ ໃນປະວັດສາດ. ໃນສໄມຂອງປີ ໑໒ມ໐
ກ່ອນັ້ນ, ທ່ານຈາຣ໌ ສປ່ານສ໌, ຊຶ່ງໃນຣະຫວ່າງຫລາຍປີ ກ່ອນໆ
ນັ້ນໄດ້ເລີ້ມຕົ້ນໜັງສືພິມນອທອະເມຣິກັນຣີວິວ, ແລະໄດ້ຮັບໜ້າທີ່
ໃນການບັນທຶກເອກສານ ກ່ຽວກັບພົງສາວະດານ ເພື່ອພິມອອກຈຳ
ໜ່າຍ, ແລະໄດ້ທ້ອນໂຮມການຂຶດຂຽນຕ່າງໆ ຂອງທ່ານວໍຊິງຕັນ
ແລະທ່ານແຟຣງຄລິນ ພ້ອມທັງໄດ້ທ້ອນໂຮມເອກສານທາງການທູດທີ່
ໃຊ້ຕິດຕໍ່ກັບຕ່າງປະເທດ ໃນສໄມປະຕິວັດ. ໃນປີ ໑໒ມ໔, ທ່ານ
ຈອກຸແບນກຣອຟໄດ້ພິມປຶ້ມພົງສາວະດານ ກ່ຽວກັບສະຫະຣັຖອອກ
ຈຳໜ່າຍຫົວນຶ່ງ ໂດຍມີເນື້ອເຮື່ອງເລີ້ມແຕ່ການຄົ້ນພົບອະເມຣິກາ
ໃນສໄມດຶກດຳບັນ ຈົນຮອດສໄມ ທີ່ມີຣັຖທັມມະນູນ ປຶ້ມຫົວນີ້ແມ່ນປຶ້ມ
ຫົວທຳອິດ ທີ່ໄດ້ຂຽນຂຶ້ນກ່ຽວກັບຄວາມເຂົ້າໃຈ ໃນພົງສາວະດານ
ຂອງອະເມຣິກັນ ໂດຍອີງໃສ່ການຄົ້ນຄວ້າທີ່ຂຍັນຫມັ່ນພຽນ ຊຶ່ງໄດ້

ມາຈາກແຫລ່ງຕ່າງໆ. ກ່ອນຈະຄົບຮອບ ຂອງຣະຍະເວລາສິບປີ, ທ່ານແບນກຮອຟແລະທ່ານ ວິລລຽມແປຣສກອດ ໄດ້ສະແດງໃຫ້ຜູ້ຄົນ ໄດ້ເຫັນຄວາມສາມາດ ຂອງນັກຂຽນອະເມຣິກັນໂດຍໄດ້ຂຽນປະວັດ ສາດອີງໃສ່ວັນຄະດີເປັນພິເສດ.

ໃນຊີວິດການເປັນຢູ່ປະຈຳວັນໃນສໄມນັ້ນ, ການສົງເຄາະ ປະຊາຊົນໄດ້ຖືກດັດແປງໃຫ້ດີຂຶ້ນຫລາຍກວ່າໃນສໄມປີ ຈຊ.ຄ.ຫ ຫາປີ ຈຊ.ຄ.ຫ. ຫລັງຈາກປີ ຈຊ.ຄ.ຫ, ເຄື່ອງຈັກຟາດເຂົ້າກໍໄດ້ຖືກປະດິດ ຂຶ້ນມາແທນໄມ້ຟາດເຂົ້າແລະຂອງກົ້ງ ແລະຫລັງຈາກນັ້ນອີກບໍ່ດົນ, ເຄື່ອງຈັກຕັດແລະເຄື່ອງຈັກເກັບກ່ຽວເຂົ້າກໍຖືກປະດິດຂຶ້ນ. ຄວາມ ຫຍູ້ງຍາກໃນການເຮັດໃຫ້ຄົນໃນຊາດຢູ້ທ້ອນໂຮມກັນນັ້ນເປັນສິ່ງທີ່ລຳ ບາກ, ເນື່ອງຈາກວ່າ ພູມີປະເທດ ໄດ້ແຜ່ຂຍາຍອອກໄວເກີນໄປ ແຕ່ວ່າຄວາມສລາດຂອງຄົນໃນເຣື່ອງເຄື່ອງຈັກກໍໄດ້ຊ່ວຍບັນເທົາບັນ ຫານີ້ໄດ້ຢ່າງດີ. ຕໍ່ມາ ຄວາມກ້າວຫນ້າໃນດ້ານຣົຖໄຟໄດ້ເອົາມາ ໃຊ້ແທນກວຽນມ້າ ໃນປີ ຈຊສ.ຫ. ຕົກມາເຖິງປີ ຈຊ.ຄ.ຫ, ປະຊາ ຊົນສາມາດໄປມາຫາສູ່ກັນໄດ້ໂດຍທາງຣົຖໄຟຈາກຣັຖເມນໄປຫາຣັຖ ແຄໂຣໄຣນາທາງເຫນືອ, ຈາກແຄມຝັ່ງແອດແລນຕິກ ໄປຍັງເມືອງ ບັພຟາໂລ ແລະຈາກດ້ານຕະເວັນຕົກຂອງໂລກເສຣີ ໄປຫາເມືອງຊີ ກາໂກຫລືຊົນຊົນນາຕີ.

ໃນປີ ຈຊ.ຄ.ຫ, ທ່ານແອສ ເອຟບິມອກສ່ ໄດ້ປະດິດເຄື່ອງ

ສິ່ງໂທຣະເລກດ້ວຍໄຟຟ້າອອກມາໃຊ້ເປັນເທື່ອທຳອິດ. ຕໍ່ມາໃນປີ ໑໘໔໗, ເຄື່ອງຈັກພິມໜັງສື ກໍໄດ້ຖືກປະດິດຂຶ້ນມາໃຊ້ໂດຍທ່ານຣິສ ຊາດໂຣ ຊຶ່ງເຄື່ອງຈັກພິມໜັງສືນີ້ໄດ້ເຮັດໃຫ້ມີການປ່ຽນແປງຂນານ ໃຫຍ່ໃນວົງການໜັງສືພິມແລະໄດ້ເປັນສ່ວນສຳຄັນໃນຊີວິດຂອງຊາວ ອະເມຣິກັນ.

ການເພີ່ມທະວີຂອງຄົນໃນຊາດຈາກປີ ໑໘໑໘ ຫາປີ ໑໘໕໘ ນີ້, ມີພົລເມືອງຫລາຍຂຶ້ນຕື່ມ ຈາກຈຳນວນເຈັດລ້ານສອງແສນເຄິ່ງ ຫາ ຊາວສາມລ້ານຄົນ. ໃນຣະຍະນີ້ ທີ່ດິນສຳລັບການສ້າງສາໄດ້ ເພີ່ມຈຳນວນຂຶ້ນຄືກັນ, ຄືຈາກຫ້າພຽງເຈັດແສນໄມ ມາ ເປັນສາມລ້ານໄມມິນທິນ. ນອກຈາກມີການປູກຝັງ ທີ່ງອກງາມດີ ແລ້ວ, ອຸດສາຫະກັມຕ່າງໆ ກໍໄດ້ຖືກຈັດຕັ້ງຂຶ້ນຕາມແຄມຝັ່ງດ້ານຕະ ເວັນອອກ ແລະຕາມຫົວເມືອງໃຫຍ່ໆ ໃນດ້ານຕະເວັນຕົກດ້ວຍ. ຄວາມໜັ້ນຄົງຂອງຊາດ, ຄວາມສຳຄັນຂອງເສຖກິດ, ແລະສະຖາ ບັນສຶກສາກໍໄດ້ມີຂຶ້ນ, ແຕ່ບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂນັ້ນກໍຄື ຄວາມແຕກຕ່າງກັນຣະຫວ່າງຄົນແຕ່ລະພາກ ຊຶ່ງກາຍເປັນພົ້ນຖານ ຂອງບັນຫາທີ່ຂັດແຍ່ງກັນແລະຖ້າເຣື່ອງນີ້ບໍ່ໄດ້ຮັບການແກ້ໄຂໃນສິບປີ ຂ້າງໜ້າແລ້ວ ກໍຈະກາຍເປັນແປວໄຟຂອງສົງຄາມກາງເມືອງໄປ ໄດ້.

# 5

## ກໍຣະນີພິພາດຣະຫວ່າງຜູ້ຄົນໃນຫມວດດຽວກັນ

"ຄົນຢູ່ເຮືອນດຽວກັນທີ່ແຕກສາມັກຄີກັນນັ້ນ ຈະຢູ່ນຳກັນໄປບໍ່ໄດ້! ຂ້າພະເຈົ້າເຊື່ອຫມັ້ນວ່າ ຣັຖບານນີ້ ຈະບໍ່ຢືນຍົງຄົງຢູ່ຕໍ່ໄປໄດ້ ຕາບໃດທີ່ຍັງມີສະພາບເຄື່ງທາດ ເຄື່ງເສຣີຢູ່ດັ່ງນີ້".

## ອາບຣາຮັມລົງຄອນ

ສປຣິງຟີລ, ອິລລິນອຍ, ວັນທີ ๑ກ ມິຖຸນາ ๑๙๕๙

ໃນກາງສັຕວັດທີສິບເກົ້າ, ບໍ່ມີປະເທດໃດໃນໂລກທີ່ເປັນຈຸດສົນໃຈຂອງຊາວໂລກ ນອກເຫນືອໄປກວາສະຫະຣັຖອະເມຣິກາແລະ ບໍ່ມີຫລາຍປະເທດທີ່ສາມາດດຶງດູດແຂກຕ່າງປະເທດໃຫ້ມາຢ້ຽມຢາມ ຫລາຍ. ປົ້ມທີ່ຂຽນຂຶ້ນໂດຍທ່ານອາເລັກຊິສ ເດີຕອກເກີວິລ, ນັກ ຂຽນຊາວຝຣັ່ງເສດຊື່ງມີຊື່ເຣື່ອງ "ປະຊາທິປະໄຕໃນສະຫະຣັຖ"ໄດ້

ຮັບຄວາມນິຍົມເປັນທີ່ສຸດຈາກຊາວຢຸໂຮບ ແລະຄວາມເຫັນຊອບກ່ຽວ
ກັບປະເທດໃຫມ່ ກໍກາຍເປັນສິ່ງທີ່ດີງາມຂຶ້ນເລື້ອຍໆ. ເມື່ອນັກທ່ອງ
ທ່ຽວໄດ້ມາຢ້ຽມຢາມປະເທດນີ້ແລ້ວ, ເຂົາເຈົ້າໄດ້ເຫັນວ່າ ອ່າວ
ຂອງເມືອງບອສຕັນນີ້ ຈົບງາມດີ! ແລະແປກປລາດໄປກວ່ານີ້ ກໍຄື
ເຂົາເຈົ້າໄດ້ຄົ້ນພົບ ຄວາມຈົບງາມ ຂອງເມືອງຢູຕີກາ, ສີຣາຄິວສ์
ແລະ ອໍເບີນ ຊຶ່ງຫາກໍໄດ້ຟື້ນຂຶ້ນຈາກສະພາບການທີ່ເປົ່າປ່ຽວ ເມື່ອ
ເຂົາເຈົ້າໄດ້ທ່ອງທ່ຽວໄປຕາມຮັຖຕ່າງໆໃນພາກເຫນືອ, ເຂົາເຈົ້າ
ໄດ້ເຫັນວ່າ ທົ່ວທຸກຫົນທຸກແຫ່ງນັ້ນ ເຕັມໄປດ້ວຍຫລັກຖານທີ່ບົ່ງເຖິງ
ຄວາມມັ່ງມີໃນດ້ານກະສິກັມ, ການຄ້າ, ແລະສາທາຣະນະປະໂຍດ
ທີ່ມີການກ້າວຫນ້າຢ່າງວ່ອງໄວ. ເວົ້າຕາມຄວາມເປັນຈິງແລ້ວ,
ເຂົາເຈົ້າແນມເຫັນປະເທດນີ້ເຕັມໄປດ້ວຍຄວາມມ່ວນຊຶ່ນແລະຄວາມ
ມັ່ງມີອັນຍາວນານ, ແມ່ນວ່າຊາວຕ່າງດ້າວ ທີ່ເຂົ້າມາຢ້ຽມຢາມປະ
ເທດນີ້ຈະລົງທ່າເຮືອເມືອງນິວຢອກ, ຟິລາເດັລເຟັຍ ຫລືທີ່ບອສຕັນ
ກໍຕາມ ເຂົາເຈົ້າຈະຕື່ນຕາດ້ວຍສຽງອະອະ, ທຸຣະກິດແລະຄວາມ
ຊຶ່ນບານ ຂອງຜູ້ຄົນທັງຫລາຍ ແລະນິວຢອກ ກໍມີລັກສນະເປັນພິເສດ
ທີ່ເຕັມໄປດ້ວຍຄວາມແຈ່ມໃສ, ມີຕຶກອັນສູງຊັນ, ແລະມີຮ້ານຄ້າອັນ
ສະດຸດຕາທີ່ຫນ້າເບິ່ງ; ສ່ວນເມືອງຟິລາເດັລເຟັຍນັ້ນກໍມີຮູບລັກສນະ
ຈົບງາມເຫມືອນກັນເຊັ່ນວ່າ ມີທາງບົກອັນສວຍງາມ, ມີຖນົນຫົນ
ທາງທີ່ເຕັມໄປດ້ວຍຮົ່ມໄມ້ເຢັນດີ, ແລະມີເຮືອນກໍ້ດ້ວຍດິນຈີ່ສີແດງ

ແລະມີຫີນຂາວປູ້ນໄປສູ່ທາງປະຕູ.

ຢູ່ໃນອານາເຂດຂອງປະເທດນີ້ ຢຶດຕໍ່ອອກໄປສູ່ປ່າ, ທົ່ງນາ ແລະພູເຂົານັ້ນ ມີພົລເມືອງອາໄສຢູ່ປະມານຊາວສາມລ້ານຄົນ ແລະ ຮ່ວມທັງຫມົດມີສາມສິບເອັດຣັຖ. ດິນແດນແຫ່ງຄວາມຫວັງນັ້ບໍ່ເຄີຍ ປາກົດມາກ່ອນເລີຍວ່າຈະເປັນບ່ອນທໍາມາຫາກິນໄດ້ສດວກ. ຢູ່ໃນ ພາກຕະວັນອອກນັ້ນ, ອຸດສາຫະກັມທຸກໆດ້ານ ກໍປາກົດຕົວຂຶ້ນມາ. ສ່ວນພາກຕະເວັນຕົກກາງ ແລະທາງໃຕ້ນັ້ນ, ການກະສິກັມກໍອຸດົມ ສົມບູນດີທີ່ສຸດ ແລະທາງຣົຖໄຟ ໄດ້ຊ່ວຍໃຫ້ປະຊາຊົນທີ່ຢູ່ທາງໄກກັນ ໄດ້ໄປມາຫາສູ່ກັນຢ່າງສດວກສະບາຍ ແລະມີຄວາມໃກ້ຊິດກັນຫລາຍ ຂຶ້ນ, ແລະອີກຢ່າງນຶ່ງ ບໍ່ຄໍາ ທີ່ຣັຖແຄລິຟໍເນັຍ ໄດ້ພາໃຫ້ມີການຄ້າ ຂາຍຫລາຍຂຶ້ນ.

ແຕ່ແນວໃດກໍດີ, ນັກທ່ອງທ່ຽວ ກໍຍັງເຫັນອະເມຣິກາ ເປັນ ສອງບ່ອນນັ້ນເອງຄື: ທາງເຫນືອ ແລະທາງໃຕ້. ຍ້ອນຄວາມ ກ້າວໜ້າຢ່າງວ່ອງໄວນີ້ ຈຶ່ງພາໃຫ້ມີຄວາມກັນດານແອບແຝງຢູ່ ໃນ ການຮັກສາຄວາມຖືກຕ້ອງປອງດອງກັນຣະຫວ່າງຜູ້ຄົນທີ່ຢູ່ເຂດຕ່າງໆ ກັນ. ຢູ່ທາງເຂດນິວອິງແລນດ໌ ແລະຣັຖທີ່ຢູ່ທາງແຄມແມ່ນ້ໍາແອດ ແລນຕິກພາກກາງ, ແມ່ນສູນກາງຂອງໂຮງງານຫັຖກັມ, ການຄ້າ ແລະການຄັງ ແລະຜລິດຜົນສ່ວນສໍາຄັນຈາກພາກນີ້ກໍມີເຂົ້າແປ້ງແລະ ເນື້ອສັດ, ເກີບບູດ ແລະເກີບຫັມມະດາ, ຜ້າແພ, ທ່ອນໄມ້,

24 / VII
ทามจำหาย

ເຄື່ອງນຸ່ງ, ເຄື່ອງຈັກ, ສິນຄ້າທີ່ເຮັດດ້ວຍໜັງ ແລະເຄື່ອງຂົນສັດ ໃນຂນະດຽວກັນນີ້, ການຂົນສົ່ງທາງເຮືອກໍ້ກ້າວໜ້າດີເຖິງຂັ້ນທີ່ວ່າ ເຮືອສິນຄ້າປັກຫູງຊາດອະເມຣິກັນໄດ້ຢາຍເດັຍຣະດາດຢູ່ເຕັມທະເລ ເຈັດບ່ອນເພື່ອນຳສິນຄ້າອອກໄປຈຳໜ່າຍທົ່ວໂລກ.

## ການເປັນຫາສໄດ້ພາໃຫ້ເສຖກິດຝຶດເຄື່ອງ

ຢູ່ທາງພາກໃຕ້ພູ້ນ ການປູກຝັງກໍອຸດົມສົມບູນດີ ແລະຣາຍໄດ້ ສ່ວນໃຫຍ່ແມ່ນໄດ້ມາຈາກການປູກຝ້າຍ, ນອກຈາກນັ້ນ ກໍມີການປູກ ເຂົ້າຕາມແຖບແຄມຝັ່ງ, ການປູກອ້ອຍທີ່ຣັຖລູຍຊິອາມາ, ການປູກ ຕ້ນຢາແລະການປູກຝັງອື່ນໆ ອີກຕາມແຄມຊາຍແດນຂອງຣັຖ ແລະ ນອກນີ້ກໍມີໂຮງງານຫັຖກັມ ຊຶ່ງຕັ້ງຢູ່ກະຈັດກະຈາຍທົ່ວໄປ. ດ້ວຍ ການພັທນາດິນດຳທີ່ອຸດົມສົມບູນທາງເຂດທິ່ງນີ້, ການປູກຝ້າຍຈຶ່ງໄດ້ ເພີ່ມຂົ້ນອີກຫລາຍເທົ່າ ໂດຍອາໄສຣົຖຂົນສົ່ງ, ເຮືອກຳປັ່ນ, ແລະຣົຖໄຟເປັນເຄື່ອງຊ່ວຍກັນຂັນທຸກສິນຄ້າ ອອກສູ່ຕລາດທາງພາກ ເໜືອແລະໃຕ້. ຝ້າຍທີ່ສົ່ງອອກຂາຍປະເທດນອກ ກໍນັບວ່າເປັນ ເຄື່ອງນຶ່ງຂອງສິນຄ້າທັງໝົດທີ່ສະຫະຣັຖສົ່ງອອກຂາຍປະເທດນອກແລະ ໃນຂນະດຽວກັນນັ້ນກໍໄດ້ສົ່ງວັດຖຸດິບໄປຂາຍ ໃຫ້ເຈົ້າຂອງໂຮງງານ ຕ່ຳຜ້າ ແລະພົ້ລາອື່ນໆ.

ຢູ່ທາງຕະເວັນຕົກພາກກາງ ມີທົ່ງຫຍ້າອັນກວ້າງໃຫຍ່ແລະມີ ພືລເມືອງເພີ່ມຂຶ້ນເລື້ອຍໆແລະຢ່າງວ່ອງໄວ ຊຶ່ງພາໃຫ້ແຖບນີ້ເປັນ ຕາຢູ້ຂຶ້ນອີກ. ຢູ່ທາງຢຸໂຣບ ແລະພວກທີ່ຢູ່ຕາມບ່ອນຕ່າງໆ ໃນອະ ເມຣິກາ, ຕ່າງກໍຕ້ອງການເຂົ້າເຢ ແລະເນື້ອສັດ. ໃນເວລາ ດຽວກັນນັ້ນ ຣັຖບານໄດ້ມີການສເນີແນະກ່ຽວກັບການໃຊ້ອຸປກອນໃນ ການປູກຝັງ ເພື່ອເພີ່ມພູນຜົນຜລິດໃຫ້ໄດ້ຫລາຍຂຶ້ນ ແລະອຸປກອນທີ່ ເອົາມາໃຊ້ເຫລົ່ານີ້ ຊຶ່ງສຳຄັນກວ່າຢ່າງອື່ນໝົດກໍແມ່ນການໃຊ້ເຄື່ອງ ຈັກກ່ຽວເຂົ້າ ຊຶ່ງຖືກຜລິດຂຶ້ນໂດຍບໍຣິສັດ ແມກຄອກມິກ. ເຄື່ອງ ຈັກຊນິດນີ້ມີຈຳນວນ ๕๐๐ ເຄື່ອງ ໄດ້ຖືກນຳມາໃຊ້ ໃນລະດູການ ເກັບກ່ຽວໃນປີ ๑๙๔๙ ແລະໃນປີ ๑๙๗๐ ໄດ້ນຳເອົາເຄື່ອງຈັກດັ່ງ ກ່າວນີ້ມາໃຊ້ຮອດ ๑๐๐,๐๐๐ ເຄື່ອງ ຊຶ່ງພາໃຫ້ຜົນເກັບກ່ຽວເຂົ້າ ເຢໃນປະເທດເພີ່ມຂຶ້ນອີກເທົ່ານຶ່ງ ໃນປີ ๑๙๗๐, ແລະເຄິ່ງນຶ່ງ ຂອງຜົນຜລິດທັງໝົດນີ້ ແມ່ນມາຈາກການປູກຝັງ ທາງຕະເວັນຕົກ ພາກກາງ. ປັດຈັຍສຳຄັນທີ່ຊ່ວຍສົ່ງເສີມໃຫ້ທາງພາກຕະວັນຕົກໄດ້ ພົບກັບຄວາມມັ່ງມີຢ່າງວ່ອງໄວ ນັ້ນກໍຄື ການປັບປຸງການຄົມນາຄົມ ຂນານໃຫຍ່ ທີ່ສາມາດອຳນວຍຄວາມສດວກສບາຍ ແລະຕັ້ງແຕ່ ປີ ๑๙๕๐ ຮອດປີ ๑๙๕๗, ສາຍພູອາປາລາຈຽນກໍໄດ້ຖືກເຈາະເປັນອຸ ໂມງໃຫ້ສາຍຣົຖໄຟຜ່ານໄປໄດ້ ຊຶ່ງການເຈາະທາງຣົຖໄຟ ຜ່ານພູ ເຂົາສາຍນີ້ ພາໃຫ້ການຄ້າຂອງພາກເໜືອ ແລະພາກໃຕ້ສະດວກດີ

ຂຶ້ນ. ດ້ວຍວ່າ ມີການຄ້າຂາຍຕິດຕໍ່ກັນຣະຫວ່າງເຫນືອແລະໃຕ້ນັ້ນ ຈຶ່ງພາໃຫ້ມີຄວາມເຂົ້າອົກເຂົ້າໃຈກັນດີໃນເຣື່ອງການເມືອງ, ການ ຂຍາຍທາງຣົຖໄຟນີ້ ຢູ່ທາງພາກໃຕ້ບໍ່ຄ່ອຍມີຫລາຍສາຍ ຈົນວ່າຮອດ ປາຍປີ ຈຊ້ຄ້ວ ພູ້ນ ຈຶ່ງມີສາຍຣົຖໄຟຕິດຕໍ່ໄປຮອດແມ່ນ້ຳ ມີຊີຊິບປີ ແລະແຄມຝັ່ງແອດແລນຕິກຕອນໃຕ້ສຸດ.

ຫລາຍປີຜ່ານມາ ຄວາມຂັດແຍ້ງຜົນປະໂຍດກັນ ຣະຫວ່າງ ທາງເຫນືອແລະໃຕ້ກໍມີເພີ້ມຂຶ້ນ ເພາະວ່າ ພວກທີ່ຢູ່ທາງໃຕ້ ໄດ້ພາ ກັນຄຽດໃຫ້ພວກພໍ້ຄ້າທາງເຫນືອ ທີ່ໄດ້ກຳໄຣຢ່າງຫລວງຫລາຍຈາກ ການຄ້າຝ້າຍ ໂດຍໃຫ້ເຫດຜົນວ່າ ຢູ່ຂຄທີ່ພວກຕົນອາໃສຢູ່ບໍ່ໄດ້ມີ ການພັທນາພຽງພໍ ຊຶ່ງຖ້າປຽບກັບທາງເຫນືອແລ້ວ ເຂົາເຈົ້າໄດ້ຮັບ ການປັບປຸງ ແລະຂຍາຍອອກຫລາຍກວ່າ. ພວກທີ່ຢູ່ທາງເຫນືອໄດ້ ໃຫ້ຄວາມເຫັນວ່າ ມັນເນື່ອງຈາກວ່າ ທາງໃຕ້ຍັງມີຣະບົບການເປັນ ຂ້າທາສຢູ່ ແລະຕາບໃດທີ່ທາງໃຕ້ບໍ່ຍຸບຣະບົບການມີ້ຂ້າທາສໃຫ້ຫມົດ ໄປ, ເສຖກິດພາຍໃນຂຄນີ້ຈະບໍ່ດີຂຶ້ນ ແລະແມ່ນພວກທາງໃຕ້ເອງ ເປັນຜູ້ຮັບຜິດຊອບ. ເມື່ອຢ້ອນກ່າວເຖິງຄັ້ງຫລັງປີ ຈຊ້ມ້ວ, ທາງ ພາກຕ່າງໆ "ໄດ້ມີປັນຫາກ່ຽວກັບຂ້າທາສ ຊຶ່ງພວກທີ່ຢູ່ທາງເຫນືອມີ ຄວາມປາຖນາອັນແຮງກ້າຢາກໃຫ້ຍຸບຣະບົບການມີ້ຂ້າທາສນີ້ໃຫ້ຫມົດ ສິ້ນໄປ. ໃນຂນະດຽວກັນນັ້ນ ກໍໄດ້ມີການເຄື່ອນໄຫວບາງປະການ ເຊັ່ນວ່າ ມີທີ່ດິນບາງບ່ອນ ທີ່ຍັງບໍ່ທັນໄດ້ຕັ້ງຂຶ້ນເປັນຣັຖເທື່ອ, ແຕ່

ເອ້ນວ່າ ດິນແດນແຫ່ງອິສຣະພາບ ແລະມີການຫ້າມຂຍາຍຣະບົບຂ້າ
ທາສມາທາງເຂດນີ້ ເປັນເດັດຂາດ. ໃນທັສນະຂອງຊາວພາກໃຕ້
ແລ້ວ, ການມີຂ້າທາດນີ້ ແມ່ນມໍຣະດົກທີ່ຕົກທອດມາ ແລະເຂົາເຈົ້າ
ບໍ່ມີຄວາມຮັບຜິດຊອບໃດໆໃນເຫດການນີ້ ນອກເໜືອໄປກວ່າການຖື
ເອົາວ່າເປັນມໍຣະດົກຕັ້ງແຕ່ດົກດຳບັນພູ້ນມາ ເຊັ່ນດຽວກັບພາສາອັງ
ກິດຊຶ່ງເປັນຕົວແທນຂອງສະຖາບັນ, ຄວາມນຶກຄິດ, ແລະຂນົບປະ
ເພນີຂອງເຂົາເຈົ້າ. ໃນບາງຣັຖທີ່ຢູ່ຕາມແຄມຝັ່ງທະເລແອດແລນ
ຕິກ, ຣະບົບການມີຂ້າທາສ ມີມາໄດ້ສອງຮ້ອຍກວ່າປີແລ້ວ ຊຶ່ງ
ຮວມທັງເຂດອ້ອມແອ້ມທີ່ສົ່ງໄລແລ້ວດ້ວຍ. ຊາວຜິວດຳບາງພວກທີ່
ໄດ້ຫລົບຫນີໄປອາໄສຢູ່ໃນແຜ່ນດິນອະເມຣິກາ ມາໄດ້ຫາຫົກຈົ່ວໂມງ
ແລ້ວ, ບໍ່ມີພຽງແຕ່ຄວາມຈຳນິຈຳນາມເທົ່ານັ້ນ, ເຂົາເຈົ້າຍັງມີ
ການເດົາເຫດການລ່ວງໜ້າ, ມີສາສນາ ແລະຄວາມຄິດກ່ຽວກັບ
ດ້ານສັງຄົມຂອງພວກຜິວຂາວດ້ວຍ. ຢູ່ໃນຣັຖພາກໃຕ້ ສິບຫ້າຣັຖ
ແລະຕາມເຂດຊາຍແດນຂອງຣັຖອື່ນໆນັ້ນ ມີພົລເມືອງຊາວຜິວດຳປະ
ມານເຄິ່ງນຶ່ງຂອງພວກຜິວຂາວ, ແຕ່ຢູ່ທາງເໜືອ ບໍ່ຄ່ອຍມີຊາວຜິວ
ດຳປະປົນຢູ່ເລີຍ.

ຕັ້ງແຕ່ກາງປີ ໑໗໔໐ ເປັນຕົ້ນມາ, ບັນຫາເຣື່ອງຂ້າທາສ
ແມ່ນບັນຫາໃຫຍ່ ທີ່ປົກຄຸມນະໂຍບາຍການເມືອງ ຂອງອະເມຣິກັນຢູ່
ທາງໃຕ້, ຈາກແອດແລນຕິກໄປຫາແມ່ນ້ຳມິຊຊິບປີອັນໄປ, ທັງໝົດ

ນີ ໄດ້ມີນະໂຍບາຍອັນດຽວກັນຄື ມີຄວາມເຫັນວ່າ ການປູກຝ່າຍມີ
ສ່ວນພົວພັນກັບການມີຂ້າທາສ ແລະຊາວສວນສ່ວນຫລາຍ ທີ່ຢູ່ທາງ
ພາກໃຕ້ຖືວ່າ ຂ້າທາສເປັນປັດຈັຍສຳຄັນໃນເສຖກິດຂອງເຂົາເຈົ້າ.
ການປູກຝ່າຍເທົ່ານັ້ນ ທີ່ພາໃຫ້ເຂົາເຈົ້າມີຄວາມຈຳເປັນ ຕ້ອງມີຂ້າ
ທາສຊຶ່ງວຽກການສ່ວນໃຫຍ່ແມ່ນໃຊ້ແຮງຄົນເຮັດຕາມວິທີສໄມເກົ່າ.
ໃນປີນຶ່ງ, ຈະຕ້ອງມີວຽກການເຮັດເຖິງເກົ້າເດືອນ ພ້ອມທັງໄດ້ອະ
ນຸຍາດໃຫ້ໃຊ້ແຮງງານຜູ້ຍິງ ແລະເດັກນ້ອຍ ເພື່ອຕື່ມກັບແຮງງານ
ເດີມທີ່ມີຢູ່ແລ້ວນັ້ນອີກ.

## ການຖືກຖ່ຽງກັນກ່ຽວກັບບັນຫາຂ້າທາສມີຫລາຍຂຶ້ນ

ບັນດາຜູ້ນຳນັກການເມືອງທາງພາກໃຕ້, ພ້ອມດ້ວຍອຸ້ນຊັ້ນ
ກາງ ແລະພຣະສົງຕ່າງໆ ຊຶ່ງລ້ວນແຕ່ຕ້ານແລະຄັດຄ້ານຄວາມ
ຄິດຄວາມເຫັນ ຂອງພວກພາກເໜືອ, ແຕ່ມາບັດນີ ໄດ້ປ່ຽນແປງ
ຄວາມຄິດໃໝ່ແລ້ວ ໂດຍບໍ່ຍອມອະໄພ ໃຫ້ມີສະຖາບັນຂ້າທາສອີກຕໍ່
ໄປ. ແນ່ນອນ, ເຣື່ອງນີ້ໄດ້ກາຍເປັນຜົນດີແກ່ຊາວຜິວດຳ, ແລະ
ພວກທີ່ຢູ່ທາງໃຕ້ໄດ້ໂຄສະນາວ່າ ຄ່າແຮງງານ ທີ່ພວກທາງໃຕ້ຈ່າຍ
ໃຫ້ແກ່ພວກຂ້າທາສນີ ຍັງຫລາຍກວ່າທີ່ພວກທາງເໜືອຈ່າຍຄ່າແຮງ
ງານໃຫ້ແກ່ກັມມະກອນ ຊຶ່ງຖ້າປຽບທຽບໃສ່ກັນແລ້ວ, ທາງໃຕ້ຍັງມີ
ມະນຸສທັມຫລາຍກວ່າພວກທາງເໜືອອີກຊ້ຳ. ກ່ອນປີ ໑໘໓໐ ນັ້ນ

ຣະບຽບການປົກຄອງ ເປັນແບບທັມມະດາແລະງ່າຍໆແລະການດູແລ ພວກຂ້າທາສນັ້ນແມ່ນຫນ້າທີ່ຂອງນາຍຈ້າງ ໂດຍສະເພາະ, ແລະ ສິ່ງນີ້ໄດ້ກາຍເປັນບຸຄລິກລັກສນະ ສືບເນື່ອງກັນມາເລື້ອຍໆ. ຫລັງ ຈາກປີ ຈຊສໍ ເປັນຕົ້ນມາ, ການປ່ຽນແປງບາງປະການໄດ້ປາກົດ ຕົວໃຫ້ເຫັນແດ່ແລ້ວ ໂດຍການນຳເອົາວິທີການເພີ້ມເຕີມ ການປູກ ຝ້າຍມາໃຊ້ໃນທາງໃຕ້ສຸດຊຶ່ງພວກນາຍຈ້າງກໍບໍ່ຄ່ອຍໄດ້ດູແລຂ້າທາສ ຂອງຕົນຢ່າງໃກ້ຊິດ ແລະມີແຕ່ໄດ້ຈ້າງພນັກງານອາຊີບ ເຂົ້າມາກຳ ກັບການຕາງ.

ມີຊາວສວນຈຳນວນຫລາຍຄົນ ທີ່ມີນຳ້ໃຈເອື້ອເຟື້ອຕໍ່ຂ້າທາສ ຊາວຜິວດຳຂອງຂະເຈົ້າ ແລະກໍມີຊາວສວນອີກຫລາຍຄົນຄືກັນທີ່ກົດຂີ່ ຂົ່ມເຫັງ ແລະທາລຸນ ຂ້າທາສຂອງເຂົາເຈົ້າ ຢ່າງໄຮ້ມະນຸສທັມ, ແລະແນ່ນອນ ວິທີຫລັງນີ້ພາໃຫ້ຄວາມສັມພັນຂອງຂ້າທາສ ທີ່ມີຕໍ່ຄອບ ຄົວຂອງນາຍເຂົາເຈົ້າແຕກສລາຍໄປ. ການວິພາກວິຈານຢ່າງຮຸນ ແຮງກ່ຽວກັບຂ້າທາສນີ້ ບໍ່ແມ່ນການຂາດມະນຸສທັມຂອງຜູ້ດູແລ, ແຕ່ ແມ່ນການຝ່າຝືນສິດທິຂອງມະນຸດຕ່າງໆ ແລະແມ່ນຄວາມໂຫດຮ້າຍ ກົດຂີ່ຂົ່ມເຫັງ ຊຶ່ງນາຍໄດ້ມີຕໍ່ຂ້າທາສຂອງຕົນ. ນອກຈາກນີ້, ຟ. ລ. ໂອລສເຕດ, ນັກຮຽນຊາວເຫນືອຜູ້ມາສຶກສາຢູ່ທາງພາກໃຕ້ຊົ່ວ ຄາວຍັງໄດ້ໃຫ້ຂໍ້ຄິດວ່າ "ຂ້າທາສໄດ້ກົດກັນຄວາມຈເຣີນກ້າວຫນ້າ ຕົວເອງ ແລະໄດ້ພາໃຫ້ມີຄວາມໃຝ່ຝັນ ໄປໃນທາງທີ່ຜິດ, ແລະໄດ້

ກິດກັນຊ່ອງທາງຂອງກິດທັມມະຊາດ ຊຶ່ງຈະນຳພາບຸກຄົນໃຫ້ເພີ້ມພູນຄວາມສາມາດ ແລະຜົນປະໂຍດສຳລັບປະເທດຊາດ ແລະໂລກມະນຸດດ້ວຍ".

ຫລາຍປີຜ່ານພົ້ນໄປ, ການປູກຝ້າຍ ແລະຮະບຽບການດຳເນີນງານ ໄດ້ກາຍເປັນການລົງທຶນຢ່າງກວ້າງຂວາງ ຊຶ່ງຜົນປູກທີ່ເກັບກ່ຽວ ໄດ້ເປັນສິ່ງສຳຄັນທີ່ສຸດ ແລະຈະເບີ່ງຂ້ານບໍ່ໄດ້. ຜົນເກັບກ່ຽວການປູກຝ້າຍໃນປີ ຈຊ້ວວ, ໄດ້ປະມານ ມ້ຕ,ວວວ,ວວວ ປອນ ແລະເພີ້ມຂຶ້ນຮອດ ຈຝວ,ວວວ,ວວວ ປອນ ໃນປີ ຈຊ້ຄວ, ແລະປະຣິມານ ທີ່ເກັບກ່ຽວໄດ້ ທັງຫມົດ ໃນປີ ຈຊ້ຄວ ໄດ້ ຝກວ,ວວວ,ວວວ ປອນ. ຕົກມາເຖິງປີ ຈຊ້ຕວ, ເຈັດສ່ວນແປດ ຂອງຝ້າຍທັງຫມົດ ທີ່ສົ່ງໄປຂາຍທົ່ວໂລກນີ້ແມ່ນຝ້າຍທີ່ປູກໃນຮັຖທາງພາກໃຕ້ ຂອງອະເມຣິກາ ແລະຂ້າທາສກໍມີເພີ້ມຂຶ້ນ ຄວບຄູ່ກັນໄປ. ຈຸດປະສົງສ່ວນໃຫຍ່ຂອງພວກທີ່ຢູ່ທາງຮັຖພາກໃຕ້ ແມ່ນມີນະໂຍບາຍພາຍໃນຮັຖ, ຄື ຢາກໃຫ້ມີການຄວບຄູມແລະການຂຍາຍຜົນປະໂຍດກ່ຽວກັບຮະບົບການຂ້າທາສໃນການປູກຝ້າຍ. ດັ່ງນັ້ນ, ຈຸດປະສົງຂອງເຂົາເຈົ້າຈຶ່ງໄດ້ແນໃສ່ການຂຍາຍເຂດປູກຝ້າຍໃຫ້ກວ້າງຂວາງອອກໄປໃສ່ທີ່ດິນທີ່ມີຢູ່ແລ້ວ. ການຂຍາຍດັ່ງກ່າວນີ້ເປັນສິ່ງຈຳເປັນທີ່ສຸດ ເພາະວ່າການປູກຝັງແນວດຽວຄື ປູກຝ້າຍນີ້ພາໃຫ້ດິນຫມົດຝູ່ນ ແລະໃຊ້ການບໍ່ໄດ້ ຊຶ່ງນັບວ່າເປັນວິທີທີ່ພາໃຫ້ເສັຍດິນຊຶ່ງ, ແລະຈະ

ຫາດິນໃໝ່ກໍເປັນການຍາກທີ່ສຸດ. ນອກຈາກນີ້ແລ້ວ, ເພື່ອຜົນປະ
ໂຍດໃນທາງການເມືອງ, ທາງໃຕ້ຍັງຕ້ອງການເຂດແດນໃໝ່ອີກ
ເພື່ອຈະໄດ້ຕັ້ງຣັຖທີ່ມີຣະບົບການມີຂ້າທາສຂຶ້ນອີກຣັຖນຶ່ງ. ແຕ່ພວກ
ຊາວເໜືອ ທີ່ມີນະໂຍບາຍຄັດຄ້ານຕໍ່ຣະບົບຂ້າທາສຢູ່ແລ້ວ, ໄດ້ຄຳ
ນຶງເຖິງຄວາມປະສົງຮ້າຍທີ່ພວກທາງໃຕ້ສົມຮູ້ຮ່ວມຄິດກັນຂຶ້ນໃນການ
ຂຍາຍຣະບົບການຂ້າທາສໃຫ້ກ້ວ້າງຂວ້າງອອກໄປໃນເຂດໃໝ່ອີກ.

ການເຄື່ອນໄຫວກ່ຽວກັບການຄັດຄ້ານ ຣະບົບການມີຂ້າທາສ
ຂອງພວກຊາວເໜືອໄດ້ສະແດງອອກມາໃນຮູບທີ່ເປັນຜູ້ຕໍ້ຕ້ານນະໂຍ
ບາຍຂອງພວກທາງໃຕ້. ຂະບວນການຕໍ້ຕ້ານຂ້າທາສ, ກຳເນີດ
ຂອງການປະຕິວັດ ຂອງຊາວອະເມຣິກັນ, ໃນທີ່ສຸດກໍໄດ້ຮັບໄຊຊະ
ໃນທ້າຍປີ ໑໘໐໕ ເມື່ອເວລາສະພາກົງແກຣສໄດ້ລົບລ້າງການຂ້າ
ທາສຊາວອາຟຣິການັ້ນ ຫລັງຈາກນັ້ນມາ ການຄັດຄ້ານຂອງ ສະມາ
ຄົມເຄວກເຄີກໍເບົາບາງລົງ, ແຕ່ກໍຍັງໄດ້ຮັບການຕໍ້ຕ້ານນັ້ນເລື້ອຍໆ
ມາ, ເພາະວ່າເຈົ້າຂອງສວນຝ້າຍກຳລັງມີຄວາມຕ້ອງການຂ້າທາສ
ເພີ່ມຫລາຍຂຶ້ນ. ໃນປີ ໑໘໔໐, ໄດ້ເລີ່ມມີການປັ່ນປ່ວນຂຶ້ນອີກ ຊຶ່ງ
ສ່ວນຫລາຍແມ່ນການພົວພັນກັບການເຄື່ອນໄຫວ ອຸດົມຄະຕິຕາມແບບ
ປະຊາທິປະໄຕ ແລະຄວາມສົນໃຈໃໝ່ກ່ຽວກັບຄວາມຍຸຕິທັມ ໃນສັງ
ຄົມຂອງຊົນທຸກໆຊັ້ນ.

ຂບວນການລົບລ້າງຣະບົບຂ້າທາສໃນອະເມຣິກາເປັນເຣື່ອງ

ໃຫຍ່ທີ່ຖືກຖ່ຽງກັນຢູ່ບໍ່ແລ້ວຈັກເທື່ອ, ຊຶ່ງເປັນການຝ່າຝືນຕໍ່ກົດໝາຍ ຣັຖທັມມະນູນແລະການຄ້ຳປະກັນສິດທິຕ່າງໆກ່ຽວກັບການຊຸມນຸມ ຣະ ບົບການເປັນອ້າທາສຕ່າງໆ ແລະມີສ່ຽງຮ່ຽກຮ້ອງໃຫ້ລົບລ້າງຣະບົບ ນີ້ເສັຍໂດຍດ່ວນ. ຜູ້ທີ່ເປັນຕົວຕັ້ງຕົວຕີ ໃນການນຳຂະບວນການນີ້ ແມ່ນທ່ານ ວິລລ່ຽມລອຍແກຣິຊັ່ນ, ຊຶ່ງຊາຍໜຸ່ມຜູ້ນີ້ມາຈາກຣັຖ ແມ ແຊຈູແຊດສ໌, ແລະສາມາດປຸກປັ່ນປະຊາຊົນໃຫ້ຕື່ນຕົວໄດ້ເປັນຢ່າງດີ ໃນວັນທີ່ນຶ່ງ ເດືອນມະກະຣາ ປີ ໑໗໓໑, ໜັງສືພິມສບັບທຳອິດ ຂອງທ່ານແກຣິຊັນ ທີ່ອອກປາກົດສູ່ສາຍຕາ ຂອງປະຊາຊົນ ມີຊື່ວ່າ "ຜູ້ປົດປ່ອຍ" ໂດຍໄດ້ປະກາດວ່າ "ຂ້າພະເຈົ້າຈະຕໍ່ສູ້ເພື່ອຮ່ຽກ ຮ້ອງສິດທິ ໃຫ້ແກ່ພົລເມືອງເຣົາຜູ້ເປັນທາດ. ກ່ຽວກັບເຣື່ອງນີ້, ຂ້າພະເຈົ້າບໍ່ຢາກຄິດ, ຫລືເວົ້າ, ຫລືຂ່ຽນຂໍ້ຄວາມອັນເໝາະສົມ ... ຂ້າພະເຈົ້າຈະບໍ່ຂໍປ່ຽນຄວາມຕັ້ງໃຈອັນແນ່ວແນ່ນີ້". ວິທີ ການຂອງທ່ານແກຣິຊັນນີ້ໄດ້ພາໃຫ້ຊາວເໜືອພາກັນຕື່ນຕົວ ແລະສຳ ນຶກເຖິງພຶດຕິການອັນຊົ່ວຮ້າຍ ຂອງລັກສນະການມີອ້າທາສ ຊຶ່ງເຂົ້າ ເຈົ້າບໍ່ຄ່ອຍໄດ້ເອົາໃຈໃສ່ມາດົນແລ້ວ. ນະໂຍບາຍຂອງທ່ານ ແກ ຣິຊັນກໍຄື ເຮັດໃຫ້ປະຊາຊົນໄດ້ເຫັນວ່າ ກໍຣະນີອ້າທາສຊາວຜິວດຳນີ້ ເປັນສິ່ງທີ່ຈະປະນາມຜູ້ທີ່ມີອ້າທາສວ່າ ເປັນຜູ້ທໍຣະມານແລະຄ້າຂາຍ ຊີວິດມະນຸດ. ທ່ານແກຣິຊັນ ບໍ່ຮັບຮູ້ສິດທິ ຂອງພວກນາຍເໜືອຫົວ ຂອງພວກອ້າທາສນີ້ ແລະຈະບໍ່ຍອມໃຫ້ອະໄພ ແກ່ການກະທຳຂອງ

ເຂົ້າເຈົ້າເປັນດັດຂາດ. ສ່ວນຊາວເຫນືອກໍມີຄວາມເຫັນເປັນອັນ
ດຽວກັນ, ຄືຢາກໃຫ້ມີການແກ້ໄຂດັດແປງ ສິ່ງບໍ່ຈົບບໍ່ດີນີ້ ໂດຍທາງ
ຊອບທັມຕາມກົດຫມາຍ ແລະດ້ວຍສັນຕິວິທີ.

ເວລາທີ່ມີການເລື່ອນໄຫວຕໍ້ຕ້ານການມີຂ້າທາສນັ້ນ, ໄດ້ຊ່ວຍ
ໃຫ້ພວກຂ້າທາສຫັ້ງຫລາຍເກີດມີຄວາມຕື່ນຕົວ ໃນຖານະການເປັນຢູ່
ຂອງເຂົ້າເຈົ້າ ແລະກໍ່ພາກັນຫລົບຫນີຈາກນາຍຈ້າງຂອງຕົນ ໄປຢູ່
ທາງພາກເຫນືອ ຫລ້ວ້ານຊາຍແດນໄປຢູ່ປະເທດການາດາ. ໃນ
ຣະຫວ່າງປີ ໑໘໓໐, ໄດ້ມີການສ້າງທາງລັບ ຢູ່ຕາມທຸກໆບ່ອນໃນ
ທາງພາກເຫນືອ ເພື່ອເປັນຊ່ອງທາງໃຫ້ພວກຂ້າທາສ ໄດ້ຫລົບຫນີ
ຢ່າງສະບາຍ ຊຶ່ງທາງສາຍນີ້ເອີ້ນວ່າ ທາງຣົຖໄຟໃຕ້ດິນ ແລະພົ້ນ
ສໍາຣັດຈາກການສ້າງທາງນີ້ ໄດ້ປາກົດເຫັນ ໃນເຂດແດນຊອງຕະ
ວັນຕົກສຽງເຫນືອເກົ່າ. ຕັ້ງແຕ່ປີ ໑໘໓໐ ຫາປີ ໑໘໓໐ ປາກົດ
ວ່າ ໄດ້ມີພວກຂ້າທາດທີ່ຫລົບຫນີ, ແລະເຂົ້າມາອາໄສຢູ່ໃນຣັຖໂອ
ໄຮໂອ ປະມານ ๔๐,๐๐๐ ກວ່າຄົນ ແລະສະມາຄົມຕໍ້ຕ້ານການມີ
ຂ້າທາສກໍມີສະມາຊິກປະມານສອງພັນກວ່າຄົນໃນປີ ໑໘๔๐ ແລະໄດ້
ເພີ່ມຂຶ້ນເລື້ອຍໆຈົນຮອດສອງແສນກວ່າຄົນ.

ແມ່ນວ່າ ຈຸດປະສົງອັນດຽວ ຂອງຄນະຕໍ້ຕ້ານການມີຂ້າທາສ
ນັ້ນພຽງແຕ່ຢາກເຮັດໃຫ້ຜູ້ຄົນມີຄວາມສໍານຶກຕົວ ຕາມທາງຊອບທັມກໍ
ຕາມ, ແຕ່ຖ້າຈະເວົ້າເຖິງສ່ວນຮວມແລ້ວ ປະຊາຊົນ ທາງພາກ

ເຫມືອບໍ່ຮ່ວມມືໃນຂະບວນການຕໍ້ຕ້ານນີ້ ເພາະວ່າ ເຂົາເຈ້ົາມີອຸປ
ການຂອງເຂົາເຈ້ົາເອງທີ່ຈະຕ້ອງເຮັດຢູ່ແລ້ວ ດັ່ງນັ້ນເຂົາເຈ້ົາຈຶ່ງ
ຄິດວ່າບັນຫາຂ້າທາສນີ້ຄວນຈະແມ່ນໜ້າທີ່ຂອງພວກທີ່ຢູ່ທາງຣັຖພາກ
ໃຕ້ເປັນຜູ້ແກ້ໄຂ. ຄວາມປັ່ນປ່ວນ ທີ່ເກີດຈາກຂບວນການຕໍ້ຕ້ານ
ການມີຂ້າທາສນັ້ນຮ້າຍແຮງພໍສົມຄວນ ຈົນປາກົດວ່າຈະພາໃຫ້ມີການ
ແຕກສາມັກຄີກັນ, ຊຶ່ງເຮື່ອງນີ້ຈະຖືວ່າສຳຄັນຍິ່ງ ກວ່າການທຳລາຍ
ຣະບົບການມີຂ້າທາສອີກຊໍ້າ. ດັ່ງນັ້ນ ໃນປີ ໑໘໔໔, ການໄດ້
ຄອບຄອງຣັຖເທັກຊັສ ແລະເຂດແດນທາງດ້ານຕະເວັນຕົກສຽງໃຕ້
ນັ້ນ ກໍເນື່ອງມາຈາກໄຊຊນະສົງຄາມກັບປະເທດ ເມັກຊິໂກ ແລະ
ເຮື່ອງນີ້ໄດ້ພາໃຫ້ປັນຫາເຮື່ອງຂ້າທາສ ກາຍເປັນບົດບາດອັນສຳຄັນ
ໃນການເມືອງ. ຈົນເຖິງເວລານີ້, ປາກົດວ່າ ມີຂ້າທາສ ກໍຢູ່ແຕ່
ຕາມບາງເຂດທີ່ເຄີຍມີມາແລ້ວເທ່ົານັ້ນ. ໃນປີ ໑໘໔໐, ທາງຣັຖ
ມີຊຸຣີ ໄດ້ວາງຂອບເຂດຍຸຍາມໃຫ້ມີຂ້າທາສຢູ່ ແຕ່ບາງເຂດທີ່ມີແລ້ວ
ເທ່ົານັ້ນ ແລະຫ້າມແຜ່ຜາຍອອກໄປໃນຣັຖອື່ນ, ແຕ້ດ້ວຍການສົມມຸດ
ເຂດແດນທີ່ໄດ້ຄອບຄອງໃຫມ່ນີ້ ເປັນບ່ອນເຫມາະສົມ ສຳລັບການມີ
ທາສ ຊຶ່ງນັບວ່າເປັນເຂດແດນສ່ວນນຶ່ງ ຂອງສະຫະພັນທັງຫມົດ ຈຶ່ງ
ໄດ້ເລີ່ມຂຍາຍຣະບົບການມີທາສຂຶ້ນຢ່າງແທ້ຈິງ.

ພວກທີ່ຢູ່ທາງຣັຖພາກເຫມືອຫລາຍຄົນເຊື່ອວ່າ ຖ້າໃຫ້ຣັຖທີ່
ຍັງມີຂ້າທາສນີ້ຢູ່ໃກ້ກັນ, ຣະບົບການມີຂ້າທາສນີ້ ຄົງຈະເຊື່ອມແລະ

ຫມົດໄປເອງ. ຣັຖໃຫມ່ທີ່ມີຂ້າທາສຢູ່ ກໍຖືກຄັດຄ້ານບໍ່ໃຫ້ເຂົ້າຮ່ວມ ໃນສະຫະພັນ ໂດຍອ້າງເຖິງຖ້ອຍຖແລງ ຂອງທ່ານວໍຊິງຕັນ, ທ່ານ ເຈຟເຟີຊັນ, ແລະເທສບັນຍັດຂອງປີ ຈກຊກ ວ່າດ້ວຍການຫ້ານແຜ່ ຂຍາຍຂ້າທາສໄປທາງພາກຕະເວັນຕົກສຽງເຫນືອຊຶ່ງເປັນຂໍ້ຜູກມັດທີ່ ໄດ້ເຮັດມາກ່ອນ. ແມ່ນວ່າຣັຖເທັກຊັສນັ້ນ ໄດ້ຖືກຣັບເຂົ້າຮ່ວມໃນ ສຫະພັນໃນນາມຂອງຣັຖທີ່ມີຂ້າທາສ, ແຕ່ຣັຖແຄລິຟໍເນັຍ, ນິວເມັກ ຊິໂກ ແລະຣັຖຢູ່ຕາ, ບໍ່ມີຂ້າທາສເລີຍ. ເມື່ອສຫະຣັຖຕຽມພ້ອມທີ່ ຈະຄອບຄອງເຂດແດນສ່ວນນັ້ນ ໃນປີ ຈຊ້ຜ, ທາງການໄດ້ອອກ ຄວາມຄິດຄວາມເຫັນທີ່ຂັດແຍ້ງກັນ ລະຫວ່າງບຸກຄົນທີ່ຄນະວ່າຈະດຳ ເນີນການວິທີໃດດີ. ພວກທີ່ເຫັນພ້ອມກັບພວກຊາວໃຕ້ ກໍ່ຟ້າວສເນີ ວ່າ ດິນແດນທີ່ໄດ້ມາຈາກປະເທດເມັກຊິໂກຄວນຈະເປີດໂອກາດໃຫ້ ເປັນບ່ອນມີຂ້າທາສ, ແຕ່ພວກຊາວເຫນືອ ທີ່ຕໍ້ຕ້ານຣະບົບການມີຂ້າ ທາສໄດ້ສເນີວ່າ ເຂດແດນທີ່ໄດ້ໃຫມ່ນີ້ ຄວນຫ້ານບໍ່ໃຫ້ມີຂ້າທາສ. ອີກພວກນຶ່ງຊຶ່ງມີນະໂຍບາຍເກີ່ງໆກາງໆໄດ້ສເນີວ່າ ຢາກໃຫ້ມີການ ຜ່ອນຜັນຄືວ່າຈາກເຂດມິຊູຣີ ໄປຮອດແຄມຝັ່ງທະເລຂຶ້ນໄປຮອດທາງ ເຫນືອໃຫ້ເປັນຣັຖເສຣີຄືຣັຖທີ່ບໍ່ມີຂ້າທາສ ແລະລຸ່ມເຂດມິຊູຣີລົງມາ ທາງໃຕ້ໃຫ້ເປັນເຂດທີ່ມີຂ້າທາສ. ແຕ່ຄນະນຶ່ງທີ່ບໍ່ເຂົ້າກັບຝ່າຍໃດ ໄດ້ສເນີວ່າ ປັນຫານີ້ຄວນຈະຍົກໃຫ້ເປັນບັນຫາຂອງປະຊາຊົນ ຄືວ່າ ຣັຖບານຄວນອະນຸຍາດໃຫ້ພວກທີ່ຈະມາຕັ້ງຖິ່ນຖານ ໃນປະເທດນີ້ນຳ

ເອົ້າຂ້າທາສມາພ້ອມ ຫລືບໍ່ເອົາມາພ້ອມກໍດີ, ເມື່ອເຖິງເວລາແລ້ວ ປັນຫານີ້ຄວນຍົກໃຫ້ເຂົ້າເຈົ້າ ເປັນຜູ້ແກ້ໄຂເອງ. ຕໍ່ມາ, ປະຊາ ມະຕິທາງໃຕ້ກໍເອນອຽງໄປທາງແນວຄິດທີ່ວ່າ ຂ້າທາສບໍ່ມີສິດທີ່ຈະ ຢູ່ໃນເຂດແດນໃດໆທັງໝົດ, ແລະພວກທີ່ຢູ່ທາງເໜືອ ກໍມີຄວາມ ເຫັນເຊັ່ນດຽວກັນ. ໃນປີ ໑໘໔໘, ມີປະມານສາມແສນກວ່າຄົນ ໄດ້ລົງຄະແນນສຽງເອົາຜູ້ສມັກ ສັງກັດຢູ່ພັກແດນເໜືອ, ຈຶ່ງປະກາດ ວ່າ: "ນະໂຍບາຍທົດທສຸດນັ້ນຄືໃຫ້ວາງຂອບເຂດທີ່ຢູ່ ແລະບໍ່ສນັບ ສນຸນການມີຂ້າທາສ".

ການຄົ້ນພົບບໍ່ຄຳ ທີ່ຣັຖແຄລິຟໍເນັຍ ໃນເດືອນມະກະຣາ ປີ ໑໘໔໘, ໄດ້ເຮັດໃຫ້ນັກຂຸດຄຳທົ່ວໂລກຫລັ່ງໄຫລເຂົ້າມາໃນສຫະຣັຖ ໃນປີ ໑໘໔໙ ຮອດແປດຫມື່ນກວ່າຄົນ. ດັ່ງນັ້ນ ຣັຖແຄລິຟໍເນັຍຈຶ່ງ ໄດ້ກາຍເປັນປັນຫາສຳຄັນສຳລັບສະພາກົງແກຣສ ໃນການຈັດຕັ້ງຣະ ບຽບການປົກຄອງ ໃນເຂດແດນໃໝ່ນີ້. ຈຶ່ງຄວາມຫວັງຂອງຊາດ ແມ່ນຝາກໄວ້ນຳສະມາຊິກສະພາສູງ, ທ່ານແຮນຣິຄ ເພາະວ່າ ໃນເວລາທີ່ມີເຫດການຕ່າງໆນີ້ເກີດຂຶ້ນ ທ່ານໄດ້ພຍາຍາມຊອກຫາ ຊ່ອງທາງແກ້ໄຂ ສະຖານະການນີ້ໄວ້ໄດ້. ການຍຸຍານນີ້ (ແມ່ນ ທາງສະພາກົງແກຣສເປັນຜູ້ດັດແປງ) ຄືໄດ້ສເນີໃຫ້ຣັຖແຄລິຟໍເນັຍ ເຂົ້າຮ່ວມໃນສຫະພັນໃນນາມດິນແດນເສຣີ (ຄືຫ້າມການມີຂ້າທາສ) ແລະສ່ວນທີ່ເຫລືອຢູ່ໃຫ້ຮ່ວມເຂົ້າໃນສຫະພັນ ແຕ່ແບ່ງເປັນເຂດແດນ

ສອງບ່ອນ ຄື ຣັຖເມັກຊິໂກ ແລະຢຸຕາ, ແຕ່ບໍ່ໄດ້ກ່າວເຖິງການມີ
ຂ້າທາສແຕ່ຢ່າງໃດ; ແລະການຕໍ່ວ່າທັກທ້ວງທີ່ວ່າ ຢາກໃຫ້ຣັຖເຫັກ
ຊັສຮ່ວມເຂົ້າເປັນສ່ວນນຶ່ງ ຂອງຣັຖນິວເມັກຊິໂກນັ້ນ ຄວນຈະອະນຸ
ໂລມໃຫ້ໄດ້ ໂດຍການຈ່າຍເງິນ ສິບລ້ານໂດລາ; ຄວນຈະຈັດຕັ້ງ
ເຄື່ອງຈັກທີ່ດີແນວໃດແນວນຶ່ງ ສຳລັບຈັບກຸມຫວກຂ້າທາສທີ່ລັກຫນີມາ
ສິ່ງໃຫ້ນາຍຈ້າງຂອງເຂົາເຈົ້າ, ແລະຄວນລົບລ້າງການຂ້າທາສຢູ່
ໃນເຂດໂກລັມເບັຍ. ບາດກ້າວໃນການຜ່ອນຜັນຄວາມຕຶງຄຽດຣະ
ຫວ່າງຄົນໃນເຂດແຄ້ວຕ່າງໆນີ້ ໄດ້ປາກົດຂຶ້ນໃນປີ ໑໗໔໐ ແລະ
ເປັນທີ່ຮູ້ຈັກດີໃນພົງສາວະດານອະເມຣິກາ ເມື່ອອອກເປັນກົດໝາຍ
ອອກມາໃຊ້ແລ້ວ ປະຊາຊົນທົ່ວປະເທດຕ່າງກໍດີໃຈ ທີ່ໄດ້ຖືກແກ້ໄຂລ
ລ່ວງໄປໂດຍດີ.

ກ່ອນຈະມີການຕົກລົງຣັບເອົາກົດໝາຍໃໝ່ນີ້ອອກໃຊ້ ກໍກິນ
ເວລາເກືອບສາມປີ. ໃນຂນະທີ່ຍັງດຳເນີນການຢູ່ນັ້ນ ຄວາມຕຶງ
ຄຽດ ຍ້ອນລັກຫນີຈາກນາຍຈ້າງຂອງເຂົາເຈົ້ານັ້ນ ພາໃຫ້ພວກຊາວ
ເຫນືອຄັດຄ້ານເປັນທີ່ສຸດ. ເຂົາເຈົ້າປະຕິເສດບໍ່ໃຫ້ການຮ່ວມມືໃນ
ການຈັບກຸມນີ້, ຕຣົງກັນຂ້ານ ເຂົາເຈົ້າກັບຊ່ວຍໃຫ້ພວກຂ້າທາສ
ລັກຫນີໄປຊ້ຳ, ທາງຣົຖໄຟໃຕ້ດິນໄດ້ກາຍເປັນແຫລ່ງຫລົບຫລີກຂອງ
ພວກຂ້າທາສຢ່າງດີແລະປອດໄພດ້ວຍ.

## ຄວາມຂັດແຍ້ງກັນລະຫວ່າງຄົນໃນຊາດ

ໃນຂນະນີ້, ຄວາມໂນ້ມນ່ຽວທາງວັນນະຄະດີໄດ້ຊ່ວຍໃຫ້ປະຊາຊົນໄດ້ເຫັນຊ່ອງທາງຂອງການແບ່ງແຍກຊຶ່ງມີຂຶ້ນຣະຫວ່າງຄົນໃນຊາດ ແລະໄດ້ມີການກ່າວໂທສກັນ ດ້ວຍຄວາມຮູ້ສຶກອັນຄຽດແຄ້ນຕໍ່ການມີມະນຸສທັມ ຊຶ່ງເຣື່ອງນີ້ຫມາຍເຖິງການແຕກແຍກສາມັກຄີຂອງຄົນໃນຊາດດ້ວຍ. ພວກທີ່ເຊື່ອວ່າ ບັນຫາເຣື່ອງການມີຂ້າທາສນີ້ຈະໄດ້ຖືກແກ້ໄຂເອງເມື່ອເຖິງເວລາ, ໄດ້ຝາກຄວາມຫວັງ ໄວ້ກັບນັກການເມືອງ ແລະບັນນາທິການຫນັງສືພິມ. ເຂົາເຈົ້າບໍ່ສາມາດຫວຍເຫດການຂ້າງຫນ້າໄດ້ວ່າ ຫນັງສືເຣື່ອງຫົວດຽວຈະສາມາດມີນຳ້ຫນັກ ແລະອິດທິພົລເທົ່າຜູ້ອອກກົດຫມາຍ ຫລືຫນັງສືພິມປະຈຳວັນໄດ້. ນັກແຕ່ງກາບກອນ ວິດເຕັຍ, ໂລແຣລ, ໄບຣອັນ ເອເມີຊັນ ແລະລອງແຟລໂລ ໄດ້ຂຽນສແດງຄວາມກຽດຊັງ ຣະບົບການມີຂ້າທາສອອກມາໃນບົດກະວີຂອງເຂົາເຈົ້າ. ແຕ່ແນວໃດກໍດີ, ໃນລະຫວ່າງປີ ຈຫຼ໔ຈ ນັ້ນ ບາງຄົນຄິດວ່າ ຫນັງສືນະວະນິຍາຍນັ້ນຈະຂຽນຂຶ້ນ ແນວໃດ ກໍໄດ້. ໃນປີດຽວນັ້ນ, ໄດ້ມີຜູ້ຂຽນເຣື່ອງສັ້ນເຣື່ອງນຶ່ງ ກ່ຽວກັບການຕາຍ ຂອງທາສຄົນນຶ່ງ ຊຶ່ວ່າ "ລູງທອມ" ເຣື່ອງນີ້ມີຜູ້ຄົນສົນໃຈເປັນທີ່ສຸດ ຈົນວ່ານັກຂຽນສະຕີຜູ້ນຶ່ງ ມີນາມວ່າ ແຣຣິແອດ ບີເຊີສະໂຕ ໄດ້ຂຽນເຣື່ອງນີ້ ເປັນລາຍສັປດາຕິດຕໍ່ກັນມາຕັ້ງແຕ່ເລີ້ມຕົ້ນຊີວິດຂອງລູງທອມ ຈົນຣອດວາຣະສຸດທ້າຍ ຂອງ

ທາສຜູ້ນີ້.

ໂດຍທົ່ວໆໄປແລ້ວ ຫລາຍຄົນເຫັນວ່າ ປີ້ມທີ່ແຕ່ງຂຶ້ນມານີ້ ເປັນສິ່ງພິສດານທີ່ສຸດ. ນັກຂຽນສະຕີຄົນນີ້ເປັນລູກສາວຂອງນັກສະ ແດງທັມຜູ້ນຶ່ງ, ແຕ່ກ່ອນນີ້ ບໍ່ມີໃຜລ່ວງຮູ້ຄວາມສາມາດ ໃນການຂີດ ຂຽນຂອງນາງເລີຍ ນອກຈາກສາມີຂອງນາງ ຄົນດຽວ ເທົ່ານັ້ນ. ໃນການຂຽນທຳອິດນັ້ນ ນາງຄິດວ່າຈະຂຽນພຽງແຕ່ເຣື່ອງສັ້ນໆເທົ່ານັ້ນ ແຕ່ເມື່ອນາງໄດ້ຂຽນເຣື່ອງຈົບແລ້ວ ຮູ້ສຶກວ່ານີ້ຜູ້ສົນໃຈຫລາຍ ທີ່ສຸດ. ໃນປີ ຈຊ້ຄ ນາງໄດ້ພິມປີ້ມນີ້ອອກຈຳຫນ່າຍ ແຕ່ກ່ອນສິ້ນປີ ນັ້ນ ກໍໄດ້ມີການຮຽກຮ້ອງໃຫ້ພິມປີ້ມນີ້ອອກຈຳຫນ່າຍອີກ.

ຫນັງສືເຣື່ອງ "ຕູບນ້ອຍຂອງລູງທອມ" ໄດ້ໃຫ້ຄວາມເປັນ ທັມ ແລະເລົ່າເຖີງຄວາມເອື້ອເຟື້ອທີ່ພວກນາຍຈ້າງມີຕໍ້ຂ້າທາສ; ຜູ້ ທີ່ກົດຂີ່ຂົ່ມເຫັງທາສຢ່າງທາຮຸນນັ້ນ ບໍ່ມີລົ້ນທ່ານສີມອນ ເລີກີ, ຊຶ່ງ ເດີນແລ້ວ ເປັນຄົນທີ່ມາຈາກທາງພາກເຫນືອ. ແຕ່ນັກຂຽນສະຕີ ຜູ້ນີ້ໄດ້ຊີ້ໃຫ້ເຫັນປະຈັກຕາເຖີງຄວາມໂຫດຮ້າຍອັນຄວບຄູ່ໄປກັບການ ເປັນທາສ ແລະບໍ່ມີວັນທີ່ຈະມັກກ່ຽວກັບມາໄດ້ ໃນສັງຄົມທີ່ຊົນຊັ້ນທີ່ ເປັນເສຣີ ແລະສັງຄົມຊົນຊັ້ນທາສ. ພວກທີ່ຢູ່ທາງເຫນືອ ສົນໃຈ ເຣື່ອງນີ້ເປັນທີ່ສຸດ. ປີ້ມຫົວນີ້ ບໍ່ແມ່ນຈຳຫນ່າຍຢູ່ອະເມຣິກາ ແຫ່ງ ດຽວເທົ່ານັ້ນ, ຍັງໄດ້ເອົາອອກໄປຈຳຫນ່າຍ ຢູ່ປະເທດ ອັງກິດ ຝຣັ່ງເສດ ແລະໄດ້ແປເປັນພາສາອື່ນໆທີ່ເປັນທີ່ນິຍົມທົ່ວໂລກ.

ທຸກໆບ່ອນມີຄວາມເຫັນພ້ອມ ໃນການຕໍ້ຕ້ານການມີຂ້າທາສ, ແລະພາໃຫ້ມີຄວາມຮູ້ສຶກຜິດຊອບ ແລະສົ່ງສານເພື່ອນມະນຸດຜູ້ທີ່ຖືກທໍ ຣະມານຢ່າງໂຫດຮ້າຍ.

ຈາກເວລານັ້ນ ເປັນຕົ້ນມາ, ບັນຫາຂ້າທາສ ກໍກາຍເປັນ ເຣື່ອງທີ່ອຶດທຶນບໍ່ໄດ້ແລ້ວ. ກົດໝາຍທີ່ແຕ່ງຂຶ້ນໃນປີ ໑໗໔໐ ນັ້ນກໍ ຍັງເບົາບາງເຫລືອແຄ່ເລັກນ້ອຍ, ແລະໃນປີ ໑໗໔໔ ກົດໝາຍສະ ບັບເກົ່າໄດ້ລົບລ້າງ ການມີຂ້າທາສໃນບາງເຂດແຄມ. ກ່ຽວກັບກໍ ຣະນີນີ້ ຕໍ່ມາກໍໄດ້ມີການແຜ່ຂຍາຍໄປໃນເຂດເມຍຣາສກາ ແລະໄດ້ ກາຍເປັນບ່ອນຜິດຖຽງກັນ ອັນຂົມຂື່ນທີ່ສຸດ ເພາະພວກທີ່ຢູ່ທາງຣັຖ ພາກໃຕ້ຢາກຝ່າຝືນກົດໝາຍ ມີຊຸຣິອ່າດ້ວຍການແບ່ງເຂດແຄມໃນ ປີ ໑໗໔໐ ຈຶ່ງໄດ້ບົ່ງໄວ້ວ່າ ຫ້າມບໍ່ໃຫ້ມີການແຜ່ຂຍາຍຂ້າທາສຂຶ້ນ ໄປທາງເຫນືອຂອງຮ່ອມຫ້ວຍມີຊຸຣິ, ແຕ່ເມື່ອມີທາສຢູ່ທີ່ນັ້ນຢ່າງແທ້ ຈິງແລ້ວ, ພວກຊາວເຫນືອ ກໍພາກັນຂັດຂວາງຢ່າງເຕັມທີ. ຕາມ ເຂດທີ່ດິນອຸດົມສົມບູນດີ ແລະເຫມາະແກ່ການປູກຝັງ ເຊັ່ນຣັຖເຄັນ ຊັສ ແລະຣັຖເມຍຣາສກາ, ຈຶ່ງຣັຖທັງສອງນີ້ ໄດ້ເຣັດໃຫ້ພວກທີ່ຈະ ມາຕັ້ງຖິ່ນຖານຈຶ່ງເປັນຊາວເຫນືອເຊື່ອວ່າ ຖ້າວ່າທາງເຂດນີ້ໄດ້ຮັບ ການປັບປຸງອີກເລັກນ້ອຍ, ຜູ້ຄົນຈະຫລັ່ງໄຫລ ເຂົ້າມາຢູ່ໃນເຂດນີ້ ແລະກໍຈະມີການສ້າງຖນົນຫົນທາງ ແລະທາງຣົຖໄຟຜ່ານຈາກທາງ ຊິກາໂກໄປຫາແຄມຝັ່ງທະເລ. ຕາມກົດໝາຍຂອງເມືອງ ມີຊຸຣິ

ແລ້ວ, ທາງເຂດນັ້ນຫ້າມບໍ່ໃຫ້ມີຂ້າທາສປະປົນຢູ່ເດັດຂາດ, ແຕ່ໃນ
ບາງບ່ອນໃນເຂດ ມິຊຸຣິ ທີ່ມີການໃຊ້ຂ້າທາສຢູ່ນັ້ນ ກໍລັດລ້ານບໍ່ໃຫ້
ຣັຖແຄນຊັສ ຊຶ່ງມີເຂດແດນຕໍ່ກັບບ່ອນທີ່ເຂົາຢູ່ນັ້ນ ເປັນເຂດເສຣີ
ເພາະວ່າ ຣັຖມິຊຸຣິຈະມີຣັຖອ້ອມແອ້ມສາມບ່ອນ ທີ່ປາສຈາກຂ້າທາສ
ແລະຈະພາໃຫ້ມີການເຄື່ອນໄຫວຊຶ່ງຈະພາໃຫ້ບ່ອນທີ່ພວກເຂົາເຈົ້າຢູ່
ນັ້ນເປັນຣັຖສເມີກັນ. ໃນເວລານັ້ນ, ພວກຜູ້ແທນຊາວເມືອງມິຊຸຣິ
ຊຶ່ງຖືກຫນຸນຫລັງ ໂດຍພວກທີ່ຢ່າງທາງຣັຖພາກໃຕ້, ໄດ້ພຍາຍາມ
ທຸກວິທີທາງເພື່ອຂັດຂວາງການຂຍາຍເຂດແດນດັ່ງກ່າວນີ້.

## ຄວາມແຕກແຍກກັນມີຫລາຍຂຶ້ນ

ສະມາຊິກສະພາສູງຜູ້ຊົ່ວຄຸນວຸທິ ທີ່ມາຈາກຣັຖ ອິລລິນອຍ ຄື
ທ່ານສະຕີເຟັນ ເອ ດິກລາສ໌ໄດ້ຕັດທາງຜ່ານການລັດລ້ານຕ່າງໆນີ້
ໃນປີ ໑໘໔໔ ໂດຍໄດ້ຖຽງວ່າຕາມຫນັງສືສັນຍາ ໃນປີ ໑໘໔໐ ນັ້ນ
ໄດ້ບົ່ງໄວ້ວ່າ ຣັຖຢູຕາ ແລະນິວເມັກຊິໂກ ມີສິດເລືອກເອົາວ່າຈະ
ເປັນຣັຖທີ່ມີຂ້າທາສ ຫລືຣັຖເສຣີ, ແຕ່ວ່າໄດ້ນຳເອົາຫນັງສືສັນຍາ
ຂອງຣັຖມິຊຸຣິ ມາໃຊ້ແທນ, ແລະແຜນການຂອງດິກລາສ໌ນັ້ນ ກໍຄື
ຢາກໃຫ້ຣັຖທັງສອງນີ້ເປັນຣັຖທີ່ມີຂ້າທາສ. ຢ່າງໃດກໍດີ ປະຊາຊົນ
ທີ່ຢູ່ໃນຣັຖນີ້ຈະເປັນຜູ້ຕັດສິນໃຈວ່າ ຣັຖຂອງຕົນຈະເຂົ້າຮ່ວມໃນສະ

ພັນ ໃນນາມຣັຖເສຣີ ຫລືຣັຖທີ່ມີຂ້າທາສ. ປະຊາຊົນຢູ່ທາງພາກ ເຫນືອໄດ້ກ່າວຫາທ່ານເດີກລາສ່ວ່າ ທີ່ເຂົາເຈົ້າສນັບສນູນພວກທາງ ໃຕ້ ກໍເພາະຫວັງຈະໄດ້ຄອງຕຳແຫນ່ງປະທານາທິບໍດີ ໃນປີ ຈຊ້ຜ ຊຶ່ງແນ່ນອນທີ່ສຸດ ຄວາມໃຝ່ຝັນໃນເຣື່ອງການເມືອງຂອງເຂົານັ້ນຍັງ ມີຢູ່ບໍ່ນ້ອຍເຫມືອນກັນ. ແຕ່ຖ້າເຂົາຫາກຍັງເຊື່ອວ່າ ພວກທີ່ຢູ່ທາງ ເຫນືອນັ້ນຈະຍອມຮັບແຜນການຂອງເຂົາແລ້ວ, ເຂົາກໍຈະບໍ່ຫລອກ ລວງຕົວເອງໄວເກີນໄປ. ຖ້າຈະເປີດໂອກາດ ໃຫ້ຣັຖທີ່ມີທີ່ງອັນ ກວ້າງໃຫຍ່ເຊັ່ນນີ້ມີຂ້າທາສຢູ່ ກໍຈະພາໃຫ້ຜູ້ຄົນຫລາຍລ້ານຄົນຄຽດ ແຄ້ນແລະບໍ່ຍອມໃຫ້ອະໄພເດັດຂາດ ຈົນມີການໂຕ້ຖຽງກັນຢ່າງເຄັ່ງ ຄຽດທີ່ເຮັດໃຫ້ຮ່າງກົດຫມາຍນີ້ ມີຄວາມກ້າວຫນ້າກ່ຽວກັບເຣື່ອງນີ້. ຫນັງສືພິມ ຈາກຣັຖເສຣີໄດ້ອອກບົດຄວາມປະນາມການກະທຳເຊັ່ນນີ້ ຢ່າງຄຶກໂຄມ ແລະນັກສອນສາສນາທາງເຫນືອໄດ້ໃຫ້ນັກຮຽນນັບພັນ ໂຄສະນາກ່າວຮ້າຍປ້າຍສີເຣື່ອງນີ້ ແລະນັກທຸຣະກິດຜູ້ຊຶ່ງເຄີຍເປັນ ມິດຕໍ່ພວກທາງໃຕ້ຕ່າງກໍຕີໂຕ້ອອກຫ່າງ.

ຕໍ່ມາ ໃນຍາມເຊົ້າຂອງເດືອນພຶສພາ, ກົດຫມາຍນີ້ໄດ້ຜ່ານ ສະພາສູງໃນທ່ານກາງສຽງປື້ນ ຊຶ່ງສະແດງຄວາມປີຕິຍິນດີ ແລະໄຊ ຊນະຂອງຊາວພາກໃຕ້. ທ່ານແຊລມອນ ພີ.ເຊັສ່, ຜູ້ນຳຂະບວນ ການຕໍ້ຕ້ານການມີຂ້າທາສ ໄດ້ໃຫ້ຄວາມເຫັນວ່າ "ປັດຈຸບັນນີ້ເຂົາ ສລອງໄຊຊນະ, ແຕ່ຜົນສະທ້ອນນັ້ນ ຈະບໍ່ສຸດຈັກເທື່ອ ຈົນຕາບໃດທີ່

ຣະບົບການມີຂ້າທາສນັ້ນຈະດັບສູນໄປ". ຄາວເມື່ອທ່ານເດີກລາສ້ ໄດ້ໄປປາກົດຕົວຢູ່ເມືອງ ຊິກາໂກນັ້ນ, ທ່ານຫວັງຈະກ່າວຄຳປາໃສ ເພື່ອທຳຄວາມເຂົ້າໃຈກັບປະຊາຊົນ, ແຕ່ເຫດການໄດ້ເປັນໄປຢ່າງ ບໍ່ຄາດຝັນ ຄືວ່າ ເຣືອກຳປັ່ນທີ່ຫຽບທ່າຢູ່ນັ້ນຕ່າງກໍເອົາທູງລົງ ເຄື່ງ ເສົາ ສຽງລະຄັງໃນໂບດດັ່ງສະນັ່ນຢູ່ເປັນຊົ່ວໂມງ, ແລະຝູງຊົນປະ ມານສິບພັນຄົນສີ່ງສຽງຮ້ອງກ້ອງດັງຢ່າງອຶກກະທຶກເພື່ອບໍ່ໃຫ້ຜູ້ຄົນໄດ້ ຍິນສຽງຂອງທ່ານເດີກລາສ້.

ຜົນຈາກການທຳລາຍຄວາມຕັ້ງໃຈຂອງທ່ານ ເດີກລາສ້ຄັ້ງນີ້ ນັບວ່າສຳຄັນທີ່ສຸດ. ພັກວິກ ຊຶ່ງມີທ່າທີສນັບສນູນການຂຍາຍຣະບົບ ການມີຂ້າທາສ, ກໍໄດ້ສລາຍຕົວ ແລະໄດ້ຈັດຕັ້ງພັກການເມືອງໃຫມ່ ຂຶ້ນ ຊຶ່ວ່າ ພັກຣີພັບບລິກແກນ ແລະການຮຽກຮ້ອງໃນຂັ້ນຕົ້ນຂອງ ເຂົາເຈົ້າກໍຄື ຂໍຮ້ອງໃຫ້ຍຸບຣະບົບຂ້າທາສ ທົ່ວທຸກບ່ອນ. ໃນປີ ຈຊ ຄ ຝ, ພັກນີ້ໄດ້ແຕ່ງໃຫ້ທ່ານ ຈອນເຟຣມອນ ເຂົ້າສມັກເປັນຜູ້ຊິງ ຕຳແຫນ່ງປະທານາທິບໍດີ, ແຕ່ບໍ່ສົມຫວັງ ໃນການເລືອກຕັ້ງຄັ້ງນີ້. ແມ່ນວ່າ ພັກນີ້ຈະເສັຍໄຊຊນະ ໃນການເລືອກຕັ້ງກໍຕາມ, ແຕ່ພັກ ການເມືອງໃຫມ່ນີ້ກໍໄດ້ຮັບການສນັບສນູນຢ່າງຫລວງຫລາຍຈາກພວກ ທີ່ຢູ່ທາງຮັຖພາກເຫນືອ. ຜູ້ນຳຂອງຮັຖເສຣີເຊັ່ນ ທ່ານ ເຊສ ແລະທ່ານ ວິລລຽມ ຊໍເວິດ ກໍມີອິດທິພົນຫລາຍຢູ່ບໍ້ນ້ອຍ. ນອກ ຈາກນີ້ກໍຍັງມີນັກກົດຫມາຍອີກຄົນນຶ່ງ ຊຶ່ວ່າ ອາບຣາຮັມ ລິງຄອນ

24/VII
ห้ามจำหน่าย

ຊຶ່ງໄດ້ໃຫ້ແນວຄິດ ທີ່ດີທີ່ສຸດໃນເຣື່ອງນີ້. ການຫລັ່ງໄຫລເຂົ້າມາຢູ່ຣັຖເຄັນຊາສ ຂອງພວກທີ່ມີຂ້ອຍຂ້າທາສ ແລະພວກທີ່ມາຈາກທາງເຫນືອຊຶ່ງຄັດຄ້ານຕໍ່ການມີຂ້າທາສ ໄດ້ພາໃຫ້ເຂົາເຈົ້າຕັ້ງໂຕເປັນປໍ່ຣະປັກຕໍ່ກັນແລະຜົນຈາກການຂັດແຍ້ງ ແລະຕໍ່ສູ້ກັນດ້ວຍອາວຸດໄດ້ພາໃຫ້ດິນແດນແຫ່ງນີ້ມີຊື່ວ່າ ແຄນຊັສ ຫລັ່ງເລືອດ.

ນາງສໂຕ, ນັກຂຽນສະຕີຄົນນຶ່ງໄດ້ຂຽນຂໍ້ຄວາມຕອນນຶ່ງວ່າ "ທຸກໆຊາດທີ່ບໍ່ໃຫ້ຄວາມຍຸຕິທັນ ແກ່ຄົນໃກ້ຊິດແລ້ວ, ຈະຕ້ອງປະສົບກັບຄວາມສັ່ນສະເທືອນຢ່າງຮ້າຍແຮງທີ່ສຸດ". ເປັນເວລາຫລາຍປີຜ່ານໄປ, ເຫດການເຊັ່ນນີ້ໄດ້ພາໃຫ້ຊາດຕ້ອງມີການປ່ຽນແປງຢ່າງຫລີກລ່ຽງບໍ່ໄດ້. ໃນປີ ຈຊ ๔ກ ສານສູງໄດ້ປະກາດຕັດສິນໃຈກ່ຽວກັບເຣື່ອງຂອງ ເດຣດສະກ້ອດ ຊຶ່ງ ສະກ້ອດໄດ້ເປັນຂ້າທາສຢູ່ຣັຖມິຊຸຣີ ແລະຊາວປີກ່ອນນັ້ນ ກໍຖືກນາຍຈ້າງພາໄປຢູ່ຣັຖອີລລິນອຍ ແລະວິສຄອນຊິນ ຊຶ່ງເຂດແດນດັ່ງກ່າວນີ້ໄດ້ຫ້ານການມີຂ້າທາສ. ເມື່ອກັບຄືນເມືອມິຊຸຣີແລ້ວ ກໍເກີດບໍ່ມີຄວາມພໍໃຈກ່ຽວກັບເຣື່ອງທີ່ດິນຂອງເຂົາ, ຈຶ່ງໄດ້ຢື່ນຟ້ອງສານ ເພື່ອຮຽກຮ້ອງເອົາສິດທິຂອງການເປັນພົລເມືອງຂອງຣັຖນີ້ຄືນ. ໃນຄະດີນີ້, ອຳນາດສານທາງໃຕ້ໄດ້ຕັດສິນວ່າ ການກັບຄືນມາຍັງຣັຖ ທີ່ມີຂ້າທາສ ໂດຍຄວາມສມັກໃຈນັ້ນ, ສະກ້ອດຈະຕ້ອງເສັຍເສຣີພາບ ແລະນອກຈາກນີ້ ສານນີ້ຍັງຫ້ານບໍ່ໃຫ້ສະພາກົງແກຣສ ພຍາຍາມຫ້ານການມີຂ້າທາສໃນເຂດແດນທີ່ມີ

ແລ້ວ.

ການຕັດສິນຂອງສານເທື່ອນີ້ໄດ້ພາໃຫ້ມີຄວາມຕື່ນເຕັ້ນຢູ່ທາງ
ພາກເຫນືອທີ່ສຸດ ເພາະວ່າ ແຕ່ໃດໆມາ ສານບໍ່ເຄີຍ ຖືກປະນາມ
ຢ່າງຮ້າຍແຮງເຫມືອນຄັ້ງນີ້ເລີຍ. ສຳລັບພວກທີ່ສົງກັດຢູ່ພັກ ດ
ໂມແຄຣດ, ທາງໃຕ້ຖືວ່າ ເຮື່ອງນີ້ ເປັນໄຊຊນະ ອັນຍິ່ງໃຫຍ່,
ເພາະວ່າສານໄດ້ມີອຳນາດ ໃນການຕັດສິນເຮື່ອງຂ້າທາສ ໃນເຂດ
ແດນຕ່າງໆ. ຈົນເຖິງເວລານີ້, ທ່ານອາຍຣາຣັມ ລິງຄອນ ຈຶ່ງ
ກາຍເປັນນັກກົດຫມາຍ, ແລະນັກການເມືອງທີ່ມີຊື່ສຽງ ໃນຕະວັນ
ຕົກພາກກາງ ເພາະວ່າ ແຕ່ໃດໆມາ ທ່ານລິງຄອນຖືວ່າ ຣະ ບົບ
ການມີຂ້າທາສ ກໍຄືການກະທຳອັນຊົ່ວຮ້າຍທີ່ສຸດ, ແລະໃນການກ່າວ
ຄຳປາໄສ ຂອງທ່ານທີ່ຣັຖອິລລິນອຍ ໃນປີ ໑໘໔໔ ນັ້ນ, ທ່ານລິງ
ຄອນກ່າວວ່າ ກົດຫມາຍທົ່ວໆໄປ ໃນຊາດຈະຕ້ອງຫມັ້ນຢູ່ໃນຫລັກ
ການຂອງບັນພະບຸຣຸດຜູ້ສ້າງສາທາຣະນະຣັຖນີ້ ຄືວ່າບໍ່ໃຫ້ມີຂ້າທາສ
ໃນດິນແດນແຫ່ງນີ້ ແລະຖ້າມີກໍຈະຕ້ອງຖືກທຳລາຍ ໃຫ້ພົ້ນໄປ.
ທ່ານຍັງໄດ້ກ່າວຕໍ່ໄປອີກວ່າ, ຫລັກການຂອງການເປັນອະທິປະໄຕ
ລົບທົ່ວໄປນັ້ນເປັນພຽງຂອງຈອມປອມ ເພາະການມີຂ້າທາສໃນເຂດ
ແດນພາກຕະວັນຕົກນັ້ນບໍ່ພຽງແຕ່ເປັນບັນຫາຂອງຊາວບ້ານເທົ່ານັ້ນ
ແຕ່ຍັງເປັນບັນຫາຂອງສະຫະຣັຖ ສ່ວນຮວມດ້ວຍ. ຄຳປາໃສຂອງ
ທ່ານນີ້ໄດ້ໂດ່ງດັງ ໄປຮອດທົ່ວໆໄປ ທາງພາກຕະວັນຕົກ. ຕໍ່

ຈາກນັ້ນມາອີກສີ່ປີ, ທ່ານລິງຄອນກໍຖືກຄັດຄ້ານໃຫ້ເປັນສະມາຊິກສະພາສູງແທນທ່ານ ເດີກລາສ໌ ເນື່ອງຈາກວ່າ ການກ່າວຄຳປາໃສໃນການໂຄສະນາຫາສຽງເທື່ອນີ້ ເປັນປະໂຍຄຄັ້ງທຳອິດທີ່ທ່ານໄດ້ກ່າວເຖິງພື້ນຖານຂອງປະວັດສາດອະເມຣິກັນໃນເຈັດປີຈະມານີ້:

## ທ່ານລິງຄອນໄດ້ກ່າວໂຈມຕີຣະບົບການມີຂ້າທາສ

"... ສະມາຊິກໃນຄອບຄົວດຽວກັນ ທີ່ຜິດຖຽງ ແລະແຕກແຍກກັນນັ້ນຈະບໍ່ຢູ່ໄດ້ດົນ". ຂ້າພະເຈົ້າເຊື່ອວ່າ ຣັຖບານນີ້ຈະບໍ່ຍືນຍົງຢູ່ເລື້ອຍໄປ ຕາບໃດທີ່ຍັງມີສະພາບເຄິ່ງທາສເຄິ່ງເສຣີຢູ່ຢ່າງນີ້, ແຕ່ຂ້າພະເຈົ້າບໍ່ໄດ້ກະໄວ້ວ່າ ສະຫະພັນນີ້ຈະໄດ້ຮັບການແກ້ໄຂ ແລະຂ້າພະເຈົ້າບໍ່ໄດ້ກະໄວ້ວ່າ ຄອບຄົວນີ້ຈະຫລົ້ມຈົມ, ແຕ່ຂ້າພະເຈົ້າຫວັງວ່າ ການແຕກແຍກນີ້ຈະສິ້ນສຸດລົງໃນມື້ນຶ່ງ".

ທ່ານລິງຄອນ ແລະທ່ານເດີກລາສ໌ ໄດ້ຖືກຖຽງແລະໂຕ້ຕອບກັນປະມານເຈັດຍັນຫາ ໃນຣະດູຮ້ອນ ແລະຣະດູໃບໄມ້ບົ່ງ ໃນປີ ໑໘໔໘. ໃນເມືອງອັນແຫ້ງແລ້ງຂອງຣັຖ ອິລລິນອຍ ຕາມໝູ່ບ້ານນ້ອຍ, ຕາມໄຮ່ ແລະສວນໝາກສາລີ, ພວກຊາວໄຮ່ຊາວນາແລະຄອບຄົວຂອງເຂົາເຈົ້າ ໄດ້ຄອຍຖ້າເບິ່ງຣົຖປະຈຳທາງ ແລະຣົຖມ້າ ແລະບາງຄອບຄົວກໍຍ່າງໄປເບິ່ງການມາຢ້ຽມຢາມຂອງສະມາຊິກສະພາສູງ ຊຶ່ງແມ່ນທ່ານ ເດີກລາສ໌ພ້ອມກັບຂະບວນພັກເດໂມແຄຣຕກຳ

ລ້ວພາກັນເດີນທາງໄປຕາມເສັ້ນທາງນີ້. ທ່ານດິກລາສ໌ນັ່ງຢູ່ເທິງ
ຫລັງຄາຣົຖມ້າຢ່າງສງ່າຜ່າເຜີຍ ແລະມີຊື່ວ່າເປັນນັກກ່າວສຸນທອນ
ພິດທີ່ຫນ້າຟັງທີ່ສຸດ ໃນທຸກຖ້ອຍຄຳທີ່ທ່ານກ່າວອອກມາກໍເຕັມໄປດ້ວຍ
ຄວາມໄວ້ວາງໃຈ ແລະຢ່າງສລາດຫລັກແຫລມ ຊຶ່ງທຸກໆອະຣິຍະບົດ
ຂອງທ່ານກໍເຕັມໄປດ້ວຍຄວາມເຂັ້ມແຂງແລະການຍັດຂວາງ. ສ່ວນ
ທ່ານລິງຄອມນັ້ນໄດ້ຢ່າງເອົາ ຈົນເປັນຮ່ອງຮອຍ ແລະການກະທຳ
ເຊັ່ນນີ້ໄດ້ພາໃຫ້ທ່ານດັ່ນຢູ່ໃນທ່ານກາງຝູງຊົນ ແລະຖ້ອຍຄຳຂອງ
ທ່ານທີ່ກ່າວອອກມານັ້ນ ກໍປະປົນດ້ວຍຄວາມຮູ້ສຶກເສົ້າໆ. ພາລະ
ການໂຈມຕີ ຫລົບລ້ານເປັນຫນ້າທີ່ຂອງທ່ານ ເພາະທ່ານບໍ່ພຽງແຕ່
ເປັນຜູ້ລົບລ້ານການຄອງຕຳແຫນ່ງ ໃນສະພາສູງຂອງທ່ານດິກລາສ໌
ເທົ່ານັ້ນ, ທ່ານຍັງເປັນໂຄສົກ ຂອງພັກການເມືອງໃຫມ່ອີກດ້ວຍ.
ໃນການຖົກຖຽງອັນເຜັດຮ້ອນນີ້ ບໍ່ມີໃຜເລີຍຈະລືມການໂຕ້ຖຽງຂອງ
ບຸຣຸດທັງສອງຄົນນີ້. ແມ່ນວ່າ ດິກລາສ໌ໄດ້ຖືກລົບເລືອກ ໃຫ້ຄອງ
ຕຳແຫນ່ງສະມາຊິກສະພາສູງອີກເທື່ອນຶ່ງກໍຕາມ, ແຕ່ທ່ານລິງຄອນ
ຍັງໄດ້ຮັບຕຳແຫນ່ງເປັນຕົວແທນຄົນນຶ່ງຂອງຊາດ.

ຈາກນັ້ນມາບໍ່ດົນ, ການຜິດຖຽງກັນ ຣະຫວ່າງຄົນໃນພາກ
ຕ່າງໆກໍເລີ່ມຮ້າຍແຮງຂຶ້ນ. ທ່ານຈອນບຣາ ຊຶ່ງເປັນຜູ້ລົບລ້ານຣະ
ບົບການມີຂ້າທາສຢູ່ຣັຖແຄນຊັສໃນເວລາສາມປີກ່ອນນັ້ນກໍຍັງດຳເນີນ
ການລົບລ້ານຢູ່ຕໍ່ໄປ ເນື່ອງຈາກວ່າ ໄດ້ຮັບການສນັບສນຸນ ຈາກ

ຂບວນການຕໍ້ຕານ ເພື່ອລົບລ້າງຣະບົບການມີຂ້າທາສ, ມາບັດນີ້ ກໍໄດ້ວາງແຜນ ໃນຂັ້ນເດັດຂາດ. ທ່ານບຣາວໄດ້ຣວບຣວມກຸ່ມຄົນ ຄນະນຶ່ງຊຶ່ງປະກອບດ້ວຍສະມາຊິກສິບແປດຄົນ ແລະໃນນີ້ຫາຄົນເປັນ ຊາວຜິວດຳ, ເຂົາເຈົ້າໄດ້ພາກັນຢຶດໂຮງງານສ້າງອາວຸດ ທີ່ເມືອງ ຣາເປີແຟຣີຣັຖເວີຊິເນັຍ ໃນຄືນວັນທີ ๑ຝ ຕຸລາ ๑ຊ້ຜ. ເມື່ອ ເຊົ້າມືດມາ, ປະຊາຊົນໃນເມືອງນີ້ໄດ້ລຸກຂຶ້ນຈັບປືນແລ້ວພາກັນຫລັ່ງ ເຂົ້າໄປໃນບ້ານ ພ້ອມທັງໄດ້ຮັບການຊ່ວຍເຫລືອ ຂອງກອງທະຫານ ເພື່ອທຳການໂຈມຕີໂຕ້ຕອບ, ແຕ່ທ່ານບຣາວ ແລະຄນະພັກພວກທີ່ ລອດຊີວິດຢູ່ກໍໄດ້ຖືກຈັບຂັງຄຸກ. ຕໍ່ມາ ສຽງສັນຍານບອກເຫດກໍ່ດັງ ສນ່ນໄປທົ່ວປະເທດ ເພາະວ່າພວກທີ່ຢູ່ທາງໃຕ້ຫລາຍຄົນ ຊຶ່ງຖືກ ບຣາວຄັດຄ້ານການກະທຳຂອງເຂົາເຈົ້າເລື້ອຍມານັ້ນພາກັນມີຄວາມ ຢ້ານກົວທີ່ສຸດ, ແຕ່ພວກທີ່ທຳການຄັດຄ້ານ ແລະຕໍ້ຕ້ານຣະບົບການມີ ຂ້າທາສໄດ້ຮ້ອງໂຮສນັບສນູນ ວ່າການກະທຳຂອງທ່ານບຣາວ ເປັນ ການເສັຍສລະອັນປະເສີດ ແລະມີເຫດຜົນອັນດີເລີດ. ສ່ວນຫລາຍ ພວກທີ່ຢູ່ທາງຣັຖເຫນືອ ໄດ້ປະຕິເສດ ການກະທຳທັງຫມົດ ເຫລົ່ານີ້ ເພາະເຂົາເຈົ້າເຫັນວ່າ ພຶດຕິການເຊັ່ນນີ້ບໍ່ພຽງແຕ່ແມ່ນການໂຈມຕີ ທຳຮ້າຍພວກທາງໃຕ້ເທົ່ານັ້ນ, ແຕ່ຮ່ວມທັງການທຳຮ້າຍມ້າງເພສັງ ຄົມທີ່ມີຣະບຽບດີ ແລະວິທີທາງແບບປະຊາທິປະໄຕອີກດ້ວຍ. ດັ່ງ ນັ້ນ, ທ່ານ ບຣາວ ຈຶ່ງຖືກຟ້ອງໃນຂໍ້ຫາເປັນຂະບົດ ແລະເປັນອາຊ

ยากัม ແລະໃນວັນທີ ८ ທັນວາ ປີ ๑๙๔๙ ເຂົາກໍຖືກຕັດສິນໂດຍ ການແຂວນຄໍ, ແລະໃນວາຣະຂອງເຫດການທັງຫມົດນີ້, ບຣາວກໍ ຍັງຖືຕົວເຂົາວ່າເປັນເຄື່ອງມືທີ່ຢູ່ໃນກໍາມືຂອງພະເຈົ້າຢູ່.

ເຫດການທັງຫມົດນີ້, ຍິ່ງກໍ່ໃຫ້ມີຄວາມແຕກຕ່າງ ຣະຫວ່າງ ຣັຖເຫນືອແລະຣັຖໃຕ້ເພີ່ມພູນຂຶ້ນ ຕັ້ງແຕ່ສໄມຕົ້ນເດີມຂອງປະເທດນີ້ ແລະປັດຈຸບັນນີ້ ກໍໄດ້ວາງແບບແຜນອັນຕາຍຕົວ ຂອງການພັທນາປະ ເທດຊາດທາງພາກໃຕ້ທີ່ຍັງເປັນບ້ານນອກຢູ່ ແຕ່ຣັຖທາງພາກເຫນືອ ໄດ້ຂຍາຍເປັນເມືອງ ເກືອບຫມົດແລ້ວ. ພວກທີ່ຢູ່ທາງເຫນືອເຊື່ອ ວ່າ ການວາງອັດຕຣາ ຈາກຜົນຜລິດຂອງໂຮງງານອຸດສາຫະກັມຈະ ຈ່ອຍໃຫ້ຄວາມລົ້ມກັນການເຕີບໂຕຂອງອຸດສາຫະກັມ, ແຕ່ຊາວກະສິ ກອນທາງພາກໃຕ້ກຽດຊັງເຣື່ອງນີ້ທີ່ສຸດ. ຊາວເຫນືອໄດ້ສົນໃຈນໍາ ການແບ່ງປັນດິນສາທາຣະນະ ໃຫ້ແກ່ພວກຫົມດົນ້ອຍ ເພາະວ່າ ການຮ້ອງຂໍທີ່ດິນ ຂອງພວກທີ່ປະສົງ ຢາກມາຕັ້ງຖິ່ນຖານຢູ່ແຖບນີ້ ມີ ຫລາຍຂຶ້ນ ແລະ "ເລືອກເອົາສອນ ໂດຍທ່ານເອງ" ຈຶ່ງເປັນຄໍາ ເວົ້າທົ່ວໆໄປ. ສ່ວນພວກທີ່ຢູ່ທາງໃຕ້ກໍປາຖນາຢາກໃຫ້ຣັກສາທີ່ດິນ ຊຶ່ງເປັນສົມບັດຂອງຣັຖໄວ້ ແລະເອົາໄວ້ຂາຍໃນຣາຄາແພງ. ພວກ ທາງເຫນືອຢາກໃຫ້ມີຣະບຽບການທະນາຄານທີ່ດີ, ແຕ່ທາງໃຕ້ກຽດ ຊັງການຈັດຕັ້ງທະນາຄານກາງ. ໂດຍທົ່ວໆໄປແລ້ວ, ພວກຊາວ ເຫນືອນັ້ນຈະຈັດວ່າເປັນຊົນຊັ້ນກາງ ແລະເປັນປະຊາທິປະໄຕຫລາຍ

ກວ່າພວກທາງໃຕ້, ຊຶ່ງເປັນພວກທີ່ມີຂ້າທາສທີ່ກຳລັງຮັ່ງມີ ແລະມີ ອຳນາດອີກດ້ວຍ.

## ເສີກກາງເມືອງເລີ່ມຕົ້ນແລ້ວ

ໃນການເລືອກຕັ້ງ ປະທານາທິບໍດີ ໃນປີ ໑໙໗໐, ການ ເມືອງໄດ້ເຮັດໃຫ້ເຫັນປະຈັກຕາ ເຖິງຄວາມແຕກຕ່າງກັນຣະຫວ່າງ ທາງຮັຖເຫນືອແລະໃຕ້. ພັກຣີພັບລີແຄນໄດ້ອອກໂຄສະນາເປັນກຸ່ມ ອັນພຽບພ້ອມແລະທີ່ກອງປະຊຸມໃຫຍ່ຢູ່ຊິກາໂກ, ໄດ້ແຕ່ງຕັ້ງທ່ານອາ ບຣາຮັມ ລິງຄອນ ເປັນຜູ້ສມັກທີ່ມີຊື່ສຽງທີ່ສຸດຂອງພັກນີ້ຢູ່ໃນພາກຕະ ວັນຕົກພາກກາງ. ຂວັນໃຈຂອງພັກການເມືອງດັ່ງກ່າວນີ້ມີຢູ່ເຕັມ ປ່ຽມ ແລະຜູ້ປ່ອນບັດຈຳນວນຫລາຍລ້ານຄົນຕ່າງກໍຮຽກຮ້ອງບໍ່ໃຫ້ຣະ ບົບການມີຫາສຂຍາຍອອກໄປອີກ. ພັກການເມືອງນີ້ໄດ້ໃຫ້ຄຳໝັ້ນ ສັນຍາວ່າ ຈະເອົາໃຈໃສ່ເຣື່ອງການວາງອັດຕຣາພາສີເພື່ອໃຫ້ການ ຄຸ້ມກັນອຸດສາຫະກັມ ແລະໄດ້ຮັບວ່າ ຈະຈັດຫາທີ່ດິນ ໃຫ້ພວກທີ່ມດິນ ນ້ອຍຫລີພວກທີ່ອົພຍົບມາຢູ່ໃຫມ່. ສ່ວນພັກຕຣົງກັນຂ້າມ ບໍ່ຄອຍສາ ມັກຄີກັນປານໃດ ແລະເຖິງວັນເລືອກຕັ້ງມາ ປາກົດວ່າ ທ່ານລິງ ຄອນ ພ້ອມດ້ວຍພັກຣີພັບລີແຄນເບິ່ງເຫມືອນກັບວ່າ ເກີດມາເພື່ອໄຊ ຊນະອັນແທ້ຈິງ.

ແຕ່ຜົນໃນບັ້ນປາຍກໍຖືກສລະຖິ້ມໄປດ້ວຍວ່າຊາວແຄໂຣໄຣນາ

ຈະຕ້ອງຖອນຕົວອອກຈາກສຫະພັນ ຖ້າວ່າທ່ານລິງຄອນໄດ້ຮັບເລືອກ ຕັ້ງໃນເທື່ອນີ້, ເພາະວ່າຮັຖນີ້ ໄດ້ຄອຍຖ້າໂອກາດນີ້ມາດົນແລ້ວ ເພື່ອຈະເຂົ້າຮ່ວມເປັນສຫະພັນກັບຮັຖອື່ນຢູ່ທາງໃຕ້. ໃນຂນະທີ່ຜົນ ຂອງການເລືອກຕັ້ງເປັນທີ່ແນ່ນອນແລ້ວ, ກອງປະຊຸມຢູ່ເມືອງແຄໂຮ ໄຮນາໄດ້ປະກາດວ່າ "ສຫະພັນທີ່ມີຢູ່ໃນປັດຈຸບັນນີ້ປະກອບດ້ວຍຊາວ ແຄໂຮໄຮນາ ແລະຮັຖອື່ນໆຢູ່ທາງໃຕ້ຊຶ່ງຮ່ວມເຂົ້າກັນ ໃນນາມຂອງ ສຫະຮັຖອະເມຣິການັ້ນ, ໄດ້ຖືກຍົກເວັ້ນແຕ່ບັດນີ້ເປັນຕົ້ນໄປ. ແຕ່ຕໍ່ ມາ, ຮັຖອື່ນໆຢູ່ທາງໃຕ້ສຸດໄດ້ເຂົ້າຮ່ວມ ໃນສຫະພັນທະຮັຖຂອງອະ ເມຣິກາໃນວັນທີ ຊ ກຸມພາ ປີ ຈຊຝຈ.

ຕໍ່ຈາກນັ້ນມາບໍ່ພໍເດືອນ ໃນວັນທີ ๔ ເດືອນມີນາ ປີ ຈຊຝຈ ທ່ານອາບຮາຮັມ ລິງຄອນ ກໍໄດ້ເຂົ້າພິທີຮັບຕາໍແຫນ່ງປະທານາທິບໍດີ ຂອງສຫະຮັຖແລະໃນຄາໍປາໃສທີ່ທ່ານລິງຄອນໄດ້ກ່າວໃນພິທີເຂົ້າຮັບ ຕາໍແຫນ່ງນັ້ນ, ທ່ານບໍ່ຍອມຮັບຮູ້ການຖອນຕົວ ຂອງຮັຖແຄໂຮໄຮນາ ແລະຖືວ່າ ການກະທາໍດັ່ງກ່າວນີ້ ເປັນໂມຄະ. ທ່ານໄດ້ກ່າວມ້ວນ ທ້າຍຄາໍປາໃສຂອງທ່ານ ດ້ວຍການຮຽກຮ້ອງ ໃຫ້ປະຊາຊົນຮັກສາ ຄວາມຮັກແພງຊຶ່ງເຄີຍມີຕໍ່ກັນມາກ່ອນ, ແຕ່ພວກທາງໃຕ້ບໍ່ໄດ້ຟັງຄາໍ ຮຽກຮ້ອງຂອງທ່ານ ແລະໃນວັນທີ ๑๘ ເດືອນເມສາ, ສຽງປືນກໍ ໄດ້ດັງສນັ່ນຂຶ້ນທີ່ ຟອດຊັມເຕີ ໃນເມືອງ ຊາລຕັນ ຊຶ່ງເປັນທ່າເຮືອ ຂອງຊາວແຄໂຮໄຮນາ, ແລະຈາກນີ້ໄປ, ຊາວເຫນືອກໍບໍ່ມີການລັງ

ເລໃຈອີກແລ້ວ. ສຽງກ້ອງດັງສນັ່ນທົ່ວທຸກບ້ານ ແລະເມືອງ ເພື່ອ ໃຫ້ຊາຍຫນຸ່ມທຸກຖ້ວນຫນ້າຟ້າວແລ່ນໄປຈັບອາວຸດ, ແລະດ້ວຍຄວາມ ຮີບຮ້ອນອັນແຮງກ້າເທົ່າທຽມກັນ, ປະຊາຊົນຂອງເຈັດຮັຖ ທາງໃຕ້ ທີ່ໄດ້ຖອນຕົວອອກຈາກສຫະພັນນັ້ນ ໄດ້ຕອບສນອງ ຕາມຄວາມຮຽກ ຮ້ອງຂອງປະທານາທິບໍດີຂອງເຂົາເຈົ້າຊື່ວ່າ ເຈຟເຟີຊັນ ເດວິສ. ມີຄົນສ່ວນນ້ອຍເທົ່ານັ້ນທີ່ສາມາດຫລຽວເຫັນຄວາມຢ້ານກົວແລະການ ຕໍ້ສູ້ອັນຍິ່ງໃຫຍ່ໃນພາຍຂ້າງຫນ້າ ກ່ອນສົງຄາມຈະສັ້ນສຸດລົງ, ແຕ່ ໄດ້ມີປະຊາຊົນປະມານ ຊ00,000 ຄົນຕໍ້ສູ້ເພື່ອຊາວໃຕ້ ແລະຈຳ ນວນນີ້ມີຫລາຍກວ່າພວກຊາວເຫນືອສອງຫາສາມເທົ່າ. ນອກຈາກ ຈຳນວນຕົວເລກດັ່ງກ່າວນີ້ແລ້ວ, ຍັງໄດ້ຄັດເອົາຊາວອະເມຣິກັນຜິວ ຂາວອີກ ຄ0,000 ກວ່າຄົນ ແລະຊາວຜິວດຳອີກ ຈ00,000 ກວ່າຄົນ ຊຶ່ງຖືກຄັດເລືອກເອົາຈາກພາຍໃນຮັຖ ທີ່ຖອນຕົວອອກຈາກ ສຫະພັນ.

ທັງຮັຖພາກເຫນືອ ແລະໃຕ້ ຕ່າງກໍລໍຖ້າເບິ່ງປະຕິກິຣິຍາ ຂອງຮັຖທີ່ມີທາສ ຊຶ່ງໄດ້ມີຄວາມຈົງຮັກພັກດີ ເລື້ອຍມາ. ໃນວັນທີ່ ຈກ ເດືອນເມສາ, ຮັຖເວີຊີເນັຍໄດ້ສະແດງຄວາມຈົງຮັກພັກດີອອກ ມາກ່ອນຫມູ່ ແລະຕໍ່ມາ ຮັຖອາແຄນຊັສ ແລະຕໍ່ມາແມ່ນຮັຖ ນອທແຄ ໂຮໄຮນາ ແລະບໍ່ມີຮັຖໃດທີ່ຖອນຕົວອອກຈາກສຫະພັນ ແລະມີຄວາມ ລັງເລໃຈຫລາຍເທົ່າຮັຖເວີຊີເນັຍ. ຮັຖບຸຮຸດຈາກຮັຖນີ້ບໍ່ພຽງແຕ່ມີ

ຄວາມຈຳເປັນໃນການໄດ້ຮັບໄຊຊນະໃນການກອບກູ້ເອກຣາຊ ແລະ ການສ້າງຮ່າງຣັຖທັມມະນູນເທົ່ານັ້ນ ແຕ່ຣັຖນີ້ຍັງໄດ້ຜລິດຣັຖບຸຣຸດຈຳນວນຫ້າຄົນມາເປັນປະທານາທິບໍດີຂອງປະເທດອີກດ້ວຍ. ພັນເອກ ໂຣເບີດອີລີໄດ້ປະຕິເສດຄຳສັ່ງ ຂອງກອງທັບສຫະພັນ ໂດຍການສະແດງຄວາມຈົ່ງຣັກພັກດີຕໍ່ຣັຖຂອງຕົນ. ຣະຫວ່າງການຂຍາຍສັມພັນ ທະພາບ ແລະດິນແດນແຫ່ງເສຣີພາບທາງພາກເຫນືອນັ້ນແມ່ນຣັຖທີ່ຢູ່ ແຄມຊາຍແດນຊຶ່ງຍັງສະແດງຄວາມຣັກຊາດຂອງເຂົາເຈົ້າໂດຍການ ຣັກສາໄມຕຣີອັນດີກັບສຫະພັນ.

ປະຊາຊົນຂອງແຕ່ລະພາກ ຕ່າງກໍເຂົ້າເຣັດສົງຄາມ ດ້ວຍ ຄວາມຫວັງທີ່ຈະໄດ້ມາຊຶ່ງໄຊຊນະ, ແຕ່ໃນດ້ານວັດຖຕ່າງໆ ແລ້ວ, ພວກທາງເຫນືອໄດ້ພາກັນອອນຊອນນຳຜົນປະໂຍດທີ່ເຂົາເຈົ້າຈະໄດ້ ຣັບນີ້ ເພາະວ່າ ຊາວສາມຣັຖທີ່ມີພົລເມືອງ ๘๘.๐๐๐,๐๐๐ ຄົນ ສູ້ກັບ ๑๑ ຣັຖ ຊຶ່ງມີພົລເມືອງ ๗,๐๐๐,๐๐๐ ຄົນ. ຢ່າງໃດກໍ ຕາມ ຄວາມຍິ່ງໃຫຍ່ໃນດ້ານອຸດສາຫະກັມທາງພາກເຫນືອມີນຳ້ຫນັກ ຫລາຍກວ່າກຳລັງພົລ. ບໍ່ຄືກັບຢູ່ເຂດຊົນນະບົດທາງໃຕ້, ຣັຖທາງ ພາກເຫນືອມີຄວາມສະດວກສະບາຍ ແລະພາຫະນະພຽງພໍ ໃນການ ສ້າງອາວຸດຍຸທໂທປະກອນ, ການຜລິດເສື້ອຜ້າ, ແລະ ເຄື່ອງອຸປ ກອນອື່ນໆ. ການຂຍາຍທາງຣົຖໄຟໄປທາງເຫນືອຊ່ວຍໃຫ້ການທະ ຫານໄດ້ຜົນດີຍິ່ງຂຶ້ນ ແຕ່ຣັຖສຫະພັນທະພາບນັ້ນ ໄດ້ຮ່ວມກັນຢູ່ເປັນ

24 / VII
ห้ามจำหน่าย

ແດນແຜ່ນນຶ່ງຊຶ່ງມີນ້ຳຫລາຍ ແລະດ້ວຍວ່າ ການສູ້ຮົບນັ້ນເກີດຂຶ້ນໃນ
ເຂດແດນຂອງເຂົາເຈົ້າເອງ, ເຂົາເຈົ້າຈຶ່ງສາມາດປ້ອງກັນເຂດ
ທະຫານແນວໜ້າດ້ວຍທຶ່ນກ້ອນນຶ່ງນ້ອຍໆ ຊຶ່ງບໍ່ຄ່ຶທາງເໜືອ.

## ສົງຄາມນອງເລືອດໃນພາກຕະເວັນອອກແລະຕົກ

ໃນສົງຄາມຄັ້ງນີ້, ຈຸດຮົບໄດ້ແບ່ງອອກເປັນສາມຈຸດ ຕ່າງໆ
ເຊັ່ນ: ທາງທະເລ, ທາງຮ່ອມພ້ອຍມີຊຸບປີແລະທາງຣົຖທີ່ຢູ່ຕາມ
ແຄມຝັ່ງທະເລຕະເວັນອອກ. ໃນການເລີ້ມຕົ້ນຂັດແຍ້ງກັນນີ້, ກຳ
ລັງທະຫານເຮືອໄດ້ຢູ່ໃນກຳມືຂອງສຫະພັນໝົດ, ແຕ່ຕໍ່ມາກໍໄດ້ແຕກ
ກະຈັດກະຈາຍ ແລະອ່ອນລົງຕາມລຳດັບ, ແຕ່ຣັຖມົນຕີ ຜູ້ມີຄວາມ
ສາມາດໃນກອງທະຫານເຮືອ ຄືທ່ານໄກດຽນ ແວລສ໌ ໄດ້ຮູ້ເຫດ
ການນີ້ແຕ່ຕົ້ນ ໄດ້ຈັດກອງທັບເຮືອຂອງຕົນ ໃຫ້ເຂົ້າຮູບ ເຂົ້າ ຮອຍ
ແລະແຂງແຮງ. ທ່ານລິງຄອນໄດ້ປະກາດໃຫ້ຕັນທາງ ເບື້ອງແຄມ
ຝັ່ງທາງໃຕ້, ແມ່ນວ່າຜົນສະທ້ອນຈາກເຮື້ອງນີ້ ບໍ່ປາກົດເປັນເຮື້ອງ
ສຳຄັນຫຍັງ ແຕ່ຕົກມາໃນປີ ໑໙໔໓ ກໍປາກົດວ່າ ເປັນສິ່ງທີ່ເຮັດໃຫ້
ການເດີນເຮືອຂອງທາງໃຕ້ຢຸດໝົດ, ຈະເອົາຝ້າຍໄປຂາຍຢູ່ ຢຸ
ໂຮບກໍບໍ່ໄດ້, ແລະການສົ່ງຊ້ອາວຸດຍຸທໂທປະກອນຈາກປະເທດນອກ
ກໍບໍ່ມີທາງຜ່ານໄປທາງໃຕ້ໄດ້ ແລະເສື້ອຜ້າ ແລະຢາປົວພະຍາດຊຶ່ງ

ທາງໃຕ້ຕ້ອງການເປັນທີ່ສຸດກໍຖືກວິດລີກັນ. ໃນເວລາດຽວກັນນັ້ນ, ແມ່ທັບທະຫານເຮືອຜູ້ສລາດ, ລີທ່ານ ເດວິດຟາຣາກຸດ ໄດ້ທຳການຣົບສອງຄັ້ງຢ່າງໜ້າສັນລະເສີນທີ່ສຸດ. ໃນຄັ້ງທຳອິດ, ທ່ານໄດ້ນຳເຮືອຣົບຂອງສຫະພັນເຂົ້າໄປຍັງປາກແມ່ນ້ຳມິຊິຊິບປີ ແລະໄດ້ບັງຄັບໃຫ້ເມືອງນິວ ອອກລິນສ໌ ຊຶ່ງນັບວ່າເປັນເມືອງໃຫຍ່ກວ່າໝູ່ ໃນພາກໃຕ້ໃຫ້ຍອມຈຳນົນ. ໃນການປະຕິບັດຄັ້ງຕໍ່ໄປ, ທ່ານໄດ້ນຳກຳລັງທະຫານໄປຕັ້ງທີ່ໝັ້ນຢູ່ປາກອ່າວ ໂມໄບເບ ຊຶ່ງທ່ານໄດ້ສາມາດຢຶດເຮືອເຫລັກລຳນຶ່ງ ແລະປິດທ່າເຮືອນັ້ນເສັຍ. ສຸບຄວາມແລ້ວ ກຳລັງທັບເຮືອໄດ້ຮັບໃຊ້ສຫະພັນເປັນຢ່າງດີ ໃນການຕໍ່ສູ້ກັບທາງໃຕ້.

ໃນຮ່ອມແມ່ນ້ຳມິຊິຊິບປີ, ກຳລັງຂອງສຫະພັນໄດ້ຮັບໄຊຊະນະທຸກໆເທື່ອທີ່ມີການປະທະກັນຢ່າງບໍ່ເວັ້ນເລີຍ. ເຂົາເຈົ້າເລີ່ມຮັດໃຫ້ສາຍຂອງສັມພັນທະພາບ ທາງທະຫານ ທີ່ແໜນແໜສຊິແຕກຫັກ, ແລະໄດ້ພຍາຍາມຍຶດເອົາຣັຖທາງພາກຕະວັນຕົກໃຫ້ໄດ້ເກືອບໝົດ ເມື່ອທ່າເຮືອອັນສຳຄັນຂອງເມືອງ ແມມຟິສ ຖືກຍຶດແລ້ວ, ກຳລັງຂອງສຫະພັນກໍ່ສາມາດກ້າວໜ້າໄປໄດ້ອີກ ৪০০ ກວ່າໄມ ເຂົ້າໄປໃນໃຈກາງເຂດຂອງທະຫານສັມພັນທະພາບ. ທ່ານ ຢູລິສ ແກຣນ ນາຍພົນຜູ້ມີຄວາມອົດທົນ ແລະດັດຽວໄດ້ຕິດຕາມເບິ່ງແຜນການຍຸທສາດຢ່າງໃກ້ຊິດ ເພາະວ່າ ທ່ານເອັງ ເປັນຜູ້ບັງຄັບບັນຊາ.

ເມື່ອຖືກກອງທະຫານຫລອນໂຈມຕີໃກ້ປາກແມ່ນ້ຳເຫມເນສຊີ, ທ່ານ
ກໄດ້ຕ້ານຢັ້ນຢ່າງສຸດຄວາມສາມາດຈົນວ່າມີກຳລັງຫນູນມາຊ່ວຍທ່ານ
ຈຶ່ງສາມາດຕີຢູ້ສັດຕຣູໃຫ້ຖອຍຫນີໄປ ແລ້ວຈາກນັ້ນ ທ່ານກໍນຳກຳລັງ
ທະຫານມ້ວງຫນ້າໄປທາງໃຕ້ຢ່າງຊ້າໆ ແຕ່ສ່ຳສເມີດີ ເພື່ອແນໃສ່
ການຄວບຄຸມແມ່ນ້ຳມີຊຸບປີຫ້ວງຫນຶ່ງຕອນໃຕ້ສຸດທ່ານດວິດຟາຣຳ
ກຸດໄດ້ຍຶດເອົາເມືອງນິວອອກສ໌ໄວ້ໄດ້ແລ້ວຕໍ່ມາ ທ່ານແກຣນກໍຖືກ
ກຳລັງຂອງຄນະສັນພັນທະພາບ ສະກັດກັ້ນໄວ້ ຢ່າງຫນາແຫນ້ນ ຢູ່ທີ່
ເມືອງວິກສ໌ເບີກ, ແຕ່ດ້ວຍຄວາມສລຽວສລາດຂອງທ່ານ ທີ່ໄດ້ວົນ
ວຽນຢູ່ແຖວວິກສ໌ເບີກເປັນເວລາຫົກອາທິດ ແລະໃນວັນທີ ๔ ເດືອນ
ກໍຣະກະດາ, ທ່ານແກຣນສາມາດຍຶດເມືອງນີ້ພ້ອມດ້ວຍກອງທັບຂອງ
ຄນະສັນພັນທະພາບ ຊຶ່ງມີກຳລັງຫນາແຫນ້ນທີ່ສຸດ ໃນທາງພາກຕະ
ເວັນຕົກ. ໃນເວລານັ້ນ ແມ່ນ້ຳແຫ່ງນີ້ຕົກຢູ່ໃນກຳມືຂອງພວກສທະ
ພັນນີ້ແລ້ວ, ດັ່ງນັ້ນ ກຳລັງຂອງຄນະສັນພັນທະພາບ ຈຶ່ງຖືກຈັດຮຶ້ນ
ເປັນສອງຝ່າຍ ແລະກໍເປັນການຍາກທີ່ສຸດ ທີ່ຈະຂົນສະບຽງຕ່າງໆ
ຈາກຣັຖເທັກຊັສ ແລະຣັຖອາແຄນຊັສ ຂ້ຳມນ້ຳຫ້ວຍໄປທາງພາກຕະ
ເວັນອອກ.

ຢູ່ທີ່ເວີຊີເນັຍ, ກຳລັງຂອງສທະພັນໄດ້ຮັບໄຊຊນະໃນການຕໍ່
ສູ້ເປັນລຳດັບເລື້ອຍມາ, ແລະໄດ້ມີການສູ້ຣົບຢ່າງນອງເລືອດ ສືບຕໍ່
ນັ້ນມາ ຊຶ່ງກອງທັບຂອງສທະພັນ ໄດ້ພຍາຍາມເຂ້ົ້າຍຶດເມືອງ ຣິຊ

ນອນ, ຣັຖເວີຊີເນັຍ, ຊຶ່ງເປັນນະຄອນຫລວງ ຂອງຣັຖສັມພັນທະ ພາບ ແລະໄດ້ພຍາຍາມຈະທຳລາຍກຳລັງຂອງຄນະສັມພັນທະພາບ, ແຕ່ກໍຖືກຕ້ານຍັນໄວ້ຢ່າງແຂງຂັນ. ຣະຍະທາງຣະຫວ່າງ ວໍຊິງຕັນ ແລະຣິຊມອນນັ້ນມີພຽງຮ້ອຍໄມເທົ່ານັ້ນ ແຕ່ເມືອງນີ້ມີນ້ຳຫ້ວຍຫລາຍ ບ່ອນກັ້ນເມືອງທັງສອງນີ້ ຊຶ່ງໄດ້ຊ່ວຍໃຫ້ເປັນບ່ອນຕັ້ງທີ່ຫມັ້ນໄວ້ຕໍ້ສູ ເປັນຢ່າງດີ. ນອກຈາກນີ້, ກອງທັບຂອງສຫະພັນ ຍັງມີນາຍພັນ ສອງຄົນຄື: ໂຣເບີດ ອີລີ ແລະໂທມັດສ່ ແຈກຊັນ ຊຶ່ງນາຍພົນທັງ ສອງນີ້ມີກົລວິທີຣົບເຫນືອກວ່າຜູ້ບັງຄັບບັນຊາຂອງກອງທັບສຫະພັນໃນ ຄາວນັ້ນ. ນາຍພົນມັກແຊລລັນຂອງກອງທັບສຫະພັນ ໄດ້ໃຊ້ຄວາມ ພຍາຍາມເຖິງທີ່ສຸດ ທີ່ຈະຢຶດເອົາເມືອງຣິຊມອນ ແລະຄັ້ງນຶ່ງ ທະ ຫານຂອງທ່ານໄດ້ຍິນສຽງໂມງດັງສນັ່ນ ທີ່ຫໍຄອຍ ໃນນະຄອນຫລວງ ຂອງຣັຖສັມພັນທະພາບ, ແຕ່ໃນການສູ້ຣົບເຈັດວັນ ຕັ້ງແຕ່ວັນທີ ๘๕ ມີຖຸນາ ເຖິງວັນທີ ๑ ກໍຣະກະດາປີ ๑ຊຝ๘ ນັ້ນ, ກຳລັງຂອງສຫະ ພັນໄດ້ຖືກໂຈມຕີໃຫ້ຖອຍໄປ ຊຶ່ງເປັນເຫດໃຫ້ທັງສອງຝ່າຍ ໄດ້ຮັບ ຄວາມເສັຍຫາຍຢ່າງຫນັກ.

## ການປີນຂຶ້ນສູງ ແລະລົງມາຕ່ຳ

ການເລີ້ມຕົ້ນສູ້ຣົບ ໃນປີ ๑ຊຝມ ນັ້ນ ເປັນຜົນຮ້າຍ ຕໍ່ພາກ ເຫນືອ, ແຕ່ເຫດການອັນສຳຄັນ ໄດ້ເກີດຂຶ້ນໃນວັນທີ ๑ ມະກະຣາ

ໃນປີນັ້ນ ເນື່ອງຈາກວ່າ ໃນວັນນັ້ນ, ປະທານາທິບໍດີລິງຄອນ ໄດ້ອອກປະກາດປົດປ່ອຍພວກຂ້າທາສໃຫ້ເປັນອິສຣະ ແລະໄດ້ເຊີນຊວນ ພວກຂ້າທາສໃຫ້ເຂົ້າຮ່ວມຮັບໃຊ້ໃນກອງທັບຂອງຊາດ. ເມື່ອເຖິງ ຂັ້ນນີ້ແລ້ວ, ເຫດຜົນຊຶ່ງໄດ້ສະແດງໃຫ້ເຫັນ ການເຮັດສົງຄາມ ກໍຄື ການຮວບຮວມຄົນໃນຊາດໃຫ້ເປັນອັນນຶ່ງອັນດຽວກັນ ແລະຫ້ານບໍ່ໃຫ້ ມີຂ້າທາສຢູ່ຕາມຊາຍແດນ ຂອງແຕ່ລະຣັຖເດັດຂາດ ກາໍລັງທາງບົກ ໄດ້ກ້າວຄືບຫນ້າໄປຍັງຣິຊມອນແລ້ວ ແຕ່ຍັງຖືກຂັດຂວາງຢູ່ທີ່ເມືອງ ແຊນເຊີເລີວິລ ແລະການສູ້ຣົບຢ່າງນອງເລືອດນີ້ໄດ້ນາໍຜົນມາໃຫ້ກາໍ ລັງທາງເຫນືອ ຈາໍຕ້ອງຖອຍຄືນ. ໄຊຊນະຂອງຄນະຣັຖສັມພັນທະ ພາບນັ້ນໄດ້ມາດ້ວຍຣາຄາແພງທີ່ສຸດ ເພາະການສູ້ຣົບເທື່ອນີ້ໄດ້ເອົາ ຊີວິດຂອງທ່ານແຈກຊັນ ແລະທ່ານລີ ເຂົ້າແລກປ່ຽນ, ແຕ່ນາຍພົນ ທັງສອງນີ້ນັບວ່າເປັນຜູ້ບັງຄັບບັນຊາທີ່ມີຄວາມສາມາດທີ່ສຸດຂອງພາກ ໃຕ້.

ໄຊຊນະທັງຫມົດຂອງພວກສັມພັນທະພາບນີ້, ບໍ່ມີອັນໃດເປັນ ທີ່ແນ່ນອນເລີຍ ເພາະວ່າ ຣັຖບານຂອງສຫະພັນ ພຽງແຕ່ຮວບຮວມ ກາໍລັງຂອງທັບໃຫມ່ເທົ່ານັ້ນ, ແລະຈະໄດ້ພຍາຍາມອີກ ໃນເດືອນ ກໍຣະກະດາປີ ຈຊຝມ ຊຶ່ງເປັນວາຣະສຸດທ້າຍຂອງສົງຄາມທີ່ຈະມາ ເຖິງ. ໂດຍການເຊື່ອວ່າ ເມື່ອຕີຊນະ ໄດ້ເມືອງແຊນເຊີເລີວິລ ແລ້ວ, ໂອກາດກໍຈະເປັນຂອງເຂົາ, ດັ່ງນັ້ນທ່ານລີຈຶ່ງໄດ້ນາໍກາໍລັງ

ທະຫານບຸກຂຶ້ນເມືອທາງເຫນືອ ແລະໄດ້ບຸກລຸກເຂົ້າໄປໃນຕົວເມືອງ ເພນຊິລວເນັຍ ຈົນກະທັ່ງກຳລັງທະຫານ ສາມາດເຂົ້າເກືອບຮອດ ທຳນຽບຣັຖບານ, ແລະຫົວເມືອງໃຫຍ່ໆໃນພາກເຫນືອກໍໄດ້ແຕກຕື່ນ ດ້ວຍສຽງສັນຍານບອກເຫດ, ແຕ່ກຳລັງອັນຂັ້ນແຂງຂອງສະຫະພັນ ໄດ້ສະກັດກັ້ນ ກຳລັງຂອງຝ່າຍຕົງກັນຂ້ານໄວ້ໄດ້ ທີ່ແກດຕີສະເບີກ. ການສູ້ຣົບໄດ້ກິນເວລາເຖິງສາມວັນ ແລະກຳລັງຂອງສັມພັນທະພາບ ໄດ້ພຍາຍາມທຸກວິທີທາງທີ່ຈະຕັດກຳລັງຂອງພວກສະຫະພັນ ແຕ່ກໍບໍ່ສາ ມາດຈະຣັດໄດ້ດັ່ງໃຈນຶກ ຈົນຕ້ອງປະສົບກັບຄວາມພ່າຍແພ້ ຈຶ່ງໄດ້ ຖອຍໄປຕັ້ງຕົວໃຫມ່ ຢູ່ແມ່ນ້ຳໂປໂຕມັກ ແລະແມ່ນ້ຳໃຫຍ່ ທີ່ເມືອງ ແກດຕີສ໌ເບີກ ຊຶ່ງເປັນແມ່ນ້ຳສຳຄັນ ແລະເປັນຄວາມຫວັງ ອັນຍິ່ງ ໃຫຍ່ຂອງກຳລັງສັມພັນທະພາບ, ແຕ່ກອງທັບຂອງທ່ານ ແກຣນໄດ້ ຄອບຄອງເມືອງວິກສະເບີກ ທີ່ຣັຖມິຊຊິບປີໄດ້ແລ້ວ. ການອັດແຄມ ຝັ່ງທາງໃຕ້ໄດ້ກາຍເປັນຮ້ອເຫລັກ ຊຶ່ງຕັນບໍ່ໃຫ້ເຮືອໃດໆຜ່ານລົງໄປ ທາງໃຕ້. ດັ່ງນັ້ນ ຄນະສັມພັນທະພາບເກືອບບໍ່ມີຊັບສິນຫຍັງເຫລືອ ອີກເລີຍ, ແຕ່ຢູ່ທາງເຫນືອປາກົດວ່າມັ່ງມີຂຶ້ນນຳທຸກມື້ ແລະຫລາຍ ກວ່າແຕ່ກ່ອນໆອີກ ເຊັ່ນວ່າ ເຂົ້າເຈົ້າມີໂຮງສີ ແລະໂຮງງານດຳ ເນີນກິຈການຢ່າງເຕັມອັດຕຣາ, ຜົນຜລິດຈາກການປູກຝ້າ ກໍໄດ້ຖືກ ສົ່ງໄປຂາຍທີ່ຢຸໂຣບ, ແລະກຳລັງພົລ ທີ່ຖືກບັນຈຸໄວ້ດ້ວຍການອົພຍົບ ຂອງຄົນເຂົ້າມາໃນປະເທດ.

ວິທີດຳເນີນການຂອງທ່ານ ແກຣນໄດ້ດຳເນີນໄປຊ້າໆ ແຕ່ໄດ້ກ້າວເຂົ້າໄປຍັງເມືອງຣີຊມອນ ໃນປີ ໑໘໗໔. ຫລັງຈາກ ນັ້ນ ກຳລັງຂອງກອງທະຫານທາງເໜືອໄດ້ຫ້ອມໂຮມກັນ ແລະໃນວັນທີ ໑ ກຸມພາປີ ໑໘໗໔. ນາຍພົນເຊີນັນ, ຜູ້ບັງຄັບບັນຊາ ທະຫານ ທາງພາກຕະເວັນຕົກ ໄດ້ນຳທະຫານມຸ້ງໜ້າຈາກຈອກເຈັຍຂຶ້ນເມືອ ທາງເໜືອ. ແຕ່ໃນທຸກໆບ່ອນ, ຝ່າຍສັດຕຣູໄດ້ພຍາຍາມສະກັດ ກັ້ນການເດີນຄືບໜ້າຂອງທ່ານດ້ວຍຄວາມຜິດຫວັງ ແລະຕໍ່ມາ ໃນ ວັນທີ ໑໗ ກຸມພາ, ຄນະສັມພັນທະຣັຖ ໄດ້ປະປ່ອຍເມືອງ ໂຄລັມ ເບັຍຊຶ່ງເປັນນະຄອນຫລວງຂອງຣັຖແຄໂຣໄຣນາໃຕ້. ສ່ວນເມືອງ ຊາລເລສຕັນ ກໍໄດ້ຕົກຢູ່ໃນກຳມືຂອງກອງທັບເຮືອຂອງຄນະສທະພັນ ໂດຍບໍ່ໄດ້ມີການສູ້ຣົບແຕ່ຢ່າງໃດ ເພາະວ່າ ການຕິດຕໍ່ທາງຣົຖໄຟ ພາຍໃນກໍຖືກຕັດຂາດອອກໄປ. ໃນຂນະນັ້ນ, ທີ່ໝັ້ນຂອງຄນະສັມ ພັນທະພາບທີ່ເມືອງປີເຕີສ໌ເບີກ ແລະຣິຊມ໌ອນ ກໍເປັນທີ່ເຫັນແຈ້ງ ແລ້ວວ່າ ຮັກສາໄວ້ຕໍ່ໄປບໍ່ໄດ້ແລ້ວ, ແລະໃນວັນທີ ໘ ເດືອນເມສາ ທ່ານລີໄດ້ປະປ່ອຍທີ່ໝັ້ນດັ່ງກ່າວນີ້ດ້ວຍຄວາມເສັຍດາຍທີ່ສຸດ. ໃນ ອາທິດຕໍ່ມາ, ທ່ານໄດ້ພາກອງທະຫານກັບມາຕັ້ງທ່າໃໝ່ຢູ່ອັປໂປມາ ຕອກສ໌ ໃນຣັຖເວີຈິເນັຍ, ແຕ່ຖືກສັດຕຣູຫຸ້ມລ້ອມໄວ້ໝົດ ຢ່າງບໍ່ມີ ທາງສູ້ຈຶ່ງໄດ້ຍອມຈຳນົນ.

ການຍອມແພ້ຂອງທ່ານລີເທື່ອນີ້, ເປັນການກະທຳຢ່າງໃຈ

ກ້ວາງຂວາງທີ່ສຸດ ແລະເປັນການບໍ່ເຫັນແກ່ຕົວ ເມື່ອທ່ານແກຣນກັບ
ມາຈາກແຕ່ປະຊຸມ ທ່ານໄດ້ເຣັດໃຫ້ສຽງການສະແດງຕ່າງໆຢ່າງຝົດ
ສນັ່ນຂອງທະຫານຂອງທ່ານເອັງ ໃຫ້ສງົບລົງໂດຍເວ້ົາໃຫ້ເຂົ້າເຈ້ົາ
ເຂ້ົາໃຈວ່າ: "ພວກຂະບົດເຫລົ່ານີ້ ກໍແມ່ນເພື່ອນຮ່ວມຊາດ ຂອງ
ເຮົາອີກເທື່ອນຶ່ງ" ເພາະສົງຄາມເພື່ອເອກຣາຊຂອງທາງໃຕ້ ໄດ້
ກາຍເປັນການສູນເສັຍຜົນປະໂຍດ.

ບັນພະບຸຣຸດຂອງການສູນເສັຍຜົນປະໂຍດເທື່ອນີ້, ແມ່ນອນທີ
ສຸດຕ້ອງແມ່ນທ່ານໂຣເບີດ ອີ.ລີ. ເພາະວ່າຍ້ອນຄຸນນະວຸດທິຂອງ
ການມີອຳນາດ, ທ່ານລີຈຶ່ງໄດ້ຈັດຕັ້ງກຳລັງທະຫານຂຶ້ນ ດ້ວຍຄວາມ
ເອົາໃຈໃສ່ທຸກສິ່ງທຸກຢ່າງ, ດ້ວຍການດູແລລູກນ້ອງຢ່າງໃກ້ຊິດດ້ວຍ
ຄວາມກ້າຫານ, ແລະດ້ວຍການເປັນຕົວຢ່າງທີ່ດີຂອງທ່ານລີ, ທ່ານ
ຈຶ່ງໄດ້ຮັບຄວາມໄວ້ວາງໃຈ ຈາກທະຫານ ທີ່ຢູ່ໃຕ້ການບັງຄັບບັນຊາ
ຂອງທ່ານ. ຄວາມສລຽວສລາດ ໃນການເປັນຜູ້ນຳ ຂອງທ່ານ,
ການມີຄວາມມານະອົດທົນ ຕໍ່ຄວາມຫຍຸ້ງຍາກທັງຫມົດ, ແລະຄວາມ
ຍິ່ງໃຫຍ່ໃນການສູ້ຣົບໄດ້ພາໃຫ້ທຸກຄົນຍ້ອງຍໍສັນລະເສີນ. ເຫມືອນ
ກັນກັບທ່ານ ຢອດວໍຊິງຕັນ, ທ່ານເປັນຜູ້ຍິ່ງໃຫຍ່ ໃນຍາມສງົບເຊັ່ນ
ດຽວກັນກັບ ໃນເວລາມີສົງຄາມ. ແມ່ນທ່ານເອັງ ເປັນຜູ້ເຣັດໃຫ້
ການຂັດແຍ້ງນີ້ຍຶດເຍື້ອໄປຣອດຫ້າປີ, ແຕ່ໃນຣະຍະນີ້ ທ່ານໄດ້ເຣັດ
ທຸກສິ່ງທຸກຢ່າງເພື່ອເຣັດໃຫ້ເສຖກິດ, ວັທນະທັມ, ແລະການເມືອງ

ຂອງທາງໃຕ້ໜັ້ນຄົງຖາວອນດັ່ງເດີມຢູ່, ແລະໄດ້ຊຸກຊຸມປະຊາຊົນ ໃຫ້ຈົງຮັກພັກດີ ເພື່ອຊ່ວຍກັນຕໍ່ສູ້ສັດຕຣູທີ່ຈະມີຕໍ່ພວກຊາວໃຕ້.

ສຳລັບຊາວເໜືອແລ້ວ, ສົງຄາມນີ້ໄດ້ເຮັດໃຫ້ທ່ານອາບຮາ ຮັມລິງຄອນກາຍເປັນບັນພະບຸຣຸດ ຜູ້ຍິ່ງໃຫຍ່ຄົນນຶ່ງ. ວ່າງບໍ່ຫລາຍ ເດືອນໃນຄາວເລີ້ມຕົ້ນນັ້ນ, ມີຄົນສ່ວນນ້ອຍເທົ່ານັ້ນ ທີ່ສາມາດເຫັນ ຄວາມສຳຄັນຂອງນັກກິດໝາຍ ຊາວຕະເວັນຕົກຄົນນີ້. ຕໍ່ມາຄົນ ທົ່ວຊາດໄດ້ສາມາດເຫັນຄວາມສລາດຫລັກແຫລມ ຂອງທ່ານລິງຄອນ ເທື່ອລະເລັກລະນ້ອຍວ່າ ທ່ານລິງຄອນ ເປັນຄົນມັກຄວາມຈິງ ມີ ຄວາມອົດທົນຢ່າງບໍ່ລົດລະ ແລະມີຄວາມເອື້ອເຟື້ອ ຢ່າງບໍ່ມີໃຜເທົ່າ ທຽມໄດ້. ຖ້າແມ່ນເວລາໃດ, ທ່ານລິງຄອນເກີດມີຄວາມລັງເລ ໃຈ, ເວລານັ້ນ ໄດ້ພິສູດໃຫ້ເຫັນຢູ່ເລື້ອຍໆ ວ່າ ທ່ານລິງຄອນຮູ້ຈັກ ຄອຍຖ້າເພື່ອຜົນປະໂຍດຂອງຊາດ, ແລະຮູ້ຈັກປະສົມກຳລັງ ແລະ ຄວາມໄຫວພິບພ້ອມໆກັນ. ໃນທີ່ສຸດ ທ່ານໄດ້ປາຖນາຢາກໃຫ້ຄົນ ທົ່ວປະເທດສາມັກຄີກັນ ບໍ່ແມ່ນດ້ວຍກຳລັງບັງຄັບ ແຕ່ດ້ວຍຄວາມຮັກ ແພ່ງທົ່ວໄປ.

ກ່ຽວກັບນະໂຍບາຍການຕ່າງປະເທດຂອງທ່ານນັ້ນເປັນສິ່ງທີ່ ໜ້າພູມໃຈທີ່ສຸດ ເພາະວ່ານັ້ນເປັນການທ້ອນໂຮມ ແລະໜັ້ນຄົງທີ່ ສຸດ ແລະແມ່ນວ່າ ບາງກໍຣະນີ ທີ່ທ່ານຕ້ອງໃຊ້ອຳນາດອ່ອນ, ແຕ່ ທ່ານກໍຍັງເຊື່ອໜັ້ນຢູ່ໃນປະຊາທິປະໄຕຂອງຣັຖບານ ໂດຍປະຊາຊົນ

ແລະມີຄວາມເຊື່ອໝັ້ນໃນປະຊາຊົນ ຊຶ່ງເຂົາເຈົ້າໄດ້ຄັດເລືອກທ່ານ ໃຫ້ດຳຣົງຕຳແໜ່ງປະທານາທິບໍດີເທື່ອທີ່ສອງໃນປີ ໑໙໙໔.

## ບໍ່ເຄີຍມີເຈຕນາຮ້າຍຕໍ່ໃຜ

ໃນການກ່າວຄຳປາໃສ ໃນໂອກາດເຂົ້າຮັບຕຳແໜ່ງຄັ້ງທີ່ ສອງນີ້, ທ່ານລີງຄອນ ໄດ້ກ່າວມ້ອນທ້າຍຄຳປາໃສ ຂອງທ່ານວ່າ: "ບໍ່ເຄີຍມີເຈຕນາຮ້າຍຕໍ່ໃຜ; ການກຸສົນມີໄວ້ເພື່ອທຸກໆຄົນໂດຍເຊື່ອ ໝັ້ນໃນສິດທິ ທີ່ພຣະເຈົ້າໄດ້ປະທານໃຫ້ແກ່ເຮົາ, ດັ່ງນັ້ນເຮົາຄວນ ບາກບັ່ນເພື່ອໃຫ້ກິຈການນີ້ສຳເຣັດລຸລ່ວງໄປ; ເພື່ອປິ່ນປົວບາດແຜ ຂອງຊາດ; ເຮົາຈະລ້ຽງດູແລະຜູກມຸນາງໝ້າຍ ແລະລູກໆຂອງຜູ້ ກ້າຫານທີ່ໄດ້ເສັຍສລະໃນສນາມຮົບ ແລະຈະທຳທຸກຢ່າງເພື່ອຮັກສາ ໄວ້ຊຶ່ງຄວາມສງົບຂອງປະເທດຊາດ". ຫລັງຈາກນັ້ນມາເປັນເວລາ ສາມອາທິດ ຊຶ່ງຫລັງຈາກທ່ານລີ ຍອມຜ່ານແພ້ໄດ້ສອງນີ້, ທ່ານ ລີງຄອນໄດ້ກ່າວຄຳປາໃສຕໍ່ປະຊາຊົນເປັນຄັ້ງສຸດທ້າຍໂດຍມ້ວນທ້າຍ ວ່າ ທ່ານຈະດັດແປງນະໂຍບາຍໃໝ່ຊຶ່ງເປັນຕາໜ້າຟັງທີ່ສຸດສຳລັບ ຝ່າຍຕົງກັນຂ້ານ. ທ່ານລີງຄອນບໍ່ໄດ້ຖືວ່າ ທ່ານເອງເປັນຜູ້ຊນະ ເພາະວ່າ ທ່ານເຄີຍເປັນແລະໄດ້ເປັນປະທານາທິບໍດີຂອງສະຫະຣັຖ ມາແລ້ວຕັ້ງແຕ່ປີ ໑໙໑. ຄຳວ່າ "ເປັນຂະບົດ" ຄວນຈະລຶມມັນ ເສັຍ ແລະຣັຖທາງໃຕ້ທຸກໆຣັຖ ຄວນໃຊ້ວິທີຂອງເຂົາເຈົ້າເພື່ອເຂົ້າ

ຮ່ວມໃນສຫະພັນ. ໃນຄືນວັນພະຫັດຂອງວັນທີ ๑๗ ເດືອນເມສາ, ເມືອງວໍຊິງຕັນໄດ້ໃຕ້ໄຟຮຸ່ງ ທົ່ວມຸມເມືອງ ເພື່ອສເລີມສລອງການ ຍອມແພ້ຂອງທ່ານລີ ແລະຕ່າງຄົນກໍດີອົກດີໃຈ ຈຶ່ງພາກັນແຫ່ໄປຕາມ ທາງ. ໃນເວລານັ້ນ ທ່ານລິງຄອນໄດ້ຮຽກປະຊຸມ ຄນະຣັຖບານ ຂອງທ່ານເປັນຄັ້ງສຸດທ້າຍ ແລະທີ່ປະຊຸມໄດ້ເວົ້າເຖິງເຮື່ອງການຍົກ ເລີກການຕັນທາງຂອງພວກໃຕ້. ທ່ານໄດ້ຂໍຮ້ອງໃຫ້ຣັຖມົນຕີ ທຸກໆ ຄົນຈົ່ງປ່ຽນຄວາມຄິດມາໃສ່ຄວາມສງົບສຸກ ແລະເຊົ້າຄິດເຮື່ອງການ ນອງເລືອດອີກຕໍ່ໄປ ແຕ່ໃນຄືນນັ້ນເອງ ທ່ານລິງຄອນໄດ້ຖືກລອບສັງ ຫານຢ່າງທາຮຸນ ໃນຂນະທີ່ນັ່ງເບິ່ງລະຄອນຢູ່.

ມີນັກກະວີຄົນນຶ່ງ ຊື່ ເຈັມສ໌ ຣັຖຊັລໂອແວລ ໄດ້ຂຽນວ່າ: "ບໍ່ເຄີຍມີຄັ້ງໃດ ທີ່ພາໃຫ້ຍາມເຊົ້າ ຂອງເດືອນເມສາເສົ້າໝອງ" ແລະຜູ້ຄົນໄດ້ຮ້ອງໄຫ້ ຈາກການສູນເສັຍບຸກຄົນຜູ້ເປັນທີ່ຮັກ ແລະໄວ້ ວາງໃຈຂອງຄົນທົ່ວໄປ ເພາະວ່າເຂົາເຈົ້າມີຄວາມຮູ້ສຶກວ່າ ເຂົາ ເຈົ້າໄດ້ຂາດສິ່ງຈຳເປັນທີ່ສຸດຂອງເຂົາເຈົ້ານັ້ນຄືຄວາມເປັນມິດ ອັນແທ້ຈິງທີ່ໄດ້ເຄີຍມີຕໍ່ທ່ານລິງຄອນ. ໃນພິທີສົ່ງສະການຂອງທ່ານ ກໍເປັນທີ່ເສົ້າໂສກທີ່ສຸດ ໂດຍບໍ່ມີສຽງເວົ້າສຽງປາກ, ຕ່າງກໍມິດ, ແລະຕ່າງຄົນຕ່າງສະແດງຄວາມເສັຍໃຈຕໍ່ກັນ.

ຢ່າງໃດກໍຕາມ ພາຍໃຕ້ການນຳຂອງທ່ານແອນຕຣູ ຈອນສັນ ຊຶ່ງບໍ່ໄດ້ຕຽມຕົວມາກ່ອນນັ້ນ ປະເທດຊາດຕ້ອງພົບກັບບັນຫາໜັກໃນ

ການພຍາຍາມແກ້ໄຂບັນຫາເພື່ອສ້າງບ້ານແປງເມືອງໃຫມ່ ແລະປັບ
ປຸງສະພາບການ ພາຍໃນປະເທດໃຫມ່. ທັງນີ້ກໍເພາະວ່າສົງຄາມ
ໄດ້ນໍາພິນດີ ແລະພິນຮ້າຍ ມາໄວ້ເປັນສົມບັດຂອງປະເທດ. ນອກ
ຈາກນີ້ແລ້ວ ມັນຍັງໄດ້ຈ່ອຍຊີວິດຂອງສຫະພັນໄວ້ອີກ ພ້ອມທັງໄດ້ໃຫ້
ບຸກຄລິລັກສນະທີ່ບໍ່ອາດຈະທໍາລາຍໄດ້, ແຕ່ແນ່ນອນທີ່ສຸດ ປະເທດ
ຊາດຍ່ອມຫນີໄພອັນຕະຣາຍບໍ່ພົ້ນ.

ບັນຫາການເມືອງທີ່ສໍາຄັນທີ່ສຸດຊຶ່ງຊາວເຫມືອຜູ້ທີ່ໄດ້ໄຊຊນະ
ແລ້ວຈະຕ້ອງສູ້ຫນ້າ ກໍຄືບັນຫາການແກ້ໄຂຖານະຂອງຣັຖ ທີ່ໄດ້ແຍກ
ອອກຈາກສຫະພັນ ແລະບັນຫາທີ່ພາໃຫ້ມີການລັງເລໃຈຢູ່ນັ້ນ ຈະຍົກ
ເອົາມາເປັນບັນຫາຂອງສະພາກົງແກຣສ໌ ຫລືວ່າຈະຍົກໃຫ້ເປັນບັນ
ຫາຂອງປະທານາທິບໍດີຕໍ່ໄປ. ຄາວທີ່ທ່ານລິງຄອນ ມີຊີວິດຢູ່ນັ້ນ,
ທ່ານໄດ້ໃຫ້ຂໍ້ຄິດວ່າ ການແຍກຕົວອອກຢູ່ຕ່າງຫາກຂອງຣັຖທັງຫລາຍ
ຢູ່ທາງພາກໃຕ້ນັ້ນເປັນການກະທໍາ ທີ່ບໍ່ຖືກຕ້ອງຕາມກົດຫມາຍ, ແຕ່
ວ່າປະຊາຊົນໃນຣັຖດັ່ງກ່າວ ຖືກພົລເມືອງຜູ້ຫໍຣະຍົດຕໍ່ຊາດເປັນຜູ້ຊັກ
ນໍາໃຫ້ໄປໃນທາງຜິດ ແລະຂັດຂືນຕໍ່ອາດຍາສິດ. ທ່ານລິງຄອນໃຫ້
ທັສນະວ່າ ສົງຄາມເທື່ອນີ້ ແມ່ນການກະທໍາຂອງສ່ວນບຸກຄົນເຫລົ່ານີ້
ບໍ່ແມ່ນກັບຣັຖ. ທ່ານລິງຄອນເຊື່ອວ່າ ປະທານາທິບໍດີ, ໃນຖານະ
ເປັນຜູ້ຕາງຫນ້າຂອງກອງທັບບົກ ແລະເຮືອ ແລະເປັນຜູ້ມີອໍານາດ
ໃນການໃຫ້ອະໄພຍ່ອມມີສິດຄວບຄຸມສະຖານະການທັງຫມົດ. ດ້ວຍ

ການກະທຳຕາມແບບທິສດີນີ້, ທ່ານຈຶ່ງໄດ້ປະກາດໃນປີ ໑໘ຝນ ວ່າ ຖ້າວ່າຣັຖໃດ ມີຈຳນວນຜູ້ປ່ອນບັດເລືອກຕັ້ງ ເຖິງສິບເປີເຊັນຂອງຜູ້ ປ່ອນບັດໃນປີ ໑໘ຝ໐ ແລ້ວ ຣັຖນັ້ນຈະຕັ້ງຣັຖບານຂຶ້ນ ພາຍໃນຣັຖ ຂອງຕົນໄດ້ໂດຍຖືກຕ້ອງຕາມຣັຖທັມມະນູນແລະຍອມປະຕິບັດຕາມກົດ ໝາຍຂອງສະພາກົງແກຣສ ແລະຕາມຄຳປະກາດຂອງປະທານາທິບໍ ດີ ແລ້ວທ່ານກໍຈະຮັບຮູ້ຣັຖບານທີ່ແຕ່ງຕັ້ງຂຶ້ນ ໃນຣັຖນັ້ນ ຖືກຕ້ອງ. ແຕ່ສະພາກົງແກຣສໄດ້ປະຕິເສດແຜນການນີ້ ແລະໄດ້ຂັດແຍ້ງສິດທິ ຂອງທ່ານລິງຄອນໂດຍນຳເອົາບັນຫານີ້ ມາຄິດໂດຍບໍ່ປຶກສາຫາລືກັບ ທ່ານເລີຍ ແລະໄດ້ກ່າວຫາວ່າ ການກະທຳຊຸ່ນນີ້ ເປັນການຍາດ ແຍ່ງອຳນາດຂອງຝ່າຍອອກກົດໝາຍ, ອີກປະການນຶ່ງ, ທ່ານລິງ ຄອນກໍໄດ້ປະຕິເສດບໍ່ຍອມເຊັນຮັບເອົາກົດໝາຍອັນສຳຄັນທີ່ໄດ້ຜ່ານ ສະພາກົງແກຣສໄປແລ້ວ ໃນປີ ໑໘ຝ໔.

ກ່ອນສົງຄາມຈະສິ້ນສຸດລົງ, ທ່ານລິງຄອນໄດ້ມີໂຄງການຈັດ ຕັ້ງຣັຖບານໄວ້ສຳລັບຣັຖເວີຊີເນັຍ, ແຫມເນສຊີ, ອາແຄນຊັສແລະ ລຸຍຊີອານາ ແລ້ວ, ແຕ່ສະມາຊິກສະພາກົງແກຣສບາງຄົນ ບໍ່ເຫັນດີ ນຳການກະທຳຊຸ່ນນີ້, ແລະປາຖນາຢາກໃຫ້ລົງໂທດ ຣັຖສັມພັນທະ ພາບເຫລົ່ານີ້ຢ່າງຫນັກ. ມີຜູ້ນຶ່ງຂອງສະມາຊິກ ສະພາກົງແກຣສ, ຄືທ່ານ ທາເດີສສະຕີວເວີນ, ຜູ້ນຳພັກຣີພັບລີແຄນ ໃນສະພາຕ່ຳໄດ້ ເຊື່ອວ່າ, ພວກຊາວສວນຢູ່ພາກໃຕ້ ຄວນຈະຢູ່ພາຍໃຕ້ອຳນາດການ

ປົກຄອງຂອງທະຫານໃນຊຸ່ວຂນະນຶ່ງແລະບາງຄົນກໍຢາກໃຫ້ສິດທິ ແກ່ຊາວຜິວດຳໃນການປ່ອນບັດເລືອກຕັ້ງໂລດ. ຄວາມສົນໃຈຂອງສະພາກົງແກຣສໃນຂນະນີ້ ຄືແທນທີ່ຈະເອົາຣັຖທາງໃຕ້ມາຮ່ວມເຂົ້າກັບສຫະພັນ, ແຕ່ກັບໄປສົນໃຈນຳການປົດປ່ອຍຊາວຜິວດຳ ໃຫ້ເປັນອິສຣະ, ແລະຕໍ່ມາໃນເດືອນມີນາປີ ๑๙ຝ๕, ກໍໄດ້ມີການຈັດຕັ້ງສຳນັກງານປົດປ່ອຍມະນຸດຂຶ້ນ ຊຶ່ງສຳນັກງານດັ່ງກ່າວນີ້ ມີຫນ້າທີ່ໃຫ້ຄວາມຄູ້ມກັນແກ່ຊາວຜິວດຳ ແລະໄດ້ມີການສົ່ງເສີມ ໃຫ້ມີການຊ່ວຍເຫລືອຕົນເອງ. ນອກຈາກນີ້, ທາງສະພາກົງແກຣສ ໄດ້ສົ່ງເສີມເສຣີພາບຂອງຊາວຜິວດຳຂຶ້ນອີກ ໂດຍສເນີໃຫ້ມີການແກ້ໄຂຣັຖທັມມະນູນຂອງສິບສາມຣັຖ, ໃຫ້ລົບລ້າງຣະບົບການມີຂ້າທາສ ແລະໃຫ້ສັຕຍາບັນໃນເດືອນທັນວາປີ ๑๙ຝ๕.

## ຄວາມເຫັນຂັດແຍ້ງກັນໃນການສ້າງສາປະເທດໃຫມ່

ທ່ານລິງຄອນໄດ້ຄາດການລ່ວງຫນ້າແລ້ວວ່າ ຈະມີການຍາດແຍ່ງອຳນາດກັນ ຣະຫວ່າງຝ່າຍບໍຣິຫານ ແລະຝ່າຍອອກກົດຫມາຍກ່ຽວກັບນະໂຍບາຍ ການສ້າງສາປະເທດອີກເທື່ອໃຫມ່, ແຕ່ການແກ້ໄຂບັນຫາໄດ້ຕົກເປັນຫນ້າທີ່ ຂອງຜູ້ສືບຕໍ່ ຕຳແຫນ່ງຂອງທ່ານ ຄືທ່ານແອນຕຣູຈານສັນ. ທ່ານຜູ້ນີ້ມີປະສົບການຫລາຍພໍສົມຄວນກ່ຽວກັບວຽກບ້ານການເມືອງ ເພາະວ່າ ທ່ານມີຄວາມຮູ້ ຄວາມສາມາດ

ແລະມີຈຸດປະສົງ ຊຶ່ງປ່ຽນແປງໄປຕາມກາລະເທສະໄດ້, ແຕ່ບໍ່ເປັນ ຈັ່ງບຸນ, ເມື່ອມີສະຖານະການ ຊຶ່ງປະເຊີນຫນ້າທ່ານ ໃນຂນະນັ້ນ, ທ່ານມີໄຫວພິບ, ຄວາມອົດທົນ, ແລະຄຸນສົມບັດເຫລົ່ານີ້ໃນຕົວທ່ານ ເລີຍ.

ຕລອດຣະດູຮ້ອນຂອງປີ ຈຊຝ໔, ທ່ານລິງຄອນໄດ້ກະແຜນ ການສ້າງສາບ້ານເມືອງໃຫມ່ອີກ ໂດຍບໍ່ໄດ້ປຶກສາຫາລືກັບສະພາກົງ ແກຣສເລີຍ. ທ່ານໄດ້ໃຊ້ອຳນາດຂອງປະທານາທິບໍດີແຕ່ງຕັ້ງເຈົ້າ ແຂວງຜູ້ນຶ່ງ ໃຫ້ປົກຄອງຣັຖຂອງຕົນ ຊຶ່ງໄດ້ເຄີຍເປັນສັມພັນທະພາບ ໂດຍໃຊ້ອຳນາດ ວ່າດ້ວຍການໃຫ້ອະໄພຂອງປະທານາທິບໍດີ. ຣັຖ ຕ່າງໆຢູ່ທາງພາກໃຕ້ໄດ້ຣຽກປະຊຸມເພື່ອຍົກເລີກຄຳສັ່ງວ່າດ້ວຍການ ແຍກຕົວຢູ່ຕ່າງຫາກຂອງຣັຖສັມພັນທະພາບ ໂດຍບໍ່ຍອມໃຊ້ຫນີ້ຄ່າສົງ ຄາມ ແລະໄດ້ຂຽນຮ່າງກົດຫມາຍຣັຖທັມມະນູນໃຫມ່ ໃນເວລານັ້ນ ປະຊາຊົນໃນແຕ່ລະຣັຖ ໄດ້ຄັດເລືອກເອົາເຈົ້າແຂວງຜູ້ນຶ່ງ ແລະຣັຖ ສະພາຂອງຣັຖ ແລະເມື່ອຣັຖສະພາ ໄດ້ຣັບຮູ້ການປ່ຽນແປງຂອງກົດ ຫມາຍມາດຕຣາທີສິບສາມແລ້ວ ທ່ານຈອນສັນຈຶ່ງໄດ້ຣັບຮູ້ການຈັດຕັ້ງ ຣັຖບານພົລເມືອງຂອງຣັຖເຫລົ່ານີ້ ເພື່ອນັບເອົາຣັຖດັ່ງກ່າວນີ້ເຂົ້າ ຮ່ວມໃນສຫະພັນຄືເກົ່າ ໂດຍມີຂໍ້ຍົກເວັ້ນບາງປະການ ແລະເມື່ອ ເຖິງສໄມປະຊຸມໃນເດືອນທັນວາ ປີ ຈຊຝ໔ ກໍນັບວ່າການດຳເນີນ ງານທັງຫມົດນີ້ໄດ້ຣຽບຮ້ອຍໄປຫມົດແລ້ວ. ແຕ່ວ່າຣັຖທາງພາກໃຕ້

ຍັງບໍ່ມີສິດທິໂດຍສົມບູນໃນການເຂົ້າຮ່ວມ ໃນສຫະພັນນາໍຫມູ່ ເພາະ ວ່າ ທາງສະພາກົງແກຣສ ຍັງບໍ່ທັນຮອດສໄມປະຊຸມ ເພາະວ່າ ສະ ມາຊິກສະພາສູງຫາກໍ່ມາຮອດນະຄອນວໍ່ຊິງຕັນ ເພື່ອມາດາໍເນີນການ ໃນການອອກກົດຫມາຍຂອງສະຫະຣັຖ.

ທັງທ່ານລິງຄອນແລະທ່ານຈອນສັນ, ຕ່າງກໍ່ຮັບຮູ້ວ່າ ສະພາ ກົງແກຣສຈະຕ້ອງມີສິດປະຕິເສດຕົວແທນຂອງຣັຖທາງໃຕ້ທີ່ຈະຖືກຄັດ ເລືອກເຂົ້າມານັ່ງໃນສະພາກົງແກຣສ ພາຍໃຕ້ມາດຕຣາຂອງຣັຖທັມ ມະນູນທີ່ບົ່ງໄວ້ວ່າ "ທັງສະພາຕ່າໍແລະສະພາສູງ ຈະຕ້ອງເປັນຜູ້ພິ ຈາຣະນາຄຸນສົມບັດ ຂອງສະມາຊິກ ທີ່ຈະເຂົ້າມານັ່ງ ໃນສະພາກົງ ແກຣສ" ແລະຫລາຍເດືອນຕໍ່ມາ ເຂົາເຈົ້າກໍ່ໄດ້ດາໍເນີນແຜນການ ສ້າງແປງສະພາກົງແກຣສໃຫມ່ຊຶ່ງແຕກຕ່າງກັບສິ່ງທີ່ທ່ານລິງຄອນໄດ້ ເລີ້ມລົງມືເຮັດມາ ແລະທ່ານຈອນສັນ ກໍເປັນຜູ້ດາໍເນີນການຕໍ່ໄປຈົນ ແລ້ວ.

ດ້ວຍສາເຫດທີ່ສັບສົນກັນນີ້, ສະພາກົງແກຣສ ຈຶ່ງໄດ້ປະຕິ ເສດແຜນການຂອງຈອນສັນ. ໃນເວລາທີ່ມີສົງຄາມຢູ່ນັ້ນ, ໂດຍ ທັມມະຊາດແລ້ວ, ອາໍນາດແລະກຽດຂອງປະທານາທິບໍດີ ຍ່ອມມີຄ່າ ສູງຂຶ້ນ, ແຕ່ໃນຍາມສງົບແລ້ວ ສະພາກົງແກຣສ ກໍ່ຍັງຢາກກາໍອາໍ ນາດນີ້ໄວ້ຢູ່. ໃນປີ ๑๙๗๕ ມີບາງຄົນຄິດວ່າເຖິງເວລາແລ້ວທີ່ສະ ພາກົງແກຣສຈະຮຽກຮ້ອງເອົາອາໍນາດບໍ່ຣິຫານບາງປະການຊຶ່ງໄດ້ຍຸ

ຍານໃຫ້ໃນຍາມສົງຄາມແລະນອກຈາກນີ້ບາງຄົນຢູ່ທາງພາກເຫນືອມີ ຄວາມເຫັນວ່າ ພວກທາງໃຕ້ຄວນຈະໄດ້ຮັບໂທດຢ່າງຫນັກ. ຄວາມ ຮູ້ສຶກເຫລົ່ານີ້ ໄດ້ຮັບການສນັບສນູນ ຈາກສະມາຊິກສະພາກົງແກຮສ ບາງທ່ານ ຊຶ່ງເຂົາເຈົ້າໄດ້ສວຍໂອກາດທັນທີເພື່ອສເນີວ່າ ພວກທີ່ ມາຈາກຮັຖທາງໃຕ້ຫລາຍຄົນຊຶ່ງປັດຈຸບັນນີ້ມີຫນ້າທີ່ການສາໍຄັນໃນວົງ ການຂອງຮັຖບານນັ້ນຈະຕ້ອງຄອຍຖ້າເວລາໄປອີກສິບເດືອນ ເພາະ ວ່າພວກນີ້ແມ່ນພວກທີ່ເປັນຕົວຕັ້ງຕົວຕີໃນການກໍ່ສົງຄາມທາໍລາຍສຫະ ພັນ. ຍົກຕົວຢ່າງແມ່ນຮອງປະທານາທິບໍດີ ຂອງຮັຖສັມພັນທະພາບ ຊຶ່ງມາບັດນີ້ ກໍໄດ້ກັບມາເປັນຜູ້ແທນ ຈາກຮັຖຈໍເຈັຍ. ຕາມທັສນະ ຂອງຊາວໃຕ້ແລ້ວ, ການຄັດເລືອກເອົາຜູ້ນາໍ ເຂົ້າຮັບຕາໍແຫນ່ງນັ້ນ ເປັນຂອງທັມມະດາ, ແຕ່ມັນກາຍເປັນຢາອັນຂົນຂື່ນ ທີ່ສຸດ ທີ່ຊາວ ເຫນືອຈະກືນລົງບໍ່ໄດ້.

ນອກຈາກນີ້, ຍັງມີການຈົ່ມວ່າ ຊາວຜິວດາໍຕ້ອງການຄວາມ ຄູ້ມຄອງອີກ. ເມື່ອເວລາຜ່ານພົ້ນໄປ, ໄດ້ເກີດມີຄວາມຄິດຂຶ້ນອີກ ວ່າ ຊາວຜິວດາໍຄວນຈະໄດ້ຮັບສິດທິໃນດ້ານສັງຄົມ ແລະການເມືອງ ເທົ່າທຽມກັນ ກັບພົລເມືອງຜິວຂາວ. ມີອີກບາງພວກ ຊຶ່ງຮ່ວມທັງ ທ່ານລົງຄອນໄດ້ເຫັນດີວ່າ ໃນການໃຫ້ສິດທິໃນການເລືອກຕັ້ງ ແລະ ສິດທິອັນສົມບູນຂອງພົລເມືອງນີ້ ກ່ອນອື່ນຈະຕ້ອງໃຫ້ສິດທິແກ່ຊາວຜິວ ດາໍທີ່ມີການສຶກສາດີ ແລະພວກທີ່ຮັບໃຊ້ໃນກອງທັບ ຂອງສຫະພັນ,

ແຕ່ຣັຖສະພາທາງໃຕ້ຊຶ່ງແມ່ນທ່ານຈອນສັນເປັນຜູ້ວາງແຜນກໍໄດ້ອອກ ກົດໝາຍຕ່າງໆ ກ່ຽວກັບການໃຫ້ສິດທິ ແລະການຄຸ້ມກັນມະນຸດໃຫ້ມີ ອິສຣະເສຣີ.

ສຳລັບຊາວໃຕ້ນັ້ນ, ຍັງຈະຕ້ອງປະເຊີນໜ້າກັບບັນຫາຂອງ ຊາວຜິວດຳ ຊຶ່ງມີຈຳນວນຮອດສາມລ້ານຫ້າແສນຄົນ ຊຶ່ງຖືກປົດປ່ອຍ ໃຫ້ເປັນອິສຣະໃນຣະຫວ່າງໜຶ່ງມານີ້, ດັ່ງນັ້ນຈຳເປັນທີ່ຣັຖເຫລົ່ານີ້ ຈະຕ້ອງເບິ່ງນຳເຂົ້າເຈົ້າຢ່າງໃກ້ຊິດ ແລະປະຕິບັດຕາມກົດໝາຍນີ້ ຢ່າງເຄັ່ງຄັດ ຊຶ່ງເອີ້ນກັນວ່າກົດດຳ. ມີພວກທີ່ຢູ່ທາງເໜືອຫລາຍ ຄົນເຫັນວ່າ ຜົນໄດ້ຈາກສົງຄາມຄັ້ງນີ້ຍັງບໍ່ທັນສົມບູນເທື່ອ, ແລະໄດ້ ຍົບຍົກເອົາສິ່ງທີ່ບໍ່ຈົບບໍ່ດີ ໃນກົດນີ້ມາອ້າງອີງວ່າ ທາງໃຕ້ຍັງເອັນ ອຽງໄປໃນການສ້າງຣະບົບການມີຂ້າທາສຂຶ້ນໃໝ່ອີກ.

## ຜົນຈາກພາຍຫລັງສົງຄາມ

ຕໍ່ຈາກນັ້ນມາ, ຊາວເໜືອຫລາຍຄົນໄດ້ກັບມາຮູ້ສຶກວ່າ ປະ ທານາທິບໍດີນັ້ນ ມີການຜ່ອນຜັນຫລາຍໂພດ, ແລະຕ່າງຄົນກໍມີຄວາມ ເຫັນໃຈສະມາຊິກ ສະພາກົງແກຣສ. ຕໍ່ມາ ທາງສະພາກົງແກຣສ ຈຶ່ງໄດ້ພິຈາຣະນາ ກົດໝາຍວ່າດ້ວຍສິດທິຂອງມະນຸດ ທີ່ໄດ້ສເນີໃນ ເດືອນເມສາປີ ໑໙໔໔ ທີ່ທ່ານຈອນສັນໄດ້ປະຕິເສດໄປແລ້ວ ແລະ ກົດໝາຍໃໝ່ ວ່າດ້ວຍການໃຫ້ຄວາມຄຸ້ມຄອງແກ່ມະນຸດເສຣີ ໃນ

ເດືອນກໍຣະກະດາ ປີ ຈຊຝຝ ຊຶ່ງກົດຫມາຍທັງສອງຢ່າງນີ້ໄດ້ຫ້ານບໍ່ ໃຫ້ຣັຖສະພາທາງໃຕ້ອະນຸຍາດການແບ່ງແຍກບຸກຄົນດ້ວຍຊັ້ນວັນນະ. ໃນທີ່ສຸດ ທາງສະພາກົງແກຣສໄດ້ສເນີກົດຫມາຍມາຕຣາທີສິບສີ່ ຊຶ່ງ ບົ່ງໄວ້ວ່າ "ບຸກຄົນທົ່ວໆໄປທີ່ເກີດຫລືຕັດສັນຊາດໃນສະຫະຣັຖ ຕາມ ກົດຫມາຍແລ້ວ, ເຂົາເຈົ້າກໍແມ່ນພົລເມືອງຂອງສະຫະຣັຖແລະ ພົລ ເມືອງຂອງຣັຖ ທີ່ເຂົາອາໄສຢູ່". ໃນຈຸດສົນໃຈ ອັນຣີບດ່ວນນັ້ນ, ແມ່ນການປະກັນການປຽບທຽບສັນຊາດຂອງຊາວຜິວດຳ.

ຣັຖສະພາຂອງທາງໃຕ້ທຸກໆບ່ອນ, ນອກຈາກຣັຖເທນເນສຊີ ໄດ້ປະຕິເສດໃຫ້ສັຕຍາບັນແກ່ກົດຫມາຍ ທີ່ດັດແປງໃຫມ່ນີ້ ຈະມີບາງ ຄົນໃນນີ້ ໄດ້ອອກສຽງຄັດຄ້ານ ຢ່າງເປັນເອກສັນ. ພຶດຕິການດັ່ງ ກ່າວນີ້ເປັນຫລັກຖານພຽງພໍແກ່ບາງຄນະທີ່ວ່າ ຄວນຈະໃຫ້ມີການລົງ ໂທດຢ່າງຫນັກ ແລະທາງເຫນືອຈະຕ້ອງຍື່ນມືເຂົ້າຊ່ວຍທັນທີ ເພື່ອ ຄູ້ມກັນສິດທິ ຂອງມະນຸດເສຣີ. ດັ່ງນັ້ນທາງສະມາຊິກ ສະພາກົງ ແກຣສໄດ້ດຳເນີນການຕໍ່ໄປ ເພື່ອວ່າແຜນການຂອງເຂົາເຈົ້າຈະໄດ້ ດຳເນີນຕໍ່ໄປ ແລະໃນເດືອນມີນາ ປີ ຈຊຝກ, ກົດຫມາຍວ່າດ້ວຍ ການສ້າງສາໃຫມ່ກໍໄດ້ຜ່ານສະພາໄປແລ້ວ ໂດຍບໍ່ຫົວຊານຳຣັຖບານ ພົລເຣືອນ ຊຶ່ງຖືກຕັ້ງຂຶ້ນມາໃຫມ່ໃນພາກໃຕ້. ກົດຫມາຍໃຫມ່ນີ້ໄດ້ ແບ່ງປັນຣັຖທາງໃຕ້ ອອກເປັນຫ້າຣັຖ, ແລະໃຫ້ຢູ່ພາຍໃຕ້ ການປົກ ຄອງຂອງຣະບຽບການທະຫານ, ແລະຍັງໄດ້ເນັ້ນອີກວ່າ ຣັຖ ທັງ

ຫມົດນີ້ຈະຫລີກເວັ້ນຈາກຣັຖບານຂອງທະຫານໄດ້ ກໍຕໍ່ເມື່ອເຂົາເຈົ້າ ຍອມຣັບຮູ້ມາຕຣາທີສິບສີ່ ແລະຣັບຮູ້ສິດທິໃນການເລືອກຕັ້ງຂອງຊາວ ຜິວດຳແລ້ວເຂົາເຈົ້າ ຈື່ງຈະມີສິດຈັດຕັ້ງຣັຖບານພົລເຮືອນຂຶ້ນ ເພື່ອ ເຂົ້າຮ່ວມໃນສຫະພັນ ນຳຫມູ່ຄືເກົ່າ. ໃນເດືອນກໍຣະກະດາ ປີ ຈຊຝຊ, ມາຕຣາທີສິບສີ່ກໍໄດ້ຣັບສັຕຍາບັນ ແລະປີຕໍ່ມາກໍໄດ້ຍອມຣັບ ຮູ້ສິດທິໃນການປ່ອນບັດຂອງຊາວຜິວດຳ ໃນທາງໃຕ້, ແລະໃນສໄມ ປະຊຸມຂອງສະພາກົງແກຣສເທື່ອຈະມານີ້ ຈະໄດ້ຍົກເລີກກົດຫມາຍ ເກົ່າໆແລະມາຕຣາທີສິບສີ່ຈະຖືກຜ່ານສະພານີ້ໄປ ແລະຣັຖສະພາຈະ ໄດ້ໃຫ້ສັຕຍາບັນໃນປີ ຈຊກຄ. ກົດຫມາຍສະບັບນີ້ ໄດ້ບົ່ງໄວ້ວ່າ "ສິດທິໃນການປ່ອນບັດເລືອກຕັ້ງຂອງພົລເມືອງຂອງສະຫະຣັຖນັ້ນຈະ ບໍ່ຖືກປະຕິເສດໂດຍສະຫະຣັຖຫລືຣັຖອື່ນໆເລີຍແລະໂດຍບໍ່ຖືເຊື້ອຊາດ ສີສັນ ຫລືຖານະການເປັນຄົນຣັບໃຊ້ວ່າງຫມໍ່ໆມານີ້.

ຕາມຄວາມເປັນຈິງແລ້ວ, ກົດຫມາຍວ່າດ້ວຍການສ້າງປະ ເທດຊາດໃຫມ່ນີ້ແມ່ນຄວາມຈົງໃຈ ຢາກເອົາຊນະການຫຍຽດຫຍາມ ຂອງທ່ານປະທານາທິບໍດີ ຈອນສັນ. ເມື່ອທາງສະພາສູງ ໄດ້ນຳ ເຣື່ອງນີ້ຂຶ້ນພິຈາຣະນາຕັດສິນ ປາກົດວ່າ ທ່ານຈອນສັນໄດ້ໃຊ້ວິທີ ການຊຶ່ງທ່ານມີອຳນາດກະທຳໄດ້ໃນການສັ່ງປົດຣັຖມົນຕຣີ ສົງຄາມ ອອກຈາກຕຳແຫນ່ງ, ແຕ່ສຳຄັນຍິ່ງກວ່ານີ້ກໍຄື ໄດ້ມີການປຶກສາຫາລື ຢູ່ໃນສະພາກົງແກຣສວ່າ: ມີວິທີໃດທີ່ຈະປົດທ່ານຈອນສັນອອກຈາກ

ห้ามจำหน่าย

ຕາໍແຫນ່ງໄດ້ ເພາະວ່າທ່ານຈອນສັນ ບໍ່ເຄີຍເຫັນດີນາໍນະໂຍບາຍ ຂອງສະພາກົງແກຣສເລີຍ ແລະແມ່ນວ່າ ສຽງສ່ວນຫລາຍໃນສະພາ ໄດ້ເຫັນດີຮັບຮູ້ເອົາກໍຕາມ. ຄວາມພຍາຍາມ ທີ່ຈະປົດທ່ານຈອນ ສັນອອກຈາກຕາໍແຫນ່ງ ເລີຍບໍ່ສາໍເຮັດ ແລະທ່ານຈອນສັນກໍໄດ້ດາໍ ຮົງຕາໍແຫນ່ງຂອງທ່ານຈົນຄົບປີການຄອງຕາໍແຫນ່ງຂອງທ່ານ.

ພາຍໃຕ້ກົດຫມາຍ ວ່າດ້ວຍການສ້າງແປງ ປະເທດຊາດ, ທາງສະພາກົງແກຣສ ໄດ້ຮັບເອົາຮັຖອາແຄນຊັສ, ແຄໂຣໄຣນາ ເຫນືອ, ແຄໂຣໄຣນາໃຕ້, ລູຍເຊັຍນາ, ຈໍເຈັຍ, ອາລາບາມາ, ແລະຮັຖຟລໍຣິດາ ເຂົ້າຮ່ວມໃນສຫະພັນໃນຣະດູຮ້ອນຂອງປີ ຈຊຝຊ, ຊຶ່ງກ່ອນຫນ້ານີ້ ທ່ານຈອນສັນໄດ້ປະຕິເສດບໍ່ຍອມຮັບເອົາຮັຖເຫລົ່ານີ້ ເຂົ້າຮ່ວມໃນສຫະພັນ. ຜູ້ທີ່ຈະເປັນຜູ້ຕາງຫນ້າຂອງຮັຖບານໃນຮັຖ ທີ່ຕັ້ງຂຶ້ນໃຫມ່ນີ້ ຈະເປັນແນວໃດນັ້ນ, ເຮົາພໍເບິ່ງໄດ້ຈາກໃນຄວາມ ຈິງດັ່ງນີ້ຄື, ສ່ວນຫລາຍພວກທີ່ຖືກຄັດເລືອກເປັນສະມາຊິກສະພາຕ່າໍ ແລະສະພາສູງນັ້ນແມ່ນພວກທີ່ມາຈາກທາງພາກເຫນືອ ຊຶ່ງເຂົາເຈົ້າ ໄດ້ອົພຍົບມາຢູ່ທາງພາກໃຕ້ຫລັງຈາກສົງຄາມສິ້ນສຸດລົງ ເພື່ອຜົນປະ ໂຍດທາງການເມືອງ. ຕໍ່ມາ ຊາວຜິວດາໍ ກໍໄດ້ມີອາໍນາດເຕັມໃນ ຮັຖສະພາທີ່ຮັຖລູຍເຊັຍນາ, ແຄໂຣໄຣນາໃຕ້, ແລະມີຊີຊິບປີ ແລະ ໃນຫລາຍຮັຖອື່ນໆ ແມ່ນວ່າຊາວຜິວດາໍມີຈາໍນວນນ້ອຍຢູ່ໃນຮັຖສະພາ ກໍຕາມ, ແຕ່ເຂົາເຈົ້າມີອິດທິພົນ ໃນການເລືອກຕັ້ງຢ່າງແຂງແຮງ.

ສ່ວນນັກກົດໝາຍຊາວໃຕ້ ຊຶ່ງເປັນຊາວອະເມຣິກັນຜິວຂາວກໍມີພຽງ ເລັກນ້ອຍ ແລະກະຈັດກະຈາຍກັນຢູ່ທົ່ວທຸກບ່ອນ ໂດຍບໍ່ສາມາດຈະ ເບິ່ງແຍງການດຳເນີນງານ ໃນການສ້າງຖນົນ, ສ້າງຂົວ, ແລະ ໃຫ້ຄຳແນະນຳຢ່າງດີ ໃນດ້ານກົດໝາຍກ່ຽວກັບການສຶກສາ ແລະ ການກູ້ສິນ, ແຕ່ສຸບຄວາມແລ້ວ ບໍ່ຄ່ອຍຈະໄດ້ຜົນເຕັມເມັດເຕັມ ຫນ່ວຍປານໃດ.

ດ້ວຍຄວາມຜິດຫວັງດັ່ງກ່າວນີ້, ຊາວອະເມຣິກັນຜິວຂາວທີ່ຢູ່ ທາງພາກໃຕ້ເຊື່ອຖືວ່າ ຄວາມສືບໄລແບບລ້າສມັຍ ໄດ້ລຸກລາມຣັຖ ຂອງເຂົາເຈົ້າແລ້ວ ແລະບໍ່ມີທາງແກ້ໄຂທີ່ຖືກຕ້ອງຕາມກົດແນວໃດພໍ ຈະຢຸດຢັ້ງຣະບົບການປົກຄອງໃຫມ່ນີ້ໄດ້, ນອກຈາກຈະອາໃສຊ່ອງ ທາງທີ່ນອກເຫນືອໄປຈາກກົດໝາຍເທົ່ານັ້ນ. ດັ່ງນັ້ນ ເມື່ອກາລະ ເວລາໄດ້ຜ່ານພົ້ນໄປຢູ່ທາງໃຕ້ ໄດ້ມີການໃຊ້ກຳລັງ ຕໍ່ກັນເລື້ອຍ ແລະຍິ່ງຕື່ມຄວາມຫຍຸ້ງຍາກ ແລະຄວາມບໍ່ເປັນລະບຽບຫລາຍຂຶ້ນຊຶ່ງ ເປັນສາເຫດທີ່ພາໃຫ້ມີການອອກກົດໝາຍໃນປີ ໑໘໗໐ ໂດຍບິ່ງໄວ້ ວ່າ ບຸກຄົນທີ່ພຍາຍາມເຮັດໃຫ້ສິດທິ ຂອງຊາວຜິວດຳ ມີນ້ອຍລົງຈະ ໄດ້ຮັບໂທດຕາມກົດໝາຍ.

## ການປະຕິບັດງານຢ່າງຈິງຈັງໄດ້ເລີ່ມແຕ່ນັ້ນມາ

ຄວາມຮ້າຍແຮງກ່ຽວກັບກົດໝາຍນີ້ ຍິ່ງເພີ່ມພູນຂຶ້ນ ແລະ

ການຮຸກລ້ຳຂອງສະພາກົງແກຣສ ທີ່ມີຕໍ່ອິດທິພົນຂອງຕຳຣວດຂອງແຕ່ ລະຣັຖນີ້ເປັນການຂັດຂວາງຕໍ່ການສ້າງຄວາມຖືກຕ້ອງປອງດອງພາຍ ໃນຊາດ, ຕໍ່ພວກທາງເຫນືອ ແລະຄວາມຮັກແພງ ຂອງຄົນໃນຊາດ ປະຊາຊົນຊາວອະເມຣິກັນຜິວຂາວທາງໃຕ້ ຍັງໄດ້ໂຮມກັນເປັນກຸ່ມຕໍ່ ຕ້ານພັກຣິພັບລິແຄນ ຊຶ່ງເປັນພັກການເມືອງຂອງຊາວຜິວດຳແລະໄດ້ ເພີ່ມພູນຄວາມຫມັ້ນຄົງໃຫ້ແກ່ພັກເດໂມແຄຣສ ໃນເຂດນັ້ນຫລາຍຂຶ້ນ ເມື່ອກາລະເວລາໄດ້ຜ່ານພົ້ນໄປ, ກໍ່ເປັນທີ່ເຫັນແຈ້ງຢູ່ວ່າ ບັນຫາ ຂອງທາງໃຕ້ບໍ່ໄດ້ຮັບການແກ້ໄຂ ດ້ວຍການບັງຄັບຂອງກົດຫມາຍແຕ່ ຢ່າງໃດເລີຍ ແລະຍັງໄດ້ເກັບຄວາມກຽດຊັງທີ່ມີຕໍ່ຣັຖທີ່ເຄີຍເປັນສັມ ພັນທະພາບມາກ່ອນ. ແລະໃນເດືອນເມສາປີ ໑໙໗໘, ສະພາກົງ ແກຣສໄດ້ອອກກົດຫມາຍວ່າດ້ວຍການໃຫ້ອະໄພໂທດ ເພື່ອໃຫ້ທຸກຄົນ ມີສິດທິເທົ່າທຽມກັນ ໃນດ້ານການເມືອງ, ໂດຍສະເພາະຜູ້ທີ່ກຽວ ຂ້ອງ ກັບຄນະສັມພັນທະພາບ ປະມານຫ້າຮ້ອຍຄົນ. ຈາກນັ້ນມາ, ແຕ່ລະຣັຖກໍໄດ້ເລືອກເອົາສະມາຊິກຂອງພັກເດໂມແຄຣສເຂົ້າຮັບຕຳ ແຫນ່ງຣາຊການຕ່າງໆ. ຕົກມາໃນປີ ໑໙໗໙, ພວກທີ່ສົ່ງກັດຢູ່ພັກ ລິພັບລິແຄນຍັງມີອິດທິພົນຢູ່ໃນສາມຣັຖທາງພາກໃຕ້ເທົ່ານັ້ນ ແລະໃນ ການເລືອກຕັ້ງປີນັ້ນ, ນັບວ່າເປັນເຫື່ອທຳອິດໃນປະວັດສາດອະເມຣິ ກັນທີ່ມີຄວາມຫຍຸ້ງຍາກ ແລະຄວາມບໍ່ເປັນຣະບຽບຮຽບຮ້ອຍ ເພາະ ວ່າ ຣັຖທາງໃຕ້ບໍ່ຍອມຮັບຮູ້ຄວາມສງົບໃດໆ ຕາບໃດທີ່ກຳລັງທະ

ຫານຍັງບໍ່ຖອນອອກຈາກຣັຖຂອງເຂົ້າເຈົ້າ. ໃນປີຕໍ່ມາ, ທ່ານປະ
ທານາທິບໍດີຣຸດຝ່ອດ ບ. ເຣສ໌ ຈຶ່ງໄດ້ສັ່ງໃຫ້ຖອນທະຫານອອກຈາກ
ຣັຖທາງໃຕ້ໂດຍອ້າງວ່າ ເປັນອຸປສັກຕໍ່ການສ້າງ ຄວາມສາມັກຄີໃນ
ຊາດ, ແຕ່ທີ່ຈິງຕາມອຸດົມຄະຕິຂອງພັກນຶ່ງແລ້ວ ແມ່ນປະສົງຢາກໃຫ້
ມີຄວາມລົ້ມກັນແກ່ຊາວຜິວດຳ ແລະຖ້າຄິດໃນດ້ານອື່ນອີກແລ້ວ ແມ່ນ
ຫວັງຈະໄດ້ຄະແນນສຽງທາງພາກໃຕ້ ເພື່ອຫວັງຕຳແໜ່ງແລະອິດທິ
ພົລ.

ການປົກຄອງທາງຣັຖພາກເໜືອ ປາກົດວ່າດີກວ່າທາງໃຕ້, ແຕ່ປັດຈຸບັນນີ້ທາງໃຕ້ໄດ້ກາຍເປັນດິນແດນ ທີ່ມີອຸປສັກເນື່ອງຈາກພົນ ສະທ້ອນຈາກໄພສົງຄາມຊຶ່ງມີບັນຫາຫຍຸ້ງຍາກກ່ຽວກັບຫນີ້ສິນໄດ້ສ້າງ ຂຶ້ນໂດຍຣັຖບານທີ່ບໍ່ຖືກຕ້ອງ ແລະໄດ້ສູນເສັຍກຳລັງໃຈຈາກສົງຄາມ ແບ່ງແຍກຜິວ. ຈາກການສ້າງບ້ານແປງເມືອງໃໝ່ແບບຈອມປອມ ໃນຣະຍະສິບສອງປີທີ່ຜ່ານມາຄື ຕັ້ງແຕ່ປີ ໑໙໕໓ ຫາປີ ໑໙໖໓ ນັ້ນ ມາບັດນີ້ກໍໄດ້ໃຊ້ຄວາມພຍາຍາມຢ່າງແທ້ຈິງ ໃນການສ້າງແປງຣັຖ ທາງໃຕ້ໃໝ່. ເພື່ອສ້ອມແປງຄວາມຈິບຫາຍຊຶ່ງເກີດຈາກສົງຄາມ ແລະເຫດການ ຊຶ່ງນຳພົນສະທ້ອນ ມາສູ່ບ້ານເມືອງພາຍຫລັງນັ້ນ, ເປັນວຽກທີ່ໜັກໜ້າທີ່ສຸດ ເພາະວ່າ ຄວາມຂົມຂື່ນຈາກເສິກສົງ ເມືອງໃນດາວແລ້ວນີ້ ແມ່ນຄວາມເສົ້າໂສກທີ່ສຸດ ໃນປະວັດສາດອະ ເມຣິກັນ. ດ້ວຍການເຂົ້າໃຈດີ ເຖິງພຶດຂອງສົງຄາມເທື່ອແລ້ວນີ້

ແລະຜົນສະທ້ອນ ຊຶ່ງຕາມມານັ້ນໄດ້ພາໃຫ້ປະຊາຊົນ ຖືເປັນບົດຮຽນ ແລະປະສົບການອັນລ້ຳຄ່າໃນການແກ້ໄຂບັນຫາທີ່ຈະເກີດຂຶ້ນໃນພາຍ ໜ້າຂອງພາກຕ່າງໆແລະໂດຍສະເພາະແມ່ນຣັຖຢູ່ທາງໃຕ້ຂອງ ສະ ຫະຣັຖ.

# 6

## ຍຸກຂອງການແຜ່ຂຍາຍແລະດັດແປງ

"ພວກເຮົາຈະຕ້ອງຮັບທຸກສິ່ງທຸກຢ່າງ, ແມ່ນວ່ານັນຈະຄ້າຍຄືສັດພິເສດກໍຕາມ".

ເປັນຄຳເວົ້າຂອງທ່ານວູດດູຮວິລສັນ ໃນສານທີ່ສີ່ງເຖີງສະພາກົງແກຮສ, ໃນວັນທີ ຊ ເດືອນເມສາ, ຈຈຈນ.

ໃນຮະຫວ່າງສົງຄາມໃຫຍ່ສອງເທື່ອຄື ສົງຄາມກາງເມືອງ ແລະສົງຄາມໂລກຄັ້ງທີນຶ່ງສະຫະຮັຖອະເມຣິກາໄດ້ມີຄວາມປ່ຽນແປງຂຶ້ນຫລາຍ ແລະໃນຮະຍະເວລາບໍ່ເຖີງຫ້າສິບປີ, ສະຫະຮັຖໄດ້ປ່ຽນສະພາບຈາກສາທາຮະນະຮັຖຊົນບົດມາເປັນເມືອງຫລວງ ແລະເຂດຊາຍແດນ ຕາມແຖບທາງນອກ ກໍສູນສິ້ນໄປຫມົດແລ້ວ. ໂຮງງານໃຫຍ່ໆໄດ້ເກີດຂຶ້ນຢ່າງດົກຫນາ, ມີຖນົນຫົນທາງ ແລະທາງຣົຖໄຟ

ໄປເຖິງທົ່ວທຸກມຸນເມືອງ ຊຶ່ງພາໃຫ້ບ້ານເມືອງຈເຣີນຮຸ່ງເຣືອງຂຶ້ນ ໄວແລະການກະສິກັມກໍກ້າວຫນ້າດີ. ແຕ່ມີສິ່ງບໍ່ຈົບບໍ່ງາມຄວບຄູ່ມາ ນຳຄວາມສີວິໄລນີ້ກໍຄື ຣະບົບການຜູກຂາດ ທີ່ເລີ້ມປາກົດຕົວມີຂຶ້ນ, ຖານະຄວາມເປັນຢູ່ຂອງຄົນງານ ໃນໂຮງງານຕ່າງໆ ນັ້ນທຸກຈົນ, ບ້ານເມືອງໄດ້ຂຍາຍອອກຢ່າງວ່ອງໄວ ຈົນວ່າຣັຖບານບໍ່ສາມາດຈັດ ຫາເຣືອນຊານໃຫ້ຜູ້ຄົນຢູ່ພຽງພໍ ຫລືບໍ່ສາມາດປົກຄອງພົລເມືອງ ທີ່ ຫນາແຫນ້ນ, ແລະຜົນຜລິດຈາກໂຮງງານ ເກືອບບໍ່ພໍກັບຄວາມຕ້ອງ ການຂອງປະຊາຊົນ. ປະຕິກິຣິຍາ ທີ່ມີຕໍ່ຄວາມບົກພ່ອງ ເຫລົ່ານີ້ ແມ່ນມາຈາກພົລເມືອງ ໃນອະເມຣິກາ ແລະຈາກບຸກຄົນຊັ້ນນຳທາງ ການເມືອງເຊັ່ນທ່ານ ເກລວແລນ ໄບຼອັນ, ເທໂອດໍ ຮູສແວລ, ແລະທ່ານ ວິບສັນ. ເຂົາເຈົ້າໄດ້ຈັດໃຫ້ມີການປ່ຽນແປງ ເອົາຈິງ ເອົາຈັງຕາມອຸດົມຄະຕິ ໃນທາງປຣັຊຍາ, ແຕ່ເອົາມາປະຕິບັດໃນ ພາກບໍຣິຫານກໍໄດ້, ແລະໄດ້ຍອມຣັບຄຳສຸພາສິດທີ່ວ່າ "ຣັຖສະພາ ຈະຕ້ອງເລີ້ມຕົ້ນ ຢູ່ບ່ອນທີ່ຄວາມຊົ່ວຮ້າຍເກີດຂຶ້ນ". ໃນຣະຍະເວ ລາທີ່ມີການດັດແປງແກ້ໄຂໃຫມ່ ຈົນເກີດເປັນຜົນສຳເຣັດນັ້ນໄດ້ຊ່ວຍ ໃຫ້ເຂົາເຈົ້າຫມັ່ນກວດເບິ່ງສິ່ງທີ່ຜິດພາດ ຊຶ່ງເກີດຂຶ້ນໃນຣະຍະເວ ລາທີ່ມີການແຜ່ຂຍາຍອອກໄປ. ແຕ່ "ສົງຄາມກາງເມືອງ ໄດ້ຂີດ ບາດແຜເລິກໄວ້ ໃນພົງສາວະດານຂອງປະເທດ ເພາະວ່ານັນໄດ້ ປ່ຽນແປງບົດບາດຊຶ່ງໄດ້ເລີ້ມຕົ້ນມາແລ້ວໃຫ້ເກີດຂຶ້ນອີກພາຍໃນຊາວ

ຫາສາມສິບປີຕໍ່ມາ..." ອັນນີ້ເປັນຂໍ້ຂຽນຕອນນຶ່ງຂອງນັກຂຽນຄົນ
ນຶ່ງ ຄວາມຕ້ອງການຂອງສັງຄົມນັ້ນ ໄດ້ຣີບເຮັ່ງໃຫ້ມີການຜລິດຜົນ
ຫລາຍຂຶ້ນ ແລະໄດ້ພາໃຫ້ເສຖກິດຂຍາຍຂຶ້ນໄວແລະປັດໃຈສຳຄັນໃນ
ເບື້ອງຕົ້ນແມ່ນການຜລິດເຫລັກໃຫ້ເປັນປະໂຍດ, ນອກນີ້ກໍມີອາຍນ້ຳ
ແລະກຳລັງໄຟຟ້າ ຊຶ່ງໄດ້ກ້າວໄປເຖິງຂັ້ນວິທຍາສາດແລະການປະ
ດິດຄິດແຕ່ງຂຶ້ນ.

ຕໍ່ມາ ທະບຽນອະນຸຍາດ ໄດ້ອອກໃຫ້ປະມານ ນຶ່ງ,ooo ສບັບ ກ່ອນປີ ໑໘໙o ຊຶ່ງເປັນທະບຽນຂອງການປະດິດຄິດແຕ່ງສິ່ງ ຂອງຂຶ້ນ. ຕັ້ງແຕ່ປີ ໑໘໙o ຫາປີ ໑໘ooo, ທະບຽນອະນຸຍາດໄດ້ ອອກໃຫ້ປະມານ ๔๘o,ooo ສະບັບ ແລະພໍມາເຖິງນຶ່ງສ່ວນສີ່ຂອງ ສັດຕະວັດທີ ๘o, ຈຳນວນທະບຽນອະນຸຍາດ ໄດ້ອອກໃຫ້ເຖິງນຶ່ງ ລ້ານສບັບ. ຫລັກການຂອງເຄື່ອງກຳເນີດໄຟຟ້າ ຊຶ່ງໄດ້ຖືກຂຍາຍ ອອກແຕ່ປີ ໑໘ນ໑ ພຸ້ນ, ໄດ້ປ່ຽນແປງຊີວິດຊາວອະເມຣິກັນ ຫລັງ ຈາກປີ ໑໘ສo ຢ່າງຫລວງຫລາຍ ຊຶ່ງເປັນເວລາທີ່ທ່ານໂທມັສ ເອ ດິຊັນ ແລະຄົນອື່ນໄດ້ຄິດປະດິດອອກມາໃຊ້ໃຫ້ເປັນປະໂຍດ. ທ່ານ ແຊມຸຍແອລ ແອຟ. ບີ. ມອກສ໌ ໄດ້ປະດິດໂທຣະເລກ ທີ່ໃຊ້ເຄື່ອງ ໄຟຟ້າອອກມາໃຊ້ໃນປີ ໑໘๔๔ ແລະທ່ວທຸກໆມຸມເມືອງ ໃນປະເທດ ກໍສາມາດຕິດຕໍ່ກັນໄດ້, ໂດຍແຜ່ນຕິດຕໍ່ ແລະຕີ້ຕ້ວຂອງສາຍ. ໃນ ປີ ໑ສກ໙, ທ່ານອາເລັກແຊນເດີ ເກຼແຮມແບລໄດ້ສະແດງການໃຊ້

ເຄື່ອງໂທຣະສັບ ແລະໃນຣະຫວ່າງເຄິ່ງສັຕວັດ, ອະເມຣິກາມີໂທ ຣະສັບເຖິງ ๑๗,๐๐๐,๐๐๐ ອັນ ຊຶ່ງໄດ້ຖືກປະດິດອອກໃຫ້ຜູ້ຄົນ ໃຊ້, ແລະຄວາມສະດວກເຫລົ່ານີ້ໄດ້ຮັດໃຫ້ຊີວິດດ້ານສັງຄົມ ແລະ ເສຖກິດຂອງຊາດກ້າວໜ້າໄວຍິ່ງຂຶ້ນ. ຈັ່ງຫວະຂອງພຸຣະກິດກໍໄວ ຂຶ້ນເຫມືອນກັນ ເພາະວ່າ ຈັກພິມດິດ ກໍຖືກປະດິດອອກໃຊ້ ໃນປີ ๑๘๗, ໃນປີ ๑๘๘๘ ເຄື່ອງຈັກສິມເລກ ກໍຖືກປະດິດອອກມາໃຊ້, ແລະເຄື່ອງຈັກນັບເງິນກໍໄດ້ຖືກປະດິດຂຶ້ນໃນປີ ๑๘๙๗ ເຫມືອນກັນ. ເຄື່ອງຮຽງຕົວພິມໄດ້ຖືກປະດິດອອກມາໃຊ້ໃນປີ ๑๘๘๗, ຫັ່ງແທ່ນ ພິມແລະເຄື່ອງຈັກພັບເຈ້ຍ ໄດ້ຊ່ວຍໃຫ້ການພິມຫນັງສືພິມສາມາດພິມ ຊໍ່ໂມງນຶ່ງໄດ້ ๘๔๐,๐๐๐ ສະບັບ. ຫລັງຈາກປີ ๑๘๘๐, ທ່ານ ເອດີສັນໄດ້ປະດິດໂຄມໄຟອັນແຈ້ງສວ່າງ ຊຶ່ງພາໃຫ້ ເຮືອນຫລາຍ ລ້ານຫລັງມີຄວາມເປັນຢູ່ດີຂຶ້ນ, ມີຄວາມປອດໄພກວ່າ ແລະຣາຄາກໍ ຖືກ ຢ່າງບໍ່ເຄີຍມີມາກ່ອນ. ນອກນີ້ ທ່ານເອດີສັນ ຍັງໄດ້ປະດິດ ເຄື່ອງຈັກປາກໄດ້ ແລະດ້ວຍການຮ່ວມມືກັບທ່ານ ຈອດ໌ ອິສແມນ, ຈຶ່ງສາມາດປະດິດພາພຍົນຂຶ້ນ. ສິ່ງເຫລົ່ານີ້ ແລະການໃຊ້ຄວາມ ຮູ້ ທາງດ້ານວິທຍາສາດ ປະກອບກັນ, ໄດ້ນຳພິມສຳເຣັດໄປສູ່ການ ເພີ່ມພູນການຜລິດພິມໃນທຸກໆດ້ານ.

ຄຽງຄູ່ກັນໄປນີ້ ແມ່ນພື້ນຖານຂອງອຸດສາຫະກັມເຫລັກ ທີ່ໄດ້ ເຄື່ອນທີ່ໄປທາງພາກຕະວັນຕົກ ເມື່ອເວລາຜູ້ຊຳນານໃນທໍຣະນີວິທ



ກ້ອງຖ່າຍພາບເຮີ່ມບັນທຶກພາບປວັດໃນການສະຕະວັດຫຼື ຈຕ ເມື່ອກອງທະຫານສະຫະພັນເດີນສວນສນາມທີ່ຖນົນເພັນຊຶລວາເນັຮ ອັນເປັນເຄື່ອງຫມາຍວ່າສົງຄາມກາງເມືອງໄດສັ້ນສຸດລົງແລ້ວ.







ลุ่มจ้าย: ทางธิดไฟที่มาบับจิบภับที่โปธมอบเทิธิ ปอยต์ ใบปี จฐฝ๊ฝ ทำให้เจื่อมภาบติดต่ละหว่างฝั่งตาเว้บติภ ภับฝั่งตาเว้บออภ เทิงจ้าย: เจั้บดฐวภับภับภองภวฐบที่อิพยิบผู้ดิบมาตั้งธาภถาบใหม่จาภแดบจัสเมื่อปี จฐภ๘ ใจ้เวลาเดิบทางเท่าภับธิดไฟไปยังเมืองต่างๆ ขวา: ภาบเพาะปูภที่ขยายออภไปใบพาภตาเว้บติภ สะแดงให้เห็บเถิงภาบใจ้แธงมาเป็บจำบวบหลาย แทบเดื่องจักขบาดใหย่ใบสมัยบั้บ.

ໂຮງງານສ້າງຣົດຍົນຂອງເຮນຣີ ຟອຣ໌ດ ເມື່ອປີ ໑໙໐໘ ເທິງ: ການຜລິດຊິ້ນສ່ວນຕ່າງໆຂອງເຄື່ອງຍົນເປັນຈຳນວນຫລວງຫລາຍ ທຳໃຫ້ລົດຕົ້ນທຶນໃນການຜລິດ ແລະຂາຍໃນຣາຄາຕ່ຳ ລຸ່ມ: ຣົດຍົນທີ່ປະກອບເສັດແລ້ວ.




ວັນຢຸດພັກການ ເມື່ອປີ ໑໙໐໕ ປະຊາຊົນຈາກຊົນນະບົດພາກັນເຂົ້າມາຫ່ອໃນເມືອງ

ໃນລະຍະປາຍສະຕະວັດທີ ໑໙ ຕໍ່ກັບທີ ๒๐ ເປັນຍຸກທີ່ມີການປະດິດສິ່ງໃໝ່ໆໃນອະເມຣິກາ ເຫັ: ເຄື່ອງສາຍພາພຍົນຈົ່ງ ປະດິດໂດຍ ທໍມາສ ເອດິສັນ ໃນລະຫວ່າງປີ ๑๘๗๐-๑๙๐๐ ລຸນ: ເມື່ອປີ ๑๙๐๓ ວິລເບີຣ໌ ກັບອໍວິລ ໄຣທ໌ ປະດິດເຄື່ອງ ບິນ ຈົ່ງໃນຂະນະນັ້ນບິນໄດ້ເປັນເວລາພຽງ ๕๗ ນາທີ.



ເບລລ່ ກັບໂທຣະສັບເຄື່ອງທຳອິດທີ່ເອົາປະດິດ
ຂຶ້ນເມື່ອປີ ຈຸກຜ້ ຊຶ່ງຕໍ່ມາໃນປີ ຈຜວວ ມີຜູ
ຄົນນິຍົມໃຊ້ກັນເຖິງສາມລ້ານຄົນ.



ເມື່ອປີ ຈພວກ ຜູ້ອົພຍົບຫລັ່ງໄຫລເຂົ້າໄປຕັ້ງຖິ່ນ
ຖານທີ່ຢູ່ໃນນິວຢອກ ເປັນຈຳນວນເຖິງ ຈ.ມຸ
ລານຄົນ ຄົນຈຳນຸວນຫລວງຫລາຍຸມາເຮັດໄຮ
ແລະລຽງສັດ ແຸຕກໍມີຄອບຄົວທີ່ຫນຸມສາວບາງ
ພວກຕັ້ງຫລັກຖານຢູ່ໃນເຂດອຸດສາຫະກັມ ທາງ
ພາກຕາເວັນອອກ.



ຍາໄດ້ຄົ້ນພົບບໍ່ແຮ່ ທາງພາກນີ້, ໂດຍສະເພາະ ແມ່ນບໍ່ເຫລັກເມ ຊາບີ ຊຶ່ງຢູ່ເຫນືອທະເລສາບ ຊູບເປຣີເອີ ແລະໃນເວລາອັນໃກ້ນັ້ນ ໄດ້ພິສູດໃຫ້ເຫັນວ່າ ເປັນບໍ່ແຮ່ໃຫຍ່ທີ່ສຸດໃນໂລກ.

ແຮ່ນັ້ນຢູ່ຕາມຫນ້າດິນແລະງ່າຍທີ່ສຸດສາໍລັບການຂຸດຄົ້ນຂຶ້ນມາ ແລະແຮ່ທີ່ຄົ້ນພົບໃນບໍ່ແຫ່ງນີ້ເປັນແຮ່ທີ່ບໍຣິສຸດ ໂດຍປາສຈາກການປະ ປົນສິ່ງສົກປົກໃນທາສເຄມີຊນິດອື່ນ. ເມື່ອເອົາມາຫລອມໃຫມ່ແລ້ວ ກໍຈະອອກມາເປັນເຫລັກກ້າທີ່ມີຄຸນພາບດີ ມີຣາຄາພຽງໂຕນລະ ນ້ຍ ໂດລາອະເມຣິກັນ, ແທນທີ່ຈະຕົກເປັນຣາຄາໂຕນນຶ່ງ ນ້ຜ້ວ ໂດລາ ເຫມືອນເວລາກ່ອນອຸດສາຫະກັມໄດ້ຂຍາຍໃຫຍ່ອອກກວ່າເກົ່າ.

ຄວາມກ້າວຫນ້າໃນດ້ານຜລິດເຫລັກກ້າ ໂດຍການນາໍຂອງ ທ່ານແອນດຣູຄາເນຈີນັ້ນໄດ້ຮັບຜົນສາໍເຮັດຢ່າງງົດງາມ ແລະນັບວ່າ ຜລິດໄດ້ຈາໍນວນຫລາຍທີ່ສຸດ ໃນປະວັດສາດຂອງການອຸດສາຫະກັມ. ຄາເນຈີເປັນຊາວອົພຍົບຈາກປະເທດສະກອດແລນມາອະເມຣິກັນຕັ້ງ ແຕ່ຍັງເປັນເດັກຊາຍອາຍຸ ສິບສອງປີ, ລາວໄດ້ທາໍຄວາມກ້າວຫນ້າ ໃນງານອາຊີບເລື້ອຍໆຕັ້ງແຕ່ເປັນຄົນປັ່ນດ້າຍໃນໂຮງງານທໍ່ຝ້າຍໄປ ເຖີງຕາໍແຫນ່ງໃນໂຮງການໄປສະນີ, ແລະຈາກນັ້ນ ກໍໄດ້ເປັນເຈົ້າ ຫນ້າທີ່ທາງຣົຖໄຟ. ກ່ອນເຂົາຈະມີອາຍຸເຖີງສາມສິບປີ, ເຂົາມີ ຄວາມຮູ້ຮອບຄອບແລະມີຄວາມຄິດໄກໃນດ້ານການລົງທຶນ, ຊຶ່ງໃນປີ ຈຊຝ້ຍ ເຂົາໄດ້ທູ້ມເທເຮື່ອແຮງນາໍການງານຜແນກເຫລັກ ແລະບໍ່ພໍ

ເທົ່າໃດປີຜ່ານມາ ເຂົາກໍໄດ້ຕັ້ງບໍຣິສັດ ຮັບເໝົາຣັດຂົວເຫລັກ, ທາງຣົຖໄຟແລະຣົຖຈັກ. ສິບປີຕໍ່ມາ ໂຮງງານເຫລັກກ້າທີ່ລາວໄດ້ ສ້າງຢູ່ແມ່ນ້ຳໂມໂມກາເຣລາໃນຣັຖເພັນຊີລເວເນັຍນັ້ນໄດ້ກາຍເປັນ ໂຮງງານໃຫຍ່ທີ່ສຸດໃນປະເທດ ແລະແຕ່ລະປີຜ່ານໄປ ທຸຣະກິດຂອງ ຄາເນຈີ ກໍກ້າວໜ້າໄປເລື້ອຍໆ. ເຂົາໄດ້ຄວບຄຸມບໍ່ແມ່ນແຕ່ໂຮງ ງານໃໝ່ເທົ່ານັ້ນ, ເຂົາຍັງໄດ້ຄອບຄອງ ບໍ່ຖ່ານຫີນ ແລະຖ່ານ, ແລະບໍ່ແຮ່ ທີ່ທະເລສາບຊຸບເປຣິໂອີກດ້ວຍ. ນອກນັ້ນ, ເຂົາຍັງ ເປັນຜູ້ຕໍ່ທາງຣົຖໄຟ ຊຶ່ງທຸຣະກິດຂອງເຂົາໄດ້ຮ່ວມກັບຄົນອື່ນອີກສິບ ກວ່າຄົນທີ່ໄດ້ຮັດໃຫ້ການຂົນສົ່ງທາງເຮືອ ແລະການເດີນຣົຖໄຟສະ ດວກດີ ແລະເຂົາເຈົ້າຍັງມີທຶນພຽງພໍ ໃນການຂຍາຍວຽກການ ໃນ ດ້ານອື່ນໆອີກ ເຊັ່ນ ການຂຍາຍອຸດສາຫະກັມ ໃນອະເມຣິກາຄາວນີ້ ບໍ່ມີສິ່ງປຽບທຽບໄດ້ແລະໄດ້ເຖິງຂັ້ນທີ່ວ່າບໍ່ເຄີຍມີມາກ່ອນ.

ໃນຫລາຍດ້ານ, ເຣື່ອງຂອງຄາເນຈີ ເປັນເຣື່ອງຂອງວົງ ການທຸຣະກິດໃຫຍ່ໃນສະຫະຣັຖ. ແມ່ນວ່າເຂົາໄດ້ຄອບຄອງ ອຸດສາ ຫະກັມມາແຕ່ດົນແລ້ວກໍຕາມ, ແຕ່ເຂົາບໍ່ເຄີຍສຳຣັດພົນໃນການຜູກ ຂາດຊັພຍາກອນທັມມະຊາດ ການຂົນສົ່ງ ແລະແຜນການອຸດສາຫະ ກັມອື່ນໆ ກ່ຽວກັບການຮັດເຫລັກກ້າ ໄດ້ແຕ່ຜູດຽວເລີຍ. ໃນປີ ໑໘໙໐, ມີຫລາຍບໍຣິສັດໄດ້ຕັ້ງຂຶ້ນມາເພື່ອແຂ່ງຂັນບໍຣິສັດຂອງຄາເນ ຈີ ຊຶ່ງມີຊື່ສຽງມາກ່ອນໝູ່ ແລະເມື່ອມີຜູ້ແຂ່ງຂັນຫລາຍເຊັ່ນນີ້, ຂັ້ນຕ່ຳ

ອິດ ຄາເນຈີໄດ້ຂູ່ວ່າຈະຫາບໍ່ໃຫມ່ ແລະຈະສ້າງທຸຣະກິດໃຫຍ່ແລະມີ ອິດທິພົລຫລາຍກວ່ານີ້, ແຕ່ໃນທີ່ສຸດ ກໍຕ້ອງຍອມຟັງຄຳແນະນຳຂອງ ຜູ້ອື່ນດ້ວຍວ່າເຂົາກໍຍ່າງເຂົ້າອາຍຸແກ່ຊະລາແລ້ວແລະໃນທີ່ສຸດ ກໍໄດ້ ເຂົ້າຮູ້ນກັບບໍຣິສັດໃຫມ່ທີ່ເປັນເຈົ້າຂອງບໍ່ເຫລັກແລະເຫລັກກ້າຊຶ່ງນັບ ວ່າເປັນຊັພຍາກອນທັມມະຊາດທີ່ສຳຄັນຂອງຊາດດ້ວຍ.

ບໍຣິສັດເຫລັກກ້າຂອງສະຫະຣັຖ ຊຶ່ງເນື່ອງມາຈາກການຮ່ວມ ກັນໃນປີ ๑ຝ๑ວ, ໄດ້ປະກອບການດຳເນີນງານ ໃນຂັ້ນສາມສິບປີ ແລະອັນນີ້ແມ່ນການຮ່ວມກັນ ຂອງບໍຣິສັດອຸດສາຫະກັມເອກຊົນ ແລະ ຂອງຣັຖ. ກິຈການຂອງບໍຣິສັດນີ້ໄດ້ເລີ້ມຕົ້ນ ໃນຣະຫວ່າງສົງຄາມ ກາງເມືອງ ແລະໄດ້ດຳເນີນໄປຮອດປີ ๑ຊກ๐ ກວ່າ. ບັນດານັກ ທຸຣະກິດມາຄິດໄດ້ວ່າ ຖ້າເຂົາເຈົ້າສາມາດຮວບຮວມບໍຣິສັດຕ່າງໆ ທີ່ແຂ່ງຂັນກັນນັ້ນເຂົ້າເປັນອົງການດຽວກັນ, ເຂົາເຈົ້າອາດຈະຄວບ ຄູມໄດ້ທັງຜລິດຜົນແລະຕລາດອີກດ້ວຍ. ເພື່ອດຳເນີນໄປຕາມທີ່ໄດ້ ຄາດຫມາຍໄວ້ນີ້, ແມ່ນການຮ່ວມມື ແລະການໄວ້ວາງໃຈໃນຫລາຍ ດ້ານເພື່ອເປັນການຖືກຕ້ອງຕາມແບບແຜນຂອງການຈັດໃຫ້ມີຫຼັນສ່ວນ ຫລາຍຄົນເພື່ອວ່າການດຳເນີນງານຂອງບໍຣິສັດນີ້ ຈະຕ້ອງມີທຶນກ້ອນ ໃຫຍ່. ນັກລົງທຶນໃຫຍ່ ສົນໃຈໃນຂໍ້ເທັດຈິງທີ່ເຂົາເຈົ້າຫວັງຈະໄດ້ ຮັບຈາກການຊື້ຫຼັນສ່ວນແລະສັນຍາ, ແຕ່ພໍ່ເຊື່ອຖືໄດ້ວ່າຫາກທຸຣະກິດ ນີ້ມີການລົ້ມເຫລວ, ເຂົາເຈົ້າຈະຂຍາຍການລົງທຶນອອກອີກ ກໍໄດ້.

24/VII
ຫາມຈຳໜາຍ

ນອກຈາກນີ້, ບໍຣິສັດຍັງໄດ້ຊ່ວຍໃຫ້ກິຈການດ້ານທຸຣະກິດ ມີຄວາມ ຫມັ້ນຄົງ ແລະໃຫ້ມີການຄວບຄູມເລື້ອຍໆໄປ. ບໍຣິສັດໃຫຍ່ ຫລືຈະ ເອີ້ນວ່າທີ່ຮັບຝາກນີ້ ແມ່ນການຮວບຮວມບໍຣິສັດຕ່າງໆ ຊຶ່ງມີຜູ້ຖືຫຸ້ນ ສ່ວນຊຶ່ງແຕ່ລະບ່ອນມອບຫຸ້ນຂອງຕົນໄວ້ໃນກຳມື ຂອງຜູ້ພິທັກຮັກສາ ຊຶ່ງມີຫນ້າທີ່ຈັດທຸຣະກິດທັງຫມົດ ແລະບໍຣິສັດໃຫຍ່ນີ້ອາດຈະຮວມກັນມີ ສູນກາງການຄວບຄູມແລະການປົກຄອງ, ແລະເປັນບ່ອນລົງທຶນຮ່ວມ ກັນ. ໃນແນວທາງຂອງຕົ້ນທຶນນີ້, ເຂົາເຈົ້າມີອຳນາດຫລາຍ ໃນ ການແຜ່ຂຍາຍແລະແຂ່ງຂັນກັບບໍຣິສັດການຄ້າຂອງຕ່າງປະເທດແລະ ໃນການຄວບຄູມການດຳເນີນງານຂອງບໍຣິສັດ. ເຂົາເຈົ້າອາດບັງ ຄັບຣາຄາຂອງການຂົນສົ່ງທາງຣົຖໄຟກໍໄດ້, ແລະອາດຈະມີອິດທິພົນ ກ່ຽວຂ້ອງໃນການເມືອງອີກດ້ວຍ.

ນອກນັ້ນກໍມີບໍຣິສັດນຳ້ມັນ ມາຕຖານຂອງສະຫະຣັຖ ຊຶ່ງແມ່ນ ບໍຣິສັດນຶ່ງທີ່ຖືກຕັ້ງຂຶ້ນມາແຕ່ສໄມກ່ອນໆ ແລະເປັນບໍຣິສັດ ທີ່ມີຄວາມ ເຂັ້ມແຂງ ພໍຈະໄດ້ດຳເນີນນະໂຍບາຍ ແບບຮວບຮວມບໍຣິສັດນ້ວຍ ຫລາຍບ່ອນ ເຂົ້າເປັນບໍຣິສັດໃຫຍ່ບໍຣິສັດດຽວ ແລະໄດ້ດຳເນີນກິຈ ການ ໃນການກັ່ນນຳ້ມັນຈາກແກ່ນຝ້າຍ, ຂີ້ກົ່ວ, ນຳ້ຕານ, ຢາສູບ ແລະຢາງຢືດ.

ນັກທຸຣະກິດຜູ້ມັກແຊກແຊງກໍພາກັນເລີ້ມຊອກຫາ ບ່ອນຂຍາຍ ອດສາຫະກັມສຳລັບເຂົາເຈົ້າເຊັ່ນວ່າ ພໍ້ຄາຊຶ້ນໃຫຍ່ສີ່ຄົນ ນຳ ໂດຍ

ທ່ານຟີລິບ ອາຣມໍ ແລະກຸສຕາວຸສ ສວິຟ, ໄດ້ຈັດຣວບຣວມບໍຣິສັດ ນ້ອຍໆຫລາຍບ່ອນເຂົ້າເປັນບໍຣິສັດໃຫຍ່ອັນດຽວກັນສຳລັບຄ້າຊົ້ນງົວ. ແລະບໍຣິສັດແມກຄໍມິກກໍໄດ້ຈັດຕັ້ງເຄື່ອງຈັກກ່ຽວເຂົ້າ ຊື່ງມີຊື່ສຽງມາ ກ່ອນນັ້ນຂຶ້ນ. ຈາກການສຳຣວດໃນປີ ຈພວຄ, ປາກົດວ່າ ບໍຣິສັດ ເອກຊົນຫລາຍກວ່າຫ້າພັນບໍຣິສັດໄດ້ຣວບຣວມເຂົ້າເປັນບໍຣິສັດອຸດສາ ຫະກັມໃຫຍ່ປະມານສາມຮ້ອຍກວ່າບໍຣິສັດ.

ໃນທຸຣະກິດດ້ານອື່ນໆກໍເຫມືອນກັນເຊັ່ນ, ການຂົນສົ່ງ ແລະ ການຄົມມະນາຄົມ ໄດ້ດຳເນີນຕາມແນວທາງແບບທ້ອນໂຮມກັນເຂົ້າ ເປັນບໍຣິສັດໃຫຍ່ຍົກຕົວຢ່າງຄື ບໍຣິສັດເວສເຕີນຢູນຽນ, ເປັນບໍຣິສັດ ທີ່ຕັ້ງມາແຕ່ດົນນານແລ້ວ ແລະໄດ້ໂຮມຫລາຍບໍຣິສັດເຂົ້າກັນເປັນບໍຣິ ສັດໃຫຍ່, ແລະເຊັ່ນດຽວກັບບໍຣິສັດເບລ ເທເລໂຟນ ຊື່ງເປັນບໍຣິ ສັດໂທຣະສັບທີ່ໄດ້ດຳເນີນທຸຣະກິດແບບດຽວກັນ ແລະຕໍ່ມາແມ່ນບໍຣິ ສັດໂທຣະສັບແລະໂທຣະເລກອະເມຣິກັນ. ທ່ານ ຄໍເນລຸຍສ ແວນ ເດີບິລ ໄດ້ໃຫ້ຄຳເຫັນແຕ່ກ່ອນໆຜູ້ນວ່າ, ຖນົນຫົນທາງແລະທາງຣົຖ ໄຟນີ້ ຖ້າຈະໃຫ້ໄດ້ຜົນດີແທ້ ຈຳຕ້ອງທ້ອນໂຮມສາຍຕ່າງໆເຂົ້າກັນ. ຕໍ່ມາ ໃນຕອນປາຍຂອງຫົກສິບປີກວ່າ, ເຂົາເຈົ້າໄດ້ຕິດຕໍ່ທາງຣົຖ ໄຟສິບສາຍຕ່າງໆເຂົ້າກັນ ເພື່ອເຊື່ອມຕໍ່ໃສ່ເມືອງນີວຢອກ ແລະບັຟ ຟາໂລ ໂດຍມີຄວາມຍາວທັງຫມົດເຖິງສາມຮ້ອຍກວ່າໄມ. ໃນສິບ ປີ້ຂ້າງຫນ້າ, ເຂົາເຈົ້າໄດ້ຕໍ່ສາຍຣົຖໄຟ ຈາກເມືອງຊິກາໂກ ຫາ

ເມືອງດີຫຣອຍ, ແລະໄດ້ເຊື່ອມໃສ່ສູນກາງທີ່ເມືອງນິວຢອກ. ການ
ຮວບຮວມດ້ານອື່ນໆກໍກຳລັງເລັ່ມເຮັດກັນຢູ່ແລະບໍ່ດົນທາງຣົຖໄຟສາຍ
ສຳຄັນໆຂອງຊາດກໍໄດ້ຖືກຈັດຕັ້ງຂຶ້ນເປັນບໍຣິສັດດຽວ ຊຶ່ງມີນັກທຸຣະ
ກິດສິບກວ່າຄົນເຂົ້າເປັນຫຸ້ນສ່ວນກັນ.

## ເມືອບ້ານເມືອງຂຍາຍອອກ ບັນຫາກໍ່ມີເພີ່ມຂຶ້ນ

ໃນຣະບົບຂອງອຸດສາຫະກັມ ໃຫມ່ນີ້, ຢູ່ໃນເມືອງ ກໍປຽບ
ເຫມືອນເສັ້ນປະສາດ ສ່ວນກາງໃນຣະຫວ່າງອ້ອມແອ້ມເສັ້ນທາງຣົຖ
ໄຟນີ້ມີກຳລັງຂອງເສຖກິດເຄື່ອນໄຫວນຳຢູ່ ຄືການລົງທຶນຢ່າງຫລວງ
ຫລາຍ, ທຸຣະກິດ ແລະສະຖາບັນການເງິນ, ການແຜ່ຂຍາຍຂອງ
ສາຍທາງຣົຖໄຟ, ຄວັນໄຟຈາກໂຮງງານ, ແລະຄົນເປັນຈຳນວນ
ຫລາຍທີ່ເປັນສມຽມແລະກັມມະກອນ ເມືອງຈາກການເຊີນຊວນຊາຍ
ຫນຸ່ມຈາກບ້ານນອກ ແລະຈາກຕ່າງຖິ່ນເຂົ້າມາເປັນຈຸ ໃນໜ້າທີ່ການ
ງານນີ້ພາໃຫ້ບ້ານນ້ອຍໆກາຍເປັນເມືອງ ແລະເມືອງກໍຂຍາຍອອກ
ເປັນເມືອງໃຫຍ່ຢ່າງເຫັນທັນຕາ. ໃນປີ ໑໘໓໐, ຜູ້ທີ່ຢູ່ໃນປະຊາ
ຄົມຊຶ່ງມີຜູ້ຄົນຢູ່ປະມານ ໘ooo ກວ່າຄົນນັ້ນ ມີນຶ່ງໃນສິບຫ້າຄົນເທົ່າ
ນັ້ນ, ໃນປີ ໑໘໔໐ ມີນຶ່ງໃນຫົກ, ໃນປີ ໑໘໓໐ ມີ ນ ໃນຈຳນວນ
ສິບ ແລະໃນປີ ໑໘໔໐ ບໍ່ມີເມືອງໃດມີພົລເມືອງຫລາຍເຖິງນຶ່ງລ້ານ
ຄົນ. ແຕ່ສາມສິບປີຕໍ່ມາ, ເມືອງນິວຢອກມີພົລເມືອງເຖິງນຶ່ງລ້ານ

ທ້າແສນຄົນ ແລະເມືອງຊິກາໂກ ແລະຟີລາເດັນເຟັຍ ຕ່າງກໍມີພົລ ເມືອງເກີນໜຶ່ງລ້ານຄົນ. ໃນສາມສິບປີຜ່ານມາ, ເມືອງຟີລາເດັນ ເຟັຍ ແລະບາລຕີມໍ ມີພົລເມືອງເພີ້ມຂຶ້ນທົບເຕິ່ງ, ແຄນຊັສ ແລະດີ ທຣອຍ ມີພົລເມືອງເພີ້ມຂຶ້ນສີ່ເທົ່າ, ເມືອງເກລວແລນ ມີພົລເມືອງ ເພີ້ມຂຶ້ນຫົກເທົ່າ ແລະເມືອງຊິກາໂກສິບເທົ່າ. ເມືອງມີນີອາໂປ ລິສ ແລະໂອມາຮາ ແລະປະຊາຄົມອີກຫລາຍບ່ອນ ຊຶ່ງແຕ່ຄາວສົ່ງ ຄາມກາງເມືອງນັ້ນເປັນພຽງບ້ານນ້ອຍໆແຕ່ຫລັງຈາກນັ້ນມາ ກໍໄດ້ ຂຍາຍອອກອີກສິບເທົ່າ ຫລືມີພົລເມືອງຫລາຍກວ່ານັ້ນອີກ.

ສິ່ງທີ່ສຳຄັນເທົ່າກັບການພັທນານັ້ນຄື ສິ່ງທີ່ກ່ຽວພັນກັນທີ່ຍັ່ງຍືນ ທັນເຂົ້າໃຈດີ ເພື່ອໂຮມກັນເຂົ້າເປັນຊີວິດການເມືອງຂອງສໄມນັ້ນ, ແມ່ນວ່າ ບັນຫານັ້ນມີຢູ່ຫລວງຫລາຍຕໍ່ໜ້າຊາວອະເມຣິກັນກ່ອນແລ້ວ ກໍຕາມ ມີນັກຂຽນຜູ້ມີຊື່ສຽງຄົນໜຶ່ງ ໄດ້ຂຽນຂໍ້ຄວາມວ່າ: "ໃນຣະ ຫວ່າງປີ ໑໘໔ ແລະປີ ໑໘໙໓ ນັ້ນ ກິດຫມາຍທີ່ກ່ຽວກັບປັ້ມນັ້ນມີ ປະມານສອງຫາສາມມາຕຣາເທົ່ານັ້ນ, ຊຶ່ງໄດ້ພາໃຫ້ປະຊາຊົນສົນ ໃຈນຳພຶດຕິກາມອຳນາດທາງການເມືອງ ຊຶ່ງຈຳເປັນຈະຕ້ອງໄດ້ຮັບ ການປັບປຸງໃນດ້ານຄວາມສັມພັນຂອງມະນຸດ.

ໃນປີ ໑໘໘໔, ທ່ານໂທຣເວີ ກລີວແລນ, ສັງກັດຢູ່ພັກເດ ໂມແຄຣສ ໄດ້ຖືກຄັດເລືອກ ໃຫ້ເຂົ້າຮັບຕຳແໜ່ງ ປະທານາທິບໍດີ ແລະທ່ານໄດ້ເປັນປະທານາທິບໍດີ ຄົນດຽວເທົ່ານັ້ນ ທີ່ເສົ້າໃຈ ເຖິງ

ຄວາມສຳຄັນຂອງແນວທາງການປ່ຽນແປງ ຊຶ່ງໄດ້ປ່ຽນສະພາບຂອງ ປະເທດ, ແລະທ່ານໄດ້ພຍາຍາມ ຕໍ່ສູ້ກັບບັນຫາສືບເນື່ອງມາຈາກ ສິ່ງທີ່ເກີດຂຶ້ນເທົ່ານັ້ນ. ໃນບັນຫາອື່ນໆເຊັ່ນວ່າ ເຣື່ອງທາງຣົຖໄຟ ແລະພວກທີ່ຄິດບໍ່ຊື່ກໍໄດ້ຂໍ້ຮ້ອງໃຫ້ມີການປັບປຸງໃຫມ່. ແຕ່ອັນຕຣາຍ ໂດຍສະເພາະນັ້ນ ແມ່ນຄວາມລຳອຽງໃນຣາຄາຕໍ່ພວກຂົນສິ່ງນ້ອຍໆ ໃນຮູບຂອງເງິນສ່ວນທີ່ລົດໃຫ້ຫລາຍຂຶ້ນ. ນອກນັ້ນອັດຕຣາຄ່າຂົນສິ່ງ ທາງຣົຖໄຟ ຍັງສູງກວ່າອັດຕຣາຂອງການຂົນສິ່ງທາງເຣືອ ໄປຕາມ ເຂດຕ່າງໆໂດຍບໍ່ຄຳນຶງເຖິງຣະຍະທາງ, ໃນຂນະທີ່ມີການແຂ່ງຂັນ ຣາຄາຄ່າສິ່ງສິນຄ້າຣະຫວ່າງເມືອງນີ້ໄປຫາເມືອງນັ້ນ ຊຶ່ງມີສາຍຣົຖ ໄຟຕິດຕໍ່ກັນກໍຍັງໃຄແດ່, ແຕ່ສຳລັບເມືອງທີ່ມີການຄົມນາຄົມແຕ່ທາງ ດຽວນັ້ນ ອັດຕຣາຄ່າຂົນສິ່ງ ກໍສູງຫລາຍ. ຕົວຢ່າງສິນຄ້າ ຈາກ ເມືອງຊິກາໂກໄປຫາເມືອງນິວຢອກ ຊຶ່ງມີຣະຍະທາງເຖິງແປດຮ້ອຍ ໄມນັ້ນ ຄ່າຂົນສິ່ງຍັງຖືກກວ່າ ການສິ່ງສິນຄ້າຈາກເມືອງຊິກາໂກໄປ ຫາດ້ານຕະວັນອອກຂອງເມືອງຊິກາໂກ ຊຶ່ງມີຣະຍະທາງບໍ່ຫລາຍ ຮ້ອຍໄມ. ດັ່ງນັ້ນ ທາງການຣົຖໄຟ ໄດ້ພຍາຍາມ ຊອກຫາຊ່ອງ ທາງເພື່ອປະສານງານກັນກັບສາຍອື່ນໆ ເພື່ອຫລີກເວັ້ນການແຂ່ງຂັນ ກັນ. ຕໍ່ມາ ວິທີນີ້ຖືກນຳເອົາມາປະຕິບັດກັນ ຄືບໍຣິສັດທີ່ເຄີຍແຂ່ງ ຂັນກັນມາກ່ອນ ໄດ້ວາງໂຄງການແບ່ງປັນສາຍຕ່າງໆເທົ່າກັນ ແລະ ເງິນຣາຍໄດ້ກໍເອົາມາເຂົ້າຫີນກອງກາງແລ້ວຈຶ່ງປັນສເລ່ຍສເມີກັນ.

ແມ່ນວ່າພົນທີ່ສືບເນື່ອງມາຈາກນີ້ໄດ້ພົນດີຢູ່ກໍຕາມ, ແຕ່ໂດຍທັມຊາດ ແລ້ວລັກສນະຂອງຄົນໃນຊາດນັ້ນຍັງຮຽກຮ້ອງໃຫ້ສະພາກົງແກຣສຍື່ນ ມືເຂົ້າກ່ຽວຂ້ອງຢູ່. ພົນຕາມມາກໍຄືກົດຫມາຍ ວ່າດ້ວຍການຄ້າຣະ ຫວ່າງຣັຖ ໄດ້ປາກົດອອກມາ ແລະປະທານາທິບໍດີເກລວແລນ ກໍໄດ້ ເຊັນຮັບເອົາໃນປີ ຈຊຊກ. ກົດຫມາຍນີ້ແມ່ນຫ້ານບໍ່ໃຫ້ເກັບຄ່າອັດ ຕຣາຂົນສົ່ງແພງເກີນໄປ ແລະບໍ່ໃຫ້ແຂ່ງຂັນກັນ ຈົນພາໃຫ້ອັດຕຣາ ແຕກຕ່າງກັນຫລາຍແລະໃນຂນະດຽວກັນນີ້ ທາງການກໍ່ໄດ້ແຕ່ງຕັ້ງ ກັມການຄວບຄູມການຄ້າຂຶ້ນເພື່ອດູແລ ບໍ່ໃຫ້ບັນດາພໍ້ຄ້າທັງຫລາຍລະ ເມີດກົດຫມາຍວ່າດ້ວຍການຄ້າແລະໄດ້ຈົດຣະບຽບອັດຕຣາຂອງທາງ ຣົຖໄຟແລະພາກປະຕິບັດອື່ນໆ.

ທ່ານເກລວແລນ ເປັນຜູ້ຊ່ຽວຊານ ໃນການດັດແປງອັດຕຣາ ພາສີຕ່າງໆ ເພາະວ່າແຕ່ເດີມມາເຄີຍໄດ້ຖືເອົາພາວະສຸກເສີນຂອງ ສົງຄາມມາໃຊ້, ດັ່ງນັ້ນອັດຕຣາພາສີອາກອນຈື່ງຂ້ອນຂ້າງສູງແດ່ແຕ່ ກໍຖືວ່າບໍ່ເປັນເຣື່ອງທີ່ໄດ້ໃຈ ແລະຕ້ອງຮັບຜິດຊອບຢ່າງຫລວງຫລາຍ ດ້ວຍວ່າ ພາຣະອັນຫຍູ້ງຍາກນີ້ໄດ້ພາໃຫ້ຄ່າຄອງຊີບສູງຂຶ້ນແລະການ ຂຍາຍຂອງບໍຣິສັດໃຫຍ່ໆນັ້ນກໍໄວເກີນຄວນ. ໄດ້ຫລາຍປີມາແລ້ວທີ່ ການເກັບພາສີອາກອນນີ້ບໍ່ເປັນເຣື່ອງທາງການເມືອງ, ດັ່ງນັ້ນ ໃນ ປີ ຈຊຊວ, ພັກເດໂມແຄຣດ ຈື່ງຂໍ້ຮ້ອງໃຫ້ເກັບພາສີແຕ່ສະເພາະ ຣາຍໄດ້ເທົ່ານັ້ນ ແລະຕໍ່ມາບໍ່ດົນສຽງຮຽກຮ້ອງໃຫ້ມີການດັດແປງກໍ

ດຳເນີນຕໍ່ໄປ. ໃນການກ່າວຄຳປາໃສ ຂອງທ່ານເກລວແລນໃນປີ ໑໙໙໗, ທ່ານໄດ້ກ່າວເຕືອນປະຊາຊົນບໍ່ໃຫ້ກໍ່ກວນເຖິງຂັ້ນແຕກແຍກ ແລະໄດ້ເຮັດໃຫ້ປະຊາຊົນຕື່ນຕົກໃຈ ທີ່ສຸດ ເມື່ອທ່ານປະກາດວ່າຣັຖ ບານໄດ້ເຮັດທຸກວິທີທາງ ເພື່ອປ້ອງກັນຜົນປະໂຍດຂອງອຸດສາຫະກັມ ອະເມຣິກັນໄວ້ ແລະເພື່ອຫລີກເວັ້ນການແຂ່ງຂັນຈາກຕ່າງປະເທດ.

ບັນຫານີ້ໄດ້ກາຍເປັນຫົວເຮື່ອງຂອງການໂຄສນາຫາສຽງໃນ ການເລືອກຕັ້ງປະທານາທິບໍດີຊຸດໜ້ານີ້, ແລະສະມາຊິກຂອງພັກຣີ ປັບລິແລນຄົນທ່ານ ເປັນຈຳນົນ ແຮຣິຊັນ, ໄດ້ຮັບຮອງຢ່າງແຂງຂັນ ວ່າ ຈະໃຫ້ຄວາມລູ້ມກັນແກ່ເຮື່ອງນີ້ເປັນພິເສດ, ຊຶ່ງໄດ້ນຳຜົນມາ ໃຫ້ທ່ານໄດ້ຮັບໄຊຊະນະ ໃນການເລືອກຕັ້ງຄາວນີ້. ຣັຖບານຂອງ ທ່ານຈະຕ້ອງໄດ້ວາງແຜນໄວ້ເພື່ອດຳເນີນຕາມນະໂຍບາຍທີ່ທ່ານໄດ້ ໃຫ້ຄຳໝັ້ນສັນຍາໄວ້ກັບປະຊາຊົນ ໂດຍການເຮັດກົດໝາຍອອກມາ ໃໝ່ແລະກົດໝາຍກ່ຽວກັບການເກັບພາສີ ຂອງຝມກິນລີກໍໄດ້ສະນີ ອອກໃນປີ ໑໙໓໐. ບາດກ້າວນີ້ບໍ່ພຽງແຕ່ໃຫ້ຄວາມລູ້ມກັນການຈັດ ຕັ້ງອຸດສາຫະກັມເທົ່ານັ້ນ, ແຕ່ຍັງໃຫ້ຄວາມອຸ້ມຊູອຸດສາຫະກັມທີ່ເກີດ ໃໝ່ ແລະມີໜ້າທີ່ ຫາການຈັດຕັ້ງອັນໃໝ່ຕື່ມອີກ. ໂດຍທົ່ວໆໄປ ແລ້ວ ອັດຕຣາພາສີອາກອນທີ່ອອກໃໝ່ນີ້ ໄດ້ພາໃຫ້ເພີ່ມພາສີສິນຄ້າ ຍ່ອຍ, ແຕ່ຈາກນັ້ນມາບໍ່ດົນປະຊາຊົນກໍເກີດຄວາມບໍ່ພໍໃຈ.

ໃນຣະຍະເວລານີ້, ຄວາມຮ້ອງໃຈຂອງປະຊາຊົນ ແມ່ນແນ

ໃສ່ບໍ່ຣິສັດໃຫຍ່ໂດຍຕຣົງ. ເມື່ອຄນະນັກດັດແປງພາສີເຊັ່ນ ແຮນຣີ ຈອກຊ໌ ແລະເອດເວີດ ແບລາມີ ໄດ້ໂຈມຕີຢ່າງຮຶນຮຶ່ນຢ່າງນີ້, ບໍ່ຣິສັດໃຫຍ່ໆ ບໍ່ແມ່ນເປັນພຽງການຕໍ່ຕ້ານເທົ່ານັ້ນ, ແຕ່ຍັງເປັນເຣື່ອງຂອງການເມືອງອີກດ້ວຍ. ໃນປີ ໑໙໓໐, ກົດໝາຍວ່າດ້ວຍການຕໍ່ຕ້ານບໍ່ຣິສັດໃຫຍ່ໄດ້ຜ່ານອອກມາ ແລະຈຸດປະສົງຂອງການອອກກົດໝາຍນີ້ກໍເພື່ອຈະລົບລ້າງຣະບົບການຜູກຂາດ, ແລະຫ້ານບໍ່ໃຫ້ບໍ່ຣິສັດຫລາຍບ່ອນ ໂຮມກັນ ເຂົ້າເປັນອັນດຽວກັນ. ທາງຣັຖບານຈະເຮັດທຸກວິທີທາງ ເພື່ອບັງຄັບໃຫ້ບໍ່ຣິສັດໃຫຍ່ເຫລົ່ານີ້ ເລີກລົ້ມຣະບົບການຜູກຂາດ. ກົດໝາຍດັ່ງກ່າວນີ້ກ່ອນຈະປາກົດອອກມາເປັນຮູບຮອຍຢ່າງແທ້ຈິງ, ກໍກິນເວລາດົນເຕີບ ເພື່ອງຈາກວ່າຈະຕ້ອງວາງກຳນົດທ່ອງໄປ ແລະກຳນົດແນ່ນອນ. ດັ່ງນັ້ນໃນສິບປີຕໍ່ມາ, ຣັຖບານຂອງທ່ານໂອດໍຣຸສແວລທ໌ກໍມັບວ່າການປະຕິບັດຕ່າງໆໄດ້ຜົນດີຈົນປະຊາຊົນ ໄດ້ໃຫ້ຊື່ແກ່ທ່ານປະທານາທິບໍດີວ່າ: "ຜູ້ທຳລາຍລົ້ມບໍ່ຣິສັດໃຫຍ່".

ແມ່ນວ່າ ແນວທາງແບບນີ້ຈະມີຄວາມໝາຍຢູ່ບ້ໍໜ້ອຍກໍຕາມ ແຕ່ຮູບການເມືອງ ໃນສໄມຕົ້ງແຕ່ສົງຄາມການເມືອງສົ້ນສຸດລົງ ຈົນຮອດສັຕວັດໃໝ່, ຜົນປະໂຍດທ່ົວໆໄປ ກໍບ່ໍເປັນປະໂຍດຫຍັງເລີຍ. ຄວາມແຂງແຮງຂອງຄົນອະເມຣິກັນໃນຣະຫວ່າງນີ້ໄດ້ເບັດຄວາມສົນໃຈໄປທາງອື່ນເສັຍແລ້ວ ແລະຜົນສະທ້ອນຕໍ່ທັ້ງໝົດນີ້ ອາດຈະແມ່ນ

ຢູ່ໃນປະວັດສາດຂອງພາກຕະເວັນຕົກ. ໃນປີ ๑๙ຝ๕, ຕາມເຂດ ຊາຍແດນ ຊຶ່ງຕໍ່ເຂດຂອງພາກຕະເວັນຕົກໄປທາງຣັຖທີ່ຢູ່ແຄມແມ່ນ້ຳ ນີຊີຊິບປີ, ໄດ້ຍຶດອອກໄປອີກ ເພື່ອຮ່ວມກັບເຂດທາງດ້ານຕະເວັນ ອອກຂອງຣັຖແຄນຊັສແລະເນບຣັສກາ. ສ່ວນທາງຂ້າງຫລັງໄຮ່ນາ ຂອງພວກນັກຄົ້ນຄວ້າເຫລົ່ານີ້ຍັງເປັນດິນທີ່ເປົ່າວ່າງ ແຕ່ຕໍ່ອອກໄປກໍ ແມ່ນທົ່ງຫຍ້າ ເລີຍໄປຮອດຕີນພູເຂົາຫີນ. ຢູ່ສາຍພູເຂົາໃຫຍ່ມີຣະ ຍະໄກເຖິງສິບພັນໄມ ຊຶ່ງເຕັມໄປດ້ວຍບໍ່ເງີນ, ບໍ່ຄຳ, ແລະທາດ ເຫລັກອື່ນໆຢ່າງຫລວງຫລາຍ. ຢູ່ທາງເຂດທະເລແປຊີຟິກ, ທົ່ງ, ແລະດິນວ່າງເປົ່າໄດ້ຍຶດອອກໄປຮອດປ່າດົງແຖບແຄມຝັ່ງ ແລະເຖິງ ທະເລ. ນອກຈາກເຂດທີ່ມີຜູ້ຄົນຕັ້ງບ້ານເຮືອນຢູ່ໃນຣັຖແຄລິຟໍເນັຍ ແລະເຂດແດນທີ່ຂຍາຍອອກໄປທາງນອກຢ່າງກວ້າງຂວາງນັ້ນ ແມ່ນ ບ່ອນທີ່ຊາວອິນເດັຍແດງອາໄສຢູ່.

<u>ທາງພາກຕະເວັນຕົກໄດ້ເປີດໂອກາດໃຫ້ແກ່ບຸກຄົນທົ່ວໄປ</u>

ເປັນເວລາຊາວກວ່າປີ ໃນສັຕວັດຕໍ່ມາ, ສະພາບຂອງປະ ເທດຖືກປ່ຽນແປງມາເປັນຣັຖ ແລະເຂດແດນຫມົດ. ກົດຫມາຍວ່າ ດ້ວຍການຈັບຈອງທີ່ດິນ ທີ່ໄດ້ອອກມາໃນປີ ๑๙ຝ๘ ໄດ້ກະຕູ້ນເຕືອນ ໃຫ້ຜູ້ຄົນຫລັ່ງໄຫລເຂົ້າໄປຕັ້ງຖິ່ນຖານຢູ່ຕາມແຖບນີ້ໂດຍໄດ້ບົ່ງໄວ້ວ່າ ປະຊາຊົນທີ່ເຂົ້າມາຕັ້ງຖິ່ນຖານຢູ່ແຖບນີ້ຈະໄດ້ຮັບທີ່ດິນປະມານ ๑ຝ๐

ເອເກີ ເພື່ອເອົາໄວ້ເປັນທີ່ທຳມາຫາກິນ. ເມື່ອຖືງປີ ໑໙໙໐, ທີ່ດິນເກືອບ ๔๗,๐๐๐,๐๐๐ ເອເກີ ໄດ້ຕົກໄປເປັນຂອງເອກຊົນ ແລະໃນທີ່ສຸດ ສິງຄາມກັບພວກອິນເດັຍແດງກໍໄດ້ຍຸຕິລົງແລ້ວ. ພວກ ຊຸດແຮ່ໄດ້ເຈາະພູເຮັດອຸໂມງເປັນທາງຜ່ານໄປແລ້ວພາກັນມາຕັ້ງປະ ຊາຄົມນ້ອຍຢູ່ຕາມເຂດເນວາດາ, ມອນຕານາ, ແລະໂຄໂລຣາໂດ ຊຶ່ງຄົນລ້ຽງສັດຫລາຍຄົນໄດ້ຖືໂອກາດນັ້ຈ່ອງເອົາທົ່ງຫຍ້າອັນຂຽວ ງາມຈາກເທັກຊັສ ໄປຮອດທາງເໜືອຂອງແມ່ນ້ຳມິຊຸຣີ ແລະມີນັກ ລ້ຽງແກະຫລາຍຄົນໄດ້ອົພຍົບໄປຢູ່ຕາມຮ່ອມຈ້າຍພູ. ພວກຊາວໄຮ່ ຊາວນາ ກໍພາກັນຫລັ່ງໄຫລໄປຢູ່ຕາມທົ່ງ ແລະຮ່ອມພູ ທີ່ຂັ້ນກາງຣະ ຫວ່າງຕະເວັນອອກແລະຕະເວັນຕົກ. ເມື່ອຖືງປີ ໑໙໙໐, ເຂດ ຊາຍແດນຕ່າງໆກໍໄດ້ສລາຍຕົວໝົດແລ້ວ. ເພາະຜູ້ຄົນປະມານຫົກ ລ້ານຄົນ ທັ້ງຍິງແລະຊາຍໄດ້ມາເຮັດໄຮ່ເຮັດນາຢູ່ຕາມແຖບນັ້ຊຶ່ງແຕ່ ຊາວປາງຊາວກ່ວາປີກ່ອນນັ້ນ ທົ່ວທຍາແຫ່ງນີ້ ເປັນແຕ່ພຽງບ່ອນງົວ ລວາຍມາຫາກິນຫຍ້າເທົ່ານັ້ນ.

ປັດຈັຍທີ່ຊ່ວຍໃຫ້ການຂຍາຍ ຂອງບ້ານເມືອງນີ້ໄວຂຶ້ນ ແມ່ນ ທາງຣົຖໄຟ. ໃນປີ ໑໙๔๘, ທາງສະພາກົງແກຣສ ໄດ້ລົງມະຕິ ເຊ່ືາຣົຖໄຟຂອງບໍຣິສັດຢູນຽນແປຊິຟິກເຣລໂຣດ ໃຫ້ຂຍາຍອອກໄປ ທາງພາກຕະເວັນຕົກ, ຈາກເມືອງບຣັຟ, ໃນຣັຖໄອໂອວາ. ໃນ ເວລາດຽວກັນນີ້, ທາງພາກກາງ ກໍໄດ້ເລີ້ມສ້າງທາງຣົຖໄຟໄປຫາ

ດ້ານຕະວັນອອກ, ຈາກເມືອງຊາເກຣເມັນໂຕ, ຣັຖແຄລີຟໍເນັຍ ໄປເຖິງຮຸດພົບຕ່າງໆ. ປະຊາຊົນທັງປະເທດຕ່າງກໍມີຄວາມປິຕິຍິນ ດີເມື່ອທາງຣົຖໄຟສອງສາຍສາມາດເຊື່ອມເຂົ້າກັນໄດ້ ໃນວັນທີ ໑໐ ພຶສພາ ປີ ໑໘໖໙ ຢູ່ທີ່ແຫລມໃນຣັຖຢູຕາ ແລະບັນຫາການເດີນທາງ ຊ້ຳກິນເວລາດົນນານຈາກຝັ່ງແປຊີຟິກ ກໍໄດ້ສິ້ນສຸດລົງແລ້ວ. ຢ່າງ ໃດກໍດີ, ວຽກການທາງດ້ານທາງຣົຖໄຟ ກໍຍັງດຳເນີນໄປຢູ່ເລື້ອຍໆ ແລະໃນປີ ໑໘໘໔ ທາງຣົຖໄຟສີ່ສາຍໃຫຍ່ກໍໄດ້ເຊື່ອມເຂົ້າກັບ ທາງ ຣົຖໄຟເຂດມິຊິຊິບປີ ພາກກາງ, ແລະທາງແປຊີຟິກ.

ປະຊາຊົນທີ່ຫລັ່ງໄຫລ ອອກໄປທາງພາກຕະວັນຕົກ ນັ້ນ, ກ່ອນອື່ນແມ່ນໄປຢູ່ຕາມເຂດພູເຂົາ ເພາະວ່າ ໃນປີ ໑໘໔໘ ບໍ່ຄຳກໍ ໄດ້ຖືກຄົ້ນພົບຢູ່ຣັຖແຄລີຟໍເນັຍ ແລະສິບປີຕໍ່ມາກໍໄດ້ຄົ້ນພົບຢູ່ໂຄໂລຣາ ໂດ ແລະເນວາດາ. ແລະໃນຣະຫວ່າງປີ ໑໘໙໐, ກໍໄດ້ຄົ້ນພົບບໍ່ ຄຳຢູ່ຣັຖມອນຕານາ ແລະໄວໂອມິງ, ໃນປີ ໑໘ກ໐ ກວ່າ, ບໍ່ຄຳ ໄດ້ຖືກຄົ້ນພົບຢູ່ແຖບພູດຳ ໃນຣັຖ ດາໂກຕາ. ດັ່ງນັ້ນພວກຂຸດບໍ່ໄດ້ ມາສ້າງບ້ານເຮືອນຢູ່ຕາມເຂ່ດທີ່ມີບໍ່ຄຳ ແລະເງິນຕາມບ່ອນຕ່າງໆທີ່ ໄດ້ກ່າວມານີ້ ແລະໄດ້ຕັ້ງຖິ່ນຖານຢູ່ຢ່າງແບບຖາວອນ. ໃນຂນະທີ່ ຜູ້ຄົນກຳລັງຂຸດກັນຢູ່ຕາມແຖບພູນັ້ນ, ພວກທີ່ມາຕັ້ງຖິ່ນຖານຢູ່ພໍບາງຄົນ ໄດ້ເລີ້ມລົງມືເຮັດໄຮ່ເຮັດນາ ແລະລ້ຽງສັດຕາມຫ້ອງຖິ່ນທີ່ອຳນວຍໃຫ້ ບາງໝູ່ບ້ານນ້ອຍໆໄດ້ຕັ້ງອົກຕັ້ງໃຈ ມຳການຂຸດບໍ່ເທົ່ານັ້ນ, ແຕ່ຊັບ

ສົມບັດອັນແທ້ຈິງ ຂອງຣັຖມອນຕານາ, ໂຄໂລຣາໂດ, ໄວໂອມິງ, ແລະໄອດາໂຮກໍເປັນເຊັ່ນດຽວກັບຣັຖແຄລີຟໍເນັຍ ຊຶ່ງໄດ້ປາກົດໃຫ້ເຫັນວ່າແມ່ນທົ່ງຫຍ້າ ແລະດິນ (ຫມາຍຄວາມວ່າການລ້ຽງສັດແລະເຣັດໄຮ່ເຣັດນາດີກວ່າແນວອື່ນໆທັງຫມົດ).

ການລ້ຽງສັດເປັນອຸດສາຫະກັມສຳຄັນ ຂອງຣັຖເທັກຊັສ ມາ ນານແລ້ວ ຫລັງຈາກສົງຄາມໄດ້ຍຸຕິລົງ, ຜູ້ຄົນຢູ່ທາງນີ້ ໄດ້ຂົນເອົາ ສັດທາງເທັກຊັສຂຶ້ນເໜືອທາງເຫນືອແລະໄປຕາມທາງທີ່ມີທົ່ງຫຍ້າສາ ທາຣະນະ. ສັດເຫລົ່ານີ້ລ້ຽງດ້ວຍຫຍ້າທີ່ມີຢູ່ຕາມທາງແລະເມື່ອໄປ ຮອດບ່ອນຈຸດຂົນສົ່ງຄືທີ່ຣັຖແຄນຊັສ, ສັດເຫລົ່ານີ້ກໍໃຫຍ່ ແລະພ້ອມ ເວລາອອກເດີນທາງມາ. ການເດີນທາງໄກ ຂນາດຫລາຍຮ້ອຍ ກວ່າໄມແບບນີ້ ກໍກາຍເປັນກິຈການປະຈຳວັນ ແລະຢູ່ຕາມທາງໄປນີ້ ເຕັມໄປດ້ວຍຝູງສັດທີ່ເຄື່ອນທີ່ໄປທາງເຫນືອ. ການລ້ຽງສັດໄດ້ແຜ່ ໄປທາງເຂຄນີຊູຣີ ຢ່າງວ່ອງໄວ ແລະຢູ່ຣັຖໂຄໂລຣາໂດ, ໄວໂອມິງ ແຄນຊັສ, ແນບຣັສກາ, ແລະເຂດດາໂກຕາ ກໍມີແຕ່ທົ່ງລ້ຽງສັດ ເຕັມໄປຫມົດ ແລະຢູ່ຕາມຫົວເມືອງໃນພາກຕະເວັນຕົກ ກໍກາຍເປັນ ສູນກາງຂ້າສັດແລະຈຳຫນ່າຍຊີ້ນສັດທົ່ວໄປ.

ການມີທົ່ງລ້ຽງສັດນີ້ໄດ້ພາໃຫ້ມີຄາວບອຍ (ເດັກລ້ຽງງົວ) ຊຶ່ງເປັນພາບອັນຈົບງາມຕາມທັມມະຊາດ ທ່ານທີ່ໂອດໍຣຸສເວລທ໌ ປະ ທານາທິບໍດີຜູ້ທີ່ຊາວທ້າ ຂອງສະຫະຣັຖໄດ້ຂຽນຂໍ້ຄວາມຕອນນຶ່ງວ່າ:

"ພວກເຮົາມີຊີວິດຢູ່ຢ່າງເສຣີ ແຕ່ເປັນງານໜັກ ເຊັ່ນນ້ຳແລະປືນ" ນີ້ແມ່ນຂຽນຈາກຄວາມຊົງຈຳໃນປະສົບການຂອງທ່ານໃນສໄມທີ່ທ່ານຮູສແວລທ໌ຍັງຢູ່ທີ່ຄາໂກຕາ. "ພວກເຮົາເຮັດວຽກກາງແດດໃນຣະດູຮ້ອນອັນອົບເອົ້າ ແລະພວກເຮົາຮູ້ດີໃນຄວາມໜາວເຢັນທີ່ຈະຕ້ອງຂີ່ມ້າໃນຍາມກາງຄືນ ເພື່ອໄປຈອບເບິ່ງສັດລ້ຽງ... ພວກເຮົາເຂົ້າໃຈດີເຖິງຄວາມລຳບາກໃນຊີວິດ ຊຶ່ງພວກເຮົາກໍພາກພູມໃຈທີ່ສຸດໃນການງານຂອງເຮົາ".

ສັດລ້ຽງທັງໜົດ ທີ່ເອົາໜີຈາກເທັກຊັສໄປຍັງທິ່ງໂຄໂລຣາໂດ, ໄວໂອມິງ ແລະມອນຕານາ ໃນຣະຫວ່າງປີ ໑໘໗໗ ຫາປີ ໑໘໘໘ ນີ້ ມີປະມານຫົກລ້ານກວ່າໂຕ ເພາະວ່າສັດໄດ້ເກີດແມ່ແຜ່ລູກອອກຫລາຍໃນປີ ໑໘໘໔. ເມື່ອເຖິງສມັຍນີ້ມາ, ທິ່ງລ້ຽງສັດກໍໄດ້ມີສັດລ້ຽງຫລາຍເກີນກວ່າຈະມີພຽງພໍລ້ຽງສັດໄດ້, ດັ່ງນັ້ນ ການຂົນສັດລ້ຽງໄປທາງເຫລືອນັ້ນ ໄດ້ຂົນສົ່ງໂດຍທາງຣົຖໄຟ. ບໍ່ໄກຈາກທິ່ງລ້ຽງສັດພໍປາມໃດກໍແມ່ນຮ້ົວສວນຂອງຊາວໄຮ່ຊາວນາ ຊຶ່ງເຂົາເຈົ້າກໍລ້ຽງມ້າງົວແລະໝູເໝືອນກັນ. ພາຍໃຕ້ກົດໝາຍວ່າດ້ວຍການແບ່ງປັນດິນໃຫ້ແກ່ເອກຊົນນັ້ນ ຊາວໄຮ່ຊາວນາເຫລົ່ານີ້ໄດ້ພາກັນລ້ອມເອົາທີ່ດິນໄວ້ເປັນກັມສິດຂອງຕົນ ຊຶ່ງເປັນການໄລ່ເຈົ້າຂອງທິ່ງລ້ຽງສັດອອກໄປໂດຍທາງອ້ອມ ດ້ວຍວ່າ ການເປັນກັມສິດທີ່ດິນຂອງພວກນີ້ ຍັງບໍ່ຖືກຕ້ອງ ຕາມກົດໝາຍ. ໃນຣະຫວ່າງຣະດູ

ຫນາວຂອງປີ ໑໙໙໗ ແລະປີ ໑໙໙໘, ຝູງສັດໄດ້ຖືກທຳລາຍຢ່າງ
ຫລວງຫລາຍໂດຍໄພທັມມະຊາດຂອງຣະດູຫນາວປີນັ້ນ. ສ່ວນຢູ່ທາງ
ເຂດປ່າທາງພາກຕະເວັນຕົກກໍໄດ້ໃຫ້ຊ່ອງທາງແກ່ຫມູ່ບ້ານນ້ອຍໂດຍ
ການປູກເຂົ້າເຢ, ຫມາກສາລີ, ແລະເຂົ້າໂອດ:

## ເຄື່ອງຈັກແລະວິທຍາສາດອຳນວຍຄວາມສດວກ ໃຫ້ແກ່ຊາວໄຮ່ຊາວນາ

ຢູ່ໃນພາກຕະເວັນຕົກທີ່ງຫຸກບ່ອນ, ການປູກຝັງເປັນອຸດສາ
ຫະກັມອັນສຳຄັນຂອງປະເທດ ຊຶ່ງວຽກການໃນດ້ານປູກຝັງນັ້ນຈະຕ້ອງ
ໃຊ້ແຮງຄົນງານຢ່າງຫລວງຫລາຍ. ສິບປີຜ່ານມາ ຫລັງຈາກສົງ
ຄາມ, ໂຮງງານຫັຖກັມໄດ້ເລີ້ມຂຍາຍຕົວ ເຊັ່ນດຽວກັບການກະສິ
ກັມທີ່ມີການປ່ຽນແປງຄືກັນ. ການປ່ຽນແປງນີ້, ຄືປ່ຽນຈາກການ
ປະສູດສັດມາເປັນການໃຊ້ເຄື່ອງຈັກທັນສໄມແທນ ແລະຈາກການມີຊີ
ວິດຢູ່ແບບທັມມະດາມາເປັນການຮັດໄຮ່ຮັດນາເພື່ອການຄ້າຂາຍ.
ແນ່ນອນ, ໃນຣະຍະຫ້າສິບປີ ຈາກປີ ໑໙໗໐ ຫາປີ ໑໙໑໐, ຈຳ
ນວນໄຮ່ສວນທີ່ມີຢູ່ໃນສະຫະຣັຖໄດ້ເພີ້ມຂຶ້ນອີກສາມເທົ່າ, ຄືແຕ່ກ່ອນ
ຈຳນວນ ໄຮ່ ສວນ ມີ ๘,๐๐๐,๐๐๐ ແລະ ໄດ້ເພີ້ມຂຶ້ນ ເປັນ
๗,๐๐๐,๐๐๐. ທີ່ດິນທີ່ໃຊ້ໃນການປູກຝັງນັ້ນ ໄດ້ຂຍາຍອອກເປັນ

ສອງເທົ່າ ຄິດຈາກຈຳນວນ ๔๐๐,๐๐๐,๐๐๐ ເອເກີນ ເປັນ ๒๕๐,๐๐๐,๐๐๐ ເອເກີ. ການຜລິດເຂົ້າບຼ ແຕ່ກ່ອນ ໄດ້ ๑๗๓,๐๐๐,๐๐๐ ບຸເຊລ ມາເປັນ ฝ๓๕,๐๐๐,๐๐๐ ບຸເຊລ, ເຂົ້າສາລີ ແຕ່ກ່ອນໄດ້ ๒๓๒,๐๐๐,๐๐๐ ບຸເຊລ ມາເປັນ ๘.๒๒ฝ,๐๐๐,๐๐๐ ບຸເຊລ ແລະຝ່າຍແຕ່ກ່ອນໄດ້ ๓,๒๔๒,๐๐๐ ມາເປັນ ๑๑,ฝ๐๓,๐๐๐ ມ້ວນຜ້າ. ທີ່ດິນຫລາຍບ່ອນ ໄດ້ຖືກຈຸດ ຄົ້ນຂຶ້ນມາເປັນບ່ອນປຸກຝ້າ ໃນສາມສິບປີຫລັງຈາກປີ ๑๒ฝ๐, ແລະ ນັບວ່າເປັນການປຸກຝ້າຄັ້ງໃຫຍ່ ໃນປະວັດສາດຂອງສະຫະຣັຖ ໃນ ສໄມດຽວກັນນັ້ນ ພົລເມືອງຂອງຊາດ ກໍມີຫລາຍຂຶ້ນສອງເທົ່າ ແລະ ພົລເມືອງທີ່ເພີ່ມຂຶ້ນນັ້ນ ສ່ວນຫລາຍແມ່ນຢູ່ຕາມຫົວເມືອງ ຕ່າງໆ ແຕ່ຊາວສວນຊາວນາອະເມຣິກັນ ກໍປູກພືດຜົນ ແລະຝ່າຍປ່າງຫລວງ ຫລາຍ, ແລະນອກຈາກນັ້ນ ກໍມີການລ້ຽງສັດ ເຊັ່ນ ງົວ, ໝູ, ແລະສາມາດຜລິດຂົນສັດພຽງພໍ ຕໍ່ຄວາມຕ້ອງການຂອງຊາວອະເມຣິ ກັນ ແລະນອກນັ້ນກໍຍັງໄດ້ສິ່ງອອກໄປຈຳໜ່າຍປະເທດນອກອີກດ້ວຍ

ການແຜ່ຂຍາຍ ອອກໄປທາງພາກຕະເວັນຕົກ ຢ່າງກ້ວາງ ຂວາງນັ້ນໄດ້ສະແດງໃຫ້ເຫັນເຖິງຄວາມສຳເຣັດພິເສດ ແລະປັດຈັຍ ແມ່ນອື່ນອີກກໍແມ່ນເຄື່ອງຈັກ ແລະວິທຍາສາດ ທີ່ເອົາມາໃຊ້ໃນການ ເຣັດໄຮ່ເຣັດສວນ. ຊາວນາຊາວສວນ ໃນສໄມປີ ๑๒๐๐ ພາກັນ ໃຊ້ກ່ຽວທັມມະດາສຳລັບການເກັບກ່ຽວແລະວຽກທີ່ເຣັດໄດ້ຫລາຍ ທີ່

ສຸດໃນມື້ນີ້ງກໍບໍ່ເກີນເຄື່ງເອເກີ ແຕ່ຕໍ່ມາ ໃນປີ ຈພ.ຄ.ວ, ຊີຣັສແນກ ທໍມິກໄດ້ປະດິດກ່ຽວວິເສດອອກມາໃຊ້ ແລະປາກົດວ່າ ມື້ນີ້ງເກັບ ກ່ຽວໄດ້ຫ້າຫາຫົກເອເກີ. ໄກອອກໄປອີກ ທາງພາກຕະເວັນຕົກ, ເຂົາໄດ້ຕັ້ງໂຮງງານເກັບກ່ຽວ ທີ່ທີ່ງເມືອງ ຊີກາໂກ ແລະໃນປີ ຈຊຝວ, ເຄື່ອງຈັກເກັບກ່ຽວທີ່ທີ່ງເມືອງຊີກາໂກ ແລະໃນປີ ຈຊຝວ ເຄື່ອງຈັກເກັບກ່ຽວທັນສໄມ ປະມານຊາວກວ່າພັນລ້ານເຄື່ອງໄດ້ຖືກ ນາໍເອົາອອກມາຂາຍຈາໍຫນ່າຍ.

ສິ່ງທີ່ສືບເນື່ອງຕໍ່ກັນມານີ້ກໍຄື, ການປະດິດເຄື່ອງຈັກ ແລະ ອຸປກອນອັນທັນສໄມທີ່ເອົາມາໃຊ້ ໃນການກະສິກັມເຊັ່ນຈັກມັດ, ຈັກ ຟາດເຂົ້າ, ຈັກເກັບກ່ຽວ ແລະຟາດຫລືທັງສອງແນວຮ່ວມກັນ ແລະ ປາກົດວ່າ ທີ່ວທຸກມຸມເມືອງໃຊ້ເຄື່ອງຈັກຊຶ່ງຊ່ວຍໃຫ້ຊາວນາໄດ້ເກັບ ກ່ຽວຫລາຍ. ເຄື່ອງຈັກປູກຫມາກສາລີ, ເຄື່ອງຈັກສາໍລັບ ເກັບ ກ່ຽວຫມາກສາລີ ແລະເຄື່ອງຈັກປອກເປືອກກໍ້ລວນແຕ່ເປັນປະໂຍດທີ່ ໄດ້ພາໃຫ້ຜົລປູກເພີ້ມພູນ ຫລາຍຂຶ້ນ. ພວກຊາວໄຮ່ຊາວນາ ທາງ ພາກຕະເວັນຕົກເລີ້ມໃຊ້ເຄື່ອງມືທັນສໄມ ໃນການເຮັດໄຮ່ສວນເຊັ່ນ ວ່າເຄື່ອງຈັກເກັບກ່ຽວ, ຈັກຟາດເຂົ້າ ແລະຣົຖແທຣກເຕີ. ສ່ວນ ໄຮ່ສວນທາງພາກຕະເວັນອອກນັ້ນນ້ອຍຫລາຍ, ການກະສິກັມບໍ່ຄ່ອຍ ດຶງດູດຄວາມສົນໃຈ ຂອງປະຊາຊົນເທົ່າໃດ, ດັ່ງນັ້ນ ນັບວ່າເປັນ ການຍາກທີ່ຈະສ່ຽງລົງທຶນຊື້ເຄື່ອງຈັກ ແນວຣາຄາແພງມາໃຊ້, ແຕ່

ການປູກຝ່າຍແລະຕົ້ນຢາທາງໃຕ້ຍັງບໍ່ພ້ອມ ທີ່ຈະຮັບເອົາອຸປກອນອັນ
ທັນສໄໝມາໃຊ້ໃນການປູກຝັງເທື່ອ.

ຕໍ່ຈາກຄວາມສຳຄັນຂອງການໃຊ້ເຄື່ອງຈັກ ໃນການກະສິກັມ
ແລ້ວ ກໍແມ່ນວິທຍາສາດ. ໃນປີ ໑໙໗໘, ກົດໝາຍວ່າດ້ວຍທີ່ດິນ
ເພື່ອຍົກໃຫ້ເປັນກັມສິດຂອງວິທຍາໄລກໍໄດ້ສເນີອອກມາ, ສະພາກິ
ແກຣສໄດ້ຈັດຫາທີ່ດິນສາທາຣະນະໃນທຸກໆຣັຖເພື່ອຕັ້ງວິທຍາໄລ ກະ
ເສດແລະອຸດສາຫະກັມ ເພາະວ່າ ໂຮງຮຽນເຫລົ່ານີ້ຈະໃຊ້ເປັນສະ
ຖາບັນການສຶກສາ ແລະສູນກາງຄົ້ນຄວ້າກະສິກັມ. ພ້ອມກັນນີ້ສະພາ
ກິງແກຣສໄດ້ຈັດງົບປະມານເງິນກ້ອນນຶ່ງ ໄວ້ສຳລັບສ້າງສະຖານີທົດ
ລອງກະສິກັມ ຂົ້ນທົ່ວປະເທດ ແລະນອກນີ້ ກໍຍັງໄດ້ໃຫ້ເງິນກູ້ຢືມ
ແກ່ກະຊວງກະເສດອີກກ້ອນນຶ່ງ ເພື່ອທຳການຄົ້ນຄວ້າ ເມື່ອຕົກມາ
ຮອດການຕັ້ງຕົ້ນຂອງສັຕວັດໃຫມ່, ນັກວິທຍາສາດ ທົ່ວທຸກແຫ່ງ ໃນ
ປະເທດ, ຕ່າງກໍດຳເນີນແຜນການຄົ້ນຄວ້າໃນດ້ານກະສິກັມ.

ມີນັກວິທຍາສາດຄົນນຶ່ງໃນຈຳນວນນີ້ ຄືທ່ານ ມາກຄາເລີຕັນ
ໄດ້ເດີນທາງໄປປະເທດຣັສເຊັຍ ເພື່ອສັງເກດເບິ່ງວຽກການດ້ານ
ກະເສດ ແລະການໄປເທື່ອນີ້ເຂົາໄດ້ນຳເຂົ້າວິດຊຸນຶ່ງມານຳ ຊຶ່ງ
ເຂົ້າວິດດັ່ງກ່າວນີ້ເມື່ອນຳມາໃຊ້ແລ້ວພາໃຫ້ມີຄວາມທົນທານຕໍ່ຄວາມ
ແຫ້ງແລ້ງໃນຣະດູຫນາວແລະຜົນຈາກນັ້ນກໍຄືສຫະຣັຖສາມາດປູກເຂົ້າ
ວິດໄດ້ເພີ່ມຂົ້ນອີກເຄິ່ງນຶ່ງ ຊຶ່ງນັກວິທຍາສາດ ທີ່ທຳການຄົ້ນຄວ້າໃນ

ດ້ານກະສິກັມໃນສໄມນັ້ນບໍ່ຄ່ອຍໄດ້ຜົນດີປານໃດ. ມາຣິອອນດໍເສຕ ໄດ້ຄົ້ນພົບພຍາດຫມູຕາຍ ຊຶ່ງນັບວ່າເປັນພຍາດ ທີ່ຮ້າຍແຮງສົມຄວນ ຈອດຊ່ໂມເລີ ໄດ້ຄົ້ນພົບພະຍາດຄໍໄຄ່ ຂອງສັດ. ຈາກປະເທດອາ ຟຣິກກາດ້ານເຫນືອ, ນັກຄົ້ນຄວ່າເຂົ້າສາລີແນວນຶ່ງໄດ້ກັບມາອະເມ ຣິກາພ້ອມດ້ວຍພັນເຂົ້າສາລີທີ່ມີຊຶ່ວ່າ ກາເຟັຍຄອນ ແລະນັກຄົ້ນຄວ່າ ຄົນອື່ນອີກ ໄດ້ນາໍເອົາພັນດອກໄມ້ເຫລືອງ ຊຶ່ງມີຊຶ່ວ່າ ອາລຟາລຟາ ມາຈາກປະເທດນຶ່ງ ໃນແຂວງເທີເຄສຕານ. ລູເທີເບີແບງ ຊຶ່ງ ເປັນຊາວແຄລີຟໍເນັຍຄົນນຶ່ງ ໄດ້ຄົ້ນພົບວິທີປູກຕົ້ນໄມ້ ທີ່ເປັນຫມາກດີ ແລະປູກຜັກໃຫ້ໄດ້ປະຣິມານຫລາຍຂຶ້ນ. ສຕິເຟັນແບບຄອກ ຊາວ ວິສຄອນຊິນຄົນນຶ່ງ, ໄດ້ທົດລອງນາໍ້ນົມແລະເບິ່ງວ່າ ຈາໍນວນໄຂມັນ ໃນນາໍ້ນົມນັ້ນ ຈະເອົາມາເຮັດເນີຍໄດ້ເທົ່າໃດ. ທີ່ສະຖາບັນການ ສຶກສາທີ່ເມືອງທັສເກຈີ ໃນຣັຖອາລາບາມາ ມີນັກວິທຍາສາດ ຜູ້ມີຊຶ່ ສຽງຊາວຜິວດາໍຄົນນຶ່ງ ຊຶ່ວ່າ ຈອດຊ່ ວໍຊິງຕັນຄາເວີ, ໄດ້ຄົ້ນພົບວິ ທີໃຊ້ຫມາກທົ່ວດິນ ໄດ້ຫລາຍກວ່າຮ້ອຍແນວ, ແລະນອກນີ້ມີມັນດ້າງ ແລະຫມາກຖົ່ວຂຽວ.

## ຊາວໄຮ່ຊາວນາພົບກັບຄວາມລາໍບາກ

ແມ່ນວ່າ ຄວາມກ້າວຫນ້າ ໃນດ້ານກະສິກັມ ຈະມີແດ່ແລ້ວກໍ ຕາມ, ແຕ່ຊາວໄຮ່ຊາວນາ ໃນສັຕວັດທີສິບເກົ້ານັ້ນ ຍັງຕົກຢູ່ໃນຂັ້ນ

ຂອງຄວາມລຳບາກຢູ່. ໃນທ້າຍຂອງສັຕວັດທີສິບເກົ້າ ເປັນສໄມ ຊຶ່ງເປັນກະສິກັມແຜ່ຂຍາຍຫລາຍທີ່ສຸດ, ແຕ່ສະຖານະການອັນຫຍຸ້ງ ຍາກຂອງຊາວໄຮ່ຊາວນາໄດ້ກາຍເປັນບັນຫາໃຫຍ່. ເຫດການທັງ ຫມົດນີ້ ເນື່ອງມາຈາກປັດຈັຍ ຫລາຍຢ່າງເຊັ່ນ, ດິນ ທີ່ຂາດຝຸ່ນ, ຄວາມປ່ຽນແປງຂອງທັມມະຊາດ ການຜລິດພືດຜົນຈົນເຫລືອຄວາມ ຕ້ອງການ, ແລະຂາດການດູແລຢ່າງໃກ້ຊິດ ຈາກຣັຖສະພາ. ດິນ ທາງພາກໃຕ້ນັ້ນຂາດຝຸ່ນ ເນື່ອງຈາກວ່າ ດິນນີ້ໄດ້ໃຊ້ປູກຕົ້ນຢາແລະ ຝ້າຍມາເປັນເວລານານແລ້ວ, ແຫ່ງທາງພາກຕະເວັນຕົກແລະທາງ ພາກທີ່ງພຽງ ດິນໄດ້ຖືກນ້ຳເຊາະ, ຖືກລົມພາຍຸ ແລະແມງໄມ້ຣະ ບາດແລະທຳລາຍຫມົດ.

ແມ່ນວ່າອຸປກອນອັນທັນສໄມໄດ້ນຳມາໃຊ້ໃນການກະສິກັມໃນ ພາກຕະເວັນຕົກຂອງເຂດມີຊີຊິບປີກໍຕາມ, ແຕ່ກໍບໍ່ໄດ້ຜົນເຕັມເມັດ ເຕັມຫນ່ວຍເທົ່າທີ່ຄວນ. ເຄື່ອງຈັກເຫລົ່ານີ້ໄດ້ສົ່ງເສີມໃຫ້ຊາວໄຮ່ ຊາວນາຂຍາຍວຽກການໃນໄຮ່ນາຫລາຍຂຶ້ນ ແລະນອກຈາກນີ້ຍັງໄດ້ ກະຕຸ້ນເຕືອນໃຫ້ຊາວນາປູກແຕ່ພືດຜົນແນວສຳຄັນໆ, ນອກຈາກນັ້ນ ເຄື່ອງຈັກຍັງໃຫ້ໂອກາດແກ່ພໍ່ນາໃຫຍ່ໆ ໄດ້ຂຍາຍກິຈການຂອງເຂົາ ເຈົ້າໃຫ້ກວ້າງຂວາງອອກໄປອີກ ແລະສຳຄັນທີ່ສຸດກໍຄື ພໍ່ນາໃຫຍ່ໄດ້ ປຽບພໍ່ນາຜູ້ນ້ອຍ. ບັນຫານີ້ຍັງຄ້າງຄາຢູ່ ແລະບໍ່ທັນໄດ້ຮັບການແກ້ ໄຂຈັນກະທັ້ງຫລາຍປີຕໍ່ມາ, ເມື່ອເທັກນິກການບົວຣະບັດດິນໄດ້ເປັນ

ທີ່ນິຍົມໃຊ້ກັນຢ່າງກວ້າງຂວາງ.

ສິ່ງທີ່ຫຍຸ້ງກວ່ານີ້ ແຕ່ກໍຈະແກ້ໄຂໄດ້ຢູ່ນັ້ນຄື, ບັນຫາຣາຄາສິນຄ້າ. ພວກຊາວນາຂາຍພືດຜົນຂອງເຂົາເຈົ້າຕາມຣາຄາທີ່ຂາຍແຂ່ງກັນໃນຕລາດໂລກ, ແຕ່ເມື່ອເຂົາເຈົ້າຊື້ເຄື່ອງຈັກແລະອຸປກອນອື່ນໆຈາກຕລາດ ຊຶ່ງມີຣາຄາຜ່ອນຜັນ. ຣາຄາທີ່ໄດ້ວາງປະກາດຂາຍເຊັ່ນເຂົ້າວິດ, ຝ້າຍ ຫລືຊື້ນງົວນັ້ນ ເຂົາເຈົ້າຂາຍຕາມຣາຄາຕລາດເມືອງນອກ, ສ່ວນຣາຄາເຄື່ອງອຸປກອນທີ່ເຂົາເຈົ້າຊື້ເຊັ່ນວ່າເຄື່ອງຈັກກ່ຽວເຂົ້າ, ປຸ້ຍ, ລວດເຫລັກ, ແລະອື່ນໆແມ່ນຊື້ຕາມຣາຄາຂອງຫລວງ. ຕັ້ງແຕ່ປີ ຈຊກ່ວ ຫາປີ ຈຊຜວ, ຣາຄາຂອງພືດຜົນຂຶ້ນໆລົງໆ ໂດຍບໍ່ສມ່ຳສເມີແລະຄ່າຜົນຜລິດຈາກໄຮ່ສວນຊາວອະເມຣິກັນ ກໍເພີ້ມຂຶ້ນເຖິງເຄິ່ງໂກດ ໂດລາ. ໃນເວລາດຽວກັນນີ້, ຄ່າຂອງໂຮງງານຕ່າງໆກໍເພີ້ມຂຶ້ນເປັນຫົກໂກດໂດລາ.

ຄວາມບໍ່ທ່ຽງຕົງຂອງເສຖກິດນີ້ ໄດ້ພາໃຫ້ຊາວນາທັງຫລາຍໂຮມກັນຈັດຕັ້ງສະມາຄົມ ເພື່ອສເນີໃຫ້ຣັຖບານຍື່ນມືເຂົ້າຊ່ວຍເຫລືອໃນເຣື່ອງນີ້. ດັ່ງນັ້ນ ສະມາຄົມຊາວນາໄດ້ຖືກຕັ້ງຂຶ້ນໃນປີ ຈຊຝກ ແລະຈາກນັ້ນມາບໍ່ດົນ, ທຸກໆຣັຖກໍຕັ້ງສະມາຄົມຊາວນາຂຶ້ນ, ແລະມີສະມາຊິກຫລາຍກວ່າເຈັດແສນຄົນ. ໃນຂັ້ນຫຳອິດ, ພວກນີ້ພຽງແຕ່ຫ້ອນໂຮມເຂົ້າກັນເພື່ອໃຫ້ຊາວນາທັງຫລາຍໄດ້ຢູ່ໃກ້ຊິດກັນ.

ແຕ່ກໍເປັນສິ່ງທີ່ຫລີກລ່ຽງບໍ່ໄດ້, ໃນທີ່ສຸດ ບັນດາສະມາຊິກ

ฉบับ / VII
ตามจำหมาย

ເຫລົ່ານີ້ກໍຫັນມາເວົ້າເຣື່ອງທຸຣະກິດ ແລະການເມືອງ, ຄໍາເວົ້ານໍາ ມາສູ່ການກະທໍາ, ແລະຕໍ່ມາ ສະມາຄົມຊາວນາຫລາຍໆບ່ອນ ກໍໄດ້ ຕັ້ງສຫະກອນຂຶ້ນ ແລະໂຮງງານ. ໃນຈໍານວນບາງຣັຖຢູ່ທາງພາກ ຕະເວັນຕົກ, ຊາວນາເຫລົ່ານີ້ໄດ້ຄັດເລືອກເອົາສະມາຊິກເຂົ້າຮ່ວມ ໃນຣັຖສະພາແລະອອກກົດໝາຍຈັດຣະບຽບການເດີນຣົຖໄຟແລະໃຫ້ ມີໂກດັ່ງເກັບສິນຄ້າ. ບໍຣິສັດຫລາຍບ່ອນຂອງຊາວນາເຫລົ່ານີ້ ໄດ້ ຮັບຄວາມລົ້ມເຫລວ, ແຕ່ໃນເວລາດຽວກັນນັ້ນ ທາງດ້ານໄຮ່ນາ ກໍ ກັບຟື້ນຟູຫນັ້ນຄັ່ງສົມບູນຄືນອີກໃນທ້າຍປີ ໑໙໓໐ ກວ່າແລະຜົນທີ່ຕາມ ມາກໍຄື ສະມາຄົມຊາວນາມີຄວາມສໍາຄັນນ້ອຍລົງ. ຂະບວນການທີ່ ເຂົ້າເຈົ້າໄດ້ກໍ່ຕັ້ງຂຶ້ນມານັ້ນ ໄດ້ຟື້ນຟູມາເປັນສັນພັນທະມິດຂອງພວກ ຊາວນາ ຊຶ່ງໄດ້ປາກົດຕົວຂຶ້ນມາໃນປາຍປີ ໑໙໒໐ ກວ່າ ແລະປີ ໑໙໓໐. ແຕ່ສໄມທີ່ພົບກັບຄວາມຍາກລໍາບາກ ກໍປາກົດຂຶ້ນອີກເທື່ອ ນຶ່ງ, ທາງທິ່ງຣາບນັ້ນໄດ້ພົບກັບຄວາມແຫ້ງແລ້ງ ຊຶ່ງເປັນເຫດໃຫ້ມີ ການເຄື່ອນໄຫວຢ່າງຫລວງຫລາຍໃນສັນພັນທະມິດແລະໃນປີ ໑໙໓໐ ອົງການນີ້ ມີສະມາຊິກ ເກືອບເຖິງສອງລ້ານຄົນ. ນອກເຫນືອໄປ ຈາກການຕື່ນຕໍ ໂລງການການສຶກສານີ້ແລ້ວ, ອົງການນີ້ຍັງໄດ້ຮຽກ ຮ້ອງໃຫ້ມີການປ່ຽນແປງທາງການເມືອງອີກດ້ວຍ ແລະຈາກນັ້ນມາບໍ່ ດົນ ສະມາຄົມສັນພັນທະມິດກໍປ່ຽນຮູບມາເປັນພັກການເມືອງ ຊຶ່ງພັກ ນີ້ນັບວ່າມີປະຊາຊົນນິຍົມຫລາຍ ແລະມີນະໂຍບາຍຕົງກັນຂ້າມກັບພັກ

ເດໂມແຄຮຕເກົ່າແລະພັກຣິພັບລິແຄນ.

## ພັກປະຊານິຍົມສນັບສນູນໃຫ້ຜ່ອນຄາຍເຣື່ອງເງິນຕຣາ

ບໍ່ເຄີຍມີການເມືອງອະເມຣິກັນຄາວໃດທີ່ພາໃຫ້ປະຊາຊົນສົນ ໃຈເທົ່າສໄມພັກປະຊານິຍົມ, ດ້ວຍວ່າພັກນີ້ໄດ້ແຜ່ຂຍາຍນະໂຍບາຍ ການເມືອງຂອງເຂົາເຈົ້າໄປທົ່ວທົ່ງນາ ແລະດົນແຫ່ງການປູກຝ້າຍ. ຫລັງຈາກເຮັດວຽກຫນັກຫມົດມື້ຢູ່ໃນໄຮ່ນາແລ້ວ, ຄ່ຳມາ ພວກຊາວ ນາຍັງພາລູກພາເມັຍໄປທີ່ຫໍປະຊຸມ ເພື່ອໄປຟັງຜູ້ນຳຂອງພັກປະຊານິ ຍົມປະຊຸມ ເພື່ອອອກຄວາມຄິດຄວາມເຫັນກັນ. ໃນການເລືອກຕັ້ງ ຂອງປີ ຈຊຝວ, ພັກການເມືອງໃຫມ່ໄດ້ຄອງອຳນາດໃນສິບສອງຣັຖ ທາງໃຕ້ແລະທາງພາກຕະເວັນຕົກແລະຜົນຄະແນນການເລືອກຕັ້ງສະ ມາຊິກຂອງສອງສະພາ ກໍໄດ້ຖືກສົ່ງໄປຍັງສະພາສູງ. ຜົນສຳເຣັດ ຈາກການເລືອກຕັ້ງເທື່ອນີ້ເປັນແຮງສນັບສນູນໃຫ້ພັກປະຊານິຍົມສເນີ ໃຫ້ການປ່ຽນແປງຫລາຍຂຶ້ນ, ເຊັ່ນວ່າໃຫ້ມີການດັດແປງ ອັດຕຣາ ຣາຍໄດ້ຂອງພາສີ ຈັດຕັ້ງກອງເງິນທຶນຂຶ້ນສຳລັບໃຫ້ຊາວໄຮ່ຊາວນາ ກູ້ຢືມໄປເຮັດທຶນ, ປ່ຽນກິຈການໆເດີນທາງຣົຖໄຟ ໃຫ້ເປັນຂອງຣັຖ ບານ, ປ່ຽນຣະບຽບການເຮັດວຽກໃຫ້ເປັນມື້ນຶ່ງແປດຊົ່ວໂມງ ແລະ ໃຫ້ມີທະນາບັດໃນທ້ອງຕລາດຫລາຍສົມຄວນແລະຫລຽນເງິນກໍໃຫ້ຫລໍ່ ອອກມາຕື່ມ ໂດຍບໍ່ຈຳກັດຈຳນວນ.

ໃນການເລືອກຕັ້ງຂອງປີ ຈຊຈ, ພັກປະຊານິຍົມໄດ້ເຮັດ ໃຫ້ຜູ້ຄົນ ໂດຍສະເພາະທາງພາກຕະເວັນຕົກ ແລະພາກໃຕ້ມີຄວາມ ເຫລື້ອມໃສຫລາຍທີ່ສຸດ ຈົນເປັນເຫດໃຫ້ສະມາຊິກຂອງພັກນີ້ ໄດ້ຄະ ແນນສຽງຫລາຍກວ່ານຶ່ງລ້ານສຽງ: ແຕ່ໃນເທື່ອນີ້, ແມ່ນທ່ານໂກ ເວີ ຄລີເວີແລນ ສັງກັດຢູ່ພັກເດໂມແຄຣຕ ຖືກເລືອກຕັ້ງ. ພັກເດ ໂມແຄຣຕເມື່ອຖືກພັກປະຊານິຍົມຊັກຈູງຫລາຍ, ຜູ້ນາໍຄົນໃຫມ່ຂອງ ພັກເດໂມແຄຣຕໄດ້ຕຽມເຮັດໃຫ້ການເມືອງ ເປັນເຣື່ອງບັນຫາຂອງ ການເງີນ.

ຕັ້ງແຕ່ເລີ້ມຕົ້ນສ້າງປະເທດນີ້ເປັນຕົ້ນມາ ສະຫະຣັຖໄດ້ໃຊ້ ຄາໍແລະເງີນເປັນການຄ້າຄາໍ້ປະກັນມາຕຖານຂອງເງີນຕຣາ ດັ່ງນັ້ນ ຣັຖບານຕຽມພ້ອມສເມີທີ່ຈະຫລໍ່ຫລອມຫລຽນອອກມາຕາມຈາໍນວນຄາໍ ແລະເງີນແທ່ງ ເພື່ອໃຊ້ຄາໍ້ປະກັນສິນຄ້າ ທີ່ຖືກປະດິດອອກມາໃຫມ່, ແຕ່ໃນປີ ຈຊກສ, ສະພາກົງແກຣຕໄດ້ຮັບຮູ້ຣະບຽບການເງີນ ແລະ ໄດ້ງົດການຫລໍ່ຫລຽນໂດລາ ໃນຈາໍນວນຫລຽນອື່ນໆ. ກົດຫມາຍນີ້ ໄດ້ພາໃຫ້ມີການຕື່ນເຕັ້ນຢູ່ບໍ້ນ້ອຍ ເພາະວ່າເງີນແທ່ງໃນເວລານັ້ນບໍ່ ຄ່ອຍມີຫລາຍປານໃດ. ເມື່ອເວົ້າຕາມຄວາມຈິງແລ້ວ, ຫລຽນໂດ ລາບໍ່ໄດ້ນາໍອອກມາໃຊ້ ເປັນເວລາເຖິງສີ່ສິບປີແລ້ວ ແຕ່ສະຖານະ ການແບບນີ້ໄດ້ປ່ຽນຢ່າງໄວ. ຕໍ່ມາ ບໍ່ເງີນບ່ອນໃຫມ່ ກໍໄດ້ຖືກຄົ້ນ ພົບຢູ່ຕາມພູ ໃນຣັຖທາງພາກ ຕະເວັນຕົກ. ແຕ່ໃນເວລານັ້ນ,

ຫລາຍປະເທດໃນຢຸໂຣບໄດ້ເລີກໃຊ້ເງິນແທ່ງ ທີ່ຄ້ຳປະກັນມາຕຖານ ເງິນຂອງເຂົາເຈົ້າ ແລະອີກບໍ່ດົນ ເງິນແທ່ງກໍມີຢູ່ເຕັມ.

ໃນຣະຍະນີ້, ອະເມຣິກາກຳລັງປະສົບກັບ ພາວະອັນຫຍຸ້ງ ຍາກ ແລະຄວາມຫຍຸ້ງຍາກນີ້ ຄົງເນື່ອງມາຈາກການຫມູນວຽນຂອງ ເງິນໃນທ້ອງຕລາດບໍ່ຄ່ອຍສດວກ, ປະຊາຊົນທາງພາກຕະເວັນຕົກ ແລະທາງໃຕ້ ຊຶ່ງສັບສນຸນໂດຍກຸ່ມກັມມະກອນຂອງໂຮງງານອຸດສາ ຫະກັມທາງພາກຕະເວັນອອກໄດ້ຂໍຮ້ອງໃຫ້ຣັຖບານງົດການວາງຂອບ ເຂດຈຳກັດໃນການຫລໍ່ຫລຽມເງິນ. ເພາະເຂົາເຈົ້າເຊື່ອວ່າການ ຂຍາຍວົງການເງິນ ໃຫ້ກ້ວາງຂວາງຂຶ້ນນີ້, ຈະພາໃຫ້ພົ້ດພົ້ນ ຂອງ ເຂົາເຈົ້າຂາຍໄດ້ຣາຄາສູງກວ່າທີ່ກຳລັງເປັນຢູ່ໃນປັດຈຸບັນນີ້ ແລະ ພາໃຫ້ຄົນງານໃນໂຮງງານອຸດສາຫະກັມມີເງິນເດືອນຫລາຍຂຶ້ນ ໄດ້ ມີການຖືກຖຽງກັນຂຶ້ນວ່າ ເງິນຫນີ້ທີ່ຍັງຄ້າງຄາຢູ່ນັ້ນ ກໍຄົງຈະຊຳຣະ ໃຫ້ຫມົດໄດ້, ແຕ່ພວກທົ່ວໂບຣານເຊື່ອວ່າ ການກະທຳຊຸ່ນນີ້ເປັນ ການທຳລາຍການເງິນໂດຍສະເພາະ ຖ້າວ່າມີເງິນເຟີ້ແລ້ວ ຍາກທີ່ ສຸດທີ່ຈະຣະງັບໄດ້, ແລະຣັຖບານຈະຕ້ອງຫລົ້ມຈົມຢ່າງບໍ່ຕ້ອງສົງໃສ ມີແຕ່ມາຕຖານຂອງຄຳແທ່ງເທົ່ານັ້ນທີ່ຈະພາໃຫ້ເງິນຕຣາມີຄວາມຫມຸ່ນ ທ່ຽງຕົງ.

ຕໍ່ມາ ພັກເດໂມແຄຣຕ ແລະພັກປະຊາມິຍົມເກົ່າໄດ້ກັບເຂົ້າ ເປັນພັກດຽວ ແລະໄດ້ຄັດເລືອກເອົາ ທ່ານວິລລຽມເຈັນນິ້ງສໂມອັນ

ຈາກຣັຖ ເນຍຣັສກາເຂົ້າຊິ້ງຕຳແໜ່ງປະທານາທິບໍດີໃນການເລືອກ
ຕັ້ງປີ ໑໙໙໗. ການປາກົດຕົວຂອງເຂົາເດັ່ນແລະເປັນນັກກ່າວສູນ
ຫອນພິດທີ່ດຶງດູດໃຈຜູ້ຟັງໄດ້ດີ ແລະເຂົາສາມາດທຳຄະແນນສຽງໄດ້
ຫລາຍໃນການເລືອກຕັ້ງຄາວນີ້. ແຕ່ໃນເວລານັ້ນ ພັກຂອງເຂົາ
ເກີດແຕກແຍກກັນ ແລະຄູ່ແຂ່ງຂອງເຂົາ ກໍເຂັ້ມແຂ່ງຫລາຍ. ແຕ່
ໂອກາດອັນດຽວກັນຂອງພັກເດໂມແຄຣຕ ທີ່ພໍຈະເຫັນໄດ້ນັ້ນກໍຄື ລູມ
ສົມບັດແລະລັກສນະ ໃນຕົວຂອງໄຢູອັນເອງ, ແຕ່ສິ່ງນີ້ກໍຍັງບໍ່ພຽງພໍ
ຈົນເປັນເຫດໃຫ້ທ່ານວິລລຽມມັກຄິນລີໄດ້ຮັບໄຊຊະນະ ໃນການເລືອກ
ຕັ້ງເທື່ອນີ້ໂດຍໄດ້ຄະແນນສຽງຫລາຍກວ່າເຄິ່ງລ້ານຄະແນນ. ການ
ອອກໂຄສນາຫາສຽງ ໃນການເລືອກຕັ້ງ ຂອງທ່ານໄຢູອັນ ເທື່ອນີ້,
ເປັນປະວັດການຄັ້ງນຶ່ງ ໃນປະວັດສາດ, ແລະນອກຈາກນະໂຍບາຍ
ການເມືອງແລ້ວ ຄວາມຄິດຄວາມເຫັນຂອງພັກປະຊານິຍົມ ແລະພັກ
ເດໂມແຄຣຕກໍໄດ້ຖືກບັນທຶນລົງໃນກົດໝາຍ.

ການໂຄສນາເທື່ອນີ້, ແມ່ນຊັກຊວນໃຫ້ຄົນໃນຊາດ ເປັນນ້ຳ
ນຶ່ງໃຈດຽວກັນ ຊຶ່ງສະພັນໄດ້ບັນລຸຄວາມສຳເຣັດ ຕັ້ງແຕ່ຫລັງສົງ
ຄາມການເມືອງພົ້ນມາ. ແມ່ນວ່າຄວາມທຸກຍາກຂອງພວກຊາວໄຮ່
ຊາວນານັ້ນຍັງນ້ອຍກວ່າຄວາມທຸກໃຈ ຂອງພວກທີ່ມີຂ້າຫາສຳຕານ,
ແຕ່ບໍ່ມີການຖືກຖຽວເຖິງການລົບລ້າງ ຫລືການແບ່ງແຍກເລີຍ. ຕໍ່
ມາ ຄວາມປອງດອງ ຂອງຊາດນັ້ນ, ໄດ້ສະແດງອອກມາ ໃຫ້ເຫັນ

ຢ່າງແຈ່ມແຈ້ງໃນບັນຫາຂັດແຍ້ງກັບປະເທດສະເປັນ ຊຶ່ງເກີດຂຶ້ນໃນ ປີ ໑໕໙໘. ຣັຖບານຂອງປະເທດສະເປັນບໍ່ໄດ້ຮຽນຮູ້ເຖິງການປະຕິວັດຂອງອາມາມິຄົນສ່ວນໃຫຍ່ ໃນພາກຕະເວັນຕົກຕັ້ງແຕ່ຕົ້ນສັຕວັດມາ ໂດຍບໍ່ມີການປ່ຽນແປງທ່າທີເດີມຂອງຕົນ. ປະເທດສະເປັນໄດ້ດຳເນີນການປົກຄອງ ຊຶ່ງມີອຳນາດເດັດຂາດຂອງຕົນຕໍ່ໄປ ໃນເກາະຄິວບາ ຊຶ່ງເປັນເກາະນ້ອຍໆເກາະນຶ່ງ ທີ່ໄດ້ທຳການຄ້າຂາຍກັບສະຫະຣັຖເລື້ອຍໆມາ ແຕ່ໃນປີ ໑໙໐໔, ປະຊາຊົນຊາວ ຄິວບາ ເລີ່ມຕົ້ນຕົວ ແລະຮະເບີດອອກມາເປັນສົງຄາມ ເພື່ອກູ້ເອກຣາຊ. ຝ່າຍສະຫະຣັຖກໍໄດ້ເຝົ້າເບິ່ງການປ່ຽນແປງເຫລົ່ານັ້ດ້ວຍຄວາມເອົາໃຈໃສ່ ເພາະວ່າອະເມຣິກາມີຄວາມສົນໃຈ ໃນການຕໍ່ສູ້ ເພື່ອເອກຣາຊເທື່ອນັ້. ການຣັດສົງຄາມກັບສະເປັນ ບໍ່ໄດ້ ປະກາດຢ່າງເປັນທາງການ ແຕ່ປະທານາທິບໍດີເກລວແລນ ໄດ້ພຍາຍາມຮັກສາຄວາມເປັນກາງໄວ້ສເມີ. ດັ່ງນັ້ນ, ສາມປີຕໍ່ມາ, ໃນຣະຫວ່າງການປົກຄອງຂອງທ່ານແມກຄິນລີ ໄດ້ມີເຮືອຣົບຂອງສະຫະຣັຖລຳນຶ່ງຖືກທຳລາຍໃນຂນະທີ່ຈອດຢູ່ທ່າເມືອງຮາວານາ ແລະຈຳນວນຄົນໃນເຮືອທີ່ເສັຍຊີວິດໄປນັ້ນ ມີຫ້າໜົດສອງຮ້ອຍຫົກສິບຄົນ. ດ້ວຍເຫດນັ້ ຄວາມຮັກຊາດຂອງປະຊາຊົນກໍໄດ້ຣະເບີດອອກມາ. ທ່ານແມກຄິນລີ ໄດ້ພຍາຍາມຮັກສາຄວາມສງົບໄວ້ຢູ່ ແຕ່ໃນຣະຍະບໍ່ຫລາຍເດືອນຕໍ່ມາ ທ່ານເຫັນວ່າ ຖ້າຂືນຊັກຊ້າຕໍ່ໄປ ກໍບໍ່ໄດ້ປະໂຍດ, ດັ່ງ

ນັ້ນ ທ່ານຈຶ່ງສັ່ງໃຫ້ເອົາກຳລັງທັບອອກສະກັດກັ້ນ ການລຸກລາມຂອງ ປະເທດສະເປັນທັນທີ.

## ປະເທດສະເປັນບໍ່ໄດ້ໄຊຊະນະໃນສົງຄາມຄັ້ງນີ້ ແລະໄດ້ ສູນເສັຍປະເທດອານານິຄົມໄປດ້ວຍອີກ

ການເປັນສັດຕຣູຕໍ່ກັນນັ້ນສະແດງໃຫ້ເຫັນເຖິງການຕັດສິນໃຈ ອັນແນ່ວແນ່ ຊຶ່ງຍືດຍາວໄປເຖິງສີ່ເດືອນ ແລະບໍ່ມີພິລເມືອງຊາວອະ ເມຣິກັນຄົນໃດຈະທໍ້ຖອຍເຖິງຄວາມສຳຄັນທີ່ເກີດຂຶ້ນນີ້. ອາທິດນຶ່ງ ຫລັງຈາກສະຫະຣັຖປະກາດສົງຄາມກັບປະເທດສະເປັນ ທ່ານຈອດຊ໌ ດິວອີ ຊຶ່ງກຳລັງຄວບຄຸມກອງທັບເຮືອຂອງອະເມຣິກາຢູ່ຮົງກົງ, ໄດ້ ນຳເຮືອຣົບຂອງຕົນໄປທີ່ຖານທັບສະເປັນ ເພື່ອປະຕິບັດການຣົບຢູ່ໃນ ນ່ານນ້ຳມະຫາສມຸດແປຊີຟິກ. ກ່ອນເຊົ້າມືດ, ທ່ານໄດ້ນຳເຮືອຣົບ ມາຈອດຢູ່ອ່າວຂອງນະຄອນມະນີລາ, ແລະພໍເຖິງເວລາແລ້ວ ທ່ານ ກໍໄດ້ທຳລາຍເຮືອຣົບສະເປັນຈົນຫມົດສິ້ນໂດຍທີ່ທະຫານອະເມຣິກັນບໍ່ ໄດ້ສູນເສັຍຊີວິດແມ່ນແຕ່ຜູ້ດຽວ. ໃນຂນະດຽວກັນນັ້ນ ຢູ່ທີ່ປະເທດ ຄິວບາ, ທະຫານກອງພົນນຶ່ງ ໄດ້ໄປປະຈຳຢູ່ໃກ້ເມືອງແຊນຕີອາໂກ ແລະເຂົ້າເຈົ້າໄດ້ເປີດສາກຣົບທັນທີໂດຍຍິງໃສ່ທ່າເຮືອຈົນເປັນເຫດ ໃຫ້ເຮືອຣົບຂອງສະເປັນສີ່ລຳທີ່ຈອດຢູ່ທ່ານັ້ນ ຖືກທຳລາຍຫມົດໃນບໍ່ພໍ ເທົ່າໃດຊົ່ວໂມງ.

ຕັ້ງແຕ່ເມືອງບອສຕັນ ໄປເຖິງອານຟຣານຊິສໂກ, ສຽງ ຫມາກຫວີດ ດັງສນັ່ນ ແລະຫຸງຊາດປົວໄປມາເມື່ອມີຂ່າວປະກາດວ່າ ເມືອງອານຕິອາໂກໄດ້ເສັຍໄປແລ້ວ. ນັກຫນັງສືພິມຕ່າງກໍຟ້າວໄປ ຍັງປະເທດຄິວບາແລະຟີລິປິນ ເພື່ອໄປສັງເກດການທີ່ນັ້ນ ແລະເພື່ອ ໄປຂຽນຂ່າວກ່ຽວກັບວິຣະບຸຣຸດຂອງຊາດໃຫມ່ນີ້. ພັນຳຊັ້ນຍອດໃນ ເຫດການຄັ້ງນັ້ນແມ່ນທ່ານຈອດຊ໌ ດິວີ ຊຶ່ງໄດ້ໄຊຊນະທີ່ປະເທດຟີ ລິບປິນແລະທ່ານທີໂອດໍຣຸສເວລທ໌, ຫົວຫນ້າທະຫານມ້າອາສາສມັກ ຊຶ່ງທ່ານໄດ້ຄັດເລືອກເອົາໄປປະຕິບັດງານທີ່ປະເທດຄິວບາ. ຈາກ ນັ້ນມາບໍ່ດົນ, ປະເທດສະເປັນໄດ້ຟ້ອງຮ້ອງຂໍຄວາມສງົບເສີກໃນວັນ ທີ ๑๐ ເດືອນທັນວາປີ ๑๘๙๘ ແລະໂດຍສິດທິອັນຊອບທັມ ສະເປັນ ໄດ້ໂອນຄິວບາໃຫ້ເປັນສິດທິຂອງສະຫະຣັຖໄປຊົ່ວຄາວຈົນກວ່າຄິວບາ ພ້ອມທີ່ຈະເປັນເອກຣາຊໂດຍຕົນເອງໄດ້. ສະເປັນໄດ້ຍົກເມືອງປູ ໂຕຣິໂກ, ກວມ, ແລະປະເທດຟີລິປິນໃຫ້ອະເມຣິກາ ພ້ອມທັງໄດ້ ຈ່າຍເງິນໃຫ້ອີກເປັນຈຳນວນ ๘๐,๐๐๐ ໂດລ່າ.

ການໄດ້ປະເທດຟີລິປິນ ມາຄອບຄອງເທື່ອນີ້, ສະຫະຣັຖມີ ຄວາມຫວັງຢ່າງສູງ ໃນການຕິດຕໍ່ຄ້າຂາຍກັບປະເທດຈີນ. ຕັ້ງແຕ່ ຈີນຖືກປະເທດຍີ່ປຸ່ນຕີແຕກ ໃນປີ ๑๘๙๔-๙๕ ເປັນຕົ້ນມາ, ບັນດາ ປະເທດຫົວຫລາຍໃນຢຸໂຣບ ໄດ້ໄປຕັ້ງຖານທັບຢູ່ນັ້ນ ໂດຍເຊົ່າເຂດ ແດນຢູ່ ແລະພຍາຍາມແຜ່ພາຍອິດທິພົນຂອງຕົນ ໃນພາກພື້ນນັ້ນ.

ເຂົາເຈົ້າບໍ່ພຽງແຕ່ຜູກຂາດ ໃນສິດທິການທຳມາຄ້າຂາຍເທົ່ານັ້ນ, ເຂົາເຈົ້າຍັງຜູກຂາດ ໃນການລົງທຶນສ້າງທາງຣົຖໄຟ ແລະຂຍາຍບໍ່ຕ່າງໆຕາມເຂດອື່ນໆອີກດ້ວຍ. ໃນການເສື່ອມສຳພັນ ກັບປະເທດທາງຕະເວັນອອກນັ້ນ ກ່ອນອື່ນທັງຫມົດ, ຣັຖບານອະເມຣິກັນ ຈະຕ້ອງຂໍສິດທິເທົ່າທຽມກັນໃນການຄ້າຂາຍກັບຄົນທຸກໆຊາດ ແລະຫາກວ່າ ຫລັກການນີ້ຈະຕ້ອງຣັກສາໄວ້, ຈຳເປັນທີ່ສຸດ ທີ່ຈະຕ້ອງມີການກະທຳຢ່າງກ້າຫານ. ໃນເດືອນກັນຍາປີ ຈຊຈຈ, ທ່ານຈອນເຣຣັຖມົນຕີຕ່າງປະເທດ ໄດ້ສົ່ງຫນັງສືໄປຫາປະເທດອຳນາດ ທີ່ກ່ຽວຂ້ອງນີ້. ປະເທດເຫລົ່ານີ້ຕ່າງກໍເຫັນດີນຳນະໂຍບາຍ ເປີດ ໂອກາດໃຫ້ແກ່ທຸກໆປະເທດມີສິດທິກ່ຽວຂ້ອງນຳປະເທດຈີນນັ້ນຄືໃຫ້ສິດທິເທົ່າທຽມກັນຫມົດທຸກໆປະເທດໃນດ້ານການຄ້າຂາຍ (ຮ່ວມທັງອັດຕຣາສເມີກັນ, ເສັຍຄ່າທ່າເຣືອເທົ່າກັນ, ແລະຄ່າຣົຖໄຟເທົ່າກັນ) ຢູ່ໃນເຂດແດນທີ່ເຂົາເຈົ້າຄອບຄອງ.

ໃນປີ ຈຈ໐໐, ຊາວຈີນ ໄດ້ພາກັນລຸກຂຶ້ນ ຕໍ້ຕ້ານຊາວຕ່າງດ້າວ. ໃນເດືອນມິຖຸນາ, ຊາວຈີນຂະບົດຄນະນຶ່ງໄດ້ຍຶດເມືອງເປປິງ (ຄືນະຄອນປັກກິ່ງປັດຈຸບັນນີ້) ແລະໄດ້ລ້ອມຕົວແທນຕ່າງໆຂອງຊາວຕ່າງດ້າວໄວ້ ເມື່ອເປັນເຊັ່ນນັ້ນ, ທ່ານເຣຈຶ່ງໄດ້ປະກາດ ໃນທັນໃດວ່າສະຫະຣັຖຈະຄັດຄ້ານການຣົບກວນໃດໆໃນເຂດແດນຈີນຫລີລັດທິ ໃນການປົກຄອງຂອງນະໂຍບາຍ "ເປີດປະຕູ". ເມື່ອພວກ

ຂະບົດຖືກປາບປາມລົງແລ້ວ, ເຂົາເຈົ້າຈະຕ້ອງ ມີຄວາມອຸຳນາມ ພຽງພໍໃນການດຳເນີນການຕາມໂຄງການຂອງຊາວອະເມຣິກັນແລະ ຈະຕ້ອງປ້ອງກັນບໍ່ໃຫ້ເສັຍຜົນປະໂຍດຂອງຈີນ. ດັ່ງນັ້ນ ໃນເດືອນ ຕຸລາ, ປະເທດອັງກິດແລະເຢີຣະມັນຈຶ່ງໄດ້ແຈ້ງຈຸດປະສົງຂອງເຂົາ ເຈົ້າໃນການຮັກສາມະໂຍບາຍ "ເປີດປະຕູ" ແລະຮັກສາເອກຣາຊ ຂອງປະເທດຈີນໄວ້, ແລະປະເທດອື່ນໆກໍໄດ້ເຮັດຕາມກັນມາ.

ໃນຂນະດຽວກັນນັ້ນ, ການເລືອກຕັ້ງປະທານາທິບໍດີ ໃນປີ ໑໙໐໐, ໄດ້ໃຫ້ໂອກາດຊາວອະເມຣິກັນຕັດສິນ ຫລືລົງຄວາມເຫັນ ກ່ຽວກັບຣັຖບານ ຂອງທ່ານແມກຄິນລີ, ໂດຍສະເພາະແມ່ນນະໂຍ ບາຍຕ່າງປະເທດຂອງທ່ານ. ໃນທີ່ປະຊຸມຢູ່ເມືອງຟີລາເດັລເຟັຍ, ພັກຣິພັບລີແຄນໄດ້ສະແດງຄວາມຍິນດີຢ່າງລົ້ນເຫລືອໃນໄຊຊນະຈາກ ການທຳສົງຄາມ ກັບສະເປັນເທື່ອນີ້, ໃນການຮັກສາຄວາມມັ່ງມີ, ແລະຄວາມພຍາຍາມ ໃນການຊອກຫາຕລາດການຄ້າໃໝ່ໂດຍຜ່ານ ທາງນະໂຍບາຍ "ການເປີດປະຕູ". ໃນການເລືອກຕັ້ງຂອງທ່ານ ແມກຄິນລີຄັ້ງນີ້, ມີທ່ານມີໂອດໍຣຸສແວລເປັນຄູ່ຮ່ວມງານ, ແລະໃນທີ່ ສຸດ ພວກທ່ານທັງສອງ ກໍໄດ້ຮັບໄຊຊນະ. ແຕ່ເປັນຫນ້າເສັຍໃຈທີ່ ທ່ານປະທານາທິບໍດີ ບໍ່ໄດ້ມີຊີວິດຢູ່ນຳນານ ພໍທີ່ຈະຊຶມຊຶມຍິນດີກັບໄຊ ຊນະຂອງທ່ານໃນຄັ້ງນີ້. ໃນເດືອນກັນຍາ ປີ ໑໙໐໑, ໃນຂນະທີ່ ທ່ານແມກຄິນລີ ໄປເຖິງງານສະແດງທີ່ເມືອງປັຟຟາໂລ ໃນຣັຖນິວ

ຢອກນັ້ນ, ທ່ານໄດ້ຖືກຄົນຮ້າຍລອບສັງຫານຈົນເຖິງແກ່ຄວາມຕາຍ. ການຕາຍຂອງທ່ານແມກຄິນລີເທ໊ອນ ໄດ້ພາໃຫ້ທ່ານທີໂອດໍ້ກ້າວໄປສູ່ຕຳແໜ່ງປະທານາທິບໍດີຕາມຣະບຽບ.

## ຍຸກແຫ່ງການວິພາກວິຈານຂອງສັງຄົມ

ໃນກິຈການພາຍໃນປະເທດກໍເໝືອນກັນກັບກິຈການນອກປະເທດ, ການຍອມເຂົ້າເປັນສະມາຊິກ ແຫ່ງພາຄີສັນຍາຂອງທ່ານຣຸສແວລກໍບັງເອີນຕົງກັນກັບຍຸກໃໝ່ ຂອງຊີວິດການເມືອງຂອງອາວອະເມຣິກັນ. ໃນຕົ້ນສັຕວັດໃໝ່ນີ້, ອະເມຣິກາສາມາດທຽບເບິ່ງຄວາມກ້າວໜ້າ ຂອງສາມຊົ່ວຄົນທີ່ຜ່ານມາ. ທະວີບນີ້ເຕັມແໜ້ນໄປດ້ວຍຜູ້ຄົນ, ແຕ່ເຂດຊາຍແດນໄດ້ສລາຍຕົວໜົດ ເນື່ອງຈາກການບຸກເບີກຂອງສາທາຣະນະຣັຖນ້ອຍໆ ຊຶ່ງຖືວ່າຂົ່ມຂູ່ທຸກໆດ້ານຈົນປະເທດນີ້ ໄດ້ກ້າວໜ້າໄປເຖິງຂັ້ນເປັນປະເທດມະຫາອຳນາດຂອງໂລກ. ພື້ນຖານການເມືອງຂອງປະເທດນີ້ໄດ້ທົນທານຕໍ່ຄວາມປ່ຽນແປງຢູ່ເລື້ອຍໆ ເນື່ອງຈາກສົງຄາມກາງເມືອງ, ສົງຄາມກັບຕ່າງປະເທດ ແລະຄວາມບໍ່ທ່ຽງຕົງຂອງຄວາມມັ່ງມີແລະຄວາມທຸກຍາກ ສ່ວນດ້ານກະສິກັມແລະອຸດສາຫະກັມກໍປາກົດວ່າ ມີຄວາມກ້າວໜ້າຢ່າງຫລວງຫລາຍ ແລະອຸດົມການ ຂອງການສຶກສາ ສາທາຣະນະແບບເສຣີ ແລະອຸດົມການຂອງການມີເສຣີພາບໃນການນັບຖືສາສນາ

ຂອງສ່ວນບຸກຄົນ ກໍໄດ້ຖືກຟື້ນຟູຂຶ້ນ. ແຕ່ຊາວອະເມຣິກັນບໍ່ໄດ້ພຶ່ງພໍໃຈໃນຣະບົບສັງຄົມ, ເສຖກິດ, ແລະຖານະທາງການເມືອງຂອງເຂົາເຈົ້າເລີຍ, ຍ້ອນວ່າ ອົງການທຸຣະກິດໃຫຍ່ ໃນປັດຈຸບັນນີ້ເຂັ້ມແຂງດີ ແລະກິຈການກ້າວໜ້າດີກວ່າແຕ່ໃດໆມາ. ຣັຖບານທ້ອງຖິ່ນ ແລະຣັຖບານມັກຕິກຢູ່ໃນກຳມືຂອງນັກການເມືອງ ທີ່ສ້ຣາຊຸບັງຫລວງເລື້ອຍໆແລະຈິດໃຈອັນນຶກເຖິງແຕ່ຄວາມວັດຖຸນັ້ນສິບເມື່ອງ ກັນໄປໃນທຸກໆສັງຄົມຢູ່ເລື້ອຍໆ.

ຊາວອະເມຣິກັນໄດ້ຕໍ່ຕ້ານສິ່ງທີ່ຊົ່ວຮ້າຍເຫລົ່ານີ້ ຢ່າງສຸດໃຈ ຈົນໄດ້ນຳພາໃຫ້ການເມືອງຂອງອະເມຣິກັນ ມີລັກສນະແຕກຕ່າງກັນ ຈາກປີ ໑໙໓໐ ຫາສໄມສົງຄາມໂລກຄັ້ງທີ່ໜຶ່ງ. ຕັ້ງແຕ່ສໄມເລີ້ມຕົ້ນພຸ້ນມາ ກໍໄດ້ມີການປະຕິວັດໃນດ້ານອຸດສາຫະກັມ ຄືຊາວໄຮ່ຊາວນາໄດ້ຕໍ່ສູ້ເສີກເພື່ອຕໍ່ຕ້ານການຖືບຕົວຂຶ້ນຂອງຜູ້ມີອິດທິພົນໃນດ້ານອຸດສາຫະກັມ. ເມື່ອກ້າວເຖິງສໄມປີ ໑໙໔໐ ແລ້ວ ຜູ້ທີ່ຈັດໃຫ້ມີການດັດແປງໄດ້ວິພາກວິຈານຢ່າງໜັກໜ່ວງ ຕໍ່ຣະບົບການອຸ້ມຊູຂອງນັກການເມືອງ ຊຶ່ງສນັບສນູນຫາໜ້າທີ່ການດີໃນວົງການຣັຖບານໃຫ້ແກ່ພວກທີ່ສນັບສນູນເຂົາເຈົ້າ. ຫລັງຈາກການຕໍ່ສູ້ໃນຣະຍະສາມສິບປີ ຜູ້ທີ່ຢາກໃຫ້ມີການດັດແປງໄດ້ບັນລຸຜົນສຳເຣັດໃນການອອກກົດໝາຍຂອງປີ ໑໙໓໓ ກ່ຽວກັບສິດທິຂອງພົລເມືອງ. ກົດໝາຍນີ້ໄດ້ຕັ້ງຂຶ້ນມາເພື່ອເປັນຄ່ຳບຳເນັດໃຫ້ແກ່ຜູ້ທີ່ຣັບໃຊ້ໃນຣາຊການທີ່ດີແລະໄດ້

ສະແດງເຖິງການເລີ້ມຕົ້ນ ຂອງການປ່ຽນແປງ ທາງການເມືອງ. ພວກກັມມະກອນໃນໂຮງງານອຸດສາຫະກັມກໍໄດ້ຄັດຄ້ານເຣື່ອງຄວາມອະຍຸຕິທັມຕ່າງໆ. ກ່ອນອື່ນ, ເຂົາເຈົ້າໄດ້ທ້ອນໂຮມກັນ ເພື່ອໃຫ້ຄວາມຄູ້ມກັນແກ່ເຂົາເຈົ້າ ໃນດ້ານການງານ ໂດຍຜ່ານທາງຊັ້ນຂຸນນາງ ແລະສະມາຄົມນີ້ ໄດ້ຕັ້ງຂຶ້ນໃນປີ ຈຊຝຈ, ໂດຍມີສະມາຊິກເພີ້ມຂຶ້ນຮອດເຈັດແສນກວ່າຄົນ ແລະເປັນທີ້ຮູ້ຈັກດີ ແກ່ຄົນທົ່ວໄປ. ສະມາຄົມນີ້ໄດ້ຕັ້ງຂຶ້ນແລະຕໍ່ມາໄດ້ປ່ຽນມາເປັນສຫະພັນກົມແຮງງານຊາວອະເມຣິກັນ, ຊຶ່ງເປັນການປະສົມຂອງການຝີມືແລະການອຸດສາຫະກັມ. ຕົກມາໃນປີ ຈຈວວ, ແຮງງານເປັນສິ່ງຈຳເປັນ ໃນອະເມຣິກາ ແລະບໍ່ມີຣັຖບຸຮຸດຄົນໃດຈະສາມາດເບິ່ງຂ້ານຄວາມສຳຄັນນີ້ໄປໄດ້.

ທຸກໆຄົນໃນສໄມນັ້ນມີສ່ວນກ່ຽວຂ້ອງກັນໃນການດັດແປງໃຫມ່ຂອງຣັຖບານທັງຫມົດ, ຈະແມ່ນໃນດ້ານການເມືອງ, ປຣັຊຍາ, ການສຶກສາ ຫລືວັນນະຄະດີກໍຕາມ. ວິຣະບຸຮຸດຂອງສໄມນັ້ນແມ່ນຜູ້ທີ່ຈັດໃຫ້ມີການປ່ຽນແປງຕາມຄວາມຕ້ອງການຂອງກາລະເວລານັ້ນ. ສຳລັບພາກປະຕິບັດແລະຫລັກການຊຶ່ງສືບເນື່ອງມາຈາກສໄມສັຕວັດທີ ສິບແປດນັ້ນໄດ້ສະແດງໃຫ້ເຫັນວ່າ ພຽງພໍກັບສະພາບການຂອງຣັຖ ແລະເມືອງຕ່າງໆໃນສັຕວັດທີຊາວນີ້. ຄວາມປັ່ນປ່ວນ ຊຶ່ງເຮັດໃຫ້ຊາວອະເມຣິກັນຢູ່ໃນຂັ້ນຂອງສໄມແຫ່ງການອຸດສາຫະກັມແມ່ນເນື່ອງ

ມາຈາກຄວາມນ້ອຍເນື້ອຕ່ຳໃຈແລະການທີ້ຕ້ອງອາໃສຊຶ່ງກັນແລະກັນ ໃນສັງຄົມການຂຍາຍຄວາມຮັບຜິດຊອບຂອງສ່ວນຕົວ ກໍມີຫລາຍຂຶ້ນ ໂດຍຜ່ານທາງການຄ້າຂອງບໍຣິສັດໃຫຍ່ເພື່ອປ່ຽນແປງສະພາບການນີ້ ໂດຍມີນັກຂຽນຫນູ່ມນ້ອຍຄນະນຶ່ງ ໄດ້ສະແດງລວດລາຍຝີມື ໃນການ ຂຽນຂອງເຂົາເຈົ້າ. ໃນຫນັງສືພິມ ແລະນິຕຍະສານທີ່ນຳຫນ້າຫມູ່ ນັກປະພັນໄດ້ຂຽນເຣື່ອງໄປໃນທາງທີ່ຈູງໃຈປະຊາຊົນແລະປັດຈຸບັນນີ້ ການປ່ຽນແປງ ກໍ່ໄດ້ນຳເອົາມາປະຕິບັດ ໂດຍຜູ້ດັດແປງທາງການ ເມືອງ ຊຶ່ງຮ່ວມທັງປະທານາທິບໍດີຄົນໃຫມ່ຂອງສະຫະຮັຖດ້ວຍ. ໃນ ສໄມທີ່ມີການປ່ຽນແປງ ຂນານໃຫຍ່ນັ້ນ, ແມ່ນເລີ້ມຈາກ ປີ ຈພວ໐ ຫາປີ ຈພວຊ ແລະໃນປີ ຈຊກມ, ທ່ານມາກທ່ເວັນໄດ້ບັນລະຍາຍ ສະພາບຂອງສັງຄົມ ອະເມຣິກັນ ຢ່າງຖີ້ຖ້ວນ ໃນເຣື່ອງ "ເດີກິລ ເອດຊ່" ຂອງເຂົາ. ຕໍ່ມາ ບົດຄວາມທີ້ຂ້ອນຂ້າງ ຈະຮູນແຮງກໍ່ ເລີ້ມປາກົດອອກມາສູ່ສາຍຕາ ປະຊາຊົນ ໃນນິຕຍະສານ "ແມກ ຄລຽວ", "ເອເວີຣິບໍດີສ່" ແລະ "ໂຄລີເອີສ່" ໃນຫົວຂໍ້ ເຣື່ອງ: ບໍຣິສັດໃຫຍ່, ການຄັງ, ອາຫານທີ່ບໍ່ບໍຣິສຸດ, ແລະທາງ ຣົຖໄຟ. ທ່ານອັບຕັນຊິນຄແລ, ນັກປະພັນອີກຄົນນຶ່ງທີ່ໄດ້ຂຽນເອົາ ເຣື່ອງຈິງໄປແອບອີງໃສ່ນະວະນິຍາຍແລະເຣື່ອງທີ່ເຂົາຂຽນຂຶ້ນນີ້ມີຊຶ່ ວ່າ "ເດີຈັງເກີລ" ຫລື ປ່າ. ເນື້ອເຣື່ອງໃນນີ້, ເຂົາໄດ້ບັນ ລະຍາຍເຖິງສະພາບການ ອັນສົກກະປົກ ຂອງເມືອງຊິຄາໂກ ຊຶ່ງມີ

ເຮືອນຊານຢູ່ຢ່າງຫນາແຫນ້ນ ແລະແອອັດ ແລະໄດ້ເລົ່າເຖິງເຮື່ອງ ບໍຣິສັດຮັບເຫມົາຄ້າຊົ້ນຊຶ່ງຈຳນາຍຊົ້ນສັດໃຫ້ທົ່ວທຸກມູນເມືອງ ໃນປະ ເທດ ທີໂອດໍ ເຄຼເຊີ ໄດ້ຂຽນເຮື່ອງ "ເດີຟາຍແນນຊີເອີ" ແລະ "ເດີໄທແທນ" ຊຶ່ງທັງສອງເຮື່ອງນີ້ເປັນເຮື່ອງທີ່ບໍ່ເຂົ້າໃຈໄດ້ງ່າຍ ກ່ຽວກັບການຄິດກົນອຸບາຍຂອງທຸຣະກິດໃຫຍ່. ແຟຣງນໍຣິສໄດ້ຂຽນ ເຮື່ອງ "ເດີພິດ" ຊຶ່ງຊີ້ແຈງເຖິງການຄັດຄ້ານກ່ຽວກັບການແບ່ງ ປັນທີ່ດິນ ໄຮ່ນາ. ທ່ານລິງຄອນ ສເຕັຟເຟັນ ໄດ້ຂຽນເຮື່ອງ "ຄວາມອັບອາຍຂາຍຫນ້າຂອງເມືອງ" ຊຶ່ງເນື້ອເຮື່ອງໃນນີ້ໄດ້ແນ ໃສ່ການສໍ້ຣາຊບັງຫລວງ ຂອງພັກການເມືອງ. ການສະແດງອອກ ທາງວັນນະຄະດີ ໃນທຳນອງນີ້ມີສ່ວນຊ່ວຍກະຕູ້ນເຕືອນປະຊາຊົນໃຫ້ ຕື່ນຕົວທັນທີ.

## ການດັດແປງໃຫ້ດີຂຶ້ນເພື່ອຊ່ວຍປະຊາຊົນທົ່ວໄປ

ການສະແດງຄວາມນຶກຄິດຕ່າງໆອອກມາ ໃນຮູບວັນນະຄະດີ ຂອງນັກປະພັນເຫລົ່ານີ້ໄດ້ພາໃຫ້ຜູ້ນຳຝ່າຍການເມືອງເລີ້ມມີບົດບາດ ເອົາການເອົາງານຂຶ້ນຢ່າງແທ້ຈິງ ແລະມີຫລາຍໆຣັຖໄດ້ເລີ້ມອອກ ກົດຫມາຍເພື່ອປັບປຸງສະພາບການເປັນຢູ່ ແລະການງານຂອງປະຊາ ຊົນໃຫ້ດີຂຶ້ນ. ເວົ້າຕາມຄວາມເປັນຈິງແລ້ວ, ການອອກກົດຫມາຍ ກ່ຽວກັບການສັງຄົມຂອງຍຸກນີ້ແມ່ນເທື່ອທຳອິດໃນຣະຍະສິບຫ້າປີຂອງ

ສັຕຈັດນີ້. ກົດໝາຍວ່າດ້ວຍລ້ຳຈ້ຳງແຮງງານເດັກນ້ອຍ ໄດ້ເພີ່ມ
ຄວາມເຄັ່ງຄັດຂຶ້ນ ແລະໄດ້ວາງຂອບເຂດໂດຍຈຳກັດອາຍຸ, ຄັດເວ
ລາໃຫ້ສັ້ນເຂົ້າ, ຫ້ານບໍ່ໃຫ້ເດັກນ້ອຍເຮັດການຍາມກາງຄືນ, ແລະ
ບັງຄັບໃຫ້ເດັກນ້ອຍຕ້ອງເຂົ້າໂຮງຮຽນ. ຈົນເຖິງເວລານີ້, ຕາມ
ຫົວເມືອງໃຫຍ່ ແລະເກືອບເຄິ່ງນຶ່ງຂອງຣັຖທັ້ງໝົດ ໄດ້ຈັດຣະບຽບ
ຂອງການເຮັດວຽກ ມີນຶ່ງແປດຊົ່ວໂມງ. ໃນການງານທີ່ສ່ຽງຕໍ່ໄພ
ນັ້ນ, ມີເຮັດການນັ້ນຕ້ອງເຮັດຕາມຣະບຽບຂອງຣັຖສະພາທີ່ວາງໄວ້
ສິ່ງສຳຄັນກວ່ານັ້ນກໍຄື ການອອກກົດໝາຍເພື່ອໃຫ້ຄວາມຄຸ້ມກັນແກ່
ສຸຂພາບຂອງຄົນງານຄື ຖ້າຄົນງານຄົນໃດໄດ້ຮັບບາດເຈັບໃນຂນະທີ່
ປະຕິບັດງານຢູ່ນັ້ນ, ນາຍຈ້າງຈະຕ້ອງຮັບຜິດຊອບໃນການປິ່ນປົວຄົນ
ງານທຸກຢ່າງ. ກົດໝາຍໃໝ່ກ່ຽວກັບການເກັບພາສີລາຍໄດ້ກໍໄດ້
ປາກົດອອກມາ ຊຶ່ງກົດໝາຍດັ່ງກ່າວນີ້ແມ່ນການເກັບພາສີຈາກຊັບ
ສົມມໍຣະດົກ, ຈາກຣາຍໄດ້, ແລະຈາກຊັບສົມຂອງຫ້າງຮ້ານບໍຣິສັດ
ເພື່ອໃຫ້ຣັຖບານໄດ້ເອົາກົດໝາຍນີ້ອອກມາໃຊ້.

ບາດກ້າວດັ່ງກ່າວນີ້ ເປັນຫ້າສັນຣະເສີນຫລາຍ, ເນື່ອງ
ຈາກວ່າ ເປັນທີ່ເຫັນກັນຢ່າງແຈ່ມແຈ້ງແລ້ວວ່າ ບັນຫາທີ່ທາງຄນະ
ກັມມະການກຳລັງແກ້ໄຂຢູ່ນັ້ນຈະແກ້ບໍ່ຕົກຈົນກວ່າໝົດທຸກຄົນໃນຊາດ
ເຂົ້າໃຈແລະພ້ອມທີ່ຈະໃຫ້ຄວາມຮ່ວມມືຢ່າງແທ້ຈິງ ແລະເປັນທີ່ເຫັນ
ແຈ້ງແລ້ວວ່າ ທ່ານປະທານາທິບໍດີຣູສເວລ໌ເອງກໍສົນໃຈ ແລະຢາກ

ໃຫ້ມີການດັດແປງໃຫມ່ໃຫ້ດີຂຶ້ນ. ໃນເວລາດຽວກັນນັ້ນ, ທ່ານທຸສ
ແວລຕ໌ເປັນຫົວຜູ້ປະຕິບັດໃຫ້ຖືກຕ້ອງໃນດ້ານການເມືອງຕາມສະພາບ
ທີ່ເປັນຈິງ ແລະເປັນຜູ້ຮັກຊາດຢ່າງແຮງກ້າ ແລະເປັນສະມາຊິກ
ຂອງພັກຣີພັບລີແຄນ ຜູ້ຊື່ສັດຄົນນຶ່ງອີກດ້ວຍ. ໃນຄວາມນຶກຄິດຂອງ
ທ່ານເຈຟເຟີຊັນແລ້ວ, ທ່ານທຸສແວລຕ໌ໄດ້ເປັນປະທານາທິບໍດີ ທີ່ສາ
ມາດເຮັດໄດ້ຫມົດທຸກສິ່ງທຸກຢ່າງ ເພາະແຕ່ກ່ອນນັ້ນ ທ່ານເຄີຍເປັນ
ເຈົ້າຂອງຄອກສັດລ້ຽງແລະຕໍ່ມາ ກໍໄດ້ເປັນເຈົ້າແຂວງ ຊຶ່ງທ່ານໄດ້
ມີປະສົບການຢ່າງຫລວງຫລາຍໃນດ້ານການງານ ແລະໃນການຂຽນ
ປຶ້ມຫລາຍຫົວ, ໄດ້ຮັບໃຊ້ໃນຣັຖສະພາທີ່ນິວຢອກ, ໄດ້ເປັນຜູ້ບັງຄັບ
ບັນຊາຕຳຣວດ ໃນເມືອງນິວຢອກ, ໄດ້ເປັນຜູ້ດູແລນຳກອງທັບເຮືອ
ແລະໄດ້ຮ່ວມຕໍ່ສູ້ ໃນຄິວບາ. ທ່ານເປັນນັກອ່ານຫນັງສືທຸກປະເພດ
ແລະມີຄວາມຄິດ ກ່ຽວກັບທຸກສິ່ງທຸກຢ່າງສເມີ. ທ່ານມີ ຄຸນສົມບັດ
ເທົ່າທຽມກັນກັບທ່ານແອນດຣູແຈກສັນ ຊຶ່ງສາມາດຊນະຈິດໃຈປະຊາ
ຊົນໄດ້ ແລະໄດ້ເຮັດໃຫ້ການສູ້ຣົບທຸກໆເທື່ອຂອງທ່ານເປັນທີ່ຫນ້າຕື່ນ
ເຕັ້ນສເມີໄປ. ໃນຣະຍະປີນຶ່ງ, ທ່ານໄດ້ສະແດງ ໃຫ້ປະຊາຊົນ
ເຫັນວ່າ ທ່ານມີຄວາມເຂົ້າໃຈອັນດີ ກ່ຽວກັບການປ່ຽນແປງຄັ້ງໃຫຍ່
ໃນອະເມຣິກາ ໂດຍໄດ້ພຍາຍາມທີ່ສຸດທີ່ຈະເຮັດໃຫ້ການປ່ຽນແປງນີ້
ເປັນຜົນດີແກ່ປະຊາຊົນ. ໃນການຄັດຄ້ານກົດຫມາຍ ວ່າດ້ວຍການ
ຄ້າຜູກຂາດຂອງບັນດາພໍ່ຄ້ານັ້ນ ທ່ານທຸສແວລຕ໌ໄດ້ສເມີນະໂຍບາຍ

ໃຫ້ຣັຖບານຄວບຄຸມກິຈການດ້ານການເງິນຢ່າງໃກ້ຊິດ ແລະການຂຍາຍ
ການຄວບຄຸມໃນກິຈການທາງຣົຖໄຟນີ້, ເປັນຄວາມບັນລຸຜົນຢ່າງນຶ່ງ
ໃນຣັຖບານຂອງທ່ານ. ແມ່ນແຕ່ທ່ານເອງ, ທ່ານກໍຍັງຮ້ອງ ຣະ
ບຽບການເດີມຣົຖໄຟນີ້ວ່າ ເປັນຜົນງານອັນຍອດຢ້ຽມ, ແລະຮ່າງ
ກົດໝາຍສອງສບັບກໍໄດ້ຜ່ານສະພາໄປແລ້ວ. ໃນປີ ໑໙໐໓, ກົດ
ໝາຍ (ເອລຄິນສ໌ ແອກທ໌) ວ່າດ້ວຍມາຕຖານຂອງຣາຄາການພົມ
ກໍໄດ້ຖືກຮັບຮອງເອົາແລ້ວ ແລະນອກນີ້ຍັງໄດ້ວາງອັດຕຣາໃຫ້ຄ່າຂົນ
ສົ່ງທາງເຮືອແລະທາງຣົຖໄຟເທົ່າທຽມກັນ ແລະໂດຍອ້າງເຖິງຂໍ້ກຳ
ໜົດເຫລົ່ານີ້, ຣັຖບານຈຶ່ງສາມາດຟ້ອງຮ້ອງບໍຣິສັດ ທີ່ລະເມີດຕໍ່ກົດ
ຣະບຽບໄດ້ຢ່າງສຳເຣັດຜົນ. ຕໍ່ມາ, ສະພາກົງແກຣສ ໄດ້ຕັ້ງກະ
ຊວງການຄ້າແລະແຮງງານຂຶ້ນ ແລະໄດ້ເລືອກເອົາສະມາຊິກຄົນນຶ່ງ
ໃນວົງການຣັຖບານໃຫ້ວ່າໜ້າທີ່ນີ້. ກະຊວງດ້ານນີ້, ມີໜ້າທີ່
ກວດສອບກິຈການຂອງບໍຣິສັດໃຫຍ່ ທີ່ຮ່ວມກັນເປັນກຸ່ມເປັນກ້ອນແລະ
ໃນປີ ໑໙໐ກ, ຣັຖບານໄດ້ຄົ້ນພົບວ່າ ບໍຣິສັດເຣັດນ້ຳຕານອະເມຣິ
ກັນໄດ້ລັກລອບເອົາຂອງເຂົ້າມາໃນປະເທດຢ່າງຫລວງຫລາຍ ໂດຍ
ບໍ່ໄດ້ເສັຍພາສີອາກອນໃດໆທັງໝົດ. ຜົນຕາມມາ ກໍຄືຣັຖບານໄດ້
ຈັດການຕາມກົດໝາຍກັບບໍຣິສັດດ້ານນີ້ ໂດຍບໍຣິສັດຕ້ອງຈ່າຍໃຫ້
ຫລວງເປັນເງິນຈຳນວນເຖິງສີ່ລ້ານໂດລາ ແລະທຳໂທດເຈົ້າໜ້າທີ່
ຂອງບໍຣິສັດຕ່າງໆ ດ້ວຍ. ໃນປີດຽວກັນນັ້ນ, ບໍຣິສັດນ້ຳມັນເຊື

ເພິ່ງສະແຕມດາດຢູ່ເມືອງອິນດຽນນາໄດ້ຖືກຟ້ອງໃນຂໍ້ຫາວ່າ ໄດ້ຮັບ ເງິນສ່ວນຮັຖເປັນທາງລັບ ຈາກການຂົນເຄື່ອງໄປທາງຣົຖໄຟເມືອງ ຊິກາໂກແລະອາລຕັນ. ເນື່ອງຈາກການກວດຂັນເຊັ່ນນີ້, ຣັຖບານ ສາມາດຫາເງິນລາຍໄດ້ຈາກພາສີອາກອນເພີ້ມຂຶ້ນເປັນ ๘๓,๘๔๐, ๐๐๐ ໂດລາ.

ໃນປີ ๑๙๐๔ ທ່ານຣູສເວລຕ໌ ໄດ້ກາຍເປັນທີ່ເຄົາຣົບນັບຖືຜູ້ ນຶ່ງໃນພັກຣີພັບລີແຄນ ແລະບຸກຄົກລັກສນະໃນການຕໍ້ຕ້ານການຮ່ວມ ກຸ່ມຂອງບໍຣິສັດໃຫຍ່ໆຂອງທ່ານຣູສເວລຕ໌ໄດ້ດຶງດູດຄວາມສົນໃຈຂອງ ຄົນຍ່າງຕາມຖນົນຫົນທາງໄດ້ດີ, ແມ່ນແຕ່ພັກເດໂມແຄຣຕເອງກໍຍັງ ໃຫ້ການສນັບສນຸນ ແກ່ທ່ານຣູສເວລຕ໌ຫລາຍກວ່າສະມາຊິກທີ່ສັງກັດຢູ່ ພັກດຽວກັນ. ຄວາມນິ່ງນີ້ຂອງປະເທດ ແມ່ນອົດທົນອົກແນວນຶ່ງທີ່ ຊ່ວຍໃຫ້ພັກຣີພັບລີແຄນ ໄດ້ຮັບໄຊຊນະ ໃນການເລືອກຕັ້ງ ຂອງປີ ๑๙๐๔. ໄຊຊນະຄັ້ງນີ້ໄດ້ເຮັດໃຫ້ທ່ານຣູສເວລຕ໌ກ້າຫານຂຶ້ນ ແລະ ທ່ານປະທານາທິບໍດີໄດ້ເຂົ້າຄອງຕຳແໜ່ງອີກເທື່ອນຶ່ງ ພ້ອມທັງໄດ້ ເລັ່ງລັດການດັດແປງແກ້ໄຂໃຫ້ດີຂຶ້ນ. ໃນການກ່າວຄຳປາໃສ ປະ ຈຳປີ, ທ່ານຣູສເວລຕ໌ໄດ້ຮຽກຮ້ອງ ໃຫ້ຮັກສາຣະບຽບການຂອງຣົຖ ໄຟໄວ້ໃຫ້ດີ, ແລະໃນເດືອນມິຖຸນາ ปี ๑๙๐๗, ກົດໝາຍ (ເຮບ ເບິລ ແອັກທ໌) ກໍໄດ້ຜ່ານອອກມາ ຊຶ່ງກົດໝາຍນີ້ ໄດ້ໃຫ້ສິດທິແກ່ ຄນະກັມມະການຄວບຄຸມການຄ້າຣະຫວ່າງຣັຖ ໃນການວາງອັດຕຣາ

ຢ່າງເຕັມທີ່ ແລະບັງຄັບໃຫ້ທາງການຣົຖໄຟ ຍອມປະກິຈການເດີນ ເຮືອແລະບໍຣິສັດຖ່ານຫີນ ເມື່ອສໄມການປົກຄອງຂອງທ່ານຮູສແວລຕ້ ສັ້ນສຸດລົງແລ້ວ, ການຮັບເງີນສ່ວນຮັຖຕ່າງໆກໍໄດ້ຫາຍຕົວຫມົດແລະ ຫລັກການຂອງທາງການຣົຖໄຟ ກໍໄດ້ອອກມາໃຊ້ເປັນຫລັກການທີ່ບຸກ ຄົນທົ່ວໄປຍອມຮັບແລະນັບຖືເອົາ.

ບົດບາດຢ່າງອື່ນ ຂອງສະພາກົງແກຣສ ຍັງໄກອອກໄປກວ່າ ຫລັກການ ການຄວບຄູມຂອງຮັຖບານອີກ. ເພື່ອຕອບສນອງ ຜູ້ທີ່ ສນັບສນູນໃຫ້ມີການດັດແປງໃຫ້ດີຂຶ້ນນີ້, ກົດຫມາຍກ່ຽວກັບອາຫານ ໃນປີ ຈພວພ ໄດ້ຫ້ານບໍ່ໃຫ້ໃຊ້ຢາຊຶ່ງເປັນອັນຕລາຍ, ຜົງເຄມີຫລື ຢາທີ່ເກັບອາຫານດອງໄວ້ດົນ, ໃນການປຸງຢາປົວພະຍາດ ຫລືອາ ຫານ. ເຣື່ອງນີ້ໄດ້ເປັນກົດຫມາຍບັງຄັບອອກມາ ເພື່ອໃຫ້ຣັຖບານ ກວດສອບແລະດູແລຢ່າງໃກ້ຊິດໃນການຄ້າຂາຍເນື້ອສັດໃນຣັຖຕ່າງໆ

ห้ามจำหน่าย

<u>ການກະທຳຂອງທ່ານຮູສແວລຕ້ເປັນການປະຫຍັດຊັພຍາກອນໄວ້</u>

ຜົນສຳເຣັດທີ່ສຳຄັນທີ່ສຸດໃນຣັຖບານຂອງທ່ານຮູສແວລຕ້ນັ້ນກໍ ຄື ການສງວນຊັພຍາກອນທັມມະຊາດຂອງປະເທດຊາດໄວ້ ການນຳ ເອົາຊັພຍາກອນທັມມະຊາດໄປໃຊ້ໃນທາງສ່ວນຕົວຫລືການໃຊ້ຊັພຍາ ກອນຢ່າງຟູມເຟືອຍນັ້ນ ໄດ້ຖືກສັ່ງຫ້ານທັນທີ, ແລະໄດ້ໃຫ້ໃຊ້ທີ່ດິນ ສ່ວນໃຫຍ່ນັ້ນ ໃນທາງທີ່ເປັນປະໂຍດ. ໃນປີ ຈພວຈ ໃນການ

ກ່າວຄຳປາໃສ ຕໍ່ສະພາກິງແກຣສ ຂອງທ່ານຣຸສແວລ໌ນັ້ນ ມີເນື້ອ ຄວາມວ່າ ບັນຫາການປ່າໄມ້ແລະນ້ຳເປັນບັນຫາໃຫຍ່ພາຍໃນສະຫະ ຣັຖ ແລະທ່ານໄດ້ຮຽກຮ້ອງຕໍ່ສະພາ ໃຫ້ວາງແຜນການເກັບນ້ຳໄວ້ ແລະການຊົລປະທານ. ຜູ້ທີ່ດຳຣົງຕຳແໜ່ງ ປະທານາທິບໍດີ ກ່ອນ ທ່ານນັ້ນໄດ້ຈົ່ງທີ່ດິນໄວ້ ๔๗,๐๐๐,๐๐๐ ເອເກີ ເພື່ອຮັກສາເອົາ ໄວ້ໃຫ້ເປັນປ່າໄມ້, ດັ່ງນັ້ນ ທ່ານຣຸສແວລ໌ ຈຶ່ງໄດ້ເພີ່ມທີ່ດິນຂຶ້ນອີກ ໃຫ້ເປັນ ๑๔๕,๐๐๐,๐๐๐ ເອເກີ ແລະໄດ້ພຍາຍາມປ້ອງກັນ ບໍ່ ໃຫ້ໄຟໄໝ້ປ່າ, ແລະໄດ້ປູກຕົ້ນໄມ້ຂຶ້ນເພີ່ມອີກ ເພື່ອໃຫ້ຕົ້ນໄມ້ທີ່ຖືກ ຕັດໄປນັ້ນໝົດສ້ຽງໄປ. ໃນປີ ๑๙๐๗, ທ່ານຣຸສແວລ໌ ໄດ້ຕັ້ງ ຄນະກັມມະການນຶ່ງຂຶ້ນ ເພື່ອກຳກິຈການທາງແມ່ນ້ຳ, ທາງພາກພື້ນ ດິນ (ແມ່ນ້ຳຫ້ວຍພາຍໃນປະເທດບໍ່ແມ່ນທະເລ), ປ່າໄມ້, ການ ຂຍາຍກຳລັງໄຟຟ້າ, ແລະການຄົມມະນາຄົມທາງນ້ຳ. ຄນະກັມ ການນີ້ໄດ້ເຣັດຂໍ້ສເນີໃຫ້ມີການປະຊຸມ ເພື່ອວາງໂຄງການຂອງຊາດ ແລະໃນປີດຽວກັນນັ້ນ ທ່ານຣຸສແວລ໌ໄດ້ເຊີນພວກບັນດາເຈົ້າແຂວງ ຕ່າງໆ, ເຈົ້າໜ້າທີ່ສຳຄັນໆໃນອົງການຣັຖບານຫົວຝ່າຍການເມືອງ ແລະວິທຍາສາດ ແລະການສຶກສາ ໃຫ້ມາຮ່ວມປະຊຸມ ໃນເທື່ອນີ້. ຈຸດປະສົງຂອງການຈັດໃຫ້ມີການປະຊຸມໃຫຍ່ເທື່ອນີ້ ກໍແມ່ນແນ່ໃສ່ ຄວາມສົນໃຈຂອງປະເທດຊາດໃນບັນຫາການຮັກສາຊັພຍາກອນເອົາ ໄວ້ໃຫ້ຫລາຍທີ່ສຸດ ເທົ່າທີ່ຈະຫລາຍໄດ້. ທີ່ປະຊຸມໄດ້ຕົກລົງ ເປັນ

ເອກສັນ ແລະໄດ້ປະກາດຫລັກການອອກມາ ບໍ່ພຽງແຕ່ສ້ວມປ່າໄມ້ ແລະນ້ຳເທົ່ານັ້ນ ແຕ່ຍັງຮວມໄປເຖິງບໍ່ແຮ່ ແລະບັນຫາຂອງດິນທີ່ຖືກນ້ຳເຊາະ ແລະການຊົລປະທານອີກດ້ວຍ. ທີ່ປະຊຸມໄດ້ສເນີກ່ຽວກັບຣະບຽບການຕັດໄມ້ໃນດິນເອກຊົນ, ການປັບປຸງແມ່ນ້ຳຕ້ວຍ ໃຫ້ການຄົມມາຄົມຄ້ຽນ ແລະການເກັບສັນ ປັນນ້ຳໄວ້. ພົນຈາກການປະຊຸມເທື່ອນີ້ກໍ່ດີ, ຫລາຍໆຣັຖໄດ້ຈັດຕັ້ງຄນະກັມມະການນ້ຶງຂຶ້ນເພື່ອກຳກັບການສ້ວມຊັພຍາກອນພາຍໃນຣັຖ, ແລະໃນປີ ໑໙໐໙, ສະມາຄົມສ້ວມຊັພຍາກອນຂອງຊາດກໍໄດ້ຖືກຈັດຕັ້ງຂຶ້ນເພື່ອແຜ່ພາຍການສຶກສາທົ່ວໄປຍັງປະຊາຊົນ. ໃນປີ ໑໙໐໔ ກົດໝາຍວ່າດ້ວຍການສ້ວມສິດຂອງຊັພຍາກອນທັມຊາດກໍໄດ້ປາກົດອອກມາເພື່ອອະນຸຍາດການສ້າງເຂື່ອນແລະອ່າງຂັງນ້ຳ. ຈາກນັ້ນມາບໍ່ດົນ, ເຂດທີ່ມີດິນແດນແຫ້ງແລ້ງກໍ່ມຸ່ມຊຶ້ນແລະຊຸດົມສົມບູນໄປດ້ວຍພືລປູກ.

ເມື່ອການໂຄສະນາຫາສຽງເລືອກຕັ້ງ ໃນປີ ໑໙໐ຊ ໄດ້ໃກ້ເຂົ້າມາແລ້ວ ທ່ານຣູສເວລ໌ເປັນບຸກຄົນຊັ້ນຍອດທີ່ມີຊື່ສຽງທີ່ສຸດ ແຕ່ທ່ານຍັງລັງເລໃຈ ເພາະວ່າ ບໍ່ກ້າສ່ຽງຕໍ່ປະເພນີດ້ວຍວ່າ ແຕ່ໃດໆມາ ບໍ່ມີປະທານາທິບໍດີຄົນໃດ ດຳຣົງຕຳແໜ່ງຕລາຍກວ່າສອງຊຸດ. ດ້ວຍເຫດນີ້ ທ່ານຈຶ່ງໄດ້ສນັບສນູນທ່ານວິລລຽມໂຮເວີດແທຟ໌, ຊຶ່ງກໍໄດ້ຖືກຄັດເລືອກໃຫ້ເປັນປະທານາທິບໍດີຄົນໃໝ່. ດ້ວຍຄວາມສົນໃຈເປັນຢ່າງຍິ່ງໃນການດຳເນີນຕາມໂຄງການຂອງທ່ານຣູສເວລ໌,

ທ່ານແທຟທ໌ ຈຶ່ງໄດ້ດຳເນີນບາດກ້າວຕໍ່ໄປທັນທີ. ທ່ານໄດ້ດຳເນີນ
ນະໂຍບາຍຄວບຄຸມ ການໂຮມຂອງບໍຣິສັດໃຫຍ່ໆ ແລະໄດ້ຮັດໃຫ້
ຄນະກັມມະການການຄ້າຣະຫວ່າງຣັຖເຂັ້ມແຂງຂຶ້ນ, ໄດ້ຈັດຕັ້ງໃຫ້ມີ
ທະນາຄານອອມສິນ ແລະຣະບຽບການຝາກເຄື່ອງຂອງ, ໄດ້ຂຍາຍ
ກິຈການດ້ານສາທາຣະນະ, ແລະໄດ້ສນັບສນູນ ການເພີ່ມຕື່ມ ກົດ
ໝາຍສອງມາຕຣາໃສ່ໃນຣັຖທັມມະນູນ ມາຕຣາທີ່ສິບເຈັດໄດ້ຖືກຣັບ
ຮອງເອົາໃນປີ ໑໙໑໗ ແທນຂໍ້ບັງຄັບຂອງຣັຖທັມນູນທີ່ບົ່ງໄວ້ວ່າ ສະ
ມາຊິກສະພາສູງນັ້ນຕ້ອງແມ່ນຣັຖສະພາເປັນຜູ້ຄັດເລືອກຕັ້ງເອົາ ກໍ
ເລີຍປ່ຽນມາເປັນສະມາຊິກສະພາສູງ ນັ້ນແມ່ນປະຊາຊົນ ເປັນຜູ້ຄັດ
ເລືອກເອົາໂດຍຕົງ ແລະມາຕຣາທີ່ສິບຫົກໄດ້ອະນຸຍາດ ໃຫ້ຣັຖບານ
ເກັບພາສີຣາຍໄດ້. ຄູ່ຄຽງກັນໄປກັບຜົນສຳເຣັດເຫຼົ່ານີ້, ກໍຄືທ່ານ
ແທຟທ໌ໄດ້ຍອມຮັບເອົາອັດຕຣາການເກັບພາສີ ຊຶ່ງໄດ້ໃຫ້ຄວາມຄຸ້ມ
ກັນພໍສົມຄວນ ແລະໃນຄວາມຄິດຂອງປະຊາຊົນແລ້ວ ຖືວ່າເປັນການ
ກະທຳທີ່ຮຸນແຮງທີ່ສຸດ ໃນການທີ່ທ່ານຄັດຄ້ານການເຂົ້າຮ່ວມໃນສະຫ
ພັນຂອງຣັຖອາຣິໂຊນາ ເພາະວ່າ ຣັຖທັມມະນູນຂອງຣັຖນັ້ນການເກີນ
ໄປແລະທ່ານແທຟທ໌ຍັງເຊື່ອໝັ້ນໃນປົກຂອງພັກການເມືອງຂອງທ່ານ
ຊຶ່ງຍັງນິຍົມຕາມຣິດຄອງເດີມ.

ໃນປີ ໑໙໑໐, ພັກການເມືອງຂອງທ່ານແທຟທ໌ ໄດ້ເກີດ
ແຕກແຍກກັນ ແລະສຽງສ່ວນຫລາຍໃນສະພາກົງແກຣສ ແມ່ນພັກເດ

ໂມແລຣຕເປັນຜູ້ນຳ. ສອງປີຕໍ່ມາ ໃນສໄມການເລືອກຕັ້ງປະທາ
ນາທິບໍດີ ທ່ານວູດໂດຣ ວິລສັນ, ຜູ້ປົກຄອງຣັຖນິວເຈີຊີ, ໄດ້ໂຄສະ
ນາຄັດຄ້ານທ່ານແທຟທ໌ ຊຶ່ງເປັນສະມາຊິກ ຂອງພັກຣິພັບລີແຄນ.
ສ່ວນທ່ານຣູສເວລ໌ທ໌ຖືກທີ່ປະຊຸມໃຫຍ່ ຂອງພັກຣິພັບລີແຄນປະຕິເສດ
ບໍ່ໃຫ້ເຂົ້າສມັກ ຈຶ່ງໄດ້ຕັ້ງພັກທີສາມຂຶ້ນ ໂດຍໃສ່ຊື່ວ່າພັກກ້າວໜ້າ
ແລະໄດ້ສມັກເປັນສະມາຊິກເຂົ້າແຂ່ງຂັນໃນນາມຂອງພັກນີ້. ຈາກ
ຜົນຂອງການເລືອກຕັ້ງປາກົດວ່າ ທ່ານວິລສັນໄດ້ຊນະຊູແຂ່ງຂັນທັງ
ສອງພັກ ແລະການເລືອກຕັ້ງເທື່ອນີ້ ແມ່ນໄຊຊນະ ຂອງເສຣີນິຍົມ
ເພາະທ່ານຮູ້ດີວ່າ ຈະຕ້ອງຄອຍດັດແປງແກ້ໄຂພັກເດໂມແຄຣຕໃໝ່
ພາຍໃຕ້ການນຳຂອງທ່ານ, ສະພາກົງແກຣສໃໝ່ ໄດ້ດຳເນີນວຽກ
ການຕ່າງໆຕາມໂຄງການຂອງຣັຖສະພາ ຊຶ່ງນັບວ່າເປັນບາດກ້າວ
ສຳຄັນບາດໜຶ່ງໃນປະວັດສາດອະເມຣິກັນ. ພາຣະທຳອິດຂອງທ່ານ
ກໍຄື, ການກວດເບິ່ງ ອັດຕຣາພາສີຄືນ. "ອັດຕຣາການເກັບພາສີ
ນີ້ ຈະຕ້ອງດັດແປງໃໝ່" ຍັນນີ້ເປັນຄຳເວົ້າຕອນໜຶ່ງຂອງທ່ານວິລ
ສັນ "ພວກເຮົາຈະຕ້ອງທຳລາຍທຸກສິ່ງທຸກຢ່າງຊຶ່ງຄ້າຍຄືສິດພິເສດ"
ກົດໝາຍໃໝ່ ກ່ຽວກັບການຫລຸດອັດຕຣາຄ່າພາສີສິນຄ້າ ທີ່ຈຳເປັນ
ເຊັ່ນວັດຖຸດິບ, ສະບຽງອາຫານແລະຝ້າຍ, ສິນຄ້າປະເພດອຶມສັດ,
ເຫລັກ ແລະເຫລັກກ້າ, ແລະສິນຄ້າອື່ນໆ ໄດ້ຈັດໃຫ້ມີການຫລຸດຄ່າ
ພາສີສິນຄ້າຕ່າງໆ ປະມານຮ້ອຍກວ່າຢ່າງ. ແມ່ນວ່າ ກົດໝາຍນີ້

ຍັງຮັກສາ ຄວາມລຸ້ມກັນໄວ້ຢູ່ກໍຕາມ, ແຕ່ເປັນຈຸດປະສົງ ອັນໃຫຍ່ ຫລວງໃນການລົດຄ່າຄອງຊີບໃຫ້ຕ່ຳລົງ.

## ທ່ານວິລສັນໄດ້ປັບປຸງຣະບຽບການທະນາຄານໃໝ່

ໂຄງການຂັ້ນທີສອງຂອງພັກເດໂມແຄຣຕແມ່ນການຈັດຕັ້ງຣະ ບຽບການທະນາຄານແລະການເງິນໃໝ່. ປະເທດຊາດໄດ້ພົບກັບ ຄວາມຝືດເຄືອງ ໃນເຣື່ອງຕາຍຕົວຂອງເຄຣດິດ ແລະເງິນ. ກົດ ໝາຍວ່າດ້ວຍການດັດແປງຣະບຽບຂອງເງິນຕຣາແບບໃໝ່ນີ້ໄດ້ອະ ນຸຍາດທະນາຄານແຫ່ງຊາດ ໃຫ້ພິມທະນາບັດທີ່ມີຄວາມຈຳເປັນທີ່ສຸດ ອອກມາໃຊ້ກ່ອນ, ແຕ່ການຈະປັບປຸງຣະບຽບການທະນາຄານໃໝ່ ໝົດນັ້ນ ກໍຈະກິນເວລາດົນແດ່. ທ່ານວິລສັນໄດ້ກ່າວວ່າ "ການ ຄວບຄຸມນັ້ນຈະຕ້ອງປະກາດໃຫ້ປະຊາຊົນທົ່ວໄປຮູ້, ບໍ່ແມ່ນເປັນທາງ ສ່ວນຕົວ, ຣັຖບານຂະຕ້ອງມີອຳນາດຄວບຄຸມກິຈການນີ້ ເພື່ອວ່າທະ ນາຄານຈະໄດ້ເປັນເຄື່ອງມື, ບໍ່ແມ່ນເປັນນາຍຂອງວິງການທຸຣະກິດ ຂອງບໍຣິສັດເອກຊົນ ແລະຂອງຣັຖບານ". ກົດໝາຍວ່າດ້ວຍການ ສ້ວມສິດໃຫ້ຣັຖບານທີ່ໄດ້ອອກໃນວັນທີ ८ ທັນວາປີ ໑໙໑໓, ໄດ້ ສອດຄ້ອງ ຕາມຄວາມຕ້ອງການທຸກຢ່າງ. ສຳລັບທະນາຄານທີ່ມີຢູ່ ແລ້ວນັ້ກໍໄດ້ຈັດຕາມຣະບຽບໃໝ່ໝົດ ຊຶ່ງທະນາຄານດັ່ງກ່າວນັ້ ໃຊ້ ໄວ້ເປັນບ່ອນຮັບຝາກເງິນສົດ ຂອງທະນາຄານອື່ນໆ ທີ່ເປັນສາຂາ.

ໜ້າທີ່ຂັ້ນແຮກ, ກໍແມ່ນທຳໜ້າທີ່ເປັນທະນາຄານໃຫ້ທະນາຄານອື່ນ ເວລາທີ່ຈະຊ່ວຍທະນາຄານທ້ອງຖິ່ນ ໃນຍາມເກີດຂັດສົນໄດ້ດີ. ເພື່ອໃຫ້ຈຸດໝາຍໃນຂັ້ນສອງນີ້ລຸລ່ວງໄປ, ຈຳເປັນຕ້ອງໃຫ້ມີເງິນໜຸນຄື ຣັຖບານຈະຕ້ອງພິມທະນາບັດເພີ່ມຂຶ້ນເພື່ອໃຫ້ການໝູນວຽນຂອງທະນາບັດໃນທ້ອງຕລາດພຽງພໍກັບຄວາມຕ້ອງການຂອງວົງການທຸຣະກິດ ໃນທີ່ສຸດ ໂລກການນີ້ ກໍແມ່ນຄນະກັມມະການກອງເງິນທີ່ນ ສຳຣອງສະຫະຣັຖເປັນຜູ້ຄວບຄຸມແລະດູແລ.

ພາຣະສຳຄັນໃນຂັ້ນຕໍ່ໄປ, ແມ່ນການຈັດຣະບຽບ ຂອງການຮ່ວມໜຸ່ຂອງບໍຣິສັດໃຫຍ່ໆ. ຕາມປະສົບການທີ່ຜ່ານມານັ້ນ ເປັນວ່າ ຣະບຽບຂອງການຄວບຄຸມຊຶ່ງຄ້າຍຄືກັບຄນະກັມການການຄ້າຣະຫວ່າງຣັຖທີ່ຄວບຄຸມທາງການຣັຖໄຟນັ້ນໄດ້ຜົນດີ ຊຶ່ງໄດ້ສເນີໃຫ້ຈັດຕັ້ງຄນະກັມມະການດັ່ງກ່າວຂຶ້ນ. ດັ່ງນັ້ນ ອຳນາດຂອງການກວດຄົ້ນບໍຣິສັດ ຈຶ່ງເປັນໜ້າທີ່ຂອງຄນະກັມການສຫະພັນການຄ້າ ຊຶ່ງມີໜ້າທີ່ສັ່ງຫ້ານບໍ່ໃຫ້ວົງການທຸຣະກິດດັ່ງກ່າວນີ້ແຂ່ງຂັນດ້ວຍວິທີບໍ່ຍຸຕິທັມແກ່ການຄ້າຣະຫວ່າງຣັຖ. ກົດໝາຍສະບັບທີ່ສອງ, ວ່າດ້ວຍການຄັດຄ້ານ ການດຳເນີນງານ ຂອງການຮ່ວມໜຸ່ ຂອງບໍຣິສັດໃຫຍ່ນັ້ນກໍຄື ການສັ່ງຫ້ານບໍ່ໃຫ້ບໍຣິສັດນີ ຫລີກເວັ້ນການກະທຳທີ່ບໍ່ຈົບບ່ຽງ ເຊັ່ນວ່າ ການກັກຕຸນສິນຄ້າຫລືເກັ່ງຣາຄາແລະຮວມຄວາມແລ້ວ ກໍຄືຫ້ານບໍ່ໃຫ້ກໍ່ເຫດຊຶ່ງພາໃຫ້ຕລາດການຄ້າເປັນບ່ອນປັ່ນປ່ວນ.

ນອກນີ້, ຣັຖບານຍັງບໍ່ລືມບັນຫາແຮງງານ ແລະຊາວນາ. ຣັຖບານໄດ້ຕັ້ງກອງເງິນຫມຶ່ນລ້ານ ເພື່ອໃຫ້ຊາວໄຮ່ຊາວນາ ໄດ້ກູ້ຢືມ ໂດຍຄິດດອກເບ້ຍ ໃນອັຕຣາຕ່ຳທີ່ສຸດ. ມາຕຣານຶ່ງຂອງກົດຫມາຍ ວ່າດ້ວຍການຄັດຄ້ານການຮ່ວມກຸ່ມຂອງບໍຣິສັດໃຫຍ່ນັ້ນ ຫ້ານບໍ່ໃຫ້ໃຊ້ ຄຳສັ່ງໃນການຄົດລ້ຽວ ໃນເຣື່ອງແຮງງານ. ກົດຫມາຍວ່າດ້ວຍຜູ້ ເດີນທາງທະເລໄດ້ອອກໃນປີ ໑໙໑໔ ມີຈຸດປະສົງໃນການປັບປຸງຖາ ນະການເປັນຢູ່ ແລະການເຮັດວຽກຂອງພະນັກງານ ທີ່ເຮັດການໃນ ເຮືອເດີນທະເລ ຫລືຕາມແມ່ນ້ຳ. ກົດຫມາຍວ່າດ້ວຍ ຄ່າບຳເນັດ ຂອງຄົນງານສຫະພັນໄດ້ອອກໃນປີ ໑໙໑໗ ເພື່ອອະນຸມັດເງິນກ້ອນ ນຶ່ງໃຫ້ຜູ້ທີ່ໄດ້ຮັບໃຊ້ໃນຣາຊການຫລວງໃນເວລາເຈັບປ່ວຍ ຊຶ່ງເກີດ ຂຶ້ນ ໃນເວລາ ທີ່ກຳລັງປະຕິບັດງານຢູ່. ກົດຫມາຍ (ແອດັມສັນ ແອັກທ໌) ກໍໄດ້ອອກມາໃນປີດຽວກັນນັ້ນ ຊຶ່ງກ່ຽວກັບການຈັດຕັ້ງຣະ ບຽບຂອງການເຮັດວຽກ ຄືນຶ່ງກຳນົດໃຫ້ເຮັດການແປດຊົ່ວໂມງ.

ພານັ້ນທຶກ ຂອງການປ່ຽນແປງທັງຫມົດນີ້ ໄດ້ຈາຣຶກ ຢູ່ໃນ ຄວາມຊົງຈຳຂອງປະຊາຊົນ ຊຶ່ງມີທ່ານວິລສັນເປັນຜູ້ນຳພາ. ທ່ານ ວິລສັນເປັນບຸກຄົນຊັ້ນນຳໃນປະວັດການຂອງຕຳແຫນ່ງ ປະທານາ ທິບໍດີອະເມຣິກັນ, ແຕ່ທ່ານຂາດຄຸນສົມບັດທີ່ເຂັ້ມແຂງ ຊຶ່ງຈຳເປັນທີ່ ສຸດໃນການບັນລຸຜົນສຳເຣັດ ໃນສນາມການເມືອງທີ່ຕ້ອງການຄວາມ ທົນທານຫລາຍກວ່ານີ້. ທ່ານວິລສັນປຽບເຫມືອນນັກຮົບ ແລະນັກ

ປຣັຊຍາທີ່ແທ້ຈິງ ຂອງສະຖາບັນການເມືອງ ແລະການຍຶດຂຽນຂອງ
ທ່ານໃນດ້ານຣັຖສາດປາກົດວ່າດີທີ່ສຸດ ແລະຍັງເປັນພິນປະໂຍດແກ່ວິ
ຊາການຮຽນຂແນງນີ້ ໃນອະເມຣິກາ ອີກດ້ວຍ. ນອກຈາກນັ້ນ,
ທ່ານວິລສັນໄດ້ສັງເກດເບິ່ງໂລກດ້ວຍຈິດໃຈຜູກພັນ, ດ້ວຍສາຍຕາ
ຂອງນັກຮຽນຜູ້ລ້ຽງເລີ ຕໍ່ການສ່ຽງໂຊກຂອງເຫດການ, ແລະເພື່ອ
ຊອກຫາຫລັກການເປັນສິ່ງນຳທາງ. ແຕ່ອຳນາດຂອງທ່ານວິລສັນນັ້ນ
ຢູ່ທີ່ຄວາມໄວ້ວາງໃຈຂອງປະຊາຊົນທີ່ຂົນກັບຄວາມບໍ່ສົນໃຈຂອງທ່ານ
ແລະຄວາມສລ່ຽວສລາດ ຂອງທ່ານຫລາຍກວ່າບຸກຄລິລັກສນະ ການ
ເສັຍສລະຂອງທ່ານ, ແມ່ນວ່າ ທ່ານຈະເປັນທີ່ຮັກໄຄ່ຂອງບຸກຄົນທີ່ຢູ່
ໃກ້ຊິດກໍຕາມ. ໃນປະວັດສາດ ອະເມຣິກັນແລ້ວ, ທ່ານວິລສັນກໍ
ເປັນບຸກຄົນນຶ່ງ ທີ່ໄດ້ສ້າງຄຸນງາມຄວາມດີ ໄວ້ໃຫ້ແກ່ປະເທດຊາດ,
ທັງນີ້ບໍ່ແມ່ນວັດແທກດ້ວຍຄວາມຮອບຮູ້ຫລືການເສັຍສລະຂອງທ່ານໃນ
ການດັດແປງສັງຄົມ, ແຕ່ແມ່ນໂຊກຊາຕາ ຊຶ່ງດົງທ່ານໃຫ້ເຂົ້າໄປມີ
ບົດບາດຂອງປະທານາທິບໍດີ ໃນຍາມເສີກສົງຄາມ ແລະເປັນຜູ້ໄກ່
ເກ່ຍຫາຄວາມສງົບ ໃນເວລາຄັບຂັນ, ຊຶ່ງສົບເມືອງກັນໄປເຖິງສົງ
ຄາມໂລກຄັ້ງທີ່ນຶ່ງ.

ແທນທີ່ຈະນຳເງິນ ໄປຝາກທະນາຄານບ້ານຊ່ອງໄວ້, ເມື່ອຕລາດ ການຄ້າໄດ້ພົບກັບຄວາມລົ້ມເຫລວລົງໄປແລ້ວ, ການຫມູນເງິນ ຈຶ່ງ ພົບກັບຄວາມຝຶດເຄືອງ ແລະໃນທີ່ສຸດກໍຈົມໄປຄືກັນ.

ການໂຄສະນາຫາສຽງໃນການເລືອກຕັ້ງປະທານາທິບໍດີໃນປີ ໑໙໓໘ ນັ້ນ, ໄດ້ມີການຖືກຖຽງກັນເຖິງສາເຫດ ແລະການຊອກຫາ ຊ່ອງທາງແກ້ໄຂ ພາວະອັນຫນັກຫນ່ວງຂອງປະເທດ ໃນຄາວນັ້ນ. ທ່ານເຣີເບີດ ຮູເວີ, ຜູ້ທີ່ບໍ່ຄ່ອຍຈະໂຊກດີປານໃດ, ເມື່ອທ່ານເຂົ້າ ຮັບຕຳແຫນ່ງປະທານາທິບໍດີໄດ້ແປດເດືອນເທົ່ານັ້ນ, ຕລາດຊັ້ຂາຍ ຫຸ້ນສ່ວນກໍໄດ້ລົ້ມທະລາຍລົງ ແລະທ່ານໄດ້ຕໍ່ສູ້ຢ່າງເຖິງທີ່ສຸດເພື່ອໃຫ້ ອຸດສາຫະກັມໄດ້ດຳເນີນກິຈການຕ່ໆໄປ, ແຕ່ເຖິງຢ່າງໃດກໍດີ ທ່ານ ສາມາດເຮັດໄດ້ໃນຂອບເຂດຈຳກັດເທົ່ານັ້ນ ຊຶ່ງຕາມຣະບຽບແລ້ວ ຣັຖບານບໍ່ອະນຸຍາດໃຫ້ທ່ານເຂົ້າໄປມີບົດບາດໂດຍກົງໃນກິຈການນັ້. ຄູ່ແຂ່ງຂັນຂອງທ່ານກໍຄື ທ່ານແຟຣງຄລິນ ຣູສເວລຕ໌ ຊຶ່ງສັງກັດຢູ່ພັກ ເດໂມແຄຣຕ ທີ່ກຳລັງເປັນຜູ້ປົກຄອງມິລຣັຖມີຢອກ ຊຶ່ງມີຄົນນິຍົມທີ່ ສຸດ ໃນຂນະທີ່ຣັຖບານຂອງພັກຣີພັບລີແຄນໄດ້ພົບກັບບັນຫາຫຍຸ້ງຍາກ ຢູ່ນັ້ນ ທ່ານໄດ້ໃຫ້ຂໍ້ຄິດເຫັນວ່າ ຄວາມຫຍຸ້ງຍາກທັ້ງຫມົດນີ້ເກີດຈາກ ຄວາມຂາດຕົກບົກພ່ອງ ຂອງນະໂຍບາຍການເມືອງ ຂອງພັກຣີພັບລີ ແຄນ ທີ່ພາໃຫ້ເສຖກິດຂອງອະເມຣິກາຕົກຕ່ຳ. ໃນການຕອບໂຕ້ ກ່າວຫາດັ່ງກ່າວນີ້ ປະທານາທິບໍດີຮູເວີ ແກ້ວ່າ ເສຖກິດຂອງອະເມ

ຣິກັນນັ້ນດີຢູ່ ແຕ່ວ່າຖືກລົບກວນ ຈາກການກະທົບກະເທືອນຈາກໂລກ ພາຍນອກ ຊຶ່ງສາເຫດເຫລົ່ານີ້ອາດກໍ່ໃຫ້ເກີດສົງຄາມໂລກກໍເປັນໄດ້ ເບື້ອງຫລັງການຜິດຖຽງກັນນີ້ກໍມີສ່ວນພົວພັນກັນຢູ່ຢ່າງແຈ່ມແຈ້ງແລະ ທ່ານຮູເວີຢາກໃຫ້ເຫດການຕ່າງໆນີ້ກັບເຂົ້າຮູບຮອຍເດີມຕາມທັມມະ ຊາດຊຶ່ງໃນຂນະດຽວກັນນັ້ນທ່ານຮູສແວລຕ້ຕ້ອງການຢາກໃຊ້ອາໍນາດ ຂອງຣັຖບານກາງ ເພື່ອແກ້ໄຂເຫດການເຫລົ່ານີ້. ໃນທີ່ສຸດ ການ ເລືອກຕັ້ງປະທານາທິບໍດີ ໃນປີຕໍ່ມານັ້ນ, ທ່ານຮູສແວລຕ້ ໄດ້ຮັບໄຊ ຊນະອັນງາມ ຊຶ່ງມີຜູ້ລົງຄະແນນສຽງເອົາເຖິງ ໘໘,ຊ00,000 ຄົນ ສ່ວນທ່ານ ຮູເວີນັ້ນ ໄດ້ຄະແນນສຽງພຽງ ໑໕,ກ00,000 ເທົ່ານັ້ນ.

ໃນການແກ້ໄຂບັນຫາທັງຫມົດນີ້, ກ່ອນອື່ນທ່ານຮູສແວລຕ້ໄດ້ ສ້າງບັນຍາກາດອັນສົດຊຶ່ນໃຫ້ມີຂຶ້ນ ໃນຮະຫວ່າງປະຊາຊົນເສັຍກ່ອນ ພ້ອມທັງໃຫ້ປະຊາຊົນ ເກີດມີຄວາມໄວ້ເນື້ອເຊຶ່ອໃຈ ແລະໃຫ້ຄວາມ ຮ່ວມໄມ້ຮ່ວມມືກັບຣັຖບານ. ກ່ອນການເຂົ້າຮັບຕາໍແຫນ່ງຂອງທ່ານ ຮູສແວລຕ້ນັ້ນ, ໄດ້ມີສຽງວິພາກວິຈານເຖິງການ "ແກ້ໄຂໃຫມ່" ທີ່ກາໍລັງຈະເລີ້ມຕົ້ນລົງມື ແລະການປ່ຽນແປງນີ້ ມີບາງສິ່ງບາງຢ່າງ ຈະຕ້ອງຣີບດ່ວນແດ່ ເພາະວ່າ ບາງອັນໄດ້ໂຍະຍານມາເປັນເວລາ ນານເກືອບຫ້າສິບກວ່າປີແລ້ວກໍມີ. ອາດຈະເວົ້າໄດ້ວ່າ ການປ່ຽນ ແປງໃຫມ່ນີ້ ຄົງຈະແມ່ນການສເນີໃຫ້ມີການດັດແປງກົດຫມາຍຣັຖທັມ

24 / VII
ห้ามจำหน่าย

ມະນຸມບາງມາດຕຣາຊຶ່ງບໍ່ເປັນສິ່ງແຕກຕ່າງຫຍັງສຳລັບຊາວອັງກິດ, ເຢຣະມັນ, ແລະຊາວສະແກນດິເນວຽນ ຊຶ່ງເຄີຍເຫັນມາຫລາຍຈົ່ວ ຄົນແລ້ວ, ແລະນອກນີ້ກໍຍັງເປັນແນວທາງອັນສູງສຸດ ແລະຍາວນານ ທີ່ຈະຕ້ອງຈັດຣະບຽບການຕ່າງໆໃຫ້ເຂົ້າຕາມແບບແຜນຄືນ ເຊັ່ນວ່າ ຣະບຽບຂອງທາງການຣົຖໄຟ ໃນປີ ໑໘໘໐ ແລະການປະຕິຮູບກົດ ໝາຍໃໝ່ຂອງຊາດ ແຕ່ປາງສມັຍຣັຖບານຂອງວິລສັນ ເຫໂອດໍຣ໌, ແລະສິ່ງທີ່ບໍ່ເປັນຫນ້າເຊື່ອກໍຄື ການປ່ຽນແປງບາງຢ່າງຊຶ່ງກິນເວລາ ມາຄົນນານແລ້ວ ກໍໄດ້ຖືກປ່ຽນແປງແລະສຳເຣັດລຸລ່ວງໄປໃນເວລາ ອັນສັ້ນ. ການດັດແປງແກ້ໄຂຕາມແນວທາງໃໝ່ນັ້ນ ໄດ້ເຣັດໄປ ຢ່າງຟ້າວແລະຣີບຮ້ອນ ແລະການປົກຄອງກໍຂ້ອນຂ້າງຈະອ່ອນແອແດ ເພາະວ່າ ມັກການເມືອງໃນພັກຣ່ວມກັນຕ່າງກໍຄັດຄ້ານກັນ ແຕ່ເມື່ອ ມີການປ່ຽນແປງ ຢ່າງກະທັນຫັນ ເຊັ່ນນີ້, ມັນເປັນຂອງທັມມະດາ ເຫລືອເກີນ ທີ່ຈະຕ້ອງພົບກັບສະຖານະການຫຍຸ້ງຍາກ. ໃນສມັຍ ຂອງການປ່ຽນແປງທັ້ງຫມົດນີ້, ການວິພາກວິຈານກ່ຽວກັບບາດກ້າວ ຂອງພັກເດໂມແຄຣຕນັ້ນ ມີຢູ່ບໍ່ໄດ້ຂາດ ເມື່ອເວົ້າຕາມຄວາມເປັນ ຈິງແລ້ວ ການດັດແປງແກ້ໄຂນີ້ພາໃຫ້ມີຊີວິດຊີວາຂຶ້ນ ແລະພາໃຫ້ພົລ ເມືອງແຕ່ລະຄົນມີຄວາມສົນໃຈໃນຣັຖບານຂອງເຂົາເຈົ້າຫລາຍຂຶ້ນ.

ທ່ານ ຣູສເວລຕ໌ ເຂົ້າຮັບຕຳແໜ່ງ ປະທານາທິບໍດີ ນັ້ນ ການທະນາຄານແລະຣະບຽບການໃຫ້ເງິນເຊື່ອຂອງຊາດນັ້ນກຳລັງຢູ່

ໃນພາວະອ່ອນແອທີ່ສຸດ. ດ້ວຍຄວາມໄວ ທີ່ບໍ່ໜ້າເຊື່ອ, ທະນາ
ຄານໄດ້ຟື້ນຕົວຂຶ້ນໃໝ່ ແລະດຳເນີນກິຈການອີກຕໍ່ໄປ ໂດຍມີນະໂຍ
ບາຍການດັດແປງສະພາບຂອງເງິນເຟີ້ໃຫ້ດີຂຶ້ນເພື່ອໃຫ້ຣາຄາສິນຄ້າ
ດີຂຶ້ນແລະໃນເວລາດຽວກັນນີ້ ກໍໄດ້ຊ່ວຍພວກລູກຄ້າໃຫ້ໃຊ້ໜີ້ ທີ່ໄດ້
ຄ້າງຄາເຫລືອໄວ້ໃຫ້ຜ່ອນລົງ. ນອກຈາກນັ້ນ ຣັຖບານໄດ້ໃຫ້ເງິນ
ເຄຣດິດແກ່ໂຮງງານອຸດສາຫະກັມ ແລະການກະສິກັມໂດຍຜ່ານທາງ
ຣາຊການ ແລະໄດ້ມີການຄ້ຳປະກັນການຮັບຝາກເງິນໃນທະນາຄານ
ເປັນເງິນຫ້າພັນໂດລາ ອະເມຣິກັນ, ແລະໄດ້ມີການອອກ ຣະບຽບ
ອັນເຄັ່ງຄັດກ່ຽວກັບຄວາມປອດໄພໃນຕລາດຊື້ຂາຍຫຸ້ນສ່ວນ.

ໃນດ້ານອຸດສາຫະກັມນັ້ນ, ໄດ້ຈັດໃຫ້ມີການດັດແປງ ແກ້ໄຂ
ຂຶ້ນໃນຣະຍະຍາວ. ກົດໝາຍວ່າດ້ວຍການກະສິກັມ ທີ່ສະພາກົງ
ແກຣສໄດ້ອອກມາໃນປີ ໑໙໓໓ ນັ້ນ ໄດ້ຖືກລົບລ້າງໂດຍສານສູງສຸດ
ໃນສານປີຕໍ່ມາຈາກຂໍ້ຫາວ່າ ກົດໝາຍນີ້ບໍ່ຖືກຕ້ອງຕາມຣັຖທັມມະນູນ
ດັ່ງນັ້ນ, ທາງສະພາກົງແກຣສຈຶ່ງໄດ້ຣັດກົດໝາຍອອກມາໃໝ່ອີກ
ຄືຣັຖບານຈະອອກເງິນໃຫ້ແກ່ຊາວນາຊາວສວນກ້ອນນຶ່ງເອົາໄປສ້າງ
ສາແລ້ວ ຊາວນາຊາວສວນຈະຕ້ອງເສັຍສລະດິນບາງສ່ວນຂອງເຂົ້າ
ເຈົ້າເພື່ອປຸກພືດພັນສິ່ງໃຫ້ຣັຖບານເປັນຄ່າຕອບແທນ ຫລືບໍ່ດັ່ງນັ້ນ ກໍ
ໃຫ້ການຮ່ວມມືໃນໂຄງການກະເສດໃນຣະຍະຍາວກັບຣັຖບານ. ຕົກ
ມາໃນປີ ໑໙໔໐, ໄດ້ມີຊາວນາຊາວສວນເຖິງຫົກລ້ານຄົນ ທີ່ເຂົ້າ

ຮ່ວມໃນໂຄງການນີ້ ແລະເຂົາເຈົ້າກໍໄດ້ຮັບທຶນຊ່ວຍເຫລືອ ຈາກຣັຖບານ. ກົດຫມາຍດັ່ງກ່າວນີ້ ໄດ້ໃຫ້ເງີນທຶນກູ້ຢືມໃນການຈັດເຮື່ອງພຶດພົນທີ່ເຫລືອຄ້າງຢູ່, ໃຫ້ຄວາມຄູ້ມກັນແກ່ເຂົ້າວົດແລະຣັຖບານໄດ້ຈັດໂຄງການຫຼເກັບພຶດຜົນໄວ້ໃນຄັງສິນຄ້າຂອງຊາດໃຫ້ແກ່ຊາວນາ. ຈາກການດຳເນີນງານຕາມບາດກ້າວແບບໃຫມ່ນີ້, ຜົນປາກົດກໍຄືວ່າ ຣາຄາຂອງສິນຄ້າປະເພດພຶດຜົນກໍສູງຂຶ້ນ ແລະທຸ່ນທ່ຽງໃນດ້ານເສຖກິດຂອງຊາວໄຮ່ຊາວນາກໍເລີ້ມປາກົດຂຶ້ນຢ່າງແທ້ຈິງ.

## ແນວທາງແບບໃຫມ່ໄດ້ພາໃຫ້ສັງຄົມມີການປ່ຽນແປງໃຫມ່

ຣັຖບານໄດ້ພຍາຍາມທຸກວິທີທາງ ເພື່ອໃຫ້ຊາວນາຊາວສວນ ຜູ້ທີ່ເຊົ່າດິນໄຮ່ ດິນນາ ຂອງຫມູ່ເຮັດ ໄດ້ມີທີ່ດິນເປັນຂອງເຂົາເຈົ້າ ເອງ. ຣັຖບານໄດ້ຊ່ວຍເຫລືອພວກນີ້ ໂດຍແບ່ງຂາຍດິນໄຮ່ດິນນາ ໃຫ້ແກ່ເຂົາເຈົ້າໂດຍໃຫ້ໃຊ້ເງີນຜ່ອນໃນຣາຄາຖືກ ແລະຣັຖບານໄດ້ ໃຫ້ຊາວນາຢືມເງີນກ້ອນນຶ່ງສຳລັບໃຊ້ຫາສິນທີ່ເຂົາເຈົ້າຍັງຕິດຫນີ້ຄ່າ ທີ່ດິນໄຮ່ນາທີ່ເຂົາເຈົ້າຊື້ນັ້ນໃຫ້ຫມົດໄປ. ເງີນນີ້ແມ່ນບໍຣິສັດສິນຄ້າ ເງີນເຊື່ອເປັນຜູ້ໃຫ້ເງີນທຶນກູ້ຢືມແກ່ຊາວນາໂດຍຕຣົງແລະພ້ອມກັນນີ້ ຣັຖມົນຕີຊ່ວຍວ່າການກະຊວງຕ່າງປະເທດ ຄືທ່ານກໍແດລຮູນ ໄດ້ຮັກ ສາຕລາດໃນຕ່າງປະເທດໄວ້ ໂດຍຍອມລົດຜ່ອນຣາຄາສິນຄ້າ ທີ່ຈະ ສົ່ງອອກຂາຍໃນຕ່າງປະເທດລົງ. ພາຍໃຕ້ສັນຍາການຄ້າ ຊຶ່ງປາ

ກິດອອກມາໃນເດືອນມິຖຸນາປີ ໑໙໓໔ ນັ້ນ ທ່ານຮູມໄດ້ຕິດຕໍ່ກັບປະ ເທດການາດາ, ຄິວບາ, ຝຣັ່ງເສດ, ຣັສເຊັຍ, ແລະປະເທດ ອື່ນໆອີກອາວກ່ວາປະເທດ ເພື່ອເຮັດສັນຍາທາງການຄ້າ ໂດຍບໍ່ມີ ເງື່ອນໄຂໃດໆ ແລະທ່ານກໍໄດ້ຮັບການຕອບສນອງເປັນຢ່າງດີ ຈາກ ບັນດາປະເທດເຫລົ່ານີ້. ພາຍໃນປີນຶ່ງ ການຄ້າຂອງສະຫະຣັຖ ກໍ ໄດ້ຮັບການປັບປຸງ ໃຫ້ດີຂຶ້ນ ໃນດ້ານວັດຖຸ ແລະຕົກມາປີ ໑໙໓໙, ຣາຍໄດ້ຈາກໄຮ່ນາມັ້ນໄດ້ຫລາຍຂຶ້ນທົບເຄິ່ງຫລາຍກ່ວາເຈັດປີກ່ອນ.

ໂຄງການສຳລັບການອຸດສາຫະກັມແບບໃຫມ່ນີ້ເປັນບາດກ້າວ ທຳອິດ ໃນການທົດລອງຂອງຣັຖບານ ຂອງທ່ານຣູສເວລຕ໌. ໃນປີ ໑໙໓໙, ຣັຖບານໄດ້ຟື້ນຟູການປົກຄອງແຫ່ງຊາດ ໂດຍໄດ້ວາງຣາກ ຖານໄວ້ວ່າ ສະຖານະການອັນລັບຂັນນີ້ ຈະໄດ້ຮັບການແກ້ໄຂ ໃຫ້ລຸ ລ່ວງໄປໄດ້ຈາກການວາງຂອບເຂດ ໃນການຜລິດຜົນແລະຕັ້ງຣາຄາ ໃຫ້ສູງຂຶ້ນ, ແຕ່ກ່ອນທີ່ຣັຖບານຟື້ນຟູການປົກຄອງນີ້ ສານສູງໄດ້ປະ ກາດວ່າ ການກະທຳນີ້ບໍ່ຖືກຕ້ອງຕາມກົດໝາຍຂອງຣັຖທັມມະນູນໃນ ເດືອນພຶສພາປີ ໑໙໓໕, ຈຶ່ງເຫັນຜົນປາກົດແລ້ວວ່າ ມັນບໍ່ເປັນຜົນ ສຳເຣັດເລີຍ. ເມື່ອເຖິງເວລານີ້ແລ້ວ ການເຄື່ອນໄຫວໄປສູ່ການ ຟື້ນຟູກໍໄດ້ເລີ້ມມາພາຍໃຕ້ຄວາມກະຕຸ້ນເຕືອນ ຂອງນະໂຍບາຍການ ປົກຄອງອື່ນໆ ແລະຕໍ່ມາບໍ່ດົນ ການປົກຄອງນີ້ກໍໄດ້ປ່ຽນ ນະໂຍບາຍ ໃຫມ່ໂດຍສລຸບຄວາມວ່າ ການລວບລູມຣາຄາສິນຄ້າບາງປະເພດນັ້ນ.

ເປັນການກໍ່ນກອງອັນຫນັກທີ່ສຸດ ສຳລັບເສຖກິດຂອງຊາດ ແລະຍັງ
ເປັນອຸປສັກໃນການຟື້ນຟູໃຫ້ດີຂຶ້ນອີກດ້ວຍ.

ໃນເວລາດຽວກັນນີ້, ການມຸ້ງຫນ້າສູ່ການຟື້ນຟູນັ້ນ ໄດ້ກ້າວ
ຫນ້າໄປຫລາຍແລ້ວ ເພາະວ່າ ຣັຖບານກາງ ໄດ້ຈ່າຍເງິນຫລາຍ
ລ້ານໂດລາ ເພື່ອຊ່ວຍເຫລືອພວກທີ່ ມີການເຣັດ, ໃນດ້ານການສາ
ທາຣະນະ ແລະວຽກການກ່ຽວກັບການເກັບຊັບສິນ ຂອງຊາດໄວ້.
ເມື່ອງດ້ວຍວ່າ ມີການປະຫຍັດການໃຊ້ຈ່າຍດັ່ງກ່າວນີ້ ຈຶ່ງພາໃຫ້ຄົນ
ໃນຊາດ ມີຄວາມຕ້ອງການຜົນຜລິດ ຂອງອຸດສາຫະກັມ ອະເມຣິກັນ
ຫລາຍຂຶ້ນ. ການຈັດຫາວຽກໃຫ້ພວກທີ່ວ່າງງານໄດ້ເຣັດ ກໍເປັນ
ຜົນສຳເຣັດ ແລະຣັບວ່າເປັນເຫື່ອທຳອິດ ໃນປະວັດສາດອີກດ້ວຍ.
ວັກທີເຈັດຂອງກົດໝາຍວ່າດ້ວຍການຟື້ນຟູການປົກຄອງນັ້ນ, ໄດ້ໃຫ້
ສິດແກ່ການຕົກລົງຮ່ວມກັນໃນດ້ານການງານ ແລະໃນເດືອນກໍຣະກະ
ດາປີ ໑໙໓໔, ໄດ້ມີກົດໝາຍອອກມາໃຫມ່ແທນກົດໝາຍທີ່ກ່າວມາ
ນີ້ ໂດຍສະພາກົງແທຣສໄດ້ອະນຸຍາດ ໃຫ້ຕົ້ງກົມແຮງງານຂຶ້ນ ເພື່ອ
ໃຫ້ຄຳແນະນຳ ແກ່ການຕົກລົງຮ່ວມກັນ. ການບໍຣິຫານກິຈການທັງ
ຫມົດນີ້ແມ່ນກົມແຮງງານເປັນຜູ້ດຳເນີນການ ແລະພວກກັມມະກອນກໍ
ໄດ້ຮັບສິດຢ່າງເຕັມທີ່ ໃນການເລືອກອົງການໃດອົງການນຶ່ງມາເປັນ
ຕົວແທນຂອງເຂົາເຈົ້າສຳລັບຕິດຕໍ່ວຽກການກັບນາຍຈ້າງ. ສຫະພັນ
ແຮງງານຂອງອະເມຣິກັນມີອຸດົມຄະຕິ ໃນການທ້ອນໂຮມຄົນງານໃຫ້

ເປັນກ້ອນເປັນຫນ່ວຍ, ແຕ່ການດຳເນີນງານນີ້ຢາກຊ້າໄປແດ່ແລະບໍ່ຄ່ອຍຈະຈັດການດີປານໃດ. ເມື່ອປວງຊົນສ່ວນຫລາຍເກີດມີຄວາມບໍ່ພໍໃຈນຳສະພາບການນີ້, ເຂົາເຈົ້າຈຶ່ງພາກັນອອກຈາກສຫະພັນນີ້ ແລະໄດ້ພາກັນຈັດຕັ້ງສະພາກົງແກຣສ ໃຫ້ເປັນອົງການອຸດສາຫະກັມ ແລະຈາກນັ້ນມາ ກໍໄດ້ດຳເນີນກິຈການມາຢ່າງເປັນຜົນສຳເຣັດໂດຍສະເພາະ ໃນອຸດສາຫະກັມຣົຖຍົນ ແລະເຫລັກກ້າ. ໂດຍການຕຸ້ນເຕືອນ ໃນການແຂ່ງຂັນ ຂອງອົງການອຸດສາຫະກັມ ຂອງສະພາກົງແກຣສ, ສຫະພັນແຣງງານອະເມຣິກັນ ກໍໄດ້ຈັດຕັ້ງຂຶ້ນໃຫມ່ຄືກັນ. ໃນປີ ຈຈ໔ຈ ນັ້ນ ສະມາຊິກຂອງສຫະພັນແຣງງານຂອງອະເມຣິກັນ ຈຳນວນສີ້ລ້ານຄົນ ແລະໃນປີ ຈຈມຈ ມີສະມາຊິກ ສິບເອັດລ້ານຄົນ ແລະໃນປີ ຈຈ໔ຊ ມີເຖິງສິບຫົກລ້ານຄົນ. ດັ່ງນັ້ນ, ອິດທິພົນແຣງງານກໍມີຫລາຍຂຶ້ນ ບໍ່ພຽງແຕ່ໃນດ້ານອຸດສາຫະກັມເທົ່ານັ້ນ, ແຕ່ໃນດ້ານການເມືອງກໍມີຄືກັນ ດັ່ງທີ່ອົງການນີ້ໄດ້ພາໃຫ້ນະໂຍບາຍການເມືອງທົ່ວໆໄປເປັນຫນ້າສົນໃຈ ຫລາຍຂຶ້ນ. ອິດທິພົນເຫລົ່ານີ້ ໄດ້ຖືກນຳມາໃຊ້ ພາຍໃນຂອບເຂດຂອງວົງການຂອງພັກການເມືອງທັງສອງພັກ, ແລະໃນຂນະນັ້ນ ພັກເດໂມແຄຣຕ ໄດ້ຮັບການສນັບສນູນ ຈາກປະຊາຊົນຫລາຍກວ່າພັກຣິພັບລີແຄນ ແລະພັກກັມມະກອນໃນເວລານັ້ນກໍບໍ່ຄ່ອຍມີເລີຍ.

ການບໍ່ມີວຽກການເຣັດໃນຍາມເຖົ້ານີ້ກາຍເປັນເຣື່ອງທີ່ປວງ

ຊຸມທ່ອໄປໄດ້ນຳຂຶ້ນມາຖືກຖ່ຽງກັນຢູ່, ດັ່ງນັ້ນ ຈຶ່ງໄດ້ມີກົດອອກມາ ໃນປີ ໑໙໓໔ ວ່າດ້ວຍການໃຫ້ຄວາມຊຸ້ມກັນແກ່ສັງຄົມ ຊຶ່ງກົດໝາຍ ນີ້ໄດ້ອະນຸຍາດໃຫ້ຜູ້ທີ່ມີອາຍຸເຖິງຫົກສິບຫ້າປີໄດ້ອອກກິນເບ້ຍບຳນານ ໂດຍໃຫ້ເບ້ຍລ່ຽງຢ່າງສົມຄວນແກ່ຄົນງານທຸກໆຄົນ. ສ່ວນເງິນທຶນ ເຫລົ່ານີ້ ກໍໄດ້ຮີບໂຮມມາຈາກເງິນທີ່ແຜ່ຈາກພວກຄົນງານແລະນາຍ ຈ້າງທັງຫລາຍ. ເບ້ຍລ່ຽງສຳລັບຄົນງານຜູ້ຖືກປົ້ນໂດຍບໍ່ຈຳກັດອາ ຍຸທີ່ບໍ່ມີວຽກການເຮັດ, ກໍຈະໄດ້ຮັບເງິນຊ່ວຍເຫລືອຈາກຣັຖບານຊຶ່ງ ເງິນເຫລົ່ານີ້ແມ່ນໄດ້ມາຈາກເງິນທີ່ຫັກເອົາມາຈາກເງິນເດືອນຂອງ ຄົນງານທຸກໆຄົນໃນເວລາທີ່ຍັງເຮັດວຽກການຢູ່ນັ້ນ. ເມື່ອເຖິງປີ ໑໙໕໒, ທຸກໆຣັຖກໍໄດ້ມີແບບປະກັນໄພໃຫ້ແກ່ພວກທີ່ວ່າງງານ.

ດ້ວຍການປະສົບກັບຄວາມແຫ້ງແລ້ງໃນປີ ໑໙໓໐ ນັ້ນ, ຈຶ່ງ ໄດ້ມີກົດໝາຍສະບັບນຶ່ງອອກມາກ່ຽວກັບການຄວບຄຸມນ້ຳຖ້ວມ, ກົດ ໝາຍນີ້ໄດ້ອະນຸມັດໃຫ້ມີອ່າງຂັງນ້ຳຂນາດໃຫຍ່ຫລາຍບ່ອນ ແລະໃຫ້ ສ້າງເຂື່ອນນ້ຳທີ່ໃຊ້ກຳລັງນ້ຳອີກຫລາຍບ່ອນ ພ້ອມທັງເຂື່ອນນ້ອຍອີກ ຫລາຍພັນບ່ອນ. ດ້ວຍວ່າຊຸພຍາກອນນັ້ນ ມີມາກມາຍເຫລືອຫລາຍ ຊາວອະເມຣິກັນຈຶ່ງເບິ່ງຂ້າມຊຸບສົມບັດຈາກທັມມະຊາດເຫລົ່ານີ້ ແລະປ່ຽ ຕາມພາກຕ່າງໆ, ດິນທີ່ຖືກນ້ຳເຊາະນັ້ນ ກໍເລິກໂກນລົງ ຈົນພາໃຫ້ ເໜ້ນຮ່ອງຮອຍຕາມໜ້າດິນ. ເພື່ອປ້ອງກັນການເສັຍຫາຍເຫລົ່ານີ້ ໂດຍສະເພາະຕາມຫົ່ງ ຫາງພາກຕະເວັນຕົກ ພາກກາງ, ໄດ້ມີໂຄງ

ການສງວນທີ່ດິນ ຊຶ່ງຮວມທັງການປູກຕົ້ນໄມ້ ທີ່ໃຫ້ຮົ່ມຫລາຍໆຢ່າງ ແລະວຽກອື່ນໆອີກທີ່ກ່ຽວກັບການກຳຈັດການເສັຍຫາຍຈາກນ້ຳເຊາະ ນີ້ ໃຫ້ມີການສ້າງທີ່ພັກຜ່ອນຢ່ອນໃຈອີກເຊັ່ນ ຫນອງປາ, ບ່ອນຫລົ້ນ ແລະເຮັດຮັງໃຫ້ນົກຢູ່, ການສງວນບໍ່ຖ່ານຫີນ, ນ້ຳມັນກາດ, ຫີນ ດານ, ນ້ຳມັນເຊື້ອເພີງ, ທາດໂຊດຽມ, ທາດເຮລຽມ, ທີ່ງຫຍ້າ ທີ່ເອົາໄວ້ລ້ຽງສັດ ບາງບ່ອນກໍ່ຖືກສັ່ງຫ້ານບໍ່ໃຫ້ໃຊ້ອີກ ເພາະຈະໄດ້ ເອົາໄວ້ເຮັດບ່ອນປູກສ້າງເຄຫະສະຖານ, ແລະປ່າໄມ້ຂອງຊາດ ກໍ ປາກົດວ່ານີເພີ້ມຂຶ້ນຫລາຍ.

## ຜົນຂອງການທົດລອງທີ່ຮ່ອມແມ່ນ້ຳເທນເນສຊີກໍກາຍເປັນ ຕົວຢ່າງ

ໃນບາດກ້າວທັງຫມົດ ທີ່ໄດ້ດຳເນີນມານັ້ນ ມີສິ່ງນຶ່ງທີ່ພໍຈະ ເຫັນຄວາມສຳຄັນໃນອະນາຄົດນັ້ນກໍຄືການສ້າງເຂື່ອນໃສ່ຮ່ອມແມ່ນ້ຳ ເທນເນສຊີ, ຊຶ່ງໄດ້ເລີ້ມຕົ້ນມາໃນທັນທີ ເພື່ອໃຫ້ໂຄງການນີ້ເປັນ ບ່ອນທົດລອງໃນດ້ານສັງຄົມແລະເສຖກິດ. ນອກຈາກເຂື່ອນໃຫຍ່ທີ່ ຖືກສ້າງຂຶ້ນຢູ່ທີ່ແມ່ນ້ຳມັນເຊີລຊອນ ໃນຮັຖອາລາບາມາແລ້ວ, ທາງ ການຍັງໄດ້ສ້າງເຂື່ອນນ້ອຍ ອີກຫລາຍບ່ອນ ເພື່ອເປັ່ງນ້ຳໄປສູ່ບ່ອນ ຕ່າງໆ ເຊັ່ນວ່າເຂື່ອນທີ່ ນໍຣິສ, ປີກວິກ, ຊີກາໂມກາ, ແລະຕາມ ບ່ອນອື່ນໆອີກ. ເຂື່ອນເຫລົ່ານີ້ບໍ່ພຽງແຕ່ຈະໃຊ້ປະໂຍດໃນການຊົລ

ປະທານການຄວບຄຸມນ້ຳຖ້ວມແລະການຜລິດເຈ້ຍຂາວເທົ່ານັ້ນ, ແຕ່ ຍັງໃຊ້ຜລິດກຳລັງໄຟຟ້າອີກດ້ວຍ. ຣັຖບານໄດ້ສ້າງໂຮງໄຟຟ້າຊຶ່ງ ສາມາດຈຳໜ່າຍໄຟຟ້າໄປໄດ້ໄກເຖິງຫ້າພັນໄມ (ແປດພັນຫລັກ) ໃກ້ແກ່ໝູ່ບ້ານທີ່ຢູ່ຕາມແຖບນັ້ນ ໂດຍຂາຍດ້ວຍຣາຄາຕ່ຳທີ່ສຸດ ເພື່ອ ຊາວບ້ານຈະສາມາດໃຊ້ໄດ້ຫລາຍ. ທີມສຳລວງຂອງເຂື່ອນທີ່ສ້າງ ຂຶ້ນທີ່ແມ່ນ້ຳເທມເນສຊີນັ້ນ, ແມ່ນທາງກົມໄຟຟ້າທ້ອງຖິ່ນອອກທຶນໃຫ້ ໃນການກໍ່ສ້າງ. ເຂື່ອນຢູ່ແມ່ນ້ຳເທມເນສຊີນີ້ໄດ້ຊ່ວຍຟື້ນຟູດິນທີ່ແຕ່ ກ່ອນບໍ່ໄດ້ໃຊ້ໃນການປູກຝັງ ກາຍມາເປັນດິນໄຮ່ດິນສວນ ແລະໃຊ້ ເປັນບ່ອນທົດລອງໃນການປູກຝັງ ໂດຍສະເພາະການທົດລອງໃຊ້ປຸ໋ຍ ວິທຍາສາດ ຄຽງຄູ່ກັນໄປນຳ ແລະໄດ້ຊ່ວຍສິ່ງເສີມອະນາໄມຂອງ ປວງຊົນແລະສ້າງສະຖານທີ່ພັກຜ່ອນຍ່ອນອາຣົມໃຫ້ແກ່ສາທາຣະນະ.

ເກືອບເວົ້າໄດ້ວ່າ ວຽກການທຸກສິ່ງທຸກຢ່າງທີ່ໄດ້ດຳເນີນໄປ ຕາມແນວທາງແບບໃໝ່ນີ້ ເປັນສິ່ງທີ່ເລົ່າລືກັນຢູ່ບໍ່ໄດ້ຂາດ, ບໍ່ແມ່ນ ແຕ່ໃນຣະຫວ່າງພັກພວກຂອງພັກຣິພັບລິແຄນເທົ່ານັ້ນ ແຕ່ໃນພັກເດ ໂມແຄຣຕກໍເຊັ່ນດຽວກັນ.

ໃນການເລືອກຕັ້ງປະທານາທິບໍດີ ຂອງປີ ໑໙໓໙, ນະໂຍ ບາຍການບໍຣິຫານປະເທດ ຕາມແນວທາງແບບໃໝ່ ຂອງພັກຣິພັບລິ ແຄນ ຂອງທ່ານຣູສເວລຕ໌ໄດ້ຖືກກ່າວໂຈມຕີຈາກຝ່າຍຄ້ານ ຄືທ່ານ ອາລເຟຣດແອມແລນດົນ, ຜູ້ປົກຄອງຣັຖແຄນຊັສ, ແຕ່ທ່ານຣູສ

ແວລຕ້ໄດ້ຮັບໄຊຊນະຫລາຍກວ່າສມັຍການເລືອກຕັ້ງ ຂອງປີ ຈພສ້ເ ອີກຊຳ້. (ສະມາຊິກ ທີ່ສັງກັດຢູ່ພັກຣີພັບລີແຄນ ທີ່ໄດ້ຮັບເລືອກຕັ້ງ ເປັນປະທານາທິບໍດີຕໍ່ໆກັນມາມີດັ່ງນີ້ ທ່ານແວລເດີລ ວັລກີ ຈພ້ເ, ແລະທ່ານທອມມັສອີ ເດວີ ໃນປີ ຈພ້ເ ແລະປີ ຈພ້ເຊ ຊຶ່ງທັງ ຫມົດນີ້ເປັນທີ່ເຫັນຢ່າງແຈ່ມແຈ້ງດີເຖິງຜົນສຳເຮັດຂອງການບໍຣິຫານ ປະເທດຕາມນະໂຍບາຍແບບໃຫມ່ວ່າໄດ້ບັນລຸຜົນສຳເຮັດນ້ອຍຫລາຍ ພຽງໃດ.

ຕັ້ງແຕ່ປີ ຈພສ້ເ ໄປຫາປີ ຈພສ້ຊ, ປະຊາມະຕິທັງຫມົດຈົດ ຈຳຢູ່ນຳແຕ່ຄວາມຫມາຍຂອງນະໂຍບາຍບໍຣິຫານປະເທດ ຕາມແນວ ທາງແບບໃຫມ່ໃນຊີວິດການເມືອງແລະເສຖກິດ ຕາມທີ່ກາລະເວລາ ໄດ້ຜ່ານໄປນັ້ນ, ເປັນທີ່ເຫັນຢ່າງແຈ່ມແຈ້ງແລ້ວວ່າ ແນວຄວາມ ຄິດທີ່ວໆໄປຂອງຣັຖບານອະເມຣິກັນນັ້ນໄດ້ປ່ຽນແປງໄປ ແລະການທີ່ ຣັຖບານມີຄວາມຮັບຜິດຊອບ ແລະເບີ່ງແຍງຄວາມເປັນຢູ່ຂອງປະຊາ ຊົນຫລາຍນັ້ນໄດ້ເຮັດໃຫ້ຣັຖບານ ຊນະຈິດໃຈ ຂອງປະຊາຊົນຢ່າງ ເຕັມປ່ຽມ. ປະທານາທິບໍດີ ຣູສແວລຕ້ ແລະພັກພວກຂອງທ່ານໄດ້ ກ່າວຢຳ້ສເມີວ່າ, ບາດກ້າວທີ່ຣັຖບານໄດ້ດຳເນີນການຢູ່ເທົ່າທຸກວັນ ນີ້ໄດ້ອຸ້ມຊູເສຖກິດ ແລະການທີ່ມີເສຖກິດດີທີ່ຈະຊ່ວຍໃຫ້ຄົນໃນຊາດມີ ເສຣີພາບແລະປະຊາທິປະໄຕຢ່າງແທ້ຈິງ.

ທ່ານໄດ້ກ່າວຄຳປາໃສ ໂດຍທາງວິທຍຸກະຈາຍສຽງ ໃນປີ

ຈຍສຊ ແລະໄດ້ບອກເລົ່າໃຫ້ຊາວອະເມຣິກັນຮູ້ວ່າ: ປະເທດອື່ນໆ ຫລາຍປະເທດໄດ້ສູນເສັຍປະຊາທິປະໄຕໄປບໍ່ແມ່ນວ່າຊົນຊາດໃນປະ ເທດເຫລົ່ານັ້ນບໍ່ມັກຮະບອບປະຊາທິປະໄຕ, ແຕ່ເຂົາເຈົ້າເກີດເບື່ອ ຫນ່າຍໃນການບໍ່ມີວຽກການເຮັດແລະຄວາມບໍ່ປອດໄພ ໃນການທີ່ຈະ ເຫັນລູກຫລານຂອງເຂົາເຈົ້າອຶດຢາກ ໃນຂນະທີ່ເຂົາເຈົ້ານັ່ງເບິ່ງ ຄວາມສັບສົນຂອງຣັຖບານຊຶ່ງເຂົາເຈົ້າບໍ່ສາມາດຊ່ວຍແກ້ໄຂຫຍັງໄດ້ ແລະຄວາມອອນແອຂອງຣັຖບານທີ່ຂາດຜູ້ນາໍທີ່ດີ. ໃນທີ່ສຸດ, ໂດຍ ຄວາມຜິດຫວັງນີ້, ເຂົາເຈົ້າຈາໍເປັນຕ້ອງຍອມສູນເສັຍ ເສຣີພາບ ເພື່ອແລກປ່ຽນ ກັບສິ່ງທີ່ຈະມີຢູ່ມີກິນ. ພວກເຮົາທີ່ຢູ່ໃນອະເມຣິກາ ນີ້ຮູ້ດີແລ້ວວ່າ, ສະຖາບັນປະຊາທິປະໄຕຂອງເຮົານັ້ນຈະສາມາດປົກ ປັກຮັກສາໄວ້ໄດ້ແລະມີທາງເອົາມາໃຊ້ໄດ້. ແຕ່ກ່ອນຈະປົກປັກຮັກ ສາປະຊາທິປະໄຕໄວ້ໄດ້, ເຮົາຕ້ອງສະແດງໃຫ້ເຫັນວ່າ ການດາໍ ເນີນງານຂອງຣັຖບານປະຊາທິປະໄຕນັ້ນ ເທົ່າທຽມກັນກັບພາລະໃນ ການໃຫ້ຄວາມປອດໄພແກ່ປະຊາຊົນ... ປະຊາຊົນຂອງອະເມຣິກາ ພ້ອມໃຈກັນສເມີ ໃນການປ້ອງກັນເສຣີພາບ, ບໍ່ວ່າຈະຢູ້ດ້ວຍຣາຄາ ແພງພຽງໃດກໍຕາມ ແລະບາດກ້າວທາໍອິດໃນການປ້ອງກັນນີ້ກໍຄືການ ປ້ອງກັນຄວາມປອດໄພຂອງເສຖກິດ.

ໂຄງການໆບໍຣິຫານປະເທດນັ້ນ ເປັນທີ່ຈັບໃຈທີ່ສຸດ ເທົ່າກັບ ສມັຍຂອງຣັຖບານ ວິລສັນ ໃນຣະຫວ່າງສິບປີກ່ອນນັ້ນ, ແຕ່ມາບັດນີ້

ກໍຖືກວ່າຂອງສຽງຮຽກຮ້ອງຈາກກິຈການດ້ານຕ່າງປະເທດຣິບກອມ ກ່ອນທີ່ການຄອງຕຳແໜ່ງປະທານາທິບໍດີ ຄັ້ງທີສອງຂອງທ່ານຈະດຳ ເນີນໄປໂດຍດີ. ທາງພາກທະເລພົ້ນໄດ້ມີການບອກເຫດການຊາວ ອະເມຣິກັນທົ່ວໆໄປວ່າ ການຂົ່ມຂູ່ຕໍ່ສັນຕິພາບ, ຕໍ່ກົດໝາຍ, ແລະ ຕໍ່ຄວາມໝັ້ນຄົງຂອງຊາດອະເມຣິກັນໄດ້ມີຂຶ້ນແລ້ວ, ຊຶ່ງຮວມແລ້ວກໍ ມີປະເທດຢີ່ປຸ່ນ, ອິຕາລີ, ແລະປະເທດເຢຣະມັນ. ໃນຕົ້ນປີ ໑໙໓໐, ຢີ່ປຸ່ນໄດ້ບຸກລຸກແມນຈູເຣັຍ ແລະຢຽບຢຳ ການເປັນຢູ່ຂອງ ຊາວຈີນ, ແລະປີໜຶ່ງຕໍ່ມາ, ເຂົາເຈົ້າໄດ້ຈັດຕັ້ງຣັຖໜຶ່ງຂຶ້ນ ທີ່ເອີ້ ກັນວ່າ ແມນຈູກູໂອ. ສ່ວນອິຕາລີ ຊຶ່ງຕົກຢູ່ໃຕ້ອຳນາດຂອງພວກ ຟາຊິສ, ໄດ້ຂະຍາຍເຂດແດນຂອງຕົນອອກໄປທາງລິເບັຍ ແລະໃນປີ ໑໙໓໔-໓໕ ໄດ້ເຂົ້າຄອບຄອງປະເທດ ເອທິໂອເປັຍ. ປະເທດ ເຢຣະມັນ ຊຶ່ງສະໄໝນັ້ນຢູ່ພາຍໃຕ້ການປົກຄອງຂອງອາໂດຟ ຮິດເລີ, ໄດ້ຈັດຕັ້ງພັກສັງຄົມນິຍົມແຫ່ງຊາດຂຶ້ນ ແລະໄດ້ຍຶດອຳນາດຈາກຣັຖ ບານ, ໄດ້ເຂົ້າຄວບຄຸມ ໄຣແລນ, ແລະໄດ້ສ້າງສົນທາວຸດຂຶ້ນໃໝ່ ຢ່າງຫລວງຫລາຍ.

## ລັດທິຜະດັດການເປັນເຫດໃຫ້ສົງຄາມໂລກຄັ້ງທີສອງເກີດຂຶ້ນ

ເມື່ອທັມມະຊາດຂອງລັດທິການຮວມໝູ່ ກາຍເປັນຈິງຂຶ້ນມາ ແລ້ວ ແລະເມື່ອເວລາເຢຣະມັນ, ອິຕາລີ, ແລະຢີ່ປຸ່ນ ຍັງດຳເນີນ

ການລຸກລາມປະເທດນ້ອຍຕ່ໆໄປຢ່າງນີ້, ຄວາມຫວາດຫວັ່ນ ຂອງ
ຊາວອະເມຣິກັນຈຶ່ງໄດ້ກາຍມາເປັນຄວາມຄຽດແຄ້ນເສັຍແລ້ວ. ໃນ
ປີ ໑໙໓໙, ຫລັງຈາກຮິດເລີ ໄດ້ຮວບຮວມໂອສເຕັຍ ເຂົ້າເປັນຮັຖ
ຂອງເຢຣະມັນແລ້ວ, ຄວາມຕ້ອງການທີ່ຢາກຢຶດຄອງ ຊຸເດີຕັນ,
ດິນແດນຂອງປະເທດເຊັກໂກສໂລວາເກັຍນັ້ນ ອາດຈະພາໃຫ້ເກີດ
ເສິກສົງຄາມໃນເວລາໃດກໍໄດ້.

ການລົ້ມເຫລວຂອງການປ້ອງກັນປະຊາທິປະໄຕ ໃນສົງຄາມ
ໂລກຄັ້ງທີ່ໜຶ່ງນັ້ນ, ໄດ້ເຮັດໃຫ້ຊາວອະເມຣິກັນ ມີຄວາມເຂົ້າໃຈອັນ
ຖືກຕ້ອງແລະປະກາດວ່າ ບໍ່ວ່າຈະຢູ່ໃນກໍຣະນີໃດໆກໍຕາມ, ປະເທດ
ທີ່ກໍ່ສົງຄາມນັ້ນຈະຂໍຄວາມຊ່ວຍເຫລືອຈາກສະຫະຣັຖບໍ່ໄດ້ເດັດຂາດ.
ກົດໝາຍວ່າດ້ວຍຄວາມເປັນກາງ ໄດ້ອອກ ໃນປີ ໑໙໓໔ ຫາປີ
໑໙໓໗, ຊຶ່ງກົດໝາຍນັ້ນຫ້າມບໍ່ໃຫ້ສະຫະຣັຖຕິດຕໍ້ຄ້າຂາຍກັບປະເທດ
ທີ່ກໍ່ສົງຄາມ ເພາະວ່າ ຈຸດປະສົງຂອງກົດໝາຍນີ້ກໍ່ເພື່ອປ້ອງກັນບໍ່ໃຫ້
ສະຫະຣັຖກ່ຽວຂ້ອງນຳສົງຄາມທີ່ບໍ່ກ່ຽວກັບຊາວອະເມຣິກັນ.

ທັງປະທານາທິບໍດີ ຣູສເວລ໌ ແລະຣັຖມົນຕຣີການຕ່າງປະ
ເທດຄື ທ່ານຮູລ, ຕ່າງກໍຄັດຄ້ານ ບໍ່ເຫັນດີນຳກົດໝາຍນີ້. ບັດນີ້
ທ່ານປະທານາທິບໍດີ ມີພາລະທີ່ຈະເຮັດໃຫ້ຊາວອະເມຣິກັນ ເຫັນວ່າ
ການທຳລາຍກຳລັງເຫລົ່ານີ້ ໄດ້ດຳເນີນມາແລ້ວ ແລະອະເມຣິການີ
ກຳລັງອາວຸດພຽງພໍໃນການປ້ອງກັນຕົວເອງໃຫ້ມີກຳລັງອັນເຂັ້ມແຂງ

ທັງດ້ານກຳລັງໃຈແລະວັດຖຸ. ທ່ານໄດ້ເຮັດທຸກສິ່ງທຸກຢ່າງເພື່ອໃຫ້ກອງທັບເຮືອຂອງອະເມຣິກາເຂັ້ມແຂງ ແລະທ່ານໄດ້ປະຕິເສດບໍ່ຮັບຮູ້ຮັຖ ຊຶ່ງຖືວ່າເປັນພຽງຮູ່ນຂອງແມນຈູກູໂອ. ເຊັ່ນດຽວກັນ ກັບທ່ານຮູລທີ່ໄດ້ພຍາຍາມສ້າງຄວາມສາມັກຄີ ແລະຫມັ້ນຄົງໄວ້ກັບທຸກໆຊາດໃນເຄີ່ງຊີກຂອງໂລກທາງພາກຕະເວັນຕົກ, ໂດຍດຳເນີນນະໂຍບາຍແບບເພື່ອນບ້ານໃກ້ຄຽງທີ່ດີ. ເມື່ອທ່ານຮູສໄດ້ເຮັດສັນຍາແລກປ່ຽນສິນຄ້າກັບປະເທດຕ່າງໆໃນອະເມຣິກາໃຕ້ ໃນປີ ຈມມ້ຫ ນັ້ນ ສະຫະຮັຖໄດ້ຮ່ວມທັງເຮັດສັນຍາຮັບຮູ້ເຂດແດນ ກັບຫົກປະເທດໃນອະເມຣິກາໃຕ້ ໂດຍຂໍ້ຮອງໃຫ້ປະເທດຕ່າງໆເຫລົ່ານີ້ຮັບຮູ້ ບໍ່ໃຫ້ມີການລ່ວງລຳ້ເຂດແດນຂອງກັນແລະກັນໂດຍກຳລັງທະຫານ. ເມື່ອລັດທິແບບການຮວມຫມູ່ທະວີການລຸກລານຍິ່ງຂຶ້ນ, ຮິດເລີໄດ້ເພີ້ມອຳນາດບີບເຕັງ ປະເທດໂປແລນ, ເດັນມ້າກ, ນໍເວ, ໂຮແລນ, ເບລຢຽມ, ແລະປະເທດຝຣັ່ງເສດ, ຊຶ່ງເຮັດໃຫ້ກຳລັງໃຈ ຂອງຊາວອະເມຣິກັນຍິ່ງເຂັ້ມແຂງຂຶ້ນ. ບາດກ້າວຂັ້ນທຳອິດ ຂອງຊາວອະເມຣິກັນນັ້ນກໍຄື, ພຍາຍາມຫລີກເວັ້ນສົງຄາມຂັດແຍ້ງຂອງຊາວຢູໂຣບ, ແຕ່ໃນຊົ່ວຣະຍະເວລານຶ່ງ ເຂົາເຈົ້າຮູ້ສຶກວ່າ ການຮວມອຳນາດຊຶ່ງຂົ່ມຂູ່ຕໍ່ຄວາມປອດໄພຂອງທຸກຊາດນີ້ ອາດຈະຫມາຍເຖິງການຂົ່ມຂູ່ຕໍ່ຄວາມປອດໄພຂອງຕົນດ້ວຍ.

ຄວາມເຊື່ອຖືຕາມທີ່ໄດ້ຄິດໄວ້ນັ້ນກໍເປັນຈິງຂຶ້ນມາຢ່າງໄວທັນ

ໃຈ ເມື່ອຝຣັ່ງເສດຖີກຢຶດຄອງ ແລະທັງໝົດນີ້ໄດ້ສະແດງໃຫ້ເຫັນ ເຖິງອຳນາດ ແລະອິດທິພົລທາງທະຫານ ຂອງພວກນາຊີ. ໃນປີ ໑໙໔໐ ເມື່ອປະເທດອັງກິດຖີກໂຈມຕີທາງອາກາດໃນຣະດູຮ້ອນປີນັ້ນ ຊາວອະເມຣິກັນຫລາຍຄົນ ບໍ່ຄິດຢາກຕັ້ງຕົວເປັນກາງຕໍ່ໄປອີກແລ້ວ, ດັ່ງນັ້ນ ສະຫະຣັຖ ໄດ້ໂຮມກັນ ກັບສາທາຣະນະຣັຖ ອື່ນໆໃນ ອະ ເມຣິກາໃຕ້ ເພື່ອປ້ອງກັນຊາດທີ່ມີປະຊາທິປະໄຕເຄຶ່ງຊີກໂລກທາງ ພາກຕະເວັນຕົກ ແລະສະຫະຣັຖ ແລະການາດາໄດ້ຈັດຕັ້ງການປ້ອງ ກັນປະເທດຮ່ວມກັນ. ສະພາກົງແກຣສ ຕ້ອງສູ້ໜ້າກັບ ສະຖານະ ການຮ້າຍແຮງຫລາຍຢ່າງ ຊຶ່ງເພີ່ມຂຶ້ນມາເລື້ອຍໆ ໂດຍໄດ້ອະນຸມັດ ເງິນກ້ອນໃຫຍ່ຈຳນວນນຶ່ງສຳລັບໄວ້ສ້າງສົມອາວຸດ. ໃນເດືອນກັນ ຍາປີ ໑໙໔໐, ກົດໝາຍວ່າດ້ວຍການເກນທະຫານໃນຍາມສງົບໄດ້ ປາກົດອອກມາເປັນເທື່ອທຳອິດໃນປະວັດສາດອະເມຣິກັນ.

ໃນການເລືອກຕັ້ງປະທານາທິບໍດີຂອງປີ ໑໙໔໐, ການໂຄ ສະນາສ່ວນຫລາຍ ແມ່ນເນັ້ນເຖິງຄວາມສຳຄັນ ຂອງການກ້ອນໂຮມ ຄວາມຮູ້ສຶກນຶກຄິດ ຂອງຊາວອະເມຣິກັນ. ສ່ວນຜູ້ທີ່ເຄີຍຄັດຄ້ານ ທ່ານຣູສເວລ໌ ຄືທ່ານແວລເດີລ ວິລກີ, ກໍກັບມາສນັບສນູນ ນະໂຍ ບາຍຕ່າງປະເທດ ຂອງທ່ານຣູສເວລ໌ ແລະໃນເມື່ອທ່ານເຫັນດີນຳ ໂຄງການດຳເນີນງານພາຍໃນປະເທດແລ້ວ ທ່ານກໍຂາດຜູ້ແຂ່ງຂັນ, ແລະໃນການເລືອກຕັ້ງ ໃນເດືອນພຶສຈິກາຂອງປີນັ້ນ ສຽງສ່ວນໃຫຍ່

ແມ່ນສນັບສນູນ ໃຫ້ທ່ານຣູສເວລຕ໌ດຳຣົງຕຳແໜ່ງຕໍ່ໄປ ແລະນັບວ່າ ເປັນເທື່ອທຳອິດໃນປະວັດສາດອະເມຣິກັນ ທີ່ປະທານາທິບໍດີຄົນດຽວ ຄອງຕຳແໜ່ງເຖິງສາມຄັ້ງຕິດຕໍ່ກັນ.

ໃນຂນະທີ່ຊາວອະເມຣິກັນ ເຝົ້າເບິ່ງວິຖີທາງຂອງສົງຄາມຢູ ໂຣບຢູ່ນັ້ນ, ຄວາມຕຶງຄຽດທາງດ້ານຕະເວັນອອກໄກກໍທະວີຂຶ້ນຕາມ ລຳດັບ ດ້ວຍຄວາມກະຕືລືລົ້ນ ຢາກສວຍໂອກາດເພີ່ມທີ່ໝັ້ນທາງຍຸທ ສາດ, ຍີ່ປຸ່ນກໍດ້ານປະກາດຄຳສັ່ງອອກໝາໃຫມ່ອີກ ຊຶ່ງຍີ່ປຸ່ນຫວັງ ຈະຄອບຄອງດ້ານຕະເວັນອອກໄກທັງໝົດ ຮວມທັງພາກມະຫາສມຸດ ແປຊີຟິກດ້ວຍ. ເມື່ອເຫັນວ່າ ບໍ່ມີທາງຈະສູ້ແລ້ວ, ອັງກິດ ຈຶ່ງໄດ້ ຖອນຕົວອອກຈາກຂຸງຣາຍແລະປິດຫົນທາງພະມ້າເປັນການຊົ່ວຄາວ ໃນຣະດູ້ຮ້ອນຂອງປີ ໑໙໔໐ ນັ້ນ, ຍີ່ປຸ່ນໄດ້ໃຊ້ຂນະ ຈາກຣັຖບານທີ່ ອ່ອນກຳລັງຂອງທ່ານ ວີຊີ ແລະໄດ້ຮັບອະນຸຍາດ ໃຫ້ໃຊ້ເດີນຍົນ ຕ່າງໆໄດ້ໃນອິນໂດຈີນ ຊຶ່ງຢູ່ພາຍໃຕ້ການປົກຄອງຂອງຝຣັ່ງເສດ. ຫລັງຈາກຍີ່ປຸ່ນໄດ້ເຂົ້າຮ່ວມກັບໂຮມແລະເບີລິນໃນເດືອນກັນຍາແລ້ວ ສະຫະຣັຖ ກໍໄດ້ອອກຄຳສັ່ງຫ້າມບໍ່ໃຫ້ຕິດຕໍ້ຄ້າຂາຍກັບຍີ່ປຸ່ນເປັນເດັດ ຂາດ.

## <u>ສົງຄາມດຳເນີນຕໍ່ໄປຢ່າງແທ້ຈິງ</u>

ເມື່ອເຖິງປີ ໑໙໔໐, ປາກົດວ່າຍີ່ປຸ່ນມີທ່າທີວ່າຈະປົ່ນຈຸດສົມ

ໃຈຂອງເຂົາໄປທາງໃຕ້ ຊຶ່ງມີບໍ່ນ້ຳມັນ, ສີ ລາດ, ແລະຢາງຍືດ ຂອງມາລາຢູ ຊຶ່ງຢູ່ພາຍໃຕ້ການປົກຄອງຂອງອັງກິດແລະນິເທີແລນ. ໃນເດືອນກໍຣະກະດາປີ ໑໙໔໐, ເມື່ອຣັຖບານຂອງວີຊີໄດ້ອະນຸຍາດ ໃຫ້ຍີ່ປຸ່ນຄອບຄອງສ່ວນທີ່ເຫລືອ ຂອງອິນໂດຈີນຫ້ວຫມົດນັ້ນ, ສະຫະ ຣັຖກໍສັ່ນສະທ້ອນ ຕໍ່ການຄອບຄອງ ຂອງຍີ່ປຸ່ນຄັ້ງນີ້. ໃນວັນທີ ໑໙ ເດືອນພຶສຈິກາ, ຫລັງຈາກນາຍພົນໂຕໂຈໄດ້ເຂົ້າຮັບຕຳແຫນ່ງເປັນ ຜູ້ນຳຂອງຍີ່ປຸ່ນແລ້ວ, ຣັຖບານຍີ່ປຸ່ນໄດ້ສົ່ງຜູ້ຕາງຫນ້າພິເສດ ຄືທ່ານ ຊາບູໂຣ ກູຣູຊູ ມາສະຫະຣັຖ ແລະກູຣູຊູປະກາດວ່າ ການມາສະຫະ ຣັຖຂອງເຂົາເທື່ອນີ້ເພື່ອມາທຳຄວາມເຂົ້າໃຈແບບສັນຕິວິທີ ແລະໃນ ວັນທີ ຝ ເດືອນທັນວາ, ປະທານາທິບໍດີຣູສເວລຕ໌ ໄດ້ສົ່ງຄຳຮຽກ ຮ້ອງເພື່ອສັນຕິພາບເປັນການສ່ວນຕົວໄປຍັງຈັກພັດຍີ່ປຸ່ນແລະຕື່ນເຊົ້າ ມາຂອງວັນທີເຈັດເດືອນທັນວາ, ຍີ່ປຸ່ນໄດ້ໃຫ້ຄຳຕອບ ໂດຍການສົ່ງ ເຮືອບິນມາຖິ້ມຣະເບີດໃສ່ຖານທັບອະເມຣິກັນທີ່ເພີລຮາເບີ.

ລາຍຣະອຽດຂອງການໂຈມຕີ ຂອງຍີ່ປຸ່ນເທື່ອນີ້, ມີການຖິ້ມ ຣະເບີດ ໃສ່ຮາວາຍ, ໃສ່ຣະຫວ່າງກາງທາງ, ເກາະເວກ, ແລະກວມ. ຂ່າວຫ້ວຫມົດນີ້ ແມ່ນສະຖານີວິທຍຸຂອງອະເມຣິກັນໄດ້ ອອກອາກາດໃຫ້ປະຊາຊົນ ໄດ້ຊາບທົ່ວເຖິງກັນ ແລະເຫດການຫ້ວ ຫມົດນີ້ໄດ້ພາໃຫ້ທ່ານປະທານາທິບໍດີຣູສເວລຕ໌ ຄຽດແຄ້ນທີ່ສຸດ ແລະ ທ່ານປະທານວ່າການກະທຳຊົ່ນນີ້ ເປັນການກະທຳຂອງຄົນຂີ້ຢ້ານທີ່

ດັກໂຈມຕີ ຄົນທາງຫລັງ. ດັ່ງນັ້ນ, ໃນວັນທີ ໘ ເດືອນທັນວາ, ສະພາກົງແກຣສໄດ້ປະກາດພາວະສົງຄາມກັບຍີ່ປຸ່ນ ແລະສາມວັນຕໍ່ມາ ເຢຣະມັນແລະອິຕາລີກໍໄດ້ປະກາດສົງຄາມກັບສະຫະຣັຖ.

ສຳລັບຊາວອະເມຣິກັນແລ້ວ, ເຂົາເຈົ້າຖືວ່າການຕົກລົງໃຈເຂົ້າສູ່ສົງຄາມນີ້ ປຽບເໝືອນໄຊຊນະ ອັນຍິ່ງໃຫຍ່ ທາງປຣັຊຍາ ເພາະວ່າ ເຂົາເຈົ້າບໍ່ເຄີຍມັກຫລີຍໝັບເອົາລັດທິທະຫານແຕ່ໃດໆ ມາ ແລະເມື່ອເຫດການເຖິງຂັ້ນນີ້ແລ້ວ ຣັຖທັມມະນູນຂອງສະຫະຣັຖ ຈຳຕ້ອງຮັບເອົາຣະບຽບໃໝ່ ເພື່ອປ້ອງກັນຊີວິດ ຂອງຊາວອະເມຣິກັນໄວ້. ຢ່າງໃດກໍດີ, ຊາວອະເມຣິກັນທົ່ວໆໄປຖືວ່າສົງຄາມເປັນສິ່ງໂຫດຮ້າຍ ແລະອັປໂຍດ, ແຕ່ກໍເປັນສິ່ງຈຳເປັນທີ່ສຸດ ໃນປະວັດສາດຂອງປະເທດຊາດ ແລະບໍ່ມີຊາວອະເມຣິກັນຄົນໃດ ຄິດວ່າສົງຄາມນັ້ນມີຈຸດໝາຍ, ນອກຈາກຄວາມຄົງຢູ່ຂອງສັນຕິພາບເທົ່ານັ້ນ. ໃນວັນທີ ໙ ເດືອນທັນວາ, ປະທານາທິບໍດີຣູສເວລຕ໌ໄດ້ສົ່ງສານໄປຍັງຊາວອະເມຣິກັນທັງຫລາຍໂດຍມີເນື້ອຄວາມດັ່ງນີ້: "ຈຸດໝາຍປາຍທາງອັນແທ້ຈິງ ທີ່ພວກເຮົາຊອກຫານັ້ນຍັງໄກ ແລະເໝືອກວ່າສນາມຮົບ ອັນບໍ່ຈົບບ່ວງນີ້. ເມື່ອເຮົາຈຳເປັນ ຕ້ອງໃຊ້ກຳລັງ, ພວກເຮົາໄດ້ຕັດສິນໃຈແລ້ວວ່າ ການໃຊ້ກຳລັງນີ້ຈະນຳພາພວກເຮົາໄປສູ່ຄວາມດີ ໂດຍປາບຄວາມຊົ່ວຮ້າຍໃຫ້ສູນຫາຍໄປ. ພວກເຮົາ ຊາວອະເມຣິກັນບໍ່ແມ່ນເປັນຜູ້ທຳລາຍ ພວກເຮົາເປັນຜູ້ສ້າງ."

ຫລັງຈາກນັ້ນ ຄົນໃນຊາດໄດ້ຮິບຟ້າວຕັ້ງຕົວ ໂດຍໃຊ້ຄວາມ
ພຍາຍາມທ້ອນໂຮມກຳລັງພົລ ແລະຄວາມສາມາດໃນດ້ານອຸດສາຫະ
ກັມ. ໃນວັນທີ ຝ ເດືອນມະກະຣາ ປີ ໑໙໔໘, ປະທານາທິບໍດີ
ຣູສເວລ໌ໄດ້ປະກາດໃຫ້ເພີ້ມພົລຜລິດ ຕາມຈຸດມຸ້ງໝາຍ ຊຶ່ງຖ້າຈະ
ປຽບໃສ່ໃນຍາມສງົບແລ້ວ ສິນຄ້າທີ່ສັ່ງຜລິດເພີ້ມນີ້ ຄົງເຫລືອຫລາຍ
ເກີນກວ່າຊາດຕ້ອງການ. ໃນປີດຽວນັ້ນ, ທ່ານສັ່ງໃຫ້ໂຮງງານ
ຜລິດເຮືອບິນ ຝ໐,໐໐໐ ລຳ, ຣົຖຖົງ ๔๕,໐໐໐ ຄົນ, ປືນຕໍ່ຕານ
ອາກາດສະຍານ ๘໐,໐໐໐ ກະບອກ, ເຮືອບິນສົ່ງສິນຄ້າອີກຊຶ່ງບັນ
ທຸກນ້ຳໜັກໄດ້ເຖິງ ໑๗,໐໐໐,໐໐໐ ຕອນ, ກິຈການຕ່າງໆ ໃນ
ຊາດມີການເຄື່ອນໄຫວກັນຢ່າງໃຫຍ່ ເຊັ່ນ: ການປູກຝັງ, ການ
ທັຖກັມ, ການຂຸດບໍ່, ການຄ້າ, ການດຳເນີນອຸຕກາມ, ການລົງ
ທຶນ, ການຄົມນາຄົມ, ແລະແມ່ນແຕ່ການສຶກສາແລະວັທນະທັມກໍໄດ້
ເອົາໃຈໃສ່ເປັນຢ່າງດີ ແລະໄດ້ມີການຄວບຄຸມຂຍາຍໃຫ້ໃຫຍ່ຂຶ້ນ.
ໄດ້ມີການຫາເງິນລາຍໄດ້ເພີ້ມຂຶ້ນຈຳນວນຫລວງຫລາຍ, ອຸດສາຫະ
ກັມໃຫຍ່ແນວໃໝ່ກໍໄດ້ຖືກຈັດຕັ້ງຂຶ້ນ, ໄດ້ມີການນຳເອົາວິທີເຕັກນິກ
ແບບໃໝ່ມາໃຊ້ ໃນການຜລິດກຳປັ່ນ ແລະເຮືອຂນາດຫລວງຫລາຍ
ແລະປະຊາຊົນໄດ້ພາກັນຍົກຍ້າຍທີ່ຢູ່ອາໄສເປັນຈຳນວນຫລວງຫລາຍ
ຫລັງຈາກກົດໝາຍ ກ່ຽວກັບການເກັນທະຫານ ໄດ້ອອກມາແລ້ວ,
ກອງທັບຂອງສະຫະຣັຖມີພົລທະຫານທັງໝົດ ๑๕,๑໐໐,໐໐໐ ຄົນ.

ເມື່ອເຖິງທ້າຍປີ ໑໙໔໓, ມີບັນດາຜູ້ຊາຍແລະຜູ້ຍິງທີ່ເຂົ້າຮັບໃຊ້ໃນ ກອງທັບປະມານ ຝ໔,ooo,ooo ຄົນ.

ເມື່ອສະຫະຣັຖຈຳຕ້ອງເຂົ້າສູ່ເສິກສົງຄາມຊຸ້ນນີ້ ສະຫະຣັຖ ກໍໄດ້ຕັດສິນໃຈວ່າຄວາມພຍາຍາມສ່ວນໃຫຍ່ໃນດ້ານທະຫານຄວນຈະ ທຸ້ມເທກຳລັງຂອງພັນທະມິດ ຂອງປະເທດຕະວັນຕົກໄປທາງຢຸໂຣບ ດ້ວຍວ່າ ກຳລັງສ່ວນໃຫຍ່ຂອງສັດຕູແມ່ນຢູ່ທາງນັ້ນ. ໃນຂນະດຽວ ກັນນັ້ນ, ເສິກສົງຄາມ ໃນແຖບມະຫາສມຸດແປຊີຟິກ ໄດ້ຈັດຢູ່ໃນອັນ ດັບສອງ, ແຕ່ແນວໃດກໍດີ, ໃນປີອັນມືດມົນຂອງ ໑໙໔໘ ນັ້ນ, ຜົນ ສຳເຣັດທີ່ສຳຄັນທີ່ສຸດ ໃນຄັ້ງທຳອິດແມ່ນຢູ່ທາງແປຊີຟິກ ແລະຄວາມ ສຳເຣັດຄັ້ງນີ້ແມ່ນຜົລການປະຕິບັດງານຂອງກອງທັບເຮືອ ແລະກອງ ທັບອາກາດ. ໃນເດືອນພຶສພາປີ ໑໙໔໘, ກຳລັງຂອງຍີ່ປຸ່ນໄດ້ຮັບ ຄວາມເສັຍຫາຍ ໃນການສູ້ຣົບທີ່ທະເລຄໍຣາລ ຈົນວ່າຍີ່ປຸ່ນເລີກລົ້ມ ຄວາມຄິດທີ່ຈະໂຈມຕີອອສເຕຣເລັຍ ໃນເດືອນມິຖຸນາ ເຮືອບິນຂອງ ກອງທັບອາກາດອະເມຣິກັນ ໄດ້ເຣັດໃຫ້ສັດຕູຕ້ອງພົບກັບຄວາມເສັຍ ຫາຍຢ່າງໃຫຍ່ຫລວງຢູ່ທີ່ເຄິ່ງທາງໄປຫາດອນ ໃນເດືອນສິງຫາ ໄດ້ ມີການປະຕິບັດງານຮ່ວມກັນຣະຫວ່າງກອງທັບບົກ ແລະກອງທັບເຮືອ ຊຶ່ງໄດ້ນຳຜົນສຳເຣັດມາໃຫ້ກອງທັບອະເມຣິກັນ ຊຶ່ງສາມາດຍຶດໄດ້ທີ່ ໝັ້ນຮ່ວງແລບກາດາລແລະໄດ້ຮັບໄຊຊະນະທາງນ່ານນ້ຳຮ່ວມອື່ນໆອີກ ເຊັ່ນໄຊຊະນະໃນການສູ້ຣົບ ທີ່ທະເລບິສມາກ. ຄວາມຫວັງໃນການ

ໄດ້ໄຊຊນະ ຈາກການສູ້ຮົບນັ້ນ ມີເພີ້ມຂຶ້ນ ເມື່ອເວລາທາງກອງທັບ ເຮືອໄດ້ເພີ້ມຄວາມໄວຂຶ້ນຢ່າງບໍ່ຫນ້າເຊື່ອ ຊຶ່ງເນື່ອງມາຈາກການ ສ້າງເຮືອມີເພີ້ມຂຶ້ນຫລາຍ.

## ພັນທະມິດໄດ້ເຮັດໃຫ້ອຳນາດຮ່ວມຂອງຜູ້ກໍ່ສົງຄາມຜ່າຍແພ້

ໃນເວລາດຽວກັນນັ້ນ, ການສົ່ງອາວຸດ ຍຸທໂທປະກອນໄດ້ ເລີ້ມຫລັ່ງໄຫລ ໄປທາງຢຸໂຣບ. ໃນຣະດູຮ້ອນ ຂອງປີ ຈຈ.ຄ.ຄ, ເມື່ອໄດ້ຮັບກຳລັງສນັບສນູນ ຈາກກອງທັບອະເມຣິກັນແລ້ວ, ກຳລັງ ຂອງກອງທັບອັງກິດຊຶ່ງເຂັ້ມແຂງຂຶ້ນ ທັງຍັງໄດ້ຕີຂັບໄລ່ເຢຣະມັນໃຫ້ ອອກໄປຈາກທີ່ຫມັ້ນທີ່ອີຢິບ ແລະໄດ້ຕີຍູ້ໂຣມເມລ ໃຫ້ຖອຍອອກໄປ ຮອດຕຣິໂປລີ, ແລະໄດ້ເຮັດໃຫ້ຊູເອັສ ພົ້ນຈາກການຂົ່ມຂູ່ຕໍ່ໄປແລະ ໃນວັນທີ ກ ເດືອນພຶສຈິກາປີ ຈຈ.ຄ.ຄ, ກຳລັງທັບອະເມຣິກັນໄດ້ໄປ ຕັ້ງຢູ່ທາງອາຟຣິກາພາກເຫນືອ ຊຶ່ງຢູ່ພາຍໃຕ້ ການປົກຄອງຂອງ ຝຣັ່ງເສດ. ຫລັງຈາກການສູ້ຮົບ ທີ່ຂົມຂຶ້ນ, ກອງທະຫານອິຕາລີ ແລະເຢຣະມັນ ໄດ້ພົບກັບຄວາມຜ່າຍແພ້ຢ່າງໃຫຍ່ຫລວງ ເພາະວ່າ ທະຫານໃນກອງທັບ ນ.ຄ.ຄ,ooo ຄົນ ໄດ້ຖືກຈັບເປັນຊເລີຍເສີກໃນ ກາງຣະດູຮ້ອນຂອງປີ ຈຈ.ຄ.ນ, ຢູ່ທາງແຄມຝັ່ງດ້ານໃຕ້ ຂອງທະເລ ເມດິເຕີເຣນຽນ ກໍໄດ້ຖືກປົດປ່ອຍຈາກການຍຶດຄອງຂອງກຳລັງ ທະ ຫານຟາຊິສຫມົດ. ຕໍ່ມາໃນເດືອນກັນຍາ, ຣັຖບານອິຕາລີ ໄດ້ຖືກ

ຈັດຕັ້ງຂຶ້ນໃຫມ່ໂດຍພາຍໃຕ້ການນຳຂອງນາຍພົນບາໂດກລິໂອ ຊຶ່ງ
ໄດ້ເຊັນສັນຍາຢຸດຍິງຈົ່ວຄາວແລະໃນເດືອນຕໍ່ມາຄື ເດືອນຕຸລາ, ອິ
ຕາລີໄດ້ປະກາດສົງຄາມຮ່ວມກັບເຢຣະມັນໃນຂນະທີ່ມີການສູ້ຮົບຢ່າງ
ຫນັກຢູ່ອິຕາລີນັ້ນ, ສ່ວນກຳລັງທະຫານພັນທະມິດກໍໄດ້ທຳການໂຈມຕີ
ທາງອາກາດໃສ່ທາງຣົຖໄຟ, ໂຮງງານ, ແລະສາງອາວຸດຂອງເຢ
ຣະມັນ ແລະເລີກລົງໄປໃນທະວີບນ້ ມີບໍ່ນ້ຳມັນຂອງເຢຣະມັນທີ່ໂປລ
ແອສຕີ ໃນປະເທດຮູເມເນັຍກໍຖືກໂຈມຕີຄືກັນ.

ຕົກມາໃນທ້າຍປີ ໑໙໔໓, ຫລັງຈາກຝ່າຍພັນທະມິດ ໄດ້ຖືກ
ຖຽງກັນເຣື່ອງຍຸທສາດແລ້ວ, ໄດ້ມີການຕົກລົງກັນວ່າ ຈະເປີດລ້ຽ
ທີ່ຫມັ້ນຂອງຝ່າຍຕະເວັນຕົກຂຶ້ນ ເພື່ອຈະຂັບໄລ່ກຳລັງເຢຣະມັນ ໃຫ້
ແຕກກະຈັດກະຈາຍ ໄປຈາກປ້ອມທີ່ຫມັ້ນຢູ່ທາງເຂດຣັສເຊັຍ ດີກວ່າ
ຫນັກໄປໃນການປະຕິບັດງານ ທີ່ອິຕາລີ. ຕໍ່ມາ ນາຍພົນ ໄອເຊັນ
ຮາວເວີ ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ບັງຄັບບັນຊາສູງສຸດ ຂອງກອງທັບ
ແລະການຕຽມຫລາຍສິ່ງຫລາຍຢ່າງຈະຕ້ອງຮີບເຣັ່ງ. ໃນວັນທີ ຝ
ເດືອນມິຖຸນາຊຶ່ງໃນຂນະທີ່ຣັສເຊັຍກຳລັງເລັ່ມການໂຈມຕີຢູ່ນັ້ນ, ທະ
ຫານຊຸດທຳອິດຂອງກອງທັບອະເມຣິກັນແລະອັງກິດໄດ້ບຸກລຸກເຂົ້າໄປ
ເຖິງຫາດຊາຍຂອງນໍມັນດີ ໂດຍໄດ້ຮັບການອາຣັກຂາ ຈາກກອງທັບ
ອາກາດ. ເມື່ອເວລາທາງຫົວຫາດຖືກຍຶດເອົາແລ້ວ, ກຳລັງທະ
ຫານໄດ້ຫລັ່ງໄຫລເຂົ້າມາຕື່ມ ແລະກອງທະຫານປ້ອງກັນຂອງເຢຣະ

ມັນຈຳນວນຫລວງຫລາຍໄດ້ຖືກຫຼ້ມລ້ອມແລະໃນທີ່ສຸດກອງທັບຂອງພັນ ທະມິດໄດ້ເລີ້ມເຄື່ອນຍ້າຍຂ້າມປະເທດຝຣັ່ງ ແລະມຸ້ງຫນ້າໄປຍັງເຍ ຣະມັນໂດຍລຸກຄືບຫນ້າໄປຢ່າງບໍ່ທີ້ຖອຍ. ນະຄອນປາຣີ ໄດ້ຖືກປົດ ປ່ອຍໃນ ວັນທີ ๘๕ ສິງຫາ. ຢູ່ທີ່ເຂດຊາຍແດນ ຂອງເຢຣະມັນ, ກຳລັງຂອງພັນທະມິດໄດ້ເລື່ອນເວລາໄປອີກດ້ວຍວ່າ ມີການຕໍ່ສູ້ອັນສູ້ ຊົນຂອງສັດຕູ, ແຕ່ໃນເດືອນກຸມພາແລະເດືອນມີນາປີ ๑๗๔๕, ກຳ ລັງທະຫານ ໄດ້ຫລັ່ງໄຫລເຂົ້າໄປໃນເຢຣະມັນທາງພາກຕະເວັນຕົກ ແລະກອງທັບຂອງເຢຣະມັນ ໄດ້ຖອຍຫນີໄປ ຕັ້ງຢູ່ທາງດ້ານຕະເວັນ ອອກ. ໃນວັນທີ ຊ ພຶສພາ, ສ່ວນທີ່ເຫລືອ ນຶ່ງສ່ວນສາມຂອງປະ ເທດເຢຣະມັນ ໄດ້ຍອມຜ່າຍແພ້ທັງທາງບົກ, ທາງທະເລ, ແລະ ທາງອາກາດ.

ໃນເວລາດຽວກັນນັ້ນ, ການສູ້ຣົບຂອງທະຫານ ອະເມຣິກັນ ທາງມະຫາສມຸດແປຊິຟິກ ກໍໄດ້ມີການຄືບຫນ້າຫລາຍຂຶ້ນ. ເມື່ອກຳ ລັງທະຫານອະເມຣິກັນ ແລະໂອສເຕຣລຽນໄດ້ຕີແຫຍ້ຂຶ້ນ ເມື່ອທາງ ເຫນືອຕາມແຖວເກາະດອນຜ່ານ ໂສໂລມອນສ່, ນິວບຣິຕັນ, ນິວກີ ເນັຍ ແລະ ຍູເກນວິລ ແລະກຳລັງຂອງກອງທັບເຣືອຍິ່ງເພີ້ມກຳລັງ ຂຶ້ນ ຈຶ່ງສາມາດຕັດທາງ ສົ່ງສະບຽງຂອງຍີ່ປຸ່ນ. ໃນເດືອນຕຸລາປີ ๑๗๔๔, ກຳລັງກອງທັບເຣືອ ໄດ້ໄຊຊນະ ທີ່ທະເລຟິລິບປິນ. ບົດ ບາດໃດໆທີ່ຈະດຳເນີນຕໍ່ໄປ ໃນເກາະໄອໂວຈິມາ ແລະໂອກີນາວາ

ໄດ້ພາໃຫ້ເຫັນແລ້ວວ່າ ການສູ້ໂຕ້ຕອບຂອງຍີ່ປຸ່ນນັ້ນອາດຈະດຳເນີນ
ໄປເປັນເວລາມານ, ແມ່ນວ່າຈະເປັນທີ່ໝັ້ນບ່ອນສຸດທ້າຍໂດຍຂາດ
ຄວາມຫວັງຂອງຍີ່ປຸ່ນກໍຕາມ, ແຕ່ສົງຄາມໄດ້ຢຸດຕິລົງຢ່າງກະທັນຫັນ
ໃນເດືອນສິງຫາຫລັງຈາກຝ່ງບົມອະເມຣິກັນໄດ້ຖິ້ມຣະເບີດໃສ່ເມືອງ
ຮິໂຣຊິມາ ແລະນາກາສາກິ. ໃນທີ່ສຸດ, ຍີ່ປຸ່ນກໍຕ້ອງຍອມຜ່ຍແພ້
ໃນວັນທີ ८ ເດືອນກັນຍາປີ ໑໙४४.

ດ້ວຍຄວາມພຍາຍາມ ຂອງທະຫານພັນທະມິດ, ການປະຊຸມ
ຣະຫວ່າງຊາດຄັ້ງສຳຄັນກໍໄດ້ເປີດຂຶ້ນ ເພື່ອພິຈາຣະນາ ນະໂຍບາຍ
ການເມືອງຂອງສົງຄາມ ໃນເວລາຂ້າງໜ້າ. ການປະຊຸມຄັ້ງທຳ
ອິດນັ້ນ, ໄດ້ເລີ້ມຂຶ້ນໃນເດືອນສິງຫາປີ ໑໙४໑ ຣະຫວ່າງປະທານາ
ທິບໍດີ ຣູສເວລ໌ ແລະນາຍົກຣັຖມົນຕີ ເຊີຊິລ ຂອງອັງກິດ ຊຶ່ງໃນ
ເວລານັ້ນ ສະຫະຣັຖບໍ່ທັນໄດ້ສູ້ຣົບຢ່າງເອົາຈິງເອົາຈັງເທື່ອ ແຕ່ສະ
ຖານະການທາງດ້ານທະຫານຂອງອັງກິດແລະຣັສເຊັຍປາກົດວ່າອ່ອນ
ກຳລັງທີ່ສຸດ. ທ່ານຣູສເວລ໌ແລະທ່ານເຊີຊິລໄດ້ພົບປະຫາລືກັນໃນ
ເຮືອຢູ່ກາງນ້ຳໃກ້ໆກັບນິວຟ້ານແລນ ແລະຍັງໄດ້ຕົກລົງເຊັນສັນຍາ
ວ່າດ້ວຍສົນທິສັນຍາແອດແລນຕິກ ໂດຍອີງໃສ່ຈຸດປະສົງຕາມພື້ນຖານ
ເຫລົ່ານີ້ ບໍ່ໃຫ້ຝ່າຍນຶ່ງຝ່າຍໃດຂຍາຍເຂດແດນຂອງຕົນ, ບໍ່ໃຫ້ມີ
ການປ່ຽນແປງເຂດແດນໃດໆ ໂດຍບໍ່ໄດ້ຖາມຄວາມສມັກໃຈຂອງປະ
ຊາຊົນທີ່ກ່ຽວຂ້ອງ, ໃຫ້ສິດທິປະຊາຊົນທີ່ຢູ່ໃນດິນແດນຫລີປະເທດນັ້ນ

ໄດ້ເລືອກຣະບຽບການປົກຄອງໂດຍເຂົາເຈົ້າເອງ, ໃຫ້ມີການຮ່ວມ
ໄມ້ຮ່ວມມືທາງເສຖກິດຣະຫວ່າງປະເທດ, ໃຫ້ທຸກຄົນມີເສຣີພາບ ບໍ່
ຫວາດຫວັ່ນຕໍ່ໄພສົງຄາມ, ເສຣີພາບໃນການເດີນທະເລ, ບໍ່ໃຫ້ໃຊ້
ກຳລັງທະຫານເປັນເຄື່ອງມືໃນດ້ານກິຈການຣະຫວ່າງຊາດ.

ການພົບປະກັນຄັ້ງຍິ່ງໃຫຍ່ອີກໄດ້ມີຂຶ້ນທີ່ເມືອງກາຊາບລັງກາ ໃນເດືອນມະກະຣາ ປີ ໑໙໔໓. ໃນການພົບປະຄັ້ງນີ້, ທີ່ປະຊຸມໄດ້ຕົກລົງກັນວ່າ ຄວາມສັນຕິທີ່ກ່າວມານີ້ ບໍ່ໄດ້ຮ່ວມເອົາພວກທ້ອມໂຮມອຳນາດນີ້ ເຂົ້ານຳແຕ່ຢ່າງໃດ, ນອກຈາກການຍອມແພ້ ທີ່ບໍ່ມີເງື່ອນໄຂໃດໆຫມົດ. ຈຸດປະສົງໃນການວາງກົດໄວ້ດັ່ງນີ້ ຊຶ່ງແມ່ນທ່ານຣຸສເວລຕ໌ ເປັນຜູ້ອອກຄວາມຄິດຂຶ້ນ, ກໍເພື່ອເຣັດໃຫ້ປະຊາຊົນຂອງປະເທດທີ່ໄດ້ທຳການສູ້ຣົບຄັ້ງນີ້ແນ່ໃຈວ່າ ຈະບໍ່ມີການເຈຣະຈາສງົບເສີກກັບຜູ້ຕາງໜ້າ ຂອງພວກຟາຊິສ ແລະນາຊິສ ເດັດຂາດ; ຈະບໍ່ມີການຕໍ່ວ່າໃດໆຫມົດ ກັບຜູ້ຕາງໜ້າ ຂອງອຳນາດດັ່ງກ່າວນີ້ ເພາະເຂົາພຽງປະສົງ ຢາກຮັກສາອິດທິພົນຂອງເຂົາໄວ້ ກ່ອນຈະມີການຍອມສງົບເສີກກັບເຢຣະມັນ, ອິຕາລີ ແລະຢີ່ປຸ່ນ. ດ້ານການທະຫານ ຊຶ່ງເປັນມາຍເຫມືອຫົວຂອງເຂົາເຈົ້າ, ຈະຕ້ອງຍອມຮັບວ່າ ການຄອງໂລກທັງໜົດຂອງເຂົາເຈົ້ານັ້ນພົ້ນສມັຍໄປແລ້ວ ແລະຈະພົບກັບການພ່າຍແພ້ທັງໜົດ.

## ອະວະສານຂອງສົງຄາມ

ຢູ່ທີ່ເມືອງເກເບັກ ໃນເດືອນສິງຫາປີ ຈຍ້ຜ້ມ ໄດ້ມີການປະຊຸມຣະຫວ່າງຜູ້ນຳຂອງອັງກິດແລະອະເມຣິກັນ ເພື່ອປຶກສາຫາລືແລະວາງແຜນການຕໍ່ສູ້ກັບຢີ່ປຸ່ນ ແລະການຍຸທສາດທາງດ້ານທະຫານແລະການທູດໃນອະນາຄົດ. ໃນສອງເດືອນຕໍ່ມາ, ຣັຖມົນຕຣີຕ່າງປະເທດຂອງອັງກິດ, ສະຫະຣັຖ ແລະຣັສເຊັຍ ໄດ້ພົບກັນຢູ່ທີ່ກູງໂມສກູ ແລະຜູ້ຕາງຫນ້າຂອງປະເທດເຫລົ່ານີ້ໄດ້ຢືນຢັນອີກຄັ້ງນຶ່ງເຖິງນະໂຍບາຍການຍອມແພ້ໂດຍປາສຈາກເງື່ອນໄຂໃດໆ ຊຶ່ງຈະເຣັດໃຫ້ອິດທິພົນຂອງພວກ າຊິສໃນອິຕາລີສັ້ນສຸດລົງ ແລະໃຫ້ຄືນເອກຣາຊໃຫ້ແກ່ປະເທດໂອສເຕຣັຍ, ແລະສັນຍາການຮ່ວມໄມ້ຮ່ວມມື ໃນອະນາຄົດຫລັງຈາກສົງຄາມສັ້ນສຸດລົງ ຣະຫວ່າງປະເທດມະຫາອຳນາດ ທີ່ມັກຄວາມສງົບ. ຢູ່ທີ່ກູງໄຄໂຣ, ທ່ານຣຸສແວລຕ້ແລະເຊີຊິລໄດ້ພົບປະກັບທ່ານຈຽງໄຄເຊັກ ແລະການຕົກລົງກ່ຽວກັບປະເທດຢີ່ປຸ່ນນັ້ນເປັນທີ່ເຫັນຊອບດ້ວຍກັນ ຊຶ່ງທັງຫມົດນີ້ ແມ່ນກ່ຽວກັບການປະພຶດຕົວບໍ່ດີຂອງຢີ່ປຸ່ນທີ່ໄດ້ຫຳການລຸກລານຫມູ່ໃນອະດີດ.

ທີ່ນະຄອນເຕເຮຣານ, ໃນວັນທີ ๔ຊ ພຶສຈິກາ, ທ່ານຣຸສແວລ້ຕ້, ທ່ານເຊີຊິສ, ແລະທ່ານສະຕາລິນ ໄດ້ຢືນຢັນຂໍ້ຕົກລົງຂອງການປະຊຸມທີ່ໂມສກູ ແລະໄດ້ຣຽກຮ້ອງຢາກໃຫ້ມີສັນຕິພາບຊົ່ວກາລະນານ ໂດຍຜ່ານອົງການສຫະປະຊາຊາດ.

ເກືອບສອງເດືອນຕໍ່ມາ, ຜູ້ນຳຂອງປະເທດເຫລົ່ານີ້ໄດ້ພົບພໍ້ກັນອີກຄັ້ງນຶ່ງ ທີ່ຢາລຕາ ໃນເດືອນກຸມພາປີ ໑໗໔໕, ແລະດ້ວຍໄຊຊະນະທີ່ໄດ້ຮັບຄັ້ງນີ້ໄດ້ພາໃຫ້ຫາຍຫ່ວງ ແລະໄດ້ມີການຕົກລົງອື່ນໆອີກ ຊຶ່ງຣັຖເຊັຍໄດ້ຕົກລົງຢ່າງເປັນທາງລັບວ່າ ຈະຮັດສົງຄາມກັບຢີ່ປຸ່ນ ຫລັງຈາກເຢຣະມັນຍອມແພ້ແລ້ວ ເຂດແດນທາງດ້ານຕະເວັນອອກຂອງໂປແລນນັ້ນ ໄດ້ກຳນົດໄວ້ຢູ່ທີ່ ເຄີຊອນ ໃນປີ ໑໗໑໗, ຫລັງຈາກໄດ້ມີການຖົກຖຽງກັນກ່ຽວກັບການສ້ອມແປງຂນານໃຫຍ່ຊຶ່ງທ່ານສະຕາລິນໄດ້ຮຽກຮ້ອງ ໃຫ້ເຢຣະມັນ ເປັນຜູ້ຮັບພາລະ. ກ່ຽວກັບເຣື່ອງນີ້, ທ່ານຣຸສເວລຕ໌ ແລະທ່ານເຊີຊິລໄດ້ຄັດຄ້ານບໍ່ເຫັນດີນຳ, ດັ່ງນັ້ນ ການຕົກລົງຈຶ່ງໄດ້ເລື່ອນກຳນົດອອກໄປອີກ, ແຕ່ຕໍ່ມາກໍໄດ້ມີການຕົກລົງກັນຄັກແນ່ກ່ຽວກັບການຢຶດຄອງຂອງກຳລັງພັນທະມິດໃນເຢຣະມັນ, ແລະການປົກຄອງ ພ້ອມທັງການຕັດສິນລົງໂທດອາຊຍາກອນສົງຄາມ ແລະຫລັກການຂອງສົນທິສັນຍາແອດແລນຕິກກໍໄດ້ຟື້ນຟູຂຶ້ນອີກໂດຍໃຫ້ສອດຄ້ອງກັບປະຊາຊົນທີ່ຢູ່ໃນເຂດປົດປ່ອຍ. ເປັນທີ່ເຫັນຊອບດ້ວຍກັນແລ້ວວ່າ, ອຳນາດຂອງຄນະມົນຕຣີຄວາມໝັ້ນຄົງຂອງສຫະປະຊາຊາດນັ້ນ ມີສິດຄັດຄ້ານຕໍ່ສິ່ງທີ່ເຫັນວ່າພົວພັນຕໍ່ຄວາມປອດໄພ. ຫລັງຈາກໄດ້ມີການອອກຄວາມຄິດຄວາມເຫັນທີ່ແຕກຕ່າງກັນແລ້ວ, ທ່ານຣຸສເວລຕ໌ໄດ້ຢູ່ທາງນຶ່ງ ແລະທ່ານສະຕາລິນແລະເຊີຊິລອີກທາງນຶ່ງ, ໂດຍໄດ້ມີການຕົກລົງກັນວ່າ ທຸກໆອຳນາດຈະສັນ

ສນູນຄວາມຮຽກຮ້ອງຂອງສຫະພາບໂຊວຽດທີ່ຂໍຄະແນນສຽງຕື່ມສອງ
ຄະແນນໃນສມັດຊາໃຫຍ່ຂອງສຫະປະຊາຊາດ, ໂດຍອີງໃສ່ພື້ນຖານ
ທີ່ວ່າເມືອງຢູເຄຣນ ແລະໄບໂລຣັສເຊັຍ ມີພົລເມືອງຢ່າງຫລວງ
ຫລາຍ.

ສອງເດືອນຕໍ່ມາ ຫລັງຈາກທ່ານຣູສເວລຕ໌ກັບມາແຕ່ປະຊຸມທີ
ຢາລຕາ, ທ່ານໄດ້ເຖິງແກ່ກັມ ໂດຍເສັ້ນເລືອດໃນສມອງແຕກ ໃນ
ຂນະທີ່ກຳລັງພັກຜ່ອນ ຢູ່ບ້ານພັກຂອງທ່ານທີ່ຣັຖ ຈໍເຈັຍ. ຢູ່ໃນປະ
ວັດສາດອະເມຣິກັນ, ບໍ່ຄ່ອຍມີຜູ້ນຳຫລາຍຄົນປານໃດ ທີ່ມີຄົນໄວ້ອາ
ໄລນຳຢ່າງຫລວງຫລາຍ ທັງພາຍໃນປະເທດ ແລະໃນຕ່າງປະເທດ
ເທົ່າກາມຈາກໄປຂອງທ່ານຣູສເວລຕ໌ ໃນຄັ້ງນີ້, ຊົ່ວຊາວອະເມຣິ
ກັນທຸກຖ້ວນໜ້າໄດ້ພົບກັບຄວາມເສົ້າໂສກເສັຍດາຍຢ່າງສຸດຊົ່ງ ໃນ
ການສູນເສັຍວິຣະບຸຣຸດ ຜູ້ກ້າຫານຄົນນຶ່ງ. ການເປັນຜູ້ນຳຂອງຣະ
ບອບປະຊາທິປະໄຕນັ້ນແມ່ນເປັນສິ່ງຈຳເປັນທີ່ສຸດ ແລະຕໍ່ມາບໍ່ດົນ ຜູ້
ສືບຕໍ່ຈາກທ່ານຣູສເວລຕ໌ກໍຄືທ່ານແຮຣີ ແອສ ທຣູແມນ ທີ່ໄດ້ຂົ້ນຄອງ
ຕຳແໜ່ງທັງກິຈການພາຍໃນແລະນະໂຍບາຍຕ່າງປະເທດ.

ຕໍ່ມາ ໃນເດືອນກໍຣະກະດາປີ ໑໙໔໕, ໃນຂນະທີ່ຜູ້ນຳຂອງ
ປະເທດອັງກິດ, ສະຫະຣັຖ ແລະສຫະພາບໂຊວຽດ ກຳລັງປະຊຸມ
ກັນຢູ່ໂພສດາມ ເຢຣະມັນໄດ້ຍອມຜ່າຍແພ້ແລ້ວ. ແຕ່ການເລືອກຕັ້ງ
ທົ່ວໄປ ໃນປະເທດອັງກິດກໍກຳລັງດຳເນີນຕໍ່ໄປຢູ່, ຜູ້ທີ່ໄປຮ່ວມປະ

ຊຸມເທື່ອນີ້ມີທັງທ່ານເຊີຊຸສ ແລະທ່ານແກຣແມນ ແອດລີ ຜູ້ທີ່ໄດ້ເຂົ້າ
ປະຊຸມໃນຄັ້ງທຳອິດ, ແລະທ່ານແອດລີ ເປັນຜູ້ດຳເນີນການເຈຣະ
ຈາຕໍ່ໄປ. ແມ່ນວ່າໃນການປະຊຸມເທື່ອນີ້ ໄດ້ນຳເອົາເຣື່ອງແນວ
ທາງຂອງສົງຄາມໃນພາກພື້ນແປຊິຟິກຂຶ້ນມາພິຈາຣະນາກໍຕາມ, ແຕ່
ຂໍ້ໃຫຍ່ໃຈຄວາມໃນການປະຊຸມເທື່ອນີ້ແມ່ນການວາງກົດເກນກ່ຽວກັບ
ນະໂຍບາຍການຍຶດຄອງ ແລະໂຄງການສຳລັບອະນາຄົດຂອງເຢຣະ
ມັນ. ຕໍ່ມາກອງປະຊຸມ ໄດ້ຕົກລົງກັນແລ້ວວ່າ ຈະໃຫ້ເຢຣະມັນມີ
ຄວາມສາມາດພຽງພໍໃນດ້ານອຸດສາຫະກັມເພື່ອຟື້ນຟູເສຖກິດໃນຍາມ
ສງົບເສີກແຕ່ຈະບໍ່ປ່ອຍໃຫ້ປະເທດນີ້ມັ່ງມີເຫລືອຫລາຍພໍທີ່ຈະເອົາໄປ
ສ້າງອຸປກອນສົງຄາມ. ເປັນທີ່ຮູ້ກັນແລ້ວວ່າ ພວກນາຊິສ ຈະຖືກ
ຕັດສິນໂທດປະຫານຊີວິດໃນຂໍ້ຫາເປັນຜູ້ກໍ່ສົງຄາມທີ່ເອີ້ນວ່າໂຄງການ
ຂອງນາຊີ ຊຶ່ງເຫັນວ່ານີຄວາມຈຳເປັນ ໃນການຝຶກສອນຊາວເຢຣະ
ມັນທີ່ໃຫຍ່ຂຶ້ນມາໃນສມັຍຂອງນາຊິສ ແລະເຫັນດີນຳລັດທີນີ້. ນອກ
ນັ້ນ, ກໍໄດ້ວາງຫລັກການໄວ້ຢ່າງກວ້າງຂວາງໃນການປົກຄອງແບບ
ປະຊາທິປະໄຕ ແຕ່ຊີວິດການເມືອງຂອງເຢຣະມັນ, ໄດ້ພິຈາຣະນາ
ເຣື່ອງການຮຽກຮ້ອງເງີນຄ່າປ່ວຍການຈາກເຢຣະມັນເປັນເວລາດົນ
ນານ. ຫລັງຈາກສົງຄາມສິ້ນສຸດລົງ, ຣັສເຊັຍໄດ້ຖອນໂຮງງານ
ອຸດສາຫະກັມ ແລະຊັບສິນອອກຈາກທີ່ຍຶດຄອງຂອງຕົນ ແລະໄດ້ເຂດ
ແດນຈາກເຂດທາງດ້ານຕະເວັນຕົກຕື່ມ, ແຕ່ຣັສເຊັຍໄດ້ຮຽກ ຮ້ອງ

ຄ່າສ້ອມແປງທີ່ຢາລຕາ ເປັນມູນຄ່າ ๑๐,๐๐๐,๐๐๐,๐๐๐ ໂດລາ ອະເມຣິກັນ, ຊຶ່ງເຮືອງນີ້ຍັງໂຕ້ແຍ້ງກັນຢູ່. ໃນເດືອນພຶສຈິກາ ປີ ๑๗๔๕, ໄດ້ມີການຕັດສິນ ຄວາມຄະດີອາຊຍາກອນ ຢູ່ເມືອງນູເຣມ ເບີກ. ຕໍ່ໜ້າຜູ້ພິພາກສາທີ່ມີຊຸ່ສຽງຈາກປະເທດອັງກິດ ຝຣັ່ງເສດ ສະຫະພາບໂຊວຽດ, ແລະສະຫະຣັຖ ມີຜູ້ນຳເຢຣະມັນຫລາຍຄົນໄດ້ ຖືກກ່າວຫາວ່າບໍ່ພຽງແຕ່ເປັນຜູ້ວາງແຜນແລະກໍ່ສົງຄາມລຸກລາມເທົ່ານັ້ນ, ແຕ່ຍັງຖືກກ່າວຫາວ່າ ເປັນຜູ້ລະເມີດກົດໝາຍ ຂອງສົງຄາມ ແລະມະນຸດທັມອີກດ້ວຍ. ການພິພາກສາຄວາມເທື່ອນີ້, ກິນເວລາ ຕັ້ງສິບເດືອນ ຈຶ່ງສາມາດນຳຜົນໃຫ້ລົງໂທດຈຳເລີຍສາມຄົນ ໃນຈຳ ນວນຜູ້ຕ້ອງຫາຫ້າຫົກຄົນ.

24 / VII
ຫ້າມຈຳໜ່າຍ

# 7

## ການຂັດແຍ້ງກັນກັບຕ່າງປະເທດແລະການປ່ຽນແປງຂອງສັງຄົມ

## ພາຍໃນປະເທດ

"ພວກເຮົາຕ້ອງເປັນຕົວຢ່າງຂອງຣະບອບປະຊາທິປະໄຕ"

ນີ້ແມ່ນຄຳຂວັນຂອງທ່ານແຟຣງຄລິນ ດີ ຣູສເວລທ໌

ແຕ່ປາງສມັຍຣັຖບານຂອງ ວິລສັນເທໂອດໍຣ໌ແລະສິ່ງທີ່ບໍ່ເປັນ
ໜ້າເຊື່ອກໍຄືການປ່ຽນແປງບາງຢ່າງຊຶ່ງກິນເວລາຫົມນານແລ້ວກໍ
ໄດ້ຖືກປ່ຽນແປງແລະສຳເຣັດລຸລ່ວງໄປໃນເວລາອັນສັ້ນ. ການດັດ
ແປງແກ້ໄຂຕາມແນວທາງໃໝ່ນັ້ນໄດ້ເຣັດໄປຢ່າງຟ້າວແລະຣີບຮ້ອນ
ແລະການປົກຄອງ ກໍຂ້ອນຂ້າງຈະອ່ອນແອແດ່ ເພາະວ່າ ນັກການ
ເມືອງໃນພັກຣ່ວມກັນ ຕ່າງກໍຄັດຄ້ານກັນ ແຕ່ເມື່ອມີການປ່ຽນແປງ
ຢ່າງກະທັນຫັນເຊັ່ນນີ້, ມັນເປັນຂອງທັມມະດາເຫລືອເກີນ ທີ່ຈະ

ຕ້ອງພົບກັບສະຖານະການຫຍຸ້ງຍາກ ໃນສມັຍຂອງການປ່ຽນແປງທັງ ຫມົດນີ້, ການພິພາກວິຈານກ່ຽວກັບບາດກ້າວຂອງພັກເດໂມແຄຣຕ ນັ້ນ ມີຢູ່ບໍ່ໄດ້ຂາດ ເມື່ອເວົ້າຕາມຄວາມເປັນຈິງແລ້ວ ການດັດແປງ ແກ້ໄຂນີ້ພາໃຫ້ມີຊີວິດຊີວາຂຶ້ນແລະພາໃຫ້ພົລເມືອງແຕ່ລະຄົນມີຄວາມ ສົນໃຈໃນຣັຖບານຂອງເຂົາເຈົ້າຫລາຍຂຶ້ນ.

ເມື່ອທ່ານ ຣູສເວລຕ້ ເຂົ້າຮັບຕຳແຫນ່ງ ປະທານາທິບໍດີນັ້ນ ການທະນາຄານ ແລະຣະບຽບການໃຫ້ເງີນເຊື່ອຂອງຊາດນັ້ນກຳລັງ ຢູ່ໃນພາວະອ່ອນແອທີ່ສຸດ. ດ້ວຍຄວາມໄວທີ່ບໍ່ຫນ້າເຊື່ອທະນາຄານ ໄດ້ຟື້ນຕົວຂຶ້ນໃຫມ່ ແລະດຳເນີນກິຈການອີກຕໍ່ໄປ ໂດຍມີນະໂຍບາຍ ການດັດແປງສະພາບຂອງເງີນເຟີ້ໃຫ້ດີຂຶ້ນ ເພື່ອໃຫ້ຣາຄາສິນຄ້າດີ ຂຶ້ນແລະໃນເວລາດຽວກັນນີ້ກໍໄດ້ຊ່ວຍພວກລູກຫນີ້ໃຫ້ໃຊ້ຫນີ້ທີ່ໄດ້ຄ້າງ ຄາເຫລືອໄວ້ໃຫ້ຜ່ອນລົງ ນອກຈາກນັ້ນຣັຖບານ ໄດ້ໃຫ້ເງີນເຄຣດິດ ແກ່ໂຮງງານອຸດສາຫະກັມແລະການກະສິກັມໂດຍຜ່ານທາງຣາຊການ ແລະໄດ້ມີການຄ້ຳປະກັນ ການຮັບຝາກເງີນໃນທະນາຄານເປັນເງີນ ຫ້າພັນໂດລາອະເມຣິກັນແລະໄດ້ມີການອອກຣະບຽບອັນເຄັ່ງຄັດກ່ຽວ ກັບຄວາມປອດໄພໃນຕລາດຊື້ຂາຍຫຸ້ນສ່ວນ.

ໃນດ້ານອຸດສາຫະກັມນັ້ນ ໄດ້ຈັດໃຫ້ມີການດັດແປງແກ້ໄຂຂຶ້ນ ໃນຣະຍະຍາວ. ກົດຫມາຍວ່າດ້ວຍການກະສິກັມທີ່ສະພາກົງແກຣສ ໄດ້ອອກມາໃນປີ ຈພມັມ ນັ້ນໄດ້ຖືກລົບລ້າງໂດຍສານສູງໃນສາມປີຕໍ່

ມາຈາກຂໍ້ຫາວ່າ ກົດໝາຍນີ້ ບໍ່ຖືກຕ້ອງຕາມຣັຖທັມມະນູນ ດັ່ງນັ້ນ ທາງສະພາກົງແກຣສ ຈຶ່ງໄດ້ເຣັດກົດໝາຍອອກມາໃໝ່ອີກ ຄືຣັຖ ບານຈະອອກເງິນໃຫ້ແກ່ຊາວນາຊາວສວນກ້ອນນຶ່ງ ເອົາໄປສ້າງສາ ແລ້ວຊາວນາຊາວສວນຈະຕ້ອງເສັຍສລະດິນບາງສ່ວນຂອງເຂົ້າເຈົ້າ ເພື່ອປູກພືດພັນສິ່ງໃຫ້ຣັຖບານ ເປັນຄ່າຕອບແທນ ຫລືບໍ່ດັ່ງນັ້ນ ກໍໃຫ້ ການຮ່ວມມືໃນໂຄງການກະເສດ ໃນຣະຍະຍາວກັບຣັຖບານ. ຕົກ ມາໃນປີ ໑໙໔໐ ໄດ້ມີຊາວນາຊາວສວນເຖົ້າຫົກລ້ານຄົນທີ່ເຂົ້າຮ່ວມ ໃນໂຄງການນີ້ ແລະເຂົາເຈົ້າກໍໄດ້ຮັບຫົນຊ່ວຍເຫລືອຈາກຣັຖບານ. ກົດໝາຍດັ່ງກ່າວນີ້ໄດ້ໃຫ້ເງິນຫົນກູ້ຢືມໃນການຈັດການເຣື່ອງພືດພົນ ທີ່ເຫລືອຄ້າງຢູ່ ໃຫ້ຄວາມຊຸ່ມກັນແກ່ເຂົ້າວົດແລະຣັຖບານໄດ້ຈັດໂຄງ ການໆເກັບພືດພົນໄວ້ໃນຄັງສິນຄ້າຂອງຊາດໃຫ້ແກ່ຊາວນາ. ຈາກ ການດຳເນີນງານຕາມບາດກ້າວແບບໃໝ່ນີ້, ພົນປາກົດ ກໍຄືວ່າຣາ ຄາຂອງສິນຄ້າປ່ະເພດພືດພົນກໍສູງຂຶ້ນ ແລະຄວາມຫຸ່ມຫ່ຽງໃນດ້ານ ເສຖກິດຂອງຊາວໄຮ່ຊາວນາກໍເລີ່ມປາກົດຂຶ້ນຢ່າງແທ້ຈິງ.

## ແນວທາງແບບໃໝ່ໄດ້ພາໃຫ້ສັງຄົມມີການປ່ຽນແປງໃໝ

ຣັຖບານໄດ້ພຍາຍາມທຸກວິທີທາງເພື່ອໃຫ້ຊາວນາຊາວສວນຜູ້ ທີ່ເຊົ່າດິນໄຮ່ດິນນາຂອງໝູ່ເຣັດ ໄດ້ມີທີ່ດິນເປັນຂອງເຂົາເຈົ້າເອງ ຣັຖບານໄດ້ຊ່ວຍເຫລືອພວກນີ້ໂດຍແບ່ງຂາຍດິນໄຮ່ດິນນາໃຫ້ແກ່ເຂົາ

ເຈົ້າ ໂດຍໃຫ້ໃຊ້ເງີນຜ່ອນໃນຮາຄາຖືກ ແລະຮັຖບານໄດ້ໃຫ້ຊາວ
ນາຢືມເງີນກ້ອນນຶ່ງສາໍລັບໃຊ້ຫນີ້ສິນທີ່ເຂົາເຈົ້າຍັງຕິດຫນີ້ຄ່າທີ່ດິນໄຮ່
ນາ ທີ່ເຂົາເຈົ້າຊື້ນັ້ນໃຫ້ຫມົດໄປ. ເງີນນີ້ແມ່ນບໍຣິສັດສິນຄ້າເງີນ
ເຊື່ອເປັນຜູ້ໃຫ້ເງີນທຶນກູ້ຢືມແກ່ຊາວນາໂດຍຕຣົງແລະພ້ອມກັນນີ້ ຣັຖ
ມົນຕີຊ່ວຍວ່າການກະຊວງຕ່າງປະເທດ ຄືທ່ານກໍແດລຮູນ ໄດ້ຮັກສາ
ຕລາດໃນຕ່າງປະເທດໄວ້ ໂດຍຍອມລົດຜ່ອນຮາຄາສິນຄ້າ ທີ່ຈະສົ່ງ
ອອກຂາຍໃນຕ່າງປະເທດລົງ. ພາຍໃຕ້ສັນຍາການຄ້າ ຊຶ່ງປາກົດ
ອອກມາໃນເດືອນມີຖຸນາປີ ຈຈນ້ຜ ນັ້ນ ທ່ານຮູນໄດ້ຕິດຕໍ່ກັບປະເທດ
ການາດາ, ຄິວບາ, ຝຣັ່ງເສດ, ຮັສເຊັຍ ແລະປະເທດອື່ນໆອີກ
ຊາວກວ່າປະເທດ ເພື່ອເຮັດສັນຍາທາງການຄ້າ ໂດຍບໍ່ມີເງື່ອນໄຂ
ໃດໆ ແລະທ່ານກໍໄດ້ຮັບການຕອບສນອງເປັນຢ່າງດີ ຈາກບັນດາປະ
ເທດເຫລົ່ານີ້. ພາຍໃນປີນຶ່ງ ການຄ້າຂອງສະຫະຮັຖກໍໄດ້ຮັບການ
ປັບປຸງໃຫ້ດີຂຶ້ນໃນດ້ານວັດຖຸ ແລະຕົກມາປີ ຈຈນ້ຈ, ລາຍໄດ້ຈາກ
ໄຮ່ນານັ້ນໄດ້ຫລາຍຂຶ້ນທົບເຄິ່ງຫລາຍກວ່າເຈັດປີກ່ອນ.

ໂຄງການສາໍລັບການອຸດສາຫະກັມແບບໃຫມ່ນີ້ເປັນບາດກ້າວ
ທາໍອິດ ໃນການທົດລອງຂອງຣັຖບານ ຂອງທ່ານຮູສເວລຕ້. ໃນປີ
ຈຈນ້ນ, ຣັຖບານໄດ້ຟື້ນຟູການປົກຄອງແຫ່ງຊາດ ໂດຍໄດ້ວາງຮາກ
ຖານໄວ້ວ່າສະຖານະການອັນຄັບຂັນນີ້ຈະໄດ້ຮັບການແກ້ໄຂໃຫ້ລຸລ່ວງ
ໄປໄດ້ຈາກການວາງຂອບເຂດໃນການຜລິດຜົນແລະຕັ້ງຮາຄາໃຫ້ສູງ

ຂຶ້ນ ແຕ່ກ່ອນທີ່ຣັຖບານຟື້ນຟູການປົກຄອງນີ້ ສານສູງໄດ້ປະກາດວ່າ ການກະທຳນັ້ນບໍ່ຖືກຕ້ອງຕາມກົດໝາຍຂອງຣັຖທັມມະນູນ ໃນເດືອນ ພຶສພາປີ ໑໙໓໔, ຈຶ່ງເຫັນພົ້ມປາກົດແລ້ວວ່າມັນບໍ່ເປັນພົ້ມສຳເຣັດ ເລີຍ. ເມື່ອເຖິງເວລານັ້ນແລ້ວ ການເຄື່ອນໄຫວໄປສູ່ການຟື້ນຟູກໍ ໄດ້ເລີ້ມມາພາຍໃຕ້ຄວາມກະຕຸ້ນເຕືອນຂອງນະໂຍບາຍການປົກຄອງ ອື່ນໆ ແລະຕໍ່ມາບໍ່ດົນການປົກຄອງນີ້ ກໍໄດ້ປ່ຽນນະໂຍບາຍໃໝ່ໂດຍ ສລຸບຄວາມວ່າການຄວບຄຸມຣາຄາສິ່ນຄ້າບາງປະເພດນັ້ນ ເປັນການ ກັ່ນຕອງອັນໜັກທີ່ສຸດສຳລັບເສຖກິດຂອງຊາດແລະຍັງເປັນອຸປສັກໃນ ການຟື້ນຟູໃຫ້ດີຂຶ້ນອີກດ້ວຍ.

ໃນເວລາດຽວກັນນີ້ ການນຸ້ງໜ້າສູ່ການຟື້ນຟູນັ້ນ ໄດ້ກ້າວ ໜ້າໄປຫລາຍແລ້ວເພາະວ່າ ຣັຖບານກາງໄດ້ຈ່າຍເງິນຫລາຍລ້ານ ໂດລາ ເພື່ອຊ່ວຍເຫລືອພວກທີ່ບໍ່ມີການເຣັດ ໃນດ້ານການສາທາ ຣະນະ ແລະໃນອຸຕສາຫກັມກ່ຽວກັບການເກັບຊັບສິນ ຂອງຊາດໄວ້. ເມື່ອງດ້ວຍວ່າມີການປະຫຍັດການໃຊ້ຈ່າຍດັ່ງກ່າວນີ້, ຈຶ່ງພາໃຫ້ເງິນ ໃນຊາດ ມີຄວາມຕ້ອງການຜົນຜລິດ ຂອງອຸດສາຫະກັມອະເມຣິກັນ ຫລາຍຂຶ້ນ. ການຈັດຫາວຽກໃຫ້ພວກທີ່ວ່າງງານໄດ້ເຣັດກໍ່ເປັນຜົນ ສຳເຣັດແລະນັບວ່າເປັນເຫື່ອຫຳອິດໃນປະວັດສາດອີກດ້ວຍ. ວັກທີ ເຈັດຂອງກົດໝາຍວ່າດ້ວຍການຟື້ນຟູການປົກຄອງນັ້ນ ໄດ້ໃຫ້ສິດແກ່ ການຕົກລົງຮ່ວມກັນ ໃນດ້ານການງານ ແລະໃນເດືອນກໍຣະກະດາປີ



ບັນດາທະຫານຜ່ານເສີກຈາກສົງຄາມໂລກຄັ້ງທີ່ນຶ່ງ ກຳລັງຊົມງານສວນສນາມທີ່ແມນຮັຕຕັນ ໃນວັນສລອງການສງົບເສີກ
ເມື່ອປີ ຈຸພຈຊ.

ใบปิ [illegible] ลับด์ดับ้ม [illegible]
ี่สองในภาษาบ้านอื่อ โดยมีภาษาบุดับ [illegible]
ฉลบัก ไกดับ[illegible]



ภาบสี่วมหาวอาภาถละยะทำอิถมุอุปสัภตลาย ถิบภาวใบพาบเทิวถิบัภบิบ มิแผบที่ถิบหาวติถยู่ที่อา ถื่อวบิบมไถ้ทำลายจิวิถบัภบิบใบสมัยบั้บไปยู่าวตลอวตลาย พาบลุม: ธิจาถธ์ถ ะบิถ (ถิบที่ยิบปฮบอั้บไถถื่อวบิบ) ไถ้บิบอามอ้อโลภตบือปับผิบสำธัถมื่อถือบพิสพา ๑๗๔๕.



ເອີເນສ໌ ເຮມ໋ງເວຍ໌



ຈອນ ສະໄຕນ໌ເບຄ



ເມນເກັນ

ນັກປະພັນໃນສະຕະວັດນ້ ໄດ້ສະແດງຄວາມຫ່ວງໃຍຕໍ່ສະພາບຂອງຄວາມເປັນຄົນ ແຕ່ລະຄົນຕ້ົງຢັ້ນຫາຕາມຄວາມຮູ້ສຶກຂອງຕົນ ບາງຄົນແນະວ່ິທີແກ້ໄຂ ບາງຄົນຕ້ົງຄ່ຳຖາມໄວ້ຊ ໆ ທ່ານເຮມ໋ງເວຍ໌ ເປັນຫ່ວງສັກສີຂອງມະນຸດ ແລະເປ ດເຜີຍຖ ງສະພ່ າບຂອງຄົນທ ່ ກ ກ ່ ທ ່ ານສໄຕນ໌ເບກ ແລະທ ່ ານດອສປ ່ າສໂສ ສະແດງຄວາມເຈ ບແຄນ ແຫ ນ ກ ່ ມ ່ ະກອນ ທ ່ ກ ່ ໃຊ ເ ປ ນ ເ ລ ່ ອງມ ່ ທ ່ ານເມ ່ ງ ກ ນ ໂຈມຕ ່ ທ ່ ານເຊ ນ ແກ ຕ ່ ວ ທ ່ ານລ ່ ອ ສ ຂ ນ ດ ່ າຄົນຊ ນ ່ ໃຫ ຊ ວ ຕ ່ ລ ່ ວ ຫ ລ ອ ກ ມ ່ າດ ່ ານ ນ ຕ ່ ທ ່ ຣ ່ ເຊ ນ ໃຫ ເ ຊ ນ ຖ ງ ຈ ຕ ນ ່ າ ທ ່ ມ ຂ ອ ງ ຜ ່ ບ ກ ເ ບ ກ ສ ນ ທ ່ ານ ຟ ຕ ຈ ່ ເ ຍ ທ ່ ານ ລ ່ ດ ຂ ຍ ຍ ໃ ຫ ເ ຊ ນ ສ ພ ຂ ອ ງ ຊ ວ ດ ເ ມ ່ ອ ຕ ນ ສ ຕ ະ ວ ດ ທ ່ ານ ຟ ອ ລ ດ ເ ນ ຣ ແ ລ ະ ທ ່ ານ ໂ ອ ນ ລ ເ ປ ດ ເ ຜ ຍ ຖ ງ ຄ ວ າ ມ ນ ກ ຄ ດ ຂ ອ ງ ຕ ນ .

ສະ ກ ອ ຕ ຟ ຕ ສ ຈ ຣ ລ ດ















ພັຍພິບັດຈາກພາຍຸໃຕ້ຝຸ່ນເມື່ອປີ ຈຍມ້ຜ້ ທຳຄວາມ
ເສັຽຫາຍໃຫແກໄຮ່ນາແລະບ້ານເຮືອນ ຣາສດອນ
ທາງພາກຕາເວັນຕົກສຽງໃຕ້ ເປັນຈຳນວນຫລວງ
ຫລາຍ.






ການโคสะนาตาสฮวุเลือกตั้วเมื่อปี ๑๙๓๘ แฟธวดลิน ดิ ธูสเวลต์ ภำลัวได้ธับภานต้อนธับจากปะจาจิน ลุมุ: เอื่อนกั้นน้ำที่ธอมพูเซนเนสจิ ที่ธูสเวลต์ ปะกาดใจ้เป็นกิดหมายใต้สาวอื้น เอื่อนนี้อำนวยปโยด แภกะสีกันในพากตาเว้นออกสฮวใต้เป็นฝาวหลววหลาย.





໑໗໓໕, ໄດ້ມີກົດໝາຍອອກມາໃໝ່ແທນກົດໝາຍທີ່ກ່າວມານີ້ໂດຍ ທາງສະພາກົງແກຣສໄດ້ອະນຸຍາດໃຫ້ຕັ້ງກົມແຮງງານຂຶ້ນເພື່ອໃຫ້ຄຳ ແນະນຳແກ່ການຕົກລົງຮ່ວມກັນ. ການບໍຣິຫານກິຈການ ທັງໝົດນີ້ ແມ່ນກົມແຮງງານເປັນຜູ້ດຳເນີນການ ແລະພວກກັມມະກອນກໍໄດ້ຮັບ ສິດຢ່າງເຕັມທີ່ໃນການເລືອກອົງການໃດອົງການນຶ່ງມາເປັນຕົວແທນ ຂອງເຂົາເຈົ້າສຳລັບຕິດຕໍ່ຮຽກການກັບນາຍຈ້າງ. ສະຫະພັນແຮງ ງານຂອງອະເມຣິກັນມີອຸດົມຄະຕິ ໃນການທ້ອນໂຮມຄົນງານໃຫ້ເປັນ ກ້ອນເປັນຫ່ວຍ, ແຕ່ການດຳເນີນງານນີ້ຍ່າກຈຸ້າໄປແດ່ແລະບໍ່ຄ່ອຍ ຈະຈັດການດີປານໃດ. ເມື່ອປວງຊົນສ່ວນຫລາຍ ເກີດມີຄວາມບໍ່ພໍ ໃຈນຳສະພາບການນີ້ ເຂົາເຈົ້າຈຶ່ງພາກັນອອກຈາກສະຫະພັນນີ້ແລະ ໄດ້ພາກັນຈັດຕັ້ງສະພາກົງແກຣສ ໃຫ້ເປັນອົງການອຸດສາຫະກັມແລະ ຈາກນັ້ນມາ ກໍໄດ້ດຳເນີນກິຈການມາຢ່າງເປັນຜົນສຳເຣັດ ໂດຍສະ ເພາະໃນອຸດສາຫະກັມຣົຖຍົນແລະເຫລັກກ້າ. ໂດຍການຕຸ້ນເຕືອນ ໃນການແຂ່ງຂັນ ຂອງອົງການອຸດສາຫະກັມ ຂອງສະພາກົງແກຣສ, ສະຫະພັນແຮງງານອະເມຣິກັນ ກໍໄດ້ຈັດຕັ້ງຂຶ້ນໃໝ່ຄືກັນ. ໃນປີ ໑໗໘໗ ນັ້ນ ສະມາຊິກຂອງສະຫະພັນແຮງງານຂອງອະເມຣິກັນມີຈຳ ນວນສີ່ລ້ານຄົນ ແລະໃນປີ ໑໗໙໗ ມີສະມາຊິກສິບເອັດລ້ານຄົນແລະ ໃນປີ ໑໗໔໒ ມີເຖົ້າສິບຫົກລ້ານຄົນ. ດັ່ງນັ້ນອົດທິພົນແຮງງານກໍມີ ຫລາຍຂຶ້ນບໍ່ພຽງແຕ່ໃນດ້ານອຸດສາຫະກັມເທົ່ານັ້ນ, ແຕ່ໃນດ້ານການ

ເມືອງກໍມີຄົນ ດັ່ງທີ່ອົງການນີ້ໄດ້ພາໃຫ້ນະໂຍບາຍການເມືອງທົ່ວໆ ໄປເປັນທີ່ຫນ້າສົນໃຈຫລາຍຂຶ້ນ. ອິດທິພົນເຫລົ່ານີ້ໄດ້ຖືກນໍາມາໃຊ້ ພາຍ່ໃນຂອບເຂດຂອງວົງການຂອງພັກການເມືອງຫົວສອງພັກ ແລະ ໃນຂນະນັ້ນພັກເດໂມແຄຣຕ ໄດ້ຮັບການສນັບສນູນ ຈາກປະຊາຊົນ ຫລາຍກວ່າພັກຣິພັບລິແຄນ, ແລະພັກກັມມະກອນໃນເວລານັ້ນ ກໍບໍ່ ຄ່ອຍມີເລີຍ.

ການບໍ່ມີວຽກການເຮັດໃນຍາມເຖົ້າແກ່ຊະລາແລະການດູແລ ຮັກສາລູກ ຂອງພວກຜູ້ເຖົ້ານີ້ກາຍເປັນເຣື່ອງທີ່ປວງຊົນທົ່ວໄປໄດ້ນໍາ ຂຶ້ນມາຖົກຖຽງກັນຢູ່, ດັ່ງນັ້ນຈຶ່ງໄດ້ມີກົດອອກມາໃນປີ ໑໙໓໕ ວ່າ ດ້ວຍການໃຫ້ຄວາມຊຸ່ມກັນແກ່ສັງຄົມ ຊຶ່ງກົດຫມາຍນີ້ອະນຸຍາດໃຫ້ຜູ້ທີ່ ມີອາຍຸເຖິງຫົກສິບຫ້າປີໄດ້ອອກບໍານານ ໂດຍໃຫ້ເບ້ຍລ້ຽງ ຢ່າງສົມຄວນແກ່ຄົນງານທຸກໆຄົນ. ສ່ວນເງິນທຶນເຫລົ່ານີ້ ກໍໄດ້ຮັບ ໂຮມມາຈາກເງິນທີ່ແຜ່ຈາກພວກຄົນງານ ແລະນາຍຈ້າງທັງຫລາຍ. ເບ້ຍລ້ຽງສໍາລັບຄົນງານຜູ້ດຸໝັ່ນ ໂດຍບໍ່ຈໍາກັດອາຍຸ ທີ່ບໍ່ມີວຽກການ ເຮັດກໍຈະໄດ້ຮັບເງິນຊ່ວຍເຫລືອຈາກຣັຖບານ ຊຶ່ງເງິນເຫລົ່ານີ້ໝົ່ນ ໄດ້ມາຈາກເງິນທີ່ຫັກເອົາມາຈາກເງິນເດືອນ ຂອງຄົນງານທຸກໆຄົນ ໃນເວລາທີ່ຍັງເຮັດວຽກການຢູ່ນັ້ນ. ເມື່ອເຖິງປີ ໑໙໓໙ ທຸກໆຣັຖ ກໍໄດ້ມີແບບປະກັນໄພໃຫ້ແກ່ພວກທີ່ວ່າງງານ.

ດ້ວຍການປະສົບກັບຄວາມແຫ້ງແລ້ງໃນປີ ໑໙໓໐ ນັ້ນ, ຈຶ່ງ

ໄດ້ມີກົດຫມາຍສະບັບນຶ່ງ ອອກມາກ່ຽວກັບການຄວບຄຸມນຳ້ຖວມ ກົດ
ຫມາຍນີ້ໄດ້ອະນຸມັດໃຫ້ມີອ່າງຂັງນຳ້ຂນາດໃຫຍ່ຫລາຍບ່ອນ ແລະໃຫ້
ສ້າງເຂື່ອນນຳ້ທີ່ໃຊ້ກຳລັງນຳ້ອີກຫລາຍບ່ອນ ພ້ອມທັງເຂື່ອນນ້ອຍອີກ
ຫລາຍພັນບ່ອນ. ດ້ວຍວ່າຊັພຍາກອນນັ້ນ ມີມາກມາຍເຫລືອຫລາຍ
ຊາວອະເມຣິກັນຈຶ່ງເບີ່ງຂ້າມຊັບສິນຈາກທັມມະຊາດເຫລົ່ານີ້ ແລະຢູ່
ຕາມພາກຕ່າງໆ ດິນທີ່ຖືກນຳ້ເຊາະນັ້ນກໍເລີກໂກນລົງຈົນພາໃຫ້ເຫັນ
ຮ່ອງຮອຍ ຕາມຫນ້າດິນ. ເພື່ອປ້ອງກັນ ການເສັຍຫາຍເຫລົ່ານີ້,
ໂດຍສະເພາະຕາມທົ່ງທາງພາກຕະເວັນຕົກພາກກາງ, ໄດ້ມີໂຄງ
ການສງວນທີ່ດິນ ຊຶ່ງຮວມທັງການປູກຕົ້ນໄມ້ ທີ່ໃຫ້ຮົ່ມຫລາຍໆຢ່າງ
ແລະວຽກອື່ນໆອີກທີ່ກ່ຽວກັບການກຳຈັດການເສັຍຫາຍຈາກນຳ້ເຊາະ
ນີ້ ໃຫ້ມີການສ້າງທີ່ພັກຜ່ອນຢ່ອນໃຈອີກເຊັ່ນ ຫນອງປາ, ບ່ອນຫລົ້ນ
ແລະເຮັດຮັງໃຫ້ນົກຢູ່, ການສງວນບໍ່ຖ່ານຫີນ, ນຳ້ມັນກາດ, ຫີນ
ດານ ນຳ້ມັນເຊື້ອເພີງ, ທາດໂຊດຽມ, ທາດເຮລຽມ, ທົ່ງຫຍ້າທີ່
ເອົາໄວ້ລ້ຽງສັດບາງບ່ອນກໍຖືກສັ່ງຫ້າມບໍ່ໃຫ້ໃຊ້ອີກເພາະຈະໄດ້ເອົາ
ເຮັດບ່ອນ ປູກສ້າງ ເຄຫະສະຖານ, ແລະປ່າໄມ້ຂອງຊາດກໍປາກົດ
ວ່ານີເພີ້ມຂຶ້ນຫລາຍ.

<u>ຜົນຂອງການທົດລອງທີ່ຮ່ອມແມ່ນຳ້ເທນເນສຊີກໍກາຍເປັນຕົວຢ່າງ</u>

ໃນບາດກ້າວທັງຫມົດ ທີ່ໄດ້ດຳເນີນມານັ້ນ ມີສິ່ງນຶ່ງທີ່ພໍຈະ

ເຫັນຄວາມສຳຄັນໃນອະນາຄົດນັ້ນກໍຄືການສ້າງເຂື່ອນໃສ່ຮ່ອມແມ່ນ້ຳ ເທນເນສຊີ, ຊຶ່ງໄດ້ເລີ້ມຕົ້ນມາໃນທັນທີ ເພື່ອໃຫ້ໂຄງການນີ້ເປັນ ບ່ອນທົດລອງໃນດ້ານສັງຄົມແລະເສຖກິດ. ນອກຈາກເຂື່ອນໃຫຍ່ທີ່ ຖືກສ້າງຂຶ້ນຢູ່ທີ່ແມ່ນ້ຳມັນເຊີລຊອນ ໃນຣັຖອາລາບາມາແລ້ວ, ທາງ ການຍັງໄດ້ສ້າງເຂື່ອນນ້ອຍອີກຫລາຍບ່ອນ ເພື່ອເປັ່ງນ້ຳໄປສູ່ບ່ອນ ຕ່າງໆ ເຊັ່ນວ່າເຂື່ອນທີ່ ນໍຣິສ, ປີກວິກ, ຊີກາໂມກາ, ແລະຕາມ ບ່ອນອື່ນໆ ອີກ. ເຂື່ອນເຫລົ່ານີ້ ບໍ່ພຽງແຕ່ຈະໃຊ້ປະໂຍດໃນການ ຊົລປະທານ ການຄວບຄຸມນ້ຳຖ້ວມແລະການຜລິດເຈັຍຂາວເທົ່ານັ້ນ, ແຕ່ຍັງໃຊ້ຜລິດກຳລັງໄຟຟ້າອີກດ້ວຍ. ຣັຖບານໄດ້ສ້າງໂຮງໄຟຟ້າ ຊຶ່ງສາມາດຈຳຫນ່າຍໄຟຟ້າ ໄປໄດ້ໄກ ເຖິງຫ້າພັນໄມ (ແປດພັນ ເຫຼັກ) ໃຫ້ແກ່ຫມູ່ບ້ານທີ່ຢູ່ຕາມແຖບນັ້ນໂດຍຂາຍດ້ວຍຣາຄາຕ່ຳທີ່ສຸດ ເພື່ອຊາວບ້ານ ຈະສາມາດໃຊ້ໄດ້ຫລາຍ. ທຶນສຳລອງຂອງເຂື່ອນ ທີ່ສ້າງຂຶ້ນທີ່ແມ່ນ້ຳເທນເນສຊີນັ້ນ ແມ່ນທາງກົມໄຟຟ້າທ້ອງຖິ່ນທີ່ອອກ ທຶນໃຫ້ໃນການກໍ່ສ້າງ. ເຂື່ອນຢູ່ແມ່ນ້ຳເທນເນສຊີນີ້ ໄດ້ຊ່ວຍຟື້ນຟູ ດິນທີ່ແຕ່ກ່ອນບໍ່ໄດ້ໃຊ້ໃນການປູກຝັງກາຍມາເປັນດິນໄຮ່ດິນສວນແລະ ໃຊ້ເປັນບ່ອນທົດລອງໃນການປູກຝັງ ໂດຍສະເພາະການທົດລອງໃຊ້ ປຸຍ ວິທຍາສາດ ຄຽງຄູ່ກັນໄປນຳ ແລະໄດ້ຊ່ວຍສົ່ງເສີມອະນາໄມ ຂອງປວງຊົນແລະສ້າງສະຖານທີ່ພັກຜ່ອນຍ່ອນອາຣົມໃຫ້ແກ່ສາທາຣະ ນະ.

ຣັຖບານມີຄວາມຮັບຜິດຊອບ ແລະເບິ່ງແຍງຄວາມເປັນຢູ່ຂອງປະຊາ
ຊົນຫລາຍນັ້ນໄດ້ເຮັດໃຫ້ຣັຖບານຊນະຈິດໃຈຂອງປະຊາຊົນຢ່າງເຕັມ
ປ່ຽມ. ປະທານາທິບໍດີ ຮູສເວລຕ້ ແລະພັກພວກຂອງທ່ານໄດ້ກ່າວ
ຢ້ຳສເມີວ່າ ບາດກ້າວທີ່ຣັຖບານໄດ້ດຳເນີນການຢູ່ເທົ່າທຸກວັນນີ້ ໄດ້
ອຸ້ມຊູເສຖກິດ ແລະການທີ່ມີເສຖກິດດີທີ່ຈະຊ່ວຍໃຫ້ຄົນໃນຊາດມີເສຣີ
ພາບແລະປະຊາທິປະໄຕຢ່າງແທ້ຈິງ. ທ່ານໄດ້ກ່າວຄຳປາໄສໂດຍ
ທາງວິທຍຸກະຈາຍສຽງໃນປີ ຈພມຊ ແລະໄດ້ບອກເລົ່າ ໃຫ້ຊາວອະ
ເມຣິກັນຮູ້ວ່າ: ປະເທດອື່ນໆຫລາຍປະເທດໄດ້ສູນເສັຍປະຊາທິປະ
ໄຕໄປ ບໍ່ແມ່ນວ່າຊົນຊາດໃນປະເທດເຫລົ່ານັ້ນ ບໍ່ມັກຣະບອບປະຊາ
ທິປະໄຕ, ແຕ່ເຂົາເຈົ້າເກີດເບື່ອຫນ່າຍ ໃນການບໍ່ມີວຽກການເຮັດ
ແລະຄວາມບໍ່ປອດໄພ ໃນການທີ່ຈະເຫັນລູກຫລານຂອງເຂົາເຈົ້າອຶດ
ຢາກໃນຂນະທີ່ເຂົາເຈົ້ານັ່ງເບິ່ງຄວາມສັບສົນຂອງຣັຖບານ ຊຶ່ງເຂົາ
ເຈົ້າບໍ່ສາມາດຊ່ວຍແກ້ໄຂຫຽງໄດ້ແລະຄວາມອ່ອນແອຂອງຣັຖບານທີ່
ຂາດຜູ້ນຳທີ່ດີ. ໃນທີ່ສຸດ, ໂດຍຄວາມຜິດຫວັງນີ້ເຂົາເຈົ້າຈຳເປັນ
ຕ້ອງຍອມສູນເສັຍເສຣີພາບ ເພື່ອແລກປ່ຽນ ກັບສິ່ງທີ່ຈະມີຢູ່ມີກິນ.
ພວກເຮົາທີ່ຢູ່ໃນອະເມຣິການີ້ຮູ້ກັນດີແລ້ວວ່າສະຖາບັນປະຊາທິປະໄຕ
ຂອງເຮົານັ້ນຈະສາມາດປົກປັກຮັກສາໄວ້ໄດ້ ແລະມີທາງເອົາມາໃຊ້
ໄດ້. ແຕ່ກ່ອນຈະປົກປັກຮັກສາປະຊາທິປະໄຕໄວ້ໄດ້ ເຮົາຕ້ອງສະ
ແດງໃຫ້ເຫັນວ່າ ການດຳເນີນງານຂອງຣັຖບານ ປະຊາທິປະໄຕນັ້ນ

ເກືອບເວົ້າໄດ້ວ່າວຽກງານທຸກສິ່ງທຸກຢ່າງ ທີ່ໄດ້ດຳເນີນໄປ ຕາມແນວທາງແບບໃໝ່ນີ້ເປັນສິ່ງທີ່ເລົ່າລືກັນຢູ່ບໍ່ໄດ້ຂາດ ບໍ່ແມ່ນແຕ່ ໃນຣະຫວ່າງພັກພວກຂອງພັກຣິພັບລິແຄນເທົ່ານັ້ນ ແຕ່ໃນພັກເດໂມ ແຄຣຕກໍເຊັ່ນດຽວກັນ.

ໃນການເລືອກຕັ້ງປະທານາທິບໍດີຂອງປີ ໑໗໙໒ ນະໂຍບາຍ ການບໍຣິຫານປະເທດ ຕາມແນວທາງແບບໃໝ່ ຂອງພັກຣິພັບລິແຄນ ຂອງທ່ານຣູສເວລໄດ້ຖືກກ່າວໂຈມຕີຈາກຝ່າຍຄ້ານຄືທ່ານອາລເຟຣດ ແອມແລນເດີນ, ຜູ້ປົກຄອງຣັຖແຄນຊັສ ແຕ່ທ່ານຣູສເວລ໌ໄດ້ຮັບໃຊ້ ຊຸນະຫລາຍກວ່າ ສມັຍການເລືອກຕັ້ງຂອງປີ ໑໗໙໘ ອີກຊ້ຳ. ສະ ມາຊິກທີ່ສ້ວກັດຢູ່ພັກຣິພັບລິແຄນທີ່ໄດ້ຮັບເລືອກຕັ້ງເປັນປະທານາທິບໍດີ ຕ່ໍໆກັນມາມີດ້ວຍນີ້, ທ່ານແວລເດີລ ວັລກິ ໃນປີ ໑໗໔໐, ແລະທ່ານ ທອມມັສອີ ເດວີໃນປີ ໑໗໔໔ ແລະປີ ໑໗໔໒ ຊຶ່ງທັ້ງໝົດນີ້ເປັນທີ່ ເຫັນຢ່າງແຈ່ມແຈ້ງດີເຖິງຜົນສຳເຣັດຂອງການບໍຣິຫານປະເທດຕາມ ນະໂຍບາຍແບບໃໝ່ວ່າໄດ້ບັນລຸຜົນສຳເຣັດນ້ອຍຫລາຍພຽງໃດ.

ຕັ້ງແຕ່ປີ ໑໗໙໘ ໄປຫາປີ ໑໗໙໒ ປະຊາມະຕິທັ້ງໝົດຈົນຈຸ ຢູ່ນຳແຕ່ຄວາມໝາຍຂອງນະໂຍບາຍການບໍຣິຫານປະເທດຕາມແນວ ທາງແບບໃໝ່ໃນຊີວິດການເມືອງແລະເສຖກິດ. ຕາມທີ່ກາລະເວ ລາໄດ້ຜ່ານໄປນັ້ນ ເປັນທີ່ເຫັນຢ່າງແຈ່ມແຈ້ງແລ້ວວ່າ ແນວຄວາມ ຕິດທ່ວງໄປຂອງຣັຖບານອະເມຣິກັນນັ້ນໄດ້ປ່ຽນແປງໄປ ແລະການທີ່

ເທົ່າທຽມກັນກັບພາລະໃນການໃຫ້ຄວາມປອດໄພແກ່ປະຊາຊົນ. ປະຊາຊົນຂອງອະເມຣິກາພ້ອມໃຈກັນສະເນີ ໃນການປ້ອງກັນເສຣີພາບບໍ່ວ່າຈະຢູ່ດວຍຣາຄາແພງ ພຽງໃດກໍຕາມ ແລະບາດກ້າວທຳອິດໃນການປ້ອງກັນນິ້ກໍຄືການປ້ອງກັນຄວາມປອດໄພຂອງເສຖກິດ.

ໂດງການໆບໍຣິຫານປະເທດນັ້ນ ເປັນທີ່ຈັບໃຈທີ່ສຸດ ເທົ່າກັບສມັຍຂອງຣັຖບານ ວິລສັນ ໃນຣະຫວ່າງສິບປີກ່ອນນັ້ນ, ແຕ່ມາບັດນີ້ກໍຖືກເງົາຂອງສງຄຣາມກ້ອງຈາກກິຈການດ້ານຕ່າງປະເທດຣົບກວນກ່ອນທີ່ການຄອງຕຳແໜ່ງ ປະທານາທິບໍດີຄັ້ງທີສອງຂອງທ່ານຈະດຳເນີນໄປໂດຍດີ. ທາງຝ່າກທະເລພູ້ນໄດ້ມີການບອກເຫດຈາກຊາວອະເມຣິກັນທ່ວໆໄປວ່າການຂົ່ມຂູ່ຕໍ່ສັນຕິພາບ, ຕໍ່ກົດໝາຍ ແລະຕໍ່ຄວາມໝັ້ນຄົງຂອງຊາວອະເມຣິກັນໄດ້ສັ້ນແລ້ວ ຊຶ່ງຮວມແລ້ວກໍມີປະເທດ ຍີ່ປຸ່ນ, ອິຕາລີ ແລະປະເທດເຢຣະມັນ. ໃນຕົ້ນ ປີ ໑໙໓໐ ຍີ່ປຸ່ນໄດ້ບຸກລຸກແມນຈູເຣັຍແລະຢຽບຢຳການເປັນຢູ່ຂອງຊາວຈີນ ແລະປີນຶ້ງຕໍ່ມາເອົາເຈົ້າໄດ້ຈັດຕັ້ງຣັຖນຶ້ງຂຶ້ນທີ່ເອີ້ນກັນວ່າ ແມນຈູກູໂອ ສ່ວນອິຕາລີ ຊຶ່ງຕົກຢູ່ໃຕ້ອຳນາດຂອງພວກຟາຊິສ ໄດ້ຂຍາຍເຂດແດນຂອງຕົນອອກໄປທາງ ລິເບັຍແລະໃນປີ ໑໙໓໕-໓໖ ໄດ້ເຂົ້າຄອບຄອງປະເທດ ເອທິໂອເປັຍ. ປະເທດເຢຣະມັນຊຶ່ງສມັຍນັ້ນຢູ່ພາຍໃຕ້ການປົກຄອງຂອງອາໂດຟ ຮິດເລີ, ໄດ້ຈັດຕັ້ງພັກສັງຄົມນິຍົມແຫ່ງຊາດຂຶ້ນ ແລະໄດ້ຢຶດອຳນາດ ຈາກຣັຖບານ, ໄດ້ເຂົ້າ

ຄວບຄຸມ ໄຮແລນ ແລະ ໄດ້ສ້າງສົມອາວຸດຂຶ້ນໃຫມ່ ຢ່າງຫລວງ ຫລາຍ.

ລັດທິຜະເດັດການເປັນເຫດໃຫ້ສົງຄາມ ໂລກຄັ້ງທີສອງເກີດຂຶ້ນ

ເມື່ອທັມມະຊາດຂອງລັດທິການຮວມຫມູ່ ກາຍເປັນຈິງຂຶ້ນມາ ແລ້ວແລະເມື່ອເວລາເຢຣະມັນ, ອິຕາລີແລະຢີ່ປຸ່ນ ຍັງດຳເນີນການ ລຸກລານປະເທດນ້ອຍຕໍ່ໆໄປຢູ່ຢ່າງນີ້, ຄວາມຫວາດຫວັ່ນ ຂອງຊາວ ອະເມຣິກັນ ຈື່ງໄດ້ກາຍມາເປັນຄວາມຄຽດແຄ້ນເສັຍແລ້ວ. ໃນປີ ຈພມ້ຊ, ຫລັງຈາກ ຮິດເລີ ໄດ້ຮວບຮວມ ໂອສເຕັຽ ເຂົ້າເປັນຣັຖ ຂອງເຢຣະມັນແລ້ວ ຄວາມຕ້ອງການທີ່ຢາກຢຶດຄອງ ຊູເດີຕັນ ດິນ ແດນຂອງປະເທດເຊັກໂກສໂລວາເກັຍນັ້ນ ອາດຈະພາໃຫ້ເກີດເສີກ ສົງຄາມໃນເວລາໃດກໍໄດ້.

ການລົ້ມເຫລວຂອງການປ້ອງກັນປະຊາທິປະໄຕ ໃນສົງຄາມ ໂລກຄັ້ງທີນຶ່ງນັ້ນ ໄດ້ເຮັດໃຫ້ຊາວອະເມຣິກັນມີຄວາມເຂົ້າໃຈອັນຖືກ ຕ້ອງແລະປະກາດວ່າ ບໍ່ວ່າຈະຢູ່ໃນກໍຣະນີໃດໆກໍຕາມ, ປະເທດທີ່ກໍ່ ສົງຄາມນັ້ນ ຈະຂໍຄວາມຊ່ວຍເຫລືອຈາກສະຫະຣັຖບໍ່ໄດ້ເດັດຂາດ. ກົດຫມາຍ ວ່າດ້ວຍຄວາມເປັນກາງ ໄດ້ອອກ ໃນປີ ຈພມ້ຫ ຫາປີ ຈພມ້ກ, ຊຶ່ງກົດຫມາຍນີ້ ຫ້ານບໍ່ໃຫ້ສະຫະຣັຖ ຕິດຕໍ່ຄ້າຂາຍກັບປະ ເທດທີ່ກໍ່ສົງຄາມ ເພາະວ່າຈຸດປະສົງກໍຄືປ້ອງກັນບໍ່ໃຫ້ສະຫະຣັຖກ່ຽວ

ຂ້ອງນຳສົງຄາມທີ່ບໍ່ກ່ຽວກັບຊາວອະເມຣິກັນ.

ທ້າວປະທານາທິບໍດີ ຣູສເວລ໌ ແລະຣັຖມົນຕີຕ່າງປະເທດຄົ
ທ່ານຮູລ ຕ່າງກໍຄັດຄ້ານບໍ່ເຫັນດີນຳກົດໝາຍນີ້. ບັດນີ້ທ່ານປະທາ
ນາທິບໍດີພາລະທີ່ຈະຮັດໃຫ້ຊາວອະເມຣິກັນເຫັນວ່າ ການທຳລາຍ
ກຳລັງເຫລົ່ານີ້ໄດ້ດຳເນີນມາແລ້ວ ແລະອະເມຣິກາມີກຳລັງອາວຸດ
ພຽງພໍໃນການປ້ອງກັນຕົວເອງ ໃຫ້ມີກຳລັງອັນເຂັ້ມແຂງທ້ວງດ້ານກຳ
ລັງໃຈ ແລະວັດຖຸ. ທ່ານໄດ້ຮັດທຸກສິ່ງທຸກຢ່າງ ເພື່ອໃຫ້ກອງທັບ
ເຮືອຂອງອະເມຣິກາເຂັ້ມແຂງແລະທ່ານໄດ້ປະຕິເສດບໍ່ຮັບຮູ້ຣັຖ ຊຶ່ງ
ຖືວ່າເປັນພຽງຮຸ່ນຂອງແມນຊູກູໂອ. ເຊັ່ນດຽວກັນກັບທ່ານຮູລທີ່ໄດ້
ພຍາຍາມສ້າງຄວາມສາມັກຄີ ແລະຫມັ້ນຄົງໄວ້ກັບທຸກໆຊາດໃນຄຶ່ງ
ຊີກໂລກທາງພາກຕະເວັນຕົກ ໂດຍດຳເນີນນະໂຍບາຍແບບເພື່ອນ
ບ້ານໃກ້ຄຽງທີ່ດີ. ເມື່ອທ່ານຮູລໄດ້ຮັດສັນຍາແລກປ່ຽນສິນຄ້າກັບ
ປະເທດຕ່າງໆ ໃນອະເມຣິກາໃຕ້ໃນປີ ໑໙໓໕ ນັ້ນ, ສະຫະຣັຖໄດ້
ຮວມທ້ວງຮັດສັນຍາຮັບຮູ້ເຂດແດນກັບຫົກປະເທດ ໃນອະເມຣິກາໃຕ້
ໂດຍຂໍຮ້ອງໃຫ້ປະເທດຕ່າງໆເຫລົ່ານີ້ຮັບຮູ້ ບໍ່ໃຫ້ມີການລ່ວງລ້ຳເຂດ
ແດນຂອງກັນ ແລະກັນໂດຍກຳລັງທະຫານ ເມື່ອລັດທິແບບການຮວມ
ໝູ່ທະວີການລຸກລາມຍິ່ງຂຶ້ນ ຣັດເຊຍໄດ້ເພີ່ມອຳນາດບີບຕ້ັງປະເທດ
ໂປແລນ, ເດັນມ໊ຳກ, ນໍເວ, ໂຮແລນ, ເບລຢ່ຽມ ແລະປະເທດ
ຝຣັ່ງເສດ, ຊຶ່ງຮັດໃຫ້ກຳລັງໃຈຂອງຊາວອະເມຣິກັນຍິ່ງເຂັ້ມແຂງ

ຂັ້ນ. ບາດກ້າວຂັ້ນທຳອິດ ຂອງຊາວອະເມຣິກັນນັ້ນ ກໍຄືພະຍາຍາມ ຫລີກເວັ້ນສົງຄາມຍັດແຍ້ງຂອງຊາວຢຸໂຣບ ແຕ່ໃນຊ່ວຣະຍະເວລາ ນຶ່ງເຂົາເຈ້າຮູ້ສຶກວ່າການຮວມອຳນາດຈຶ່ງຈົ່ງຈຳເປັນຕໍ່ຄວາມປອດໄພຂອງ ຊາດນີ້ ອາດຈະໝາຍເຖິງການຍົ່ນຍຸ ຕໍ່ຄວາມປອດໄພຂອງຕົນ ດ້ວຍ.

ຄວາມເຊື່ອຖືຕາມທີ່ໄດ້ຄິດໄວ້ນັ້ນກໍເປັນຈິງຂຶ້ນມາຢ່າງໄວທັນ ໃຈເມື່ອຝຣັ່ງເສດຖີກຢຶດຄອງແລະຫ້ວງໝົດນີ້ໄດ້ສະແດງໃຫ້ເຫັນເຖິງ ອຳນາດແລະອິດທິພົນທາງທະຫານຂອງພວກນາຊີ. ໃນປີ ໑໙໔໐, ເມື່ອປະເທດອັງກິດຖືກໂຈມຕີທາງອາກາດໃນຣະດູຮ້ອນປີນັ້ນ, ຊາວ ອະເມຣິກັນຫລາຍຄົນ ບໍ່ຄິດຢາກຕັ້ງຕົວຢູ່ເປັນກາງຕໍ່ໄປອີກແລ້ວ ດັ່ງ ນັ້ນ ສະຫະຣັຖໄດ້ໂຮມກັນກັບສາທາຣະນະຣັຖອື່ນໆໃນອະເມຣິກາໃຕ້ ເພື່ອປ້ອງກັນຊາດທີ່ມີປະຊາທິປະໄຕ ໃນຄັ້ງຊີກໂລກທາງພາກຕະ ເວັນຕົກ ແລະສະຫະຣັຖ ແລະການາດາ ໄດ້ຈັດຕັ້ງການປ້ອງກັນປະ ເທດຮ່ວມກັນ. ສະພາກົງແກຣສຕ້ອງສູ້ໜ້າກັບສະຖານະການຮ້າຍ ແຮງຫລາຍຢ່າງ ຊຶ່ງເພີ່ມຂຶ້ນມາເລື້ອຍໆ ໂດຍໄດ້ອະນຸມັດເງິນກ້ອນ ໃຫຍ່ ຈຳນວນນຶ່ງ ສຳລັບໄວ້ສ້າງສົມອາວຸດ. ໃນເດືອນກັນຍາ ປີ ໑໙໔໐, ກົດໝາຍວ່າດ້ວຍການເກນທະຫານ ໃນຍາມສະງົບໄດ້ປາ ກົດອອກມາເປັນເທື່ອທຳອິດໃນປະວັດສາດອະເມຣິກັນ.

ໃນການເລືອກຕັ້ງປະທານາທິບໍດີຂອງ ປີ ໑໙໔໐, ການໂຄ

ສະນາສ່ວນຫລາຍ ແມ່ນເນັ້ນເຖິງຄວາມສຳຄັນ ຂອງການທ້ອນໂຮມ ຄວາມຮູ້ສຶກນຶກຄິດ ຂອງຊາວອະເມຣິກັນ. ສ່ວນຜູ້ທີ່ເຄີຍຄັດຄ້ານ ທ່ານຮູສເວລຕ້ຄືທ່ານແວລເດີລວິລກີ ກໍ່ກັບມາສນັບສນູນ ນະໂຍບາຍ ຕ່າງປະເທດຂອງທ່ານ ຮູສເວລຕ້ ແລະໃນເມື່ອທ່ານເຫັນດີນຳໂຄງ ການດຳເນີນງານພາຍໃນປະເທດແລ້ວ ທ່ານກໍ່ຂາດຜູ້ແຂ່ງຂັນ ແລະ ໃນການເລືອກຕັ້ງໃນເດືອນພຶສຈິກາຂອງປີນັ້ນ ສຽງສ່ວນໃຫຍ່ ແມ່ນ ສນັບສນູນໃຫ້ທ່ານຮູສເວລຕ້ ດຳຣົງຕຳແຫນ່ງຕໍ່ໄປ ແລະນັບວ່າເປັນ ເຫື່ອທຳອິດໃນປະວັດສາດອະເມຣິກັນ ທີ່ປະທານາທິບໍດີຄົນດຽວຄອງ ຕຳແຫນ່ງເຖິງສາມຄັ້ງຕິດຕໍ່ກັນ.

ໃນຂນະທີ່ຊາວອະເມຣິກັນ ເຝົ້າເບິ່ງວິຖີທາງຂອງສົງຄາມຢູ ໂຣບນັ້ນ, ຄວາມຕຶງຄຽດທາງດ້ານຕະເວັນອອກໄກ ກໍທະວີຂຶ້ນຕາມ ລຳດັບ. ດ້ວຍຄວາມກະຕືລືລົ້ນ ຢາກສວຍໂອກາດເພີ້ມທີ່ຫມັ້ນທາງ ຍຸທສາດ, ຍີ່ປຸ່ນກໍ່ດີ້ດ້ານ ປະກາດຄຳສັ່ງອອກມາໃຫມ່ອີກ ຊຶ່ງຍີ່ປຸ່ນ ຫວັງຈະຄອບຄອງດ້ານຕະເວັນອອກໄກທັງຫມົດ ຮວມທັງພາກມຫາ ສມຸດແປຊີຟິກດ້ວຍ. ເມື່ອເຫັນວ່າບໍ່ມີທາງຈະສູ້ແລ້ວ ອັງກິດຈຶ່ງໄດ້ ຖອນຕົວອອກຈາກຊຽງຮາຍແລະປິດຫົນທາງພະມ້າເປັນການຊົ່ວຄາວ ໃນຮະດູຮ້ອນຂອງປີ ๑ພ๔๐ ນັ້ນຍີ່ປຸ່ນໄດ້ໄຊຊນະຈາກຣັຖບານທີ່ອ່ອນ ກຳລັງຂອງທ່ານ ວິຊີ ແລະໄດ້ຮັບອະນຸຍາດໃຫ້ໃຊ້ເດີນຍົນຕ່າງໆໄດ້ ໃນອິນໂດຈີນຊຶ່ງຢູ່ພາຍໃຕ້ການປົກຄອງຂອງຝຣັ່ງເສດຫລັງຈາກຍີ່ປຸ່ນ

ໄດ້ເຂົ້າຮ່ວມກັບໂຮມແລະເບີລິນໃນເດືອນກັນຍາແລ້ວສະຫະຣັຖກໍໄດ້ ອອກຄຳສັ່ງຫ້າມບໍ່ໃຫ້ຕິດຕໍ່ຄ້າຂາຍກັບຍີ່ປຸ່ນເປັນເດັດຂາດ.

## ສົງຄາມດຳເນີນຕໍ່ໄປຢ່າງແທ້ຈິງ

ເມື່ອເຖິງປີ ໑໙໔໐, ປາກົດວ່າຍີ່ປຸ່ນມີທ່າທີວ່າຈະປິ່ນຈຸດສົນ ໃຈຂອງເຂົາໄປທາງໃຕ້ຊຶ່ງມີບໍ່ນ້ຳມັນ, ສີວິລາດ ແລະຢາງຍຶດຂອງ ມາລາຢູ ຊຶ່ງຢູ່ພາຍໃຕ້ການປົກຄອງຂອງອັງກິດແລະນິເທີແລນ. ໃນ ເດືອນກໍຣະກະດາປີ ໑໙໔໑, ເມື່ອຣັຖບານຂອງວີຊີໄດ້ອະນຸຍາດໃຫ ຍີ່ປຸ່ນຄອບຄອງສ່ວນທີ່ເຫລືອຂອງອິນໂດຈີນຫ້ວຫມົດນັ້ນ, ສະຫະຣັຖ ກໍສັ່ນສະທ້ານຕໍ່ການຄອບຄອງຂອງຍີ່ປຸ່ນຄັ້ງນີ້. ໃນວັນທີ ໑໗ ພຶສຈິ ກາ, ຫລັງຈາກມາຍພົນໂຕໂຈໄດ້ເຂົ້າຮັບຕຳແຫນ່ງເປັນຜູ້ນຳຂອງຍີ່ ປຸ່ນແລ້ວ, ຣັຖບານຍີ່ປຸ່ນໄດ້ສົ່ງຜູ້ຕາງຫນ້າພິເສດຄືທ່ານຊາບູໂຣ ກູຣູ ຊູ ມາສະຫະຣັຖ ແລະກູຣູຊູປະກາດວ່າ ການມາສະຫະຣັຖຂອງເຂົາ ເທື່ອນີ້ ເພື່ອມາທຳຄວາມເຂົ້າໃຈແບບສັນຕິວິທີແລະໃນວັນທີ ຝ ທັນ ວາ, ປະທານາທິບໍດີ ຣູສເວລ໌ໄດ້ສົ່ງຄຳຣຽກຮ້ອງ ເພື່ອສັນຕິພາບ ເປັນການສ່ວນຕົວໄປຍັງຈັກພັດຍີ່ປຸ່ນ ແລະຕື່ນເຊົ້າມາຂອງວັນທີເຈັດ ທັນວາ, ຍີ່ປຸ່ນໄດ້ໃຫ້ຄຳຕອບ ໂດຍການສົ່ງເຮືອບິນມາຖົ້ມຣະເບີດ ໃສ່ຖານທັບອະເມຣິກັນທີ່ເພິລຮາເບີ.

ລາຍລະອຽດຂອງການໂຈມຕີທາງອາກາດ ຂອງຍີ່ປຸ່ນເທື່ອນີ້

ມີການຖົ້ມຣະເບີດໃສ່ ຣາວາຍ, ໃສ່ຣະຫວ່າງກາງທາງ ເກາະ ເວກ ແລະກວມ ຂ່າວທັງໝົດນີ້ ແມ່ນສະຖານີວິທຍຸຂອງອະເມຣິກັນ ໄດ້ອອກອາກາດໃຫ້ປະຊາຊົນໄດ້ຊາບທົ່ວເຖິງກັນ ແລະເຫດການທັງ ໝົດນີ້ໄດ້ພາໃຫ້ທ່ານປະທານາທິບໍດີ ຣູສເວລຕ໌ຄຽດແຄ້ນທີ່ສຸດ ແລະ ທ່ານປະທານວ່າ ການກະທຳຊຸ່ມນີ້ເປັນການກະທຳຂອງຄົນຂີ້ຢ້ານທີ່ ຄັກໂຈມຕີຄົນທາງຫລັງ. ດັ່ງນັ້ນໃນວັນທີ ແປດທັນວາ, ສະພາກົງ ແກຣສ ໄດ້ປະກາດພາວະສົງຄາມກັບຍີ່ປຸ່ນ ແລະສາມວັນຕໍ່ມາເຢຣະ ມັນແລະອິຕາລີກໍໄດ້ປະກາດສົງຄາມກັບສະຫະຣັຖ.

ສຳລັບຊາວອະເມຣິກັນແລ້ວ ເຂົາເຈົ້າຖືວ່າການຕົກລົງໃຈ ເຂົ້າສູ່ສົງຄາມນີ້ປຽບເໝືອນໄຊຊນະອັນຍິ່ງໃຫຍ່ທາງປຣັຊຍາເພາະ ວ່າເຂົາເຈົ້າບໍ່ເຄີຍມັກຫລີຍມຣັບເອົາລັດທິທະຫານແຕ່ໃດໆມາແລະ ເມື່ອເຫດການເຖິງຂັ້ນນີ້ແລ້ວ ຣັຖທັມມະນູນຂອງສະຫະຣັຖ ຈຳຈະ ຕ້ອງຣັບເອົາຣະບຽບໃໝ່ ເພື່ອປ້ອງກັນຊີວິດຂອງຊາວອະເມຣິກັນ ໄວ້. ຢ່າງໃດກໍດີ, ຊາວອະເມຣິກັນທົ່ວໆໄປຖືວ່າສົງຄາມເປັນສິ່ງ ໂຫດຮ້າຍແລະອັບປໂຍດ ແຕ່ກໍເປັນສິ່ງຈຳເປັນທີ່ສຸດ ໃນປະວັດສາດ ຂອງປະເທດຊາດແລະບໍ່ມີຊາວອະເມຣິກັນຄົນໃດຄິດວ່າສົງຄາມນັ້ນມີ ຈຸດໝາຍນອກຈາກຄວາມຄົງຢູ່ຂອງສັນຕິພາບເທົ່ານັ້ນ. ໃນວັນທີ ໙ ເດືອນທັນວາ ປະທານາທິບໍດີຣູສເວລຕ໌ໄດ້ສົ່ງສານໄປຍັງຊາວອະເມ ຣິກັນທັງຫລາຍ ໂດຍມີເນື້ອຄວາມດັ່ງນີ້: "ຈຸດໝາຍປາຍທາງອັນ

ແທ້ຈິງທີ່ພວກເຮົາຊອກຫານັ້ນຍັງໄກ ແລະເຫນືອກວ່າສນາມຮົບອັນບໍ່ຈົບບໍ່ງາມນີ້. ເມື່ອເຮົາຈາໍເປັນຕ້ອງໃຊ້ກາໍລັງ ພວກເຮົາໄດ້ຕັດສິນໃຈແລ້ວວ່າ ການໃຊ້ກາໍລັງນີ້ ຈະນາໍພາພວກເຮົາໄປສູ່ຄວາມດີ ໂດຍປາບຄວາມຊົ່ວຮ້າຍ ໃຫ້ສູນຫາຍໄປ. ພວກເຮົາຊາວອະເມຣິກັນບໍ່ແມ່ນເປັນຜູ້ທາໍລາຍ ພວກເຮົາເປັນຜູ້ສ້າງ".

ຫລັງຈາກນັ້ນຄົນໃນຊາດໄດ້ຟ້າວຕັ້ງຕົວ ໂດຍໃຊ້ຄວາມພຍາຍາມທ້ອນໂຮມກາໍລັງພົລ ແລະຄວາມສາມາດໃນດ້ານອຸດສາຫະກັມ. ໃນວັນທີ ຝ ມະກະຮາ ຈພ.ສ.ຄ, ປະທານາທິບໍດີ ຮູສເວລຕ້ ໄດ້ປະກາດໃຫ້ເພີ້ມຜົນຜລິດຕາມຈຸດມຸ້ງຫມາຍ ຊຶ່ງຖ້າຈະປຽບໃສ່ໃນຍາມສງົບແລ້ວສິນຄ້າທີ່ສົ່ງຜລິດເພີ້ມນີ້ຄົງເຫລືອຫລາຍເກີນກວ່າຊາດຕ້ອງການ. ໃນປີດຽວນັ້ນ ທ່ານສັ່ງໃຫ້ໂຮງງານຜລິດເຮືອບິນ ຝ0,000 ລາໍ, ຮົຖຖັງ ຜຕ,000 ຄັນ, ປືນຕໍ່ຕ້ານອາກາສຍານ ຄ0,000 ກະບອກ, ແລະເຮືອສົ່ງສິນຄ້າອີກ ຊຶ່ງບັນທຸກນາໍ້ຫນັກໄດ້ເຖິງ ຈຊ,000,000 ຕອນ. ກິຈການຕ່າງໆໃນຊາດ ມີການເຄື່ອນໄຫວກັນຢ່າງໃຫຍ່ ເຊັ່ນ ການປູກຝັງ, ການຫັຖກັມ, ການຊຸດບໍ່, ການຄ້າ, ການດາໍເນີນວຽກການ, ການລົງທຶນ, ການຄົມນາຄົມ ແລະແມ່ນແຕ່ການສຶກສາແລະວັທນະທັມ ກໍໄດ້ເອົາໃຈໃສ່ເປັນຢ່າງດີແລະໄດ້ມີການຄວບຄຸມ ຂຍາຍໃຫ້ໃຫຍ່ຂຶ້ນ. ໄດ້ມີການຫາເງີນລາຍໄດ້ເພີ້ມຂຶ້ນຈາໍນວນຫລວງຫລາຍ ອຸດສາຫະກັມໃຫຍ່ແນວໃຫມ່ ກໍໄດ້ຖືກ

ຈັດຕັ້ງຂຶ້ນ ໄດ້ມີການນຳເອົາວິທີເຕັກນິກແບບໃຫມ່ມາໃຊ້ ໃນການ ຜລິດກຳປັ່ນແລະເຮືອຂນາດຫລວງຫລາຍແລະປະຊາຊົນໄດ້ພາກັນຍົກ ຍ້ານທີ່ຢູ່ອາໄສ ເປັນຈຳນວນຫລວງຫລາຍ. ຫລັງຈາກກົດຫມາຍ ກ່ຽວກັບການເກັນທະຫານໄດ້ອອກມາແລ້ວ, ກອງທັບຂອງສະຫະຣັຖ ມີພົນທະຫານທັງຫມົດ ຈ້ຍ,ຈ00,000 ຄົນ. ເມື່ອເຖິງທ້າຍ ປີ ຈພ້ຍມ ມີບັນດາຜູ້ຊາຍ ແລະຜູ້ຍິງທີ່ເຂົ້າຮັບໃຊ້ໃນກອງທັບ ປະມານ ຝ້ຍ,000,000 ຄົນ.

ເມື່ອສະຫະຣັຖຈຳຕ້ອງເຂົ້າສູ່ເສີກສົງຄາມເຊັ່ນນີ້, ສະຫະ ຣັຖກໍໄດ້ຕັດສິນໃຈວ່າຄວາມພຍາຍາມສ່ວນໃຫຍ່ໃນດ້ານທະຫານຄວນ ຈະທຸ່ມເທກຳລັງຂອງພັນທະມິດ ຂອງປະເທດຕະເວັນຕົກ ໄປທາງຢຸ ໂຣບດ້ວຍວ່າ ກຳລັງສ່ວນໃຫຍ່ຂອງສັດຕູແມ່ນຢູ່ທາງນັ້ນ. ໃນຂນະ ດຽວກັນນັ້ນ ເສີກສົງຄາມໃນແຖບມຫາສະມຸດແປຊິຟິກ ໄດ້ຈັດຢູ່ໃນ ອັນດັບສອງ ແຕ່ແນວໃດກໍດີ ໃນປີອັນມືດມົນຂອງ ຈພ້ຍ້ຍ ນັ້ນ, ຜົນ ສຳເຣັດທີ່ສຳຄັນທີ່ສຸດ ໃນຄັ້ງທຳອິດແມ່ນຢູ່ທາງແປຊິຟິກ ແລະຄວາມ ສຳເຣັດຄັ້ງນີ້ແມ່ນຜົນການປະຕິບັດງານຂອງກອງທັບເຮືອ ແລະກອງ ທັບອາກາດ. ໃນເດືອນພຶສພາປີ ຈພ້ຍ້ຍ ກຳລັງຂອງຍີ່ປຸ່ນໄດ້ຮັບ ຄວາມເສັຍຫາຍຫລາຍໃນການສູ້ຣົບທີທະເລຄໍຣາລ ຈົນວ່າຍີ່ປຸ່ນເລີກ ລົ້ມຄວາມຄິດທີ່ຈະໂຈມຕີໂອສເຕຣເລັຍ. ໃນເດືອນມິຖຸນາເຮືອບິນ ຂອງກອງທັບອາກາດອະເມຣິກັນ ໄດ້ເຮັດໃຫ້ສັດຕູຕ້ອງພົບກັບຄວາມ

ເສັຍຫາຍຢ່າງໃຫຍ່ຫລວງຢູ່ທີ່ເຄິ່ງທາງໄປຫາດອນ ໃນເດືອນສິງຫາ ໄດ້ມີການປະຕິບັດງານຮ່ວມກັນ ຣະຫວ່າງກອງທັບບົກ ແລະກອງທັບ ເຮືອ ຊຶ່ງໄດ້ນຳພົນສຳຣັດມາໃຫ້ກອງທັບອະເມຣິກັນສາມາດຍຶດທີ່ ໝັ້ນທີ່ຢ່ອງແຄບກາດາລ ແລະໄດ້ຮັບໄຊຊນະທາງນ່ານນ້ຳຢ່ອນອື່ນໆ ອີກເຊັ່ນໄຊຊນະໃນການສູ້ຣົບທີ່ທະເລບິສມາກ. ຄວາມຫວັງໃນການ ໄດ້ໄຊຊນະຈາກການສູ້ຣົບນັ້ນມີເພີ່ມຂຶ້ນເມື່ອເວລາທາງກອງທັບເຮືອ ໄດ້ເພີ່ມຄວາມໄວຂຶ້ນຢ່າງບໍ່ໜ້າເຊື່ອ ຊຶ່ງເນື່ອງມາຈາກການສ້າງ ເຮືອມີເພີ່ມຂຶ້ນຫລາຍ.

## ພັນທະມິດໄດ້ເຮັດໃຫ້ອຳນາດຮ່ວມຂອງຜູ້ກໍ່ສົງຄາມພ່າຍແພ້

ໃນເວລາດຽວກັນນັ້ນ ການສົ່ງອາວຸດຍຸທໂທປະກອນໄດ້ເລີ່ມ ຫລັ່ງໄຫລໄປທາງຢຸໂຣບ. ໃນຣະດູຮ້ອນຂອງປີ ໑໙໔໘, ເມື່ອໄດ້ ຮັບກຳລັງສນັບສນຸນຈາກກອງທັບອະເມຣິກັນແລ້ວ ກຳລັງຂອງກອງ ທັບອັງກິດ ຈຶ່ງເຂັ້ມແຂງຂຶ້ນທັ້ງຍັງໄດ້ຕີຂັບໄລ່ເຢຣະມັນ ໃຫ້ອອກໄປ ຈາກທີ່ໝັ້ນທີ່ເອີຢິບແລະໄດ້ຕີຢູໂຣມເມລ ໃຫ້ຖອຍອອກໄປຣອດຕຣິໂປ ລີ ແລະໄດ້ເຮັດໃຫ້ຢູເອັສ ພົ້ນຈາກການຂົ່ມຂູ່ຕໍ່ໄປ ແລະໃນວັນທີ ๗ ເດືອນພຶສຈິກາປີ ໑໙໔໘, ກຳລັງທັບອະເມຣິກັນໄດ້ໄປຕັ້ງຢູ່ທາງອາ ຟຼິກາພາກເໜືອຊຶ່ງຢູ່ພາຍໃຕ້ການປົກຄອງຂອງຝຣັ່ງເສດ. ຫລັງ ຈາກການສູ້ຣົບທີ່ຂົ່ມຂຶ່ນ, ກອງທະຫານອິຕາລີ ແລະເຢຣະມັນໄດ້ພົບ

ກັບຄວາມພ່າຍແພ້ ຢ່າງໃຫຍ່ຫລວງ ເພາະວ່າທະຫານ ໃນກອງທັບ ນ໔ພ,ooo ຄົນໄດ້ຖືກຈັບເປັນສະເລີຍເສິກໃນການຮະດູຮ້ອນຂອງປີ ໑ພ໔ນ ຢູ່ທາງແຄມຝັ່ງດ້ານໃຕ້ຂອງທະເລເມດິເຕີເຣນຽນ ກໍໄດ້ຖືກ ປົດປ່ອຍຈາກການຍຶດຄອງຂອງກຳລັງຂອງທະຫານຟາຊິສ ໝນ. ຕໍ່ ມາໃນເດືອນກັນຍາ ຣັຖບານອິຕາລີໄດ້ຖືກຈັດຕັ້ງຂຶ້ນໃໝ່ ໂດຍພາຍ ໃຕ້ການນຳຂອງນາຍພົນບາໂດກລິໂອ ຊຶ່ງໄດ້ເຊັນສັນຍາຢຸດຍິງຊຶ່ວ ຄາວແລະໃນເດືອນຕໍ່ມາຄືເດືອນຕຸລາ, ອິຕາລີໄດ້ປະກາດສົງຄາມ ຮ່ວມກັບເຢຣະມັນໃນຂນະທີ່ມີການສູ້ຣົບຢ່າງໜັກຢູ່ອິຕາລີນັ້ນ, ສ່ວນ ກຳລັງທະຫານພນທະນິດກໍໄດ້ທຳການໂຈມຕີທາງອາກາດໃສ່ທາງຣົຖ ໄຟ, ໂຮງງານແລະສາງອາວຸດຂອງເຢຣະມັນ ແລະເລີກລົງໄປໃນ ທະວີບນ້ຳມັນຂອງເຢຣະມັນທີ່ໂປລເອສຕີ ໃນປະເທດຮູເມເນັຍ ກໍຖືກໂຈມຕີຄືກັນ.

ຕົກມາໃນທ້າຍປີ ໑ພ໔ນ, ຫລັງຈາກຝ່າຍພັນທະນິດ ໄດ້ຖືກ ຖຽງກັນເຣື່ອງຍຸທສາດແລ້ວ ໄດ້ມີການຕົກລົງກັນວ່າ ຈະເປີດດ້ານທີ່ ໜັ້ນຂອງຝ່າຍຕະເວັນຕົກຂຶ້ນເພື່ອຈະຂັບໄລ່ກຳລັງເຢຣະມັນໃຫ້ແຕກ ກະຈັດກະຈາຍ ໄປຈາກປ້ອມທີ່ໜັ້ນຢູ່ທາງເຂດຣັສເຊັຍ ດີກວ່າຈະ ໜັກໄປໃນການປະຕິບັດງານທີ່ອິຕາລີ. ຕໍ່ມານາຍພົນໄອເຊັນຮາວ ເວີ ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ບັງຄັບບັນຊາສູງສຸດຂອງກອງທັບ ແລະ ການຕຽມ ຫລາຍສິ່ງ ຫລາຍຢ່າງ ຈະຕ້ອງຣີບເຮັ່ງ. ໃນວັນທີ ຝ

24/VII
ห้ามจำหน่าย

ເດືອນມີຖຸນາ ຊຶ່ງໃນຂນະທີ່ຣັສເຊັຍ ກຳລັງເລີ້ມການໂຈມຕີຢູ່ນັ້ນ, ທະຫານຊຸດທຳອິດຂອງກອງທັບອະເມຣິກັນແລະອັງກິດໄດ້ບຸກລຸກເຂົ້າ ໄປເຖິງຫາດຊາຍຂອງນໍມັນດີ ໂດຍໄດ້ຣັບການອາຣັກຂາ ຈາກກອງ ທັບອາກາດ. ເມື່ອເວລາທາງຫົວຫາດຖືກຍຶດເອົາແລ້ວ ກຳລັງທະ ຫານໄດ້ຫລັ່ງໄຫລເຂົ້າມາຕື່ມ ແລະກອງທະຫານປ້ອງກັນຂອງເຢຣະ ມັນຈຳນວນຫລວງຫລາຍໄດ້ຖືກຫຸ້ມລ້ອມແລະໃນທີ່ສຸດກອງທັບຂອງພັນ ທະມິດໄດ້ເລີ້ມເຄື່ອນຍ້າຍຂ້າມປະເທດຝຣັ່ງ ແລະມຸ້ງຫນ້າໄປຢັງເຢ ຣະມັນໂດຍຮຸກຄືບຫນ້າໄປຢ່າງບໍ່ທໍ້ຖອຍ. ນະຄອນປາຣີ ໄດ້ຖືກປົດ ປ່ອຍໃນວັນທີ ๔๕ ສິງຫາ. ຢູ່ທີ່ເຂດຊາຍແດນ ຂອງເຢຣະມັນກຳ ລັງຂອງພັນທະມິດໄດ້ເລື່ອນເວລາໄປອີກ ດ້ວຍວ່ານີການຕໍ່ສູ້ອັນສູ້ຊົນ ຂອງສັດຕູ, ແຕ່ໃນເດືອນກຸມພາແລະມີນາປີ ๑๗๔๕ ກຳລັງທະຫານ ໄດ້ຫລັ່ງໄຫລເຂົ້າໄປໃນເຢຣະມັນທາງພາກຕະເວັນຕົກແລະກອງທັບ ຂອງເຢຣະມັນໄດ້ຖອຍຫນີໄປຕັ້ງຢູ່ທາງດ້ານຕະເວັນອອກ. ໃນວັນ ທີ ຜ ພຶສພາ ສ່ວນທີ່ເຫລືອ ນຶ່ງສ່ວນສາມຂອງປະເທດເຢຣະມັນໄດ້ ຍອມພ່າຍແພ້ທັງທາງບົກ, ທາງທະເລ ແລະທາງອາກາດ.

ໃນເວລາດຽວກັນນັ້ນ ການສູ້ຣົບ ຂອງທະຫານອະເມຣິກັນ ທາງມຫາສະມຸດແປຊິຟິກ ກໍໄດ້ມີການຄືບຫນ້າຫລາຍຂຶ້ນ. ເມື່ອກຳ ລັງທະຫານອະເມຣິກັນ ແລະໂອສເຕຣລຽນໄດ້ຕີແຫຍ້ຂຶ້ນ ເມື່ອທາງ ເຫນືອ ຕາມແຖວກາະດອນຜ່ານ ໂສໂລມອນສ່, ນິວຫຼີຕັນ, ນິວກີ

ເນັຍແລະ ຢູເກນວິລແລະກຳລັງຂອງກອງທັບເຮືອຍິ່ງເພີ່ມກຳລັງຂຶ້ນ ຈຶ່ງສາມາດຕັດທາງສົ່ງສະບຽບຂອງຍີ່ປຸ່ນ. ໃນເດືອນຕຸລາປີ ໑໗໔໔ ກຳລັງກອງທັບເຮືອໄດ້ຮັບໄຊຊຸນະທີ່ທະເລຟີລິບປິນ. ບົດບາດໃດໆ ທີ່ຈະດຳເນີນຕໍ່ໄປໃນເກາະໄອໂວຈິມາ ແລະໂອກິນາວາ ໄດ້ພາໃຫ້ ເຫັນແລ້ວວ່າ ການສູ້ໂຕ້ຕອບຂອງຍີ່ປຸ່ນນັ້ນ ອາດຈະດຳເນີນໄປເປັນ ເວລານານ ແມ່ນວ່າ ຈະເປັນທີ່ໝັ້ນບ່ອນສຸດທ້າຍ ໂດຍຂາດຄວາມ ຫວັງຂອງຍີ່ປຸ່ນກໍຕາມ, ແຕ່ສົງຄາມໄດ້ຢຸດຕິລົງຢ່າງກະທັນຫັນ ໃນ ເດືອນສິງຫາຫລັງຈາກຝູງບິນອະເມຣິກັນໄດ້ຖິ້ມຣະເບີດໃສ່ເມືອງ ຮິ ໂຣຊິມາ ແລະນາກາສາກິ. ໃນທີ່ສຸດຍີ່ປຸ່ນກໍ້ຕ້ອງຍອມພ່າຍແພ້ ໃນ ວັນທີ ໘ ເດືອນກັນຍາ ປີ ໑໗໔໕.

ດ້ວຍຄວາມພຍາຍາມ ຂອງທະຫານພັນທະມິດ, ການປະຊຸມ ຣະຫວ່າງຊາດຄັ້ງສຳຄັນກໍ່ໄດ້ເປີດຂຶ້ນ ເພື່ອພິຈາຣະນາມະໂຍບາຍ ການເມືອງຂອງສົງຄາມ ໃນເວລາຂ້າງໜ້າ. ການປະຊຸມຄັ້ງທຳ ອິດນັ້ນ ໄດ້ເລີ່ມຂຶ້ນໃນເດືອນສິງຫາປີ ໑໗໔໑ ຣະຫວ່າງປະທານາທິ ບໍດີ ຣູສເວລ໌ ແລະນາຍົກຣັຖມົນຕີ ເຊີຊິລ ຂອງອັງກິດ ຊຶ່ງໃນ ເວລານັ້ນສະຫະຣັຖບໍ່ທັນໄດ້ສູ້ຣົບຢ່າງເອົາຈິງເອົາຈັງເທື່ອ ແຕ່ສະ ຖານະການທາງດ້ານທະຫານຂອງອັງກິດແລະຣັສເຊັຍປາກົດວ່າອ່ອນ ກຳລັງທີ່ສຸດ. ທ່ານຣູສເວລ໌ ແລະທ່ານເຊີຊິລ ໄດ້ພົບປະຫາລືກັນ ຢູ່ໃນເຮືອຢູ່ກາງນ້ຳໃກ້ໆກັບນິວຟາວແລນ ແລະໄດ້ຕົກລົງເຊັນສັນຍາ

ວ່າດ້ວຍສົນທິສັນຍາແອດແລນຕິກ ໂດຍອີງໃສ່ຈຸດປະສົງຕາມພັນຖານ ເຫລົ່ານັ້ນບໍ່ໃຫ້ ຝ່າຍນຶ່ງຝ່າຍໃດ ຂຍາຍເຂດແດນຂອງຕົນ, ບໍ່ໃຫ້ມີ ການປ່ຽນແປງເຂດແດນໃດໆ ໂດຍບໍ່ໄດ້ຖາມຄວາມສມັກໃຈຂອງປະ ຊາຊົນທີ່ກ່ຽວຂ້ອງ ໃຫ້ສິດທິປະຊາຊົນທີ່ຢູ່ໃນດິນແດນ ຫລືປະເທດນັ້ນ ໄດ້ເລືອກຮະບຽບການປົກຄອງໂດຍເຂົາເຈົ້າເອງ ໃຫ້ມີການຮ່ວມ ໄມ້ຮ່ວມມືທາງເສຖກິດຮະຫວ່າງປະເທດ ໃຫ້ທຸກຄົນມີ ເສຣີພາບ ບໍ່ ຫວາດຫວັ່ນຕໍ່ໄພສົງຄາມ ເສຣີພາບໃນການເດີນທະເລ ບໍ່ໃຫ້ໃຊ້ກຳ ລັງທະຫານເປັນເຄື່ອງມືໃນດ້ານກິຈການຮະຫວ່າງຊາດ.

ການພົບປະກັນຄັ້ງຍິ່ງໃຫຍ່ອີກໄດ້ມີຂຶ້ນທີ່ເມືອງກາຊາບລັງກາ ໃນເດືອນມະກະຣາປີ ໑໙໔໙. ໃນການພົບປະຄັ້ງນີ້, ທີ່ປະຊຸມໄດ້ ຕົກລົງກັນວ່າຄວາມສັນຕິທີ່ກ່າວມານີ້ບໍ່ໄດ້ຮ່ວມເອົາພວກທ້ອນໂຮມອຳ ນາດນິຍົມ

ນາຍເຫນືອຫົວຂອງເຂົາເຈົ້າ ຈະຕ້ອງຍອມຮັບວ່າ ການຄອງໂລກ
ທັ້ງຫມົດຂອງເຂົາເຈົ້ານັ້ນພົ້ນສມັຍໄປແລ້ວ ແລະຈະພົບກັບການພ່າຍ
ແພ້ທັ້ງຫມົດ.

## ອະວະສານຂອງສົງຄາມ

ຢູ່ທີ່ເມືອງເກເບັກໃນເດືອນສິງຫາປີ ໑໙໔໗ ໄດ້ມີການປະ
ຊຸມຣະຫວ່າງຜູ້ນໍາຂອງອັງກິດແລະອະເມຣິກັນ ເພື່ອປຶກສາຫາລືແລະ
ວາງແຜນການຕໍ່ສູ້ກັບຍີ່ປຸ່ນ ແລະການຍຸທສາດທາງດ້ານທະຫານແລະ
ການທູດ ໃນອະນາຄົດ. ໃນສອງເດືອນຕໍ່ມາ, ຣັຖມົນຕີຕ່າງປະ
ເທດຂອງອັງກິດ, ສະຫະຣັຖ ແລະຣັສເຊັຍ ໄດ້ພົບກັນຢູ່ທີ່ກຸງໄມສກູ
ແລະຜູ້ຕາງຫນ້າຂອງປະເທດເຫລົ່ານີ້ໄດ້ຢືນຢັນອີກຄັ້ງນຶ່ງເຖິງມະໂຍ
ບາຍການຍອມແພ້ໂດຍປາສຈາກເງື່ອນໄຂໃດໆ ຊຶ່ງຈະຣັດໃຫ້ອິດທິ
ພົນຂອງພວກຟາຊິສໃນອິຕາລີສິ້ນສຸດລົງ ແລະໃຫ້ຄືນເອກຣາຊໃຫ້ແກ່
ປະເທດໂອສເຕຣັຍ, ແລະສັນຍາການຮ່ວມໄມ້ຮ່ວມມື ໃນອະນາຄົດ
ຫລັງຈາກສົງຄາມສິ້ນສຸດລົງ ຣະຫວ່າງປະເທດມະຫາອໍານາດ ທີ່ມັກ
ຄວາມສງົບ. ຢູ່ທີ່ກຸງໄຄໂຣ, ທ່ານ ຣູສເວລ໌ ແລະເຊີຊິລໄດ້ພົບ
ປະກັບທ່ານຈຽງໄຄເຊັກ ແລະການຕົກລົງ ກ່ຽວກັບປະເທດຍີ່ປຸ່ນນັ້ນ
ເປັນທີ່ເຫັນຊອບດ້ວຍກັນຊຶ່ງທັ້ງຫມົດນີ້ແມ່ນກ່ຽວກັບການປະພຶດຕົວບໍ່ດີ
ຂອງຍີ່ປຸ່ນທີ່ໄດ້ທໍາການລຸກລ້ານໝູ່ໃນອະດີດ.

ທີ່ນະຄອນເຕເຮຮານໃນວັນທີ ๘ ພຶສຈິກາ ທ່ານຮູສເວລ໌ ທ່ານເຊີຊິລແລະທ່ານສະຕາລິນ ໄດ້ຢືນຢັນຂໍ້ຕົກລົງຂອງການປະຊຸມທີ່ ໂມສກູ ແລະໄດ້ຮຽກຮ້ອງຢ່າງໃຫ້ມີສັນຕິພາບ ຊົ່ວກາລະນານໂດຍ ຜ່ານອົງການສະຫະປະຊາຊາດ.

ເກືອບສອງເດືອນຕໍ່ມາ ຜູ້ນຳຂອງປະເທດເຫລົ່ານີ້ ໄດ້ພົບພໍ້ ກັນອີກຄັ້ງນຶ່ງທີ່ຢາລຕາ ໃນເດືອນກຸມພາປີ ๑๙๔๕ ແລະດ້ວຍໄຊ ຊຸນະທີ່ໄດ້ຮັບຄັ້ງນີ້ໄດ້ພາໃຫ້ຫາຍຫ່ວງ ແລະໄດ້ມີການຕົກລົງອື່ນໆອີກ ຊຶ່ງຮັສເຊັຍໄດ້ຕົກລົງຢ່າງເປັນທາງລັບວ່າ ຈະເຮັດສົງຄາມກັບຍີ່ປຸ່ນ ຫລັງຈາກ ເຢຣະມັນຍອມແພ້ແລ້ວ ເຂດແດນທາງດ້ານຕະວັນອອກ ຂອງໂປແລນນັ້ນໄດ້ກຳນົດໄວ້ຢູ່ທີ່ ເຄີຊອນ ໃນປີ ๑๙๑๙ ຫລັງຈາກ ໄດ້ມີການຖົກຖຽງກັນກ່ຽວກັບການສ້ອມແປງຂນານໃຫຍ່ ຊຶ່ງທ່ານສະ ຕາລິ່ນໄດ້ຮຽກຮ້ອງໃຫ້ເຢຣະມັນເປັນຜູ້ຮັບພາລະ ກ່ຽວກັບເຣື່ອງນີ້ ທ່ານຮູສເວລ໌ແລະເຊີຊິລໄດ້ຄັດຄ້ານບໍ່ເຫັນດີນຳ ດັ່ງນັ້ນການຕົກລົງ ຈຶ່ງໄດ້ເລື່ອນກຳນົດອອກໄປອີກ ແຕ່ຕໍ່ມາກໍໄດ້ມີການຕົກລົງກັນຄັກແນ່ ກ່ຽວກັບການຢຶດຄອງຂອງກຳລັງພັນທະມິດໃນເຢຣະມັນແລະການປົກ ຄອງພ້ອມທັງການຕັດສິນລົງໂທດອາຊຍາກອນສົງຄາມແລະຫລັກການ ຂອງສົນທິສັນຍາແອດແລນຕິກ ກໍໄດ້ຟື້ນຟູຂຶ້ນອີກໂດຍໃຫ້ສອດຄ້ອງກັບ ປະຊາຊົນ ທີ່ຢູ່ໃນເຂດປົດປ່ອຍ. ເປັນທີ່ເຫັນຊອບດ້ວຍກັນແລ້ວວ່າ ອຳນາດຂອງຄນະມົນຕຣີຄວາມໝັ້ນຄົງ ຂອງສະຫະປະຊາຊາດນັ້ນມີ

ສິດຄັດຄ້ານຕໍ່ສິ່ງທີ່ເຫັນວ່າພົວພັນຕໍ່ຄວາມປອດໄພ. ຫລັງຈາກໄດ້ມີ ການອອກຄວາມຄິດຄວາມເຫັນ ທີ່ແຕກຕ່າງກັນແລ້ວ ທ່ານຮູສເວລ໌ ໄດ້ຢູ່ທາງນຶ່ງແລະທ່ານສະຕາລິນ ແລະເຊີຊິລອີກທາງນຶ່ງ ໂດຍໄດ້ມີ ການຕົກລົງກັນວ່າທຸກໆອຳນາດຈະສນັບສນຸນຄວາມຮຽກຮ້ອງຂອງສະ ຫະພາບໂຊວຽດ ທີ່ຂໍຄະແນນສຽງຕື່ມສອງຄະແນນ ໃນສັດຊາໃຫຍ່ ຂອງສະຫະປະຊາຊາດ ໂດຍອີງໃສ່ພື້ນຖານທີ່ວ່າເມືອງ ຢູເຄຣນ ແລະໄບໂລຣັສເຊັຍ ມີພົລເມືອງຢ່າງຫລວງຫລາຍ.

ສອງເດືອນຕໍ່ມາ ຫລັງຈາກທ່ານຮູສເວລ໌ກັບມາແຕ່ປະຊຸມທີ່ ຢາລຕາ ທ່ານໄດ້ເຖິງແກ່ກັມໂດຍເສັ້ນເລືອດໃນສມອງແຕກໃນຂນະ ທີ່ກຳລັງພັກຜ່ອນຢູ່ບ້ານພັກຂອງທ່ານທີ່ຣັຖ ຈໍເຈັຍ ຢູ່ໃນປະວັດສາດ ອະເມຣິກັນ, ບໍ່ຄ່ອຍມີຜູ້ນຳຫລາຍຄົນປານໃດ ທີ່ມີຄົນໄວ້ອາໄລນຳ ຢ່າງຫລວງຫລາຍທັງພາຍໃນປະເທດແລະໃນຕ່າງປະເທດເທົ່າການ ຈາກໄປຂອງທ່ານ ຮູສເວລ໌ ໃນຄັ້ງນີ້ ຊົ່ງຊາວອະເມຣິກັນທຸກຖ້ວນ ໜ້າໄດ້ພົບກັບຄວາມເສົ້າໂສກເສັຍດາຍຢ່າງສຸດຊົ້ງໃນການສູນເສັຍ ວິຣະບຸຣຸດຜູ້ກ້າຫານຄົນນຶ່ງ. ການເປັນຜູ້ນຳ ຂອງຣະບອບປະຊາທິ ປະໄຕນັ້ນແມ່ນເປັນສິ່ງຈຳເປັນທີ່ສຸດ ແລະຕໍ່ນັ້ນມາບໍ່ດົນ ຜູ້ສືບຕໍ່ຈາກ ທ່ານຮູສເວລ໌ ກໍຄືທ່ານແຮ ຣີ ແອສ ທຣູ ແມນ ທີ່ໄດ້ຂົ້ນຄອງຕຳ ແໜ່ງທັງກິຈການພາຍໃນແລະນະໂຍບາຍຕ່າງປະເທດ.

ຕໍ່ມາໃນເດືອນກໍຣະກະດາປີ ໑໙໔໕ ໃນຂນະທີ່ຜູ້ນຳຂອງປະ

ເທດອັງກິດ ສະຫະຣັຖ ແລະສະຫະພາບໂຊວຽດ ກຳລັງປະຊຸມກັນຢູ່ ໂພສດາມ ເຢຣະມັນໄດ້ຍອມຜ່ายแพ้แล้ว ແຕ່ການເລືອກຕັ້ງທົ່ວ ໄປ ໃນປະເທດອັງກິດກໍ່ກຳລັງດຳເນີນຕໍ່ໄປຢູ່, ຜູ້ທີ່ໄປຮ່ວມປະຊຸມ ເທື່ອນີ້ກ້ວ່ານ ເຊີຊິລແລະທ່ານເຊຼແມນ ແອດລີ ຜູ້ທີ່ໄດ້ເຂົ້າປະຊຸມ ໃນຄັ້ງທຳອິດ, ແລະທ່ານ ແອດລີ ເປັນຜູ້ດຳເນີນການເຈຣະຈາຕໍ່ ໄປ. ແມ່ນວ່າໃນການປະຊຸມເທື່ອນີ້ ໄດ້ນຳເອົາເຣື່ອງແນວທາງ ຂອງສົງຄາມໃນພາກພື້ນແປຊີຟິກຂຶ້ນມາພິຈາຣະນາກໍຕາມ ແຕ່ຂໍ້ໃຫຍ່ ໃຈຄວາມໃນການປະຊຸມເທື່ອນີ້ແມ່ນການວາງກິດເກມກ່ຽວກັບນະໂຍ ບາຍການຍຶດຄອງແລະໂຄງການສຳລັບອະນາຄົດຂອງເຢຣະມັນ. ຕໍ່ ມາກອງປະຊຸມຕົກລົງກັນແລ້ວວ່າ ຈະໃຫ້ເຢຣະມັນມີຄວາມສາມາດ ພຽງພໍໃນດ້ານອຸດສາຫະກັມ ເພື່ອຟື້ນຟູເສຖກິດໃນຍາມສງົບເສີກແຕ່ ຈະບໍ່ປ່ອຍໃຫ້ປະເທດນີ້ມີເຫລືອຫລາຍພໍທີ່ຈະເອົາໄປສ້າງອຸປກອນ ສົງຄາມ. ເປັນທີ່ຮູ້ກັນແລ້ວວ່າ ພວກນາຊິສ ຈະຖືກຕັດສິນໂທດປະ ຫານຊີວິດໃນຂໍ້ຫາເປັນຜູ້ກໍ່ສົງຄາມທີ່ເອີ້ນວ່າໂຄງການຂອງນາຊີ ຊຶ່ງ ເຫັນວ່າມີຄວາມຈຳເປັນໃນການຝຶກສອນຊາວເຢຣະມັນທີ່ໃຫຍ່ຂຶ້ນມາ ໃນສມັຍຂອງນາຊິສ ແລະເຫັນດີນຳລັດທີ່ນີ້. ນອກນັ້ນ ກໍໄດ້ວາງ ຫລັກການໄວ້ຢ່າງກ້ວ້າງຂວ້າງ ໃນການປົກຄອງແບບປະຊາທິປະໄຕ ແກ່ຊີວິດການເມືອງຂອງເຢຣະມັນ ໄດ້ພິຈາຣະນາ ເຣື່ອງການຮຽກ ຮ້ອງເງິນຄ່າປ່ວຍການ ຈາກເຢຣະມັນ ເປັນເວລາຕົ້ນມານ ຫລັງ



ພາບຕົກທີ່ທຳການຂອງອົງການສະຫະປະຊາຊາດ ເມື່ອເວລາພະອາທິດຂຶ້ນ ອົງການສະຫະປະຊາຊາດເປັນຄວາມຫວັງໃນ
ສັນຕິພາບຂອງໂລກ.

ເທິງ: ພາບນາເຂົ້າຂົດອັນອຸດົມສົມບູນ  ລຸ່ມ: ຮ້ານຂາຍອາຫານແລະພືນໄມ້



โรงงานหลอมเหล็กใช้เป็นเหล็กกล้า





ການນຳເອົາສິລປະເຄື່ອງແຕ່ກາຍໃນການຟ້ອນລຳຂອງສມັຍບູຮານ ໃຫ້ເຂົ້າກັບສມັຍປັດຈຸບັນແລະອະນາຄົດ ລຸ່ມ: ການ
ສະແດງລະຄອນ ດົນຕີ ເມື່ອປີ ຈກກຜ້ ບັນຣະຍາຍເຖິງເຣື່ອງຣາວໃນການປະກາດອິສຣະພາບຂອງສະຫະຣັຖອະເມຣິກາ











ນັກດຳນ້ຳທົດລອງສຳຮວດ ແລະຢູ່ໃຕ້ນ້ຳເປັນເວລາ ຜໍ້ວ ວັນ



ຄວາມຝັນຂອງມະນຸດມາຕັ້ງແຕ່ສມັຍບູຮານເປັນຄວາມຈິງຂຶ້ນແລ້ວ ເມື່ອມະນຸດຈາກໂລກເຮົາບີ້ສາມາດເດີນທາງໄປຢຽບ ເທິງດວງຈັນໄດ້.

ภาษปับปุวธิถไฟใช้มีความไวสูวอั้น โดยใจ้เคื่อวยิบกิวซับ สามาถทำความไวได้จิ่วโมวละ ๔ภ๔ กิโลแมถ
ลุ่ม: โบอิ้ว ภ๔ภ เป็นเคื่อวบิบขนาดใหญ่ที่สุด บับทุกคิบโดยสามได้ ๗๐๐ คิบ สามาถบิบเป็นละยะทาว
๑.๐๐๐ กิโลแมถใบบึ่วจิ่วโมว.



ເຮືອເດີນສມຸດກຳລັງແລ່ນລອດຂົວ ເວີຮຸາຊາໂນ-ແນໂຮວ່ ຊຶ່ງມີຄວາມຍາວຫຼາຍ ຈ.ຄ.ຜ ກິໂລແມດ ທີ່ນີ້ວຢອກ ລຼ່ມ: ໃນປີນຶ້ງງສະຖິຕິສະແດງໃຫ້ເຫັນວ່າ ຊາວອະເມຣິກັນນິຍົມໃຊ້ຣົດຍົນທ້ອງຖນົນທັງຫມົດເຖິງ ຈ.ຄ.ຄ.ຄ-ລານກິໂລແມດ.





ພາບພ້ວງເມືອງໃນອະນາຄົດຂອງເມືອງໂຄລັມເບັຍ ຣັຖແມຣິແລນດ໌ ຈຶ່ງເປັນຣະບຽບ ແຫນທີ່ຈະປ່ອຍໃຫ້ຈະເລີນຂຶ້ນມາເອງ




ໂຄລັມເບັຽແລະເມືອງໃຫມ່ງຕ່າງກໍພຍາຍາມທີ່ຈະສ້າງເມືອງໃຫ້ມີລັກສະນະທັງໃນຊົນນະບົດ ແລະມີຄວາມຈະເຣີນຂອງຕົວ
ເມືອງໃນຂະນະດຽວກັນ.





ຫນຸ່ມສາວຍຸກໃຫມ່ນີ້ມັກຈະມີອຸດົມຄະຕິແປກໆ ແລະຖືວ່າເປັນພັນ ທະຫນາທີ່ ທີ່ຕົນຕ້ອງປະຕິບັດເພື່ອໃຫສົມກັບຄ່າຂອງຊີວິດ ບາງ ຄົນມີຄວາມຫວງໃຍຕໍ່ຜູ້ອື່ນ ແລະຕໍ່ສະພາບແວດລ້ອມ ບາງຄົນ ຢາກເຫັນແນວທາງການດຳຮົງຊີວິດແບບໃຫມ່ ຊຶ່ງຕ່າງຈາກປະ ເພນີເດີມ ດັ່ງເຊັ່ນ: (ເທິງ) ການຊຸມນຸມປະຈຳປີສະແດງ ຄວາມຮັກຢ່າງເສຣີເພື່ອຊຸບຊີວິດໃຫມທີ່ເຊັ່ນຕຣັລ ປາຣ້ຄ ຮູບ ທາງຊາຍ ເປັນການສະແດງອຸດົມຄະຕິໃນທາງດີຂອງສະມາຊິກ ອາສາສມັກຂອງອົງການວິສຕາ ທີ່ໃຊ້ຄວາມຮູ້ຂອງຕົນສອນຄົນທີ່ ໄຮ້ອາຊີບ ຮູບເທິງຂວາ ຊາວບ້ານທັງເດັກນອຍແຸລະຜູ້ໃຫຍ່ ຮວມມືກັບຊາວກຽງທຳຄວາມສະອາດບ້ານເຮືອນ ສ່ວນຮູບລຸມ ຂວາ ເຈ້າຫນ້າທີ່ຫນ່ວຍສັນຕິພາບຜູ້ອາສາໄປສອນວິຊາວິທຍາ ສາດເຖິງປະເທດບອຕສະວານາ ໃນອາຟຣິກາໃຕ.







ໃນວັນທໍາພິທີເຂົ້າຮັບຕໍາແໜ່ງປະທານາທິບໍດີຂອງສະຫະຣັຖ ທ່ານຣໍຈາຣ໌ດ ນິກສັນ ກ່າວວ່າ "ຂ້າພະເຈົ້າຂໍອຸທິດງານຂອງ
ຂ້າພະເຈົ້າເພື່ອກໍ່ໃຫ້ເກີດສັນຕິພາບ".

ຈາກສົງຄາມສິ້ນສຸດລົງ ຣັສເຊັຍໄດ້ຖອນໂຮງງານອຸດສາຫະກັມແລະ
ຊັບສິນອອກຈາກທີ່ຢຶດຄອງຂອງຕົນ ແລະໄດ້ເຂດແດນຈາກເຂດທາງ
ດ້ານຕະເວັນຕົກຕື່ມ ແຕ່ຣັສເຊັຍໄດ້ຮຽກຮ້ອງຄ່າສ້ອມແປງທີ່ຢ່ານລຕາ
ເປັນມູນຄ່າ ๑๐,๐๐๐,๐๐๐,๐๐๐ ໂດລາ ອະເມຣິກັນ ຊຶ່ງເຮົ້ອງ
ນ້ັຍັງໂຕ້ແຍ້ງກັນຢູ່. ໃນເດືອນພຶສຈິກາປີ ๑๙๔๔ ໄດ້ມີການຕັດສິນ
ຄວາມຄະດີອາຊຍາກອນຢູ່ເມືອງນູເຣມເບີກ ຕໍ່ໜ້າຜູ້ພິພາກສາທີ່ມີຊ
ສຽງຈາກປະເທດອັງກິດ, ຝຣັ່ງເສດ, ສະຫະພາບໂຊວຽດແລະສະ
ຫະຣັຖ ມີຜູ້ນຳຂອງເຢຣະມັນຫລາຍຄົນ ໄດ້ຖືກກ່າວຫາວ່າບໍ່ພຽງແຕ່
ເປັນຜູ້ວາງແຜນ ແລະກໍ່ສົງຄາມລຸກລານເທົ່ານັ້ນ ແຕ່ຍັງຖືກກ່າວຫາ
ວ່າເປັນຜູ້ລະເມີດກົດໝາຍຂອງສົງຄາມ ແລະມະນຸສທັມອີກດ້ວຍ.
ການພິພາກສາຄວາມເທື່ອນ້ີ ກິນເວລາຕັ້ງສິບເດືອນ ຈຶ່ງສາມາດນຳ
ຜົນໃຫ້ລົງໂທດຈຳເລີຍສາມຄົນໃນຈຳນວນຜູ້ຕອງຫາທັງໝົດ.

# 8

## ອະເມຣິກາໃນໂລກປັດຈຸບັນ

"ຈຸດມຸ້ງຫມາຍອັນເປັນເດີນພັນຂອງເຮົານັ້ນຍັງຄືເກົ່າ: ຢູ່ໃນໂລກແຫ່ງສັນຕິພາບ, ເສຣີພາບ ແລະເອກຣາຊ ມີເສຣີພາບໃນການເລືອກອານາຄົດຂອງຕົນເອງ ແລະຕາມແບບຜົນຂອງໃຜລາວ".

ນີ້ເປັນຄຳຂວັນຂອງທ່ານ ຈອນ ແອຟເຄນເນດີ
ທີ່ກ່າວໃນສະພາກົງແກຣສ, ໃນວັນທີ
ຈ ຈ ມະກະຣາ ຈຈຟ/

ໃນຂນະທີ່ການປົກສາຫາລືຢູ່ໂປສດານ ກຳລັງດຳເນີນຢູ່ນັ້ນ, ໄດ້ມີຜູ້ຕາງຫນ້າທີ່ມາຈາກຫ້າສິບເອັດປະເທດ ກຳລັງປະຊຸມກັນ ຢູ່ທີ່ຊານຟຣານຊິສໂກເພື່ອວາງໂຄງຮ່າງຂອງສຫະປະຊາຊາດ. ຫລັງຈາກດຳເນີນງານມາໄດ້ແປດອາທິດເຕັມໆ, ຄນະຜູ້ຕາງຫນ້າເຫລົ່າ

ນ້ຈຶ່ງໄດ້ບັນລຸຜົນສຳເຣັດ ໃນການເຣັດຮ່າງກົດບັດສຫະປະຊາຊາດ, ຄວາມແຕກຕ່າງກັນຣະຫວ່າງຊາດ ອາດຈະນຳຂຶ້ນມາພິຈາຣະນາແກ້ໄຂກັນໄດ້ໂດຍສັນຕິວິທີ ແລະສາເຫດທີ່ວໆໄປກໍອາດຈະນຳຂຶ້ນມາແກ້ໄຂເຊັ່ນການກຳຈັດຄວ່ານອຶດຢາກແລະພະຍາດ. ຕຣົງກັນຂ້ານກັບການປະຕິເສດຂອງສະຫະຣັຖ ຕໍ່ການເປັນສະມາຊິກ ຂອງສັນນິບາດຊາດຫລັງຈາກສົງຄາມໂລກຄັ້ງທີນຶ່ງນັ້ນ, ສະພາສູງເຊເນຕ ໄດ້ໃຫ້ສັຕຍາບັນ ແກ່ກົດບັດສະຫະປະຊາຊາດນີ້ທັນທີ ໂດຍການລົງຄະແນນ ສຽງ ຊຸຜ ຕໍ່ ໒. ບາດກ້າວອັນໃຫມ່ຂອງສະຫະຣັຖນີ້ ຢືນຢັນ ໃຫ້ເຫັນເຖິງການສິ້ນສຸດຂອງລັດທິການຢູ່ໂດດດ່ຽວຊຶ່ງນັບວ່າເປັນສິ່ງປະກອບທີ່ສຳຄັນແນວນຶ່ງ ໃນນະໂຍບາຍຕ່າງປະເທດ ຂອງອະເມຣິກາ ແລະການທີ່ສະຫະຣັຖຍອມຣັບຄວາມຣັບຜິດຊອບເຕັມ ໃນກິຈການຣະຫວ່າງຊາດ. ເມື່ອຢີ່ປຸ່ນຍອມຜ່າຍແພ້ ໃນເດືອນສິງຫາ ປີ ຈຸຜ໔ ແລ້ວນັ້ນ, ຊາວອະເມຣິກັນ ຈຶ່ງໄດ້ຫັນຄວາມສົນໃຈ ຫລີກຳລັງສ່ວນໃຫຍ່ ມາໃສ່ກິຈການພາຍໃນປະເທດ ແລະບັນຫາທີ່ປາກົດເຫັນກໍຄື ການກັບຄືນມາຂອງທະຫານອະເມຣິກັນອີກຫລາຍລ້ານຄົນ ທີ່ຈະຕ້ອງໄດ້ທ້ອນໂຮມເຂົ້າເຈົ້າເປັນພົລເຮືອນອີກ. ໃນຣະຍະສອງປີຕໍ່ມາ, ຈຳນວນທະຫານໃນກອງທັບ ໄດ້ລຸດລົງຈາກຈຳນວນສິບສອງລ້ານຄົນ ຈົນຍັງເຫລືອ ພຽງນຶ່ງລ້ານເຄິ່ງເທົ່ານັ້ນ. ກົດຫມາຍວ່າດ້ວຍການ ຈັດຣະບຽບທະຫານຄືນໃຫມ່ (ຊຶ່ງເປັນທີ່ຮູ້ກັນດີຄື: ກົດຫມາຍວ່າ

ດ້ວຍສິດທິຂອງທະຫານ) ໄດ້ອະນຸມັດເງິນທຶນກ້ອນນຶ່ງເພື່ອໃຫ້ພວກ
ນັກຮົບເກົ່າໄດ້ຢືມໄປຊື້ເຮືອນ ຫລືເອົາໄປເປັນທຶນນຳມາຫາລ້ຽງຊີບ
ຂອງເຂົາເຈົ້າໃນດ້ານທຸຣະກິດ ຫລືການເຮັດໄຮ່ເຮັດນາ ກໍແລ້ວແຕ່
ຄວາມປະສົງຂອງເຂົາເຈົ້າ. ຣັຖບານຍັງໄດ້ໃຫ້ທຶນສຶກສາ ແກ່ທະ
ຫານຜ່ານເສິກມືອີກສຳລັບຜູ້ທີ່ຢາກຮຽນຕໍ່ໃນຂັ້ນວິທຍຳໄລ ຊຶ່ງພວກ
ທີ່ສມັກໄປຮຽນນີ້ຕ່າງກໍມີຄອບຄົວ ມີເມັຍ ມີລູກແລ້ວທັງນັ້ນ.

ແມ່ນວ່າ ນັກເສຖສາດຫລາຍຄົນມີຄວາມຢ້ານກົວຕໍ່ການປ່ຽນ
ແປງໃນເສຖກິດຂອງອະເມຣິກັນຈາກຍາມສົງຄາມມາເປັນຍາມສງົບ
ນີ້ກໍຕາມ, ແຕ່ບາກິດວ່າບໍ່ຄ່ອຍມີບັນຫາເຮື່ອງຄົນວ່າງງານຢ່າງຮ້າຍ
ແຮງດັ່ງທີ່ຄິດໄວ້ເລີຍ ເພາະໂຮງງານອຸດສາຫະກັມໄດ້ປ່ຽນມາຜລິດ
ສິນຄ້າໃຫ້ພົລເຮືອນແລະໄດ້ບັນຈຸຄົນເຂົ້າເຮັດການຫລາຍລ້ານຄົນ.

ໃນຣະຫວ່າງປີ ๑๙๔๔ ແລະ ๑๙๔๒, ຈຳນວນຄົນງານໄດ້
ເພີ້ມຂຶ້ນຈາກຈຳນວນ ๕๔ ລ້ານຄົນ ເຖິງ ฝ๑ ກວ່າລ້ານຄົນ, ໃນ
ຂນະທີ່ຣາຍໄດ້ຂອງຊາດ ເພີ້ມຂຶ້ນຈາກ ๑๒๑ ພັນໂດລາເຖິງ ๘๘ພ
ພັນລ້ານໂດລາຕໍ່ປີ.

ແຕ່ວ່າ ຄວາມມັ່ງມີນັ້ນ ໄດ້ນຳເອົາບັນຫາ ມາພ້ອມ ຄືວ່າ
ເຮືອນຊານບໍ່ຄ່ອຍພໍກັນຢູ່ຕາມຄວາມຮຽກຮ້ອງ, ແລະຖານະຂອງປະ
ຊາຊົນກໍດີຂຶ້ນຫລາຍຫລັງຈາກປີ ๑๙๔ฦ ຊຶ່ງເປັນເວລາທີ່ການສ້າງ
ອຸດສາຫະກັມເລີ້ມຖີບຕົວຂຶ້ນສູງ. ພາຍຫລັງຈາກສົງຄາມ, ຣາຄາ

ສິນຄ້າກໍຖືບຕ້ອຂຶ້ນສູງຈົນພາໃຫ້ມີຄວາມຢ້ານກົວວ່າ ເງິນຈະຕົກຢູ່ໃນ
ສະພາບຂອງເງິນເຟ້, ແຕ່ສະພາບຂອງການເງິນ ກັບມາຫຸ້ມຫ່ຽງ
ກວ່າເກົ່າອີກ ແລະສະບຽງສິນຄ້າເກືອບພຽງພໍກັບຄວາມຕ້ອງການ.
ການຂຶ້ນຣາຄາສິນຄ້ານີ້ໄດ້ພາໃຫ້ສຫະພັນກັມມະກອນຂໍ້ຮ້ອງໃຫ້ມີການ
ຂຶ້ນເງິນເດືອນອີກ ແລະມີກັມມະກອນປະມານ ๔,๕๐๐,๐๐๐ ນັດ
ຢຸດງານໃນປີ ๑๙๔๗. ໃນປີ ๑๙๔๘, ສະພາກົງແກຣສໄດ້ອອກກົດ
ໝາຍວ່າດ້ວຍການຈ້າງແຮງງານ ຊຶ່ງເອີ້ນກັນວ່າ ແທຟທ໌ຮາດລີ
ແອກ. ແຕ່ກົດໝາຍນີ້ຖືກຄັດຄ້ານຈາກຜູ້ນຳຝ່າຍກັມມະກອນເພາະ
ກົດໝາຍດັ່ງກ່າວນີ້ໄດ້ບົ່ງໄວ້ວ່າ ກ່ອນສຫະພັນ ຫລືນາຍຈ້າງຈະວິດ
ສັນຍາຈ້າງໃດໆກໍຕາມ ຜູ້ກ່ຽວຈະຕ້ອງບອກລ່ວງໜ້າຫົກສິບວັນ, ບໍ່
ດັ່ງນັ້ນທາງນາຍຈ້າງຈະມີສິດຟ້ອງຮ້ອງເຈົ້າໜ້າທີ່ຂອງສຫະພັນທີ່ລະ
ເມີດກົດໝາຍສັນຍາຈ້າງແລະສິດພິເສດທີ່ບົ່ງໄວ້ໃນສັນຍານັ້ນຈະຖືກ
ວິດໜົດ. ແມ່ນຈະມີຣະບຽບເຄັ່ງຄັດດັ່ງນີ້ກໍຕາມພວກກັມມະກອນກໍ
ໄດ້ຄ່າແຮງງານເພີ້ມຂຶ້ນຢູ່ເລື້ອຍໆ ໂດຍມີຄວາມປອດໄພ ໃນອະນາ
ຄົດຫລາຍຂຶ້ນ ເຊັ່ນວ່າ ໄດ້ເງິນເບັ້ຍລ້ຽງ ເມື່ອເວລາອອກກິນເບັ້ຍ
ບຳນານ ແລະມີການປະກັນສຸຂພາບຂອງຄົນງານອີກດ້ວຍ ຊຶ່ງແມ່ນ
ນາຍຈ້າງເປັນຜູ້ຈ່າຍໃຫ້ທັງໝົດ.

ມີບັນຫານຶ່ງ ຊຶ່ງໄກເກີນກວ່າອຸດຈະເອື້ອມເຖິງ ແລະຈະ
ຕ້ອງສູ້ໜ້າຢູ່ນັ້ນກໍຄືການຄວບຄຸມກຳລັງປະຣະມານ. ໃນເດືອນກໍຣະ

ກະດາປີ ໑໙໔໙, ສະພາກິ່ງແກຣສໄດ້ມອບຄວາມຮັບຜິດຊອບໃຫ້ແກ່ ຄນະກັມມະການຝ່າຍຣະເບີດປະຣະມານູຂອງສະຫະຣັຖອ໋ຶ່ງຄມະ ກັມ ມະການດ່ັ່ງກ່ ່າວນ ້ີປະກອບດ ້ວຍພ ິລເຣ ືອນຫ ້າຄົນພາຍໃ ຕ ້ການ ດ ູແລ ຂອ ງຄມະກ ັມມະການນ ້ ີ, ນ ັກວ ິທຍ າສ າດອ ະເມ ຣ ິກ ັນໄ ດ ້ຂຍ າຍ ກ ິຈ ການແລະໄ ດ ້ເຣ ັດໃ ຫ ້ຊ າດອ ຶ ່ນນ ໍາເ ອ ົ ້າໄ ປ ໃ ຊ ້ ໂ ດຍທ າງສ ັນຕ ິ ວ ິທ ີ ເ ຊ ່ ັ ນ ເ ອ ົ ້າໄ ປ ໃ ຊ ້ ໃ ນ ຄ ວ າ ມ ຮ ຸ ດ ານ ກ ະ ສ ິ ກ ັ ມ , ຊ ຸ ດ ສ າ ຫ ະ ກ ັ ມ , ແ ລ ະ ການ ແ ພ ດ .

ບ ່ ໄ ດ ້ ຄ າ ດ ຄ ິ ດ ມ າ ກ ່ ອ ນ ເ ລ ີ ຍ ວ ່ າ ປ ະ ທ ານ າ ທ ິ ບ ດ ີ ຫ ູ ແ ມ ນ ຈ ະ ໄ ດ ້ ຮ ັ ບ ໄ ຊ ຊ ນ ະ ໃ ນ ການ ເ ລ ືອ ກ ຕ ັ ້ ງ ຂ ອ ງ ປ ີ ໑ ໙ ໔ ຫ , ແ ຕ ່ ກ ໍ ເ ປ ັ ນ ການ ຕ ັ ດ ສ ິ ນ ໃ ຈ ອ ັ ນ ແ ນ ່ ອ ນ ແ ນ ່ ຂ ອ ງ ປ ະ ຊ າ ຊ ົ ນ ແ ລ ້ ວ ທ ີ ່ ຈ ະ ໄ ດ ້ ມ ອ ບ ຄ ວ າ ມ ໄ ວ ້ ວ າ ງ ໃ ຈ ໃ ຫ ້ ແ ກ ່ ທ ່ ານ ທ ຣ ູ ແ ມ ນ ອ ີ ກ , ດ ່ ັ ງ ນ ັ ້ ນ ທ ່ ານ ຈ ຶ ່ ງ ເ ຣ ັ ດ ໃ ຫ ້ ຜ ູ ສ ມ ັ ກ ຂ ອ ງ ພ ັ ກ ຣ ິ ພ ັ ບ ລ ິ ແ ຄ ນ ຄ ີ ທ ່ ານ ທ ອ ມ ມ ັ ສ ອ ິ ເ ດ ວ ິ ຕ ້ ອ ງ ເ ສ ັ ຍ ໄ ຊ ຊ ນ ະ ເ ລ ືອ ກ ຕ ັ ້ ງ ເ ທ ່ ື ອ ນ ັ ້ . ດ ່ ັ ງ ນ ັ ້ ນ , ທ ່ ານ ທ ຣ ູ ແ ມ ນ ຈ ຶ ່ ງ ຣ ິ ບ ເ ລ ັ ່ ງ ແ ກ ້ ໄ ຂ ບ າ ງ ສ ິ ່ ງ ບ າ ງ ຢ ່ າ ງ ໃ ນ ໂ ຄ ງ ການ ບ ໍ ຣ ິ ຫ ານ ງ ານ .

ແ ນ ່ ນ ອ ່ າ ສ ະ ພ າ ກ ິ ່ ງ ແ ກ ຣ ສ ໄ ດ ້ ຄ ັ ດ ຄ ້ ານ ບ າ ງ ສ ່ ວ ນ ຂ ອ ງ ໂ ຄ ງ ການ ນ ີ ້ ກ ໍ ຕ າ ມ , ແ ຕ ່ ກ ໍ ໄ ດ ້ ລ ິ ເ ລ ະ ແ ນ ນ ສ ຽ ງ ຣ ັ ບ ເ ອ ົ ້ າ ເ ປ ັ ນ ກ ິ ດ ໝ າ ຍ ສ ່ ວ ນ ຫ ລ າ ຍ . ການ ປ ະ ກ ັ ນ ຄ ວ າ ມ ປ ອ ດ ໄ ພ ໃ ຫ ້ ແ ກ ່ ສ ັ ງ ຄ ົ ມ ໄ ດ ້ ຂ ຍ າ ຍ ອ ອ ກ ອ ີ ກ ຢ ່ າ ງ ກ ວ ້ າ ງ ຂ ວ າ ງ ໂ ດ ຍ ເ ພ ີ ່ ມ ຂ ຶ ້ ນ ອ ີ ກ ເ ຖ ິ ງ ສ ິ ບ ລ ້ ານ ກ ວ ່ າ ຄ ົ ນ . ອ ັ ດ ຕ ຣ າ ດ ່ າ ຈ ້ າ ງ ແ ຮ ງ ງ ານ ກ ັ ມ ມ ະ ກ ອ ນ ທ ີ ່ ເ ຣ ັ ດ ການ ຢ ູ ່ ໃ ນ ໂ ຮ ງ ງ ານ ອ ຸ ດ ສ າ

ຫະກັມໃນຣັຖນັ້ນໄດ້ເພີ້ມຂຶ້ນຕັ້ງແຕ່ຊົ່ວໂມງນຶ່ງສີ່ສິບເຊັນ ຫາເຈັດສິບ ຫ້າເຊັນ (ປະມານຊົ່ວໂມງລະ ๘๐๐ ກີບຫາ ນັກ๕ ກີບ). ນອກ ຈາກຣັຖບານໄດ້ວາງໂຄງການກຳຈັດສະລັມ (ທີ່ຢູ່ອາໄສຂອງຄົນທຸກ ຍາກທີ່ສົກປົກຫລາຍ) ແລະໄດ້ສ້າງທີ່ພັກອາໄສຂຶ້ນ ໃຫ້ພວກນີ້ໄດ້ພັກ ອາໄສໂດຍໃຫ້ເຊົ່າໃນຣາຄາຕ່ຳທີ່ສຸດ, ແລະພວກຊາວໄຮ່ຊາວນາກໍ ໄດ້ຮັບການດູແລຈາກທາງການຫລາຍຂຶ້ນເຊັ່ນວ່າການປ້ອງກັນໄພທັມ ມະຊາດຕ່າງໆເຊັ່ນນ້ຳຖ້ວມ, ການແຫ້ງແລ້ງ ແລະຣາຄາສິນຄ້າຕົກ ຕ່ຳ. ກົດຫມາຍວ່າດ້ວຍຄວາມປອດໄພ ພາຍໃນ ຂອງປີ ຈຈ๕๐, ໄດ້ບັງຄົບໃຫ້ອົງການຂອງຄອມມິວນິສ ນຳຊີ່ຂອງສະມາຊິກໄປໄວ້ໃນ ແຟມຂອງອະທິບໍດີກົມໄອຍະການຊົ່ງເຣື່ອງນີ້ພາໃຫ້ຄວາມຕົງຄຽດຣະ ຫວ່າງຊາດນັ້ນດຳເນີນຕໍ່ໄປຢູ່.

24/VII
ຫ້ານຈຳໜ່າຍ

<u>ຄວາມປາຖນາຢາກໃກ້ມີການຄວບຄຸມປະຣະມານູຣະຫວ່າງຊາດ</u>

ຫລັງຈາກສົງຄາມໂລກຄັ້ງທີສອງໄດ້ຜ່ານພົ້ນໄປແລ້ວ, ຊາວ ອະເມຣິກັນແລະຣັຖບານຕ່າງກໍຫວັງວ່າ ການຮ່ວມມືໃນຍາມສົງຄາມ ຣະຫວ່າງສຫະພາບໂຊວຽດແລະປະເທດປະຊາທິປະໄຕທາງພາກຕະ ເວັນຕົກຈະດຳເນີນການສ້າງຄວາມປອດໄພ ແລະໂລກທີ່ສງົບສຸກນີ້ຕໍ່ ໄປ. ສະຫະຣັຖໄດ້ມີບົດບາດອັນສຳຄັນໃນການກໍ່ຕັ້ງອົງການຕ່າງໆ ໃນສຫະປະຊາຊາດແລະເປັນຜູ້ອອກເງີນຄ່າໃຊ້ຈ່າຍອີກດ້ວຍ. ໂດຍ

ມ້ວງຫວັງຈະເສີມສ້າງເສຖກິດ ແລະຟື້ນຟູສ້ອມແປງບາງບ່ອນທີ່ຖືກສົງ
ຄາມເຮັດໃຫ້ເກີດມີການເສັຍຫາຍຫລາຍເຊັ່ນໃນຢຸໂຣບ, ເອເຊັຍ,
ແລະອາຟຣິກກາ. ການຊ່ວຍເຫລືອຂອງອະເມຣິກັນ ເປັນຈຳນວນ
ຫລວງຫລາຍນັ້ນ, ແມ່ນເອົາໄປຊ່ວຍປະຊາຊົນ ທີ່ຕ້ອງການຄວາມ
ຊ່ວຍເຫລືອເປັນທີ່ສຸດຈະເປັນປະເທດຄອມມິວນິສ ແລະປະເທດທີ່ບໍ່
ເປັນຄອມມິວນິສເຊັ່ນດຽວກັນ.

ສິ່ງສຳຄັນແມວນຶ່ງ ທີ່ສະຫະຣັຖມີຄວາມຫວັງຢ່າງແຮງກ້າໃນ
ການຕົກລົງຣະຫວ່າງຊາດນັ້ນກໍຄື ການຄວບຄຸມຣະເບີດປະຣະມານູ.
ອາວຸດທີ່ເປັນຕາຫນ້າຢ້ານກົວ ນີ້ແມ່ນນັກວິທຍາສາດ ຂອງສະຫະຣັຖ
ເປັນຜູ້ສ້າງຂຶ້ນໃນເວລາສົງຄາມໂລກຄັ້ງທີສອງ ແລະນັກວິທຍາສາດ
ໄດ້ໃຫ້ຄວາມເຫັນວ່າ ເຢຣະມັນໄດ້ເລີຍພຍາຍາມ ທີ່ຈະສ້າງ ຣະ
ເບີດແມວນີ້ກ່ອນ. ອາວຸດຊະນິດນີ້ໄດ້ນຳເອົາມາໃຊ້ເພື່ອເຮັດໃຫ້ຍີ
ປຸ່ນຍອມຈຳນົນເພາະວ່າຖ້າຈະຊັກຊ້າໄປອີກ ຍີ່ປຸ່ນມີແຕ່ຈະລຸກລາມຕໍ່
ໄປ. ໃນການສູ້ຣົບກັນທີ່ເກາະຍີ່ປຸ່ນເທື່ອນີ້, ທັງສອງຝ່າຍຕ່າງກໍ
ປະຊາກສົບໄວ້ ໃນສນາມຣົບ ຫລາຍກວ່າສິ່ງລ້ານຄົນ. ສະຫະຣັຖ
ຍອມຮັບຮູ້ວ່າການແຜ່ຜາຍອາວຸດປະຣະມານູນີ້ ມີແຕ່ຈະນຳອັນຕລາຍ
ມາສູ່ການເປັນຢູ່ຂອງມະນຸດ. ດັ່ງນັ້ນ ໃນເດືອນມິຖຸນາປີ ໑໙໔໙,
ຜູ້ແທນຂອງສະຫະຣັຖຄືທ່ານ ເບີນາດ ແບຣຸກ ໄດ້ສເນີຕໍ່ສຫະປະຊາ
ຊາດໃຫ້ອອກກົດໝາຍກ່ຽວກັບການໃຊ້ອາວຸດປະຣະມານູ ແລະການ

ຄວບຄຸມອຸປກອນປະຣະມານູຕ່າງໆ ຣະຫວ່າງຊາດ. ໃນເວລານັ້ນ ສະຫະຣັຖເປັນພຽງປະເທດດຽວເທົ່ານັ້ນທີ່ມີຣະເບີດປະຣະມານູ ຈຶ່ງ ສັກຈະທຳລາຍຣະເບີດທີ່ຍັງມີເຫລືອຄ້າງຢູ່ນັ້ນໝົດ ແລະໄດ້ເປີດ ເຜີຍຄວາມລັບຂອງນິວເຄລັຍ. ແຜນການຂອງແບຣຸກນີ້ມີເງື່ອນໄຂ ພຽງແຕ່ຂໍ້ດຽວຄື: ໃຫ້ຕັ້ງອົງການຣະຫວ່າງຊາດຂຶ້ນໂດຍມີອຳນາດ ເຕັມໃນການກວດຄົ້ນແລະທັງບັງຄັບບໍ່ໃຫ້ຊາດໃດປະຕິເສດ.

ຂໍ້ສເນີຂອງສະຫະຣັຖນີ້ ໄດ້ມີເກົ້າປະເທດໃນຈຳນວນສິບປະ ເທດຊຶ່ງເປັນສະມາຊິກຂອງຄນະມົນຕຣີຄວາມໝັ້ນຄົງ, ແຕ່ຖືກສຫະ ພາບໂຊວຽດປະຕິເສດຄັດຄ້ານ. ສຫະພາບໂຊວຽດເປັນຜູ້ຄັດຄ້ານ ຕໍ່ຂໍ້ສເນີນີ້ໃນຂນະດຽວກັນກັບທີ່ຕົນໄດ້ຮຽກຮ້ອງ ໃຫ້ທຸກໆປະເທດປະ ນາມການໃຊ້ອາວຸດປະຣະມານູ ແຕ່ໂຊວຽດບໍ່ເຫັນດີນຳການທີ່ຈະໃຫ້ ມີການກວດຄົ້ນ ແລະບໍ່ເຫັນດີນຳຣະບຽບການບັງຄັບລົງໂທດ ຜູ້ທີ່ລະ ເມີດກົດໝາຍ. ການປະຕິເສດແຜນການຂອງທ່ານແບຣຸກນີ້ ອາດ ຈະເປັນຊ່ອງທາງນຶ່ງຂອງການຂຍາຍອາວຸດ ໃຫ້ເປັນອັນຕລາຍກວ່າ ຣະເບີດປະຣະມານູອີກຫລາຍເທົ່າ ຄວາມແຕກຕ່າງກັນທີ່ໄດ້ຖືກຖຽງ ກັນຢູ່ກ່ຽວກັບການກວດກາແລະການປະຕິເສດນີ້ຈະຕ້ອງເອົາໄປພິຈາ ຣະນາອີກເທື່ອນຶ່ງ ໃນທີ່ປະຊຸມວ່າດ້ວຍການລົດກຳລັງຣົບ.

ຄວາມຫ່ວງໃຍຂອງສະຫະຣັຖ ຍິ່ງເພີ່ມຫລາຍຂຶ້ນ ເມື່ອສຫະ ພາບໂຊວຽດ ຢາຍກຳລັງຂອງຕົນ ໄວ້ຕາມຢຸໂຣບຫາງດ້ານຕະວັນ

ອອກເພື່ອຊ່ວຍພັກຄອມມິວນິສ ຊຶ່ງມີພຽງຈຳນວນນ້ອຍໃນການກໍ່ການ ທຳລາຍ ຫລືລັກລອບໄປເຂົ້າໃນພັກພວກທີ່ບໍ່ເປັນຄອມມິວນິສແລະໄດ້ ຈັດຕັ້ງພັກພວກ ໃຫ້ສນັບສນູນຣັຖບານໂຊວຽດ. ຫລັງຈາກສົງຄາມ ສງົບລົງແລ້ວບໍ່ພໍສອງປີ, ລັດທິຄອມມິວນິສ ກໍໄດ້ເຂົ້າຄອບຄອງ ປະ ເທດໂປແລນ, ຮັງກາຣີ, ຢູໂກສລາເວັຍ, ບູລກາເຣັຍ, ອາລບາ ເນັຍ, ແລະເຂດຍຶດຄອງຂອງຣັສເຊັຍ ທີ່ເຢຣະມັນ ແລະປະເທດ ເຊັກໂກສໂລວາເກັຍ ກໍໄດ້ຕົກເປັນຂອງຄອມມິວນິສອີກ ໃນປີຕໍ່ມາ. ໃນຣະດູໃບໄມ້ລົ່ນຂອງປີ ໑໙໔໗, ອັນຕລາຍຈາກການຂຍາຍ ອິດທິ ພົນຂອງຄອມມິວນິສ ໄດ້ພາໃຫ້ສະຖານະການ ເປັນໜ້າຕື່ນຕົກໃຈ, ເມື່ອໂຊວຽດສນັບສນູນ ກຳລັງກອງໂຈນຂອງຄອມມິວນິສ ທີ່ປະເທດ ກຣີສ ແລະການຂົ່ມຂູ່ຂອງໂຊວຽດ ໄດ້ມີຕໍ່ເຂດຄອບຄອງຂອງຕີກີ ເມືອງດາຣ໌ດາແນລສ໌. ດັ່ງນັ້ນ ປະທານາທິບໍດີທຣູແມນ ໄດ້ໄປປາ ກົດຕົວທີ່ສະພາກົງແກຣສແລະປະກາດວ່າ "ສະຫະຣັຖມີນະໂຍບາຍ ສນັບສນູນອິນອາດເສຣີທີ່ຖືກກຳລັງຈຳນວນນ້ອຍຂົ່ມຂູ່ດ້ວຍການໃຊ້ກຳ ລັງອາວຸດຫລືຈາກຄວາມກົດດັນທີ່ມາຈາກພາຍນອກ". ຕໍ່ມາ ນະ ໂຍບາຍນີ້ຖືກເອ້ີນກັນວ່າ "ລັດທິຂອງທຣູແມນ" ຊຶ່ງໄດ້ນຳຜົນມາ ໃຫ້ສະພາກົງແກຣສອະນຸມັດເງິນຈຳນວນ ๔๐๐ ລ້ານໂດລາ ສຳລັບ ເອົາໄປຊ່ວຍເຫລືອທາງດ້ານເສຖກິດ ແລະທະຫານແກ່ປະເທດກຣີສ ແລະຕີກີ. ພາຍໃນຣະຍະສອງປີ, ປະເທດທັງສອງນີ້ ກໍ່ສາມາດ

ຮັກສາສະຖານະການ ໃຫ້ເຂົ້າຂັ້ນປົກກະຕິເໝືອນເດີມ, ແລະການ ທ້ອນໂຮມດິນແດນຂອງເຕີກີກໍໄດ້ຮັບຄໍ້າປະກັນ. ແລະຄວາມພຍາຍາມ ຂອງຄອມມິວນິສທີ່ຈະແຜ່ຜາຍໄປຮອດທະເລເມດິເຕີເຣນຽນນັ້ນກໍຢຸດ ສງັກລົງພຽງນັ້ນ.

ການສິ້ນສຸດລົງຂອງລັດທິການເປັນເມືອງຂຶ້ນ

ສະຫະຣັຖໄດ້ສະແດງໃຫ້ເຫັນ ຢ່າງອອກໜ້າອອກຕາ ເຖິງ ຄວາມກຽດຊັງລັດທິການເປັນຫົວເມືອງຂຶ້ນ ແລະໄດ້ສນັບສນູນ ຫລັກ ການຂອງການກັບຄືນເປັນເອກຣາຊຂອງບາງເຂດ. ໃນປີ ໑໙໔໙ ປະທານາທິບໍດີທຣູແມນໄດ້ປະກາດມອບເອກຣາຊ ໃຫ້ແກ່ປະເທດຟີລິ ປິນແລະໃນປີຕໍ່ມາ, ສະພາກົງແກຣສໄດ້ອະນຸຍາດໃຫ້ຊາວປູເອີໂຕຣິ ກັນ ເລືອກຕັ້ງພັກຜູ້ປົກຄອງຣັຖຂອງເຂົາເຈົ້າເອງ ແລະນີ້ ກໍນັບວ່າ ເປັນບາດກ້າວໃນການກ້າວເຂົ້າສູ່ການປົກຄອງຕົນເອງ ແລະໃນປີ ໑໙໔໘, ປະເທດມຽນມ້ໍ່ ໄດ້ຮ່ວມພັນກັບສະຫະຣັຖ ໃນພັນຖານຂອງການ ເປັນພົລເມືອງແລະມີສິດເສຣີພາບເທົ່າທຽມກັບຊາວອະເມຣິກັນທຸກໆ ຄົນ. ນອກຈາກນັ້ນ ຜູ້ນໍາອະເມຣິກາໄດ້ສນັບສນູນ ໃຫ້ປະເທດອ້ົງ ກິດຕັດສິນໃຈມອບເອກຣາຊຄືນໃຫ້ແກ່ປະເທດອິນເດັຍ ປາກິສຖານ, ແລະພະມ້ົາ, ແລະທໍາໜ້ົາທ່ີເປັນກາງ ໃນການຊ່ວຍໃຫ້ປະເທດອິນ ໂດເນເຊັຍໄດ້ເປັນປະເທດເອກຣາຊຈາກການປົກຄອງຂອງດັດ ຊ໌.

ໃນປີ ໑໙໔໙, ປະທານາທິບໍດີທຣູແມນໄດ້ເຮັດໃຫ້ໂຄງການສີ້ຂອງ ທ່ານໄດ້ມຳອອກປະຕິບັດໃຫ້ໄວຂຶ້ນ ໃນການຊ່ວຍເຫລືອ ທາງດ້ານ ເຕັກນິກ ແລະການເງິນໃຫ້ແກ່ປະເທດ ທີ່ເປັນເອກຣາຊໃຫມ່ທົ່ວທຸກ ບ່ອນໃນໂລກນີ້, ກ່ຽວກັບໂຄງການນີ້ ມີນັກຊ່ຽວຊານອະເມຣິກັນ ດ້ານການປູກຝັງ, ການສຶກສາ, ສາທາຣະນະສຸກ, ການເຄຫະສະ ຖານ ແລະໃນດ້ານອື່ນໆອີກຫລາຍຢ່າງ ເພື່ອໃຫ້ຄຳແນະນຳຊ່ວຍ ເຫລືອແກ່ປະເທດຕ່າງໆໃນເອເຊັຍ, ອາຟຣິກກາ ແລະອະເມຣິກາ ລາຕິນ.

ເມື່ອປະເທດທີ່ຫາກໍ່ໄດ້ຮັບເອກຣາຊໃຫມ່ໆນີ້ ໄດ້ຟື້ນຟູທັງໃນ ດ້ານການເມືອງ ແລະເສຖກິດແລ້ວ, ປະເທດທີ່ຖືກໄພສົງຄາມເຜົາ ຜານຢູ່ໃນຢຸໂຣບຈະຕ້ອງໄດ້ພົບກັບຄວາມຫຍຸ້ງຍາກ ໃນດ້ານເສຖກິດ ເປັນທີ່ສຸດ. ໃນຕົ້ນເດືອນມິຖຸນາປີ ໑໙໔໗, ທ່ານຈອດຈ໌ ອີມາຣ໌ ຊາລ, ຣັຖມົນຕຣີຕ່າງປະເທດໄດ້ກ່າວຄຳປາໄສ ຢູ່ທີ່ມະຫາ ວິທຍາ ໄລ ຮາວາດ ໂດຍໄດ້ສເນີແນະຢາກໃຫ້ມີໂຄງການຟື້ນຟູ ເສຖກິດ ຂອງຢຸໂຣບ. ດັ່ງນັ້ນ, ໂຄງການນີ້ ຈຶ່ງເອີ້ນກັນວ່າ "ແຜນການ ຂອງມາຣ໌ຊາລ" ຊຶ່ງໄດ້ອະນຸມັດເງິນ ຂອງປະເທດ, ເຄື່ອງອຸປ ກອນ, ແລະເຄື່ອງຈັກໃຫ້ເອົາໄປຊ່ວຍປະເທດຕ່າງໆໃນຢຸໂຣບທີ່ປະ ສົງຢາກເຂົ້າຮ່ວມໃນໂຄງການນີ້. (ແມ່ນວ່າໂຄງການຊ່ວຍເຫລືອ ນີ້ ຮວມທັງການຊ່ວຍເຫລືອແກ່ໂຊວຽດ ແລະປະເທດທີ່ເປັນບໍຣິວານ

ຂອງເຂົ້າທີ່ຢູ່ໂຮບທາງດ້ານຕະເວັນອອກ ແຕ່ໂຊວຽດກໍຍັງປະຕິເສດ ບໍ່ຮັບເອົາການຊ່ວຍເຫລືອນີ້). ໂຄງການຊ່ວຍເຫລືອຄັ້ງໃຫຍ່ຂອງ ອະເມຣິກັນເທື່ອນີ້ ຮ່ວມຄ່າໃຊ້ຈ່າຍ ແລະເຄື່ອງຂອງທັງໝົດເປັນ ເງິນປະມານ ๑๘,๐๐๐ ລ້ານໂດລາ, ແລະໄດ້ເລີ້ມດຳເນີນງານ ໃນປີ ๑๙๔๘. ໂຄງການນີ້ໄດ້ຊ່ວຍໃຫ້ ๑๗ ປະເທດໄດ້ຟື້ນຟູເສຖ ກິດຂອງປະເທດຂຶ້ນຢ່າງວ່ອງໄວ ຕັ້ງແຕ່ປະເທດ ໄອສແລນ ໄປ ຮອດເຕີກີ ແລະໃນຣະຍະເວລາບໍ່ເຖິງສາມປີ, ຜົນຜລິດຂອງໂຮງ ງານອຸດສາຫະກັມໄດ້ເພີ້ມຂຶ້ນເຖິງ ๘๔ ເປີເຊັນ ຊຶ່ງສູງກ່ວາມາຕ ຖານການຜລິດຜົນກ່ອນຍາມສົງຄາມ, ແລະຜົນຜລິດຈາກການປູກຝັງ ກໍເພີ້ມຂຶ້ນເຖິງ ๑๔ ເປີເຊັນ ຫລາຍກວ່າກ່ອນຍາມສົງຄາມ.

ແມ່ນວ່າ ໂຄງການຂອງມາຣ໌ຊານ ກຳລັງດຳເນີນງານຢູ່ນັ້ນ ຍັງໄດ້ມີການວິພາກວິຈານກັນ ຢ່າງໃຫຍ່ຫລວງ ທີ່ເບີລິນຕະເວັນຕົກ ຊຶ່ງເປັນເຂດຄອບຄອງຂອງທະຫານອັງກິດ, ຝຣັ່ງເສດແລະອະເມຣິ ກັນ. ຄວາມມັ່ງມີທີ່ປາກົດຂຶ້ນ ໃນໝູ່ບ້ານທີ່ຢູ່ພາຍໃຕ້ການປົກຄອງ ຂອງປະເທດຕະເວັນຕົກ ຊຶ່ງຫ່າງໄກຈາກເຂດຍຶດຄອງຂອງຄອມມິວ ນິສໃນເຢຣະມັນຕະເວັນອອກພຽງ ๑๑๐ ໄມເທົ່ານັ້ນ, ໄດ້ພາໃຫ້ຜູ້ ນຳຝ່າຍຄອມມິວນິສເສັຍໜ້າ ແລະຄິດລະອາຍ. ໂດຍຫວັງຈະບັງ ຄັບອົດທິພົນ ຂອງປະເທດຕະເວັນຕົກ ໃຫ້ອອກໄປຈາກເບີລິນ ໃນປີ ๑๙๔๘, ເຈົ້າໜ້າທີ່ໂຊວຽດໄດ້ສັ່ງຫ້າມການໄປມາຫາສູ່ກັນແຕ່ຕົ້ນມາ

ກໍໄດ້ສົ່ງຕົນທາງຣົຖ ແລະທາງຣົຖໄຟ ຣະຫວ່າງເບີລິນຕະເວັນອອກ ແລະເບີລິນຕະເວັນຕົກ ຊຶ່ງເປັນເຂດປົກຄອງຂອງປະເທດຕະເວັນຕົກໃນເຢຣະມັນ. ເມື່ອເປັນເຊັ່ນນັ້ນ, ທັງທາງການຂອງອັງກິດ ແລະອະເມຣິກັນໄດ້ຕອບໂຕ້ຕໍ່ການກະທຳນີ້ໂດຍການຍົ່ນສົ່ງຜູ້ຄົນທາງອາກາດ. ການຍົນສົ່ງທາງອາກາດນີ້, ໄດ້ເລີ່ມຂຶ້ນໃນຣະດູຮ້ອນ ຂອງປີ ໑໙໔໘ ແລະໄດ້ດຳເນີນການຢູ່ຢ່າງນ້ອຍເກືອບຮອດປີໜຶ່ງ, ຊຶ່ງ ເຮືອບິນຍົນສົ່ງຂອງອະເມຣິກັນ ແລະອັງກິດໄດ້ຍົນສະບຽງ ອາຫານ ຫລາຍກວ່າສອງຕອນ, ພ້ອມທັງນ້ຳມັນເຊື້ອເພີງ, ຢາປົວພະຍາດ, ແລະສິ່ງທີ່ຈຳເປັນອື່ນໆອີກໄປໃຫ້ປະຊາຊົນທີ່ຢູ່ໃນເບີລິນຕະເວັນຕົກ. ຕໍ່ມາ ພວກຣັສເຊັຍໄດ້ເຫັນວ່າ ການກະທຳຂອງເຂົາຄັ້ງນີ້ບໍ່ເກີດຜົນ ດີ, ເຂົາຈຶ່ງສັ່ງນ້າງກຳແພງທີ່ກີດກັ້ນນີ້ອອກ.

ເຫດການອັນລັບຂັ້ນຢູ່ເບີລິນນັ້ນໄດ້ເນື່ອງມາຈາກການຂຍາຍ ອິດທິພົນຂອງໂຊວຽດໃນຢຸໂຣບທາງດ້ານຕະເວັນອອກແລະການຍົ່ນຢູ່ ຕໍ່ປະເທດກຣິສ ແລະຕີກີໄດ້ພາໃຫ້ທຸກປະເທດໃນຢຸໂຣບຕະເວັນຕົກ ຕື່ນຕົກໃຈ. ຜົນທີ່ຕາມມາກໍຄື ສົນທິສັນຍາ ນາໂຕ ຊຶ່ງໄດ້ຈັດຕັ້ງ ຂຶ້ນໃນເດືອນເມສາປີ ໑໙໔໙, ເພື່ອໃຫ້ການຮ່ວມມືໃນການປ້ອງກັນ ປະເທດທີ່ເປັນສະມາຊິກຂອງອົງການນີ້ນ: ເບລຢຽມ, ການາດາ, ເດັນມ໋ານ, ຝຣັ່ງເສດ, ອັງກິດ, ໄອສແລນ, ລຸກຊັມບົວ, ນິເທີ ແລນສ໌, ນໍເວ, ປໍຈູກາລ, ແລະສະຫະຣັຖ ພ້ອມທັງກຣິສ, ແລະ

ເຕີກ, ແລະຕໍ່ມາເຢຣະມັນຕະເວັນຕົກ ກໍໄດ້ເຂົ້າຮ່ວມ. ໂດຍຕົກ ລົງກັນວ່າ, ຖ້າປະເທດໃດປະເທດນຶ່ງ ຖືກລຸກລານ, ເຂົາເຈົ້າຈະ ພ້ອມໃຈກັນໂຈມຕີໂຕ້ຕອບທັນທີ ແລະຕໍ່ມາໃນເດືອນທັນວາປີ ໑໙໔໐ ນາຍພົນໄອເຊັນຮາວເວີໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ບັງຄັບບັນຊາສູງສຸດ ຂອງກຳລັງທັບນາໂຕ.

ການເຂົ້າກ່ຽວພັນໃນກິຈການຣະຫວ່າງຊາດ ຂອງສະຫະຣັຖ ໃນສມັຍຣັຖບານຂອງທ່ານທຣູແມນນັ້ນບໍ່ໄດ້ຈຳກັດຂອບເຂດແຕ່ພຽງຢຸ ໂຣບເທົ່ານັ້ນ. ໃນປີ ໑໙໔໘, ສະຫະຣັຖໄດ້ເຂົ້າຮ່ວມນຳ ๘๑ ປະເທດລາຕິນອະເມຣິກັນ, ໃນການຈັດຕັ້ງອົງການຂອງຣັຖອະເມຣິ ກັນ ເພື່ອຄ້ຳປະກັນການຢູ່ຮ່ວມກັນໂດຍສັນຕິວິທີ ແລະປາສຈາກການ ຜິດຖຽງກັນພາຍໃນຣັຖອະເມຣິກັນເອງ, ເພື່ອສົ່ງເສີມການພັທນາ ເສຖກິດ ແລະສັງຄົມໃນລາຕິນອະເມຣິກາ, ແລະຈະຮ່ວມໃຈກັນຕໍ່ສູ້ ຖ້າປະເທດໃດປະເທດນຶ່ງຖືກລຸກລານ.

ອົງການນີ້, ສືບຕໍ່ເນື່ອງມາຈາກການທ້ອນໂຮມ ຂອງຫລາຍ ຣັຖອະເມຣິກັນ, ຊຶ່ງຄວາມນຶກຄິດຂອງການກໍ່ຕັ້ງອົງການນີ້ຜ່ານທ່ານ ສີມອນໂບລິເວັຍເປັນຜູ້ອອກຄວາມຄິດເກືອບນຶ່ງສັຕວັດທີ່ຜ່ານມາແລ້ວ ແຕ່ຫາກໍ່ເລີ້ມຈັດຕັ້ງຂຶ້ນໃນປີ ๑๙๔๘ ນີ້.

ຢູ່ທາງພາກຕະເວັນອອກກາງ, ເມື່ອຣັຖຍິວຂອງອິສຣາເອລ ໄດ້ປະກາດເອກຣາຊໃນປີ ໑໙໔๘ ນັ້ນ ປະເທດນີ້ໄດ້ເຂົ້າສູ່ສົງຄາມ

ຄາມກັບປະເທດເພື່ອນບ້ານຂອງຕົນຄືກຸ່ມອາຫລັບ ຊຶ່ງເປັນເຫດໃຫ້ ສະຫະຣັຖຕ້ອງຍົ່ນມືເຂົ້າຊ່ວຍເຫລືອຄື ສນັບສນູນສະຫະປະຊາຊາດຂໍ ຮ້ອງໃຫ້ມີການຢຸດຍິງຊົ່ວຄາວ. ດ້ວຍຄວາມເອົາໃຈໃສ່ ໃນພາລະ ຫນ້າທີ່ ແລະດ້ວຍການເປັນຜູ້ນຳ ຂອງຄນະເຈຣະຈາ, ດຣ. ຣາຟ ບັນຈ໌ ຊຶ່ງເປັນຫລານຂອງຊ້າທາດອະເມຣິກັນ ໃນສມັຍກ່ອນ, ໄດ້ຮັບລາງວັນກ່ຽວກັບການເຮັດປະໂຍດ ໃຫ້ເກີດແກ່ຄວາມສງົບສຸກ ຊຶ່ງເອີ້ນກັນວ່າ ໂນເບິລ ພີສ ໂປຣສ໌). ທະຫານຂອງສະຫະປະຊາ ຊາດຕໍ້ສູ້ການລຸກລາມ.

ຄວາມສົນໃຈ ໃນກິຈການຣະຫວ່າງຊາດຂອງອະເມຣິກາໃນ ສມັຍຂອງການຄອງຕຳແຫນ່ງເທື່ອສຸດທ້າຍ ຂອງປະທານາທິບໍດີທຣູ ແມນນ໌ ແມ່ນເອເຊັຍ. ໃນວັນທີ ๘๔ ມິຖຸນາ ຂອງ ປີ ๑๙๕๐, ກອງທັບຂອງຄອມມິວນິສເກົາຫລີເຫນືອ ຊຶ່ງໄດ້ຮັບການຝຶກແອບໂດຍ ກອງທະຫານຣັສເຊັຍທີ່ຍົດຄອງຢູ່ນັ້ນ, ພ້ອມທັງໄດ້ໃຫ້ອາວຸດ ຍຸທໂທ ປະກອນອີກດ້ວຍ ດັ່ງນັ້ນ ທະຫານຄອມມິວນິສເກົາຫລີ ຈຶ່ງໄດ້ຍາມ ເສັ້ນຂນານທີ່ສາມສິບແບ່ດໄປໂຈມຕີສາທາຣະນະຣັຖເກົາຫລີ, ທີ່ມີ ຣັຖບານໂດຍການເລືອກຕັ້ງແບບເສຣີ ຊຶ່ງແມ່ນສະຫະປະຊາຊາດເປັນ ຜູ້ດູແລ. ຫລັງຈາກຖືກໂຈມຕີ, ຄນະຣັຖມົນຕຣີ ຄວາມຫມັ້ນຄົງໄດ້ ຮຽກປະຊຸມດ່ວນແລະຂໍຮ້ອງໃຫ້ພວກລຸກລານຖອນອອກຈາກເຂດຂອງ ເກົາຫລີໃຕ້ ໃນທັນໃດໂລດ. ສຂ.ມ.ຕ. ທາງສະພາມົນຕຣີ

ຄວາມໝັ້ນຄົງນີ້ ໄດ້ຂຍາຍນາມວ່າ ເກົາຫລີເໜືອເປັນຜູ້ຈຸກລານ, ແລະໄດ້ຮຽກຮ້ອງສະມາຊິກຂອງສຫະປະຊາຊາດໃຫ້ເຮັດທຸກວິທີທາງ ເພື່ອຊ່ວຍເກົາຫລີໃຕ້. ສ່ວນສະຫະຣັຖ, ຊຶ່ງຄັ້ງນຶ່ງ ເຄີຍປົດປ່ອຍ ເກົາຫລີອອກຈາກການຍຶດຄອງຂອງຍີ່ປຸ່ນ, ຈຶ່ງຮູ້ສຶກວ່າຕົນມີຄວາມ ຮັບຜິດຊອບໃນການປ້ອງກັນສາທາຣະນະຣັຖນີ້ໄວ້, ຈຶ່ງໄດ້ສົ່ງກຳລັງ ທະຫານອາກາດແລະບົກໄປຍັງເກົາຫລີແລະມີທະຫານຈາກສິບຫ້າປະ ເທດໄດ້ຖືກສົ່ງໄປຍັງເກົາຫລີ ແລະອີກ ๔ ປະເທດໄດ້ສົ່ງອຸປກອນ ໄປຊ່ວຍເຫລືອ.

ກອງບັນຊາການທະຫານຂອງສຫະປະຊາຊາດ ໄດ້ຖືກຕັ້ງຂຶ້ນ ແລະນັບວ່າເປັນເທື່ອທຳອິດ ໃນປະວັດສາດທີ່ກຳລັງຣະຫວ່າງຊາດທີ່ ໄດ້ຈັດຕັ້ງຂຶ້ນນີ້, ໄດ້ເຂົ້າຕໍ່ສູ້ການຈຸກລານຄັ້ງນີ້ ແລະການປະຕິບັດ ງານຂອງສຫະປະຊາຊາດໄດ້ດຳເນີນໄປໂດຍດີ, ດ້ວຍວ່າສຫະພາບ ໂຊວຽດ ບໍ່ຍອມເຂົ້າຮ່ວມປະຊຸມກັບຄນະນິຕິຄວາມໝັ້ນຄົງ ເພື່ອ ອອກສຽງຄັດຄ້ານການປະຕິບັດງານຄັ້ງນີ້.

ວິຖີທາງຂອງສົງຄາມເກົາຫລີນັ້ນ ຂົມຂື່ນທີ່ສຸດ, ເພາະມັນ ເຕັມໄປດ້ວຍການນອງເລືອດແລະການພ່າຍແພ້. ຫລັງຈາກຕັ້ງຕົ້ນ ດ້ວຍການໄດ້ຮັບໄຊຊນະ, ກຳລັງຂອງສຫະປະຊາຊາດ ກໍໄດ້ລຸກຄືບ ໜ້າແລ້ວຂັບໄລ່ສັດຕຣູ ຜູ້ຈຸກລານໃຫ້ຖອຍໄປ. ການສູ້ຣົບນີ້ເກືອບ ຈະສິ້ນສຸດລົງແລ້ວ, ເມື່ອທະຫານຈີນຄອມມິວນິສ ໄດ້ສົ່ງກຳລັງທະ

ຫານອາສາສມັກເຂົ້າມາຊ່ວຍຣົບ ເພື່ອຕໍ້ຕ້ານກຳລັງຂອງສຫະປະຊາ
ຊາດ ແລະການແຊກແຊງນີ້ໄດ້ຂົ່ມຂູ່ຕໍ້ຂໍ້ຂັດແຍ້ງກັນ ທີ່ໄກກວ່າເຂດ
ຊາຍແດນຂອງເກົາຫລີ, ແຕ່ກອງບັນຊາການ ຂອງກອງທັບສຫະປະ
ຊາຊາດບໍ່ຢາກສ່ຽງໄພ, ໃຫ້ສົງຄາມລຸກລານໄປຫລາຍກວ່ານີ້, ຈຶ່ງ
ໄດ້ວາງຂອບເຂດຂອງສົງຄາມໄວ້ ໂດຍມີຈຸດຫມາຍໃນຂອບເຂດຈຳ
ກັດ. ໃນເວລານັ້ນ ພວກລຸກລານ ກໍຖືກຕີຖອຍໄປ ເກືອບໃກ້ເສັ້ນ
ຂນານທີສາມສິບແປດແລ້ວ, ຫລັງຈາກການເຈຣະຈາ ຊຶ່ງກິນເວລາ
ອັນຍາວນານ. ໃນຣະດູຮ້ອນຂອງປີ ຈຕ້ຂ້ມ, ໄດ້ມີການຕົກລົງພັກ
ຣົບຊົ່ວຄາວ ແລະໄດ້ຮັບຮູ້ຄວາມຈິງຂອງສນານຣົບຫລັງຈາກສົງຄາມ
ສິ້ນສຸດລົງແລ້ວ. ສະຫະຣັຖໄດ້ສົ່ງພົນທະຫານ ຈຳນວນສອງແສນ
ກວ່າຄົນຢາຍໄປຕາມຖານທັບຕ່າງໆທົ່ວໂລກ ແລະທັງໄດ້ປະຊາກສົບ
ຂອງທະຫານອະເມຣິກັນໄວ້ທີ່ເກົາຫລີອີກເຖິງ ມ້ວ,ວວວ ຄົນ ເພື່ອ
ເປັນສັນຍາລັກຂອງການຕັດສິນໃຈອັນແນ່ວແນ່ຂອງສະຫະຣັຖໃນການ
ປ້ອງກັນຊາດທີ່ເປັນເອກຣາຊ ໃຫ້ພົ້ນຈາກການລຸກລານຂອງຄອມມິວ
ນິສ.

ໃນເດືອນພຶສຈິກາປີ ຈຕ້ຂ້ຄ, ຊາວອະເມຣິກັນໄດ້ຄັດເລືອກ
ເອົາຜູ້ສມັກທີ່ສັງກົດຢູ່ໃນພັກ ຣິພັບລິແຄນ ມາເປັນປະທານາທິບໍດີ,
ຫລັງຈາກພັກເດໂມແຄຣຕ ໄດ້ຄອງຕຳແຫນ່ງມາເປັນປີທີຊາວແລ້ວ,
ພາຍພົນໄອເຊັນຮາວເວີ ໄດ້ເປັນຄູ່ແຂ່ງຂັນ ກັບທ່ານແອດລາຍອິສຕີ

ເວັນຊັນ, ຜູ້ຄອງຣັຖອິລລິນອຍ ແລະໃນການເຂົ້າຊິງຕຳແຫນ່ງປະ ທານາທິບໍດີເທື່ອນີ້, ທ່ານນາຍພົນກໍໄດ້ຮັບໄຊຊນະຢ່າງງາມ. ແຕ່ເມື່ອທ່ານໄອເຊັນຮາວເວີໄດ້ຖືກຄັດເລືອກຕັ້ງ ໃຫ້ຄອງຕຳແຫນ່ງປະ ທານາທິບໍດີອີກເປັນຄັ້ງທີສອງໃນປີ ๑๗๕ຝ ນັ້ນ, ທ່ານຕ້ອງໄດ້ເຮັດ ການຮ່ວມກັບສະພາກົງແກຣສ ຊຶ່ງຢູ່ພາຍໃຕ້ການຄວບຄູມຂອງພັກເດ ແຄຣຕມາໄດ້ຫົກປີແລ້ວ ໃນສມັຍທີ່ທ່ານຄອງຕຳແຫນ່ງຢູ່ນັ້ນ.

## ທ່ານໄອເຊັນຮາວເວີ ຕ້ອງສູ້ຫນ້າກັບບັນຫາພາຍໃນ

ກ່ຽວກັບບັນຫາ ພາຍໃນນັ້ນ, ຣັຖບານຂອງທ່ານ ໄອເຊັນ ຮາວເວີ ໄດ້ດຳເນີນຕາມນະໂຍບາຍ ຊຶ່ງເອີ້ນກັນຊື່ວຣະຍະນຶ່ງວ່າ ນະໂຍບາຍແບບໃຫມ່ຂອງພັກຣີພັບລີແຄນ ແລະຕາມແນວທາງຂອງ ນະໂຍບາຍນີ້ ແມ່ນຄວາມພຍາຍາມບໍ່ໃຫ້ຣັຖບານກາງ ແຊກແຊງນຳ ກິຈການພາຍໃນຂອງຣັຖ ແລະທຸຣະກິດເອກຊົນ. ໃນເວລາດຽວ ກັນນີ້, ພື້ນຖານຂອງການເບິ່ງແຍງຜົລປະໂຍດຂອງສັງຄົມແລະເສຖ ກິດນັ້ນໄດ້ນຳຂຶ້ນມາເປັນກົດຫມາຍ ຊຶ່ງໄດ້ຈັດຕັ້ງຂຶ້ນມາ ໃນຍຸກຂອງ ການປ່ຽນແປງຂນາດກາງ ເຊັ່ນວ່າ ການຂຍາຍ ໃນດ້ານການໃຫ້ ຄວາມປອດໄພ ແກ່ສັງຄົມ, ໃຫ້ທຶນສນັບສນູນການສຶກສາ, ໃຫ້ປຸກ ສ້າງເຮືອນຊານໃຫ້ຜູ້ຄົນຢູ່, ໃຫ້ກຳຈັດສະລັມ, ແລະກິຈການອື່ນໆ ອີກໃນດ້ານສາທາຣະນະສຸກ. ຫລັງຈາກໄດ້ເຂົ້າຮັບຕຳແຫນ່ງແລ້ວ

ໃນເດືອນມະກະຣາປີ ໑໙໔໙, ປະທານາທິບໍດີໄອເຊັນຮາວເວີ ໄດ້ ເຫັນດີ ໃຫ້ປ່ຽນອົງການດູແລ ຄວາມສຸກທຸກຂອງປະຊາຊົນ ມາຢູ່ໃນ ພແນກດຽວກັບກະຊວງສາທາຣະນະສຸກ, ສຶກສາ, ແລະປະຊາສົງ ເຄາະ. ນອກນີ້, ທ່ານຍັງໄດ້ສນັບສນຸນການດຳເນີນງານຂອງສະ ພາກົງແກຣສ ທີ່ໄດ້ສເນີການຂຶ້ນເງິນຄ່າແຮງງານ ຂຶ້ນຈາກຊົ່ວໂມງ ນຶ່ງເຈັດສິບຫ້າເຊັນ ມາເປັນນຶ່ງດອນລາ (ຄືຈາກຊົ່ວໂມງນຶ່ງປະ ມານ ນິກ໔ ກີບມາເປັນ ໕໐໐ ກີບ).

ໃນປີ ໑໙໔໔, ການງານທຸກຢ່າງໄດ້ຮັບການສນັບສນຸນດີຂຶ້ນ ໂດຍມີການຂຍາຍສອງຢ່າງຄື: ນຶ່ງ, ໃຫ້ການຈັດການຂອງສະຫະ ພັນນັ້ນເຮັດເປັນສັນຍາຂຶ້ນຄື ບັງຄັບໃຫ້ນາຍຈ້າງຈ່າຍຄ່າເບ້ຍລ້ຽງ ໃຫ້ແກ່ຜູ້ທີ່ວ່າງງານ ຈຳນວນນຶ່ງ ເພື່ອຈະຕື່ມກັບລາຍໄດ້ຈຳນວນນຶ່ງ ຊຶ່ງຣັຖເປັນຜູ້ຈັດການໃຫ້. ຂໍ້ສອງຄື, ການຮ່ວມກັນຂອງສອງສຫະ ພັນການຄ້າເສຣີເຂົ້າເປັນອັນດຽວກັນທີ່ເອີ້ນວ່າ AFL-CIO ໂດຍມີສະ ມາຊິກເຖິງສິບຫ້າລ້ານຄົນ. ດັ່ງທີ່ເຄີຍເຫັນມາໃນບາງສຫະພັນ ທີ່ ໄດ້ກໍ່ການສົ້ກົງ ເກີດຂຶ້ນ ພາຍໃນສຫະພັນ, ດັ່ງນັ້ນ ທາງສຫະພັນ ຈຶ່ງໄດ້ຄົ້ນຄິດ ໃນຣະບຽບ ບໍຣິຫານພາຍໃນ ແລະຈົນເປັນເຫດ ໃຫ້ສະພາ ກົງແກຣສ ໄດ້ອອກກົດໝາຍ ບັງຄັບ ໃຫ້ສຫະພັນນັ້ ເປີດເຜີຍການດຳເນີນງານພາຍໃນ ພ້ອມທັງການເງິນໃຫ້ແກ່ປະຊາ ຊົນໄດ້ຮູ້ເຫັນນຳ, ໂດຍສະເພາະສິ່ງທີ່ກ່ຽວກັບເບ້ຍລ້ຽງ ແລະທຶນ

ສ່ວນເຄາະ ແລະໃຫ້ສິດແກ່ສະມາຊິກຂອງສຫະພັນນີ້ ແບບປະຊາທິປະ
ໄຕ.

ບັນຫາພາຍໃນແມວອື່ນໆອີກ ໄດ້ສະແດງໃຫ້ເຫັນວ່າ ເກືອບ
ຈະແກ້ໄຂໃຫ້ຕົກໄປແລ້ວ ການນຳເອົາວິທີທັນສະໄໝມາໃຊ້ໃນການກະ
ສິກັມນັ້ນ ພາໃຫ້ການຜລິດຜົນຂອງຟາຣ໌ມ ໃຫຍ່ໄດ້ຫລາຍຂຶ້ນ ເພື່ອ
ສອດຄ້ອງຕາມຄວາມຕ້ອງການຂອງຊາດຕາມທີ່ຣັຖບານຂອງທ່ານໄອ
ເຊັນຮາວເວີໄດ້ດຳເນີນນະໂຍບາຍໃຫ້ການຊຸມກັນ ແກ່ຊາວໄຮ່ຊາວ
ນາ ໂດຍໄດ້ຕັ້ງຣາຄາສິນຄ້າໄວ້ ທັ້ງໃຫ້ການສນັບສນູນ ຢ່າງເຕັມທີ່
ເພື່ອໃຫ້ຊາວນາຊາວສວນໄດ້ເພີ້ມພູນຜົລປູກໃຫ້ຫລາຍຂຶ້ນ ແລະຣັຖ
ບານຈະຊ່ວຍໃຫ້ເຂົາເຈົ້າໄດ້ຂາຍອອກຈົນໝົດ. ນອກຈາກນີ້ແລ້ວ
ຣັຖບານຍັງໄດ້ວາງໂຄງການສນັບສນູນ ການຊອກຫາທີ່ດິນຫລາຍຂຶ້ນ
ອີກ ເພື່ອໃຫ້ເປັນບ່ອນໃຫ້ອາຫານແກ່ສັດ ເອົາໄວ້ປູກຕົ້ນໄມ້, ແລະ
ເອົາໄວ້ສ້າງບ່ອນຂັງນ້ຳ.

ນ່ອກຈາກນັ້ນ ຣັຖບານຂອງທ່ານໄອເຊັນຮາວເວີ ຍັງໄດ້ຮັບ
ການຖ່າຍທອດບັນຫາຂອງການປ້ອງກັນປະເທດຈາກການໂຄ່ນລົ້ມຣັຖ
ບານຂອງຄົນກຸ່ມນ້ອຍ, ແຕ່ທ່ານບໍ່ໄດ້ເບິ່ງຂ້າມສິດທິ ຂອງປະຊາຊົນ
ແຕ່ຢ່າງໃດໂດຍໃຫ້ມີເສຣີພາບໃນການວິພາກວິຈານ ແລະໄດ້ຈັດຕັ້ງ
ສະມາຄົມຕ່າງໆ. ຕໍ່ມາອະນຸກັມມະການໂດຍການນຳຂອງສະມາຊິກ
ສະພາສູງ ຄືທ່ານໂຈເຊັຟ ແມກຄາທີ ໄດ້ດຳເນີນການສືບສວນເບິ່ງ

ວ່າຈະມີອິດທິພົນຂອງຄອມມິວນິສ ແຊກຊຶມຢູ່ໃນຣັຖບານຫລືບໍ່, ແລະ ໄດ້ມີການສົງໄສ ບຸກຄົນທີ່ຢູ່ໃນຄນະຣັຖບານ ແລະບຸກຄົນພາຍນອກມີ ຊາວອະເມຣິກັນຫລາຍຄົນ ໄດ້ເຫັນດີນຳຄວາມພຍາຍາມ ຂອງທ່ານ ແມກຄາທີ, ແຕ່ບາງພວກອີກໄດ້ວິຈານວ່າອັນນັ້ນເປັນແຕ່ພຽງຄວາມ ຢ້ານກົວຕໍ່ອັນຕລາຍແລະຄວາມບໍ່ເອົາໃຈໃສ່ຕໍ່ການປະຕິບັດຈາກສານ ຂອງທ່ານເທົ່ານັ້ນ. ໃນປີ ຈພ້ຄ້ຄ, ອິດທິພົນຂອງທ່ານ ກໍຖືກປະຕິ ເສດແລະອາດຈະເປັນເພາະສະພາເຊເນຕເຫັນດີກວດການປະຕິບັດ ງານຂອງທ່ານ.

ປີແຫ່ງການບໍຣິຫານປະເທດຂອງທ່ານໄອເຊັນຮາວເວີໄດ້ປາ ກົດໃຫ້ເຫັນຄວາມກ້າວຫນ້າຂຶ້ນໄປເປັນລຳດັບ ທັງດ້ານການເມືອງ ກົດຫມາຍ, ແລະສິດທິຂອງສັງຄົມ ສຳລັບຊາວອະເມຣິກັນຜິວດຳ. ມີຊາວອະເມຣິກັນຜິວດຳຈຳນວນຫລາຍຄົນ, ໄດ້ຮຽນສູງເຖິງຂັ້ນມະ ຫາວິທຍາໄລ, ໄດ້ຮັບສິດທິໃນການປ່ອນບັດໃນການເລືອກຕັ້ງ, ມີ ເຮືອນຢູ່ ມີຣົຖຂີ່, ມີຫນ້າທີ່ການງານອັນສຳຄັນ ເຊັ່ນວ່າເປັນຜູ້ດູແລ ໃນວຽກການຕ່າງໆ ແລະຍັງໄດ້ກຳຫນ້າທີ່ການສູງໃນຣັຖບານ, ແຕ່ ວ່າ ການພັທນາແນວນຶ່ງທີ່ສຳຄັນທີ່ສຸດໃນສິດທິຂອງພົລເມືອງໃນສມັຍ ນີ້ ແມ່ນການຕັດສິນໃຈຢ່າງເປັນນຳນຶ່ງໃຈດຽວຂອງສານສູງ ຊຶ່ງໄດ້ ປະກາດອອກໃນປີ ຈພ້ຄ້ຄ ນັ້ນວ່າ ກົດຫມາຍໃດໆຂອງຣັຖ ຫລືຂອງ ທ້ອງຖິ່ນທີ່ກ່ຽວກັບການແ່ບງແຍກໂຮງຮຽນ ຣະຫວ່າງເດັກນ້ອຍຊາວ

ອະເມຣິກັນຜິວດຳ ແລະຜິວຂາວນັ້ນ ບໍ່ຖືກຕ້ອງຕາມຣັຖທັມມະນູນ. ສ່ວນໂຮງຮຽນຫລວງສ່ວນຫລາຍທີ່ຢູ່ຕາມຣັຖຕ່າງໆນັ້ນບໍ່ຄ່ອຍໄດ້ແບ່ງ ແຍກ, ດັ່ງນັ້ນກົດໝາຍໃໝ່ນີ້ຈຶ່ງໄດ້ແນໃສ່ຣັຖຈຳນວນນ້ອຍທີ່ຢູ່ທາງ ໃຕ້ເທົ່ານັ້ນທີ່ເຄີຍຖືປະເພນີການແບ່ງແຍກຜິວແຕ່ໃດໆມາ ແລະສານ ສູງສຸດໄດ້ສັ່ງໃຫ້ສານຕາມທ້ອງຖິ່ນໃນຣັຖດັ່ງກ່າວມານີ້ອອກຄຳສັ່ງໃຫ້ ເຈົ້າໜ້າທີ່ຝ່າຍສຶກສາ ຕາມທ້ອງຖິ່ນ ເລັ່ມປະຕິບັດຕາມກົດໝາຍນີ້ ຢ່າງໄວທີ່ສຸດເທົ່າທີ່ຈະໄວໄດ້. ການຮ່ວມໂຮງຮຽນ ເຂົ້າເປັນອັນ ດຽວກັນໄດ້ເລັ່ມຕົ້ນຢ່າງຮີບດ່ວນ ໃນເມືອງໂຄລັມເບັຍ ແລະໃນຣັຖ ບາງບ່ອນຕາມເຂດຊາຍແດນ, ແຕ່ໄດ້ຮັບການຄັດຄ້ານຢ່າງແຮງກ້າ ຈາກຣັຖທາງພາກໃຕ້. ກ່ຽວກັບເຣື່ອງນີ້, ໄດ້ມີເຫດການອັນຮຸນ ແຮງເກີດຂຶ້ນ ຊຶ່ງເປັນເຫດໃຫ້ຣັຖບານ ຕ້ອງໄດ້ສັ່ງກຳລັງເຂົ້າໄປ ຄວບຄຸມສະຖານະການໄວ້ໃນປີ ໑໙໕໗ ທີ່ເມືອງ ລິຕິລຣອກ, ຣັຖ ອາແຄນຊັ ແລະເຫດການທັງຫມົດນີ້ເປັນຫລັກຖານຂອງການຕັດສິນ ໃຈຂອງຣັຖບານທີ່ບັງຄັບໃຫ້ຄຳສັ່ງຂອງສານ ກ່ຽວກັບການທ້ອນໂຮມ ໂຮງຮຽນ ໃຫ້ນຳອອກໄປປະຕິບັດ. ການຮັບເອົາຣັຖ ອາລາສກາ ເຂົ້າຮ່ວມໃນສະຫະພັນໃນປີ ໑໙໕໙ ແລະຣັຖ ຮາວາຍອີໃນປີ ໑໙໕໙ ນັ້ນ ເປັນຫລັກຖານ ເຖິງການກ້າວເຂົ້າສູ່ສັງຄົມ, ການເມືອງ ແລະປະຊາທິປະໄຕ ເພາະວ່າຣັຖທັງສອງນີ້ ມີພົລເມືອງ ທີ່ປະກອບ ດ້ວຍຫລາຍຊາດຕ່າງໆກັນ.

ໃນຣະຫວ່າງປີ ๑๙๕๐ ຫາປີ ๑๙๗๐, ຊາວອະເມຣິກັນໄດ້ພາກັນດີໃຈນຳກາມຍົກຣະດັບການຄອງຊີບຂອງເຂົາເຈົ້າໃຫ້ສູງຂຶ້ນ, ແມ່ນວ່າຈະມີການວ່າງງານເພີ່ມຂຶ້ນໃນຣະຫວ່າງປີ ๑๙๕๗-๕๒ ກໍດີ ແຕ່ເງິນເດືອນໄດ້ເພີ່ມສູງຂຶ້ນເປັນລຳດັບ, ທຸຣະກິດໄດ້ຂຍາຍອອກຢ່າງໄວ, ແລະການເບິ່ງໂລກໃນທາງດີກໍໄດ້ຊຸມຈິດໃຈຂອງປຸກຄົນ ແລະຜົນຜລິດຂອງຊາດທັງຫມົດ, ຄຸນຄ່າຂອງສິນຄ້າທຸກຢ່າງແລະຄ່າ ບໍຣິການທີ່ຈຳຫນ່າຍໃນຊາດກໍໄດ້ເພີ່ມຂຶ້ນຈາກ ๘๗๔.๗ ພັນລ້ານໂດລາ ໃນປີ ๑๙๕๐ ມາເປັນ ๕๑๐ ພັນລ້ານໂດລາ ໃນປີ ๑๙๗๐. ການທີ່ສະຫະຣັຖຢູ່ໃນລັກສນະມັ່ງມີສຸກມ້ີ ໄດ້ພາໃຫ້ໂລກຄອມມິວນິສເກີດຄວາມບໍ່ພໍໃຈເປັນທີ່ສຸດ, ຈຶ່ງໄດ້ຕໍ່ສູ້ເລື່ອຍມາຈົນວ່າ ກາຍເປັນຄວາມຕຶງຄຽດຣະຫວ່າງຊາດຂຶ້ນມາ.

## ສະຫະຣັຖສນັບສນຸນເອກຣາຊຂອງເອເຊັຍ

ຣັຖບານຂອງທ່ານ ໄອເຊັນຮາວເວີ ຊຸດທຳອິດນັ້ນ, ໄດ້ຕັ້ງຄວາມຫວັງໄວ້ຢ່າງດີກ່ຽວກັບການດຳເນີນກິຈການດ້ານຕ່າງປະເທດ ແລະເມື່ອຕ້ອງສູ້ໜ້າກັບຄວາມອັບຈົນ ໃນດ້ານທະຫານທີ່ເກົາຫລີ, ເກົາຫລີຄອມມິວນິສຈຶ່ງໄດ້ຍອມເຊັນສັນຍາຢຸດຣົບກັບກອງບັນຊາການທະຫານຂອງສະຫະປະຊາຊາດໃນເດືອນກໍຣະກະດາປີ ๑๙๕๓. ການຕົກລົງເທື່ອນ້ີ ໄດ້ຮັບຮູ້ເຖິງການແບ່ງແຍກເກົາຫລີ ແລະໃຫ້ມີການ

ແລກປ່ຽນສະເລີຍເສີກຄອມມິວນິສເກົາຫລີເໜືອ ທີ່ພາກັນເສັຍຂວັນ ແລະທຸກໃຈທີ່ສຸດ, ແຕ່ທະຫານເກົາຫລີເໜືອ ແລະທະຫານຈີນປະ ມານສິບພັນຄົນປະຕິເສດບໍ່ຍອມກັບຄືນເມືອບ້ານເກີດເມືອງນອນຂອງ ເຂົາເຈົ້າຕໍ່ໜ້ານັກສັງເກດການຊາວອິນເດັຍ.

ແຕ່ການເຊັນສັນຍາຢຸດຮົບຂອງເກົາຫລີນັ້, ບໍ່ໄດ້ຢຸດຢັ້ງການ ແພ່ພາຍລັດທິຄອມມິວນິສໃນເອເຊັຍເລີຍ. ຕໍ່ມາໃນຣະດູໃບໄມ້ລົ່ນ ຂອງປີ ໑໙໕໔, ການໂຄສະນາຂອງກອງໂຈນທີ່ລຸກລາມ ຊຶ່ງໄດ້ຮັບ ການຊ່ວຍເຫລືອຈາກຈີນແດງ ໄດ້ເລີ້ມລຸກລາມ ຣັຖບານອັນຊອບທັມ ຂອງອິນໂດຈີນ ຈົນເປັນເຫດໃຫ້ແປວໄຟຂອງສົງຄາມລຸກຂຶ້ນ. ຕໍ່ ມາ ຜູ້ຕາງໜ້າຂອງອິນໂດຈີນ, ຝຣັ່ງເສດ, ຈີນຄອມມິວນິສ, ສຫະພາບໂຊວຽດ ແລະອັງກິດ ໄດ້ພົບກັນຢູ່ນະຄອນເຊີແນວ ໃນ ເດືອນກໍຣະກະດາ ແລະໄດ້ຕົກລົງແບ່ງປະເທດນັ້ອອກເປັນສອງພາກ ພາກເໜືອຮັບຮູ້ກັນວ່າ ເປັນຣັຖຂອງພວກຄອມມິວນິສ ຫລືພວກວຽດ ມິນ (ຕໍ່ມາເຂົ້ນພຽງສັ້ນໆວ່າ ວຽດນາມເໜືອ) ແລະສ່ວນທີ່ເຫລືອ ຢູ່ກໍໄດ້ແບ່ງເປັນສາມປະເທດທີ່ບໍ່ເປັນຄອມມິວນິສ ຄື: ປະເທດລາວ ປະເທດຂແມນ, ແລະວຽດນາມໃຕ້. ສ່ວນປະຊາຊົນທີ່ຢູ່ວຽດນາມ ເໜືອ ໄດ້ພາກັນລັກລອບໜີມາຢູ່ທາງໃຕ້ປະມານສິບເປີເຊັນ ຂອງ ຈຳນວນພົລເມືອງທັງໜົດ ດ້ວຍວ່າເຂົາເຈົ້າບໍ່ມັກການປົກຄອງຂອງ ຄອມມິວນິສ.

ເພື່ອປ້ອງກັນເອກຣາຊຂອງປະເທດຕ່າງໆ ໃນເອເຊັຍນີ້ໃຫ້ພົ້ນຈາກການລຸກລາມຫລືການແຊກແຊງຂອງຄອມມິວນິສ, ສະຫະຣັຖໄດ້ຮ່ວມມືກັບປະເທດໄທ, ຟີລິປິນ, ປາກິສຖານ, ອັງກິດ, ຝຣັ່ງເສດ, ໂອສຕຣາລີ ແລະນິວຊີແລນ ເພື່ອຈັດຕັ້ງການສົນທິສັນຍາປ້ອງກັນເອເຊັຍອາຄະເນ ຂຶ້ນໃນປີ ໑໙໕໔ ຊຶ່ງອົງການດັ່ງກ່າວນີ້ມີຊື່ຫຍໍ້ໆວ່າອົງການຊີອາໂຕ ເພື່ອໃຫ້ຄວາມຊ່ວຍເຫລືອ ຊຶ່ງກັນແລະກັນໃນດ້ານເສຖກິດ, ດ້ານເຕັກນິກແລະການປະຕິບັດງານຮ່ວມກັນເມື່ອຝ່າຍໃດຝ່າຍນຶ່ງ ຖືກລຸກຄາມ. ອະນຸມາຕຣາຢູ່ໃນນີ້ ໄດ້ຕໍ່ອອກໄປເຖິງການໃຫ້ຄວາມອາຣັກຂາແກ່ປະເທດລາວ, ຂແມນ, ແລະວຽດນາມໃຕ້ ແລະຮ່ວມທັງໄດ້ໃຫ້ການຊ່ວຍເຫລືອ ໃນດ້ານເສຖກິດອີກດ້ວຍ.

ເປັນທີ່ຊາບກັນແລ້ວວ່າ ການຮັກສາຄວາມປອດໄພແລະການສົ່ງເຄາະຂອງອະເມຣິການັ້ນ, ມີສ່ວນກ່ຽວພັນໂດຍຕຣົງ ກັບຄວາມກ້າວໜ້າໃນດ້ານເສຖກິດ ແລະສັງຄົມຂອງປະຊາຊົນ ໃນປະເທດທີ່ກຳລັງພັທນາໃໝ່, ດັ່ງນັ້ນຈຶ່ງໄດ້ຂຍາຍໂຄງການຊ່ວຍເຫລືອ ໃນດ້ານເຕັກນິກແກ່ເອເຊັຍ, ຕະເວັນອອກກາງ, ອາຟຣິກກາ ແລະອະເມຣິກາລາຕິນ. ສະຫະຣັຖ ໄດ້ອອກຄ່າໃຊ້ຈ່າຍ ເປັນມູນຄ່າຫລາຍກວ່າ ນຶ່ງພັນລ້ານໂດລາ ເພື່ອບັນເທົາທຸກ ແລະຊ່ວຍເຫລືອເກົາຫລີໃຕ້ທີ່ຖືກໄພສົງຄາມທຳລາຍບ້ານເມືອງຈົນໝົດເພື່ອໃຫ້ສ້າງ

ສາປະເທດຄົນໃຫມ່. ເມື່ອເຖິງປີ ຈຈ້ຂ້ຂ, ປະເທດນີ້ ສາມາດ ພັທນາໂຕເອັງຂຶ້ນຢ່າງວ່ອງໄວ ຈົນວ່າຜົນຜລິດຂອງຊາດ ເພີ້ມຂຶ້ນ ຫລາຍກວ່າ ກ່ອນຍາມສົງຄາມອີກດ້ວຍ. ເຊັ່ນດຽວກັນກັບປະເທດ ຟີລິປິນ ຊຶ່ງຫລັງຈາກຖືກໄພສົງຄາມເຜົາຜານແລ້ວ, ກໍໄດ້ຮັບການ ຊ່ວຍເຫລືອ ໃນການສ້ອມແປງປະເທດໃຫມ່ ແລະໄດ້ຮັບການຊ່ວຍ ເຫລືອໃນການຂັບໄລ່ກອງໂຈນຄອມນິວມິສໃຫ້ແຕກຫນີຈົນເປັນຜົນສຳ ເຮັດ, ເມື່ອຮ່ວມທັງຫມົດແລ້ວ, ຕັ້ງແຕ່ປີ ຈຈ້ຂ້ວ ຫາ ປີ ຈຈ້ຝວ, ມີປະມານ ຝວ ກວ່າປະເທດ ໄດ້ຮັບການຊ່ວຍເຫລືອຈາກສະຫະຮັຖ ໃນດ້ານຢາປົວພະຍາດ, ເຄື່ອງຈັກ, ການໃຫ້ເງີນກູ້ຢືມ, ແລະ ນາຍຊ່າງຜູ້ຊຳນານ.

24 / VII

<u>ຄວາມພຍາຍາມຕໍ່ການໃຫ້ການຮ່ວມມືໂດຍສັນຕິວິທີ</u>

ຫ້ານຈຳໜ່າຍ

ໃນປີ ຈຈ້ຂ້ຂ, ໂຄງການຊ່ວຍເຫລືອຕ່າງປະເທດ ຊຶ່ງຮ່ວມ ທັງໂຄງການດ້ານທະຫານທີ່ຢູໂຮບ, ໄດ້ຮ່ວມກັນເຂົ້າເປັນການຮ່ວມ ມືໃນດ້ານບໍຣິຫານຮະຫວ່າງຊາດຊຶ່ງເປັນສ່ວນນຶ່ງຂອງຮັຖບານສະຫະ ຮັຖ ເພື່ອຊ່ວຍເຫລືອປະເທດທີ່ກຳລັງພັທນາ ໃຫ້ກັບຄົນພຽງພໍສຳລັບ ການຂົນສົ່ງ, ການສ້າງກຳລັງອຸດສາຫະກັມ, ການຂຍາຍຮ່ອມຫ້ວຍ ການປັບປູງການຊົລປະທານ, ແລະການກໍ່ສ້າງພື້ນຖານຕ່າງໆ ເພື່ອ ເປັນກຳເນີດໃຫ້ແກ່ເສຖກິດ, ດັ່ງນັ້ນ ສະຫະຮັຖຈຶ່ງໄດ້ຕັ້ງກອງເງີນ

ທຶນກູ້ຢືມຂຶ້ນໃນປີ ຈຍ້ຄ ແລະເມື່ອເຖິງທ້າຍປີ ຈຍຝ້ວ, ເງິນທຶນກູ້ຢືມນີ້ໄດ້ແບ່ງໃຫ້ ຄຍ ປະເທດໄດ້ກູ້ຢືມທັງຫມົດເປັນ ຈຊສ ພູດ ຊຶ່ງຮວມທັງຫມົດແລ້ວເປັນມູນຄ່າປະມານ ຈ,ຊຄວ ລ້ານໂດລາ. ນອກຈາກນີ້ແລ້ວ, ໃນຮະຫວ່າງປີ ຈຍ້ຄຄ ຫາປີ ຈຍຝ້ວ, ສະຫະຣັຖຍັງໄດ້ແຈກຢາຍສະບຽງອາຫານ ໃຫ້ແກ່ປະເທດທີ່ຂາດເຂີນສິ່ງເຫລົ່ານີ້ຄິດເປັນມູນຄ່າທັງຫມົດ ປະມານ ຈວ,ວວວ ລ້ານໂດລາ ຊຶ່ງມີປະມານເຄິ່ງນຶ່ງຂອງຈຳນວນອາຫານນີ້ ໄດ້ເອົາໄປແຈກຢາຍ ເພື່ອບັນເທົາຄວາມອົດຢາກໃນບາງປະເທດເຊັ່ນປາກີສຖານ, ເນປານ, ຈໍແດນ, ເຮຕີ ແລະປະເທດການາ, ອີກເຄິ່ງນຶ່ງ ໄດ້ເອົາໄປຂາຍເປັນອັດຕຮາຕ່າງປະເທດຊຶ່ງເງິນຮາຍໄດ້ເຫລົ່ານີ້ຈະໄດ້ເອົາໃຫ້ຣັຖບານຂອງປະເທດດັ່ງກ່າວຢືມໂດຍຄິດດອກເບັ້ຍຕ່ຳທີ່ສຸດ ຫລືບໍ່ດັ່ງນັ້ນກໍໃຫ້ຢືມລ້າໆ ໃນໂຄງການພັທນາເສຖກິດ.

ການປະຊຸມຂັ້ນສູງສຸດ ໄດ້ເປີດຂຶ້ນ ທີ່ນະຄອນເຊີແນວ ໃນປີ ຈຍ້ຄຄ ໂດຍຫວັງຢາກໃຫ້ມີການກ້າວຫນ້າ ໃນດ້ານການຮ່ວມມືໂດຍສັນຕິວິທີຮະຫວ່າງຝ່າຍອົດທິພົລຄອມມິວນິສ ແລະຝ່າຍທີ່ບໍ່ເປັນຄອມມິວນິສ, ແມ່ນວ່າຈະມີການແລກປ່ຽນ ຄວາມຄິດຄວາມເຫັນກັນ ຮະຫວ່າງຜູ້ນຳຝ່າຍອະເມຣິກັນ, ໂຊວຽດ, ອັງກິດ ແລະຝຣັ່ງກໍຕາມ, ແຕ່ກໍບໍ່ມີການຕົກລົງກັນໄດ້ ກ່ຽວກັບບັນຫາການທ້ອນໂຮມ ເຢຣະມັນໃຫ້ເປັນອັນນຶ່ງ ອັນດຽວກັນ. ດ້ວຍຄວາມພຍາຍາມ ຢາກລົດຜ່ອນ

ອັນຕລາຍຈາກການຫລອນໂຈມຕີແລະເພື່ອຢຸດຢັ້ງການຂຍາຍອາວຸດ, ປະທານາທິບໍດີໄອເຊັນຮາວເວີ ໄດ້ສເນີຢາກໃຫ້ໂຊວຽດແລະສະຫະ ຣັຖແລກປ່ຽນສຳເນົາແຜນຜັງຂອງການຈັດຕັ້ງກ້າຍທະຫານແລະອະນຸ ຍາດໃຫ້ແຕ່ລະຝ່າຍໄດ້ກວດເບິ່ງການຈັດຕັ້ງທາງທະຫານ ໃຫ້ມີການ ສັງເກດການທາງອາກາດ, ແຕ່ຜູ້ນຳຂອງຝ່າຍໂຊວຽດໄດ້ປະຕິເສດ ແຜນການນີ້ໂດຍໃຫ້ເຫດຜົນວ່າ ນັ້ນເປັນການລ່ວງລ້ຳ ອະທິປະໄຕ ຂອງຊາດ, ຊຶ່ງເຣື່ອງນີ້ໄດ້ພາໃຫ້ປະຊາຊົນ ຂອງຫລາຍປະເທດຜິດ ຫວັງເປັນທີ່ສຸດ ເພາະວ່າ ເຂົາເຈົ້າເຫັນວ່າ ຂໍ້ສເນີຂອງທ່ານໄອ ເຊັນຮາວເວີນີ້ເປັນບາດກ້າວທຳອິດ ທີ່ຈະນຳໄປສູ່ການຄວບຄຸມແລະ ກວດກາອາວຸດ. ຜົນຂອງການປະຊຸມ ທີ່ນະຄອນເຊີແນວນັ້ນໄດ້ຕົກ ລົງກັນໃຫ້ມີໂຄງການແລກປ່ຽນທັສນະສຶກສາຄື ຄນະນາຍຊ່າງ, ປັນ ຍາຊົນ, ແລະນັກສິລປິນຂອງໂຊວຽດໄດ້ມາຢ້ຽມຢາມສະຫະຣັຖແລະ ໃນຂນະດຽວກັນນີ້ ທາງຝ່າຍອະເມຣິກັນກໍໄດ້ຈັດໃຫ້ຄນະຂອງຕົນໄປ ຢ້ຽມຢາມສຫະພາບໂຊວຽດເຊັ່ນດຽວກັນ.

## ເຫດຮ້າຍເກີດຂຶ້ນຢູ່ທີ່ປະເທດຮັງກາຣີ ແລະຄອງໂຊເອສ

ສະຖານະການຣະຫວ່າງຊາດ ໃນປີ ໑໙໕໗ ນັ້ນ ຢູ່ໃນລັກ ສນະທີ່ຈະຣະເບີດໄດ້ທຸກເມື່ອ, ໃນຕົ້ນປີນັ້ນ ຜູ້ນຳພັກຄອມມິວນິສ ຄື ທ່ານ ນິກິຕາ ຄຣູສເຊຟ ໄດ້ປະນາມນັກຜະດັດການຜູ້ທີ່ລ່ວງລັບໄປ

ແລ້ວ ຄືທ່ານສະຕາລິນ, ວ່າເປັນຜູ້ປົກຄອງ ທີ່ໃຊ້ອຳນາດກົດຂີ່ຢ່າງ ໂຫດຮ້າຍທີ່ສຸດ. ໃນການເປີດເຜີຍຄວາມຊົ່ວຮ້າຍຂອງທ່ານສະຕາ ລິນ ໂດຍທ່ານຄຣູສເຊຟນີ ໄດ້ພາໃຫ້ປະຊາຊົນຂອງປະເທດທີ່ຢູ່ພາຍ ໃຕ້ການປົກຄອງ ຂອງຣັສເຊັຍ ຊຶ່ງຢູ່ທາງພາກຕະເວັນອອກຂອງຢຸ ໂຣບນັ້ນຮຽກຮ້ອງເອົາເສຣີພາບ ຄືນມາຈາກການຄວບຄຸມ ຂອງໂຊ ວຽດ ໃນກິຈການພາຍໃນປະເທດ. ທີ່ໂປແລນ, ຜູ້ນຳ ຝ່າຍຄອມ ມິວນິສແຫ່ງຊາດຄືທ່ານວະລາດິສລໍໂກມຸລກາ, ຊຶ່ງຖືກຄຸມຂັງຕົວແຕ່ ຄາວສະຕາລິນຍັງມີອຳນາດຢູ່ນັ້ນ, ໄດ້ຖືກປ່ອຍຕົວເປັນອິສຣະ ແລະ ໄດ້ກັບມາເປັນຫົວໜ້າພັກຄອມມິວນິສຂອງໂປແລນ ແລະໄດ້ໃຫ້ຄຳ ໝັ້ນສັນຍາແກ່ປະຊາຊົນວ່າ ຈະໃຫ້ປະຊາຊົນມີເສຣີພາບ ໃນການ ປາກເວົ້າ, ໃນການໜັງສືພິມ, ແລະການນັບຖືສາສນາ.

ຕໍ່ມາ, ຊາວໂປແລນໄດ້ເຮັດຕົວຢ່າງ ໃຫ້ຊາວຮັງກາຣີເຫັນ ຢ່າງເປັນທີ່ຈັບອົກຈັບໃຈທີ່ສຸດ, ດັ່ງນັ້ນ ໃນເດືອນຕຸລາ ປີ ໑໙໕໖, ປະຊາຊົນຊາວຮັງກາຣີຈຶ່ງລຸກຂຶ້ນຕໍ່ຕ້ານໂດຍຈັດຕັ້ງຣັຖບານເສຣີແລະ ຮຽກຮ້ອງໃຫ້ກອງທະຫານຂອງໂຊວຽດ ຖອນອອກຈາກດິນແດນຂອງ ຮັງກາຣີ, ແຕ່ແທນທີ່ຈະປະຕິບັດ ຕາມຄຳຮຽກຮ້ອງຂອງປະຊາຊົນ ຊາວຮັງກາຣີ, ກຳລັງທັບຂອງໂຊວຽດ ກັບໂຈມຕີຄນະກູ້ຊາດ ແລະ ການກະທຳດັ່ງກ່າວນີ້ ກໍຖືກສະມັດຊາໃຫຍ່ສຫະປະຊາຊາດ ປະນາມ ຢ່າງຮ້າຍແຮງ. ປະຊາຊົນຊາວອະເມຣິກັນ ຮ່ວມກັບປະຊາຊົນທົ່ວ

ໂລກໄດ້ຄັດຄ້ານແລະປະທ້ວງຕໍ່ການກະທຳຂອງໂຊວຽດຄັ້ງນີ້, ແລະ ໄດ້ໃຫ້ການຕ້ອນຮັບແກ່ຊາວຮັງກາຣີຫລາຍພັນຄົນ ທີ່ຫນີໄປລີ້ໄພຢູ່ສະ ຫະຮັຖ.

ໃນເວລາດຽວກັນ ທີ່ມີການຂະບົດຢູ່ຮັງກາຣີນັ້ນ, ເຫດການ ອັນຮ້າຍແຮງ ຂອງໂລກ ໄດ້ຂຍາຍອອກໄປ ຄວບຄູມຄອງຊູເອສ, ຫລັງຈາກທີ່ໄດ້ແຍກອອກຈາກເຂດແດນຂອງອີຢິບ ໂດຍສົມບູນແລ້ວ ຄອງແຫ່ງນີ້ໄດ້ເປີດຫາງຜ່ານເຮືອສິນຄ້າ ຊຶ່ງແມ້ນບໍຣິສັດຣະຫວ່າງ ຊາດເປັນຜູ້ຄວບຄູມແລະສ່ວນຫລາຍກໍແມ່ນອັງກິດແລະຝຣັ່ງເສດຮ່ວມ ກັນ, ແຕ່ໃນເດືອນກໍຣະກະດາປີ ຈພຜຜ, ປະທານາທິບໍດີຂອງອີຢິບ ຄີທ່ານ ນາເຊີ້ໄດ້ປະກາດຢຶດເອົາຄອງຊູເອສເປັນຂອງອີຢິບ.

ເມື່ອເປັນເຊັ່ນນັ້ນ, ອຳນາດຫາງຝ່າຍຕະເວັນຕົກ ໄດ້ພຍາ ຍາມເຈຣະຈາກັບຝ່າຍອີຢິບ ເພື່ອໃຫ້ມີການຕົກລົງກັນແບບໃຫມ່ຄືໃຫ້ ນາງຊາດເປັນຜູ້ຄວບຄູມ ຊຶ່ງຫມາຍເຖິງສິບແປດປະເຫດທີ່ໃຊ້ຄອງຊູ ເອສນີ້ເປັນປະຈຳ. ແລ້ວຕໍ່ມາໃນເດືອນຕຸລາ, ເນື່ອງຈາກມີການ ປະທະກັນຢູ່ເລື້ອຍໆ ຕາມເຂດຊາຍແດນ, ອິສຣາເອລໄດ້ກ່າວຫາອີ ຢິບວ່າ ໄດ້ວາງແຜນໂຈມຕີອິສຣາເອລ, ຈຶ່ງໄດ້ສົ່ງກອງທະຫານ ຂ້ານໄປຍັງແຫລມຊີໃນ ກົງໄປຍັງຄອງຊູເອສ. ເມື່ອເຫັນວ່າການ ກະທຳເຊັ່ນນີ້ ເປັນການຂົ່ມຂູ່ຕໍ່ການເດີນເຮືອໃນຄອງນີ້, ທັງອັງກິດ ແລະຝຣັ່ງເສດຈຶ່ງໄດ້ສົ່ງທະຫານໄປປະຈຳຢູ່ທີ່ເຂດຄອງນີ້, ແຕ່ສະ

ຫະຣັຖໄດ້ຂັດຂວາງຕໍ່ການກະທຳຂອງພັນທະມິດ ໃນສົນທິສັນຍາແອດ ແລນຕິກເຫນືອ ແລະຖືວ່າເປັນການລະເມີດຕໍ່ຫລັກການສົນທິສັນຍານີ້ ດັ່ງນັ້ນ, ທີ່ສຫະປະຊາຊາດ ຈຶ່ງໄດ້ມີການປະຊຸມກັນ ແລະເຫັນດີໃຫ້ສຫະປະຊາຊາດສັ່ງໃຫ້ມີການຢຸດຍິງ ແລະໃຫ້ກອງທະຫານທີ່ລ່ວງລຳ້ເຂົ້າໄປໃນເຂດແດນນີ້ ຖອນອອກຈາກບ່ອນນີ້ ທັນທີ. ໃນທີ່ສຸດ. ອັງກິດ, ຝຣັ່ງເສດ ແລະອິສຣາເອລຕ່າງກໍຍອມເຣັດຕາມເງື່ອນໄຂນີ້, ຊຶ່ງຕົງກັນຂ້າມກັບກອງທະຫານຣັສເຊັຍ ທີ່ໄດ້ດຳເນີນການຄອບຄອງຣັງກາຣີຢູ່ ຢ່າງບໍ່ລົດລະ. ພາຍໃຕ້ການດູແລ ຂອງກຳລັງຕຳຣວດຂອງສຫະປະຊາຊາດ, ຄອງຊູເອສ ຈຶ່ງໄດ້ເປີດໃຫ້ເຣືອສິນຄ້າຜ່ານໄປມາອີກຄັ້ງນຶ່ງໃນເດືອນມີນາ ປີ ຈນ.

ເມື່ອເຫດຮ້າຍທີ່ເກີດຂຶ້ນຢູ່ຄອງຊູເອສຄາວນີ້, ໂຊວຽດຟ້າວສົ່ງກອງທະຫານເຂົ້າໄປແຊກແຊງໃນກິຈການຂອງອີຢິບ ໂດຍອ້າງວ່າໄດ້ສົ່ງຄນະອາສາສມັກໄປຊ່ວຍອີຢິບ, ຊຶ່ງພຶດຕິການດັ່ງກ່າວນີ້ໄດ້ເປີດເຜີຍເຖີງຄວາມພຍາຍາມຂອງຄອມມິວນິສທີ່ຢາກກ້າວເຂົ້າໄປມີບົດບາດຢູ່ໃນຕະເວັນອອກກາງ. ເພື່ອຕອບສນອງ ກັບການຂົ່ມຂູ່ນີ້ ແລະເພື່ອສນັບສນູນໃຫ້ເຂດແດນນີ້ມີຄວາມທູ່ນທ່ຽງແລະມີເອກຣາຊ, ສະຫະຣັຖຈຶ່ງໄດ້ນຳເອົານະໂຍບາຍຂອງທ່ານໄອເຊັນຮາວເວີມາໃຊ້.

ໃນເດືອນມະກະຣາ ປີ ຈນ.ຖ, ປະທານາທິບໍດີ ໄອເຊັນຮາວເວີໄດ້ຂໍຮ້ອງຕໍ່ສະພາກົງແກຣສ, ກ່ອນອື່ນໃຫ້ອະນຸຍາດໃຫ້ທ່ານ

ໄດ້ໃຊ້ກຳລັງທະຫານ ຖ້າຫາກວ່າປະເທດທາງຕະເວັນອອກກາງຂໍ
ຄວາມຊ່ວຍເຫລືອ ເພື່ອກວດລ້າງ ການລຸກລາມ ຂອງຄອມມິວນິສ,
ແລະຂໍ້ສອງ, ທ່ານໄດ້ຂໍ້ຮ້ອງ ໃຫ້ສະພາກົງແກຣສ ອະນຸມັດເງິນຈຳ
ນວນນຶ່ງປະມານ ৪০০ ລ້ານໂດລາ ເພື່ອຊ່ວຍເຫລືອປະເທດທາງ
ຕະເວັນອອກກາງ ຖ້າຫາກວ່າເຂົາເຈົ້າຕ້ອງການຄວາມຊ່ວຍເຫລືອ
ຈາກສະຫະຣັຖ, ສ່ວນສະພາກົງແກຣສ ກໍ່ໄດ້ຍອມຮັບເອົາຂໍ້ສເນີທັງ
ສອງຢ່າງນີ້.

ນຶ່ງປີເຄິ່ງຕໍ່ມາ, ຣັຖບານເລບານົສ ໄດ້ຂໍຄວາມຊ່ວຍເຫລືອ
ຈາກສະຫະຣັຖ ໂດຍກ່າວຫາສາທາຣະນະຣັຖອາຫຣັບ (ການທ້ອມ
ໂຮມກັນຣະຫວ່າງຊີເຣັຍ ແລະອີຢິບ) ວ່າເປັນຜູ້ກໍ່ການຂະບົດຂຶ້ນໃນ
ເລບານອນ. ປະທານາທິບໍດີໄອເຊັນຮາວເວີ້ຈຶ່ງໄດ້ສົ່ງນາວິກະໂຍ
ທິນຂອງອະເມຣິກັນໄປຍັງປະເທດນັ້ນ ເພື່ອໃຫ້ຄວາມອາຣັກຂາແກ່
ເລບານອນ ຈາກການລຸກລາມຂອງພາຍນອກ. ຫລັງຈາກຫລາຍ
ອາທິດຕໍ່ມາ, ສະຖານະການທີ່ເລບານອນກໍ່ດີຂຶ້ນ ແລະສະຫະຣັຖຈຶ່ງ
ໄດ້ຖອນກຳລັງທະຫານຄືນ ແລະເຫດຮ້າຍຄ້າຍຄືກັນນີ້ ເກີດຂຶ້ນຣະ
ຫວ່າງຈໍແດນແລະອິຫຣັກ, ແຕ່ກໍ່ໄດ້ສງົບລົງເມື່ອກອງທະຫານອັງກິດ
ໄດ້ມາຊ່ວຍລະງັບເຫດການເຫລົ່ານັ້ ຕາມຄຳຮ້ອງຂອງຣັຖບານຂອງ
ປະເທດນັ້ນ ແລະກຳລັງທະຫານເຫລົ່ານີ້ ກໍ່ໄດ້ຖືກຖອນອອກໝົດໃນ
ເວລາຕໍ່ມາ.

## ຟໍໂມຊາ ແລະເບີລິນ ຖືກຂົ່ມຂູ່

ໃນຮະດູຮ້ອນຂອງປີ ຈຍ.ຊ, ໃນຂນະທີ່ຫຄການຢູ່ຕະເວັນ ອອກກາງຍັງບໍ່ທັນສງົບດີເທື່ອນັ້ນ, ຫຄການອັນຮ້າຍແຮງ ໄດ້ເກີດ ຂຶ້ນທີ່ຕະເວັນອອກໄກ ເພາະວ່າຈີນຄອມມິວນິສ ໄດ້ເລີ້ມຖົ້ມຮະເບີດ ໃສ່ເກາະເກມອຍ ແລະມັດຊູ ຂອງຈີນຄນະຊາດ, ຊຶ່ງການຖົ້ມຮະ ເບີດເທື່ອນີ້ເປັນບາດກ້າວຂອງການຮຸກຮານຂັ້ນທຳອິດກ່ອນຈະໂຈມຕີ ເກາະຟໍໂມຊາ ໂດຍຕົງ. ດັ່ງນັ້ນ ຣັຖມົນຕີຕ່າງປະເທດຂອງສະ ຫະຣັຖຄືທ່ານດູເລສ ໄດ້ປະກາດວ່າ ສະຫະຣັຖຈະຕອບໂຕ້ ຕໍ່ການ ແຊກແຊງຂອງກຳລັງພາຍນອກ ເພື່ອປົກປັກຮັກສາເກາະຟໍໂມຊາໃຫ້ ເປັນອິສຣະຕໍ່ໄປ. ແມ່ນວ່າໂຊວຽດຈະສນັບສນູນການລຸກລານຂອງ ຈີນແດງຄາວນີ້ກໍຕາມ, ການຖົ້ມລະເບີດກໍໄດ້ລົດນ້ອຍລົງ ໃນທີ່ສຸດກໍ ໄດ້ຢຸດລົງເລີຍ. ເມື່ອປະທານາທິບໍດີ ໄອເຊັນຮາວເວີ ໄດ້ເຕືອນ ອີກຄັ້ງນຶ່ງວ່າ ສະຫະຣັຖຈະບໍ່ທົ້ຖອຍຕໍ່ການລຸກລານທີ່ໃຊ້ກຳລັງອາວຸດ ແຕ່ຢ່າງໃດ, ແຕ່ຈີນຄອມມິວນິສ ໄດ້ປະກາດ ຢ່າງດີ້ດີ້ງຢູ່ສເມີວ່າ ເຂົາມີຈຸດປະສົງຢາກປົດປ່ອຍຟໍໂມຊາ ແລະເກາະທີ່ຍື່ນສູ່ທະເລ.

ຫຄການທາງຕະເວັນອອກໄກ ຍັງບໍ່ທັນສງົບຮຽບຮ້ອຍເທື່ອ ເມື່ອນາຍົກຣັຖມົນຕີຂອງໂຊວຽດ ຄືທ່ານຄຣູສເຊຟໄດ້ຍື່ນຄຳຂາດໃນ ເດືອນພຶສຈິກາວ່າ ໃຫ້ອຳນາດຕະເວັນຕົກ ຖອນກຳລັງຂອງຕົນອອກ ຈາກເບີລິນ ພາຍໃນກຳນົດຫົກເດືອນ ເພື່ອເຮັດໃຫ້ເມືອງນີ້ ເປັນ

ເມືອງປອດທະຫານ. ເມື່ອຈົບເວລາທີ່ກຳນົດໃຫ້ນັ້ນ, ທ່ານຄຣູສ ເຊຟປະກາດວ່າ ສຫະພາບໂຊວຽດ ຈະປ່ຽນມາຄວບຄຸມການຄົມມາ ຄົມຣະຫວ່າງເຢຣະມັນຕະເວັນອອກ, ແລະຕະເວັນຕົກແລະອຳນາດ ຝ່າຍຕະເວັນຕົກຈະຜ່ານເຂົ້າໄປໃນເບີລິນຕະເວັນຕົກໄດ້ກໍ່ຕໍ່ເມື່ອໄດ້ ຮັບອະນຸຍາດ ຈາກຣັຖບານ ຂອງເຢຣະມັນຕະເວັນອອກ ເທົ່ານັ້ນ. ແຕ່ສະຫະຣັຖ, ອັງກິດ ແລະຝຣັ່ງເສດ ໄດ້ຕອບໂຕ້ຕໍ່ຄຳຂາດນັ້ດວຍ ການຢືນຢັນສິດທິຂອງເຂົາເຈົ້າໃນເຂດແດນນີ້ ແລະປະກາດວ່າເຂົາ ເຈົ້າຈະຢູ່ໃນເບີລິນຕະເວັນຕົກນີ້ຕໍ່ໄປຕາມສິດທິອັນຊອບທັມຂອງເຂົາ ເຈົ້າໃນການສັນຈອມໄປມາໃນເຂດນີ້ໄດ້ຢ່າງເສຣີ.

ໃນປີ ໑໙໔໙, ສຫະພາບໂຊວຽດ ໄດ້ຖອນຄຳຂາດຂອງຕົນ ແລະໄດ້ຍອມເຂົ້າຮ່ວມປະຊຸມກັບອຳນາດຂອງຝ່າຍຕະເວັນຕົກ, ດັ່ງ ນັ້ນ ການປະຊຸມຣະຫວ່າງຣັຖມົນຕີຕ່າງປະເທດ ທັງສີ່ທ່ານ ຈຶ່ງໄດ້ມີ ຂຶ້ນ, ແມ່ນວ່າໃນຣະຍະສາມເດືອນຂອງສມັຍປະຊຸມນີ້ ບໍ່ຄ່ອຍໄດ້ມີ ການຕົກລົງທີ່ສຳຄັນອັນໃດເລີຍ, ແຕ່ກໍເປັນຊ່ອງທາງ ໃຫ້ມີການເຈ ຣະຈາໃນຂັ້ນຕໍ່ໄປ. ການມາຢ້ຽມສະຫະຣັຖຂອງທ່ານຄຣູສເຊຟໃນ ເດືອນກັນຍາປີ ໑໙໔໙ ນັ້ນໄດ້ພາໃຫ້ປະຕູຂອງການເຈຣະຈາກ້ວາງ ອອກໄປອີກ. ຫລັງຈາກ ການຢ້ຽມຢາມເທື່ອນີ້, ທ່ານຄຣູສເຊຟ ແລະໄອເຊັນຮາວເວີ ໄດ້ເຣັດຖແລງການຮ່ວມກັນ, ໂດຍເນັ້ນວ່າ ບັນຫາຫຍຸ້ງຍາກ ທີ່ໂລກຕ້ອງສູ້ໜ້າຢູ່ເວລານີ້ ກໍຄືການລົດກຳລັງຣົບ

ທີ່ວຕ່ໄປ ຜູ້ນຳທັງສອງຝ່າຍເຫັນພ້ອມດ້ວຍກັນວ່າ ບັນຫາຂອງເບີລິນ ແລະບັນຫາສຳຄັນຕ່ ຂອງນາຕ່ຊາດນັ້ນ, ຄວນຈະໄດ້ຮັບການແກ້ໄຂ ໃຫ້ສຳເຮັດລຸລ່ວງໄປ ບໍ່ແມ່ນດ້ວຍການໃຊ້ກຳລັງ, ແຕ່ດ້ວຍການເຈ ຮະຈາໂດຍສັນຕິວິທີ.

ດັ່ງນັ້ນ, ການປະຊຸມຂັ້ນສຸດຂາດ ຈຶ່ງໃຫ້ມີຂຶ້ນທີ່ກູງປາຮີ ໃນ ເດືອນພຶສພາ ປີ ຈນຜ້ວ, ແຕ່ນາຍົກຣັຖມົນຕີ ສຫະພາບໂຊວຽດໄດ້ ນຳເອົາເຣື່ອງກ່ຽວກັບການທີ່ສຫະພາບໂຊວຽດ ໄດ້ຍິງເຣືອບິນສັງ ເກດການລຳນຶ່ງຂອງອະເມຣິກັນ ທີ່ບິນຢູ່ເທິງເຂດຂອງສຫະພາບໂຊ ວຽດນັ້ນຕົກ, ຈຶ່ງຖືເປັນສາເຫດ ຂອງການງົດ ການປະຊຸມຄັ້ງນີ້. ແມ່ນວ່າຣັຖບານຂອງສຫະພາບໂຊວຽດ ຍອມຮັບຮູ້ດີຢູ່ວ່າ ການບິນ ແບບນີ້ໄດ້ຢຸດເປັນເວລາປີກວ່າ ທີ່ຜ່ານມາແລ້ວກໍຕາມ ແລະແມ່ນວ່າ ປະທານາທິບໍດີໄອເຊັນຮາວເວີ ໄດ້ປະກາດໄປແລ້ວຈະບໍ່ໃຫ້ການບິນ ແບບນີ້ມີຂຶ້ນອີກກໍຕາມ, ທ່ານຄຮູສເຊຟ ຍັງຊຸຊີໃຫ້ທ່ານໄອເຊັນຮາວ ເວີຂໍໂທດຕໍ່ການກະທຳຜິດນີ້ ເປັນການສ່ວນຕົວ. ແຕ່ເມື່ອຖືກປະຕິ ເສດ ທ່ານຄຮູສເຊຟຈຶ່ງອອກຈາກປາຮີຕົງ ໄປຍັງໂມສກູ ຊຶ່ງນຳຜົນ ໃຫ້ແຜນການປະຊຸມລົ້ມເຫລວໄປອີກວາຮະນຶ່ງ.

## ຄາສໂຕຣ ແລະລັດທິຄອມມິວນິສທີ່ຄົວບາ

ໃນເວລານັ້ນ, ຕົວຢ່າງເລ້ລ່ຽມຂອງຄອມມິວນິສກຳລັງເປີດ

ໂສມໜ້າໃຫ້ຊາວໂລກໄດ້ເຫັນທີ່ປະເທດຄິວບາ, ຊຶ່ງຢູ່ຫ່າງໄກຈາກ ເຂດຝັ່ງທະເລທາງໃຕ້ຂອງສະຫະຣັຖ ພຽງ ໙໐ ໄມ ຫລືປະມານ ๑๔๔ ກິໂລແມດເທົ່ານັ້ນ. ໃນຕົ້ນປີ ๑๙๕๙ ນັ້ນ, ຫລັງຈາກໄດ້ຕໍ່ ສູ້ມາເປັນເວລາຫລາຍປີ, ທ່ານຟີເດລ ຄາສໂຕຣ ຈຶ່ງສາມາດໂຄ່ນ ລົ້ມຣັຖບານຂອງນັກຜະເດັດການຊາວຄິວບາ ຄືທ່ານ ຟູລເຈນ ຊີໂອ ບາຕິສຕາ ໄດ້ຢ່າງເປັນຜົນສຳເຣັດ. ຣັຖບານສະຫະຣັຖ ແລະປະ ຊາຊົນຊາວອະເມຣິກັນ ຖືເອົາໃສ່ໃຈສເມີເຖິງຄວາມໂຫດຮ້າຍຂອງ ຣັຖບານຂອງປາຕິສຕາ, ດັ່ງນັ້ນ ຈຶ່ງເຫັນດີນຳການຢົ້ນຄອງອຳນາດ ຂອງທ່ານຄາສໂຕຣ ໂດຍຖືວ່າ ເປັນໄຊຊະນະທີ່ນຳມາສູ່ຣະບອບປະ ຊາທິປະໄຕ.

ແຕ່ຄວາມເຫັນອົກເຫັນໃຈ ຂອງຊາວອະເມຣິກັນນັ້ນ ໄດ້ຈືດ ຈາງຫາຍໄປຢ່າງກະທັນຫັນ, ເມື່ອນາຍົກຣັຖມົນຕີ ຄາສໂຕຣເລີ່ມມີ ບົດບາດຄືກັນກັບນັກຜະເດັດການຄອມມິວນິສ ເພາະວ່າ ເຂົາບໍ່ຍອມ ໃຫ້ມີການເລືອກຕັ້ງໂດຍເສຣີ ດັ່ງທີ່ເຄີຍໄດ້ໃຫ້ຄຳໝັ້ນສັນຍາໄວ້ກັບ ປະຊາຊົນ. ທ່ານຄາສໂຕຣໄດ້ນຳເອົາພັກພວກຂອງນັກການເມືອງ ທີ່ເຄີຍເປັນສັຕຣູຂອງທ່ານມາກ່ອນໄປຂ້າຖິ້ມ ເພື່ອເປັນການໂຄສະ ນາແທນທີ່ຈະໃຫ້ອຳນາດສານຕັດສິນ, ແລ້ວຕໍ່ນັ້ນມາ ກໍໄດ້ຈັບຜູ້ຄົນທີ່ ວິຈານກ່ຽວກັບການເມືອງ, ຮ່ວມທັງໝູ່ເພື່ອນຂອງເຂົາ ແຕ່ລາວ ກ່ອນ ກໍນຳເອົາໄປຄຸມຂັງໃສ່ຄຸກໄວ້ໜົດຈົນວ່າ ຄຸກຄິວບາເຕັມໄປ

ດ້ວຍນັກໂທດ. ໜັງສືພິມກໍຖືກກວດກາ ຢ່າງເຄັ່ງຄັດ ບໍຣິສັດ ຫລື ຫ້າງຮ້ານຂອງຊາວຕ່າງດ້າວກໍຖືກຣັຖບານຍຶດເອົາເປັນຂອງຣັຖໝົດ ໂດຍບໍ່ໄດ້ໃຊ້ຄ່າເສັຍຫາຍໃຫ້ເລີຍ ແລະມີແຕ່ພວກຄອມມິວນິສເທົ່ານັ້ນ ທີ່ນິຍົມຊົມຊື່ນນຳການກະທຳຂອງເຂົາເຊັ່ນນີ້.

ເມື່ອການຜະດັດການ ພາຍໃນປະເທດຂອງເຂົາແຂງຂັ້ນ, ທ່ານຄາສໂຕຣ໊ຈຶ່ງເລີ້ມປະນາມສະຫະຣັຖ ແລະຊອກຫາຂໍ້ຄວາມຊ່ວຍເຫລືອຈາກກຸ່ມປະເທດຄອມມິວນິສ. ຕໍ່ໜ້າການທ້າທາຍ ເຊັ່ນນີ້, ຣັຖບານຂອງທ່ານໄອເຊັນຮາວເວີ ຈຶ່ງໃຊ້ນະໂຍບາຍແບບການຄອຍຖ່າຍ ຢ່າງອົດທົນ, ແຕ່ໃນຣະດູຮ້ອນຂອງປີ ໑໙໕໐, ນະໂຍບາຍຂອງອະເມຣິກາກໍແຂງກະດ້າງຂັ້ນ ເພາະສະຫະຣັຖວິດໃຫ້ການຊົ້ນຳ້ຕານຈາກຄິວບາ ແລະໄດ້ຊັກຊວນຊາວເອັດປະເທດທີ່ເປັນສະມາຊິກຂອງອົງການຂອງຣັຖອະເມຣິກາໃຫ້ປະນາມພຶດຕິການຂອງຄິວບາ. ແມ່ນວ່າອົງການນີ້ບໍ່ໄດ້ວິພາກວິຈານ ຣະບອບການປົກຄອງຂອງຄາສໂຕຣ ໃນໂອກາດນີ້ກໍຕາມ, ແຕ່ກໍໄດ້ປະນາມ ການແຊກແຊງຂອງຄອມມິວນິສທີ່ເຄື່ອນໄຫວຢູ່ໃນທະວີບອາເມຣິກາ.

ການຊຸມນຸມຣະຫວ່າງຊາດໄດ້ມີຂຶ້ນໃນເວລາຕໍ່ມາ ໃນທ້າຍປີ ໑໙໕໐, ຊຶ່ງສຣຸບຄວາມແລ້ວ ປາກົດວ່າ ມີຄວາມຫວັງຫລາຍຂຶ້ນ, ແຕ່ໃນເວລາດຽວກັນນີ້ ກໍເປັນການຣິບກວນ ເຫດການຂອງໂລກຢູ່ເໝືອນກັນ.

ທ່ານອຢອກ, ກອງປະຊຸມສະມັດຊາໃຫຍ່ ສຫະປະຊາຊາດໄດ້ ຮັບເອົາປະເທດທີ່ໄດ້ຮັບເອກຣາຊໃໝ່ ສິບຫົກປະເທດເຂົ້າເປັນສະ ມາຊິກ. ໃນການກ່າວຄຳປາໃສ ທີ່ສຫະປະຊາຊາດນັ້ນ, ທ່ານໄອ ເຊັນຮາວເວີໄດ້ຂໍຮ້ອງໃຫ້ບັນດາປະເທດອື່ນໆຮ່ວມມືກັນກັບສະຫະຣັຖ ໂດຍເພີ້ມການຊ່ວຍເຫລືອ ໃຫ້ແກ່ປະເທດທີ່ເກີດໃໝ່, ໂດຍສະ ເພາະແມ່ນປະເທດໃໝ່ໃນແຖບອາຟຣິກກາ ແລະທ່ານຍັງໄດ້ໃຫ້ຄຳ ໝັ້ນສັນຍາວ່າ ສະຫະຣັຖຈະດຳເນີນໂຄງການ ຫາຊ່ອງທາງໃຫ້ມີ ການລົດກຳລັງຮົບໂດຍແນໃສ່ຣະບຽບໃຫ້ມີການກວດກາແລະຄວບຄຸມ

ກ່ອນສມັຍປະຊຸມໃຫຍ່ຂອງສຫະປະຊາຊາດນັ້ນ ຊາວໂລກມີ ຄວາມຫ່ວງໃຍເປັນທີ່ສຸດ ກ່ຽວກັບການພົ້ມພຸນອາວຸດ, ແລະການ ເອົາຊນະທັນຊາດໂດຍມະນຸດອາວະກາດໄດ້ກໍ່ນັບວ່າເປັນຄວາມກ້າວ ໜ້າທີ່ໜ້າພາກພູມໃຈທີ່ສຸດ, ຫາກແມ່ນເຫດການນີ້ເກີດຂຶ້ນໃນຍາມ ສງົບ. ການທີ່ໂຊວຽດສົ່ງດາວທຽມອາວະກາດຄັ້ງທຳອິດໃນເດືອນ ຕຸລາປີ ໑໙໕໗, ແລະການສົ່ງດາວທຽມອາວະກາດ ຄັ້ງທຳອິດຂອງ ອະເມຣິກັນ ໃນປີ ໑໙໕໘ ນັ້ນ ພ້ອມທັງຫລາຍໆເທື່ອອີກຕໍ່ມາໄດ້ສະ ແດງໃຫ້ໂລກເຫັນແລ້ວວ່າ ບັດນີ້ປະເທດທັງສອງ ມີຈຣວດທີ່ມີກຳລັງ ແຮງພໍສົມຄວນ ພໍທີ່ຈະຍິງລູກຣະເບີດປຣະມະນູ ແລະ ໄຮໂດຣເຈັນ ໄປໃສ່ ໃຈກາງເມືອງຫລວງຂອງປະເທດທີ່ເປັນສັຕຣູ ຍາມໃດກໍໄດ້ ໂດຍບໍ່ຈຳກັດຣະຍະໄກ້ຫລືໃກ້.

ການຂາດຣະບຽບການກວດຄົ້ນອາວຸດນີ້, ມີອັນຕລາຍຢູ່ສເມີ ຈະດ້ວຍອຸປຕິເຫດ ຫລືດ້ວຍການຈົງໃຈກໍຕາມ ສົງຄາມອາດເກີດຂຶ້ນ ໄດ້ທຸກໆເມື່ອ ແລະຈະລ້າງຜານຊີວິດຂອງຄົນຫລາຍລ້ານຄົນ ໃນບໍ່ພໍ ເທົ່າໃດນາທີ. ດັ່ງນັ້ນ, ມະຕິຂອງໂລກໄດ້ສັ່ນສະເທືອນ ແລະບໍ່ພໍ ໃຈອີກຄັ້ງນຶ່ງ, ເມື່ອນາຍົກຣັຖມົນຕຣີ ຄຣູສເຊຟ ປະກາດຢູ່ທີ່ປະຊຸມ ໃຫຍ່ສຫະປະຊາຊາດວ່າ ສຫະພາບໂຊວຽດຈະບໍ່ຍອມຮັບເອົາຂໍ້ສເນີ ທີ່ໃຫ້ມີການກວດກາແລະຄວບຄຸມ ໃນການຕົກລົງວ່າດ້ວຍການລົດກຳ ລັງຣົບ. ຜູ້ນຳຝ່າຍສຫະພາບໂຊວຽດ ຮູ້ດີວ່າ ການລົດກຳລັງຣົບ ປາສຈາກການກວດກາ ແລະຄວບຄຸມນັ້ນເປັນສິ່ງທີ່ປະເທດທີ່ເປັນປະ ຊາທິປະໄຕຍອມຮັບເອົາບໍ່ໄດ້, ດ້ວຍວ່າ ມັນຈະເປັນຊ່ອງທາງ ສົ່ງ ເສີມໃຫ້ສຫະພາບໂຊວຽດລະເມີດຂໍ້ຕົກລົງວ່າດ້ວຍການລົດກຳລັງຣົບ ຍາມໃດກໍໄດ້ ໂດຍບໍ່ມີໃຜຮູ້ເຫັນນຳ, ແຕ່ວ່າ ການລະເມີດ ທີ່ຢູ່ໃນ ຂອບເຂດຂອງຣະບອບປະຊາທິປະໄຕນັ້ນມີຄົນຮູ້ເຫັນນຳຫລາຍ.

## ການປະຕິບັດງານຂອງທ່ານ ເຄນເນດີ ກ່ຽວກັບ ກິຈການພາຍໃນປະເທດ

ຈາກພື້ນຖານ ຂອງຄວາມຕົ້ງຄຽດ ຂອງໂລກນີ້, ປະຊາຊົນ ຊາວອະເມຣິກັນໄດ້ເລືອກເອົາປະທານາທິບໍດີຄົນໃໝ່ໃນເດືອນພຶສຈິ ກາ ປີ ຈພຝ໐. ອະດີດສະມາຊິກ ສະພາສູງ ຄື ທ່ານ ຈອນແອຟ

ເຄມເມດີ ໄດ້ຮັບໄຊຊະນະໃນການເລືອກຕັ້ງຄາວນີ້ ດ້ວຍຈຳນວນຄະ
ແນນສຽງລົ້ນກັນພຽງເລັກນ້ອຍ ກັບຜູ້ແຂ່ງຂັນ ຄືທ່ານ ຣິຊາດ ເອມ
ນິກສັນ. ສອງທ່ານຜູ້ປາຖນາຢາກເປັນປະທານາທິບໍດີ ໄດ້ຈັດໃຫ້ມີ
ການໂຕ້ຖຽງກັນ ໂດຍທາງໂທຣະທັດ. ທ່ານນິກສັນ ໄດ້ເນັ້ນເຖິງ
ຄວາມສຳຄັນທີ່ທ່ານໄດ້ມີປະສົບການເຖິງແປດປີໃນສມັຍການປົກຄອງ
ຂອງຣັຖບານ ໄອເຊັນຮາວເວີ ແລະໄດ້ເຕືອນສະຕິ ຜູ້ປ່ອນບັດທັງ
ຫລາຍເຖິງຄວາມສງົບສຸກ ແລະຄວາມມັ່ງມີ ທີ່ຝູ້ນຳຝ່າຍຣີພັບລີແຄນ
ໄດ້ບັນລຸຜົນສຳເຣັດມາແລ້ວ ສ່ວນທ່ານເຄມເມດີໄດ້ຂໍຮ້ອງໃຫ້ຜູ້ປ່ອນ
ບັດຈົ່ງເລືອກເອົາຜູ້ນຳ ທີ່ຈະພາປະເທດຊາດກ້າວໄປສູ່ຄວາມຈະເຣີນ
ຮຸ່ງເຮືອງໃນດ້ານເສຖກິດ.

ໃນການກ່າວຄຳປາໃສ ໃນໂອກາດສາບານຕົວ ເຂົ້າຮັບຕຳ
ແໜ່ງປະທານາທິບໍດີນັ້ນ, ປະທານາທິບໍດີເຄມເມດີ ຊຶ່ງນັບວ່າເປັນ
ປະທານາທິບໍດີທີ່ມີອາຍຸນ້ອຍກວ່າໝູ່ໃນບັນດາປະທານາທິບໍດີທັງໝົດ
ຂອງສະຫະຣັຖ, ໄດ້ກ່າວຢ່າງຫ້າວຫານ ເຕັມໄປດ້ວຍກຳລັງວັງຊາ
ຂອງຄົນໜຸ່ມນ້ອຍ ຊຶ່ງເປັນສັນຍາລັກ ຂອງການເລີ້ມຕົ້ນໃໝ່ ຂອງ
ການບໍຣິຫານປະເທດຂອງທ່ານວ່າ "ແສງສວ່າງໄດ້ນຳພາພວກເຮົາ
ໄປສູ່ຍຸກໃໝ່ຂອງຊາວອະເມຣິກັນ". ນີ້ເປັນຄຳເວົ້າຕອນນຶ່ງຂອງ
ທ່ານເຄມເມດີ, ແລະໃນຄນະຣັຖບານຂອງທ່ານເຄມເມດີນັ້ນ ມີແຕ່
ກຸ່ມຜູ້ໜຸ່ມນ້ອຍທີ່ກຳໜ້າທີ່ສູງທັງນັ້ນ ຊຶ່ງນັບວ່າເປັນປະວັດການຂອງ

ປະເທດກໍ່ວ່າໄດ້ ແລະຄນະຫນຸ່ມນ້ອຍຊຸດນີ້ນັບວ່າເດັ່ນທີ່ສຸດ ໃນການ
ເປີດເຜີຍ ຄວາມຮູ້ສຶກນຶກຄິດໃຫມ່ ແລະພ້ອມສເມີທີ່ຈະປະຕິບັດການ
ດ້ວຍຄວາມເຂັ້ມແຂງ.

ການບໍຣິຫານປະເທດຂອງທ່ານຄນເມດີນັ້ນ ປາກົດວ່າ ໄດ້
ພາໃຫ້ເສຖກິດຂອງປະເທດທ່ວໆໄປດີຂຶ້ນ ແລະເງິນເດືອນຂອງພນັກ
ງານຜແນກອຸດສາຫະກັມກໍໄດ້ສູງຂຶ້ນປະມານອາທິດນຶ່ງ ໙໕ ໂດລາ.
ແຕ່ໃນຂນະດຽວກັນນັ້ນ, ຄົນທ່ວໄປກໍມີຫລາຍຂຶ້ນຄືກັນ ໂດຍສະ
ເພາະໃນເຂດບ່ອນທ່ີມີການຂຸດບ່ໍ່ຖ່ານຫີນຢູ່ທາງຣັຖ ເພນຊິລເວເນັຍ
ແລະຣັຖເວີຈີເນັຍ ທາງພາກຕະເວັນຕົກ, ຊຶ່ງສາເຫດຂອງການ
ວ່າງງານນ້ີ ເນ່ືອງມາຈາກການແຂ່ງຂັນໃນຜົນຜລິດໃຫມ່ ແລະການ
ປ່ຽນແປງແບບແຜນຂອງການຢູ່ກິນຂອງຊາວອະເມຣິກັນ. ເພ່ືອແກ້
ໄຂສະຖານະການນ້ີ, ຣັຖບານໃຫມ່ ຈຳຕ້ອງຟ້າວໃຫ້ມີການອອກກົດ
ໝາຍກ່ຽວກັບການພັທນາເຂດແດນຊຶ່ງກົດໝາຍດັ່ງກ່າວນ້ີຈະໃຫ້ອຳ
ນາດແກ່ຣັຖບານກາງໄດ້ຊ່ວຍໃຫ້ທ້ອງຖ່ິນ ທ່ີປະສົບກັບບັນຫາຄັບແຄບ
ໃຈນ້ີໄດ້ເລ່ີມຈັດຕ້ັງອຸດສາຫະກັມໃຫມ່ຂຶ້ນ ແລະໃຫ້ຄວາມສດວ່ກແກ່
ສາທາຣະນະຊົນ. ກົດໝາຍອີກແນວນຶ່ງໄດ້ອະນຸມັດໃຫ້ຣັຖບານໄດ້
ຈັດໃຫ້ມີການອົບຮົມວິຊາຊ່ພ ໃຫ້ແກ່ພວກທ່ີວ່າງງານ ໂດຍຈ່າຍເງິນ
ເດືອນໃຫ້ເຂົາເຈ້ົາ ດ້ວຍວ່າ ພວກນ້ີຂາດການອົບຮົມແລະຄວາມຊຳ
ນິຊຳນານທ່ີທາງອຸດສາຫະກັມຕ້ອງການ. ນອກຈາກນ້ີ, ຣັຖບານ

ຍັງໄດ້ຮັບອະນຸຍາດ ໃຫ້ຂຍາຍການປະກັນໄພ ໃຫ້ແກ່ຜູ້ວ່າງງານອີກ ດ້ວຍ, ຄືນອກຈາກໄດ້ຮັບເງີນເດືອນ ມາດຕະຖານ ທີ່ເບີກກັນປີນຶ່ງ ຊາວຫົກອາທິດແລ້ວ ທາງອົງການປະກັນໄພ ຍັງໄດ້ໃຫ້ເງີນເພີ້ມອີກ ສິບສາມອາທິດ ນອກເຫນືອໄປຈາກເງີນເດືອນ.

ມີການອອກກົດຫມາຍອື່ນໆອີກໄດ້ແນໃສ່ການປັບປຸງການເປັນ ຢູ່ຂອງຊາວອະເມຣິກັນທົ່ວໆໄປ ແລະຮະບຽບການໃຫ້ຄວາມປອດໄພ ແກ່ສັງຄົມໄດ້ຂຍາຍໃຫ້ກວ້າງຂວາງຂຶ້ນ ເພື່ອໃຫ້ບຸກຄົນໄດ້ອອກກິນ ເບັ້ຍບຳນານຕັ້ງແຕ່ອາຍຸ ຝ6 ປີຂຶ້ນໄປ ແທນທີ່ຈະຖ້າຮອດອາຍຸ ຝ5 ປີ. ອັດຕຣາຄ່າແຮງງານຢ່າງຕ່ຳ ໄດ້ເພີ້ມຂຶ້ນ, ຈາກຊົ່ວໂມງນຶ່ງ ຕໍ່ນຶ່ງໂດລາ ມາເປັນຊົ່ວໂມງລະ ๑ ໂດລາ 65 ເຊັນ ແລະສະພາ ກົງແກຣສກໍໄດ້ມີໂຄງການອັນກວ້າງຂວາງສຳລັບຊ່ວຍເຫລືອຄົນເຖົ້າ ແກ່ ແລະຄອບຄົວທີ່ມີລາຍໄດ້ຕ່ຳ ຫລືປານກາງໃຫ້ໄດ້ມີເຮືອນຢູ່ຕາມ ຣາຄາທີ່ເຫັນວ່າສົມຄວນ.

## ຊາວອະເມຣິກັນຜິວດຳກ້າວໄປສູ່ຄວາມກ້າວຫນ້າ.

ຕໍ່ມາ ກໍໄດ້ມີບາດກ້າວອັນສຳຄັນ ທີ່ຈະນຳໄປສູ່ການກຳຈັດ ການແບ່ງແຍກຜິວ ຊຶ່ງຍັງມີຢູ່ເລື້ອຍມາ ໃນຣະຫວ່າງປີ ຈຈຝ๑ ແລະປີ ຈຈຝ5, ໂຮງຮຽນຢູ່ຕາມເມືອງຕ່າງໆ ມ້ຝ5 ບ່ອນ ທາງ ພາກໃຕ້ໄດ້ຮັບເອົາລູກສິດຊາວອະເມຣິກັນຜິວດຳເຂົ້າຮຽນນຳ ຊຶ່ງ

ແຕ່ກ່ອນໆໂຮງຮຽນດັ່ງກ່າວນີ້ ໄດ້ເອົາໄວ້ໃຫ້ແຕ່ເດັກນ້ອຍ ຊາວຜິວ ຂາວຮຽນເທົ່ານັ້ນ, ແລະຕໍ່ມານັບຕັ້ງແຕ່ສານສູງໄດ້ອອກຄຳສັ່ງໃນປີ ໑໙໕໔ ມີໂຮງຮຽນອີກຈຳນວນ ໑.໑໔໑ ບ່ອນ ຢູ່ຕາມເມືອງຕ່າງໆ ໄດ້ຮັບເອົາເດັກນ້ອຍຊາວອະເມຣິກັນຜິວດຳເຂົ້າຮຽນຢູ່ໃນໂຮງຮຽນ ການຮຽນຮ່ວມກັນຣະຫວ່າງນັກຮຽນຊາວຜິວດຳແລະຜິວຂາວຕາມວິທ ຍາລັຍຕ່າງໆນັ້ນ ໄດ້ເລີ້ມຂຶ້ນ ໃນເດືອນກຸມພາປີ ໑໙໖໐ ຊຶ່ງໄດ້ ພາໃຫ້ການແບ່ງແຍກຜິວ ແລະຊັ້ນວັນນະຕາມຮ້ານອາຫານແລະບ່ອນ ຂາຍອາຫານທ່ຽງສິ້ນສຸດລົງຕາມຫມູ່ບ້ານ ๕๐๐ ກວ່າບ່ອນ. ຕໍ່ມາ ໃນປີ ໑໙໖໑, ການນັ່ງຣົຖໄປມາຮ່ວມກັນ ກໍໄດ້ເລີ້ມມີຂຶ້ນ ໂດຍບໍ່ມີ ການຕໍ່ວ່າທັກທ້ວງໃດໆກ່ຽວກັບເສຣີພາບໃນການນັ່ງຣົຖໄປມາ. ໃນ ເດືອນພຶສຈິກາປີ ໑໙໖໑ ຄນະກັມມະການໆຄ້ານຣະຫວ່າງຣັຖໄດ້ອອກ ຄຳສັ່ງຫ້ານບໍ່ໃຫ້ມີການແບ່ງແຍກ ການເດີນທາງໄປມາໃນຣະຫວ່າງ ຣັຖ. ໃນປີຕໍ່ມາ, ສານສູງຂອງສະຫະຣັຖໄດ້ສນັບສນຸນຄຳສັ່ງຫ້ານ ດັ່ງກ່າວນີ້ໂດຍຖແລງວ່າ "ພວກເຮົາໄດ້ແກ້ໄຂບັນຫາໃຫ້ລຸລ່ວງໄປ ແລ້ວ ທີ່ວ່າບໍ່ໃຫ້ຣັຖໃດບັງຄັບໃຫ້ມີການແບ່ງແຍກຜິວກ່ຽວກັບການໃຊ້ ຍານພາຫະນະໄປມາຣະຫວ່າງຣັຖແລະພາຍໃນຣັຖ".

ທີ່ເວົ້ານັ້ນວ່າ, "ການປະຕິວັດສິດທິຂອງພົລເມືອງ" ໃນປີ ໑໙໖໓ ນັ້ນ ເປັນປີທີ່ໜ້າຕື່ນເຕັ້ນທີ່ສຸດ. ເຫດການດັ່ງກ່າວນີ້ ໄດ້ ເລີ້ມຂຶ້ນໂດຍມີປະຊາຊົນຊາວຜິວດຳຈຳນວນນຶ່ງ ເດີນຂບວນປະທ້ວງ

ການແບ່ງແຍກຜິວ ທີ່ຣັຖທາງພາກໃຕ້ສຸດ, ເຊັ່ນຢູ່ເມືອງເບີມິງແຮມ ໃນຣັຖອາລາບາມາ. ຕໍ່ມັ້ນມາບໍ່ພໍເທົ່າໃດ, ປະທານາທິບໍດີເຄນເນດີໄດ້ກ່າວຄຳປາໄສໂດຍທາງໂທຣະທັດ ແລະໄດ້ບອກໃຫ້ຄົນໃນຊາດໃຫ້ສຳນຶກເຖິງຄວາມຈຳເປັນ ໃນດ້ານສິລທັມເພື່ອໃຫ້ສິດທິເທົ່າທຽມກັນຢ່າງຄົບຖ້ວນ ແກ່ຊາວອະເມຣິກັນ ຜິວດຳ. ຈາກນັ້ນມາ, ທ່ານເຄນເນດີໄດ້ສເນີຕໍ່ສະພາກົງແກຣສໃຫ້ອອກກົດໝາຍ ເພື່ອກຳຈັດບໍ່ໃຫ້ມີການແບ່ງແຍກໃນການປ່ອນບັດເລືອກຕັ້ງ, ໃນການສຶກສາ ໃນການເຮັດວຽກການ, ແລະທີ່ຢູ່ອາໄສ. ໃນວັນທີ ๔๒ ເດືອນກໍ ຣະກະດາ, ຊາວອະເມຣິກັນຜິວດຳ ແລະຜິວຂາວປະມານສອງແສນ ຄົນໄດ້ເດີນສວນສນາມໄປຍັງອະນຸສາວະຣີຍ໌ຂອງທ່ານລິງຄອນ ທີ່ກຽງວໍ ຊິງຕັນ ຊຶ່ງການເດີນຂະບວນຄັ້ງນີ້ເປັນທີ່ຈັບໃຈທີ່ສຸດຂອງຊາດ ແລະ ໄດ້ຮຽກຮ້ອງຄວາມສົນໃຈຂອງປະຊາຊົນໃຫ້ຕໍ່ສູ້ ເພື່ອສິດທິເທົ່າທຽມ ກັນຂອງພົລເມືອງ. ເມື່ອສົກປີການທີ່ເປີດພາກຮຽນໃນຣະດູໃບໄມ້ ລົ່ມທີ່ຕໍ່ມານັ້ນ, ປາກົດວ່າເປັນເທື່ອທຳອິດໃນປະວັດສາດອະເມຣິກັນ ທີ່ນັກຮຽນຊາວອະເມຣິກັນຜິວດຳໄດ້ເຂົ້າຮຽນ ໃນມະຫາວິທຍາ ໄລ ຮ່ວມກັບນັກຮຽນຊາວຜິວຂາວໃນທຸກໆຣັຖ.

ການບໍຣິຫານປະເທດ ຂອງຣັຖບານເຄນເນດີ, ໄດ້ນຳບາດ ກ້າວ ໄປສູ່ການໃຫ້ສິດທິເທົ່າທຽມກັນ ກັບຄົນທຸກຜິວໂດຍແຕ່ງຕັ້ງໃຫ້ ຊາວອະເມຣິກັນຜິວດຳຈຳນວນຫລາຍຄົນ ເຂົ້າຮັບຕຳແໜ່ງສຳຄັນໆ

ໃນວົງການຣັຖບານ. ທ່ານໂຣເບີດຊີເວເວີ ໄດ້ເຂົ້າຮັບຕຳແໜ່ງ
ເປັນຫົວໜ້າຝ່າຍກຳກັບເຮືອນຫລວງ ແລະການເງິນ, ທ່ານເທີກູດ
ມາຣ໌ຊຸເລ, ຊຶ່ງແຕ່ກ່ອນ ເປັນຫົວໜ້າສະມາຄົມແຫ່ງຊາດ ສຳລັບ
ຄວາມກ້າວໜ້າຂອງຊາວຜິວດຳ ກໍໄດ້ຖືກແຕ່ງຕັ້ງໃຫ້ເປັນຕຸລາການ
ສານ ມີຊາວອະເມຣິກັນຜິວດຳອີກຈຳນວນຫລາຍຄົນໄດ້ຮັບຕຳແໜ່ງ
ສຳຄັນອື່ນໆອີກ ນັບຕັ້ງແຕ່ເປັນຜູ້ຊ່ວຍຂອງປະທານາທິບໍດີໄປຈົນສິ້ນ
ເອກອັຄຣາຊທູດ. ໃນປີ ໑໙໕໔, ມີຊາວອະເມຣິກັນຜິວດຳ ທີ່ໄດ້
ສຶກສາຕໍ່ໃນສະຖາບັນການສຶກສາສູງນັ້ນມີຈຳນວນເຖິງ ๔๘๐,๐๐๐
ຄົນ, ຊຶ່ງເຣື່ອງນີ້ເປັນແນວທາງນຳພາໃຫ້ເຮົາເຊື່ອວ່າ ການກ້າວ
ໄປສູ່ການມີອາຊີບດີ ແລະມີບົດບາດສຳຄັນ ຂອງຊາວຜິວດຳໃນວົງ
ການຣັຖບານນັ້ນຈະມີເພີ່ມຂຶ້ນອີກ.

## <u>ສະຫະຣັຖກະຕຸ້ນເຕືອນສັນພັນທະມິດໃຫ້ດຳເນີນວຽກງານ</u>
## <u>ເພື່ອຄວາມກ້າວໜ້າ</u>

ໃນດ້ານກິຈການຕ່າງປະເທດແລ້ວ, ປະທານາທິບໍດີເຄນເນ
ດີໄດ້ພົບກັບສະຖານະການທີ່ຂົ່ມຂູ່ພໍສົມຄວນ ເຊັ່ນໃນຄິວບາ, ໃນເວ
ເຊັຍອາຄະເນ, ໃນເບີລິນ ແລະໃນບ່ອນອື່ນໆອີກ. ທ່ານໄດ້ຖແລງ
ວ່າ ການບໍຣິຫານປະເທດຂອງຣັຖບານຂອງທ່ານໄດ້ພົບກັບບັນຫາອັນ
ກ້ວາງໃຫຍ່ຂອງນາໆຊາດ ສຳລັບສຳພັນທະມິດ ຜູ້ທີ່ພວກເຮົາໄດ້ນຳ

ເອົາວັທນະທັມເດົ້າເດີມຂອງເຂົາເຈົ້າມາໃຊ້ນັ້ນ, ພວກເຮົາຂໍຮ້ອງ
ໃຫ້ພວກເຮົາມີຄວາມຈົງຮັກພັກດີ ແລະຊື່ສັດຕໍ່ກັນ ເໝືອນເພື່ອນແທ້
ສຳລັບຣັຖໃຫມ່ທີ່ເຮົາຍິນດີຕ້ອນຮັບເຂົ້າເປັນຣັຖເສຣີນັ້ນ, ເຮົາປະຕິ
ຍານວ່າ ການປົກຄອງແບບເມືອງຂຶ້ນນັ້ນ ຍັງບໍ່ທັນຜ່ານໄປເທື່ອແລະ
ພຽງແຕ່ທົດແທນດ້ວຍການປົກຄອງແບບກົດຂີ່ຂົ່ມເຫັງເທົ່ານັ້ນ, ເຮົາ
ບໍ່ຄວນຄາດຄິດໄວ້ວ່າ ໃຫ້ເຂົາເຈົ້າສນັບສນູນທັສນະ ແລະຄວາມນຶກ
ຄິດຂອງເຮົາໃນທຸກດ້ານ, ແຕ່ເຮົາພຽງຫວັງວ່າ ໃຫ້ເຂົາເຈົ້າ
ສນັບສນູນການມີສິດເສຣີພາບ ຂອງເຂົາເຈົ້າເອັງນັ້ນກໍພໍ. ສຳລັບ
ປະຊາຊົນຜູ້ທີ່ຢູ່ຕຸບຕາມຫມູ້ບ້ານຕ່າງໆ ຢູ່ທົ່ວມຸມໂລກ ທີ່ກຳລັງຕໍ່ສູ້ກັບ
ຄວາມອຶດຢາກນັ້ນ, ເຮົາຮັບຮອງວ່າຈະພຍາຍາມທຸກວິທີທາງ ເພື່ອ
ຊ່ວຍເຫລືອເຂົາເຈົ້າ ໃຫ້ສາມາດຊ່ວຍເຂົາເຈົ້າເອັງ... ສຳລັບ
ປະເທດທີ່ຢູ່ຂ້າງຄຽງເຮົານີ້ ປຽບສະເໝືອນປະເທດອ້າຍ ເມືອງ
ນ້ອງຂອງເຮົາກໍວ່າໄດ້ ຊຶ່ງຢູ່ທາງເຂດຊາຍແດນທາງພາກໃຕ້ຂອງ
ເຮົານີ້, ພວກເຮົາຈະຊ່ວຍພິເສດເພື່ອໃຫ້ພັນທະມິດຂອງເຮົາພັທນາ
ເພື່ອຄວາມກ້າວໜ້າ ແລະເຮົາຈະຊ່ວຍປະຊາຊົນ ແລະຣັຖບານທີ່
ເປັນເສຣີໃຫ້ພົ້ນຈາກຄວາມທຸກຍາກ ແລະສຳລັບການທ້ອນໂຮມຂອງ
ປະເທດທີ່ເປັນອະທິປະໄຕຂອງໂລກ ຄືສຫະປະຊາຊາດ, ຊຶ່ງເປັນ
ຄວາມຫວັງອັນສຸດທ້າຍຂອງເຮົາໃນສມັຍທີ່ເຄື່ອງມືຂອງສົງຄາມກ້າວ
ໄປໄວກວ່າເຄື່ອງມື ຂອງຄວາມສງົບນັ້ນ, ພວກເຮົາຂໍຝາກຄວາມ

ຫວັງແລະສນັບສນູນອົງການນີ້ຕໍ່ໄປ... ໃນທີ່ສຸດ, ສາໍລັບປະເທດ ທີ່ຕັ້ງຕົນເປັນປໍຣະປັກຕໍ່ເຣົານັ້ນ, ພວກເຣົາບໍ່ພຽງແຕ້ອອນວອນເທົ່ານັ້ນ, ແຕ່ເປັນຄາໍສັ່ງໃຫ້ປະຕິບັດ ຄື ໃຫ້ທັງສອງຝ່າຍ ເລີ້ມຊອກຫາ ຊ່ອງທາງ ທີ່ຈະພາໄປສູ່ສັນຕິພາບ, ກ່ອນອິດທິພົນມືດ ຂອງການທາໍ ລາຍຊີວິດຂອງມວນມະນຸດຈະຖືກປ່ອຍອອກໂດຍທາງວິທຍາສາດ ຊຶ່ງ ຈະເປັນຊ່ອງທາງຂ້າໂຕເອງເທົ່ານັ້ນ... ຂໍໃຫ້ພວກເຣົາ ຢ່າໄດ້ ເຈຣະຈາດ້ວຍຄວາມຢ້ານກົວ, ແຕ່ຈົ່ງຢ່າຢ້ານການເຈຣະຈາທີ່ຈະມີ ຂຶ້ນ.

ກ່ອນຫນ້າການເຂົ້າຮັບຕາໍແຫນ່ງຂອງປະທານາທິບໍດີເຄນເນ ດີພຽງສາມອາທິດ ເທົ່ານັ້ນ, ສະຫະຣັຖໄດ້ຕັດສາຍສັມພັນທາງການ ທູດກັບປະເທດຄິວບາ, ທັງນີ້ ກໍເພື່ອເປັນການຕອບໂຕ້ ທີ່ຄິວບາຣັຖ ບານຂອງຄາສໂຕຣ ໄດ້ມົ່ນປມາດສະຫະຣັຖ ໂດຍກໍ່ກວນເຈົ້າຫນ້າທີ່ ສະຖານທູດອະເມຣິກັນ, ແລະການທີ່ຄິວບາ ປ່ອຍໃຫ້ຄອມມິວນິສໃຊ້ ປະເທດຂອງຕົນ ເປັນບ່ອນທີ່ຈະແຜ່ຜາຍລັດທິຄອມມິວນິສ ໄປຍັງປະ ເທດອື່ນໆໃນອະເມຣິກາລາຕິນ. ຕໍ່ມາ ໃນປີດຽວກັນນັ້ນ, ນາຍົກ ຣັຖມົນຕີຄາສໂຕຣ ໄດ້ຍອມຣັບໃນຂນະທີ່ກ່າວຄາໍປາໃສ ຕໍ່ປະຊາຊົນ ຊາວຄິວບາຢູ່ນັ້ນວ່າ ເຂົາເປັນຄອມມິວນິສມາໄດ້ຫລາຍປີແລ້ວ ໂດຍ ບໍ່ໄດ້ເປີດເຜີຍໃຫ້ໃຜຮູ້.

ເມື່ອການຜເດັດການຂອງຄາສໂຕຣ ນັບມື້ນັບຂຶ້ນຂ້ຽວເຂົ້າ,

ຊາວຄິວບາຫລາຍພັນຄົນ ໄດ້ພາກັນຫລົບຫນີ ອອກຈາກປະເທດຂອງ ເຂົາເຈົ້າ ແລະມີຫລາຍຄົນ ໃນຈຳນວນນີ້ໄດ້ເຂົ້າມາອາໃສຢູ່ໃນສະ ຫະຣັຖ. ໃນເດືອນເມສາປີ ໑໙໙໑, ພວກອົພຍົກຊາວຄິວບາ ຈຳ ນວນນຶ່ງ ໄດ້ລັກລອບເຂົ້າໄປໃນຄິວບາ ແລະພຍາຍາມຈະໂຄ່ນລົ້ມ ຣັຖບານຂອງຄາສໂຕຣ, ແຕ່ບໍ່ເປັນຜົນສຳເຣັດ ແມ່ນວ່າຊາວອະເມ ຣິກັນໄດ້ຊ່ວຍອົບຣົມ ແລະໃຫ້ການຊ່ວຍເຫລືອເທົ່າທີ່ຄວນແກ່ຂະບວນ ການກູ້ຊາດນັ້ກໍຈິງ, ແຕ່ການກະທຳທັງຫມົດນັ້ບໍ່ມີທະຫານອະເມຣິກັນ ເຂົ້າໄປມີບົດບາດໃນເຫດການນັ້ເລີຍ. ຕໍ່ມາ ຊາວໂລກໄດ້ພາກັນ ປລາດໃຈ ເມື່ອນາຍົກຄາສໂຕຣຮຽກຮ້ອງຄ່າໄຖ່ ຫລາຍລ້ານໂດລາ ເພື່ອເປັນການຕອບແທນທີ່ສະຫະຣັຖໄດ້ຊ່ວຍປົດປ່ອຍຊາວຄິວບາບາງ ຈຳພວກທີ່ເປັນປະຊາທິປະໄຕ.

ໃນເດືອນຕຸລາ ປີ ໑໙໘໘, ຊາວໂລກ ຍິ່ງປລາດໃຈຫລາຍ ກວ່ານັ້ອີກ, ເມື່ອເຂົາເຈົ້າໄດ້ຊາບວ່າຣັຖບານຂອງຄາສໂຕຣໄດ້ອະ ນຸຍາດໃຫ້ສຫະພາບໂຊວຽດໄປຕັ້ງຈຣວດໃສ່ດິນແດນຂອງຄິວບາໂດຍ ທາງລັບໆ ແລະຖ່ານທັບຈຣວດດັ່ງກ່າວ ແມ່ນແຕ່ພວກນາຍຊ່າງຣັສ ເຊັຍທັງນັ້ນເປັນຜູ້ຄວບຄຸມ, ຊຶ່ງເຂົາເຈົ້າ ສາມາດຍິງຈຣວດໄປໃສ່ ຫົວເມືອງໃຫຍ່ໆຢູ່ອະເມຣິກາພາກເຫນືອ ແລະອະເມຣິກາໃຕ້ໄດ້ທຸກ ເວລາ ດັ່ງນັ້ນ ສະຫະຣັຖຈຶ່ງໄດ້ຮຽກຮ້ອງ ໃຫ້ໂຊວຽດຖອນຖ່ານທັບ ຈຣວດນັ້ອອກຈາກດິນແດນຄິວບາຢ່າງຣີບດ່ວນແລະໄດ້ປະກາດບ່ໍ້ໃຫ້ມີ

ການຍົນສົ່ງອຸປກອນ ການທະຫານໄປຍັງຄິວບາ. ໂດຍການລົງຄະ
ແນນສຽງຊາວຕໍ່ສຸນ ໝາຍຄວາມວ່າ ບໍ່ມີຜູ້ຄັດຄ້ານ, ອົງການຂອງ
ສາທາຣະນະຣັຖອະເມຣິກັນໄດ້ເຫັນດີຢາກໃຫ້ປະເທດ ທີ່ເປັນສະມາ
ຊິກທັງໝົດນີ້ເຮັດທຸກວິທີທາງ ເພື່ອສະກັດກັ້ນການຫລັ່ງໄຫລຂອງອາ
ວຸດໂຊວຽດເຂົ້າໄປຍັງຄິວບາ ແລະເມື່ອການກະທຳຂອງຕົນ ຖືກຄັດ
ຄ້ານເຊັ່ນນີ້, ສຫະພາບໂຊວຽດ ຈຶ່ງຍອມຖອນຖານທັບແລະເອົາໃສ່
ກຳປັ່ນສົ່ງກັບຄືນເມືອຣັສເຊັຍ ໂດຍການຄວບຄຸມ ຂອງສຫະປະຊາ
ຊາດ.

ໃນດ້ານເສຖກິດແລ້ວ, ຄວາມສັມພັນຂອງສະຫະຣັຖແລະປະ
ເທດເພື່ອນບ້ານໃນແຖວອະເມຣິກາໃຕ້ນັ້ນດີຂຶ້ນເປັນລຳດັບ ແລະໃນ
ເດືອນມີນາ ປີ ໑໙໕໑, ປະທານາທິບໍດີເຄນເນດີໄດ້ສເນີໂຄງການ
ພັທນາປະເທດພັນທະມິດ, ຊຶ່ງສະຫະຣັຖພ້ອມດ້ວຍປະເທດເສຣີອື່ນໆ
ຮ່ວມທັງອົງການນາໆຊາດ ແລະອົງການທຶນເອກຊົນຈະອະນຸມັດເງິນ
ຈຳນວນ ๔๐,๐๐๐ ລ້ານໂດລາ ໃຫ້ລາຕິນອະເມຣິກາ ໄດ້ຢືມເອົາ
ໄປເປັນທຶນສ້າງສາພັທນາເສຖກິດ ແລະການຄອງຊີບໃນຣະຍະສິບປີ
ຕໍ່ມາ ໃນເດືອນກໍຣະກະດາ, ຍັນດາປະເທດຕ່າງໆສິບກ້ຳປະເທດ
ໃນອະເມຣິກາໃຕ້, ໄດ້ເຫັນດີນຳສັນຍາເຊັ່ນຂອງພັນທະມິດ ແລະ
ໄດ້ພ້ອມກັນໃຫ້ຄຳໝັ້ນສັນຍາວ່າ ຈະໄປສ້າງສາຄືນ ແລະດັດແປງກົດ
ໝາຍວ່າດ້ວຍການເກັບພາສີລາຍໄດ້ໃໝ່, ເພື່ອໃຫ້ໝົດທຸກຄົນໄດ້

ຮັບຜິນປະໂຍດຈາກເງິນຫຶນທີ່ກູ້ຢືມຈາກພັນທະມິດຄັ້ງນັ້ ໂດຍທົ່ວເຖິງ ກັນ. ເມື່ອທ້າຍປີ ໑໙໔໑, ປະທານາທິບໍດີເຄນເນດີ ແລະພັນຣະ ຍາຂອງທ່ານໄດ້ເຫັນການດຳເນີນງານຂອງໂຄງການນີ້, ເມື່ອທ່ານ ທັງສອງໄປຢ້ຽມຢາມປະເທດ ເວນີຊຸເອລລາ · ແລະໂຄໂລມເບັຍ, ຊຶ່ງສອງປະເທດນີ້ເປັນສ່ວນນຶ່ງຂອງປະເທດທີ່ໄດ້ຮັບເງິນຫຶນກູ້ຢືມຄັ້ງ ນີ້, ແລະໄດ້ເລັ້ມໂຄງການນີ້ແລ້ວ ດ້ວຍການແບ່ງປັນທີ່ດິນ ໃຫ້ແກ່ ຊາວນາ ຊາວສວນ ຜູ້ຍາກຈົນ ໄດ້ມີທີ່ທຳມາຫາກິນ. ສ່ວນນຶ່ງອີກ ຂອງເງິນຫຶນນີ້, ໄດ້ນຳໄປສ້າງສາຖານຶນຫຶນທາງ, ເຮືອນຊານແລະ ໂຮງຮຽນ, ປັບປຸງການອະນາໄມ ແລະການຈຳໜ່າຍນ້ຳໃຊ້ໃຫ້ແກ່ ປະຊາຊົນ, ໃຫ້ຊາວນາຜູ້ຍາກຈົນ ຢືມເງິນໄປລ້ຽງຫຶນ ແລະຈັດໃຫ້ມີ ການອົບຮົມຄຸ.

## ຊາດໃໝ່ປາກົດຂຶ້ນໃນອາຟຣິກກາ

ຂ້າມມະຫາສຸດແອດແລນຕິກໄປຈາກອະເມຣິກາໃຕ້, ແມ່ນ ທະວີບອາຟຣິກກາ ຊຶ່ງໄດ້ປາກົດອອກມາໃນເວທີຂອງໂລກ. ເລັ້ມ ຕົ້ນຈາກປະເທດຊູແດນ ແລະໂມຣົກໂກ ທີ່ໄດ້ຮັບເອກຣາຊ ໃນປີ ໑໙໕໗, ຕູນີເຊັຍ, ແລະການາ ໃນປີ ໑໙໕໘, ແລະຍັງອີກສາມ ສິບປະເທດໃນອາຟຣິກກາທີ່ໄດ້ເປັນເອກຣາຊ ໃນທ້າຍປີ ໑໙໖໐. ສ່ວນຜູ້ນຳຂອງສະຫະຣັຖ ກໍຍິນດີຕ້ອນຮັບປະເທດທີ່ຫາກໍ່ໄດ້ເອກຣາຊ

ໃໝ່ໆ ນີ້ ຊຶ່ງຄວາມຮີບດ່ວນຈາກການເປັນຫົວເມືອງຂຶ້ນນີ້ໄດ້ພາໃຫ້ ສະຫະຣັຖໄດ້ປະຈຳຢູ່ສະຫະປະຊາຊາດຄື ທ່ານແອດໄລ ອີ. ສຕີເວັນ ຊັນ, ໄດ້ທຳນາຍເຫດການໄວ້ລ່ວງໜ້າວ່າ ປະເທດທັງຫລາຍ ໃນ ອາຟຣິກາມີ້ຈະມີບົດບາດສຳຄັນ ໃນການປະຊຸມຂອງໂລກໃນອານາ ຄົດ.

ບາດກ້າວຂັ້ນທຳອິດ ທີ່ທ່ານໄດ້ດຳເນີນງານ ໃນນາມເປັນຜູ້ ຕ່າງໜາຂອງສຫະຣັຖກໍຄືໄດ້ອອກສຽງສນັບສນູນຄໍຂໍເມືຂອງປະເທດ ອາຟຣິກາທີ່ວ່າ ຢາກໃຫ້ສຫະປະຊາຊາດ ໄປທຳການສຶບສວນແລະ ຫາທາງແກ້ໄຂບັນຫາການຂັດແຍ້ງເຣື່ອງຜິວທີ່ເກີດຂຶ້ນໃນແອງໂກລາ ຊຶ່ງຢູ່ໃນພາກຕະເວັນຕົກຂອງອາຟຣິກາ, ແຕ່ເປັນອານານິຄົມຂອງ ປ໋ຈູກີສ. ດັ່ງນັ້ນ ສຫະປະຊາຊາດ ຈຶ່ງໄດ້ຊັກຊວນ ໃຫ້ປະເທດປ໋ຕຸ ກາລ ຄືນເອກຣາຊ ໃຫ້ແກ່ປະເທດທີ່ຢູ່ໃນເຂດແດນຂອງອາຟຣິກກາ ໂດຍທາງການ ແລະທາງສ່ວນຕົວ. ນອກຈາກນັ້ນ ທ່ານ ສຕີເວັນ ຊັນຍັງໄດ້ຮຽກຮ້ອງໃຫ້ສຫະພາບອາຟຣິກກາໃຕ້ເຊົ້າໃຊ້ນະໂຍບາຍທີ່ ແບ່ງແຍກເຊື້ອຊັ້ນວັນນະຂອງບຸກຄົນແລະສນັບສນູນນະຕິຂອງສຫະປະ ຊາຊາດທີ່ຂໍຮ້ອງປະເທດສະມາຊິກບໍ່ໃຫ້ຂາຍອາວຸດ ຫລືຂົນອາວຸດໄປ ໃນປະເທດດັ່ງກ່າວນີ້.

ອາຟຣິກກາໃໝ່ກາຍເປັນບັນຫາອັນຫຍຸ້ງຍາກແລະທ້າທາຍທີ່ ສຸດ ສຳລັບສຫະປະຊາຊາດ. ເມື່ອສາທາຣະນະຣັຖ ກົງໂກໄດ້ຮັບ

ເອກຣາຊ ຈາກແບລຢຽມ ໃນປີ ໑໙໔໐, ແລະຫລັງຈາກນັ້ນມາບໍ່ພໍ
ເທົ່າໃດ ການຕໍ່ສູ້ກັນ ໃນກາງເມືອງກໍ່ຣະເບີດຂຶ້ນ ແລະກຳລັງທະ
ຫານຂອງສຫະປະຊາຊາດ ກໍໄດ້ຖືກສົ່ງໄປຍັງຄອງໂກທັນທີ ຕາມ
ຄວາມຮ້ອງຂໍ ຂອງປະທານາທິບໍດີກາຊາວູບູ. ກ່ອນອື່ນ, ກໍເພື່ອ
ເຮັດໃຫ້ສະພາບຂອງປະເທດ ກັບຄືນສູ່ປົກຕິ ແລະຕໍ່ມາ, ໃນປີ
໑໙໔໑ ກໍໄດ້ຊ່ວຍທ້ອນໂຮມບໍ່ໂລຫະທີ່ມັ່ງຄັ່ງ ຂອງແຂວງກາຕັງກາ
ໃຫ້ເຂົ້າເປັນອັນດຽວກັນກັບແຂວງຕ່າງໆ ຂອງປະເທດ. ແມ່ນວ່າ
ຈະມີຊາວອະເມຣິກັນບາງພວກ ວິພາກວິຈານວ່າ ການປະຕິບັດງານ
ຂອງສຫະປະຊາຊາດ ໃນກາຕັງການັ້ນ ເປັນການແຊກແຊງກິຈການ
ພາຍໃນຂອງຄອງໂກກໍຕາມ, ຣັຖບານສະຫະຣັຖ ຍັງສນັບສນຸນມະຕິ
ຂອງສຫະປະຊາຊາດຢູ່ສເມີ ໃນການທ້ອນໂຮມຄອງໂກ ຊຶ່ງເຫັນ
ວ່າເປັນທາງດຽວເທົ່ານັ້ນທີ່ຈະແກ້ໄຂບັນຫາເສຖກິດແລະການເມືອງ
ໄດ້. ເພື່ອຊ່ວຍເຫລືອໃນເຣື່ອງນີ້, ສະຫະຣັຖໄດ້ໃຫ້ທຶນ ໑໓໐
ລ້ານໂດລາ ຊຶ່ງຮ່ວມທັງອາຫານ ແລະບໍຣິການອື່ນໆອີກ ໂດຍຜ່ານ
ທາງສຫະປະຊາຊາດ.

ການຊ່ວຍເຫລືອຂອງຣັຖບານສະຫະຣັຖນັ້ນ, ຮ່ວມທັງໝົດ
ເປັນມູນຄ່າຫລາຍກວ່າ ๑,๕๐๐ ລ້ານ ໂດລາ ຊຶ່ງໃນປີ ໑໙໕๔,
ການຊ່ວຍເຫລືອນີ້ໄດ້ໃຫ້ເງິນທຶນກູ້ຢືມ ແລະການຂົນສົ່ງອາຫານທາງ
ເຮືອ. ເງິນທຶນນີ້ແມ່ນເອົາໄປສ້າງສາພັທນາກຳລັງໄຟຟ້າ, ການ

ຄົມນາຄົມ, ການສາທາຣະນະສຸກ, ແລະການສຸຂພິບານ ໃນເວລາດຽວກັນນີ້ ກໍ່ໄດ້ນຳເອົາໄປພັທນາໃນດ້ານການສຶກສາ ແລະການກະເສດອີກດ້ວຍ. ຢູ່ທີ່ອາລຢີເຣັຍ, ດາໂຮເມ, ເອທິໂອເປັຍ, ໂມຣົກໂກ, ໂຊມາເລັຍ, ຊູແດນ, ຕັງການຍີກາ ແລະ ຕູນີເຊັຍ ອາຫານອະເມຣິກັນທີ່ໄດ້ເອົາໄປໃຫ້ແກ່ປະເທດເຫລົ່ານີ້ໄດ້ເອົາໃຊ້ເປັນສ່ວນນຶ່ງຂອງເງີນເດືອນ ໃນໂຄງການເຮັດວຽກເພື່ອອາຫານ ເພື່ອຊ່ວຍພວກທີ່ວ່າງງານໄດ້ມີອັນຢູ່ອັນກິນ. ໃນຂນະທີ່ເຮັດວຽກໃຫ້ແກ່ສາທາຣະນະຕາມຄວາມຕ້ອງການ, ຄນະນາຍຫມໍ, ນາງພຍາບານ ຄຣູ, ແລະນາຍຊ່າງຕ່າງໆຫລາຍຮ້ອຍຄົນໄດ້ໄປຍັງອາຟຣິກກາເພື່ອໃຫ້ຄວາມຊ່ວຍເຫລືອຕາມຄວາມສາມາດຂອງໃຜລາວ.

## ຄວາມກົດດັນຂອງຄອມມິວນິສຍັງດຳເນີນຢູ່ເລື້ອຍໄປ

ຢູ່ໃນດ້ານເອເຊັຍອາຄະເນ, ການໂຈມຕີ ແບບກອງໂຈນ ຂອງຄອມມິວນິສຍິ່ງຫນັກຂຶ້ນ ຊຶ່ງເປັນການຂົ່ມຂູ່ຕໍ່ຄວາມປອດໄພແລະເອກຣາຊ ຂອງປະເທດລາວ ແລະວຽດນາມໃຕ້. ມີສິບສີ່ປະເທດຣວມທັງສະຫະຣັຖ ໄດ້ປະຊຸມກັນ ທີ່ກູງເຊີແນວ ໃນເດືອນພຶສພາ ປີ ຈພຝຈ ເພື່ອຊອກຫາຊ່ອງທາງແກ້ໄຂຄວາມຂັດແຍ້ງຂອງລາວໃຫ້ລຸລ່ວງໄປ. ຫລັງຈາກການເຈຣະຈາ ຊຶ່ງກິນເວລາເຖິງ ຝ ເດືອນ ຊຶ່ງເປັນເວລາທີ່ໄດ້ມີການຢຸດຍິງຊົ່ວຣະຍະນຶ່ງ, ແລະທີ່ປະຊຸມໄດ້ກະ

ຕ້ານເຕືອນ ໃຫ້ສາມເຈົ້າທີ່ເປັນຜູ້ນຳຂອງສາມຝ່າຍຫ້ອມໂຮມກັນເປັນ
ອັນນຶ່ງອັນດຽວກັນແລະເຮັດໃຫ້ປະເທດເປັນກາງແລະເປັນເອກຣາຊ

ແຕ່ຢູ່ວຽດນາມໃຕ້ນັ້ນ ການສູ້ຣົບຍັງດຳເນີນຢູ່ ແລະໃນ ປີ ໑໙໗໔, ກຳລັງຂອງກອງທະຫານຄອມມິວນິສ ວຽດນາມເໜືອ ໄດ້ ແຊກຊຶມເຂົ້າໄປໃນວຽດນາມໃຕ້ ພ້ອມທັງໄດ້ກໍ່ການອາຊຍາກັມຂຶ້ນ ເຊັ່ນລັກເອົາຜູ້ຄົນໄປຂ້າຖ້ຳ, ລອບສັງຫານປະຊາຊົນທີ່ຈົງຮັກພັກດີຕໍ່ ຣັຖບານ, ແລະກໍ່ການຈລາຈົນຕ່າງໆ ຕາມແບບຂອງຄອມມິວນິສ. ເພື່ອຕອບສນອງຕາມຄວາມຮ້ອງຂອງຣັຖບານວຽດນາມໃຕ້, ເຈົ້າ ໜ້າທີ່ຝ່າຍທະຫານອະເມຣິກັນ ໄດ້ຊ່ວຍຝຶກແອບກອງທະຫານ ວຽດ ນາມໃຕ້ ເພື່ອປ້ອງກັນເຂດນ້ຳແດນດິນຂອງເຂົາເຈົ້າ. ນອກນັ້ນ, ສະຫະຣັຖຍັງໄດ້ໃຫ້ການສນັບສນູນ ແກ່ຜູ້ນຳວຽດນາມໃຕ້ ໃນຄວາມ ພຍາຍາມທີ່ຈະດັດແປງຣະບຽບສັງຄົມແລະການສຶກສາໃໝ່ແລະເພື່ອ ໃຫ້ປະຊາຊົນສນັບສນູນຣັຖບານຫລາຍຂຶ້ນ ເພື່ອຕໍ່ສູ້ການລຸກລາມຂອງ ກອງໂຈນຄອມມິວນິສ.

ຄວາມພຍາຍາມ ຂອງຄອມມິວນິສ ທີ່ບໍ່ຢາກເຫັນພ້ອມຕາມ ຄວາມຕົກລົງຂອງໂລກເສຣີນັ້ນ, ໄດ້ສະແດງອອກ ໃຫ້ເຫັນອີກເທື່ອ ນຶ່ງໃນເຫດຮ້າຍທີ່ເກີດຂຶ້ນກຽວກັບເບີລິນຕະວັນຕົກ. ໃນເດືອນມິ ຖຸນາ ປີ ໑໙໗໑, ນາຍົກຣັຖມົນຕີ ຄຣຸສ໌ເຊຟໄດ້ຮູ້ອີກວ່າ ໂຊວຽດ ຈະເຊັນສົນທິສັນຍາຕ່າງຫາກກັບເຢຣະມັນຕະວັນຕົກ, ຊຶ່ງສົນທິສັນ

ยาถั่ງກ่าวนี้ແม่ນກ่ຽວກັບການຢຸດຕິຂໍ້ຕົກລົງຂອງສີ່ປະເທດມະຫາອຳ
ນາດທີ່ຄ້ຳປະກັນສິດທິ ທາງເຂົ້າໄປສູ່ເບີລິນຕະເວັນຕົກ. ແຕ່ສາມ
ປະເທດມະຫາອຳນາດໄດ້ໂຕ້ຕອບໄປວ່າ, ບໍ່ມີສິນທິສັນຍາໃດໆທີ່ສາ
ມາດຍົກເລີກສິດທິແລະຄວາມຮັບຜິດຊອບ ໃນເບີລິນຕະເວັນຕົກໄດ້,
ຮ່ວມທັງການໄປມາໃນເມືອງນັ້ນກໍຈະປາສຈາກການກີດກັນອີກດ້ວຍ.

ບັນຍາກາດຂອງເຫດຮ້າຍທີ່ເກີດຂຶ້ນນີ້ ໄດ້ພາໃຫ້ຊາວເຢຣະ
ມັນຕະເວັນອອກພາກັນຫລັ່ງໄຫລຫລົບຫນີເຂົ້າມາຢູ່ໃນເບີລິນຕະເວັນ
ຕົກ, ພຽງແຕ່ໃນເດືອນກໍຣະກະດາເທົ່ານັ້ນ ມີພວກອົພຍົກຈຳນວນ
ນ້ອ0,000 ຄົນ ຫລົບຫນີ ເຂົ້າມາຢູ່ໃນເບີລິນຕະເວັນຕົກ. ຕໍ່ມາ
ໃນວັນທີ ຈນ ເດືອນສິງຫາ, ລັດທິການປົກຄອງ ແບບຄອມມິວນິສ
ຂອງເຢຣະມັນຕະເວັນອອກ ໄດ້ສ້າງກຳແພງກັ້ນ ຣະຫວ່າງສ່ວນນີ່ງ
ຂອງເບີລິນຕະເວັນອອກແລະເບີລິນຕະເວັນຕົກແລະຈາກການກະທຳ
ເຊັ່ນນີ້ໄດ້ເຮັດໃຫ້ຊາວໂລກເຫັນຢ່າງແຈ່ມແຈ້ງເຖິງຄວາມລົ້ມເຫລວ
ຂອງລັດທິຄອມມິວນິສ. ຕໍ່ຫນ້າການຢືນຢັນສິດທິອັນແນ່ວແນ່ຂອງປະ
ເທດພັນທະມິດໃນທາງໄປສູ່ເບີລິນນັ້ນ, ຣັຖບານໂຊວຽດຈຶ່ງປ່ອຍໃຫ້
ຄຳຂາດນີ້ຫມົດອາຍຸໄປໂດຍບໍ່ກ້າເຊັນສົນທິສັນຍາສງົບເສີກໃດໆຫມົດ
ກັບເຢຣະມັນຕະເວັນຕົກ.

ໃນເດືອນດຽວກັນ ທີ່ກຳແພງກັ້ນເບີລິນ ຖືກສ້າງຂຶ້ນນັ້ນ ຜູ້
ນຳຂອງສຫະພາບໂຊວຽດໄດ້ປະກາດວ່າ ຕົນຈະທຳການທົດລອງຣະ

ເບີດນິວເຄລັຍທາງອາກາດ ແລະຄຳປະກາດນີ້ ໄດ້ເຮັດໃຫ້ການຢຸດ ພັກການທົດລອງຮະເບີດ ຊຶ່ງໄດ້ມີການຕົກລົງກັນແລ້ວຮະຫວ່າງສຫະ ພາບໂຊວຽດ, ອັງກິດ, ແລະສະຫະຮັຖນັ້ນຫມົດຄວາມຫມາຍໄປ.

ໃນມື້ຕໍ່ມາ ຄືວັນທີ ๑ ກັນຍາ, ສຫະພາບໂຊວຽດ ໄດ້ເລີ້ມ ການທົດລອງຮະເບີດນິວເຄລັຍຈຳນວນນຶ່ງ ຢູ່ເທິງອາກາດ ຊຶ່ງການ ທົດລອງຮະເບີດນີ້ ໄດ້ເຮັດໃຫ້ກັມມັນຕະພາບຮັງສີ ໃຊ້ການບໍ່ໄດ້ ແລະໄດ້ເຮັດໃຫ້ຊາວໂລກທົ່ວໄປພາກັນຢ້ານກົວວ່າ ຜົນຮ້າຍອາດຈະ ເກີດຂຶ້ນແກ່ຄົນລູ້ນຫນ້າ. ການທົດລອງຮະເບີດນີ້ ໄດ້ເຮັດມາແລ້ວ ຫ້າສິບລູກ, ໂດຍແມ່ນສຫະພາບໂຊວຽດເອງ ເປັນຜູ້ເປີດເຜີຍວ່າ ຕົນເອງໄດ້ວາງແຜນການ ໂດຍທາງລັບມາແລ້ວຫລາຍເດືອນ, ໃນ ຂນະທີ່ຕົນກຳລັງຕົດຕໍ່ເຈຮະຈາ ກັບສຫະຮັຖ ກ່ຽວກັບສົນທິສັນຍາວ່າ ດ້ວຍການຫ້ານທົດລອງຮະເບີດນິວເຄລັຍໂດຍຖາວອນ.

24/VII
ຫາມຈຳໜາຍ

## ຄວາມສງົບຂອງໂລກໃກ້ເຂົ້າມາແລ້ວ

ແມ່ນວ່າໂຊວຽດໄດ້ທົດລອງຮະເບີດນິວເຄລັຍໄປແລ້ວກໍຕາມ ປະທານາທິບໍດີເຄນເນດີຍັງໄດ້ຊັກຊວນໃຫ້ສຫະພາບໂຊວຽດມາເຊັນ ສັນຍາຕົກລົງກັນເພື່ອໃຫ້ມີການກວດກາຮະຫວ່າງຊາດຂຶ້ນ ແລະເພື່ອ ຫ້ານຂາດບໍ່ໃຫ້ມີການທົດລອງໃດໆອີກ ໃນອະນາຄົດ. ຂໍ້ສເນີຂອງ ສະຫະຮັຖນີ້ຖືກຄັດຄ້ານຕາມເຄີຍ, ແຕ່ສະຫະຮັຖຍັງຊູຊີປະກາດວ່າບໍ່

ມີທາງໃດເລືອກອີກແລ້ວ ນອກຈາກຈະຕັດສິນໃຈ ເດັດດ່ຽວທົດລອງ ຣະເບີດທາງອາກາດເພື່ອໃຫ້ກຳລັງອາວຸດຂອງຕົນມີສະມັຕພາບເທົ່າ ທຽມກັນໃນການໂຕ້ຕອບຕໍ່ການໂຈມຕີດ້ວຍອາວຸດນິວເຄລັຍຂອງສັດຕູ ແຕ່ແນວໃດກໍດີ, ຣັຖບານອະເມຣິກັນ ຍັງໄດ້ສະແດງໃຫ້ເຫັນຄວາມ ຕັ້ງໃຈໃນການຈະເຮັດທຸກວິທີທາງເພື່ອໃຫ້ການແຂ່ງຂັນໃນການສ້າງ ອາວຸດນິ້ວຢຸດຕິລົງ ໂດຍການຈັດຕັ້ງອົງການພິເສດເພື່ອຄວບຄຸມອາວຸດ ແລະເພື່ອລົດກຳລັງຣົບ, ແລະໄດ້ໃຊ້ຄວາມພຍາຍາມ ຢ່າງອົດທົນທີ່ ສຸດເພື່ອໃຫ້ມີການເຊັນສົນທິສັນຍາກັນຂຶ້ນ.

ຄວາມພຍາຍາມນີ້ໄດ້ເກີດເປັນຜົນຂຶ້ນມາ ໃນເດືອນກໍຣະກະ ດາປີ ໑໙໙໓, ເມື່ອສະຫະຣັຖ, ອັງກິດ ແລະສຫະພາບໂຊວຽດໄດ້ ຮ່ວມໃຈກັນເຊັນສົນທິສັນຍາວ່າດ້ວຍການຫ້າມການທົດລອງແລະເຮັດ ຮ່າງກົດໝາຍຂຶ້ນໄວ້ ວ່າດ້ວຍການທົດລອງຣະເບີດອາວຸດນິວເຄລັຍ ທາງອາກາດ, ໃຕ້ນ້ຳທະເລ ຫລືຢູ່ເທິງນອກອາວະກາດ. ຕົກມາ ທ້າຍປີ ໑໙໙໓, ມີ ໑໐ກ ປະເທດໄດ້ເຂົ້າຮ່ວມເຊັນໃນສົນທິສັນຍາ ນີ້, ແຕ່ບັນຫາການທົດລອງນິວເຄລັຍທາງໃຕ້ດິນນັ້ນໄດ້ປະໄວ້ແກ້ໄຂ ກັນໃນອະນາຄົດ, ດ້ວຍວ່າ ສຫະພາບໂຊວຽດ ຍັງຢືນຢັນປະຕິເສດ ການໃຫ້ມີການກວດກາ ແລະຄວບຄຸມຢູ່ສເມີ ເພາະວ່າວິທີນີ້ຈະເປັນ ວິທີທີ່ພາໃຫ້ສືບຮູ້ຄວາມລັບ ກ່ຽວກັບອາວຸດຂອງໂຊວຽດ. ນັກສັງ ເກດການບາງຄົນ ເຊື່ອວ່າ, ການທີ່ຣັຖບານໂຊວຽດ ຍອມຮັບບາງ

ส่วนຂອງການຫ້ານການທົດລອງອາວຸດນີ້ກໍເນື່ອງຈາກວ່າການຄົ້ນພົບ ຫາຮ່ອງຮອຍທີ່ໂຊວຽດໄປຕັ້ງຈຮວດມີສຊິລໄວ້ທີ່ຄົວບານັ້ນ ໄດ້ພາໃຫ້ ໂລກເຫັນຈຸ່ອງທາງຂອງສົງຄາມປະຮະມານູ. ເພື່ອເປັນການປ້ອງ ກັນສົງຄາມປະຮະມານູ ທີ່ອາດຈະເກີດຂຶ້ນໄດ້ດ້ວຍການບັງເອີນ ຫລື ຄວາມເຂົ້າໃຈຜິດ, ຮັຖບານສະຫະຮັຖ ໄດ້ຕິດຕັ້ງ ເຄື່ອງຮັບໂທຮະ ເລກ ຊຶ່ງເອີ້ນກັນທົ່ວໄປວ່າ "ສາຍຮ້ອນ" ຮະຫວ່າງທຳນຽບຂາວຢູ່ ທີ່ກຸງວໍຊິງຕັນ ແລະເຄລັມລິນ ຢູ່ໂມສກູ.

ການປ້ອງກັນໄພ ຊຶ່ງອາດເປັນຈິງ ຕໍ່ສົງຄາມທີ່ອາດເກີດຂຶ້ນ ໄດ້ ໂດຍບັງເອີນຫລືໂດຍຄວາມບໍຣິສຸດໃຈຂອງອາກາດ, ໄດ້ເປັນ ຜົນທີ່ນຳໃຫ້ຄວາມສຳພັນຂອງໂຊວຽດ ແລະອະເມຣິກັນໃກ້ເຂົ້າມາ. ໃນການກ່າວຄຳປາໄສ ທີ່ເປັນຫນ້າຈັບໃຈ ຂອງທ່ານປະທານາທິບໍດີ ເຄນເນດີ ຢູ່ມະຫາວິທຍາໄລອະເມຣິກັນນັ້ນ, ທ່ານໄດ້ສເນີການທີ່ ຈະເຮັດໃຫ້ສົງຄາມເຢັນນີ້ສິ້ນສຸດລົງ.

ທ່ານໄດ້ກ່າວວ່າ, "ພວກເຮົາຈະຕ້ອງດຳເນີນກິຈການຂອງ ເຮົາໄປໃນທາງທີ່ເຮັດໃຫ້ພວກຄອມມິວນິສສົນໃຈຕົກລົງຢາກໃຫ້ມີສັນ ຕິພາບ ອັນແທ້ຈິງເກີດຂຶ້ນ. ນອກເຫນືອ ຈາກສິ່ງທີ່ກ່າວມາເບື້ອງ ເທິງນີ້, ໃນຂນະທີ່ປ້ອງກັນຜົລປະໂຍດຂອງເຮົາເອັງຢູ່ນີ້, ອິດທິພົນ ຂອງປະຮະມານູຈະຕ້ອງໄດ້ຮັບການປ້ອງກັນການສູ້ຫນ້າກັບສັດຕູທີ່ຈະ ເລືອກເອົາ ຄືການຖອນຕົວ ຫລືສົງຄາມປະຮະມານູ ເພື່ອເຮັດໃຫ້

ປ້ນປາຍນ້ີປອດໄພ, ອາວຸດຂອງອະເມຣິການ້ີບ່ໄດ້ທ້ຳທ້ຳຍຜູ້ໃດແລະ ໄດ້ຢູ່ໃນແບບແຜນ ຂອງການຄວບຄຸມຄັກແນ່, ຈ່ຶງມ້ີໄວ້ເພ່ືອກິດກັນ ແລະສາມາດເອ້ົາມາເລ້ືອກໃຊ້ ໃນຄາວຈ້ຳເປ້ນ. ກ້ຳລັງທະຫານ ຂອງເຮ້ົາມ້ີໄວ້ ເພ່ືອສ້ັນຕ້ິພາບ ແລະຮັກສາຣະບ໋ຽບວ້ິໃນຂອງຕ້ົນໄວ້ ຢ່າງດ້ີ. ເໝ້ືອນດ້ັ່ງທ້ີ່ຊາວໂລກຮູ້ດ້ີແລ້ວວ່ າ, ສະຫະຣັຖ ບ່ໍເຄ້ີຍ ເປ້ນຜູ້ລ້ີ່ມ ເຣ້ີ່ມສ້ົງຄາມຈ້ັກເທ້ື່ອ. ໃນທ້ີ່ສຸດ ທ່ານໄດ້ກ່າວມ້ວນ ທ້ ້າຍວ່ າ "ອະເມຣິກາໄດ້ໝູ່ນເທກ້ຳລ້ັງຂອງຕ້ົນ, ບ່ໍແມ່ນເພ່ືອຍຸທ ສ້ິລປະໃນການທ້ຳລາຍ, ແຕ່ເປ້ນຍຸທສ້ິລປະ ໃນການສແວງຫ້ າສ້ັນຕ ິ ພາບ".

## ທ່ານຈອນສ້ັນຢ້ືນຢ້ັນເຖ້ິງນະໂຍບາຍຂອງທ່ານເຄນເນດ ິ

ບ ິດບາດສ່ວນຕ ົວຂອງທ່ານເຄນເນດ ິ ໃນການສແວງຫ້ າສ້ັນຕ ິ ພາບໃຫ້ແກ່ໂລກພາຍນອກ ແລະການປ້ບປຸງສ້ັງຄ ົມພາຍໃນປ ະເທດ, ໄດ້ເຖ ິ້ວຖ ຶກອ ້ າວ ະສ ານ ຢ ່ າ ງ ກ ະ ທ ັ ນ ຫ ັ ນ ແ ລ ະ ບ ໍ ່ ເ ປ ້ ນ ທ ີ ່ ລ າ ດ ຄ ິ ດ ນ າ ກ ່ ອ ນ ໃ ນ ເ ມ ື ່ ອ ທ ່ ານ ຖ ກ ລ ົ ນ ຮ ້ າ ຍ ລ ອ ບ ຍ ິ ງ ທ ີ ່ ເ ມ ື ອ ງ ດ າ ລ າ ສ ໃ ນ ຣ ັ ຖ ເ ທ ັ ກ ຊ ັ ສ . ໃ ນ ຂ ນ ະ ທ ີ ່ ຊ າ ວ ໂ ລ ກ ກ ຳ ລ ັ ງ ໄ ວ ້ ອ າ ໄ ສ ນ ຳ ກ ານ ຈ າ ກ ໄ ປ ຂ ອ ງ ທ ່ ານ ເ ຄ ນ ເ ນ ດ ິ ໃ ນ ຄ ັ ້ ງ ນ ້ ີ , ຕ ຳ ແ ໜ ່ ງ ປ ະ ທ ານ າ ທ ິ ບ ດ ິ ກ ິ ຕ ິ ກ ເ ປ ັ ນ ຂ ອ ງ ທ ່ ານ ຈ ອ ນ ສ ັ ນ ຕ າ ມ ກ ດ ໝ າ ຍ , ແ ລ ະ ທ ່ ານ ຈ ອ ນ ສ ັ ນ ນ ້ ີ ແ ມ ່ ນ ທ ່ ານ ເ ຄ ນ ເ ນ ດ ິ ເ ປ ັ ນ ຜ ູ ້ ເ ລ ື ອ ກ ເ ອ ້ ົ າ ເ ພ ື ່ ອ ໃ ຫ ້ ເ ປ ັ ນ ຮ ອ ງ ປ ະ ທ ານ າ ທ ິ ບ ດ ິ ຂ ອ ງ ທ ່ ານ ແ ລ ະ ເ ປ ັ ນ ຫ ົ ວ

ຜູ້ຮ່ວມງານທີ່ໃກ້ຊິດອີກດ້ວຍ. ໃນການດຳເນີນນິຕິບາດໃໝ່ ຂອງ ຕຳແໜ່ງປະທານາທິບໍດີຄັ້ງນີ້, ທ່ານຈອນສັນ ໄດ້ເຄີຍມີປະສົບການ ມາແລ້ວເຖິງສາມສິບປີທີ່ຖ້ວນ; ຄືຈາກການເປັນສະມາຊິກສະ ພາກົງແກຣສ, ເປັນວຸດທິສະມາຊິກ ສະພາເຊເນຕ ແລ້ວ ມາເປັນ ຮອງປະທານາທິບໍດີ.

ທ່ານໄດ້ມີສ່ວນກ່ຽວຂ້ອງ ກັບບັນຫາໃຫຍ່ ຂອງປະເທດຊາດ ຊຶ່ງຜູ້ນຳຄົນກ່ອນໄດ້ພົບພໍ້ມາແລ້ວ.

ໃນການກ່າວຄຳປາໄສຄັ້ງທຳອິດຢູ່ສະພາກົງແກຣສ ທ່ານໄດ້ ສະເໜີໃຫ້ຈັດການຢ່າງຮີບດ່ວນ ກ່ຽວກັບໂຄງການ ພາຍໃນປະເທດນີ ສອງອັນ ຊຶ່ງປະທານາທິບໍດີ ເປັນຜູ້ຊ່ວຍກຳນົດໄວ້ໃຫ້ແລ້ວ. ກົດ ໝາຍວ່າດ້ວຍສິດທິຂອງພົລເມືອງ ຊຶ່ງໄດ້ຮັບການເຫັນດີ ເຫັນຊອບ ຈາກສະພາຕ່ຳແລ້ວນັ້ນ, ໄດ້ໃຫ້ສິດແກ່ຣັຖບານ ຢ່າງເຕັມປ່ຽມໃນ ການໃຫ້ຄວາມອາຣັກຂາ ຕໍ່ການລັດຕາມ ການແບ່ງແຍກຜິວ. ກົດ ໝາຍວ່າດ້ວຍການລົດຜ່ອນພາສີຣາຍໄດ້ ຈຶ່ງໄດ້ຕັ້ງອັດຕຣາຂຶ້ນເປັນ ກົດໝາຍໃນຕົ້ນປີ ໑໙໖໔ ນັ້ນ, ໄດ້ຫລຸດພາສີຈາກລາຍໄດ້ຂອງພະ ນັກງານແລະຫ້າງຮ້ານໄດ້ເປັນຢ່າງດີ. ຈຸດປະສົງໃນການອອກກົດ ໝາຍນີ້ ກໍເພື່ອເຮັດໃຫ້ເສຖກິດດຳເນີນໄປໂດຍດີ ແລະເພື່ອຫລຸດ ຈຳນວນຄົນວ່າງງານໃຫ້ນ້ອຍລົງ ໂດຍໃຫ້ປະຊາຊົນ ມີເງິນເດືອນ ຫລາຍຂຶ້ນ ສຳລັບໄວ້ໃຊ້ຈ່າຍ ແລະຊ່ວຍໃຫ້ທຸຣະກິດມີເງິນຫລາຍຂຶ້ນ

ເພື່ອຈະໄດ້ລົງທຶນ ແລະຂຍາຍກິຈການ. ກ່ຽວກັບນະໂຍບາຍນີ້, ປະທານາທິບໍດີຈອນສັນໄດ້ຮັບຄວາມສນັບສນູນຫ໌ລາຍຊັ້ນອີກເມື່ອທ່ານ ໄດ້ປະກາດການຫລຸດງົບປະມານ ໃນດ້ານທະຫານ ແລະໄດ້ເຮັດໃຫ້ ເສຖກິດຂອງຊາດດຳເນີນການໄປໂດຍດີ.

ເງິນທີ່ຫອມໂຮມໄວ້ ຈາກການປະຫຍັດ ໃນເຣື່ອງອື່ນໆນັ້ນ, ໄດ້ໂຮມໄວ້ໃຊ້ໃນໂຄງການຕ່ໍຕ້ານຄວາມທຸກຍາກ ພາຍໃນປະເທດ. ທ່ານປະທານາທິບໍດີໄດ້ລາຍງານວ່າ, ປະມານນຶ່ງສ່ວນຫ້າຂອງຄອບ ຄົວຊາວອະເມຣິກັນທັງໝົດ ມີເງິນລາຍໄດ້ປີນຶ່ງປະມານສາມພັນໂດ ລາ ແລະບໍ່ໄດ້ຮ່ວມສ້າງຄວາມມັ່ງມີ ເໝືອນຊາວອະເມຣິກັນ ສ່ວນ ໃຫຍ່. ທ່ານຈອນສັນໄດ້ສເນີວ່າ ຢາກໃຫ້ທຸກໆອົງການ ຂອງຣັຖ ບານເອົາໃຈໃສ່ ນຳບັນຫານີ້ ເປັນພິເສດ ແລະໃຫ້ພຍາຍາມ ໃຫ້ ຄວາມຮ່ວມມືເທົ່າທີ່ຄວນ. ດ້ວຍການພັ້ມພູນ ການສຶກສາ, ການ ຝຶກແອບໃນວິຊາອາຊີບ ຊຸດສາຫະກັມໃໝ່ແລະການປັບປຸງສັງຄົມສົງ ເຄາະໃຫ້ດີຂຶ້ນ, ທ່ານໄດ້ແນໃສ່ຈຸດປະສົງ ໃນການຍົກຣະດັບການ ເປັນຢູ່ຂອງພວກທີ່ທຸກຈົນແລະບໍ່ມີຖານະເທົ່າທຽມໝູ່ໃຫ້ຢູ່ໃນຣະດັບດີ ພໍທີ່ນັບຖືແກ່ພວກທີ່ມັ່ງມີກວ່າເຂົາເຈົ້າ.

ໃນດ້ານກິຈການຕ່າງປະເທດແລ້ວ, ປະທານາທິບໍດີຈອນສັນ ໄດ້ຖແລງວ່າ ທ່ານຈະດຳເນີນທຸກວິທີທາງ ເພື່ອໄກ່ເກ່ຍບັນຫາຣະ ຫວ່າງຊາດໂດຍສັນຕິວິທີ ແລະເພື່ອປັບປຸງສັມພັນທະພາບກັບທຸກໆປະ

ເທດໃຫ້ແຫ້ນແກ່ນຍິ່ງຂຶ້ນ.

ທ່ານໄດ້ກ່າວຕໍ່ສະພາກິງແກຣສວ່າ: "ປະເທດນີ້ຈະຮັກສາ ຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ກັບອຽດນາມໃຕ້ ແລະເບີລິນຕະເວັນຕົກ. ພວກເຮົາຈະຊອກຫາສັນຕິພາບ ຢ່າງບໍ່ລົດລະ, ພວກເຮົາຈະໃຊ້ ຄວາມສລຽວສລາດເພື່ອຊອກຫາການຕົກລົງໃຫ້ໄດ້ໃນເຂດນີ້ແມ່ນວ່າ ມັນຈະແຕກຕ່າງກັນ ກັບເຮົາກໍຕາມ, ແລະເຮົາຈະເອື້ອເຟື້ອແລະຊ່ວຍ ສັດຕໍ່ຜູ້ທີ່ຮ່ວມສູ້ເພື່ອຮຸດປະສົງຮ່ວມຮວມ".

ບໍ່ມີສິ່ງໃດຈະດົ່ນ ແລະເລິກຊຶ້ງເທົ່າກັບຄວາມເອົາໃຈໃສ່ຕໍ່ ຄວາມສງົບສຸກ ແລະຄວາມດີຂອງໂລກ ຊຶ່ງເປັນໂຄງການທີ່ຄນະດຳ ເນີນງານເພື່ອສັນຕິພາບໄດ້ຈັດຕັ້ງຂຶ້ນ ຫລັງຈາກທ່ານຈອນສັນ ໄດ ເຂົ້າຮັບຕຳແໜ່ງໃໝ່ໆແລະມີພວກໜຸ່ມນ້ອຍຊາວອະເມຣິກັນທີ່ເຕັມ ໄປດ້ວຍອຸດົມຄະຕິຫລາຍຮ້ອຍຄົນ, ໄດ້ສມັກໄປຮັບໃຊ້ໃນຣາຊການຢູ່ ທີ່ຕ່າງປະເທດໂດຍສະເພາະແມ່ນໃນປະເທດທີ່ກຳລັງພັທນາໃໝ່ໆ. ພວກທີ່ສມັກໄປເຮັດການຕາມປະເທດຕ່າງໆນີ້, ມີຄນະ ພຍາບານ, ຄນະຄຣູສອນ, ຜູ້ຊຽວຊານ ດ້ານສຸຂພິບານ, ນາຍຊ່າງ, ແລະຜູ ຊ່ວຍໃນດ້ານການປຸກຝັງ. ສະມາຊິກຂອງຄນະດຳເນີນງານ ເພື່ອ ສັນຕິພາບນີ້ຢູ່ແລະເຮັດວຽກຮ່ວມກັບປະຊາຊົນທ່ົວໆໄປໃນປະເທດອາ ຟຣິກກາ, ເອເຊັຍ, ແລະອະເມຣິກາລາຕິນ. ໂຄງການນີ້ ແມ່ນ ທ່ານປະທານາທິບໍດີເຄນເນດີເປັນຜູ້ຣິເລີ່ມຕັ້ງຂຶ້ນ ໃນເດືອນມີນາ ປີ

๑๗๘๑. ຈຸດປະສົງຂອງຄນະດຳເນີນງານເພື່ອສັນຕິພາບນີ້ກໍຄື ໄປ ຮັບໃຊ້ປະຊາຊົນຜູ້ຍາກຈົນກວ່າເຂົາເຈົ້າ ແລະເພື່ອຜູກສັມພັນທະໄມ ຕຣີ ກັບເພື່ອນມະນຸດດ້ວຍກັນ ເພື່ອໃຫ້ຫມົດທຸກຄົນ ທ້ອນໂຮມກັນ. ຫລັງຈາກປີທີສາມ ຂອງການດຳເນີນງານຂອງໂຄງການນີ້, ປາກົດ ວ່າ ມີ ๔๗ ປະເທດ ໄດ້ຮ້ອງຂໍເອົາຄນະອາສາສມັກນີ້ ໄປດຳເນີນ ໂຄງການຢູ່ໃນປະເທດຂອງເຂົາເຈົ້າ, ແລະສະພາກົງແກຣສຈື່ງໄດ້ ລົງຄະແນນສຽງອະນຸມັດເງີນທຶນ ທີ່ຈະເອົາມາໃຊ້ຈ່າຍໃນການເພີ້ມ ເຈົ້າຫນ້າທີ່ອາສາສມັກຂຶ້ນອີກຫລາຍກວ່າຈຳນວນ ๑๑,๐๐๐ ຄົນ.

ຕໍ່ມາ ຄນະດຳເນີນງານເພື່ອສັນຕິພາບນີ້ ກໍມີຊຸ່ສຽງໂດ່ງດັງ ໃນຣະຫວ່າງຊາວອະເມຣິກັນ ຊຶ່ງສະທ້ອນເຖີງການຟື້ນຟູ ອຸດົມຄະຕິ ແບບຜະຈົນໄພ ຊຶ່ງມີຮາກຖານມາຈາກສ່ວນເລີກຂອງປະວັດສາດອະ ເມຣິກາ, ຈາກສມັຍການເປັນອານານິຄົມ ແລະສມັຍການປະຕິວັດ ຂອງຊາວອະເມຣິກັນຈົນເຖີງສມັຍມີການຕົກລົງເຣື່ອງເຂດຊາຍແດນ ແລະສມັຍທີ່ຍົນດີ້ຕ້ອນຮັບພວກທີ່ອົພຍົກຈາກຖິ່ນຕ່າງໆມາຢູ່ໃນປະເທດ ນີ້. ລັກສນະໃນປັດຈຸບັນນີ້ ຈະເຫັນເປັນຈິງສເມີ ຕາມບໍຣິເວນມະ ຫາວິທຍາໄລ, ຊຶ່ງເປັນບ່ອນທີ່ນັກສຶກສາອະທິບາຍ ແລະສະແດງ ຄວາມຫ່ວງໃຍຕ່າງໆກ່ຽວກັບບັນຫາເສີກສົງຄາມ ແລະຄວາມສງົບ, ກ່ຽວກັບນະໂຍບາຍປະຣະມານູ, ສຫະປະຊາຊາດ, ແລະສິດທິຂອງ ພົລເຮືອນນອກເຫນືອໄປຈາກການຄິດແຕ່ພຽງເຣື່ອງທີ່ກ່ຽວກັບ ການ

ສຶກສາເທົ່ານັ້ນ. ນອກນີ້ ກໍຍັງແຜ່ໄປເຖິງສິລປະຂອງນະວະນິຍາຍ, ລະຄອນ, ດົນຕຣີ, ການແຕ້ມຮູບ, ການຝອນລຳ, ການສະຖາປັຕ ຍະກັມ, ພາພຍົນ, ແລະໂທຣະທັດ ຊຶ່ງທັງໝົດນີ້ ລ້ວນແຕ່ຟັ້ນຟູຂຶ້ນ ມາຈາກກຳເນີດທີ່ມາແຕ່ບ່ອນນີ້. ຈະເປັນທີ່ເຫັນໄດ້ຈາກ ຜົນສຳ ເຣັດຂອງວິທຍາສາດອະເມຣິກັນທັງທາງທິສດີແລະພາກປະຕິບັດ ໃນ ດ້ານການຊ່າງແລະຊຸດສາຫະກັມ ແລະທັງໝົດນີ້ໄດ້ສ່ໍສແດງ ເຖິງ ການຕຽມພ້ອມຂອງຜູ້ນຳຝ່າຍການເມືອງອະເມຣິກັນໃນການ ສແວງ ຫາຊ່ອງທາງເພື່ອນຳສັນຕິພາບມາສູ່ໂລກ, ແລະເພື່ອທຳການຕໍ່ຕ້ານ ຄວາມທຸກຍາກແລະຄວາມອະຍຸຕິທັມທັງໃນປະເທດແລະຕ່າງປະເທດ.

## ນິກສັນເປັນປະທານາທິບໍດີ

ຣິຊາດ ເອມ ນິກສັນ ໄດ້ສາບານຕົວຮັບຕຳແໜ່ງ ເປັນປະ ທານາທິບໍດີຄົນທີ ໓໗ ຂອງສະຫະຣັຖໃນວັນທີ ๔๐ ມະກະຣາ๑๙๖๙ ໃນການແຂ່ງຂັນຣະຫວ່າງບຸກຄົນສຳຄັນສາມທ່ານ ຊຶ່ງຮວມທັງຜູ້ປົກ ຄອງຣັຖອາລາບາມາ ຊຶ່ງ ຟອດ໌ ຊີ ວອລເລສ, ຜູ້ສມັກຂອງພັກ ຣິພັບລິແຄນຄືນິກສັນ ໄດ້ຮັບໄຊຊນະດ້ວຍຄະແນນສຽງໃກ້ຄຽງກັບ ຜູ້ ສມັກຂອງພັກເດໂມແຄຣຕ ຄື ຮິວເບີດ ເອັຈ ຮັມຟຣີ ຜູ້ທີ່ເປັນຮອງ ປະທານາທິບໍດີໃນຣັຖບານຂອງທ່ານຈອນສັນ.

ນິກສັນບໍ່ໄດ້ເປັນຄົນແປກໜ້າ ຢູ່ໃນທຳນຽບຂາວແຕ່ຢ່າງໃດ ເພາະວ່າ ທ່ານເອງ ເຄີຍຮັບໃຊ້ເປັນຮອງປະທານາທິບໍດີສອງເທື່ອ ໃນຣັຖບານຂອງທ່ານ ໄອເຊັນຮາວເວີ. ໃນການແຂ່ງຂັນກັບທ່ານ ຈອນ ເອັຟ ເຄນເນດີ ເພື່ອເປັນປະທານາທິບໍດີໃນປີ ໑໙໖໐ ນັ້ນ; ນິກສັນເປັນຝ່າຍເສັຍໄຊຊນະ ດ້ວຍຄະແນນສຽງລົ້ນກັນ ໑໑໕,໐໐໐ ສຽງຂອງພົລເມືອງທີ່ປ່ອນບັດ ໖໙ ລ້ານຄົນ. ຫລັງຈາກການເສັຍໄຊແລ້ວ, ທ່ານໄດ້ກັບຄືນໄປສມັກເລືອກຕັ້ງເປັນຜູ້ປົກຄອງຣັຖແຄລິຟໍເນັຍ ແຕ່ທ່ານກໍເສັຍໄຊ ໃນການເລືອກຕັ້ງອີກ ຈົນພາໃຫ້ຜູ້ຄົນທັ້ງຫລາຍຄິດວ່າ ອາຊີບເປັນນັກການເມືອງຂອງທ່ານຈະສິ້ນສຸດລົງເທົ່ານັ້ນ. ໂດຍປາສຈາກພົ້ນຖານການເມືອງອັນໜາແໜ້ນ, ທ່ານ ຈຶ່ງ ໄດ້ໄປຝຶກຫັດກົດໝາຍ ຢູ່ນະຄອນນິວຢອກ ແລະໄດ້ທອນໂຮມກຳລັງ ຄືນເພື່ອເຮັດໃຫ້ການເມືອງຂອງຕົນມີຊີວິດຊີວາຄືນມາອີກ.

ກ່ຽວກັບຈຸດປະສົງເພື່ອແກ້ໄຂບັນຫາຂອງຊາດ, ປະທານາທິບໍດີນິກສັນ ໄດ້ຕໍ່ສູ້ກັບຄວາມເຫລື້ອໃຈຫລາຍຢ່າງທີ່ຈອນສັນ, ປະທານາທິບໍດີຄົນກ່ອນ ໄດ້ກ່ຽວກັນກັບສົງຄາມໃນອ່ຽດນາມຕລອດມາ. ແຕ່ ໃນທ້າຍປີທຳອິດຂອງການບໍຣິຫານປະເທດ, ປະທານາທິບໍດີຄົນໃໝ່ ໄດ້ຖອນກອງທະຫານສະຫະຣັຖ ຫລາຍກວ່າ ໑໐໐,໐໐໐ ຄົນ ອອກ ຈາກປະເທດເອເຊັຍຕະເວັນອອກສຽງໃຕ້ ໂດຍພາຍໃຕ້ ແຜນການ ຖອນທະຫານສະຫະຣັຖເທື່ອລະນ້ອຍ.

ໃນເດືອນກໍຣະກະດາ ໑໙໙໙, ປະທານາທິບໍດີນິກສັນ ໄດ້ ຮຽບຮຽງນະໂຍບາຍຢ່າງກ້ວາງຂວາງຊຶ່ງຈະເປັນຂຸ່ອງທາງແນະນຳ ການບໍຣິຫານງານຂອງຣັຖບານ ກ່ຽວກັບນະໂຍບາຍຕ່າງປະເທດ ຢູ່ ທີ່ເກາະກວາມ ໃນມະຫາສມຸດປາຊີຟິກ. ທ່ານປະທານາທິບໍດີໄດ້ ອະທິບາຍ "ຫລັກການຂອງນິກສັນ" ໂດຍມີເນື້ອຄວາມວ່າ:

"ເນື້ອໃນໃຈຄວາມ ຂອງຫລັກການນີ້ ກໍຄືວ່າ ສະຫະຣັຖຈະ ຮ່ວມມືໃນການປ້ອງກັນ ແລະການພັທນາຂອງກຸ່ມປະເທດ ພັນທະມິດ ແລະເພື່ອນຝູງທັ້ງຫລາຍ, ແຕ່ວ່າອະເມຣິກາບໍ່ສາມາດ ແລະ ຈະບໍ່ ຄິດຄົ້ນແຜນການ, ອອກແບບໂຄງການ, ຄວບຄຸມ ການຕັດສິນໃຈ, ແລະຍອມຮັບການປ້ອງກັນ ໂລກເສຣີໃດໆທັ້ງໝົດ. ພວກເຮົາຈະ ຊ່ວຍເຫລືອ ຮ່ວມມືໃນຄວາມແຕກຕ່າງຢ່າງແທ້ຈິງ ແລະບອນທີ່ເປັນຈຸດ ສົນໃຈຂອງພວກເຮົາ".

"ຖ້າຄາດວ່າຈະຢູ່ໄດໂດຍສັນຕິ, ອະເມຣິກາບໍ່ສາມາດທີ່ຈະ ດຳຣົງຢູ່ຢ່າງໂດດດ່ຽວ. ພວກເຮົາບໍ່ມີຄວາມຕັ້ງໃຈທີ່ຈະບໍ່ກ່ຽວພັນ ກັບໂລກ. ສິ່ງທີ່ປາກົດມີຢູ່ຕໍ່ໜ້າກໍຄືວ່າ ພວກເຮົາຈະຮັບຜິດຊອບ, ຈະປົກປັກຮັກສາຜົນປະໂຍດ, ແລະຈະເຮັດໃຫ້ມີສັນຕິພາບເກີດຂຶ້ນ ຢ່າງໄດ້ຜົນດີທີ່ສຸດນັ້ນດ້ວຍວິທີໃດ".

ສຳລັບຍິ່ງໄປກວ່ານັ້ນ, ກໍແມ່ນຫລັກການຂອງທ່ານປະທານາ ທິບໍດີນິກສັນສາມຢ່າງຄື:

๑. ສະຫະຣັຖຈະເຄົາຣົບຂໍ້ຜູກມັດຂອງສົນທິສັນຍາຕ່າງໆທີ່ ໄດ້ເຊັນກັບປະເທດອື່ນ.

๘. ສະຫະຣັຖຈະໃຫ້ຄວາມຊ່ວຍເຫລືອ ໃນກໍຣະນີທີ່ປະເທດທີ່ມີ ອາວຸດປະຣະມານູໂຈມຕີປະເທດຝ່າຍພັນທະມິດຫລືປະ ເທດທີ່ສຳຄັນແກ່ຄວາມປອດໄພໃນຂົງເຂດນັ້ນ ( ຍົກ ຕົວຢ່າງກໍຄື ເອເຊັຍຕະວັນອອກສຽງໃຕ້).

๙. ໃນກໍຣະນີ ການຮຸກຮານອື່ນໆນັ້ນ, ສະຫະຣັຖຈະຍິນດີ ຊ່ວຍເຫລືອແລະສົ່ງເສີມເສຖີກຕາມຄຳຮ້ອງຂໍທີ່ເຫັນ ວ່າຈຳເປັນ. ແຕ່, ສະຫະຣັຖຍັງຈະຫວັງວ່າ ປະ ເທດທີ່ຖືກຮຸກຮານໂດຍຕຣົງນັ້ນ ຕ້ອງຫາວິທີທາງປ້ອງ ກັນຕົນເອງ, ເໝືອນກໍຣະນີທີ່ຍົກຕົວຢ່າງໃຫ້ເຫັນໃນ ປະເທດລາວ ຊຶ່ງກຳລັງກອງທັບ ຂອງຣັຖບານລາວ ໂດຍການຊ່ວຍເຫລືອດ້ານອຸປກອນການຣົບຈາກສະຫະ ຣັຖ, ກຳລັງໄດ້ພຍາຍາມຕໍ່ສູ້ແລະຂັດຂວາງກຳລັງທະ ຫານອຽດນາມເໝືອນທີ່ພຍາຍາມຮຸກຮານພຣະຣາຊອາ ນາຈັກລາວຢູ່.

ເຫດການທີ່ນ່າອັສຈັນທີ່ສຸດ ເກີດຂຶ້ນໃນປີທຳອິດແຫ່ງການບໍຣິ ຫານງານຂອງປະທານາທິບໍດີນິກສັນກໍຄື, ການລົງສູ່ດວງຈັນໃນວັນທີ ๘๑ ກໍຣະກະດາ ๑๙๖๙ ຂອງນັກອາວະກາດ ນິລ ອາມສຕຣອງ,

ແລະ ເອດວິນ ອອລດຣິນ, ໃນຂນະທີ່ນັກອາວະກາດໄມເຄິລ ຄອລ ລິນສ໌ ໄດ້ໂຄຈອນເຮືອອາວະກາດແມ່ ຂອງອາພອລໂລ ໑໑ ອ້ອມ ດວງຈັນຢູ່. ຫລັງຈາກລົງສູ່ດິນຕ່ຳ ອັນແຫ້ງແລ້ງ ຊຶ່ງເຕັ້ມໄປ້ວ່າ ທະເລແຫ່ງຄວາມມືດງຽບ, ທ່ານອາມສຕຣອງ ແລະທ່ານອອລດຣິນ ໄດ້ພາກັນສຳຣວດຢູ່ເທິງດວງຈັນ ເປັນເວລາຫລາຍຊົ່ວໂມງ ເພື່ອ ຂຸດເກັບເອົາກ້ອນຫີນ ແລະຂີ້ດິນຕ່າງໆ ແລ້ວເອົາກັບຄືນມາໂລກ ຂອງເຮົາ ເພື່ອທຳການພິສູດຕໍ່ໄປ. ນອກຈາກນັ້ນ, ເຂົາເຈົ້າໄດ້ ປັກທຸງຊາດອະເມຣິກັນໄວ້ເທິງດວງຈັນ ພ້ອມດ້ວຍຄຳຂວັນທີ່ວ່າ "ພວກເຮົາມາໃນນາມສັນຕິພາບແກ່ມວນມະນຸດທັງປວງ".

ໃນເດືອນກໍຣະກະດາ ໑ໝ໗໑, ຣັຖບານຂອງນິກສັນ ໄດ້ ສແດງບົດບາດການເມືອງຄັ້ງສຳຄັນທີ່ສຸດ ເພື່ອສແວງຫາສັນຕິພາບ ໃນໂລກ. ຄຳປາໃສຂອງທ່ານປະທານາທິບໍດີ ໄດ້ອອກອາກາດທົ່ວ ໂລກໂດຍທາງວິທຍຸ ແລະໂທຣະທັດ ໂດຍມີເນື້ອຄວາມວ່າ ທ່ານ ໄດ້ຣັບການເຊື້ອເຊີນ ຈາກປະເທດສາທາຣະນະຣັຖ ປະຊາຊົນຈີນ ເພື່ອໃຫ້ໄປຢ້ຽມຢາມນະຄອນເປກິ່ງກ່ອນເດືອນພຶສພາ ໑ໝ໗໘. ໃນ ຂນະທີ່ທ່ານໄດ້ກ່າວຢ້ຳ ຢ່າງຣະມັດຣະວັງວ່າ ບາດກ້າວນັ້ນທຳອິດນັ້ ອາດຈະບໍ່ສາມາດແກ້ໄຂບັນຫາທັງມວນກ່ຽວກັບສາຍສັມພັນຣະຫວ່າງ ທັງສອງປະເທດ; ແລະສິ່ງທີ່ຈະຣັກໃຫ້ຜ່ອນຄາຍຄວາມຕຶງຄຽດຢູ່ ໃນເອເຊັຍເຊັ່ນນີ້ເປັນສິ່ງທີ່ນິຍົມຊົມຊອບແກ່ຜູ້ນຳຂອງຫລາຍປະເທດ

ແລະແກ່ປະຊາຊົນທຸກຊັ້ນວັນນະ.

ຕໍ່ມາ ໃນເດືອນສິງຫາ, ປະທານາທິບໍດີ ໄດ້ປະກາດສິ່ງທີ່ ແປກປລາດອອກມາອີກ. ການປະກາດຄັ້ງນີ້ ແມ່ນເຣື່ອງໂຄງການ ຈະເຣັດໃຫ້ເສຖກິດ ຂອງຊາດໝັ້ນຄົງດີ ແລະເພື່ອທົບທວນ ເບິ່ງ ສຳພັນຂອງຄຸນຄ່າເງິນດອນລາ ກັບສະຖານະການດ້ານເງິນຕຣາຣະ ຫວ່າງຊາດ. ໂຄງການນີ້ ໄດ້ຣວມທັງການປ່ຽນເງິນດອນລາທີ່ມີຢູ່ ໃນຕ່າງປະເທດໃຫ້ເປັນຄຳ; ການເຣັດໃຫ້ເງິນເດືອນ ແລະຣາຄາ ສິນຄ້າໃນສະຫະຣັຖຢູ່ໃນຣະດັບເດີມເປັນເວລາ ໑໐ ວັນ ແລະຫລັງ ຈາກ ໑໐ ວັນແລ້ວ ອາດຈະມີການຄວບຄຸມຢ່າງມີຂອບເຂດ; ແລະ ການເພີ່ມຄ່າເກັບພາສີ ສິບເປີເຊັນ (໑໐%) ສຳຫລັບສິນຄ້າຈາກ ຕ່າງປະເທດທີ່ສົ່ງເຂົ້າມາຂາຍ ໃນສະຫະຣັຖ. ທ່າທີອັນໂລດໂຜນ ຂອງປະທານາທິບໍດີ ຈຶ່ງໄດ້ກໍ່ໃຫ້ມີປະຕິກິຣິຍາເກີດຂຶ້ນ ທັງພາຍໃນ ແລະພາຍນອກປະເທດເຊັ່ນນີ້ ແມ່ນຄວາມຕັ້ງໃຈຂອງທ່ານທີ່ຈະເຣັດ ໃຫ້ການຄ້າຂອງຊາດທຸ່ນທ່ຽງດີ, ຈະຄວບຄຸມ ການກົດດັນຂອງເງິນ ເຟ້, ແລະເຣັດໃຫ້ສະຖານະການດ້ານເງິນຕຣາຣະຫວ່າງຊາດເປັນ ຈິງຂຶ້ນມາ. ດ້ວຍການຄ່ອງຕົວເງິນລາຍໄດ້ ໃນສະຫະຣັຖ, ໂຄງ ການເສຖກິດໃໝ່ນີ້ໄດ້ຮຽກຮ້ອງໃຫ້ຊາວອະເມຣິກັນທຸກຄົນຍອມເສັຍ ສລະເພື່ອຄວາມມັ່ງຄັ່ງສົມບູນ ໃນດ້ານເສຖກິດຂອງຊາດ. ແລະ ດ້ວຍການກະທຳຊື່ວຄາວແກ່ການຄ້າແລະການຄ້ຳຣະຫວ່າງຊາດນັ້ນ,

ໂຄງການນີ້ ໄດ້ຮຽກຮ້ອງປະເທດ ທີ່ຮ່ວມຄ້າຂາຍກັບອະເມຣິກາທົ່ວ
ໂລກໃຫ້ຮ່ວມມືກັນແບກຫາມພາລະອັນຫນັກຫນ່ວງ ໃນການປ້ອງກັນ
ຮ່ວມກັນ, ການສ້ວມ, ແລະການຟື້ນຟູເສຖກິດຂອງປະເທດ ທີ່ໂອ
ກາດຍັງບໍ່ທັນອຳນວຍໃຫ້ເທື່ອ.

ໃນຣະຫວ່າງເວລາທີ່ເປັນປະທານາທິບໍດີຢູ່, ນິກສັນໄດ້ພຍາ
ຍາມປະຕິບັດຕາມຄຳສັນຍາ ທີ່ໄດ້ກ່າວອອກໄປ ໃນທ່ານກ່າວພິທີສາ
ບານຕົວຮັບເອົາຕຳແຫນ່ງປະທານາທິບໍດີ, ຈຶ່ງທ່ານໄດ້ຮ້ອງຂໍໃຫ້ມີ
ຄວາມສາມັກຄີພາຍໃນຊາດ ແລະການຫັນກັບຄືນມາຮັບຮູ້ຄຸນຄ່າ ນ້ຳ
ໃຈຂອງຊາດ. ທ່ານໄດ້ເວົ້າວ່າ "ພວກເຮົາມອງເຫັນໃນຕົນເອງ
ຢູ່ແລ້ວວ່າ ເປັນຄົນມີຄຸນງາມຄວາມດີຫລາຍຢ່າງ, ແຕ່ບໍ່ມີນ້ຳໃຈ
ທ້ອນໂຮມກັນ, ເຮົາສາມາດຂຶ້ນໄປຮອດດວງຈັນດ້ວຍຄວາມແມ່ນຢຳ
ແຕ່ຍັງຕົກຢູ່ໃນຄວາມມືດມົນ ຂອງໂລກຢູ່ ພວກເຮົາຕົກຢູ່ໃນຊຸມສົ
ງຄາມ, ຈຶ່ງຕ້ອງການສັນຕິພາບ. ພວກເຮົາແຕກແຍກກັນ, ຈຶ່ງ
ຕ້ອງການຄວາມສາມັກຄີກັນ. ພວກເຮົາຫລຽວເບິ່ງ ອ້ອມໆຕົວກໍ
ເຫັນວ່າມີຊີວິດເປົ່າ, ຈຶ່ງຢາກໃຫ້ຊີວິດມີຄວາມເຕັມປ່ຽມ. ພວກ
ເຮົາເຫັນພາລະໜ້າທີ່ຕ້ອງເຮັດ, ຈຶ່ງລໍຖ້າຫລາຍມື້ມາຊ່ວຍກັນເຮັດ
ກ່ຽວກັບຄວາມປັ່ນປ່ວນຂອງນ້ຳໃຈນັ້ນ, ພວກເຮົາຈຶ່ງຢາກຊອກຫາ
ຄຳຕອບຂອງນ້ຳໃຈ. ແລະເພື່ອຈະພົບຄຳຕອບນັ້ນ, ພວກເຮົາຕ້ອງ
ເບິ່ງພາຍໃນຕົວຂອງຕົນເອງເທົ່ານັ້ນ".



ປື້ມຊຸດອະພອລໂລ